# ການເຮັດວຽກຮ່ວມກັບ ໂຄງການສິດທິມະນຸດແຫ່ງອົງການສະຫະປະຊາຊາດ

## ຄູ່ມືສໍາລັບໜ່ວຍງານພາກປະຊາສັງຄົມ

ເອກະສານທີ່ເປັນພາສາລາວນີ້ແມ່ນໄດ້ແປມາຈາກເອກະສານຕົ້ນສະບັບທີ່ເປັນພາສາອັງກິດຂອງອົງການສະຫະປະຊາຊາດ. ການແປເອກະສານ ສະບັບພາສາລາວນີ້ແມ່ນບໍ່ໄດ້ເປັນທາງການ, ແຕ່ແປເພື່ອການນໍາໃຊ້ ເຂົ້າ ໃນກິດຈະກໍາວຽກງານຂອງຄະນະກໍາມາທິການກົດໝາຍສາກົນເຊິ່ງໄດ້ຮັບທຶນຊ່ວຍເຫຼືອຈາກສໍານັກງານວ່າດ້ວຍສະຫະພັນເຄືອຈັກພົບແລະວຽກງານການຕ່າງປະເທດຂອງລາດຊະອານາຈັກອັງກິດ

# ການເຮັດວຽກຮ່ວມກັບໂຄງ
# ການສິດທິມະນຸດແຫ່ງອົງ
# ການສະຫະປະຊາຊາດ

## ຄູ່ມືສໍາລັບໜ່ວຍງານພາກປະຊາສັງ

ນະຄອນນິວຢອກ ແລະ ເຈນີວາ, 2008

*ປຶ້ມຄູ່ມືສະບັບນີ້ທີ່ອອກແບບມາເພື່ອນໍາໃຊ້ ແລະ ການນໍາສະເໜີເນື້ອໃນທີ່ມີຢູ່ໃນຄູ່ມືແມ່ນບໍ່ໄດ້ຖືກນໍາອອກມາຈາກ*

*ແນວຄວາມຄິດສ່ວນຕົວໃນນາມເລຂາທິການຂອງອົງການສະຫະປະຊາຊາດທີ່ກ່ຽວຂ້ອງກັບສະຖານະທາງດ້ານກົດໝາຍຂອງປະເທດໃດໜຶ່ງ, ຫຼືກ່ຽວຂ້ອງກັບອານາເຂດ, ເມືອງ ຫຼື ຂົງເຂດ, ກ່ຽວຂ້ອງກັບເຈົ້າໜ້າອື່ນໆ, ຫຼື ກ່ຽວຂ້ອງກັບການກຳນົດອານາເຂດ ຫຼື ເຂດນ້ຳແດນດິນແຫ່ງໃດແຫ່ງໜຶ່ງ.*

HR/PUB/06/10/Rev.1

**ປຶ້ມຄູ່ມືສະບັບນີ້ແມ່ນໄດ້ຮັບການສະໜັບສະໜູນຈັດພິມຈາກການຊ່ວຍເຫຼືອທາງດ້ານການເງິນຂອງໜ່ວຍງານວ່າດ້ວຍສິດ ແລະ ປະຊາທິປະໄຕ**

# ຄໍານໍາ

ການຂຽນຄໍານໍາໃນປື້ມຄູ່ມືນີ້ແມ່ນເປັນການຂຽນຄັ້ງທໍາອິດຂອງຂ້າພະເຈົ້າຕັ້ງແຕ່ເຂົ້າມາຮັບຕໍາແໜ່ງເປັນຂ້າຫລວງໃຫຍ່ເພື່ອສິດທິມະນຸດ. ຂ້າພະເຈົ້າເອງກໍ່ເຫັນວ່າມັນມີຄວາມເໝາະສົມແລ້ວທີ່ໄດ້ຮັບໂອກາດມາຕັ້ງແຕ່ເລີ່ມຕົ້ນເພື່ອໃຫ້ສະແດງຄວາມສາມາດແບບໃໝ່ເຊິ່ງຂ້າພະເຈົ້າເອງກໍ່ມີຄວາມອາດສາມາດໃນດ້ານນີ້ຢູ່ແລ້ວ. ຄວາມອາດສາມາດທີ່ວ່ານີ້ແມ່ນມັນເຮັດໃຫ້ຂ້າພະເຈົ້າມີຄວາມໝັ້ນໃຈໃນການປັ່ງນແປງເພີ່ມຄວາມອາດສາມາດໃຫ້ແກ່ຫນ່ວຍງານພາກປະຊາສັງຄົມ. ແນ່ ນອນແລ້ວວ່າບໍ່ມີໃຜທີ່ຈະເບິ່ງຂ້າມຄວາມສໍາຄັນຂອງຫນ່ວຍງານພາກປະຊາສັງຄົມທີ່ໄດ້ມີສ່ວນຮ່ວມໃນການພັດທະນາມາດຕະຖານສິດທິມະນຸດ, ໃຫ້ການຮ່ວມມື ແລະ ຊ່ວຍວຽກງານກົນໄກສິດທິມະນຸດເຊິ່ງຈະມີລາຍລະອຽດໃນປື້ມຄູ່ມືນີ້. ໃນປະຈຸບັນຕາມຄວາມຄິດເຫັນຂອງຫນ່ວຍງານພາກປະຊາສັງຄົມແລ້ວເຫັນວ່າການໃຫ້ຄວາມຮູ້ ແລະ ການສະໜັບສະໜຸນທຶນການສຶກສາແມ່ນມີຄວາມສໍາຄັນຫຼາຍໃນການພັດທະນາວຽກງານສິດທິມະນຸດເພື່ອນໍາເອົາຄວາມຍຸດຕິທໍາ ແລະ ຄວາມສະເໝີພາບມາສູ່ຫມົດທຸກຄົນ.

ແນ່ນອນແລ້ວວ່າການໃຫ້ການສະໜັບສະໜ◌ູນຈາກສໍານັກງານຫ້ອງການຂອງຂ້າພະເຈົ້າແມ່ນຈະເປັນບູລິມະສິດທາງຍຸດທະສາດ, ເປັນການສະຫນັບສະຫນ◌ູນການໃຫ້ມີສ່ວນຮ່ວມ, ຊ່ວຍໃນການແກ້ໄຂບັນຫາຮ່ວມກັນ, ແລະ ເປັນການສະໜັບສະໜຸນວຽກງານຂອງສໍານັກງານຫ້ອງການຂອງຂ້າພະເຈົ້າທັງຢູ່ໃນສໍານັກງານໃຫຍ່ ແລະ ຢູ່ຕາມສາຂາຕ່າງໆ.

ການມີສ່ວນຮ່ວມຈາກບັນດາບຸກຄະລາກອນທີ່ມາຈາກໜ່ວຍງານພາກປະຊາສັງຄົມນັ້ນແມ່ນຖືວ່າເປັນການຊ່ວຍເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການດໍາເນີນງານຂອງບັນດາຜູ້ຊ່ຽວຊານອິດສະຫລະທີ່ຢູ່ໃນອົງກອນສິດທິມະນຸດມາແຕ່ດົນນານແລ້ວເຊັ່ນ: ອົງກອນສິດທິມະນຸດຕ່າງໆ ແລະ ຫນ່ວຍງານສິດທິມະນຸດສະເພາະ. ຍິ່ງໄປກ່ວານີ້ຄວາມຮູ້ ແລະ ຄວາມສາມາດທີ່ມີໃນຫນ່ວຍງານພາກປະຊາສັງຄົມນັ້ນແມ່ນຍັງໄດ້ຖືກນໍາມາໃຊ້ເຂົ້າໃນການດໍາເນີນງານຂອງສະພາສິດທິມະນຸດ ແລະ ໃນອົງກອນລະຫວ່າງລັດຖະບານທີ່ໄດ້ຖືກເຂົ້າມາແທນທີ່ຄະນະກໍາມາທິການສິດທິມະນຸດໃນເດືອນມິຖຸນາປີ 2006.

ນັກທີ່ເຄື່ອນໄຫວປົກປ້ອງສິດທິມະນຸດ, ບັນດາອົງການຈັດຕັ້ງພາກເອກະຊົນ, ແລະ ບັນດາອົງການພາກປະຊາສັງຄົມອື່ນໆແມ່ນໄດ້ເຄື່ອນໄຫວວຽກງານດ້ານສິດທິມະນຸດໃນຫລາຍຮູບແບບຄື: ໃຫ້ການແລກປ່ຽນຂໍ້ມູນຂ່າວສານ; ໃຫ້ການສະຫນັບ ສະຫນ◌ູນ ແລະ ກວດສາການຈັດຕັ້ງປະຕິບັດສິດທິມະນຸດ; ລາຍງານການລະເມີດສິດທິຕ່າງໆ, ໃຫ້ການຊ່ວຍເຫຼືອບັນດາຜູ້ ເຄາະຮ້າຍ; ແລະ ດົນນະລົງໃຫ້ມີການ ພັດທະນາມາດຕະຖານສິດທິມະນຸດແບບໃໝ່. ການເຄື່ອນໄຫວວຽກງານຂອງໜ່ວຍ ງານພາກປະຊາສັງຄົມນີ້ ແມ່ນໄດ້ໄກ້ສິດຕິດແທດກັບຊຸມຊົນ ແລະ ໜ່ວຍງານຕ່າງໆ, ສົ່ງເສີມໃຫ້ກຸ່ມຄົນທີ່ດ້ອຍໂອກາດໄດ້ ມີໂອກາດສະແດງຄວາມຄິດເຫັນໃນສະຖານທີ່ຕ່າງໆທີ່ອາດຈະເປັນການເຂົ້າຖືງ ແລະ ຊ່ວຍເຫຼືອບັນດາຜູ້ທີ່ຖືກເຄາະຮ້າຍ ໄດ້ໂດຍສະເພາະແມ່ນການໄດ້ສະແດງຄວາມຄິດເຫັນຢູ່ໃນເວທີ ແລະ ຕໍ່ໜ້າກົນໄກສິດທິມະນຸດສາກົນ.

ເພາະສະນັ້ນ ມັນຈຶ່ງເປັນທີ່ຈະແຈ້ງແລ້ວວ່າການມີສ່ວນຮ່ວມຂອງພາກປະຊາສັງຄົມນີ້ແມ່ນມີຄວາມຈໍາເປັນໃນການສ້າງຄວາມເຂົ້າໃຈ ແລະ ຊ່ວຍດໍາເນີນການຈັດຕັ້ງປະຕິບັດໃຫ້ແກ່ບັນດາສະຖາບັນສິດທິມະນຸດແຫ່ງຊາດ,

ໃນພາກພື້ນແລະໃນລະດັບສາກົນ.
ປື້ມຄູ່ມືສະບັບນີ້ຖືກສ້າງຂື້ນມາກໍ່ແມ່ນເພື່ອສ້າງຄວາມສະດວກໃຫ້ແກ່ຂະບວນການດຳເນີນງານຂອງພາກປະຊາສັງຄົງ.

ສຸດທ້າຍ, ຂ້າພະເຈົ້າຂໍເນັ້ນວ່າການສ້າງປື້ມຄູ່ມືສະບັບນີ້ແມ່ນໄດ້ຖືກສ້າງໄປຄຽງຄູ່ກັບການສະເຫຼີມສະຫລອງວັນ ຄົບຮອບ 60 ປີ ທີ່ຖະແຫຼງການສິດທິມະນຸດໄດ້ຮັບການສ້າງຂື້ນ. ປື້ມຄູ່ມືນີ້ຈະເປັນການເສີມສ້າງ ແລະ ນຳເອົາບັນດາຄຳໝັ້ນສັນຍາທີ່ກຳນົດໃນຖະແຫຼງການສິດທິມະນຸດທີ່ກ່ຽວກັບການສ້າງຄວາມຍຸດຕິທຳ, ການປົກປ້ອງກຽດສັກສີ ແລະ ການນຳເອົາບັນດາສິດທິຕ່າງໆມາໃຫ້ທຸກຄົນໃນສັງຄົມຢ່າງຈິງ.

ພວກເຮົາທຸກຄົນຕ້ອງພະຍາຍາມຊ່ວຍກັນສືບຕໍ່ເອົາບັນດາຫຼັກການທີ່ມີໃນຖະແຫຼງການອອກມາຈັດຕັ້ງປະຕິບັດໃຫ້ກາຍເປັນຈິງ ແລະ ໄດ້ຮັບໝາກຜົນບໍ່ວ່າຈະຢູ່ໃນຊຸມຊົນໃດກໍ່ຕາມ. ໃນຄວາມຫວັງຂອງຂ້າພະເຈົ້າກໍ່ຄືຢາກເຫັນປື້ມ ຄູ່ມືສະບັບນີ້ໄດ້ຖືກນຳໄປຈັດຕັ້ງປະຕິບັດເພື່ອສ້າງຄວາມສະດວກໃຫ້ແກ່ໜ່ວຍງານພາກປະຊາສັງຄົມໃນການສ້າງຄວາມເຂົ້າໃຈ ແລະ ເຂົ້າເຖິງລະບົບກົນໄກສິດທິມະນຸດຂອງອົງການສະຫະປະຊາຊາດໄດ້.
ປື້ມຄູ່ມືນີ້ອາດຈະບໍ່ສົມບູນແບບແຕ່ວ່າມັນກໍ່ເປັນເອກະສານທີ່ສຳຄັນທີ່ສາມາດເຮັດໃຫ້ຄວາມພະຍາຍາມຂອງພວກເຮົາໃນການນຳເອົາສິດທິຕ່າງໆ, ກຽດສັກສີ, ແລະ ຄວາມເທົ່າທຽມມາສູ່ທຸກຄົນໃຫ້ກາຍເປັນຄວາມຈິງໄດ້.

Navanethem Pillay

ຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ

# ສາລະບານ

*ໜ້າ*


ຄຳນຳ ............................................................................................................

ອັກສອນຫຍໍ້ ແລະ ຄຳສັບຫຍໍ້................................................................................

ພາກສະເໜີ.........................................................................................................

| | |
|---|---|
| I | ພາກສະເໜີກ່ຽວກັບສຳນັກງານຂ້າຫລວງໃຫຍ່.................................................... |
| II | ທຶນການສຶກສາແລະໂຄງການການຝຶກອົບຮົມຂອງສຳນັກງານຂ້າຫລວງໃຫຍ່..................... |
| III | ສິ່ງພິມ ແລະ ອຸປະກອນເຄື່ອງມືຂອງສຳນັກງານຂ້າຫລວງໃຫຍ່.......................... ....... |
| IV | ອົງກອນສິດທິມະນຸດ........................................................................ |
| V | ສະພາສິດທິມະນຸດ .............................................................................. |
| VI | ຂະບວນການພິເສດ............................................................................ |
| VII | ຂະບວນການທົບທວນ........................................................................ |
| VIII | ການຍື່ນຄຳຮ້ອງທຸກກ່ຽວກັບບັນຫາການລະເມີດສິດທິມະນຸດ....................................... |
| IX | ກອງທຶນ ແລະ ກອງທຶນຊ່ວຍເຫຼືອ.................................................................. |

## ອັກສອນຫຍໍ້ ແລະ ຄຳສັບຫຍໍ້

| | |
|---|---|
| ACT | ໂຄງການ "ການຊ່ວຍເຫຼືອຊຸມຊົນຮ່ວມກັນ" |
| CAT | ສົນທິສັນຍາຕໍ່ຕ້ານການທໍລະມານ ແລະ ການທາລຸນ, ການກະທຳ ຫຼື ການລົງໂທດທີ່ໄຮ້ມະນຸດສະທຳ ແລະ ເຮັດໃຫ້ເສື່ອມກຽດສັກສີ |
| CEDAW | ສົນທິສັນຍາກ່ຽວກັບການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ |
| CRC | ສົນທິສັນຍາກ່ຽວກັບສິດທິຂອງເດັກນ້ອຍ |
| ECOSOC | ສະພາເສດຖະກິດແລະສັງຄົມ |
| ICCPR | ສົນທິສັນຍາສາກົນວ່າດ້ວຍສິດທິທາງພົນລະເຮືອນ ແລະ ການເມືອງ |
| ICERD | ສົນທິສັນຍາສາກົນວ່າດ້ວຍການລົບລ້າງທຸກຮູບແບບຂອງການຈຳແນກເຊື້ອຊາດ |
| ICESCR | ສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນະທຳ |
| ICRMW | ສົນທິສັນຍາສາກົນວ່າດ້ວຍການປົກປ້ອງສິດທິຂອງຜູ້ອອກແຮງງານອົບພະຍົບ ແລະ ສະມາຊິກຂອງຄອບຄົວຂອງເຂົາເຈົ້າ |
| LDC | ບັນດາປະເທດດ້ອຍພັດທະນາ |
| NGO | ອົງການຈັດຕັ້ງທີ່ບໍ່ຂຶ້ນພາກເອກະຊົນ |
| NHRI | ສະຖາບັນສິດທິມະນຸດແຫ່ງຊາດ |
| OHCHR | ສຳນັກງານຂ້າຫລວງໃຫຍ |
| OPCAT | ອານຸສັນຍາເພີ່ມເຕີມຂອງສົນທິສັນຍາຕ້ານການທໍລະມານ ແລະ ການທາລຸນ, ການກະທຳ ຫຼື ການລົງໂທດທີ່ໄຮ້ມະນຸດສະທຳ ແລະ ເຮັດໃຫ້ເສື່ອມກຽດສັກສີ |
| UNDEF | ກອງທຶນເພື່ອປະຊາທິປະໄຕຂອງສະຫະປະຊາຊາດ |
| UNDP | ໂຄງການເພື່ອການພັດທະນາຂອງສະຫະປະຊາຊາດ |
| UNESCO | ອົງການທາງດ້ານການສຶກສາ, ວັດທະນະທຳ ແລະ ວິທະຍາສາດຂອງສະຫະປະຊາຊາດ |
| UNITAR | ສະຖາບັນຄົ້ນຄົ້ວ ແລະ ຝຶກອົບຮົມຂອງສະຫະປະຊາຊາດ |
| UPR | ຂະບວນການທົບທວນ |

**ພາກສະເໜີ**

## ກ່ຽວກັບປື້ມຄູ່ມື

*ການເຮັດວຽກຮ່ວມກັບ ໂຄງການສິດທິມະນຸດຂອງສະຫະປະຊາຊາດ:* ປື້ມຄູ່ມືສະບັບນີ້ແມ່ນຖືກສ້າງຂື້ນມາເພື່ອໜ່ວຍງານພາກປະຊາສັງຄົມທີ່ໄດ້ປະກອບສ່ວນໃນການຮ່ວມມືສົ່ງເສີມ, ປົກປ້ອງ ແລະ ພັດທະນາວຽກງານສິດທິມະນຸດໃນທຸກມູມຂອງໂລກ.

ການສ້າງປື້ມຄູ່ມືສະບັບນີ້ແມ່ນໄດ້ມາຈາກການສໍາຫລວດຜູ້ທີ່ນໍາໃຊ້ປື້ມຄູ່ມືຊຸດທໍາອິດທີ່ຜ່ານມາ-*ການເຮັດວຽກຮ່ວມກັບສໍານັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ: ເປັນຄູ່ມືສໍາລັບອົງການຈັດຕັ້ງພາກເອກະ ຊົນ (2006)-* ການຈັດພິມຄູ່ມືໃນຊຸດທີສອງນີ້ແມ່ນເປັນການປັບປຸງ ແລະ ອັບເດດເນື້ອໃນໃໝ່ທີ່ເນັ້ນເອົາກົນໄກ ແລະ ອົງກອນສິດທິມະນຸດຂອງສະຫະປະຊາຊາດເປັນຈຸດສູນກາງ. ເປີດກວ້າງສູ່ທຸກໜ່ວຍງານພາກປະຊາສັງຄົມ ແລະ ອົງການຈັດຕັ້ງສາກົນພາກເອກະຊົນ, ເຊິ່ງໃນຄູ່ມືແມ່ນໄດ້ອະທິບາຍກົນໄກສໍາລັບພາກປະຊາສັງຄົມເພື່ອຈະເຂົ້າມີສ່ວນຮ່ວມກັບ ບັນດາອົງກອນ ແລະ ກົນໄກການພັດທະນາສິດມະນຸດແຫ່ງສະຫະປະຊາຊາດໄດ້ແນວໃດ. ສໍານັກງານຂ້າຫລວງໃຫຍ່ຍັງຫວັງວ່າຄູ່ມືນີ້ຈະສາມາດຊ່ວຍໃນການປົກປ້ອງສິດ ແລະ ຮຽກຮ້ອງສິດໃຫ້ແກ່ບຸກຄົນຕ່າງໆໄດ້ໂດຍຜ່ານກົນໄກ ແລະ ບັນດາອົງກອນທີ່ກ່າວມາຂ້າງເທິງນີ້.

### ແມ່ນໃຜຄືຜູ້ທີ່ເຄື່ອນໄຫວວຽກງານໃນໜ່ວຍງານພາກປະຊາສັງຄົມ?

ສໍາລັບຄວາມໝາຍທີ່ມີໃນຄູ່ມືສະບັບນີ້, ຜູ້ທີ່ເຄື່ອນໄຫວວຽກງານໃນໜ່ວຍງານພາກປະຊາສັງຄົມແມ່ນບັນດາບຸກຄົນຜູ້ທີ່ອາສາສະມັກເຂົ້າມີສ່ວນຮ່ວມໃນວຽກງານການພັດທະນາສິດທິມະນຸດຂອງອົງການສະຫະປະຊາຊາດດ້ວຍການແລກປ່ຽນຂໍ້ມູນຂ່າວສານ, ເຂົ້າຮ່ວມ ແລະ ເຄື່ອນໄຫວກິດຈະກໍາຕ່າງໆ. ຄູ່ມືສະບັບນີ້ຍັງອະທິບາຍວ່າຜູ້ທີ່ເຄື່ອນໄຫວວຽກງານໃນໜ່ວຍງານພາກປະຊາສັງຄົມນັ້ນແມ່ນຜູ້ທີ່ເຄື່ອນໄຫວໃນການປົກປ້ອງ ແລະ ສົ່ງເສີມສິດທິມະນຸດເຊັ່ນ:

- ນັກເຄື່ອນໄຫວເພື່ອການປົກປ້ອງສິດທິມະນຸດ;
- ບັນດາອົງການສິດທິມະນຸດຕ່າງໆ (ອົງການຈັດຕັ້ງສາກົນພາກເອກະຊົນ, ສະມາຄົມຕ່າງໆ, ກຸ່ມຜູ້ທີ່ຖືກເຄາະຮ້າຍ);
- ອົງການທີ່ເຮັດວຽກສະເພາະດ້ານ;
- ສະຫະພັນ ແລະ ເຄືອຄ່າຍຕ່າງໆ (ກຸ່ມສິດທິແມ່ຍິງ, ສິດທິເດັກນ້ອຍ, ແລະ ສິດທິທາງສິ່ງແວດລ້ອມ);
- ກຸ່ມຄົນທີ່ພິການ ແລະ ສໍານັກງານຫ້ອງການຂອງເຂົາເຈົ້າ;
- ກຸ່ມທີ່ປະຈໍາໃນຊຸມຊົນ (ກຸ່ມຄົນພື້ນເມືອງ ແລະ ຊົນເຜົ່າ);
- ກຸ່ມທີ່ຄົນທີ່ມີຄວາມເຊື່ອຖືຕ່າງໆ (ໂບດ, ກຸ່ມສາດສະໜາຕ່າງໆ);
- ສະຫະພັນຕ່າງໆ (ສະຫະພັນກໍາມະບານກໍ່ຄືກຸ່ມວິຊາຊີບຕ່າງໆເຊັ່ນສະມາຄົມນັກຂ່າວ, ສະພາທະນາຍຄວາມ, ສະມາຄົມຜູ້ພິພາກສາ, ແລະ ສະມາຄົມນັກສຶກສາ);
- ກຸ່ມການເຄື່ອນໄຫວຕ່າງໆ (ກຸ່ມເຄື່ອນໄຫວເພື່ອສັນຕິພາບ, ກຸ່ມການເຄື່ອນໄຫວຂອງນັກສຶກສາ, ແລະ ກຸ່ມທີ່ສະໜັບສະໜູນປະຊາທິປະໄຕ);
- ກຸ່ມວິຊາຊີບທີ່ມີສ່ວນຮ່ວມໂດຍຕົງໃນການແບ່ງປັນຄວາມສຸກໃນດ້ານສິດທິມະນຸດ (ພະນັກງານບັນເທົາທຸກ, ນັກກົດໝາຍ, ນາຍໝໍ, ແລະ ພະນັກງານທາງການແພດ);
    - ຍາດທີ່ພີ່ນ້ອງຂອງຜູ້ເຄາະຮ້າຍ; ແລະ
    - ສະຖາບັນສາທາລະນະຕ່າງໆທີ່ເຄື່ອນໄຫວເພື່ອສົ່ງເສີມສິດທິມະນຸດ (ໂຮງຮຽນ, ມະຫາວິທະຍາໄລ, ແລະ ອົງກອນ

ເພື່ອການຄົ້ນຄ້ວາຕ່າງໆ).

ໜ່ວຍງານພາກປະຊາສັງຄົມທີ່ເຂັ້ມແຂງ ແລະ ເປັນເອກະລາດ, ມີຄວາມຮູ້ຄວາມສາມາດທີ່ກ່ຽວຂ້ອງກັບສິດທິມະນຸດແມ່ນສາມາດເຄື່ອນໄຫວວຽກງານໄດ້ຢ່າງມີອິດສະຫລະ ແລະ ຮັບປະກັນການພັດທະນາດ້ານສິດທິມະນຸດໃນລະດັບຊາດແບບຍືນຍົງໄດ້. ດັ່ງນັ້ນ ໜ່ວຍງານພາກປະຊາສັງຄົມຈຶ່ງເປັນໜຶ່ງໃນບັນດາຄູ່ຮ່ວມງານທີ່ສຳຄັນຂອງອົງການ ສະຫະປະຊາຊາດ.

ໃນຂະນະທີ່ໜ່ວຍງານພາກປະຊາສັງຄົມມີຄວາມສຳຄັນໃນການປະກອບສ່ວນການສົ່ງເສີມ ແລະ ປົກປ້ອງສິດ, ບັນດາສະຖາບັນສິດທິມະນຸດແຫ່ງຊາດຕ່າງໆແມ່ນບໍ່ໄດ້ກ່ຽວຂ້ອງກັບຄູ່ມືສະບັບນີ້. ຂໍ້ມູນ ແລະ ເລື່ອງລາວຕ່າງໆທີ່ກ່ຽວກັບສະຖາບັນສິດທິມະນຸດແຫ່ງຊາດນັ້ນແມ່ນສາມາດຊອກຫາໄດ້ທີ່ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່. ຜູ້ທີ່ມີຄວາມສົນໃຈໃນວຽກງານນີ້ແມ່ນສາມາດຕິດຕໍ່ສຳນັກງານຂ້າຫລວງໃຫຍ່ໄດ້ທີ່ niu@ohchr.org.

## ເນື້ອໃນຂອງຄູ່ມື

ຄູ່ມືເລີ່ມຕົ້ນດ້ວຍການນຳສະເໜີກ່ຽວກັບສຳນັກງານຂ້າຫລວງໃຫຍ່ (ບົດທີ I), ໂຄງການທຶນການສຶກສາ ແລະ ຝຶກອົບຮົມຂອງສຳນັກງານຂ້າຫລວງໃຫຍ່ (ບົດທີ II), ແລະ ສິ່ງພິມພ້ອມທັງຂໍ້ມູນຕ່າງ. ເຄື່ອງມືຕ່າງໆຂອງສຳນັກ ງານຂ້າຫລວງໃຫຍ່ (ບົດທີ III). ໃນພາກຕໍ່ໄປກໍແມ່ນກ່ຽວກັບບັນດາກົນໄກ ແລະ ອົງກອນ ສິດທິມະນຸດຂອງສະຫະປະຊາຊາດທີ່ມີຄຳອະທິບາຍກ່ຽວກັບຂັ້ນຕອນ ແລະ ວິທີການເຂົ້າເຖິງອົງກອນຕ່າງໆນັ້ນເຊັ່ນ:

- ອົງກອນສິດທິມະນຸດ (ບົດທີ IV);
- ສະພາສິດທິມະນຸດ ແລະ ກົນໄກຂອງສະພາທີ່ລວມມີຄະນະກຳມາທິການໃຫ້ຄຳປຶກສາ, ກອງປະຊຸມທາງສັງຄົມ, ກອງປະຊຸມເພື່ອຊົນເຜົ່າ, ກົນໄກຜູ້ຊ່ຽວຊານເພື່ອສິດທິຂອງກຸ່ມຄົນພື້ນເມືອງ, ກຸ່ມເຄື່ອນໄຫວກ່ຽວກັບການພັດທະນາ ສິດ ແລະ ກົນໄກຕ່າງໆທີ່ກ່ຽວຂ້ອງກັບຖະແຫລງການ ແລະ ແຜນງານແຫ່ງເມືອງເດີບານ (ບົດທີ V);
- ຂະບວນການພິເສດ (ບົດທີ VI);
- ຂະບວນການທົບທວນ (ບົດທີ VII); ແລະ
- ການຍື່ນຄຳຮ້ອງທຸກກ່ຽວກັບບັນຫາການລະເມີດສິດ (ບົດທີ VIII).

ໃນບົດສຸດທ້າຍແມ່ນໄດ້ໃຫ້ຂໍ້ມູນກ່ຽວກັບກອງທຶນ ແລະ ທຶນຊ່ວຍເຫລືອ (ບົດທີ IX) ທີ່ການບໍລິຫານບາງຢ່າງແມ່ນໄດ້ຮັບການຄຸ້ມຄອງໂດຍສຳນັກງານຂ້າຫລວງໃຫຍ່.

ເພື່ອເຮັດໃຫ້ຜູ້ອ່ານໄດ້ເຂົ້າໃຈຄູ່ມືງ່າຍຂຶ້ນ, ຄູ່ມືໄດ້ວາງແຕ່ລະພາກສ່ວນແບບແຍກອອກເປັນບົດເອກະລາດຂອງໃຜລາວ. ແຕ່ລະບົດແມ່ນສາມາດດາວໂລດເອົາໄດ້ຕາມເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ ຫຼື ຈະດາວໂລດເອົາທັງໝົດຂອງຄູ່ມືໃນເຫຼັ້ມດຽວກໍ່ໄດ້.

ແນວໃດກໍ່ດີຢ່າລືມວ່າປຶ້ມຄູ່ມືນີ້ບໍ່ໄດ້ມີທຸກຢ່າງຕາມທີ່ເຮົາຕ້ອງການ. ສະນັ້ນຂໍ້ມູນອື່ນໆທີ່ກ່ຽວຂ້ອງກໍ່ແມ່ນສາມາດຊອກຫາໄດ້ຕາມເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ ຫຼື ສຳນັກງານອື່ນໆທີ່ກ່ຽວຂ້ອງທີ່ມີຂໍ້ມູນອັບ ເດດໃນປະຈຸບັນ. ຜູ້ທີ່ສົນໃຈແມ່ນຄວນຈະສຶກສາຂໍ້ມູນຈາກພາກສ່ວນອື່ນໆໄປນຳ.

**ໂຄງສ້າງ**

ເນື້ອໃນຂອງຄູ່ມືແມ່ນໄດ້ແບ່ງອອກເປັນສາມພາກໃຫຍ່:

- ອົງກອນ / ກົນໄກແມ່ນຫຍັງ;
- ອົງກອນ / ກົນໄກມີໜ້າທີ່ຫຍັງ?
- ໜ່ວຍງານພາກປະຊາສັງຄົມສາມາດເຂົ້າເຖິງ ແລະ ຮ່ວມມືກັບອົງກອນ / ກົນໄກໄດ້ແນວໃດ

ໃນແຕ່ລະບົດກໍ່ໄດ້ໃຫ້ລາຍລະອຽດຂໍ້ມູນການຕິດຕໍ່ຂອງສຳນັກງານຂ້າຫລວງໃຫຍ່ ແລະ ສຳນັກງານຕ່າງໆທີ່ກ່ຽວຂ້ອງ

**ຄຳຕິຊົມ**

ຄູ່ມືສະບັບນີ້ແມ່ນມີເນື້ອໃນທີ່ກ້ວາງຂວາງ. ໜ່ວຍງານພາກປະຊາສັງຄົມປະຈຳສຳນັກງານຂ້າຫລວງໃຫຍ່ແມ່ນ ຍິນດີທີ່ຈະຮັບເອົາທຸກຄຳຕິຊົມ. ຄຳຕິຊົມ ແລະ ຄຳສະເໜີແນະແມ່ນສາມາດສົ່ງມາໄດ້ທີ່:

ໜ່ວຍງານພາກປະຊາສັງຄົມ
ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ
Palais des Nations
CH-1211 Geneva 10, Switzerland
E-mail: CivilSocietyUnit@ohchr.org.

# I. ບົດສະເໜີກ່ຽວກັບສຳນັກງານຂ້າຫລວງໃຫຍ່

### A. ແຜນນຳເນີນງານສິດທິມະນຸດຂອງສະຫະປະຊາຊາດ

ວຽກງານສິດທິມະນຸດຂອງສະຫະປະຊາຊາດແມ່ນມີໜ້າທີ່ໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດໃຫ້ແກ່ທຸກຄົນ ແລະ ໃຫ້ແກ່ທຸກພາກພື້ນ. ການດຳເນີນງານແມ່ນໄດ້ຖືກຈັດຕັ້ງປະຕິບັດຢູ່ໃນແຕ່ສຳນັກງານຫ້ອງການສິດທິມະນຸດຕ່າງໆ ຂອງ ສະຫະປະຊາຊາດ, ທຸກໜ່ວຍງານອົງການທີ່ກ່າວມານີ້ແມ່ນມີຈຸດປະສົງດຽວກັນໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດຕາມການຕົກລົງເຫັນດີຈາກສາກົນວ່າດ້ວຍສິດທິທາງສັງຄົມ, ວັດທະນາທຳ, ເສດຖະກິດ, ການເມືອງ ແລະ ພົນລະເຮືອນເຊິ່ງໄດ້ຖືກບັນຈຸໃນຖະແຫລງການສິດທິມະນຸດສາກົນມາໄດ້ຫລາຍກ່ວາ 60 ປີແລ້ວ.

ໃນຄະນະທີ່ເປັນເຈົ້າການແຫ່ງສິດທິມະນຸດສາກົນ, ສຳນັກງານຂ້າຫລວງໃຫຍ່ແມ່ນມີຄວາມຮັບຜິດຊອບໃນການນຳພາວຽກງານສິດທິມະນຸດຂອງສະຫະປະຊາຊາດ ແລະ ນຳພາການປົກປ້ອງ ແລະ ສົ່ງເສີມສິດທິມະນຸດທີ່ບັນ ຈຸໃນກົດບັດຂອງສະຫະປະຊາຊາດ ແລະ ກົດໝາຍສາກົນວ່າດ້ວຍສິດທິມະນຸດ.

ວິໃສທັດຂອງສຳນັກງານຂ້າຫລວງໃຫຍ່ແມ່ນເປັນໜຶ່ງໃນວິໃສທັດຂອງໂລກທີ່ໃຫ້ການເຄົາລົບ ແລະ ປົກປ້ອງ ສິດໃຫ້ແກ່ທຸກຄົນ. ສຳນັກງານຂ້າຫລວງໃຫຍ່ແມ່ນມີຄວາມພະຍາຍາມໃນການປົກປ້ອງ ແລະ ສົ່ງເສີມສິດທິມະນຸດ ໃນທຸກຮູບແບບ, ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາບຸກຄົນໃຫ້ມີຄວາມຕື່ນຕົວກ່ຽວກັບສິດ ແລະ ໃຫ້ການຊ່ວຍເຫລືອເພື່ອຮັບປະກັນໃນການຈັດຕັ້ງປະຕິບັດກ່ຽວກັບສິດທິມະນຸດແກ່ຜູ້ທີ່ມີໜ້າທີ່ໃນການຄຸ້ມຄອງສິດທິດັ່ງກ່າວ.

### B. ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ

ສຳນັກງານຂ້າຫລວງໃຫຍ່ແມ່ນໜຶ່ງໃນໜ່ວຍງານຂອງສຳນັກງານເລຂາທິການຂອງສະຫະປະຊາຊາດ ແລະ ໄດ້ຖືກນຳພາໂດຍປະທານຂ້າຫລວງໃຫຍ່ທີ່ໄດ້ຮັບການແຕ່ງຕັ້ງຂື້ນໃນປີ 1993.[1] ການເຮັດວຽກຂອງ ສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ມີການຮ່ວມມືກັບຫລາຍພາກສ່ວນທີ່ມີທັງພາກສ່ວນລັດຖະບານ, ສະຖາບັນສິດທິມະນຸດແຫ່ງຊາດ, ອົງການຈັດຕັ້ງ ສາກົນພາກເອກະຊົນ, ແລະ ກັບບັນດາໜ່ວຍງານພາກປະຊາສັງຄົມ. ສຳນັກງານຂ້າຫລວງໃຫຍ່ແມ່ນພະຍາຍາມຂະຫຍາຍວຽກງານການພັດທະນາສິດທິມະນຸດອອກໄປໃຫ້ໄດ້ຫລາຍທີ່ສຸດເທົ່າທີ່ຈະຫລາຍໄດ້.

ໃນຖານະທີ່ເປັນອົງກອນທີ່ມີຄວາມສຳຄັນໃນດ້ານສິດທິມະນຸດແຫ່ງສະຫະປະຊາຊາດ, ປະທານຂ້າຫລວງໃຫຍ່ແມ່ນເຮັດໜ້າທີ່ເປັນເຈົ້າໜ້າທີ່ທາງສິນລະທຳ ແລະ ເປັນປາກເປັນສຽງໃຫ້ແກ່ຜູ້ຖືກເຄາະຮ້າຍ. ຂ້າຫລວງໃຫຍ່ເປັນຜູ້ນຳພາບັນດາພາລະກິດ ແລະ ວຽກງານຕ່າງໆຂອງສຳນັກງານຂ້າຫລວງໃຫຍ່, ຈັດບູລິມະສິດຂອງ ວຽກງານ, ພັກດັນການຈັດຕັ້ງປະຕິບັດ. ຂ້າຫລວງໃຫຍ່ມີໜ້າທີ່ໃນການອອກຖະແຫລງການ ແລະ ລົງສູ່ພາກສະໜາມໃນ ບ່ອນທີ່ເກີດມີສະພາບການ ແລະ ມີບັນຫາລະເມີດສິດທິຕ່າງໆ; ປະສານຮ່ວມມືກັບບັນດາລັດຖະບານຕ່າງໆໃນການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກການປົກປ້ອງສິດທິມະນຸດແຫ່ງຊາດ, ເດີນທາງໄປສະຖານທີ່ຕ່າງໆໃນທົ່ວໂລກເພື່ອສຶກສາເບິ່ງວ່າໃນພາກພື້ນຕ່າງໆແມ່ນມີການຮັບຮູ້ ແລະ ເຂົ້າໃຈກ່ຽວກັບ ສິດທິມະນຸດແນວໃດ, ຮັບຟັງບັນຫາຈາກຜູ້ທີ່ຖືກປະຕິເສດຮັບຮູ້ກ່ຽວກັບສິດຂອງເຂົາເຈົ້າ ພ້ອມທັງເຮັດໜ້າທີ່ຮ່ວມມືກັບ ພາກສ່ວນທີ່ຮັບພິຊອບກ່ຽວກັບການຄຸ້ມຄອງສິດທິຕ່າງໆ.

ຂ້າຫລວງໃຫຍ່ຍັງເຮັດໜ້າທີ່ໃນການຮັກສາບັນດາທຸກມາດຕະຖານສິດທິມະນຸດໃນແຜນການດຳເນີນງານຂອງສະຫະປະຊາຊາດເພື່ອຮັບປະກັນວ່າສັນຕິພາບ ແລະ ຄວາມໝັ້ນຄົງ, ແລະ ການພັດທະນາບັນດາສິດທິຕ່າງໆທີ່ມີຢູ່ໃນສາມເສົາຫຼັກໃນລະບົບຂອງສະຫະປະຊາຊາດນັ້ນຈະໄດ້ໄດ້ຮັບການເຊື່ອມຕໍ່ ແລະ ຈັດຕັ້ງປະຕິບັດໄປຄຽງຄູ່ກັນເພື່ອຮັບປະກັນວ່າສິດທິມະນຸດຕ່າງໆໃນລະບົບສະຫະປະຊາຊາດນັ້ນຈະໄດ້ຮັບການເສີມສ້າງຄວາມເຂັ້ມແຂງໃນທຸກດ້ານ.

---

[1] ມະຕິຕົກລົງຂອງສະມັດຊາໃຫຍ່ເລກທີ 48/141 of 20 ທັນວາ 1993. ການເຮັດວຽກຂອງ OHCHR ແມ່ນຕ້ອງໄປຕາມກົດບັດສະຫະປະຊາຊາດ, ຖະແຫຼງການສິດທິມະນຸດແລະກົນໄກສິດທິມະນຸດ, ລວມທັງຖະແຫລງການວຽນນາ 1993 ແລະ ແຜນງານປີ 2005 ຂອງປະຊຸມສຸດຍອດຂອງໂລກ (ມະຕິສະມັດຊາໃຫຍ່ 60/1 ລົງວັນທີ 16 ກັນຍາ 2005).

ໃນຖານະທີ່ທາງຂ້າຫລວງໃຫຍ່ຈະໄດ້ຖະແຫລງຢ່າງເປີດກ້ວາງຕໍ່ສາທາລະນະກ່ຽວກັບບັນຫາສິດທິມະນຸດ ຂອງໂລກ ແລະ ວິທີການແກ້ໄຂບັນຫາດ້ວຍການໃຫ້ບັນດາລັດຕ່າງໆອອກມາຮັບຜິດຊອບຕໍ່ການກະທຳ ແລະ ການເມີນ ເສີຍຕໍ່ສະພາບການທີ່ເກີດຂຶ້ນ, ການດຳເນີນງານຂອງຂ້າຫລວງໃຫຍ່ ແລະ ສຳນັກງານຂ້າຫລວງ ໃຫຍ່ແມ່ນຍັງຈະ ຕ້ອງຮັບເອົາບັນດາຄຳຕຳນິຕິຊົມຈາກພາກສ່ວນຕ່າງໆທົ່ວມູນໂລກມາພິຈາລະນາຄົ້ນຄ້ວເພື່ອພັດທະນາວຽກງານສິດທິຕໍ່ ໄປ. ການພັດທະນາວຽກງານສິດທິມະນຸດທີ່ມີຄວາມສຳຄັນຫລາຍທີ່ສຸດກໍ່ຄືການນຳເອົາບັນດາຄວາມຄິດເຫັນ ແລະ ເອົາບັນຫາສິດທິມະນຸດເຂົ້າມາສູ່ເວທີການສົນທະນາ. ບັນຫາສິດທິມະນຸດສ່ວນໃຫຍ່ແລ້ວແມ່ນມັນຈະກ່ຽວຂ້ອງກັບທາງ ການເມືອງເຊິ່ງເປັນອຸປະສັກໃນການດຳເນີນງານຂອງສຳນັກງານຂ້າຫລວງໃຫຍ່.

ຂ້າຫລວງໃຫຍ່ຄົນປະຈຸບັນແມ່ນທ່ານນາງ **Navanethem Pillay** ທີ່ຮັບໜ້າທີ່ໃນເດືອນ ກັນຍາ ປີ 2008 ຮັບຊ່ວງຕໍ່ຈາກທ່ານນາງ Louise Arbour (2004-2008), ທ່ານ Sergio Vieira de Mello (2002-2003),[2] ທ່ານນາງ Mary Robinson (1997-2002) ແລະ ທ່ານ José Ayala Lasso (1994-1997). ທ່ານ Bertrand G. Ramcharan ເປັນຂ້າຫລວງໃຫຍ່ຈາກປີ 2003 ຫາ 2004.

ສຳນັກງານຂ້າຫລວງໃຫຍ່ແມ່ນມີສຳນັກງານໃຫຍ່ຢູ່ທີ່ເມືອງ Palais Wilson ໃນນະຄອນຫລວງເຈນ ນີວາປະ ເທດສະວິດເຊີແລນ ແລະ ມີສຳນັກງານປະຈຳໃນສຳນັກງານຂອງສະຫະປະຊາຊາດທີ່ນະຄອນນິວຢອກ. ສຳນັກ ງານຂ້າ ຫລວງໃຫຍ່ມີພະນັກງານຫລາຍກ່ວາ 900 ຄົນ, ເຄິ່ງໜຶ່ງຂອງພະນັກງານແມ່ນປະຕິບັດໜ້າທີ່ຢູ່ ພາກ ສະໜາມຕາມໃນແຕ່ລະຫ້ອງການ ແລະ ສຳນັກງານປະຈຳປະເທດ, ຫ້ອງການປະຈຳພາກພື້ນ, ທີ່ ປຶກສາດ້ານສິດທິມະນຸດ, ແລະ ໜ່ວຍງານສິດທິມະນຸດຕ່າງໆທີ່ເຮັດໜ້າທີ່ພິທັກສັນຕິພາບຂອງອົງການ ສະຫະປະຊາຊາດ.

---

[2], ທ່ານ Sergio Vieira de Mello ທີ່ເຮັດໜ້າທີ່ເປັນຜູ້ແທນພິເສດຂອງເລຂາທິການໃຫຍ່ ໄດ້ຖືກຂ້າຕາຍພ້ອມດຽວກັນກັບພະນັກງານອົງການສະຫະປະຊາຊາດອີກ 21 ທ່ານທີ່ປະຕິບັດໜ້າທີ່ໃນປະເທດອີຣັກ ໃນວັນທີ 19\08\2003.

**ພັນທະໜ້າທີ່ຂອງຂ້າຫລວງໃຫຍ່ໃນດ້ານສິດທິມະນຸດ**

ຂ້າຫລວງໃຫຍ່ແມ່ນມີພາລະໜ້າທີ່ໄດ້ຈາກການມອບໝາຍຂອງສະມັດຊາໃຫຍ່ຕາມມະຕິຕົກລົງເລກທີ່ 48/141 ເພື່ອ:

- ປົກປ້ອງ ແລະ ສົ່ງເສີມສິດທິມະນຸດໃນທຸກຮູບແບບ;
- ໃຫ້ຄຳແນະນຳແກ່ອົງກອນທີ່ຢູ່ໃນລະບົບສະຫະປະຊາຊາດເພື່ອການພັດທະນາສົ່ງເສີມ ແລະ ປົກປ້ອງສິດທິມະນຸດໃນທຸກຮູບແບບ;
- ສົ່ງເສີມ ແລະ ປົກປ້ອງສິດໃນການໄດ້ຮັບການພັດທະນາ
- ຊ່ວຍເຫຼືອດ້ານວິຊາການແກ່ກິດຈະກຳສິດທິມະນຸດຕ່າງໆ;
- ປະສານງານກັບໂຄງການຂໍ້ມູນຂ່າວສານ ແລະ ການສຶກສາສິດທິມະນຸດທົ່ວໄປຂອງສະຫະປະຊາຊາດ;
- ແກ້ໄຂບັນຫາຕ່າງໆດ້ວຍຄວາມຫ້າວຫັນເພື່ອຍົກສູງຄວາມຮັບຮູ້ດ້ານສິດທິມະນຸດ;
- ແກ້ໄຂບັນຫາຕາມພາລະບົດບາດເພື່ອສະກັດກັ້ນການລະເມີດສິດທິຕ່າງໆ;
- ຮ່ວມມືກັບບັນດາລັດຖະບານຕ່າງໆເພື່ອຮັບປະກັນການເຄົາລົບສິດໃນທຸກຮູບແບບ;
- ຮັກສາການຮ່ວມມືກັນສາກົນ;
- ປະສານງານກັບບັນດາກິດຈະກຳຕ່າງໆໃນການປົກປ້ອງ ແລະ ສົ່ງເສີມສິດໃນລະບົບຂອງສະຫະປະຊາຊາດ; ແລະ
- ໃຫ້ຄຳອະທິບາຍ, ຮັບຮອງ, ສ້າງຄວາມເຂັ້ມແຂງ, ແລະ ພັດທະນາກົນໄກສິດທິມະນຸດຂອງສະຫະປະຊາຊາດ

**C. ບັນດາກິດຈະກຳ ແລະ ວຽກງານຂອງສຳນັກງານຂ້າຫລວງໃຫຍ່**

ສຳນັກງານຂ້າຫລວງໃຫຍ່ແມ່ນແນ່ໃສ່ການຈັດຕັ້ງປະຕິບັດມາດຕະຖານສິດທິມະນຸດໃຫ້ແກ່ທຸກຄົນທີ່ຢູ່ໃນທຸກມູມຂອງໂລກ. ເພື່ອບັນລຸວັດຖຸປະສົງນີ້ມັນມີຄວາມຈຳເປັນທີ່ຕ້ອງໃຫ້ການຮ່ວມມືກັບບັນດາລັດຖະບານຕ່າງໆ, ບັນດາລັດຖະສະພາ, ເຈົ້າໜ້າທີ່ທາງຕຸລາການ, ຕຳຫລວດ ແລະ ພະນັກງານຕາມສະຖານທີ່ກັກຂັງຕ່າງໆ, ສະຖາບັນສິດທິມະນຸດແຫ່ງຊາດ, ອົງການຈັດຕັ້ງສາກົນພາກເອກະຊົນ, ແລະ ບັນດາໜ່ວຍງານຈາກພາກປະຊາສັງຄົມ ເພື່ອແນໃສ່ສ້າງເປັນຄູ່ ຮ່ວມງານຂອງສະຫະປະຊາຊາດ, ແລະ ເພື່ອສ້າງຄວາມຕື່ນຕົວໃນການເຄົາລົບສິດທິມະນຸດ. ສຳນັກງານຂ້າຫລວງໃຫຍ່ ຍັງໄດ້ສ້າງຄວາມເຂັ້ມແຂງໃຫ້ບັນດາບຸກຄົນຕ່າງໆໃນການຮຽກຮ້ອງສິດທິ ແລະ ກະຕຸ້ນໃຫ້ພາກລັດໄດ້ມີການຈັດຕັ້ງປະຕິບັດເພື່ອຮັບຮູ້ສິດທິຂອງຄົນເຫລົ່ານັ້ນ.

ອົງການສິດທິມະນຸດ NGOs ໃນລະດັບທ້ອງຖິ່ນ, ລະດັບຊາດ, ແລະ ສາກົນ ແມ່ນຖືວ່າມີຄວາມສຳຄັນຫລາຍສຳລັບການເຄື່ອນໄຫວພັດທະນາວຽກງານສິດທິມະນຸດສາກົນ ແລະ ຍັງເປັນຄູ່ຮ່ວມງານທີ່ສຳຄັນໃຫ້ແກ່ສຳນັກງານຂ້າຫລວງໃຫຍ່ ອີກດ້ວຍ. ອົງການຕ່າງໆທີ່ກ່າວມານັ້ນແມ່ນມີສ່ວນຮ່ວມໃນປູກຈິດສຳນຶກກ່ຽວກັບບັນຫາການລະເມີດສິດທິມະນຸດ. ນອກນັ້ນພວກເຂົາຍັງຊ່ວຍໃນການປົກປ້ອງຜູ້ເຄາະຮ້າຍ, ສົ່ງເສີມຄວາມຮູ້ດ້ານສິດທິມະນຸດຜ່ານຂະບວນການການສຶກສາ, ແລະ ຊ່ວຍປຸກລະດົມໃນການພັດທະນາ ແລະ ປັບປຸງວຽກງານສິດທິມະນຸດ. ສາຍພົວພັນລະຫວ່າງສຳນັກງານຂ້າຫລວງໃຫຍ່ ແລະ ໜ່ວຍງານພາກປະຊາສັງຄົມນັ້ນແມ່ນມີຄວາມເຂັ້ມແຂງ ແລະ ມີການຮ່ວມມືກັນຢ່າງສະໜິດແໜ້ນ.

ຂອບເຂດວຽກງານຂອງສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ກວມໄປທົ່ວທຸກຂົງເຂດສິດທິມະນຸດ. ໃນແຕ່ລະຂົງເຂດກໍ່ມີ ຄວາມສຳພັນ,

ມີຄວາມກົມກຽວ ແລະ ຖືກສ້າງຂຶ້ນເພື່ອປະສານງານຊ່ວຍເຫລືອເຊິ່ງກັນແລະກັນ.

ການດຳເນີນງານສະເພາະຂອງສຳນັກງານຂ້າຫລວງໃຫຍ່ກໍ່ແມ່ນເພື່ອຄົ້ນຫາ ແລະ ຊອກຫາບັນດາຊ່ອງ ຫວ່າງທີ່ມີໃນລະບົບສິດທິມະນຸດເພື່ອກ້າວໄປສູ່ການປົກປ້ອງ, ຄົ້ນຄົ້ວວິໃຈ ແລະ ການຊອກຫາວິທີການແກ້ໃຫ້ທັນ ກັບສະຖານະການໂດຍສະເພາະເລື່ອງທີ່ກ່ຽວກັບບັນຫາການປ່ຽນແປງຂອງສະພາບອາກາດ ແລະ ການລະເມີດສິດ ທີ່ກ່ຽວກັບເພດດ້ວຍການເບິ່ງບັນຫາໄປຕາມມຸມມອງໃນກອບສິດທິມະນຸດ.

ໃນກອບມາດຕະຖານການດຳເນີນງານ, ສຳນັກງານຂ້າຫລວງໃຫຍ່ແມ່ນໃດ້ມີສ່ວນໃນການພັດທະນາຮູບແບບໃໝ່ໆ ໃນການປົກປ້ອງ ແລະ ສົ່ງເສີມສິດທິມະນຸດສາກົນ.

ວຽກງານການກວດກາຂອງສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ແນ່ໃສ່ການສ້າງຄວາມຮັບປະກັນໃນການນຳເອົາບັນດາມາດຕະຖານສິດທິມະນຸດມາຈັດຕັ້ງປະຕິບັດເພື່ອເຮັດໃຫ້ວຽກງານສິດທິມະນຸດໄດ້ປະສົບຜົນສຳເລັດ.

ໂດຍຜ່ານການຈັດຕັ້ງປະຕິບັດໃນພາກສະໜາມ, ສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ຊອກຫາລະບົບສັນຍານການ ເຕືອນໄພແບບຮີບດ່ວນໃນກໍລະນີທີ່ມີການລະເມີດສິດ ແລະ ມີສະຖານະການທີ່ຄັບຂັນເກີດຂຶ້ນ. ສຳນັກງານຂ້າຫລວງໃຫຍ່ຍັງຈະໃຫ້ການຊ່ວຍເຫຼືອທາງວິຊາການແກ່ລັດຖະບານ ແລະ ພ້ອມທີ່ຈະສົ່ງພະນັກງານ ແລະ ຊັບພະຍາກອນທີ່ຈຳເປັນໄປຊ່ວຍເຫຼືອໃນກໍລະນີທີ່ເກີດໄພພິບັດທາງດ້ານສິດທິຕ່າງໆ.

ນອກຈາກນີ້ສຳນັກງານຂ້າຫລວງໃຫຍ່ຍັງສົ່ງເສີມການສຶກສາ ແລະ ກະຕຸ້ນຄວາມຕື່ນຕົວດ້ານສິດທິມະນຸດ, ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄົນຕ່າງໆໃຫ້ໄດ້ມີໂອກາດເຂົ້າເຖິງການນຳໃຊ້ກົນໄກ ແລະ ອົງກອນສິດທິມະນຸດຂອງສະຫະປະຊາຊາດເພື່ອປົກປ້ອງສິດທິຂອງເຂົາເຈົ້າຢ່າງມີປະສິດທິພາບ, ສ້າງໃຫ້ກາຍເປັນສຳນັກງານເພື່ອການປ່ຽນແປງ-ຕາມວັດຖຸປະສົງດັ່ງທີ່ໄດ້ສ້າງຄູ່ມືສະບັບນີ້ຂຶ້ນມາ.

ກິດຈະກຳຂອງສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ຮັບການສະໜັບສະໜຸນທາງການເງິນຈາກກອງທຶນທົ່ວໄປຂອງສະຫະປະຊາຊາດ ແລະ ຈາກການປະກອບສ່ວນພາຍນອກຂອງບັນດາປະເທດສະມາຊິກ, ອົງການຈັດຕັ້ງສາກົນ, ມູລະນິທິ ແລະ ບຸກຄົນຕ່າງໆທີ່ອາສະມັກໃຫ້ການຊ່ວຍເຫລືອ.

**ຂົງເຂດການດຳເນີນງານທີ່ສຳຄັນ**

ສຳນັກງານຂ້າຫລວງໃຫຍ່ໄດຄົ້ນພົບຂົງເຂດການປົກປ້ອງສິດທິມະນຸດແບບໃໝ່ ແລະ ໄດ້ວາງມາດຕະຖານທີ່ກວມ ເອົາຫລາຍຂົງເຂດ ແລະ ຫລາຍບັນຫາ. ສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ໃຫ້ການປຶກສາຫາລືທາງດ້ານນະໂຍບາຍ ແລະ ກົດໝາຍ, ດຳເນີນການຄົ້ນຄົ້ວວິໃຈໃນບັນຫາຕ່າງໆ, ອຳນວຍຄວາມສະດວກໃຫ້ແກ່ການປຶກສາຫາລື-ການສົນ ທະນາຕ່າງໆ ທີ່ມີຕໍ່ບັນຫາ ແລະ ທ່າອ່ຽງສິດທິມະນຸດທີ່ເກີດຂຶ້ນ, ແລະ ກໍ່ຊອກຫາທາງແກ້ໄຂໂດຍຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງດ້ວຍການສົ່ງເສີມໃຫ້ມີການນຳໃຊ້ວິທີທາງທີ່ແກ້ແບບດີທີ່ສຸດ.

*ຂົງເຂດການດຳເນີນງານທີ່ສຳຄັນມີ:*

- ຕໍ່ຕ້ານການເລືອກປະຕິບັດ;
- ສິດທິຂອງເດັກນ້ອຍ;
- ບັນຫາການປ່ຽນແປງຂອງສະພາບອາກາດ;
- ບັນຫາສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳເຊິ່ງລວມມີສິດທິໃນດ້ານສຸກຂະພາບ, ດ້ານທີ່ຢູ່ອາໃສ, ດ້ານອາຫານ ແລະ ນ້ຳດື່ມ;
- ບັນຫາໂລກເອດ;
- ບັນຫາການວາງແຜນ ແລະ ການປະເມີນສິດທິມະນຸດລະດັບຊາດ;
- ບັນຫາການດຳເນີນທຸລະກິດ ແລະ ສິດທິມະນຸດ;
- ການຕ້ານການກໍ່ການຮ້າຍ ແລະ ສິດທິມະນຸດ;
- ສິດທິມະນຸດ ແລະ ຄົນພິການ;
- ການຝຶກອົບຮົມ ແລະ ການສຶກສາສິດທິມະນຸດ;
- ການເຊື່ອມໂຍງດ້ານສິດທິມະນຸດ;
- ການສືບສວນສອບສວນ ແລະ ການກວດສາສິດທິມະນຸດ;
- ສິດທິມະນຸດໃນປະຕິບັດການປົກປ້ອງສັນຕິພາບ;
- ກຸ່ມຄົນພື້ນເມືອງ ແລະ ກຸ່ມຄົນຊົນເຜົ່າ;
- ເປົ້າໝາຍການພັດທະນາສະຫະສະວັດ ແລະ ສິດທິໃນການໄດ້ຮັບພັດທະນາທີ່ລວມມີເລື່ອງການຫລຸດຜ່ອນ ຄວາມທຸກຍາກ;
- ການແບ່ງແຍກສີຜິວ;
- ລະບຽບກົດໝາຍ ແລະ ປະຊາທິປະໄຕທີ່ລວມໄປເຖິງການສ້າງຄວາມຍຸດຕິທຳ, ຈັບຍາບັນການປົກຄອງ, ຄວາມຮັບຜິດຊອບ, ການໄດ້ຮັບການອະໄພຍະໂທດ, ແລະ ຂະບວນການຕ້ານການສໍ່ລາດບັງຫລວງ;
- ນະໂຍບາຍດ້ານຄວາມໝັ້ນຄົງ;
- ການຄ້າ ແລະ ໂລກາວິວັດ;
- ການຄ້າມະນຸດ;
- ການໃຫ້ຄວາມຍຸດຕິທຳ;
- ສິດທິຂອງແມ່ຍິງ ແລະ ເພດຕ່າງໆ.

ບັນດາແຜນງານເຫລົ່ານີ້ແມ່ນກຳລັງໄດ້ຊອກຫາຊ່ຽວຊານ ແລະ ຜູ້ທີ່ມີຄວາມຮູ້ເພື່ອປະກອບເຂົ້າໃສ່ແຕ່ລະຂົງເຂດ ວຽກງານທີ່ເຫັນວ່າມີຄວາມສຳຄັນເປັນພິເສດໂດຍສະເພາະແມ່ນບັນຫາຄວາມເທົ່າທຽມ ແລະ ການຕໍ່ຕ້ານການຈຳແນກຕ່າງ ໆ. ບັນຫາທີ່ກ່າວມານີ້ແມ່ນມັນໄດ້ສະແດງໃຫ້ເຫັນເຖິງຄວາມຕ້ອງການຂອງກຸ່ມຄົນທີ່ຢາກໄດ້ຮັບການເອົາໃຈໃສ່ເປັນ ພິເສດເຊັ່ນ: ຜູ້ເຄາະຮ້າຍຈາກການຈຳແນກເຊື້ອຊາດ, ກຸ່ມຄົນຊົນເຜົ່າ ແລະ ພື້ນເມືອງ, ສິດທິທາງເພດ ແລະ ສິດທິແມ່ຍິງ, ຄົນພິການ, ການຄ້າມະນຸດ, ແລະ ບັນດາຜູ້ທີ່ຕິດເອດ.

I

# ການເຮັດວຽກຮ່ວມກັບໂຄງ ການສິດທິມະນຸດແຫ່ງອົງການສະຫະປະຊາຊາດ

### ການຮ່ວມມືເພື່ອຄວາມອິດສະຫລະພາບພາຍໃຕ້ລະບຽບກົດໝາຍ

ບັນດາຫຼັກການທີ່ອັບເດດໃນປະຈຸບັນກ່ຽວກັບການຕໍ່ສູ້ເພື່ອຄວາມມີອິດສະລະພາບ, ຫຼັກການພື້ນຖານ ແລະ ຄູ່ມືກ່ຽວກັບສິດທີ່ຈະໄດ້ຮັບການເບິ່ງແຍງແກ້ໄຂແມ່ນໄດ້ຖືກຮັບ ຮອງໃນປີ 2005. ໃນຕອນທີ່ຮ່າງສະບັບທຳອິດມີຄວາມພ້ອມແລ້ວ, ສຳນັກງານຂ້າຫລວງໃຫຍ່ກໍ່ໄດ້ຮຽກປະຊຸມເພື່ອ ປຶກສາຫາລື ແລະ ໃຫ້ຄຳແນະນຳ. ໃນກອງປະຊຸມແມ່ນມີຫລາຍອົງການ NGOs ເຂົ້າຮ່ວມເຊິ່ງລວມມີຄະນະກຳມາທິການກົດໝາຍສາກົນ, ອົງການນິລະໂທດສະກຳສາກົນ, ອົງການເຝົ້າລະວັງສິດທິມະນຸດ, ແລະ ອົງການສູນກາງເພື່ອການສົ່ງມອບຄວາມຍຸດຕິທຳສາ ກົນ. ບັນດາອົງການ NGOs ໄດ້ໃຫ້ທັດສະນະແກ່ຄູ່ຮ່ວມງານພາຍໃນແລະສາກົນວ່າມັນມີຄວາມຈຳເປັນທີ່ຈະນຳເອົາບັນດາປະສົບການທີ່ໄດ້ຈາກພາກສະໜາມມາລວບລວມເຂົ້າໃນຮ່າງເອກະສານ.

ຕໍ່ມາສະມັດຊາໃຫຍ່ໄດ້ຮັບຮອງເອົາບັນດາຫຼັກການພື້ນຖານ ແລະ ຄູ່ມືກ່ຽວກັບສິດທີ່ຈະໄດ້ຮັບການເບິ່ງແຍງແກ້ໄຂໃນ ປີ 2005. ໃນປີດຽວກັນນະຄະກຳມາທິການສິດທິມະນຸດກໍ່ໄດ້ມີແຜນທີ່ຈະປັບປຸງບັນດາຫຼັກການກ່ຽວກັບສິດໃນການຕໍ່ສູ້ເພື່ອຄວາມມີອິດສະຫລະພາບ.

ສຳນັກງານຂ້າຫລວງໃຫຍ່ໄດ້ນຳພາຈັດປະຊຸມສຳມະນາເພື່ອປຶກສາຫາລືກ່ຽວກັບຮ່າງເອກະສານທັງສອງຊຸດຂ້າງເທິງເພື່ອຊອກແນວທາງທີ່ຈະເອົາບັນດາຫຼັກການທີ່ວ່ານັ້ນໄປຈັດຕັ້ງປະຕິບັດພາຍໃນປະເທດ. ໃນກອງປະຊຸມນອກຈາກມີພະນັກງານທີ່ມາຈາກສຳນັກງານຂ້າຫລວງໃຫຍ່ປະຈຳພາກພື້ນແລະຈາກໜ່ວຍງານປົກປ້ອງສັນຕິພາບຂອງ ສປຊ ເຂົ້າຮ່ວມແລ້ວແມ່ນຍັງມີພະນັກງານຂອງ NGOs ທີ່ມາຈາກປະ ເທດທີ່ມີຄວາມຂັດແຍ່ງກໍ່ໄດ້ເຂົ້າຮ່ວມເປັນຈຳນວນຫລວງຫລາຍ. ພາກສ່ວນທີ່ມາ ຈາກ NGOs ທີ່ກ່າວມານີ້ແມ່ນມີສ່ວນຊ່ວຍປະກອບເນື້ອໃນເຂົ້າໃນຮ່າງເອກະສານແລະພ້ອມທີ່ຈະຊ່ວຍເອົາໄປຈັດຕັ້ງປະຕິບັດໃນພາກສະໜາມ. ການເຮັດວຽກຮ່ວມກັບບັນດາລັດຖະບານກໍ່ແມ່ນເປັນໜຶ່ງໃນວຽກງານທີ່ສຳຄັນຂອງ NGOs ເພາະມັນຈະຊ່ວຍຮັບປະກັນໃຫ້ໃນການຈັດຕັ້ງປະຕິລັດບັນດາຫຼັກການມາດຕະຖານທີ່ມີໃນຮ່າງເອກະສານນັ້ນໄດ້ຢ່າງຈິງຈັງ.

ສຳລັບຂໍ້ມູນເພີ່ມເຕີມແມ່ນສາມາດເອົາໄດ້ທີ່:

-ເອກະສານຊຸດອັບເດດໃໝ່ທີ່ກ່ຽວກັບຫຼັກການປົກປ້ອງແລະສົ່ງເສີມສິດທິມະນຸດໂດຍຜ່ານຂະບວນການຕໍ່ສູ້ເພື່ອສິດ ເສລີພາບ (E/CN.4/2005/102/Add.1); ແລະ

- ບັນດາຫຼັກການພື້ນຖານພ້ອມທັງລະບຽບການແນະນຳທີ່ກ່ຽວກັບ ສິດທີ່ຈະໄດ້ຮັບການເບິ່ງແຍງດູແລ ຂອງຜູ້ເຄາະ ຮ້າຍຈາກການລະເມີດ ກົດໝາຍສິດທິມະນຸດສາກົນ ແລະ ການລະເມີດຢ່າງຮ້າຍແຮງຕໍ່ກົດໝາຍ ມະນຸດສະທຳສາກົນ (ມະຕິຂອງສະ ມັດຊາໃຫຍ່ເລກທີ 60/147).

# ການສິດທິມະນຸດແຫ່ງອົງການສະຫະປະຊາຊາດ

**ການຕັ້ງມາດຕະຖານ ແລະ ການກວດສາ**

*ສຳນັກງານຂ້າຫລວງໃຫຍ່ກຳລັງຈະ ໃຫ້ການຊ່ວຍເຫລືອທາງດ້ານການຄົ້ນຄ້ວາທີ່ມີຄຸນນະພາບ, ຊ່ວຍເຫລືອດ້ານຄວາມຮູ້, ດ້ານຄຳແນະນຳ ແລະ ດ້ານການບໍລິຫານງານໃຫ້ແກ່ບັນດາກົນໄກ ແລະ ອົງກອນສິດທິມະນຸດທີ່ເປັນຫຼັກຂອງສະຫະປະ ຊາຊາດທີ່ເຂົາເຈົ້າຊ່ວຍສ້າງມາດຕະຖານ ແລະ ກວດກາບັນດາພັນທະໜ້າທີ່ຂອງລັດຕ່າງໆ, ມີສ່ວນຮ່ວມໃນການ ສ້າງກົດໝາຍສິດທິມະນຸດສາກົນ ແລະ ຫຼັກການນິຕິທຳ, ແລະ ເຮັດໜ້າທີ່ອື່ນໆເພື່ອຮັບປະກັນວ່າບັນດາມາດຕະຖານ ສິດທິມະນຸດທີ່ໄດ້ຖືກຮັບຮອງມາແລ້ວນັ້ນແມ່ນຈະໄດ້ຮັບການຈັດຕັ້ງປະຕິບັດດີຂຶ້ນ. ບັນດາອົງກອນທີ່ກ່າວມານັ້ນມີ:*

- ສະພາສິດທິມະນຸດ ແລະ ກົນໄກຂອງສະພາ, ຂະບວນການພິເສດ, ກົນໄກການທົບທວນ, ຂະບວນການຮ້ອງທຸກ, ຄະນະກຳມາທິການໃຫ້ຄຳປຶກສາ, ກອງປະຊຸມທາງສັງຄົມ, ກອງປະຊຸສຳລັບບັນຫາ ຂອງຄົນຊົນເຜົ່າ, ກົນໄກຂອງຜູ້ຊ່ຽວຊານກ່ຽວກັບສິດທິຂອງຄົນພື້ນເມືອງ; ແລະ
- ອົງກອນສິດທິມະນຸດຕ່າງໆ.

  ສຳນັກງານຂ້າຫລວງໃຫຍ່ໄດ້ໃຫ້ຄຳໝັ້ນສັນຍາວ່າຈະສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານພາກປະຊາສັງຄົມ ເພື່ອໃຫ້ ເຂົ້າເຖິງ ແລະ ນຳໃຊ້ແຜນງານສິດທິມະນຸດຂອງ ສປຊ ທີ່ມີຢູ່ໄດ້ຢ່າງມີປະສິດທິພາບ. ລາຍລະອຽດ ກ່ຽວກັບ ການມີ ສ່ວນຮ່ວມ ແລະ ປະກອບສ່ວນຕໍ່ກົນໄກ ແລະ ອົງກອນຂອງ ສປຊ ໂດຍຜ່ານທາງສຳນັກງານຂ້າຫລວງໃຫຍ່ ນັ້ນແມ່ນ:
- ຢູ່ໃນບົດທີ IV ທີ່ໄດ້ອະທິບາຍກ່ຽວກັບອົງກອນສິດທິມະນຸດ;
- ຢູ່ໃນບົດທີ V ແມ່ນກ່ຽວກັບສະພາສິດທິມະນຸດ ແລະ ກົນໄກຂອງສະພາເຊິ່ງລວມມີຂະບວນການພິ ເສດ, ກົນໄກການ ທົບທວນສາກົນ, ຂະບວນການຮ້ອງທຸກ, ຄະນະກຳມາທິການໃຫ້ຄຳປຶກສາ, ກອງປະ ຊຸມທາງສັງຄົມ, ກອງປະຊຸສຳລັບ ຄົນຊົນເຜົ່າ, ກົນໄກຂອງຜູ້ຊ່ຽວຊານກ່ຽວກັບສິດທິຂອງຄົນພື້ນເມືອງ, ໜ່ວຍງານທີ່ປຶກສາກ່ຽວກັບສິດໃນການໄດ້ຮັບ ການພັດທະນາ ແລະ ບັນດາກົນໄກຕ່າງຕ່າງທີ່ມີໃນຖະແຫຼງການ ແລະ ແຜນດຳເນີນງານແຫ່ງເມືອງເດີບານ;
- ຢູ່ໃນບົດທີ VI ແມ່ນໄດ້ເວົ້າກ່ຽວກັບຂະບວນການພິເສດ;
- ຢູ່ໃນບົດທີ VII ແມ່ນໄດ້ລົງເລິກໃນເລື່ອງກົນໄກການທົບທວນສາກົນ
- ໃນບົດທີ VIII ແມ່ນໄດ້ເນັ້ນເລື່ອງວິທີການທີ່ຈະຍື່ນຄຳຮ້ອງທຸກກ່ຽວກັບການລະເມີດສິດທິມະນຸດ

> ສຳລັບຂໍ້ມູນໃນປະຈຸບັນທີ່ກ່ຽວກັບວຽກງານການກວດສາ ແລະ ການຕັ້ງມາດຕະຖານຂອງສຳນັກງານຂ້າຫລວງໃຫຍ່ແມ່ນສາມາດເອົາໄດ້ທີ່ເວບໄຊ້ຂອງ ສຳນັກງານຂ້າຫລວງໃຫຍ່ໄດ້ເລີຍ

**ການຈັດຕັ້ງປະຕິບັດວຽກງານສິດທິມະນຸດ**

*ບັນດາມາດຕະຖານສິດທິມະນຸດຈະບໍ່ມີຄຸນຄ່າເລີຍຖ້າຫາກວ່າມັນບໍ່ໄດ້ຮັບການຈັດຕັ້ງປະຕິບັດ. ບັນດາປະເທດທີ່ຫາກໍ່ໄດ້ມີຄວາມສະຫງົບຈາກບັນຫາຄວາມຂັດແຍ່ງ ຫຼື ຂາດທາງດ້ານຊັບພະຍາກອນ ຫຼື ຂາດຄວາມຮູ້ຄວາມສາມາດ ແມ່ນມີຄວາມຈຳເປັນຕ້ອງໄດ້ຮັບການຊ່ວຍເຫຼືອເພື່ອໃຫ້ໄດ້ປະຕິບັດຕາມພັນທາງສິດທິມະນຸດທີ່ມີ. ເພາະສະນັ້ນສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ໃຫ້ການຊ່ວຍເຫຼືອທາງດ້ານຊັບພະຍາກອນເປັນຈຳນວນຫລວງຫລາຍໃຫ້ແກ່ກົນໄກສິດທິມະນຸດແຫ່ງຊາດເພື່ອນຳໃຊ້ເຂົ້າໃນການປົກປ້ອງສິດທິມະນຸດ. ໃນການຮ່ວມມືກັບປະເທດຕ່າງໆ, ສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ພະຍາຍາມຊ່ວຍເລື່ອງການຈັດຕັ້ງປະຕິບັດເຊິ່ງລວມມີການສ້າງຄວາມອາດສາມາດ, ການໃຫ້ຄວາມຮູ້, ໃຫ້ຄຳໝັ້ນສັນຍາ ແລະ ການໃຫ້ການປົກປ້ອງ.*

*ຜ່ານການດຳເນີນງານຈາກພາກສະໜາມ ສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ແນໃສ່ຮັບປະກັນໃຫ້:*

- ເຈົ້າໜ້າທີ່ພາຍໃນປະເທດໄດ້ຮຽນຮູ້ກ່ຽວກັບມາດຕະຖານສິດທິມະນຸດສາກົນ ແລະ ຮຽນຮູ້ວິທີການນຳໃຊ້ມາດ ຕະຖານເຫລົ່ານັ້ນເຂົ້າໃນລະບົບກົດໝາຍ, ລະບຽບການ ແລະ ນະໂຍບາຍພາຍໃນຂອງຕົນ;
- ພະນັກງານລັດ ແລະ ໜ່ວຍງານພາກປະຊາສັງຄົມມີບົດບາດສຳຄັນໃນການຊ່ວຍແກ້ໄຂບັນຫາສິດທິມະນຸດ;
- ພະນັກງານລັດມີຄວາມຕື່ນຕົວໃນພັນທະດ້ານການພັດທະນາສິດທິມະນຸດ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນ;
- ຜູ້ທີ່ຖືສິດໄດ້ຮັບການປົກປ້ອງທີ່ດີຂື້ນຈາກບັນດານະໂຍບາຍຕ່າງໆທີ່ເປັນໄພຂົ່ມຂູ່ຕໍ່ສິດທິສ່ວນບຸກຄົນຂອງເຂົາເຈົ້າ; ແລະ
- ສຳນັກງານຂ້າຫລວງໃຫຍ່ເປັນອົງການທີ່ມີບົດບາດສຳຄັນໃນການແກ້ໄຂ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງ ການກ່ຽວກັບສິດທິຢູ່ໃນພາກພື້ນຕ່າງໆ.

ບັນດາສຳນັກງານຂ້າຫລວງໃຫຍ່ພາກສະໜາມ ແລະ ຕົວແທນຕ່າງໆຂອງສຳນັກງານແມ່ນໄດ້ພັດທະນາແບບ ວິທີການ ແກ້ໄຂສິ່ງທ້າທາຍຕ່າງໆດ້ວຍການຮ່ວມມືຢ່າງກັບໄກ້ຊິດກັບລັດຖະບານປະເທດຕ່າງໆ, ກັບໜ່ວຍງານຂອງ ສປຊ, NGOs ແລະ ໜ່ວຍງານພາກປະຊາສັງຄົມຕ່າງໆ. ຕົວຢ່າງ: ສຳນັກງານຂ້າຫລວງໃຫຍ່ໄດ້ໃຫ້ການຊ່ວຍເຫລືອປະ ເທດຕ່າງໆທີ່ມີຄວາມພະຍາຍາມໃນການນຳເອົາກົນໄກມາດຕະຖານສິດທິມະ ນຸດສາກົນເຂົ້າໄປໃຊ້ໃນກົນໄກກົດໝາຍພາຍ ໃນຂອງຕົນ, ນອກຈາກນັ້ນສຳນັກ ງານຂ້າຫລວງໃຫຍ່ຍັງໄດ້ແນະນຳກ່ຽວກັບການ ສ້າງ ແລະ ການດຳເນີນງານຂອງສະ ຖາບັນສິດທິມະນຸດແຫ່ງຊາດທີ່ອິດສະລະນັ້ນແມ່ນຄວນເປັນແນວໃດ. ສຳນັກງານຂ້າ ຫລວງໃຫຍ່ໃນພາກສະໜາມຍັງມີບົດບາດໃນການໃຫ້ການຮ່ວມມື ແລະ ຈັດການຝຶກອົບຮົມກ່ຽວກັບສິດທິມະນຸດໃຫ້ແກ່ພະນັກງານຕຸ ລາການ, ທະຫານ, ຕຳ ຫລວດ, ແລະ ໃຫ້ກັບລັດຖະສະພາຕ່າງໆດ້ວຍ ການຍົກໃຫ້ເຫັນເຖິງສິ່ງທີ່ກ່ຽວຂ້ອງລະຫວ່າງມາດຕະຖານ ສິດທິມະ ນຸດແລະ ການດຳເນີນງານຂອງເຂົາເຈົ້າ. ການແນະນຳຍັງ ມີໃຫ້ແກ່ບັນດາອົງກອນສິດທິມະນຸດ ແລະ ກົນໄກການທົບທວນ ສາກົນ. ສຳນັກງານຂ້າຫລວງໃຫຍ່ຍັງໄດ້ຄິດຄົ້ນແຜນພັດທະນາການສຶກສາກ່ຽວກັບສິດທະນຸດນຳອີກ.

**ໜ່ວຍງານພາກປະຊາສັງຄົມແມ່ນມີບົດບາດສຳຄັນຕໍ່ກັບວຽກງານຂອງສຳນັກງານຂ້າຫລວງໃຫຍ່ໃນພາກສະໜາມ. ຕໍ່ໄປນີ້ແມ່ນບາງຕົວຢ່າງທີ່ໜ່ວຍງານພາກປະຊາສັງຄົມນັ້ນມີສ່ວນຮ່ວມກັບສຳນັກງານຂ້າຫລວງໃຫຍ່:**

- ແຈ້ງເຕືອນໃຫ້ສຳນັກງານຂ້າຫລວງໃຫຍ່ຮັບຮູ້ເຖິງບັນດາສະຖານະການທີ່ບໍ່ຄ່ອຍດີກ່ຽວກັບການລະເມີດສິດ ແລະ ແນວໂນ້ມຂອງສະຖານະການທີ່ເກີດຂື້ນ;
- ລາຍງານໃຫ້ສຳນັກງານຂ້າຫລວງໃຫຍ່ກ່ຽວກັບສະພາບບັນຫາ ແລະ ການພັດທະນາສິດທິມະນຸດພ້ອມທັງເລື່ອງລາວ ທີ່ກ່ຽວກັບການລະເມີດສິດທີ່ຮຸນແຮງ;
- ເຮັດວຽກຄຽງຄູ່ກັບສຳນັກງານຂ້າຫລວງໃຫຍ່ໃນການຈັດປະຊຸມສຳມະນາ, ຈັດຝຶກອົບຮົມ, ແລະ ດົນນະລົງສ້າງຄວາມ ຕື່ນຕົວກ່ຽວກັບສິດທິມະນຸດ; ແລະ
- ໃຫ້ການຮ່ວມມືກັບສຳນັກງານຂ້າຫລວງໃຫຍ່ໃນການສົ່ງເສີມການໃຫ້ສັດຕະຍາບັນກ່ຽວກັບບັນດາສົນທິສັນຍາສິດທິມະນຸດ ຕ່າງໆເພື່ອນຳໄປຈັດຕັ້ງປະຕິບັດຕໍ່ໄປ.

ສຳນັກງານຂ້າຫລວງໃຫຍ່ທີ່ມີຢູ່ໃນພາກສະໜາມແມ່ນປະກອບມີບັນດາຫ້ອງການປະຈຳໃນປະເທດຕ່າງໆ, ປະຈຳຢູ່ໃນ ພາກພື້ນ, ປະຈຳຢູ່ໃນໜ່ວຍງານການຮັກສາສັນຕິພາບຂອງ ສປຊ, ປະຈຳຢູ່ໃນທີມງານທີ່ປຶກສາຂອງ ສປຊ ໃນປະເທດ ຕ່າງໆ, ແລະ ກໍ່ມີຢູ່ໃນໜ່ວຍງານແກ້ໄຂບັນຫາໄພພິບັດດ້ານສິດທິມະນຸດທີ່ເກີດຂື້ນ.

**1. ຫ້ອງການປະຈຳໃນປະເທດ**

ສຳນັກງານຂ້າຫລວງໃຫຍ່ໄດ້ມີຫ້ອງການປະຈຳພາຍໃນປະເທດຕ່າງໆທີ່ນັບມື້ນັບເພີ່ມຂື້ນ. ກິດຈະກຳຫຼັກຂອງເຂົາ ເຈົ້າກໍ່ຄືວຽກທີ່ກ່ຽວກັບການກວດກາສິດທິມະນຸດ, ເຜີຍແຜ່ບົດລາຍງານ, ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ໃຫ້ການຊ່ວຍເຫຼືອລັດຖະບານປະເທດຕ່າງໆໃນການພັດທະນາວຽກງານສິດທິມະນຸດໃນໄລຍະຍາວ ແລະ ໃຫ້ມີຄວາມຍືນຍົງ.

**ການຮ່ວມງານກັບສໍານັກງານຂ້າຫລວງໃຫຍ່ປະຈໍາປະເທດອູການດາເພື່ອພັດທະນາ ການສົ່ງເສີມ ແລະ ການປົກປ້ອງສິດທິມະນຸດສໍາລັບຄົນພິການ**

ສໍານັກງານຂ້າຫລວງໃຫຍ່ປະຈໍາປະເທດອູການດາໄດ້ຮ່ວມງານກັບບັນດາສະມາຄົມຄົນພິການເພື່ອສົ່ງເສີມຄວາມເຂົ້າໃຈກ່ຽວກັບຄົນພິການທີ່ກ່ຽວຂ້ອງກັບບັນຫາສິດທິ ມະນຸດ, ສົ່ງເສີມຄວາມຕື່ນຕົວ ແລະ ການນໍາໃຊ້ບັນດາມາດ ຕະຖານສິດທິມະນຸດຢູ່ໃນລະບົບກົດໝາຍ, ໃນນະໂຍບາຍ ແລະ ໃນແຜນງານພາຍໃນ. ນອກນັ້ນກໍ່ຍັງໄດ້ຮ່ວມງານກັນບັນດາ NGOs ຕ່າງໆໃນຫລາຍດ້ານຄື:

- ໃຫ້ການປຶກສາຫາລືເພື່ອຈະຊ່ວຍເຫຼືອດ້ານຍວິຊາການກ່ຽວກັບການນໍາເອົາບັນດາມາດຕະຖານສິດທິມະນຸດສາກົນເຂົ້າມານໍາໃຊ້ໃນລະ ບົບກົດໝາຍ ແລະ ນະໂຍບາຍພາຍ ໃນເພື່ອຄົນພິການ
- ດໍາເນີນການກວດສອບ ແລະ ໃຫ້ການປຶກສາຫາລືກ່ຽວກັບສະພາບການຂອງຄົນພິການ, ສົ່ງເສີມການມີສ່ວນຮ່ວມຂອງພາກສ່ວນ NGOs ຂອງຄົນພິການໃນການພັດທະນາກົນໄກສິດທິມະນຸດເພື່ອຄົນພິການຢ່າງຕັ້ງໜ້າ;
- ສະໜັບສະໜູນສະມາຄົມຄົນພິການແຫ່ງຊາດເພື່ອຕາມລ້າລາຍເຊັນໃຫ້ໄດ້ຄົບຕາມຈໍານວນເພື່ອສະເໜີໃຫ້ລັດຖະບານຕັດສິນໃຈໃຫ້ສັດຕະຍາບັນສົນທິສັນຍາກ່ຽວກັບສິດຂອງຄົນພິການ. ລາຍເຊັນທີ່ໄດ້ມາແມ່ນມີປະມານ 1.000ລາຍເຊັນເຊິ່ງໄດ້ຈາກວັນທີ່ຄົບຮອບສິດທິມະນຸດສາກົນປີ 2007.
- ໃຫ້ການຊ່ວຍເຫຼືອສ້າງທາງປູຢາງເຂົ້າໄປຫາຫ້ອງການບໍລິຫານຂອງເມືອງໄຊໂລຕີ້ເພື່ອເປັນການສ້າງຄວາມສະດວກແກ່ສາທາລະນະໃນການເຂົ້າຫາສໍານັກ ງານ. ຍ້ອນການດົນນະລົງຂອງພາກສ່ວນ NGOs ທີ່ມີມາເລື້ອຍໆ, ເສັ້ນທາງອື່ນໃນຕົວເມືອງກໍ່ເລີຍໄດ້ຮັບການປູຢາງຂື້ນ;
- ນອກຈາກກິດຈະກໍາທີ່ກ່າວມາ ແລ້ວ, ສໍານັກງານຂ້າຫລວງໃຫຍ່ປະຈໍາປະເທດອູການດາຍັງຊ່ວຍຈັດການຝຶກອົບແກ່ຄົນພິການໃຫ້ຮູ້ກ່ຽວກັບມາດຕະຖານສິດທິມະນຸດສາກົນ, ຮູ້ຈັກກົດໝາຍ, ແລະ ນະໂຍບາຍພາຍໃນ. ເອກະສານຕ່າງໆທີ່ກ່າວມານັ້ນກໍ່ແມ່ນຍັງໄດ້ສ້າງເປັນພາສາສໍາລັບຄົນພິການອີກດ້ວຍ.

2. **ສໍານັກງານປະຈໍາພາກພື້ນ**

ສໍານັກງານຂ້າຫລວງໃຫຍ່ປະຈໍາພາກພື້ນແມ່ນກໍາລັງຄົ້ນຫາສິດທິມະນຸດທີ່ມີຄວາມສໍາຄັນສໍາລັບພາກພື້ນເພື່ອໃຫ້ການຊ່ວຍເຫລືອແກ້ໄຂບັນຫາດ້ວຍການສົ່ງເສີມໃຫ້ມີສ່ວນຮ່ວມ ແລະ ແລກປ່ຽນບົດຮຽນແລະປະສົບການເຊິ່ງກັນແລະກັນ. ນອກນີ້ສໍານັກງານປະຈໍາພາກພື້ນຍັງເປັນສະຖານທີ່ຂອງບັນດາຊ່ຽວຊານທີ່ມີຄວາມ ຮູ້ຄວາມສາມາດເປັນຈໍານວນຫລວງຫລາຍເຊິ່ງໄດ້ໃຫ້ການຮ່ວມມືກັບອົງກອນຕ່າງໆທັງໃນພາກພື້ນ ແລະ ໃນລະດັບຊາດ, ຮ່ວມງານກັບທີມງານຈາກ ອົງການ ສປຊ, ສະຖາບັນສິດທິມະນຸດແຫ່ງຊາດ, ແລະ ໜ່ວຍງານ ພາກປະຊາສັງຄົມອື່ນໆ.

3. **ອົງປະກອບສິດທິມະນຸດຂອງໜ່ວຍງານປົກປ້ອງສັນຕິພາບຂອງ ສປຊ**

ສໍານັກງານຂ້າຫລວງໃຫຍ່ແມ່ນມີສ່ວນຮ່ວມໃນພາລະກິດຂອງ ສປຊ ໃນການຮັກສາ ແລະ ສ້າງສັນຕິພາບໂລກ, ສໍານັກ ງານຂ້າຫລວງໃຫຍ່ເປັນອົງການທີ່ມີບົດບາດສໍາຄັນທີ່ເປັນສ່ວນໜຶ່ງໃນການດໍາເນີນວຽກງານສິດທິມະນຸດຢູ່ໃນພາກສະ ໜາມຮ່ວມກັບພະແນກປົກປ້ອງສັນຕິພາບ ແລະ ການເມືອງຂອງ ສປຊ. ນອກຈາກນີ້ສໍານັກງານຂ້າຫລວງໃຫຍ່ຍັງໄດ້ ຮ່ວມມືກັບສະພາຄວາມໝັ້ນຄົງໃນການເຮັດໜ້າທີ່ປົກປ້ອງສັນຕິພາບ ແລະ ຮັກສາຄວາມໝັ້ນຄົງຂອງໂລກ.

ສຳນັກງານຂ້າຫລວງໃຫຍ່ໃຫ້ຄວາມສຳຄັນບູລິມະສິດໃຫຍ່ຢູ່ 4 ຢ່າງເພື່ອນຳເອົາມາຈັດຕັ້ງປະຕິບັດໃນການຮັກສາສັນຕິພາບໂລກຄື:

- ຮັບປະກັນຄວາມຍຸດຕິທຳ ແລະ ສະໜັບສະໜູນຂະບວນການຮັກສາສັນຕິພາບ;
- ປ້ອງກັນ ແລະ ແກ້ໄຂບັນຫາການລະເມີດສິດທິມະນຸດ;
- ສ້າງຄວາມເຂັ້ມແຂງ ແລະ ຄວາມອາດສາມາດໃຫ້ແກ່ສະຖາບັນແຫ່ງຊາດຕ່າງໆ; ແລະ
- ປະຕິບັດໜ້າທີ່ດ້ານສິດທິມະນຸດໂດຍຜ່ານແຜນການດຳເນີນງານຂອງ ສປຊ

**ການຮ່ວມງານກັບໜ່ວຍງານສິດທິແມ່ຍິງຂອງອົງການ ສປຊ ທີ່ປະຈຳຢູ່ທີ່ປະເທດຊູດານ**

ຕັ້ງແຕ່ເດືອນ 3/2008, ໜ່ວຍງານຂອງ ສປຊ ປະຈຳຢູ່ທີ່ຫ້ອງການສິດທິມະນຸດຂອງຊູດານໄດ້ສ້າງລາຍການວິທະຍຸໂດຍຮ່ວມມືກັບໜ່ວຍງານປົກປ້ອງແມ່ຍິງແຫ່ງເມືອງມາລາກາ ແລະ ສະຖານີວິທະຍຸຂອງເມືອງມາລາກາ ເພື່ອສ້າງຄວາມຕື່ນຕົວກ່ຽວກັບສິດທິຂອງແມ່ຍິງໂດຍສະເພາະແມ່ນເລື່ອງທີ່ກ່ຽວກັບສິດທິທີ່ຈະດຳລົງຊີວິດຢູ່ໂດຍປາດສະຈາກໄພຂົ່ມຂູ່ທາງເພດຕ່າງໆ. ໃນລາຍການວິທະຍຸກໍ່ມີບັນດາປະເທດສະມາຊິກສະພາກົດໝາຍຂອງອົງການ ແມ່ນ້ຳນາຍຕອນທິງ ແລະ ນັກເຄື່ອນໄຫວພາກປະຊາສັງຄົມເຂົ້າຮ່ວມ. ການດຳເນີນລາຍການຄັ້ງທຳອິດນັ້ນກໍ່ແມ່ນໄດ້ມີການຈັດປະຊຸມສຳມະນາໃຫ້ແກ່ຊຸມຊົນທ້ອງຖິ່ນໄປພ້ອມໆກັນ.

4. **ທີ່ປຶກສາດ້ານສິດທິມະນຸດຂອງທີມງານປະຈຳຊາດຂອງອົງການ ສປຊ**

ທີ່ປຶກສາດ້ານສິດທິມະນຸດແມ່ນເປັນຊ່ຽວຊານທີ່ໄດ້ມາຈາກການຈັດຫາໂດຍສຳນັກງານຂ້າຫລວງໃຫຍ່ເພື່ອໃຫ້ການສະນັບສະໜູນທີມງານປະຈຳຊາດຂອງອົງການ ສປຊ ຕາມການຮຽກຮ້ອງຈາກຜູ່ປະສານງານໃນພາກສະໜາມ. ບັນດາຊ່ຽວຊານເຫລົ່ານັ້ນແມ່ນມີໜ້າທີ່ໃນການໃຫ້ຄຳປຶກສາກ່ຽວກັບຍຸດທະສາດເພື່ອສົ່ງເສີມ ແລະ ປົກປ້ອງສິດທິມະນຸດ. ນອກຈາກນີ້ ຊ່ຽວຊານຍັງມີໜ້າທີ່ໃນການເຮັດວຽກຮ່ວມກັບໜ່ວຍງານຕ່າງໆທີ່ຢູ່ໃນປະເທດ (ພາກລັດຖະບານ ແລະ ພາກປະຊາສັງຄົມ) ເພື່ອຊຸກຍູ້ການຈັດຕັ້ງປະຕິບັດມາດຕະຖາສິດທິມະນຸດໃຫ້ມີປະສິດທິພາບ.

5. **ປະຕິກິລິຍາຕໍ່ປະກົດການລະເມີດສິດທິມະນຸດທີ່ເກີດຂຶ້ນ**

ເພື່ອຮ່ວມງານກັບປະເທດຕ່າງໆໂດຍຜ່ານທາງຫ້ອງການປະຈຳທີ່ພາກສະໜາມ, ຫ້ອງການແກ້ໄຂບັນຫາທີ່ຮີບດ່ວນຂອງສຳນັກງານຂ້າຫລວງໃຫຍ່ໄດ້ຈັດຫາພະນັກງານທີ່ມີຄວາມຮູ້ມາຊ່ວຍວຽກການປ້ອງກັນ ຫຼື ໃຫ້ການແກ້ໄຂສະພາບການການລະເມີດສິດທິມະນຸດໃນທົ່ວໂລກ. ສຳນັກງານຂ້າຫລວງໃຫຍ່ອາດຈະດຳເນີນການ ຫຼື ໃຫ້ການສະໜັບສະໜຸນແກ່ໜ່ວຍງານສືບສວນສອບສວນເພື່ອດຳເນີນການກວດກາຫາຄວາມຈິງທີ່ເກີດຂຶ້ນກ່ຽວກັບບັນຫາການລະເມີດສິດທິມະນຸດ.

ໜ່ວຍງານດັ່ງກ່າວຍັງເຮັດໜ້າທີ່ເປັນສູນກາງໃຫ້ແກ່ສຳນັກງານຂ້າຫລວງໃຫຍ່ເພື່ອເປັນສ່ວນປະກອບໜຶ່ງ ຂອງພາລະກິດການປົກປ້ອງສັນຕິພາບດ້ານສິດທິມະນຸດ. ການດຳເນີນພາລະກິດດັ່ງກ່າວແມ່ນໄດ້ຮັບການສະໜັບສະໜຸນຈາກສຳນັກງານຂ້າຫລວງໃຫຍ່ທີ່ປະກອບສ່ວນຊ່ວຍທາງດ້ານການຈັດຫາພະນັກງານໃໝ່, ຈັດການຝຶກອົບຮົມ ແລະ ຮຽນຮູ້, ເວົ້າລວມແລ້ວກໍ່ຄືການໃຫ້ຄຳປຶກສາທາງດ້ານນະໂຍບາຍ ແລະ ແຜນການປະຕິບັດງານທີ່ສຳຄັນໆ.

### ໂຄງການຝຶກອົບຮົມ ແລະ ທຶນການສຶກສາຂອງສຳນັກງານຂ້າຫລວງໃຫຍ່

ສຳນັກງານຂ້າຫລວງໃຫຍ່ໄດ້ສ້າງໂຄງການຝຶກອົບຮົມ ແລະ ໃຫ້ທຶນການສຶກສາແກ່ໜ່ວຍງານພາກປະຊາຊົນ ເພື່ອເປັນການເສີມສ້າງພາລະບົດບາດ ແລະ ການມີສ່ວນຮ່ວມໃນກົນໄກການພັດທະນາສິດທິມະນຸດ. ເນື້ອໃນໂຄງການມີດັ່ງນີ້:

- ໂຄງການທຶນການສຶກສາສຳລັບກຸ່ມຄົນພື້ນເມືອງ;
- ທຶນການສຶກສາສຳລັບຊົນເຜົ່າ;
- ທຶນການສຶກສາສຳລັບການສຶກສາສິດທິມະນຸດຂອງປະເທດດ້ອຍພັດທະນາ;
- ທຶນການສຶກສາສຳລັບສະຖາບັນສິດທິມະນຸດແຫ່ງຊາດ.

ຂໍ້ມູນເພີ່ມເຕີມແມ່ນສາມາດເອົາໄດ້ທີ່ໂຄງການເພື່ອການສຶກສາ ແລະ ຝຶກອົບຮົມຂອງສຳນັກງານຂ້າ ຫລວງໃຫຍ່, ມີລາຍລະອຽດຢູ່ໃນບົດທີ II ຂອງຄູ່ມືນີ້.

### ສື່ພິມ ແລະ ວັດຖຸອຸປະກອນຕ່າງໆຂອງສຳນັກງານຂ້າຫລວງໃຫຍ່

ສຳນັກງານຂ້າຫລວງໃຫຍ່ໄດ້ອອກສື່ພິມເປັນຈຳນວນຫລວງຫລາຍທີ່ກ່ຽວກັບສິດທິມະນຸດແລະເປັນປະໂຫຍດໃຫ້ແກ່ປະເທດຕ່າງໆ, ໃຫ້ແກ່ສະຖາບັນສິດທິມະນຸດ, ໜ່ວຍງານພາກປະຊາສັງຄົມ, ສາທາລະນະ ແລະ ໜ່ວຍງານສື່ມວນ ຊົນຕ່າງໆ.

ສື່ພິມຕ່າງໆນັ້ນແມ່ນສາມາດດາວໂລດເອົາໄດ້ໃນເວບໄຊ້ເລີຍ ຫຼື ວ່າຂໍເອົານຳພະແນກທີ່ກ່ຽວຂ້ອງ ຂອງສຳນັກ ງານຂ້າຫລວງໃຫຍ່.

ຂໍ້ມູນເພີ່ມເຕີກ່ຽວກັບສື່ພິມແມ່ນສາມາດເອົາລາຍລະອຽດຢູ່ໃນບົດທີ III ຂອງຄູ່ມືນີ້ ຫຼື ຕິດຕໍ່ທາງອີເມວໄດ້ທີ່ publications@ohchr.org ຫຼື library@ohchr.org.

### ກອງທຶນ ແລະ ທຶນການຊ່ວຍເຫຼືອ

ກອງທຶນ ແລະ ທຶນການຊ່ວຍເຫຼືອຂອງອົງການ ສປຊ ບາງສ່ວນທີ່ໄດ້ຮັບການບໍລິຫານຈັດການໂດຍສຳນັກງານຂ້າ ຫລວງໃຫຍ່ນັ້ນແມ່ນຈະເປັນປະໂຫຍດໂດຍຕົງແກ່ບັນດາອົງການ NGOs, ອົງການຂັ້ນຮາກຖານ, ສະມາຄົມ ທາງວິຊາຊີບ ແລະ ໜ່ວຍງານພາກປະຊາສັງຄົມອື່ນໆ.

**ກອງທຶນ ແລະ ທຶນຊ່ວຍເຫຼືອທີ່ໄດ້ຮັບການບໍລິຫານຈັດການໂດຍສຳນັກງານຂ້າຫລວງໃຫຍ່ແມ່ນ:**

- ກອງທຶນອາສາຂອງອົງການ ສປຊ ເພື່ອຜູ້ເຄາະຮ້າຍຈາກການຖືກທໍລະມານ;
- ກອງທຶນອາສາເພື່ອຄົນພື້ນເມືອງ;
- ກອງທຶນສຳຮອງອາສາຂອງອົງການ ສປຊ ເພື່ອຊ່ວຍເຫຼືອຕ້ານກັບການເປັນຂ້າທາດໃນຮູບແບບຕ່າງໆໃນປະຈຸບັນ ແລະ ໂຄງການ "ການຊ່ວຍເຫຼືອຊຸມຊົນຮ່ວມກັນ"

ຂໍ້ມູນເພີ່ມເຕີມກ່ຽວກັບກອງທຶນແມ່ນສາມາດເອົາລາຍລະອຽດໄດ້ທີ່ບົດທີ IX ຂອງຄູ່ມືນີ້

### D. ໂຄງຮ່າງການຈັດຕັ້ງຂອງສຳນັກງານຂ້າຫລວງໃຫຍ່

ສຳນັກງານຂ້າຫລວງໃຫຍ່ແມ່ນຖືກນຳພາໂດຍປະທານຂ້າຫລວງໃຫຍ່ ແລະ ຮອງປະທານ. ທັງສອງທ່ານແມ່ນໄດ້ຮັບການສະໜັບສະໜຸນໃນວຽກງານໂດຍຫ້ອງການບໍລິຫານຂອງສຳນັກງານ, ທັງປະທານ ແລະ ຮອງປະທານກໍ່ເປັນສ່ວນ ໜຶ່ງຂອງ ຫ້ອງການບໍລິຫານ ແລະ ການຈັດຕັ້ງຂອງສຳນັກງານ.

**ຫ້ອງການບໍລິຫານ ແລະ ການຈັດຕັ້ງຂອງສຳນັກງານແມ່ນປະກອບມີ:**

- ສຳນັກງານຢູ່ທີ່ນະຄອນນິວຢອກເຊິ່ງເຮັດໜ້າທີ່ກ່ຽວກັບການສ້າງຄວາມເຊື່ອໝັ້ນເພື່ອໃຫ້ສິດທິມະນຸດໄດ້ຮັບການຈັດຕັ້ງປະຕິບັດເຊື່ອມໂຍງຢ່າງສົມບູບເຂົ້າໃນວຽກງານຂອງອົງການ ສປຊ ວ່າດ້ວຍການການພັດທະນາ ແລະ ຄວາມໝັ້ນ ຄົງ, ໃຫ້ການສະໜັບສະໜູນເຕັມທີ່ໃນດ້ານສິດທິມະນຸດແກ່ສະມັດຊາໃຫຍ່, ສະພາເສດຖະກິດສັງຄົມ, ສະພາຄວາມ ໝັ້ນຄົງ, ແລະ ອົງກອນລະຫວ່າງລັດຖະບານຕ່າງໆ;
- ພະແນກນະໂຍບາຍ, ວາງແຜນ, ກວດສອບ ແລະ ປະເມີນ ແມ່ນເປັນພະແນກທີ່ເຮັດວຽກຮ່ວມກັບສຳນັກງານຂ້າຫລວງໃຫຍ່ເພື່ອສ້າງຄວາມເຊື່ອໝັ້ນວ່າວິໃສທັດທາງຍຸດທະສາດຂອງສຳນັກງານຈະໄດ້ຮັບການວາງໃຫ້ເປັນບູລິມະ ສິດທີ່ສຳຄັນ ແລະ ເປັນແຜນງານຈັດຕັ້ງປະຕິບັດ, ແລະ ຮັບປະກັນການນຳເອົາບັນຫາຕ່າງໆມາທຳການກວດສອບ ແລະ ປະເມີນໄດ້ຢ່າງມີປະສິດທິພາບ;
- ພະແນກສື່ສານ, ເປັນພະແນກທີ່ເຮັດວຽກກ່ຽວກັບການພັດທະນາ ແລະ ຈັດຕັ້ງປະຕິບັດບັນດາຍຸດທະສາດຕ່າງໆເພື່ອຍົກລະດັບຄວາມຮູ້ດ້ານສິດທິມະນຸດ ແລະ ແຈ້ງການກ່ຽວກັບຜົນການພັດທະນາວຽກງານສິດທິມະນຸດ ແລະ ວຽກງານຂອງສຳນັກງານຂ້າຫລວງໃຫຍ່ໃຫ້ແກ່ສະມາຄົມລະຫວ່າງປະເທດໃຫ້ໄດ້ຮັບຊາບ;
- ພະແນກບໍລິຈາກ ແລະ ສາຍພົວພັນກັບພາຍນອກ, ແມ່ນເປັນພາກສ່ວນທີ່ເຮັດວຽກເພື່ອຮັບປະກັນວ່າບັນດາແຜນງານທີ່ມີຂອງສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ຮັບການແຈ້ງບອກໃຫ້ແກ່ປະເທດຕ່າງໆແລ້ວ, ວາງແຜນຄົ້ນຫາຄວາມຈຳເປັນທາງດ້ານການເງິນ ແລະ ດ້ານບູລິມະສິດ, ດຳເນີນການລະດົມທຶນເພື່ອສະນັບສະໜູນການຈັດຕັ້ງປະຕິບັດວຽກງານຂອງສຳນັກງານຂ້າຫລວງໃຫຍ່;
- ພະແນກຄວາມໝັ້ນຄົງ ແລະ ຄວາມປອດໄພໃນພາກສະໜາມ, ແມ່ນປະຕິບັດໜ້າທີ່ຮ່ວມກັບພະແນກຄວາມໝັ້ນຄົງ ແລະ ຄວາມປອດໄພຂອງອົງການ ສປຊ ເພື່ອໃຫ້ການຮັບກັນເຖິງຄວາມປອດໄພຂອງພະນັກງານ ແລະ ສຳນັກງານຂອງຫ້ອງຂ້າຫລວງໃຫຍ່ທັງໝົດ.

**ພະແນກພາກປະຊາສັງຄົມທີ່ໄດ້ຮັບການສ້າງຕັ້ງຂື້ນມາໃໝ່**ກໍ່ແມ່ນເປັນສ່ວນໜຶ່ງຂອງຫ້ອງການບໍລິຫານ ແລະ ການຈັດຕັ້ງຂອງສຳນັກງານຂ້າຫລວງໃຫຍ່. ໜ່ວຍງານດັ່ງກ່າວແມ່ນເປັນທາງເລືອກໃໝ່ໃຫ້ແກ່ນັກເຄື່ອນໄຫວພາກປະຊາສັງຄົມໃນການຕິດຕໍ່ສື່ສານກັບສຳນັກງານຂ້າຫລວງໃຫຍ່. ການດຳເນີນງານຂອງໜ່ວຍງານໃໝ່ນີ້ແມ່ນເປັນອົງກອນທີ່ຕອບສະໜອງຂໍ້ ມູນຂ່າວສານ ແລະ ໃຫ້ຄຳແນະນຳໃນບັນຫາຕ່າງໆ, ໃຫ້ການປຶກສາຫາລືທາງດ້ານນະໂຍບາຍ ແລະ ຍຸດທະສາດເພື່ອການ ຮ່ວມມື ແລະ ພັດທະນາເຄື່ອງມືທີ່ຈະໃຊ້ເຂົ້າໃນການຊ່ວຍເຫຼືອໜ່ວຍງານພາກປະຊາສັງຄົມໃນດ້ານການຮ່ວມມືກັບອົງກອນ ສິດທິມະນຸດ ສປຊ ແລະ ກົນໄກຕ່າງໆ. ບັນດາຮູບການການຮ່ວມມື ແລະ ປະສານງານຕ່າງໆແມ່ນມີຢູ່ໃນປື້ມຄູ່ມືນີ້ແລ້ວ.

**ໜ່ວຍງານການບໍລິຫານຈັດການ ແລະ ການສະນັບສະໜູນໂຄງການຂອງສຳນັກງານຂ້າຫລວງໃຫຍ່**ແມ່ນໄດ້ ໃຫ້ການສະໜັບສະໜູນຊ່ວຍເຫຼືອທາງດ້ານທຶນຮອນ ແລະ ການບໍລິຫານທາງດ້ານການເງິນ; ສັນຫາພະນັກງານ ແລະ ຊັບພະຍາ

ກອນໃໝ່; ດຳເນີນການຈັດຊື້, ສະໜັບສະໜູນດ້ານການບໍລິຫານຈັດການກັບຊັບສິນ, ສະໜັບສະ ໜູນທາງດ້ານການຂົນສົ່ງເດີນທາງໄປພາກສະໜາມ; ສະໜັບສະໜູນຂໍ້ມູນຂ່າວສານທາງດ້ານເຕັກໂນໂລຢີ; ແລະ ໃຫ້ການສະໜັບສະໜູນດ້ານການພັດທະນາ ແລະ ຝຶກອົບຮົມພະນັກງານ.

ນອກຈາກໜ່ວຍງານທີ່ກ່າວມາຂ້າງເທິງນີ້ແລ້ວ, ສຳນັກງານຂ້າຫລວງໃຫຍ່ຍັງປະກອບດ້ວຍສີ່ກົມທີ່ສຳຄັນຄື:

- ກົມສົນທິສັນຍາ ແລະ ສະພາສິດທິມະນຸດ, ແມ່ນມີໜ້າທີ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍໃນການປະຕິບັດໜ້າທີ່ ຂອງສະພາ ແລະ ກົນໄກສິດທິມະນຸດຕ່າງໆ, ແລະ ຂອງອົງກອນສິດທິມະນຸດ. ກົມສົນທິສັນຍາຍັງໃຫ້ ການສະໜັບ ສະໜູນບັນດາກິດຈະກຳຕ່າງໆ ທີ່ນຳໃຊ້ກອງທຶນອາສາເພື່ອຜູ້ເຄາະຮ້າຍຈາກການຖືກທໍລະມານ ແລະ ໃຫ້ການປະສານງານດ້ານເອກະສານທີ່ຕຽມໄວ້ເພື່ອໃຫ້ອົງກອນລະຫວ່າງລັດຖະບານໄດ້ເອົາໄປນຳໃຊ້;
- ກົມຂະບວນການພິເສດ, ແມ່ນໃຫ້ການສະໜັບສະໜຸນການດຳເນີນງານພິເສດດ້ວຍການວາງເປົ້າໝາຍ, ໃຫ້ ຄວາມຮູ້ດ້ານກົດໝາຍ ແລະ ຄົ້ນຫາຄວາມເປັນຈິງ, ໃຫ້ການຄົ້ນຄົ້ວ ແລະ ວິເຄາະ, ແລະ ໃຫ້ການຊ່ວຍເຫຼືອ ດ້ານການບໍລິຫານ ແລະ ການຂົນສົ່ງ. ນອກນີ້ກົມຍັງໃຫ້ຄວາມສະດວກໃນການຮ່ວມມື ແລະ ການພົບປະລະຫວ່າງ ຜູ້ທີ່ໄດ້ຮັບການມອບໝາຍ ແລະພາກສ່ວນກ່ຽວຂ້ອງກັບການດຳເນີນງານເຊິ່ງລວມມີໜ່ວຍງານພາກປະຊາສັງຄົມ;
- ກົມການຮ່ວມມືທາງດ້ານວິຊາການ ແລະ ການດຳເນີນງານໃນພາກສະໜາມ, ເປັນກົມທີ່ໃຫ້ການປະສານງານລະຫວ່າງການພັດທະນາກັບການຈັດຕັ້ງປະຕິບັດຍຸດທະສາດຮ່ວມແຫ່ງຊາດຂອງສຳນັກງານຂ້າຫລວງໃຫຍ່, ບໍລິຫານຈັດການແຜນງານທາງວິຊາການ ແລະ ຍັງເຮັດໜ້າທີ່ເປັນຂົວຕໍ່ໃຫ້ແກ່ສຳນັກງານຕ່າງໆໃນພາກສະໜາມຂອງສຳນັກ ງານຂ້າຫລວງໃຫຍ່; ແລະ
- ກົມຄົ້ນຄົ້ວວິໃຈກ່ຽວກັບສິດທິໃນການພັດທະນາ, ແມ່ນປະຕິບັດໜ້າທີ່ກ່ຽວກັບການຄົ້ນຄົ້ວວິໃຈດ້ານສິດທິມະ ນຸດທີ່ສຳຄັນໃຫ້ແກ່ສຳນັກງານຂ້າຫລວງໃຫຍ່ເຊິ່ງມີທັງການໃຫ້ການສະໜັບສະໜູນທາງວິຊາການໃຫ້ແກ່ພາກສະໜາມແລະ ໃຫ້ການເບິ່ງແຍງດູແລສູນເກັບມ້ຽນເອກະສານຂອງສຳນັກງານຂ້າຫລວງໃຫຍ່, ສ້າງເຄື່ອງມືການຄົ້ນຄົ້ວ ແລະ ແບບການຮຽນເພື່ອນຳໃຊ້ໃນປະເທດຕ່າງໆ ແລະ ນຳໃຊ້ຢູ່ທີ່ສຳນັກງານໃຫຍ່ເຊິ່ງມັນຈະເປັນການເສີມສ້າງ ຄວາມອາດສາມາດໃຫ້ແກ່ສະຖາບັນສິດທິມະນຸດແຫ່ງຊາດ, ໜ່ວຍງານພາກປະຊາສັງຄົມ ແລະ ຄູ່ຮ່ວມງານອື່ນໆ.

ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່: http://www.ohchr.org

## E. ຊັບພະຍາກອນຂອງສຳນັກງານຂ້າຫລວງໃຫຍ່

### ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່

ນັກເຄື່ອນໄຫວຂອງໜ່ວຍງານພາກປະຊາສັງຄົມຄວນຕິດຕາມເບິ່ງເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ເພື່ອຈະໄດ້ ເຫັນຂໍ້ມູນຂ່າວສານທີ່ໃໝ່ໆກ່ຽວກັບການປະຕິບັດໜ້າທີ່ ແລະ ການດຳເນີນກິດຈະກຳຕ່າງໆ, ຂໍ້ມູນທີ່ວ່າ ນີ້ແມ່ນກ່ຽວ ຂ້ອງກັບບັນດາກົນ ໄກສິດທິມະນຸດຕ່າງໆ. ບົດລາຍງານກ່ຽວກັບການປະຕິບັດໜ້າທີ່ ແລະ ດຳເນີນກິດກຳຕ່າງໆຂອງ ສຳນັກງານຂ້າຫລວງໃຫຍ່ ແລະ ຂໍ້ມູນກ່ຽວກັບແຜນການດຳເນີນງານຂອງປະທານຂ້າຫລວງໃຫຍ່ກໍຍັງໄດ້ໂພສລົງ ໃສ່ເວບໄຊ້ຄືກັນ.

---

ປື້ມຄູ່ມືນີ້ແມ່ນສາມາດດາວໂລດເປັນເອກະສານລະບົບອອນລາຍໄດ້ທີ່:
http://www.ohchr.org/civilsocietyhandbook/
ຄູ່ມືທີ່ເປັນແຕ່ລະບົດ ແລະ ຂໍ້ມູນອື່ນໆແມ່ນສາມາດດາວໂລດໄດ້ຄືກັນ.

F. ວິທີຕິດຕໍ່ປະສານງານກັບສຳນັກງານຂ້າຫລວງໃຫຍ່

**ທີ່ຢູ່:**

Palais Wilson:

52 rue des Paquis

CH-1201 Geneva, Switzerland

**Motta Building**:

48 avenue Giuseppe Motta

CH-1202 Geneva, Switzerland

**ທີ່ຢູ່ທາງໄປສະນີ**

Office of the United Nations High Commissioner for Human Rights

Palais des Nations

8–14, avenue de la Paix

CH–1211 Geneva 10

Phone: +41 (0)22 917 90 00

E-mail: InfoDesk@ohchr.org (general enquiries) Website:

http://www.ohchr.org

II. **ໂຄງການທຶນການສຶກສາ ແລະ ການຝຶກອົບຮົມຂອງສຳນັກງານຂ້າຫລວງໃຫຍ່**

ໂຄງການທຶນການສຶກສາ ແລະ ການຝຶກອົບຮົມທີ່ມີໃນບົດຮຽນນີ້ແມ່ນເອົາມາຈາກສຳນັກງານຂ້າຫລວງໃຫຍ່ທີ່ມີຈຸດປະສົງໃນການສົ່ງເສີມບົດບາດ ແລະ ການມີສ່ວນຮ່ວມຂອງໜ່ວຍງານພາກປະຊາສັງຄົມເພື່ອການພັດທະນາກົນໄກສິດທິມະນຸດ. ດັ່ງນັ້ນລາຍລະອຽດກ່ຽວກັບທຶນ ການສຶກສາ ແລະ ການຝຶກອົບຮົມນີ້ແມ່ນຈະມີປະໂຫຍດສຳລັບໜ່ວຍງານພາກປະຊາສັງ ຄົມທີ່ຈະນຳໃຊ້ຕໍ່ໄປ.

**ກອງທຶນດັ່ງກ່າວແມ່ນສຳລັບທັງອົງການ NGOs ແລະ ໜ່ວຍງານພາກປະຊາສັງຄົມຕ່າງໆທີ່ມີບໍ່ມີຖານະ ຫຼື ວ່າມີສະຖານະເປັນທີ່ປຶກສາໃກ້ແກ່ສະພາເສດຖະກິດ ແລະ ສັງຄົມຂອງ ສປຊ**

A. ໂຄງການທຶນການສຶກສາ

**ໂຄງການທຶນການສຶກສາ**ແມ່ນມີແກ່ຜູ້ທີ່ໄດ້ຮັບການຄັດເລືອກມາເພື່ອສຶກສາຮ່ຳຮຽນຢ່າງລະອຽດກ່ຽວກັບກົນ ໄກ ແລະສະຖາບັນສິດທິມະນຸດຕ່າງໆ.

ສຳນັກງານຂ້າຫລວງໃຫຍ່ມີໜ້າທີ່ບໍລິຫານໂຄງການທຶນການສຶກສາສຳລັບໂຄງການສ້າງຄວາມເຂັ້ມແຂງ ແລະຄວາມອາດສາມາດໃຫ້ແກ່ບຸກຄົນ ຫຼືວ່າ ໜ່ວຍງານທີ່ເຮັດວຽກໃນດ້ານສິດທິມະນຸດຄື:

- ໂຄງການທຶນສຳລັບຄົນພື້ນເມືອງກໍ່ແມ່ນມີເພື່ອໃຫ້ສະມາຊິກຂອງກຸ່ມດັ່ງກ່າວໄດ້ມີໂອການສຶກສາ ແລະຝຶກອົບຮົມກ່ຽວກັບສິດທິມະນຸດ;
- ທຶນສຳລັບຊົນເຜົ່າກໍ່ແມ່ນເພື່ອຄົນໃນກຸ່ມຊົນເຜົ່າໃດໜຶ່ງທີ່ມີຄວາມເໝືອນໃນທາງສາດສະໜາ, ວັດທະນາ ທຳ, ແລະພາສາປາກເວົ້າໃຫ້ໄດ້ມີໂອກາດສຶກສາ ແລະ ຮັບການຝຶກອົບຮົມດ້ານສິດທິມະນຸດ;
- ທຶນການສຶກສາສິດທິມະນຸດສຳລັບປະເທດດ້ອຍພັດທະນາ, ທຶນດັ່ງກ່າວແມ່ນມີໄວ້ໃຫ້ນັກສຶກສາລະດັບມະຫາວິທະຍາໄລເພື່ອເຂົ້າຮ່ວມໃນໂຄງການ; ແລະ
- ທຶນການສຶກສາສຳລັບພະນັກງານຂອງສະຖາບັນສິດທິມະນຸດແຫ່ງຊາດ, ແມ່ນເປັນທຶນທີ່ມີໄວ້ໃຫ້ພະນັກງານທີ່ມາຈາກສະຖາບັນສິດທິມະນຸດແຫ່ງຊາດເພື່ອເຂົ້າຮ່ວມໃນການສຶກສາ ແລະ ຮັບການຝຶກອົບຮົມໃນວຽກງານຂອງສຳນັກງານຂ້າຫລວງໃຫຍ່ ແລະ ວຽກງານຂອງສະຖາບັນສິດທິມະນຸດແຫ່ງຊາດ.

---

ປຶ້ມຄູ່ມືນີ້ແມ່ນສາມາດດາວໂລດເປັນເອກະສານລະບົບອອນລາຍໄດ້ທີ່:
http://www.ohchr.org/civilsocietyhandbook/
ຄູ່ມືທີ່ເປັນແຕ່ລະບົດ ແລະ ຂໍ້ມູນອື່ນໆແມ່ນສາມາດດາວໂລດໄດ້ຄືກັນ.

ລາຍລະອຽດກ່ຽວກັບທຶນການສຶກສາ

ໂຄງການທຶນການສຶກສາສຳລັບຄົນພື້ນເມືອງ, ໜ່ວຍງານຄົນພື້ນເມືອງ ແລະ ຄົນຊົນເຜົ່າ
ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ
Palais des Nations, 8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 08 or +41 (0)22 928 90 66
E-mail: fellowship@ohchr.org

ໂຄງການທຶນການສຶກສາສຳລັບຄົນພື້ນເມືອງ, ໜ່ວຍງານຄົນພື້ນເມືອງ ແລະ ຄົນຊົນເຜົ່າ
ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ
Palais des Nations, 8–14, avenue de la Paix
CH–1211 Geneva 10 - Switzerland
Phone: +41 (0)22 928 98 45
Fax: +41 (0)22 928 90 10
E-mail: minorities@ohchr.org

ທຶນການສຶກສາສຳລັບນັກຮຽນຈາກປະເທດດ້ອຍພັດທະນາ, ສະຖາບັນເພື່ອການສຶກສາ ແລະ
ຝຶກອົບຮົມສະຫະປະຊາຊາດ (UNITAR)
Palais des Nations, 8–14, avenue de la Paix
CH-1211 Geneva 10 - Switzerland
Phone: +41 (0)22 917 86 40
Fax: +41 (0)22 917 80 47
Website: http://www.ohchr.org or http://www.unitar.org/diplomacy

ທຶນການສຶກສາສຳລັບພະນັກງານສະຖາບັນສິດທິມະນຸດແຫ່ງຊາດ, ໜ່ວຍງານສະຖາບັນສິດທິມະນຸດແຫ່ງຊາດ
ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ
Palais des Nations, 8–14, avenue de la Paix
CH–1211 Geneva 10- Switzerland
Phone: + 41 (0)22 928 92 83 or + 41 (0)22 928 96 63
Fax: + 41 (0)22 928 90 18
E-mail: niu@ohchr.org

### 1. ໂຄງການທຶນສຳລັບຄົນພື້ນເມືອງ

ໂຄງການທຶນສຳລັບຄົນພື້ນເມືອງແມ່ນໄດ້ເລີ້ມຕົ້ນມາຕັ້ງແຕ່ປີ 1997 ເຊິ່ງເປັນໂຄງການລິເລີ່ມຂອງສຳນັກງານຂ້າຫລວງໃຫຍ່ ໃນການຈັດຕັ້ງປະຕິບັດຕາມເປົ້າໝາຍທີ່ມີໃນຊ່ວງເວລາສຳຄັນຂອງຄົນພື້ນເມືອງສາກົນ (1995-2004), ເປົ້າໝາຍຫຼັກກໍ່ແມ່ນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ແທນ ແລະ ຄົນໃນຊຸມຊົນໃຫ້ມີໂອກາດສຶກສາຮຽນຮູ້ ແລະ ເຂົ້າເຖິງລະບົບສິດທິມະນຸດຂອງ ສປຊ.

ໂຄງການນີ້ແມ່ນແນໃສ່ການສ້າງຄວາມຮູ້ຄວາມສາມາດໃຫ້ແກ່ຄົນພືນເມືອງເພື່ອຈະໄດ້ຮັບຮູ້ ແລະ ເຂົ້າໃຈບັນຫາສິດທິມະ ນຸດຂອງ ສາກົນ ແລະ ຂອງເຂົາເຈົ້າເອງ, ຄວາມຮູ້ທີ່ໄດ້ມານັ້ນແມ່ນຈະມີຄວາມສຳຄັນໃນການຊ່ວຍໃຫ້ຄົນພື້ນເມືອງໄດ້ ເອົາໄປນຳໄຊ້ເພື່ອ ການປົກປ້ອງ ແລະ ສົ່ງເສີມສິດທິຂອງເຂົາເຈົ້າໄດ້ດີຂື້ນກ່ວາເກົ່າ. ພາຍຫຼັງໂຄງການສິ້ນສຸດລົງ, ຜູ້ທີ່ ໄດ້ຮັບທຶນຜ່ານມານັ້ນແມ່ນ ຕ້ອງມີຄວາມສາມາດໃນການຈັດຝຶກອົບຮົມໃຫ້ຄວາມຮູ້ດ້ານສິດທິມະນຸດສາກົນ ແລະ ເນັ້ນສິດ ທິຂອງຄົນພື້ນເມືອງໃຫ້ແກ່ຊຸມຊົນ ແລະ ອົງການຈັດຕັ້ງຕ່າງໆຂອງຕົນ. ນອກຈາກນັ້ນ ຜູ້ທີ່ໄດ້ທຶນແມ່ນຕ້ອງມີຄວາມ ສາມາດໃນການຖ່າຍທອດຄວາມຮູ້ທີ່ໄດ້ຮຽນມາໃຫ້ ແກ່ສັງຄົມນຳອີກ. ອີງຕາມເປົ້າມາຍຂອງໂຄງການແລ້ວ, ໂຄງການ ທຶນກາສຶກສານີ້ແມ່ນເພື່ອສ້າງປະໂຫຍດໃຫ້ແກ່ຕົວບຸກຄົນ, ອົງການ ແລະ ໃຫ້ຊຸມຊົນຄົນພື້ນເມືອງເປັນພິເສດ.

ໂຄງການທຶນການສຶກສາເພື່ອຄົນພື້ນເມືອງນັ້ນແມ່ນໄດ້ດຳເນີນການສອນເປັນ 4 ພາສາຄື: ພາສາອັງກິດ, ຝຣັ່ງ, ຣັດເຊຍ, ແລະ ສະເປນ. ໃນແຕ່ລະປີ ໂຄງການຈະໃຫ້ທຶນຢູ່ປະມານ 5 ທຶນ ທີ່ເລືອກມາຈາກຜູ້ທີ່ໄດ້ພາສາທີ່ກ່ຽວຂ້ອງກັບໂຄງການເທົ່ານັ້ນຄື:

- ຮຽນຢູ່ນະຄອນເຈນນີວາ (ໃຊ້ພາສາອັງກິດ)
- ຮຽນຢູ່ເມືອງເດີສໂຕ (ໃຊ້ພາສາສະເປນ)
- ຮຽນຢູ່ໃນເມືອງດີໂຈນ (ໃຊ້ພາສາຝຣັ່ງ)
- ຮຽນຢູ່ນະຄອນມອສໂກ (ໃຊ້ພາສາ ຣັດເຊຍ)

ໂຄງການສຶກສາຢູ່ນະຄອນເຈນນີວາແມ່ນໄດ້ຮັບການຄຸ້ມຄອງໂດຍສຳນັກງານຂ້າຫລວງໃຫຍ່ປະຈຳນະຄອນເຈນນີວາ. ປົກກະຕິ ແລ້ວແມ່ນເລີ່ມໃນເດືອນພຶດສະພາຂອງແຕ່ລະປີ ແລະ ຈະໃຊ້ເວລາຮຽນຢູ່ 4ເດືອນ, ຫຼັກສູດແມ່ນເປັນແບບຮຽນ ທີ່ເຂັ້ມຂົ້ນກ່ຽວກັບ ກົນໄກ ແລະ ສະຖາບັນສິດທິມະນຸດ. ການຮຽນແມ່ນໃນຂອບເຂດທີ່ກ້ວາງຂວາງ, ມີການສົນທະນາໃນ ຫົວຂໍ້ຕ່າງໆ ແລະ ມີວຽກບ້ານ ເປັນກຸ່ມ ຫຼື ດ່ຽວໃຫ້.

ທຶນການສຶກສາຢູ່ເມືອງເດີສໂຕແມ່ນເປັນໂຄງການລິເລີ່ມໃນການຮ່ວມມືກັນລະຫວ່າງມະຫາວິທະຍາໄລເດີສໂຕໃນເມືອງບິວບາວ ປະເທດສະເປນ ແລະ ສຳນັກງານຂ້າຫລວງໃຫຍ່. ການຮຽນໄຊ້ເວລາຢູ່ 4 ເດືອນ ແລະ ແບ່ງອອກເປັນ ສອງຊ່ວງຄື: ຊ່ວງທຳ ອິດແມ່ນຮຽນຢູ່ມະຫາວິທະຍາໄລເດີສໂຕ ແລະ ໄລຍະທີ່ສອງແມ່ນຮຽນຢູ່ສຳນັກງານຂ້າຫລວງໃຫຍ່ ປະຈຳຢູ່ນະຄອນເຈນນີວາ. ຫຼັກສູດການຮຽນແມ່ນຄ້າຍຄືກັນກັບຫຼັກສູດທີ່ໃຊ້ໃນນະຄອນເຈນນີວາ, ການສຶກສາແມ່ນໄດ້ເນັ້ນເອົານັກຮຽນແລກປ່ຽນລະຫວ່າງນັກ ສຶກສາ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງເຊັ່ນ: ອົງການ NGOs ແລະ ລັດຖະບານແຫ່ງເມືອງເບວ.

ໂຄງການທຶນການສຶກສາທີ່ເມືອງດີໂຈນ, ແມ່ນເປັນໂຄງການລິເລີ່ມໃນການຮ່ວມມືກັນລະຫວ່າງມະຫາວິທະຍາໄລເບີໂກໃນ ເມືອງດີໂຈນປະເທດຝຣັ່ງ, ແລະ ສຳນັກງານຂ້າຫລວງໃຫຍ່. ການໃຫ້ທຶນແມ່ນຈະເລືອກເອົາຜູ້ທີ່ໄດ້ພາສາຝຣັ່ງໃນລະດັບດີ

ແລະ ຈະໄດ້ຮຽນເປັນເວລາ 10 ອາທິດ ( 4ອາທິດແມ່ນຮຽນຢູ່ມະຫາວິທະຍາໄລດີໂຈນ ແລະ ອີກ4ອາທິດແມ່ນຮຽນ ຢູ່ສຳນັກງານຂ້າຫລວງໃຫຍ່ໃນນະຄອນເຈນນີວາ, ອີກ 2ອາທິດແມ່ນຮຽນຢູ່ສຳນັກງານໃຫຍ່ຢູໃນອົງການຢູແນດ ສະໂກ້ໃນນະຄອນ ປາຣີດ.

ໂຄງການທຶນທີ່ນະຄອນມອສໂກ, ແມ່ນເປັນໂຄງການລິເລີ່ມໃນການຮ່ວມມືກັນລະຫວ່າງສະມາຄົມຄົນພື້ນເມືອງຣັດເຊຍ ທາງຕອນເໜືອໃນນະຄອນມອສໂກ(RAIPON) ແລະ ສຳນັກງານຂ້າຫລວງໃຫຍ່. ການຮຽນໃນນະຄອນມອສໂກນັ້ນ ແມ່ນມີຢູ່ 4 ອາທິດ ແລະ ຈະຮຽນຢູ່ໃນສະມາຄົມ RAIPON, ໃນສຳນັກງານຂ້າຫລວງໃຫຍໃນນະຄອນມອສໂກ, ແລະ ໃນສຳນັກງານຕ່າງໆຂອງ ສປຊ ໃນນະຄອນມອສໂກ, ສ່ວນອີກ 4ອາທິດແມ່ນຮຽນໃນສຳນັກງານຂ້າຫລວງໃຫຍ່ໃນນະ ຄອນເຈນນີວາ.

ທຸກໆທຶນການສຶກສາທີ່ກ່າວມາຂ້າງເທິງນັ້ນແມ່ນຈະມີເບ້ຍລ້ຽງເພື່ອໃຊ້ໃນການເດີນທາງ, ທີ່ພັກ, ປະກັນໄພສຸກຂະພາບ, ແລະ ຄ່າໃຊ້ຈ່າຍອື່ນໆ.

**ເງື່ອນໄຂກາສະມັກ**

- ຜູ້ສະມັກຕ້ອງເປັນສະມາຊິກຂອງຄົນພື້ນເມືອງ ແລະ ໄດ້ຮັບການສະໜັບສະໜຸນຈາກຊຸມຊົນຂອງຕົນ ຫຼື ອົງການ ຈັດຕັ້ງທີ່ກ່ຽວຂ້ອງ;
- ອາຍຸໃນເວລາສະໝັກກາແມ່ນລະຫວ່າງ 25 ເຖິງ 35 ປີ;
- ບໍ່ມີປະຫວັດຈົບການສຶກສາແບບສາມັນກໍ່ແມ່ນສາມາດສະມັກໄດ້ເພາະວ່າຄົນພື້ນເມືອງສ່ວນຫລາຍແລ້ວຈະມີຂໍ້ຈຳກັດໃນດ້ານການສຶກສາແບບສາມັນນີ້ເຊິ່ງມັນເປັນສິ່ງກີດຂວາງຄວາມກ້າວໜ້າຂອງເຂົາເຈົ້າ;
- ຜູ້ທີ່ໄດ້ຮັບທຶນການສຶກສາມາແລ້ວແມ່ນຕ້ອງມີຄວາມສາມາດ ແລະ ມີຄວາມສະມັກໃຈທີ່ຈະເຜີຍແຜ່ຄວາມຮູ້ທີ່ໄດ້ມາ ແກ່ຜູ້ອື່ນໃນຊຸມຊົນ ແລະ ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ;
- ທຸກອົງການທີ່ກ່ຽວຂ້ອງແມ່ນສາມາດສະເໜີຊື່ຜູ້ສະມັກໃຫ້ໂຄງການທຶນການສຶກສາໄດ້;
- ການຄັດເລືອກຜູ້ສະມັກນັ້ນແມ່ນໄດ້ອີງໃສ່ຄວາມດຸ່ງດ່ຽງທາງເພດ ແລະ ເຂດພາກພື້ນ; ແລະ
- ຜູ້ສະມັກຕ້ອງໄດ້ພາສາທີ່ກ່ຽວຂ້ອງຕາມເງື່ອນໄຂຂອງທຶນການສຶກສາ

ການໃຫ້ທຶນການສຶກສາທີ່ແບ່ງເປັນ 4 ພາສານັ້ນແມ່ນໄດ້ຈັດທຸກປີ ແລະ ກຳນົດເວລາຂອງການສະໝັກນັ້ນກໍ່ແຕກຕ່າງກັນ ໄປ. ການພິຈາລະນາຜູ້ສະໝັກນັ້ນແມ່ນຈະຄັດເອົາແຕ່ຟອມເອກະສານທີ່ສົມບູນແບບເທົ່ານັ້ນເພື່ອເຂົ້າຄັດເລືອກໃນຂັ້ນຕໍ່ໄປ. ການຍື່ນແບບຟອມສະໝັກທຶນນັ້ນແມ່ນໃຫ້ສົ່ງທາງໄປສະນີ ຫຼືວ່າ ສົ່ງທາງແຟັກເອກະສານເທົ່ານັ້ນ. ແບບຟອມທີ່ສົ່ງມາທາງອີເມວນັ້ນແມ່ນຈະບໍ່ໄດ້ຮັບການພິຈາລະນາ, ແຕ່ກໍ່ມີກໍລະນີຍົກເວັ້ນຖ້າຫາກຟອມເອກະສານໄດ້ຮັບການເຊັນ ແລະ ສະແກນທັງສອງດ້ານ.

ໂຄງການທຶນການສຶກສາສຳລັບຄົນພື້ນເມືອງ, ໜ່ວຍງານຄົນພື້ນເມືອງ ແລະ ຊົນເຜົ່າ
ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິສະນຸດແຫ່ງອົງການສະຫະປະຊາຊາດ
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 08 or +41 (0)22 928 90 66
E-mail: fellowship@ohchr.org

ຂໍ້ມູນເພີ່ມເຕີມກ່ຽວກັບຟອມເອກະສານທັງສີ່ພາສາແມ່ນສາມາດດາວໂລດເອົາໄດ້ທີ່ເວບໄຊ້ສຳນັກງານຂ້າຫລວງໃຫຍ່

## 2. ໂຄງການທຶນການສຶກສາສຳລັບຊົນເຜົ່າ

ຕາມເປົ້າໝາຍຂອງທຶນການສຶກສາແລ້ວແມ່ນໄດ້ແນໃສ່ຄົນລຸ້ນໜຸ່ມທີ່ມາຈາກຊົນເຜົ່າທີ່ກ່ຽວຂ້ອງທາງດ້ານສາດສະໜາ, ແລະ ພາສາປາກເວົ້າເພື່ອເຮັດໃຫ້ເຂົາເຈົ້າໄດ້ມີໂອກາດຮຽນຮູ້ສິດທິມະນຸດສາກົນແບບທົ່ວໄປ ແລະ ສິດທິຂອງຊົນເຜົ່າ ແບບເຈາະຈົງ. ພາຍຫຼັງໂຄງການສິ້ນສຸດລົງ, ຜູ້ທີ່ ໄດ້ຮັບທຶນຜ່ານມານັ້ນແມ່ນຕ້ອງມີຄວາມສາມາດໃນການຈັດຝຶກອົບ ຮົມໃຫ້ຄວາມຮູ້ດ້ານສິດທິມະນຸດສາກົນ ແລະ ເນັ້ນສິດທິຂອງຄົນຊົນເຜົ່າໃຫ້ແກ່ຊຸມຊົນ ແລະ ອົງການຈັດຕັ້ງຕ່າງໆ ຂອງເຂົາເຈົ້າ. ນອກຈາກນັ້ນ ຜູ້ທີ່ໄດ້ທຶນແມ່ນຕ້ອງມີຄວາມ ສາມາດໃນການຖ່າຍທອດຄວາມຮູ້ທີ່ໄດ້ຮຽນມາໃຫ້ແກ່ສັງ ຄົມນຳອີກ.

ການຝຶກອົບຮົມໃຫ້ຊຸມຊົນທີ່ເດັ່ນຢູ່ໃນປະເທດບຸນກາລີໂດຍອາດີດນັກສຶກສາທີ່ໄດ້ທຶນ

ສຳນັກງານຂ້າຫລວງ ໃຫຍ່ໄດ້ໃຫ້ການສະໜັບສະໜູນໂຄງ ການຝຶກອົບຮົມທີ່ອາດີດນັກສຶກສາທຶນຊົນເ ຜົ່າຈາກຊຸມຊົນໂລມາ ປະເທດ ບຸນກາລີໄດ້ຂໍການຊ່ວຍເຫຼືອເພື່ອຈັດ ຝຶກອົບຮົມຢູ່ທີ່ເມືອງໂພສກີຕຣ່ຳເບສ ໃນຊ່ວງເດືອນທັນວາປີ 2006. ການຂໍທຶນ ສະໜັບສະໜູນ ກອງປະຊຸມ ນັ້ນແມ່ນ ໃນນາມອົງການ ຈັດຕັ້ງ ທີ່ມີຊື່ວ່າ "ສາມະຄີຊາວໂລ ມາ". ວັດຖຸປະສົງ ຂອງການຈັດ ຝຶກອົບຮົມຄັ້ງນັ້ນແມ່ນ ເພື່ອເຮັດໃຫ້ ຊາວໂລມາໄດ້ມີສ່ວນຮ່ວມ ແລະ ມີ ຄວາມພ້ອມໃນການ ຈັດຕັ້ງປະຕິບັດ ແຜນງານ "ຍຸກຂອງການມີສ່ວນ ຮ່ວມຂອງຊາວໂລມາ "2005-2015" ທີ່ຖືກສ້າງຂື້ນ ໂດຍ 9 ປະ ເທດທີ່ມາຈາກຢູໂຣບຕອນໄຕ້ ແລະ ຕອນກາງ. ບັນດາ ຜູ້ທີ່ເຂົ້າຮ່ວມ ໃນກອງປະຊຸມຝຶກອົບຮົມນັ້ນກໍ່ໄດ້ ສ້າງແຜນ ຍຸດທະສາດໃຫ້ຊາວໂລມາໄດ້ມີສ່ວນ ຮ່ວມໃນຂະບວນການຕັດສິນໃຈທີ່ ເປັນທາງການໂດຍສະເພາະແມ່ນ ບັນຫາພົນກະທົບທາງສິດທິ ແລະ ຊີວິການ ເປັນຢູ່ຂອງເຂົາເຈົ້າ.ຊາວໂລມາໄດ້ສະເໜີ ໃຫ້ ສະພາເທດສະບານຈັດຕັ້ງອົງກອນປະຈຳທີ່ ເປັນຕົວແທນຊົນເຜົ່າໃນການປະກອບສ່ວນ ສ້າງນະໂຍບາຍທີ່ກ່ຽວກັບຄົນຊົນເຜົ່າ. ການສະເໜີດັ່ງກ່າວກໍ່ແມ່ນໄດ້ຮັບການຕອບ ຮັບເປັນຢ່າງດີຈາກນາຍົກເທດສະບານ ແລະ ທົ່ວສະພາເທດສະບານ.

ໃນປະຈຸບັນສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ໃຫ້ທຶນກາສຶກສາແກ່ຊົນເຜົ່າຢູ່ສອງໂຄງການ, ໂຄງການທີໜຶ່ງແມ່ນຮຽນເປັນພາ ສາອັງກິດ ແລະ ອີກໂຄງການໜຶ່ງແມ່ນຮຽນເປັນພາສາອາຣັບ.ຫຼັກສູດທີ່ເປັນພາສາອັງກິດນັ້ນແມ່ນເລີ່ມໃນເດືອນເມສາຂອງ ທຸກໆປີເຊິ່ງມີໄລຍະ ຮຽນຢູ່ 3 ເດືອນ ແລະ ຈະໃຫ້ທຶນຮຽນຢູ່ປະມານ 5 ທຶນສູງສຸດ. ໂຄງການຮຽນເປັນພາສາອາຣັບແມ່ນເປັນ ໂຄງການທົດລອງທີ່ເລີ່ມ ມາຕັ້ງແຕ່ປີ 2007ໂດຍມີນັກຮຽນທຶນຢູ່ 4ຄົນ ແລະ ໄດ້ຮຽນຢູ່ນະຄອນເຈນນີວາເປັນເວລາ 1 ເດືອນ.

### ເງື່ອນໄຂການສະໝັກ

- ຜູ້ສະມັກຕ້ອງມີສັນຊາດ, ສາດສະໜາ, ພາສາ ຫຼື ເປັນຊົນເຜົ່າທີ່ມາຈາກເຜົ່າຊົນໃດໜຶ່ງ;
- ມີອາຍຸໃນເວລາສະມັກແມ່ນລະຫວ່າງ 25 ເຖິງ 35 ປີ;
- ບໍ່ມີປະຫວັດຈົບການສຶກສາແບບສາມັນກໍ່ແມ່ນສາມາດສະມັກໄດ້ເພາະວ່າຄົນຊົນເຜົ່າສ່ວນຫລາຍແລ້ວຈະມີຂໍ້ຈຳກັດ ໃນດ້ານການສຶກສາແບບສາມັນນີ້ເຊິ່ງມັນເປັນສິ່ງກີດຂວາງຄວາມກ້າວໜ້າຂອງເຂົາເຈົ້າ;
- ອົງການຈັດຕັ້ງໃດໜຶ່ງທີ່ເຮັດວຽກກ່ຽວກັບຊົນເຜົ່າ ຫຼື ມີພະນັກງານທີ່ເປັນຊົນເຜົ່າແມ່ນສາມາດສະເໜີຊື່ຜູ້ສະ ມັກໃຫ້ໂຄງການທຶນການສຶກສາໄດ້;
- ຜູ້ທີ່ໄດ້ຮັບທຶນການສຶກສາມາແລ້ວແມ່ນຕ້ອງມີຄວາມສາມາດ ແລະ ມີຄວາມສະມັກໃຈທີ່ຈະເຜີຍແຜ່ຄວາມຮູ້ທີ່ ໄດ້ມາແກ່ຜູ້ອື່ນໃນຊຸມຊົນ ແລະ ໃນອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ;
- ຜູ້ສະມັກຕ້ອງໄດ້ຮັບການສະໜັບສະໜູນເປັນລາຍລັກອັກສອນຈາກຊຸມຊົນ ຫຼື ອົງການທີ່ກ່ຽວຂ້ອງ
- ການຄັດເລື່ອກຜູ້ສະມັກນັ້ນແມ່ນໄດ້ອີງໃສ່ຄວາມດຸ່ງດ່ຽງທາງເພດ ແລະ ເຂດພາກພື້ນ; ແລະ
- ຜູ້ສະມັກຕ້ອງໄດ້ພາສາທີ່ກ່ຽວຂ້ອງຕາມເງື່ອນໄຂຂອງທຶນການສຶກສາ (ພາສາອັງກິດ ຫຼື ພາສາອາຣັບ)

ການພິຈາລະນາຜູ້ສະມັກນັ້ນແມ່ນຈະຄັດເອົາແຕ່ຟອມເອກະສານທີ່ສົມບູນແບບເທົ່ານັ້ນເພື່ອເຂົ້າຄັດເລືອກໃນຂັ້ນຕໍ່ໄປ. ການຍື່ນແບບ ຟອມສະມັກທຶນນັ້ນແມ່ນໃຫ້ສົ່ງທາງໄປສະນີ ຫຼືວ່າ ສົ່ງທາງແຟ໋ກເອກະສານເທົ່ານັ້ນ. ແບບຟອມທີ່ສົ່ງມາທາງ ອີເມວນັ້ນແມ່ນຈະບໍ່ໄດ້ ຮັບການພິຈາລະນາ, ແຕ່ກໍ່ມີກໍລະນີຍົກເວັ້ນຖ້າຫາກຟອມເອກະສານໄດ້ຮັບການເຊັນ ແລະ ສະແກນທັງສອງດ້ານ.

### ການຍື່ນແບບຟອມສະມັກທຶນ

ໂຄງການທຶນການສຶກສາສຳລັບຄົນຊົນເຜົ່າ, ໜ່ວຍງານຄົນພື້ນເມືອງ ແລະ ຊົນເຜົ່າ
ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິສະນຸດແຫ່ງອົງການສະຫະປະຊາຊາດ
Palais des Nations, 8–14, avenue de la Paix
CH–1211 Geneva 10 - Switzerland
Phone: +41 (0)22 928 98 45
Fax: +41 (0)22 928 90 10
E-mail: minorities@ohchr.org

ຂໍ້ມູນເພີ່ມເຕີມກ່ຽວກັບຟອມເອກະສານທັງສີ່ພາສາແມ່ນສາມາດດາວໂລດເອົາໄດ້ທີ່ເວບໄຊ້ສຳນັກງານຂ້າຫລວງໃຫຍ່

### 3. ທຶນການສຶກສາສໍາລັບນັກສຶກສາຈາກປະເທດດ້ອຍພັດທະນາ

ແມ່ນທຶນການສຶກສາສໍາລັບນັກສຶກສາຈາກປະເທດດ້ອຍພັດທະນາທີ່ໄດ້ເລີ່ມມາຕັ້ງແຕ່ປີ 2007 ແລະ ໄດ້ຮັບການຄຸ້ມຄອງຈາກສໍານັກງານຂ້າຫລວງໃຫຍ່ ແລະ ສະຖາບັນການຝຶກອົບຮົມ ແລະ ຄົ້ນຄົ້ວຂອງ ສປຊ (UNITAR). ຈຸດປະສົງຫຼັກຂອງທຶນກໍ່ແມ່ນເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ນັກສຶກສາທີ່ມາຈາກປະເທດດ້ອຍພັດທະນາໃຫ້ໄດ້ຮູ້ ແລະ ເຂົ້າໃຈໃນບັນຫາສິດທິມະນຸດສາກົນໃນປະຈຸບັນ. ນອກນີ້ນັກສຶກສາຍັງຈະໄດ້ຮຽນຮູ້ກ່ຽວກັບບັນດາວຽກງານຂອງ ສປຊ ແລະ ສໍານັກງານ ຂ້າຫລວງໃຫຍ່ທີ່ປຽບເໝືອນເປັນການປະກອບສ່ວນຊ່ວຍເຫຼືອນັກສຶກສາ ຫຼື ນັກຮຽນທີ່ຮຽນເກ່ງຈາກປະເທດດ້ອຍ ພັດທະນາ.
ຫຼັກສູດການຮຽນແມ່ນໄດ້ຈັດຂື້ນທີ່ນະຄອນເຈນນິວາເຊິ່ງສອນເປັນພາສາອັງກິດ ແລະ ໄດ້ແບ່ງຫຼັກສູດອອກເປັນດ້ານການ ຝຶກອົບຮົມ ແລະ ການລົງເລິກໃນວຽກຕົວຈິງຂອງສໍານັກງານຂ້າຫລວງໃຫຍ່ທີ່ມີການຈັດສອນແບບລັກສະປະຊຸມສໍາມະນາ ແລະ ໃຫ້ບົດຝຶກຫັດທາງດ້ານທັກສະຕົວຈິງເຊິ່ງບາງບົດຝຶກຫັດແມ່ນເປັນຂອງສໍານັກງານຂ້າຫລວງໃຫຍ່. ສ່ວນເລື່ອງການໃຫ້ທຶນການສຶກສາໃນອານາຄົດນັ້ນແມ່ນຂື້ນຢູ່ກັບທງົບປະມານຕົວຈິງ.

ການໃຫ້ທຶນການສຶກສາສິດທິມະນຸດແມ່ນໄດ້ເປີດໂອກາດໃຫ້ແກ່ຜູ້ສະມັກຈາກປະເທດດ້ອຍພັດທະນາ.[3] ຜູ້ສະມັກຕ້ອງຜ່ານລະດັບການສຶກສາຊັ້ນສູງ ຫຼື ລະດັບມະຫາວິທະຍາໄລທີ່ກ່ຽວຂ້ອງກັບການດໍາເນີນງານຂອງ ສປຊ (ຕົວຢ່າງ: ກົດໝາຍລະຫວ່າງປະເທດ, ລັດຖະສາດ, ສັງຄົມສາດ, ຫຼື ປະຫວັດສາດ). ຜູ້ສະມັກຕ້ອງມີອາຍຸຕໍ່າກ່ວາ 30ປີ.

ຜູ້ທີ່ໄດ້ທຶນແມ່ນຈະໄດ້ຮັບຄ່າເດີນທາງໄປກັບ, ເບ້ຍລ້ຽງ, ການຊ່ວຍແລ່ນຂໍວີຊ້າ, ທີ່ພັກ, ແລະ ປະກັນໄພສຸກຂະພາບ ແລະ ອຸບັດຕິເຫດ.

ອີງຕາມກອງທຶນທີ່ມີຂອງໂຄງການ, ຜູ້ທີ່ສົນໃຈໃນການສະມັກຂໍທຶນນັ້ນແມ່ນຄວນຕິດຕາມຂໍ້ມູນທີ່ມີໃນເວບໄຊ້ຂອງສໍານັກງານຂ້າຫລວງໃຫຍ່ ແລະ UNITAR ໄດ້ຕະຫລອດເວລາ.

**ວິທີການຕິດຕໍ່ຫາໂຄງການໃຫ້ທຶນການສຶກສາ**

ສະຖາບັນການຝຶກອົບຮົມ ແລະ ຄົ້ນຄົ້ວຂອງ ສປຊ (UNITAR)
Palais des Nations, 8–14, avenue de la Paix
CH-1211 Geneva 10 - Switzerland
Phone: +41 (0)22 917 86 40
Fax: +41 (0)22 917 80 47

[3] ສໍາລັບຂໍ້ມູນທີ່ກ່ຽວກັບເງື່ອນໄຂການເປັນປະເທດດ້ອຍພັດທະນາທີ່ນໍາໃຊ້ໂດຍ ສປຊ ນັ້ນແມ່ນໃຫ້ເບິ່ງໄດ້ທີ່ http://www.unohrlls.org/

II

4. ໂຄງການທຶນການສຶກສາສຳລັບພະນັກງານສະຖາບັນສິດທິມະນຸດແຫ່ງຊາດ

ທຶນດັ່ງກ່າວແມ່ນໄດ້ເລີ່ມຕົ້ນມາຕັ້ງແຕ່ປີ 2008 ເຊິ່ງໄດ້ຮັບການຄຸ້ມຄອງໂດຍສຳນັກງານຂ້າຫລວງໃຫຍ່. ວັດຖຸຂອງທຶນກໍ່ແມ່ນເພື່ອເສີມສ້າງຄວາມຮູ້ຄວາມສາອາດໃຫ້ແກ່ຜູ້ທີ່ໄດ້ຮັບທຶນໃຫ້ໄດ້ຮຽນຮູ້ ແລະ ເຂົ້າໃນໃນລະບົບສິດທິມະນຸດຂອງ ສປຊ, ຮຽນຮູ້ກ່ຽວກັບວຽກງານຂອງສຳນັກງານຂ້າຫລວງໃຫຍ່ທີ່ມີສ່ວນພົວພັນກັບວຽກງານຂອງຂອງສະຖາບັນສິດທິມະນຸດແຫ່ງ ຊາດ, ແລະ ຈະໄດ້ສຶກສາບັນຫາທາງດ້ານວິຊາການແລະສິ່ງທ້າທາຍອື່ນໆທີ່ມັນກ່ຽວພັນກັບສະຖາບັນສິດທິມະນຸດແຫ່ງຊາດ.

ຫຼັກສູດການຮຽນແມ່ນໄດ້ດຳເນີນຢູ່ໃນສຳນັກງານຂ້າຫລວງໃຫຍ່ນະຄອນເຈນນີວາເຊິ່ງມີທຶນການສຶກສາໃຫ້ 2 ທຶນ ແລະ ຈະໃຊ້ເວລາຮຽນຢູ່ 6 ເດືອນ. ຜູ້ທີ່ໄດ້ທຶນຄົນທຳອິດແມ່ນຈະໄດ້ເລີ່ມຮຽນໃນເດືອນມັງກອນ ແລະ ຜູ້ທີ່ສອງແມ່ນຮຽນໃນ ເດືອນກໍລະກົດ. ຜູ້ທີ່ໄດ້ທຶນແມ່ນໄດ້ຮຽນກ່ຽວກັບລະບົບສິດທິມະນຸດແລະບັນຫາທີ່ກ່ຽວຂ້ອງເຊິ່ງຈະຈັດຮຽນໃນຮູບແບບ ການສຳມະນາເປັນໄລຍະໆ. ນອກນີ້ກໍ່ຍັງມີວຽກບ້ານທີ່ກ່ຽວກັບບັນຫາສິດທິມະນຸກຕ່າງໆ.

ຜູ້ທີ່ສະມັກຂໍທຶນຕ້ອງມີປະສົບການມາແລ້ວຢ່າງໜ້ອຍ 3 ປີໃນການເຮັດວຽກກັບສະຖາບັນສິດທິມະນຸດແຫ່ງຊາດ ທີ່ໄດ້ຖືກຮັບຮອງມາວ່າມີມາດຖານສາກົນຕາມ-ລະບຽບການປາຣີດ[4]-ແລະ ກໍ່ຕ້ອງມີປະສົບການຢ່າງຫລວງຫລາຍໃນ ການປະຕິບັດໜ້າທີ່ກ່ຽວກັບບັນຫາຕ່າງໆທີ່ກ່ຽວຂ້ອງກັບສະຖາບັນສິດທິມະນຸດແຫ່ງຊາດໃນລະດັບຊາດ, ລະດັບພາກພື້ນ, ແລະ ສາກົນ.

ຜູ້ສະມັກຕ້ອງມີໜັງສືສະໜັບສະໜູນຈາກສະຖາບັນສິດທິມະນຸດແຫ່ງຊາດ ແລະ ຕ້ອງໃຫ້ສັນຍາວ່າຈະກັບມາຮັບໃຊ້ສະຖາບັນຄືນພາຍຫຼັງທີ່ຮຽນຈົບແລ້ວ. ຜູ້ສະມັກຕ້ອງໄດ້ພາສາອັງກິດ ຫຼື ຝຣັ່ງ. ຜູ້ທີ່ໄດ້ຮັບທຶນແມ່ນຈະໄດ້ເບ້ຍລ້ຽງຈາກສຳນັກງານຂ້າຫລວງໃຫ່ແຕ່ລະເດືອນເພື່ອໃຊ້ຈ່າຍໃນເວລາຮຽນ.

ການຍື່ນຝອມສະມັກແມ່ນຕ້ອງມີ (ໜັງສືກ່ຽວກັບວັດຖຸປະສົງທີ່ຢາກຂໍທຶນ, ຊີວະປະຫວັດຫຍໍ້, ແລະ ໜັງສືສະນັບສະໜູນຈາກຫ້ອງການ)ສົ່ງໄປຫາສຳນັກງານຂ້າຫລວງໃຫຍ່ໂດຍຕົງ. ສ່ວນການຄັດເລືອກຜູ້ສະມັກຈາກສຳນັກງານຂ້າຫລວງໃຫຍ່ປະຈຳປະເທດທີ່ກ່ຽວຂ້ອງແມ່ນໃຫ້ອີງຕາມຄຳເຫັນຂອງສະພາຄະນະກຳມາທິການໃນປະເທດດັ່ງກ່າວເພື່ອເປັນການສົ່ງເສີມ ແລະ ປົກປ້ອງວຽກງານສິດທິມະນຸດ.

**ວິທີການຕິດຕໍ່ຫາໂຄງການໃຫ້ທຶນການສຶກສາ**

ໜ່ວຍງານສະຖາບັນແຫ່ງຊາດ

Palais des Nations, 8–14, avenue de la Paix
CH–1211 Geneva 10 - Switzerland
Phone: + 41 (0)22 928 92 83 or + 41 (0)22 928 96 63
Fax: + 41 (0)22 928 90 18
E-mail: niu@ohchr.org
ຂໍ້ມູນເພີ່ມເຕີມສາມາດເອົາໄດ້ທີ່ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່

[4] ມັດຕິສະມັດຊາໃຫຍ່ ສປຊ ເລກທີ 48\134

**B. ກອງປະຊຸມຝຶກອົບຮົມ**

ແມ່ນກອງປະຊຸມທີ່ໃຫ້ໂອກາດແກ່ໜ່ວຍງານພາກປະຊາສັງຄົມໄດ້ຮຽນຮູ້ກ່ຽວກັບກົນໄກສິດທິມະນຸດສະເພາະ ແລະ ວິທີການທີ່ຈະນຳໃຊ້ກົນໄກເຫລົ່ານັ້ນແນວໃດໃນວຽກງານຕົວຈິງ.

**ກອງປະຊຸມຝຶກອົບຮົມນີ້ແມ່ນໄດ້ຈັດໄປຕາມ**ຄຳແນະນຳ**ຂອງອົງກອນສິດທິມະນຸດ**

ການຈັດກອງປະຊຸມດັ່ງກ່າວແມ່ນຈັດໃຫ້ໜ່ວຍງານພາກປະຊາສັງຄົມໂດຍສະເພາະ ແລະ ແນໃສ່ເພື່ອສ້າງຄວາມອາດສາມາດໃຫ້ແກ່ໜ່ວຍງານດັ່ງກ່າວເພື່ອມີການຮ່ວມງານກັບອົງກອນສິດທິມະນຸດຕໍ່ໄປ.

ສຳນັກງານຂ້າຫລວງໃຫຍ່ໃຫ້ການຈັດຝຶກອົບຮົມ ແລະ ຮຽນຮູ້ແກ່ນັກເຄື່ອນໄຫວພາກປະຊາສັງຄົມຢູ່ໃນປະເທດຕ່າງໆເຊິ່ງມີເຫດຜົນເພື່ອເສີມສ້າງຄວາມອາດສາມາດໃນການປະກອບສ່ວນໃນຂະບວນການລາຍງານການ ປະຕິບັດສົນທິສັນຍາ ແລະ ເພື່ອປະຕິບັດຕາມຄຳແນະນຳຂອງອົງກອນສິດທິມະນຸດ. ສຳນັກງານຂ້າຫລວງໃຫຍ່ໃຫ້ການຮ່ວມ ມືກັບ ສະຖາບັນສິດທິມະນຸດແຫ່ງຊາດ, NGOs, ແລະ ຕົວແທນທີ່ມາຈາກໜ່ວຍງານສື່ໃນລະດັບຊາດເພື່ອຈັດກອງປະ ຊຸມຝຶກອົບຮົມໂດຍເນັ້ນການສ້າງຄວາມອາດສາມາດ ແລະ ກະຕຸ້ນໃຫ້ມີການສ້າງເຄືອຄ່າຍລະຫວ່າງກັນແລະກັນ ແລະ ເພື່ອເປັນການປະຕິບັດຕາມຄຳແນະນຳຂອງອົງກອນສິດທິມະນຸດ.

ຕັ້ງແຕ່ປີ 2003, ສຳນັກງານຂ້າຫລວງໃຫຍ່ໄດ້ຈັດການປະຊຸມຝຶກອົບຮົມຫລາຍຄັ້ງໃນທົ່ວພາກພື້ນ. ກອງປະ ຊຸມເຫລົ່ານັ້ນແມ່ນໄດ້ຈັດຂຶ້ນເພື່ອເປັນກອບໂຄງສ້າງໃຫ້ແກ່ການສ້າງກຸ່ມເຄືອຄ່າຍໜ່ວຍງານພາກປະຊາສັງຄົມ ແລະ ເປັນການປະຕິບັດໄປຕາມຂະບວນການລາຍງານການຈັດຕັ້ງປະຕິບັດສົນທິສັນຍາສິດທິມະນຸດ ພ້ອມທັງເປັນການຮັກສາການສົນທະນາແລກປ່ຽນບົດຮຽນລະດັບຊາດທີ່ມີປະສິດທິພາບກ່ຽວກັບວຽກງານຂອງອົງກອນສິດທິມະນຸດ.

ສຳນັກງານຂ້າຫລວງໃຫຍ່ຍັງໃຫ້ການການຝຶກອົບຮົມໂດຍຕົງໃຫ້ແກ່ບັນດາລັດຖະບານທີ່ມີຄວາມສົນໃຈດ້ວຍການຈັດໃນຮູບແບບກອງປະຊຸມແລກປ່ຽນ ແລະ ໄດ້ກະຕຸ້ນໃຫ້ໜ່ວຍງານພາກປະຊາສັງຄົມໃຫ້ເຫັນຄວາມສຳຄັນ ແລະ ເຂົ້າຮ່ວມໃນກອງປະຊຸມດັ່ງກ່າວ.

ຂໍ້ມູນເພີ່ມເຕີມແມ່ນສາມາດເອົາ ແລະ ຕິດຕໍ່ໄດ້ທີ່:

ຫ້ອງການສົນທິສັນຍາສິດທິມະນຸດ, ໜ່ວຍງານຕິດຕາມສົນທິສັນຍາ
ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 22

ອີງຕາມແຜນງານການຈັດຝຶກອົບຮົມຂ້າງເທິງນັ້ນ; ສຳນັກງານຂ້າຫລວງໃຫຍ່ເຊິ່ງລວມທັງບັນດາສຳນັກງານຍ່ອຍໃນຫລາຍແຫ່ງແມ່ນໄດ້ພາກັນຈັດການກອງປະຊຸມສຳມະນາຝຶກອົບຮົມໃຫ້ແກ່ໜ່ວຍງານພາກປະຊາສັງຄົມເລື້ອຍໆ, ບັນດາກອງປະຊຸມເຫລົ່ານັ້ນແມ່ນໄດ້ເນັ້ນບັນຫາສິດທິມະນຸດສາກົນ ແລະ ກົນໄກການຈັດຕັ້ງປະຕິບັດຕ່າງໆ.

ຂໍ້ມູນເພີ່ມເຕີມກ່ຽວກັບອົງກອນສິດທິມະນຸດແມ່ນສາມາດສຶກສາໄດ້ຢູ່ໃນຄູ່ມືນີ້ ໃນບົດທີ 4 (ອົງກອນສິດທິມະນຸດ)

## III. ສື່ພິມ ແລະ ຂໍ້ມູນຕ່າງໆຂອງສຳນັກງານຂ້າຫລວງໃຫຍ່

### A. ສື່ພິມ

I

ໂຄງການຈັດພິມສື່ຕ່າງໆຂອງສຳນັກງານຂ້າຫລວງໃຫຍ່ແມ່ນເພື່ອແນໃສ່ການສ້າງຄວາມຕື່ນຕົວກ່ຽວກັບສິດທິ ແລະ ສິດເສລີພາບຂັ້ນພື້ນຖານ, ການຈັດພິມກໍ່ແມ່ນມີລັກສະນະເປັນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດໃນທົ່ວໂລກ. ສື່ພິມຕ່າງໆຍັງມີລັກສະນະຊັກຊວນໃຫ້ມີການສົນທະນາໃນບັນຫາສິດທິມະນຸດພາຍໃຕ້ການທົບທວນຂອງອົງກອນຕ່າງໆຂອງ ສປຊ.

ບັນດາສື່ພິມທີ່ກ່າວມານັ້ນແມ່ນໄດ້ຈັດແບ່ງອອກເປັນ 5 ກຸ່ມໃຫຍ່ຄື:

1. ເອກະສານຂໍ້ມູນທົ່ວໄປແມ່ນໄດ້ໃຫ້ຂໍ້ມູນກ່ຽວກັບຫົວເລື່ອງສິດທິມະນຸດຫລາຍຢ່າງ;
2. ເອກະສານທີ່ຈັດພິມເປັນພິເສດແມ່ນໄດ້ໃຫ້ຂໍ້ມູນກ່ຽວກັບບັນຫາສິດທິມະນຸດຢ່າງເລິກເຊິ່ງ;
3. ເອກະສານທີ່ກ່ຽວກັບການສຶກສາ ແລະ ຝຶກອົບຮົມຂອງສຳນັກງານຂ້າຫລວງໃຫຍ່ແມ່ນຈະກ່ຽວກັບຄຳແນະນຳ, ຄູ່ມື, ແລະລະບຽບສຳລັບຄົນພື້ນເມືອງ, ຊົນເຜົ່າ, ໜ່ວຍງານວິຊາຊີບ ແລະ ສະຖາບັນການສຶກສາຕ່າງໆ;
4. ເອກະສານອ້າງອີງແມ່ນໄດ້ໃຫ້ລາຍລະອຽດກ່ຽວກັບສະຖາບັນສິດທິມະນຸດທີ່ສຳຄັນ ແລະ ຫຼັກການນິຕິທຳໃຫ້ແກ່ຜູ້ທີ່ຝຶກຫັດດ້ານສິດທິມະນຸດ;
5. ເອກະສານພື້ນຖານສິດທິມະນຸດແມ່ນໄດ້ໃຫ້ລາຍລະອຽດກ່ຽວກັບວຽກງານຂອງອົງການ ສປຊ ດ້ານສິດທິມະນຸດ.

#### 1. ເອກະສານຂໍ້ທົ່ວໄປ

ເອກະສານຂໍ້ມູນທົ່ວໄປຂອງສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ໃຫ້ຂໍ້ມູນກ່ຽວກັບພື້ນຖານສິດທິມະນຸດ. ບາງເອກະສານກໍ່ໄດ້ລົງເລິກລາຍລະອຽດກ່ຽວກັບບັນຫາ ຫຼື ກຸ່ມສະເພາະໃດໜຶ່ງ; ບາງອັນກໍ່ອະທິບາຍກ່ຽວກັບອົງສິດທິມະນຸດຂອງ ສປຊ ແລະຂະບວນການດຳເນີນງານຂອງອົງກອນເຫລົ່ານັ້ນ. ນອກນີ້ໃນເອກະສານຂໍ້ມູນທົ່ວໄປຍັງໄດ້ໃຫ້ແນວທາງທີ່ມີປະໂຫຍດກ່ຽວກັບວິທີເຮັດວຽກຮ່ວມກັບໂຄງການສິດທິມະນຸດຂອງ ສປຊ.

#### 2. ເອກະສານທີ່ຈັດພິມພິເສດ

ເປັນອກະສານທີ່ໃຫ້ລາຍລະອຽດກ່ຽວກັບບັນຫາໃດໜຶ່ງຢ່າງເລິກເຊິ່ງ. ຫົວເລື່ອງທີ່ຄັດເອົາມານັ້ນແມ່ນອີງໃສ່ຄວາມເປັນ ຈິງ, ຄວາມຮີບດ່ວນ ແລະ ເຂົ້າກັນກັບການພັດທະນາໃນປະຈຸບັນ. ຕົວຢ່າງ: ຍຸດທະວິທີໃນການປົກປ້ອງສິດທິມະນຸດ, ການຢືນຢັນເປົ້າໝາຍການພັດທະນາສະຫັດສະວັດ: ການເຂົ້າເຖິງບັນຫາສິດທິມະນຸດ; ເຄື່ອງມືທາງດ້ານລະບຽບກົດໝາຍສຳລັບປະເທດທີ່ມີຄວາມຂັດແຍ່ງ; ການປະເມີນຜົນໃຫ້ສະຖາບັນສິດທິມະນຸດແຫ່ງຊາດ (ພິມຮ່ວມກັບສະພາສາກົນວ່າດ້ວຍນະໂຍບາຍສິດທິມະນຸດ); ແລະ ສິດທິຂອງຄົນບໍ່ມີສັນຊາດ.

ຄູ່ມືແມ່ນມີເປັນຟາຍດີຈີຕໍ້ໃນເວບໄຊ້ຂອງ OHCHR ທີ່: http://www.ohchr.org/civilsocietyhandbook/
ໃນເວບແມ່ນຈະມີເປັນບົດດ່ຽວຫຼືເປັນທັງປຶ້ມເປັນຫົວທີ່ສາມາດດາວໂລດໄດ້.

**3. ເອກະສານສຳລັບການສຶກສາ ແລະ ການຝຶກອົບຮົມ**

ເອກະສານສຳລັບການສຶກສາ ແລະ ການຝຶກອົບຮົມຂອງສຳນັກງານຂ້າຫລວງໃຫຍ່ແມ່ນໄດ້ໃຫ້ຂໍ້ມູນລະອຽດກ່ຽວກັບລະບົບສິດ ທິມະນຸດຂອງ ສປຊ ກໍ່ຄືບັນດາເຄື່ອງມືທີ່ຍັງໃຊ້ການໄດ້ສຳລັບໂຄງການຝຶກອົບຮົມ ແລະ ການສຶກສາແກ່ຜູ້ເຂົ້າຮ່ວມທີ່ມາ ຈາກຫລາຍພາກສ່ວນຕ່າງໆກັນເຊັ່ນ: ຕຳຫລວດ, ເຈົ້າໜ້າທີ່ປະຈຳຄຸກ, ຜູ້ພິພາກສາ, ພະນັກງານຈາກສະພາ, ຜູ້ກວດກາສິດທິ ມະນຸດ, ຜູ້ກວດກາການເລືອກຕັ້ງ ແລະ ນັກປະຊາສັງຄົມ, ຫຼື ບຸກຄົນ ຫຼື ກຸ່ມຄົນສະເພາະ.

ເອກະສານການຝຶກອົບຮົມຕ່າງໆປະກອບມີປຶ້ມຄູ່ມື ແລະ ເອກະສານຄູ່ມືທີ່ສ້າງຄວາມຕື່ນຕົວກ່ຽວກັບມາດຕະຖານ ສິດທິມະນຸດສາກົນ ແລະ ສາມາດໃຫ້ຄວາມຮູ້ແກ່ຜູ້ອ່ານໃນການນຳເອົາໄປໃຊ້ໃນສະພາບການຂອງສິດທິມະນຸດພາຍໃນປະ ເທດຕົນ.

ເຖິງແມ່ນວ່າບັນດາເອກະສານສຳລັບການສຶກສາ ແລະ ການຝຶກອົບຮົມນັ້ນແມ່ນຖືກສ້າງຂຶ້ນມາເພື່ອສະໜັບສະໜູນ ກິດຈະກຳການຝຶກອົບຮົມຂອງສຳນັກງານຂ້າຫລວງໃຫຍ່ກໍ່ຕາມ, ເອກະສານເຫລົ່ານັ້ນໃນປະຈຸບັນແມ່ນຍັງມີປະໂຫຍດສຳລັບ ອົງການຕ່າງໆທີ່ມີການຈັດການສຶກສາສິດທິມະນຸດໃຫ້ແກ່ໜ່ວຍງານວິຊາຊີບຕ່າງໆ. ເອກະສານຄູ່ມືການ ຝຶກອົບຮົມແມ່ນ ສາມາດນ ໍາໃຊ້ກັບກຸ່ມຄົນເປົ້າໝາຍຕ່າງໆບໍ່ວ່າຈະອີງໃສ່ຄວາມຈຳເປັນ ແລະ ປະສົບການທີ່ເຂົາເຈົ້າມີ ທາງດ້ານວັດທະນາ ທຳ, ການສຶກສາ, ແລະ ພື້ນຖານທີ່ມາກໍ່ຕາມ. ໃນເອກະສານຍັງໄດ້ມີຍຸດທະວິທີກ່ຽວກັບວິທີການສອນໄວ້ໃຫ້ຄູຝຶກໄດເອົາ ໄປນຳໃຊ້ຕົວຈິງໄດ້ອີກດ້ວຍ.

ໃນຊຸດເອກະສານການຮຽນກ່ຽວກັບສິດທິມະນຸດແມ່ນມີຄູ່ມືການຮຽນການສອນທີ່ເໝາະສົມສຳລັບຫລາຍພາກສ່ວນ ທີ່ຈະນຳໃຊ້ຕົວຈິງ. ໃນຊຸດເອກະສານທີ່ວ່ານັ້ນແມ່ນລວມມີເອກະສານກ່ຽວກັບຫຼັກສູດການຮຽນສິດທິມະນຸດລະດັບສາກົນ, ແບບການຮຽນດ້ານສົນທິສັນຍາ ແລະ ການສຶກສາສິດທິມະນຸດ, ນອກກນັ້ນເອກະສານຍັງມີບັນດາບົດຮຽນທີ່ລວບລວມກ່ຽວ ກັບຫຼັກການເຄື່ອງມືຕ່າງໆໃນລະດັບພາກພື້ນ ແລະສາກົນທີ່ເນັ້ນທາງດ້ານການສຶກສາສິດທິມະນຸດ ແລະ ມີຄູ່ມືທີ່ມີ ຄຳແນະ ນຳສຳລັບຄູອາຈານທີ່ສອນສິດທິມະນຸດ.

ສຸດທ້າຍ, ຊຸດເອກະສານແນະນຳກໍ່ແມ່ນມີຂໍ້ມູນກ່ຽວກັບກຸ່ມຄົນ ຫຼື ບຸກຄົນສະເພາະໃດໜຶ່ງທີ່ເນັ້ນກ່ຽວກັບວິທີ ການທີ່ຈະໄດ້ຮັບການປົກປ້ອງສິດທິຈາກຂະບວນການດຳເນີນງານຕ່າງໆໃນພາກພື້ນ ແລະ ສາກົນ. ເນື້ອໃນຍັງມີລາຍລະອຽດ ຄຳແນະນຳຂອງ ສປຊ ສຳລັບຄົນພື້ນເມືອງ ແລະ ຄົນຊົນເຜົ່າທີ່ຈະນຳໃຊ້ ແລະ ຂໍການຊ່ວຍເຫຼືອນຳໜ່ວຍງານ ແລະ ກົນໄກສິດທິມະນຸດຕ່າງໆໃນພາກພື້ນຂອງ ສປຊ.

**4. ເອກະສານອ້າງອີງ**

ເປັນເອກະສານທີ່ໃຫ້ຂໍ້ມູນກ່ຽວກັບກົນໄກ ແລະ ຂໍ້ມູນທີ່ສຳຄັນດ້ານສິດທິມະນຸດແກ່ນັກຄົ້ນຄ້ວາ ແລະ ນັກກົດໝາຍສິດທິມະນຸດ ຜູ້ທີ່ກຳລັງຝຶກງານ. ໃນເອກະສານອ້າງອີງແມ່ນໄດ້ລວບລວມບັນດາກົນໄກສິດທິມະນຸດຕ່າງໆເຊັ່ນ: ສົນທິສັນຍາສິດທິມະນຸດສາ ກົນໃໝ່ໆທີ່ສຳຄັນ, ແລະ ບັນດາຫຼັກການນິຕິທຳຂອງອົງກອນສິດທິມະນຸດເຊັ່ນ: ບັນຫາການຕັດສິນໃຈຂອງຄະນະກຳມາທິການ ສິດທິມະນຸດທີ່ຢູ່ພາຍໃຕ້ອານຸສັນຍາ ຫຼື ມະຕິຕົກລົງກ່ຽວກັບການຕໍ່ຕ້ານການທໍລະມານ.

5. **ເອກະສານພື້ນຖານສິດທິມະນຸດ**

ຊຸດເອກະສານທີ່ວ່ານີ້ແມ່ນສ້າງຂຶ້ນເພື່ອເຜີຍແຜ່ຂໍ້ມູນຂ່າວສານເຊິ່ງອາດມີອອກມາໃນຮູບແບບແຜ່ພັບ ຫຼື ໃບຕິດປະກາດ ແບບໂພດສະເຕີ້ໃຫ້ແກ່ສາທາລະນະໃຫ້ໄດ້ຮັບຮູ້ກ່ຽວກັບວຽກງານຂອງ ສປຊ ແລະ ຊ່ວຍປະກອບສ່ວນໃນພາລະ ໜ້າທີ່ຂອງ ສປຊ ໃນດ້ານສິດທິມະນຸດ.

## ວິທີຂໍສື່ພິມຂອງສຳນັກງານຂ້າຫລວງໃຫຍ່

ສຳນັກງານຂ້າຫລວງໃຫຍ່ໄດ້ປັບປຸງອັບເດດຂໍ້ມູນກ່ຽວກັບສື່ພິມຕະຫລອດເວລາ. ສື່ພິມທີ່ພິມເຜີຍແຜ່ນັ້ນແມ່ນໄດ້ສ້າງ ອອກມາເປັນ 6 ພາສາຂອງໂລກທີ່ຖືກນຳໃຊ້ໃນອົງການ ສປຊ ເຊັ່ນ: ພາສາອາຣັບ (A), ພາສາຈີນ (C), ພາສາອັງກິດ (E), ພາສາຝຣັ່ງ(F), ພາສາຣັດເຊຍ (R), ແລະ ພາສາ ສະເປນ (S).

ຖ້າຂໍ້ມູນໃນເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ມີເຄື່ອງໝາຍ (*w*) ແມ່ນສາມາດດາວໂລດໄດ້ຟີ, ຖ້າມີເຄື່ອງໝາຍ (*) ແມ່ນເປັນເອກະສານຂອງ ສປຊ ທີ່ມີເພື່ອຂາຍ ແລະ ທ່ານສາມາດຊອກຫາໄດ້ຕາມຮ້ານຄ້າຕ່າງໆໃນທົ່ວໂລກ. .

ສຳລັບຂໍ້ມູນເພີ່ມເຕີມແມ່ນສາມາດເຂົ້າເບິ່ງໃນເວບໄຊ້ໜ່ວຍງານຂາຍເອກະສານຂອງ ສປຊ ທີ່ນະຄອນນິວຢອກ (ຜູ້ສົນ ໃຈຂໍ້ມູນຈາກອາຊີ ແລະ ປາຊີຟິກ, ອາເມລິກາລາຕິນ, ແລະ ອາເມລິກາເໜືອ) ຫຼື ທີ່ ສຳນກງານເຈນນີວາ ( ສຳລັບຜູ້ ສົນໃຈຂໍ້ມູນຈາກອັບຝຣິກາ, ຢູໂຣບ, ແລະ ຕາເວັນອອກກາງ).

ຂໍ້ມູນເພີ່ມເຕີມແມ່ນສາມາດເຂົ້າໄປເບິ່ງທີ່ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່
OHCHR publications web page

ສຳລັບໜ່ວຍງານພາກປະຊາສັງຄົມທີ່ຕ້ອງການຂໍ້ມູນເພີ່ມແມ່ນສາມາດເບິ່ງໃນເວບໄຊ້ ຫຼື ຂຽນອີເມວຫາ
publications@ohchr.org.

ເອກະສານຂອງສຳນັກງານຂ້າຫລວງໃຫຍ່ສ່ວນຫລາຍແລ້ວຢູ່ໃນລະບົບອອນລາຍ. ນອກຈາກນີ້ແລ້ວຍັງ ມີເອກະສານບາງຢ່າງທີ່ສຳຄັນກ່ຽວກັບກິດຈະກຳການຝຶກອົບຮົມ ແລະ ຂໍ້ມູນສະເພາະແມ່ນສາມາດ ຂໍໄດ້ທີ່: ໜ່ວຍງານຈັດພິມ ແລະ ຂ່າວສານ, ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ

Palais des Nations, 8–14, avenue de la Paix
CH–1211 Geneva 10, Switzerland
Phone: +41 (0)22 928 92 24
Fax: +41 (0)22 928 90 10
E-mail: publications@ohchr.org

## ໃນເວລາທີ່ຂໍສັ່ງເອກະສານແມ່ນຄວນຈະລະບຸ:

- ວັດຖຸປະສົງທີ່ຢາກໄດ້ເອກະສານ, ໃສ່ລາຍລະອຽດກ່ຽວກັບແຜນງານທີ່ຈະຈັດຝຶກອົບຮົມ, ເປົ້າໝາຍ, ວັນເວລາທີ່ ຈະຈັດ, ລາຍລະອຽດຜູ້ທີ່ຈະເຂົ້າຮ່ວມ, ແລະ ອື່ນໆ. ຫລັງຈາກໄດ້ນຳໃຊ້ເອກະສານເປັນທີ່ຮຽບຮ້ອຍແລ້ວ, ຜູ້ທີ່ນຳ ໃຊ້ແມ່ນສາມາດໃຫ້ຄຳຕິຊົມກ່ຽວກັບເອກະສານຕ່າງໆໄດ້ໂດຍອາດສົ່ງຜ່ານທາງອີເມວ, ໄປສະນີ, ແລະ ອື່ນໆ;
- ຈຳນວນເອກະສານທີ່ຕ້ອງການ
- ລາຍລະອຽດຜູ້ຂໍ
- ທີ່ຢູ່ທາງໄປສະນີ
- ໂທລະສັບຕິດຕໍ່
- ເບີແຟກ
- ອີເມວ

ແບບຟອມຂໍສັ່ງເອກະສານແມ່ນເອົາໄດ້ທີ່ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່. ເອກະສານທີ່ແຈກຟຣີແມ່ນສາ ມາດເອົາໄດ້ທີ່ສຳນັກງານ ສປຊ ບ່ອນທີ່ໃກ້ຄຽງ. ເອກະສານທີ່ໃຫ້ຟຣີນັ້ນແມ່ນໃຫ້ໄດ້ຈຳນວນຈຳກັດ ແລະ ບາງເອກະສານກໍ່ມີບໍ່ພຽງພໍ ຫຼື ໝົດແລ້ວຖ້າຫາກເຫັນເຄື່ອງໝາຍສີດຳໝາຍໃສ່ໃນລາຍການເອກະສານ.

ສຳລັບໂຮງພິມທີ່ມີຈຸດປະສົງຢາກຂໍພິມເພີ້ມເອກະສານຕ່າງໆທີ່ມີຂອງສຳນັກງານຂ້າຫລວງໃຫຍ່ແມ່ນສາມາດສົ່ງຄຳຮ້ອງຂໍໄປຫາສຳນັ ກງານ ສປຊ ທີ່ນະຄອນເຈນນີວາ, ພະແນກຂາຍ,

Palais des Nations,

8–14, avenue de la Paix,

CH–1211 Geneva 10,

Switzerland, e-mail: unpubli@unog.ch.

## B. ຫໍສະໝຸດຂອງສຳນັກງານຂ້າຫລວງໃຫຍ່

ຫໍສະມຸດຂອງສຳນັກງານຂ້າຫລວງໃຫຍ່ໃນນະຄອນເຈນນີວາແມ່ນໄດ້ໃຫ້ຂໍ້ມູນທີ່ລະອຽດ ແລະ ການໃຫ້ບໍລິການແກ່ຄູ່ຮ່ວມງານຂອງສຳນັກງານຂ້າຫລວງໃຫຍ່, ຊ່ຽວຊານ ແລະ ກົນໄກສິດທິມະນຸດຂອງ ສປຊ, ແລະ ບັນດາພະນັກງານຂອງສຳນັກງານຂ້າຫລວງໃຫຍ່. ໃນຫໍສະໝຸດແມ່ນໄດ້ມີເອກະສານທີ່ເປັນທັງລະບົບອອນລາຍ ແລະ ເອກະສານສິ່ພິມເປັນຈຳນວນຫລວງຫລາຍທີ່ກ່ຽວຂ້ອງກັບສິດທິມະນຸດ. ນອກນັ້ນທາງຫໍສະມຸດຍັງໄດ້ປະສານງານ ແລະ ຮ່ວມມືກັບບັນດາຫໍສະມຸດ ແລະ ສູນຄົ້ນຄ້ວາຕ່າງໆທົ່ວໂລກໃນການໃຫ້ເຂົ້າເຖິງຖານຂໍ້ມູນ ແລະ ເອກະສານລະຫວ່າງກັນແລະກັນແບບອອນລາຍ ແລະ ແບບການໃຫ້ບໍລິການດ້ານຂໍ້ມູນຕ່າງໆໄດ້.

ການໃຫ້ບໍລິການຂອງຫໍສະໝຸດແມ່ນເພື່ອບໍລິການໜ່ວຍງານທີ່ກ່ຽວຂ້ອງກັບສຳນັກງານຂ້າຫລວງໃຫຍ່ ແຕ່ສຳນັກ ງານ ຫຼືບຸກຄົນຕ່າງໆກໍ່ສາມາດນຳໃຊ້ການບໍລິການຫໍສະໝຸດນີ້ໄດ້ຄືກັນ. ອົງການ NGOs ທີ່ຢູ່ໃນນະຄອນເຈນນີວາແມ່ນໄດ້ຮັບອານຸຍາດເປັນພິເສດໃນການນຳໃຊ້ຖານຂໍ້ມູນຂອງຫໍສະໝຸດໄດ້ແບບບໍ່ຈຳກັດ, ສ່ວນອົງການອື່ນໆແມ່ນສາມາດນຳໃຊ້ການບໍລິການຂອງຫໍສະໝຸດໄດ້ແຕ່ເປັນແບບຈຳກັດ.

ການເປີດບໍລິການຂອງຫໍສະໝຸດແມ່ນແຕ່ວັນຈັນຫາວັນສຸກ, ຕອນເຊົ້າເວລາ 9:30-12:30 ແລະ ຕອນບ່າຍເວ ລາ 2:00-5:00 . ຜູ້ໃຊ້ບໍລິການຕ້ອງມີບັດຍັ້ງຢືນຕ່າງໆທີ່ບໍ່ທັນມົດອາຍຸເຊັ່ນ: (ບັດພະນັກງານຂອງອົງການ ສປຊ, ບັດ ປະຈຳໂຕ, ຫຼືວ່າ ໃບຂັບຂີ່). ສ່ວນເອກະສານທີ່ກ່ຽວກັບຂໍ້ມູນ ອ້າງອີງຕ່າງໆແມ່ນບໍ່ສາມາດໃຫ້ພາກສ່ວນທີ່ມາໃຊ້ບໍລິການ ຈາກຂ້າງນອກຢືມອອກໄດ້, ແຕ່ສາມາດໃຊ້ບໍລິການພາຍ ໃນຫໍສະໝຸດໄດ້. ການໃຊ້ບລິການຫໍສະໝຸດແມ່ນຕ້ອງປະຕິບັດ ຕາມລະບຽບຂອງຫໍສະໝຸດ. ການບໍລິການຂອງຫໍສະໝຸດຂອງ ສຳນັກງານຂ້າຫລວງໃຫຍ່ແມ່ນບໍ່ສາມາດໃຫ້ບໍລິການແກ່ ເດັກນ້ອຍທີ່ບໍ່ມີຜູ້ປົກຄອງມານຳ.

ວິທີການຕິດຕໍ່ຫາຫໍສະໝຸດຂອງສຳນັກງານຂ້າຫລວງໃຫຍ່

ຫໍສະໝຸດແມ່ນຢູ່ໃນຕຶກ Giuseppe Motta, ຊັ້ນລຸ່ມ.
(48, Avenue Giuseppe Motta, Geneva).

ການເປີດບໍລິການຂອງຫໍສະໝຸດແມ່ນແຕ່ວັນຈັນຫາວັນສຸກ, ຕອນເຊົ້າເວລາ 9:30-12:30 ແລະ ຕອນບ່າຍເວລາ 2:00-5:00 .
ຜູ້ໃຊ້ບໍລິການຕ້ອງມີບັດຍັ້ງຢືນຕ່າງໆທີ່ບໍ່ທັບມົດອາຍຸເຊັ່ນ: (ບັດພະນັກງານຂອງອົງການ ສປຊ, ບັດປະຈຳໂຕ, ຫຼືວ່າ ໃບຂັບຂີ່).

Phone: +41 (0)22 928 97 90, Fax: +41 (0)22 928 90 65

E-mail: library@ohchr.org

## C. ເອກະສານຂໍ້ມູນອື່ນໆຂອງສຳນັກງານຂ້າຫລວງໃຫຍ່

ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ແມ່ນມີເອກະສານທີ່ສຳຄັນຫລາຍຢ່າງ, ມີເອກະສານອ້າງອີງ, ແລະ ມີເອກະສານຂໍ້ມູນທີ່ກ່ຽວກັບກົນໄກສິດທິມະນຸດສາກົນລວມເຖິງເອກະສານທີ່ກ່ຽວກັບບັນດາກິດຈະກຳຕ່າງໆຂອງສຳນັກງານຂ້າຫລວງໃຫຍ່. ໃນໜ້າເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ແມ່ນມີຊ່ອງໃຫ້ຄົ້ນຫາຂໍ້ມູນກ່ຽວກັບສິດທິມະນຸດໂດຍ ຕົງເຊິ່ງລວມມີເອກະສານທາງການຂອງແຕ່ລະປະເທດ, ຂອງແຕ່ລະຫົວເລື່ອງ, ແລະ ຂອງແຕ່ລະກຸ່ມວິຊາຊີບ. ເອກະສານທາງການທຸກຢ່າງຂອງ ສປຊ ແມ່ນສາມາດເຂົ້າເຖິງໃນລະບົບອອນລາຍໄດ້ທີ່ລະບົບເອກະສານທາງການ ຂອງ ສປຊ.

## ສູນສື່ມວນຊົນ

ບັນດາຖະແຫຼງການ ແລະ ສີ່ພິມທີ່ກ່ຽວກັບກິດຈະກຳຂອງສຳນັກງານຂ້າຫລວງໃຫຍ່ ແລະ ກົນໄກສິດທິມະນຸດຂອງ ສປຊ ແມ່ນອາດມີຢູ່ໃນລະບົບອອນລາຍຂອງເວບສື່ມວນຊົນ. ບັນດາຂ່າວສານ, ວາລະການປະຊຸມ ແລະ ກິດຈະກຳ ຕ່າງໆ, ຖະແຫລງການຂອງສຳນັກງານຂ້າຫລວງໃຫຍ່, ແລະ ວາລະສານທີ່ພິມອອກສູ່ສາທາລະນະແມ່ນມີໃນເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່.

ສຳລັບພະນັກງານຂອງສື່ມວນຊົນທີ່ຢາກໄດ້ຂໍ້ມູນ, ຢາກສຳພາດ, ຫຼື ຢາກໄດ້ຄຳຕິຊົມຕ່າງໆແມ່ນສາມາດຕິດຕໍ່ໄດ້ທີ່:

ອີເມວ: press-info@ohchr.org
ໂທລະສັບ: +41 (0)22 917 97 67 (ໂຄຊົກຂອງສຳນັກງານຂ້າຫລວງໃຫຍ່)
+41 (0)22 917 93 83 (ພະນັກງານຕ້ອນຮັບ).

ຖ້າຢາກໄດ້ການແຈ້ງຂ່າວສານປະຈຳທາງອີເມວແມ່ນສາມາດສົ່ງອີເມວໄປທີ່: press-info@ohchr.org.

ສຳລັບຂໍ້ມູນທີ່ກ່ຽວກັບອົງກອນ ແລະ ກົນໄກສິດທິມະນຸດຂອງ ສປຊ ແມ່ນສາມາດເອົາລາຍລະອຽດໄດ້ໃນ ປື້ມຄູ່ມືສະບັບນີ້.

---

ມືແມ່ນມີເປັນຟາຍດີຈີຕໍ້ໃນເວບໄຊ້ຂອງ OHCHR ທີ່: http://www.ohchr.org/civilsocietyhandbook/ ໃນເວບແມ່ນຈະມີເປັນບົດດຽວຫຼືເປັນທັງປື້ມເປັນຫົວທີ່ສາມາດດາວໂລດໄດ້.

## IV. ອົງກອນສິດທິມະນຸດທີ່ໄດ້ຮັບການສ້າງຕັ້ງຂຶ້ນມາຈາກສົນທິສັນຍາ

### ຄວາມຮູ້ທົ່ວໄປກ່ຽວກັບອົງກອນສິດທິມະນຸດ

#### *ອົງກອນສິດທິມະນຸດແມ່ນຫຍັງ?*

ອົງກອນສິດທິມະນຸດແມ່ນຄະນະກຳມາທິການທີ່ມີບັນດາຜູ້ຊ່ຽວຊານອິດສະເຣັດໜ້າທີ່ໃນການກວດສາການຈັດຕັ້ງປະຕິບັກສົນທິສັນຍາຂອງບັນດາປະເທດພາຄີຕ່າງໆ. ການກວດສອບທີ່ວ່າແມ່ນກ່ຽວກັບການທົບທວນບົດລາຍງານແຕ່ລະໄລຍະທີ່ໄດ້ຮັບຈາກປະເທດພາຄີອັນທີ່ກ່ຽວກັບບັນຫາການນຳເອົາຫຼັກການຂອງສົນທິສັນຍາໄປນຳໃຊ້. ອົງກອນສິດທິມະນຸດແມ່ນມີອຳນາດໃນການ ຮັບ ແລະ ພິຈາລະນາຄຳຮ້ອງທຸກຈາກຄົນທົ່ວໄປ ແລະ ມີອຳນາດໃນການສອບຖາມຄວາມເປັນຈິງ. ຕົວ ຢ່າງ: ອານຸກຳມາທິການເພື່ອ ການຕ້ານການທໍລະມານແມ່ນໄດ້ຮັບພາລະບົດໃນການລົງສູ່ພື້ນທີ່ເພື່ອຊອກຫາຄວາມເປັນຈິງ ແລະ ເພື່ອເຄື່ອນໄຫວຕ້ານການທໍລະມານທີ່ເກີດຂຶ້ນ.

#### *ອົງກອນສິດທິມະນຸດເຮັດ ຫຍັງແດ່?*

ອີງຕາມພັນທະນການຕິດຕາມການຈັດຕັ້ງປະຕິບບັດສົນທິສັນຍາຂອງບັນດາປະເທດພາຄີ, ແຕ່ລະປະເທດພາຄີແມ່ນຕ້ອງໄດ້ສົ່ງບົດລາຍງານກ່ຽວກັບຂະບວນການຈັດຕັ້ງປະຕິບັດສົນທິສັນຍາຂອງຕົນເປັນໄລຍະໆ. ອົງສິດທິມະນຸດແມ່ນມີອຳນາດໜ້າ ທີ່ໃນການທົບທວນບົດລາຍງານດັ່ງກ່າວຕໍ່ໜ້າປະເທດພາຄີທີ່ກ່ຽວຂ້ອງ ແລະ ໃຫ້ ການພິຈາລະນາເບິ່ງຂໍ້ມູນທີ່ໄດ້ບໍ່ວ່າຈະເປັນທາງປາກເປົ່າທີ່ໄດ້ໃນເວລາທີ່ດຳເນີນການທົບທວນ ຫຼື ທາງເອກະສານກໍ່ຕາມທີ່ໄດ້ຮັບມາ. ອົງກອນສິດທິມະນຸດຍັງມີສິດທີ່ຈະຮັບເອົາບັນດາບົດລາຍງານຕ່າງໆທີ່ສົ່ງມາຈາກສຳນັກງານຕ່າງໆຂອງ ສປຊ, ສະຖາບັນສິດທິມະນຸດແຫ່ງຊາດ ແລະ ໜ່ວຍງານພາກປະຊາ ສັງຄົມໂດຍສະເພາະແມ່ນອົງການ NGOs, ສະມາຄົມນັກວິຊາຊີບ ແລະ ສະຖາບັນທາງການສຶກສາຕ່າງໆ. ອີງຕາມຂະບວນການ ທີ່ກ່າວມານີ້, ອົງກອນສິດທິມະນຸດກໍ່ຈະໄດ້ ຮັບຮອງ ເອົາສິ່ງທີ່ໄດ້ພົບໂດຍເອີ້ນວ່າ "ບົດສະຫລຸບ ຈາກການສັງເກດການ". ອີງຕາມບົດສະຫລຸບນັ້ນກໍ່ມີທັງຂໍ້ຊົມເຊີຍ ແລະ ດ້ານຂໍ້ຄົງຄ້າງທີ່ຕ້ອງ ໄດ້ດຳເນີນການແກ້ໄຂໃນອານາຄົດ.

---

ມີແມ່ນມີເປັນຟາຍດີຈີຕໍ້ໃນເວບໄຊ້ຂອງ OHCHR ທີ່: http://www.ohchr.org/civilsocietyhandbook/
ໃນເວບແມ່ນຈະມີເປັນບົດດ່ຽວຫຼືເປັນທັງປຶ້ມເປັນທີ່ສາມາດດາວໂລດໄດ້.

## ການເຮັດວຽກຮ່ວມກັບໂຄງ
## ການສິດທິມະນຸດແຫ່ງອົງການສະຫະປະຊາຊາດ

ນອກຈາກການພິຈາລະນາບົດລາຍງານຂອງປະເທດພາຄີ, ອົງກອນສິດທິມະນຸດຍັງມີໜ້າທີ່ອື່ນໆໃນການສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດສົນທິສັນຍາເຊັ່ນ:

- ຄະນະກໍາມາທິການສິດທິມະນຸດ, ຄະນະກໍາມາທິການສິດທິມະນຸດເພື່ອການລົບລ້າງການແບ່ງແຍກເຊື້ອ ຊາດ, ຕ້ານການທໍລະມານ, ລົບລ້າງການແບ່ງແຍກເລືອກປະຕິບັດຕໍ່ ແມ່ຍິງ, ປົກປ້ອງສິດຂອງແຮງ ງານຕ່າງດ້າວ ແລະ ຄອບຄົວຂອງ ເຂົາເຈົ້າ, ສິດທິຂອງຄົນພິການ, ແລະ ຕ້ານການບັງຄັບໃຫ້ຫາຍ ສາບສູນ (ສົນທິສັນຍາຖືກຮ່າງໃນປີ 2008 ແຕ່ບໍ່ທັນໄດ້ຮັບການຮັບຮອງເທື່ອ) ອາດມີສິດໃນການພິຈາລະນາການ ຮ້ອງທຸກ ຫຼື ການລາຍງານຕ່າງໆ ຈາກບຸກຄົນ (ຫຼື ກຸ່ມຄົນທີ່ຖືກລະເມີດສິດທິຈາກປະເທດພາຄີທີ່ກ່ຽວກັບບັນຫາການຖືກຈໍາແນກເຊື້ອຊາດ, ການເລືອກປະຕິບັດຕໍ່ແມ່ຍິງ, ການລະເມີດສິດທິຂອງຄົນພິການ). ເມື່ອໃດທີ່ສົນທິສັນຍາດັ່ງກ່າວໄດ້ຖືກຮັບຮອງ ແລ້ວ, ອານຸສັນຍາເພີ່ມເຕີມຂອງສົນທິສັນຍາວ່າດ້ວຍສິດທິທາງເສດຖະ ກິດ, ສັງຄົມ, ແລະ ວັດທະນາທໍາກໍ່ຈະມີສິດຮັບເອົາຄໍາຮ້ອງທຸກມາພ້ອງຕ່າງໆທີ່ກ່ຽວກັບຫຼັກການໃນສົນທິສັນຍານີ້ຈາກກາສ່ວນບຸກຄົນໄດ້. ພາຍໃຕ້ກົນໄກການ ພິຈາລະນາຕາມ, ອົງກອນສິດທິມະນຸດສາມາດອອກມາດຕະ ການຊົ່ວຄາວໃນບັນຫາທີ່ສຸກເສີນເພື່ອການກວດສອບສະຖານະການກ່ອນທີ່ຈະສະຫລຸບຜົນທີ່ໄດ້ພົບ;
- ຄະນະກໍາມາທິການສິດທິມະນຸດເພື່ອຕ້ານການທໍລະມານ, ລົບລ້າງການແບ່ງແຍກເລືອກປະຕິບັດຕໍ່ແມ່ຍິງ, ປົກປ້ອງສິດຂອງແຮງງານຕ່າງດ້າວ ແລະ ຄອບຄົວຂອງເຂົາເຈົ້າ, ສິດທິຂອງຄົນພິການ, ແລະ ຕ້ານການບັງຄັບໃຫ້ຫາຍສາບສູນອາດດໍາເນີນການສອບສວນທັນທີຖ້າເຫັນວ່າຂໍ້ມູນທີ່ໄດ້ມານັ້ນມັນມີເຫດຜົນພຽງພໍທີ່ຍັ້ງຢືນວ່າມີການລະເມີດສິດຢ່າງຮຸນ ແຮງ, ແລະ ເປັນລະບົບໃນປະເທດພາຄີຂອງສົນທິສັນຍາ;
- ຄະນະກໍາມາທິການສິດ ທິມະນຸດເພື່ອການລົບລ້າງການແບ່ງແຍກເຊື້ອຊາດ, ຄະນະກໍາມາທິການສິດທິມະນຸດເພື່ອຕ້ານການທໍລະມານ, ລົບລ້າງການແບ່ງແຍກເລືອກປະຕິບັດຕໍ່ ແມ່ຍິງ, ປົກປ້ອງສິດຂອງແຮງງານຕ່າງດ້າວ ແລະ ຄອບຄົວຂອງເຂົາເຈົ້າແມ່ນມີຂະບວນການດໍາເນີນງານແກ້ໄຂບັນຫາທັງໃນຮູບແບບຮັບພິຈາລະນາຄໍາຮ້ອງຟ້ອງ ຫຼື ຂໍ້ພິພາກລະຫວ່າງລັດ; ແລະ
- ນໍາໃຊ້ຂະບວນການພິເສດທີ່ທາງຄະນະກໍາມາທິການສິດທິມະນຸດເພື່ອການລົບລ້າງການແບ່ງແຍກເຊື້ອຊາດເປັນຜູ້ຄິດຄົ້ນກ່ຽວກັບມາດຕະການແຈ້ງເຕືອນ ແລະ ການດໍາເນີນການແບບຮີບດ່ວນ.
- ອົງກອນສິດທິມະນຸດຍັງໃຫ້ການຮັບຮອງຄໍາແນະນໍາທົ່ວໄປຕ່າງໆ ແລະ ຈັດກອງປະຊຸມດ່ວນເພື່ອພິຈາລະບັນຫາທີ່ຮີບດ່ວນ ແລະ ໃຫ້ຄໍາແນະ ນໍາໃນການແກ້ໄຂບັນຫາດັ່ງກ່າວຕໍ່ໄປ.

- **ວິທີການເຂົ້າເຖິງ ແລະ ຮ່ວມມືກັບອົງກອນສິດທິມະນຸດ**

  ການຮ່ວມມືກັບອົງກອນສິດທິມະນຸດແມ່ນເປັນໜຶ່ງໃນສັນຍານຂອງຄວາມມີປະສິດທິພາບຂອງໜ່ວຍງານພາກປະຊາສັງຄົມໃນການປະກອບສ່ວນຈັດຕັ້ງປະຕິບັດສົນທິສັນຍາສິດທິມະນຸດ.

ການຮ່ວມວຽກກັບອົງກອນສິດທິມະນຸດນັ້ນ ແມ່ນມີຫລາຍຊ່ອງທາງສຳລັບ ໜ່ວຍງານພາກປະຊາສັງຄົມຖ້າ ຫາກຈະຮ່ວມງານໃນດ້ານໃດໜຶ່ງສະເພາະ, ຕົວຢ່າງ:

- ຮ່ວມວຽກງານສົ່ງເສີມ ການໃຫ້ສັດຕະຍາບັນສົນທິສັນຍາ;
- ຮ່ວມກວດກາບົດລາຍງານພັນທະຕາມສົນ ທິສັນຍາຂອງປະເທດ ພາຄີ;
- ສົ່ງຂໍ້ມູນທີ່ເປັນລາຍລັກອັກ ສອນ ແລະ ເລື່ອງລາວຕ່າງໆໃຫ້ແກ່ ອົງກອນສິດທິມະນຸດເຊິ່ງລວມມີການ ລາຍງານທາງເອກະສານໂດຍອີງ ຕາມກົດລະບຽບຂອງແຕ່ລະອົງກອນ, ການເຂົ້າຮ່ວມພາລະກິດ ເປັນຜູ້ ສັງເກດການກັບອົງກອນສິດ ທິມະນຸດ ຫຼື ເຂົ້າຮ່ວມໃນຮູບແບບ ການລາຍງານປາກເປົ່າ;
- ຕິດຕາມບົດສະຫລຸບຈາກການ ສັງເກດການຂອງອົງກອນສິດທິມະນຸດ;
- ຊ່ວຍຍື່ນຄຳຮ້ອງທຸກຂອງບຸກ ຄົນແກ່ອົງກອນສິດທິມະນຸດ (ຄະ ນະກຳມາທິການສິດທິມະນຸດ, ຄະນະ ກຳມາທິການເພື່ອຕ້ານການເລືອກ ປະຕິບັດຕໍ່ແມ່ຍິງ, ຕ້ານການທໍລະ ມານ, ລົບລ້າງການແບ່ງແຍກ ເຊື້ອຊາດ, ຄະນະກຳມາທິການເພື່ອ ສິດທິຂອງແຮງງານຕ່າງດ້າວ);
- ໃຫ້ຂໍ້ມູນທີ່ຈຳເປັນແກ່ຂະ ບວນການສືບສວນສອບສວນທີ່ ປິດລັບ (ຄະນະກຳມາທິການເພື່ອຕ້ານ ການເລືອກປະຕິບັດຕໍ່ແມ່ຍິງ, ຕ້ານການ ທໍລະມານ;
- ໃຫ້ຂໍ້ມູນເພື່ອການແຈ້ງເຕືອນທີ່ໄວ ແລະ ເພື່ອການດຳເນີນການທີ່ດ່ວນ (ຄະນະກຳມາທິການເພື່ອລົບລ້າງການຈຳແນກເຊື້ອຊ າດ); ແລະ
- ສົ່ງຂໍ້ສະເໜີໃຫ້ແກ່ກອງປະຊຸມປະຈຳປີຂ ອງບັນດາຄະນະກຳມາທິການສິດທິມະນຸດ.

## ການຕິດຕໍ່ຫາບັນດາອົງກອນສິດທິມະນຸດ

ທຸກອົງກອນສິດທິມະນຸດແມ່ນສາມາດຕິດຕໍ່ໄດ້ໂດຍຜ່ານສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງ ສະຫະປະຊາຊາດປະຈຳນະຄອນເຈນນີວາທີ່:

[ຊື່ຂອງອົງກອນສິດທິມະນຸດ]

c/o ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງ ສະຫະປະຊາຊາດ

Palais des Nations

8–14, avenue de la Paix

CH–1211 Geneva 10 - Switzerland

Fax: +41 (0)22 917 90 29

## A. ອົງກອນສິດທິມະນຸດແມ່ນຫຍັງ?

ສົນທິສັນຍາສິດທິມະນຸດເກົ້າສະບັບນັ້ນແມ່ນໄດ້ຮັບການຄຸ້ມຄອງຈາກຄະນະກຳມາທິການສິດທິມະນຸດຕາມສົນທິສັນຍາ ແລະ ບັນດາປະເທດພາຄີແມ່ນມີພັນທະໃນການຈັດຕັ້ງປະຕິບັດຕາມຫຼັກການໃນສົນທິສັນຍາວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ. ໃນເວລາທີ່ປະເທດໃດໜຶ່ງໃຫ້ສັດຕະຍາບັນ[5]ສົນທິສັນຍາ ຫຼື ໄດ້ເຂົ້າຮ່ວມຂໍ[6]ເປັນພາຄີ, ປະເທດດັ່ງ ກ່າວແມ່ນໄດ້ກາຍເປັນພາຄີຂອງສົນທິສັນຍານັ້ນຢ່າງສົມບູນ ແລະ ເລີ່ມຕົ້ນມີພັນທະໃນການຈັດຕັ້ງປະຕິບັດ.[7] ສົນທິສັນຍາແມ່ນມີເງື່ອນໄຂໃຫ້ສ້າງຕັ້ງຄະນະກຳມາທິການສາກົນທີ່ມີບັນດາຊ່ຽວຊານທີ່ເປັນອິດສະຫລະ (ອົງກອນສິດ ທິມະນຸດ) ເພື່ອກວດກາການຈັດຕັ້ງປະຕິບັດສົນທິສັນຍາໃນປະເທດພາຄີ[8].

ລະບົບອົງກອນສິດທິມະນຸດແມ່ນມີບົດບາດສຳຄັນໃນການສ້າງຄວາມເຂັ້ມແຂງໃຫ້ແກ່ການປົກປ້ອງສິດທິ ມະນຸດແຫ່ງຊາດ. ພາລະໜ້າທີ່ຫຼັກຂອງແຕ່ລະອົງກອນແມ່ນຄືກັນໂດຍສະເພາະແມ່ນວຽກກວດສອບການຈັດ ຕັ້ງປະຕິບັດສົນທິສັນຍາດ້ວຍການທົບທວນເບິ່ງບົດລາຍງານຂອງປະເທດພາຄີທີ່ມີພັນທະສົ່ງໃນແຕ່ລະໄລຍະ.

ມາຮອດເດືອນກັນຍາປີ 2008 ແມ່ນມີອົງກອນສິດທິມະນຸດຢູ່ 9 ອົງກອນຄື:

- ຄະນະກຳມາທິການສິດທິມະນຸດ, ເປັນອົງການທີ່ໃຫ້ການກວດກາການຈັດຕັ້ງປະຕິບັດສົນທິສັນຍາສາກົນວ່າ ດ້ວຍສິດທິທາງພົນລະເຮືອນ ແລະ ການເມືອງ (1966) ແລະ ອານຸສັນຍາເພີ່ມເຕີມຂອງສົນທິສັນຍານີ້;
- ຄະນະກຳມາທິການດ້ານສິດທິທາງເສດຖະກິດ, ສັງຄົມ, ແລະ ວັດທະນາທຳ ແມ່ນມີໜ້າທີ່ກວດກາການ ຈັດຕັ້ງປະຕິບັດສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ, ແລະ ວັດທະນາທຳ (1966);
- ຄະນະກຳມາທິການເພື່ອຕ້ານການຈຳແນກເຊື້ອຊາດແມ່ນມີໜ້າທີ່ກວດສອບການຈັດຕັ້ງປະຕິບັດສົນທິສັນຍາສາກົນ ວ່າດ້ວຍການຕ້ານການຈຳແນກເຊື້ອຊາດ (1965);

IV

---

[5] ການໃຫ້ສັດຕະຍາບັນ, ການຮັບຮອງ ແລະ ການຍອມຮັບທັງໝົດນັ້ນລ້ວນແລ້ວແຕ່ແມ່ນການຍອມຮັບເອົາພັນທາງກົດໝາຍທີ່ມີໃນສົນ ທິສັນຍາ. ກ່ອນຂັ້ນຕອນຂອງການໃຫ້ສັດຕະຍາບັນ, ການລົງລາຍເຊັນກໍຖືວ່າເປັນພັນທະອັນໜຶ່ງຂອງລັດຖະບານໃນຊ່ວງເວລາລະຫວ່າງ ການລົງນາມກັບການໃຫ້ສັດຕະຍາບັນ, ການຮັບຮູ້ ແລະ ການຍອມຮັບເງື່ອນຕ່າງໆກໍຢູ່ໃນຊ່ວງເວລາທີ່ລັດຖະບານຕ້ອງບໍ່ມີການປະພຶດໃດໆ ທີ່ຂັດກັບເນື້ອໃນ ແລະ ວັດຖຸປະສົງຂອງສົນທິສັນຍາທີ່ກ່ຽວຂ້ອງ. (ໃຫ້ເບິ່ງມາດຕາ 18 ຂອງສົນທິສັນຍາກຸງວຽນນາປີ 1969).

[6] ການເຂົ້າເປັນພາຄີໂດຍຕົງແມ່ນການເຂົ້າຮ່ວມສົນທິສັນຍາໂດຍບໍ່ມີການລົງນາມມາຕັ້ງແຕ່ຕົ້ນ, ແຕ່ເຂົ້າຮ່ວມດ້ວຍການຍອມຮັບປະຕິບັດ ເງື່ອນໄຂໃນຮູບແບບການໃຫ້ "ຄຳຢືນຢັນເອົາເງື່ອນໄຂການເຂົ້າຮ່ວມ" ຕໍ່ໜ້າສະມັດຊາໃຫຍ່ອົງການ ສປຊ. ການເຂົ້າຮ່ວມນີ້ແມ່ນມີພັນທະ ໜ້າທີ່ຄືກັນກັບການໃຫ້ສັດຕະຍາບັນ, ການຮັບຮອງ ຫຼື ການຍອມຮັບ.

[7] ການຮັກສາບັນດາຂໍ້ກຳນົດຕ່າງໆເພື່ອບໍໃຫ້ມີການຕັ້ງຂໍ້ສະຫງວນ, ການຕັ້ງຂໍ້ສະຫງວນແມ່ນຖະແຫລງການຂອງປະເທດພາຄີໃດໜຶ່ງທີ່ຕ້ອງການ ບໍ່ປະຕິບັດຂໍ້ກຳນົດໃດໜຶ່ງໃນສົນທິສັນຍາ. ປະເທດພາຄີທີ່ຕັ້ງຂໍ້ສະຫງວນນັ້ນແມ່ນຍັງເປັນພາຄີຂອງສົນທິສັນຍາຢູ່ແຕ່ບໍ່ໄດ້ປະຕິບັດ ບາງຂໍ້ທີ່ໄດ້ຕັ້ງ ຂໍ້ສະຫງວນໄວ້. ການຕັ້ງຂໍ້ສະຫງວນແມ່ນສາມາດເຮັດໄດ້ໃນຊ່ວງເວລາທີ່ລົງລາຍເຊັນ, ກ່ອນໃຫ້ສັດຕະຍາບັນ, ກ່ອນການຮັບຮອງ ຫຼື ກ່ອນການ ຍອມຮັບເອົາສົນທິສັນຍາ. ຂໍ້ສະຫງວນຕ້ອງບໍ່ຂັດກັບວັດຖຸປະສົງ ແລະ ເນື້ອໃນສຳຄັນຂອງສົນທິສັນຍາ.

[8] ສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ, ແລະ ວັດທະນາທຳບໍ່ໄດ້ໃຫ້ຫຼັກການຕາຍໂຕວ່າຈະຕ້ອງມີອົງກອນສິດທິມະນຸດຄູ່ກັນ, ແຕ່ຈະເປັນພາລະໜ້າທີ່ຂອງສາພາເສດຖະກິດ ແລະ ສັງຄົມໃນການກວດສອບການຈັດຕັ້ງປະຕິບັດ. ໃນປີ 1985, ສະພາເສດຖະກິດ ແລະ ສັງ ຄົມໄດ້ແຕ່ງຕັ້ງໜ່ວຍງານພິເສດເພື່ອຊ່ວຍໃນການທົບທວນບົດລາຍງານຂອງປະເທດພາຄີເຊິ່ງມັນເປັນລັກສະນະຄືຮູບແບບອົງກອນສິດທິມະນຸດ ແລະ ໃນທີ່ສຸດໜ່ວຍງານດັ່ງກ່າວກໍ່ໄດ້ກາຍເປັນ "ຄະນະກຳມາທິການດ້ານສິດທິທາງເສດຖະກິດ, ສັງຄົມ, ແລະ ວັດທະນາທຳ" (ມັດຕິຕົກລົງເລກ ທີ 1985\17). ຄະນະກຳມາທິການດັ່ງກ່າວແມ່ນໄດ້ປະຊຸມກັນເປັນຄັ້ງທຳອິດແມ່ນໃນປີ 1987.

- ຄະນະກຳມາທິການເພື່ອຕ້ານການເລືອກປະຕິບັດຕໍ່ແມ່ຍິງແມ່ນມີໜ້າທີ່ໃນການກວດກາການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງ (1979);
- ຄະນະກຳມາທິການເພື່ອຕ້ານການທໍລະມານແມ່ນມີໜ້າທີ່ໃນການກວດສອບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການຕ້ານການທໍລະມານ (1984);
- ຄະນະກຳມາທິການເພື່ອຕ້ານການທໍລະມານແມ່ນໄດ້ຮັບການສ້າງຕັ້ງຂຶ້ນຈາກອານຸສັນຍາເພີ່ມເຕີມຂອງສົນທິສັນຍາວ່າດ້ວຍການຕ້ານການທໍລະມານ ແລະ ການກະທຳອື່ນໆທີ່ໄຮ້ມະນຸດສະທຳ, ຫຼືວ່າ ມີການລົງໂທດແບບປ່າເຖື່ອນ ແລະ ເຮັດໃຫ້ເຊື່ອມເສຍກຽດສັກສີ (2002);
- ຄະນະກຳມາທິການເພື່ອສິດທິຂອງເດັກນ້ອຍ, ເປັນອົງກອນທີ່ກວດສອບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການ ປົກປ້ອງເດັນ້ອຍ (1987) ແລະ ອານຸສັນຍາເພີ່ມເຕີມຂອງສົນທິສັນຍານີ້;
- ຄະນະກຳມາທິການເພື່ອສິດທິຂອງແຮງງານຕ່າງດ້າວ, ເປັນອົງກອນທີ່ກວດກາການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການປົກປ້ອງສິດທິຂອງຄົນຕ່າງດ້າວ ແລະ ສະມາຊິດຄົນໃນຄອບຄົວຂອງເຂົາເຈົ້າ (1990); ແລະ
- ຄະນະກຳມາທິການເພື່ອສິດທິຂອງຄົນພິການ, ເປັນອົງກອນທີ່ກວດກາການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍ ສິດທິຂອງຄົນພິການ (2006).[9]

ອົງກອນສິດທິມະນຸດແມ່ນຈະມີຄົບ10ອົງກອນເຊິ່ງຈະລວມເອົາຄະນະກຳມາທິການຕ້ານການຖືກບັງຄັບໃຫ້ຫາຍສາບສູນໃນອານາຄົດກໍ່ຕໍ່ເມື່ອສົນທິສັນຍາສາກົນວ່າດ້ວຍການຖືກບັງຄັບ ໃຫ້ຫາຍສາບສູນ (2006) ນັ້ນໄດ້ຮັບການຮັບຮອງເສຍກ່ອນ.[10]

ຕາມທີ່ກ່າວມາຂ້າງເທິງນັ້ນ, ບາງສົນທິສັນຍາກໍ່ແມ່ນມີອານຸສັນຍາເພີ່ມເຕີມອອກຕິດຕາມມາເຊິ່ງມັນເປັນທາງເລືອກທີ່ປະເທດພາຄີຈະໃຫ້ສັດຕະຍາບັນຫຼືບໍ່.[11] ອານຸສັນຍານັ້ນແມ່ນຈະເພີ່ມບາງສິດທິ ແລະ ບາງຂະບວນການກວດກາ ເຂົ້າ. ປະຈຸບັນກໍ່ແມ່ນມີຢູ່ 7 ອານຸສັນຍາທີ່ອອກມາແລ້ວເຊັ່ນ:

- ອານຸສັນຍາຂອງສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ;
- ອານຸສັນຍາສະບັບທີສອງຂອງສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ, ອານຸສັນຍາແມ່ນເນັ້ນກ່ຽວກັບການລົບລ້າງໂທດປະຫານຊີວິດ;
- ອານຸສັນຍາຂອງສົນທິສັນຍາສາກົນວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງ;

---

[9] ການໃຫ້ສັດຕະຍາບັນ ແລະ ການຂໍເຂົ້າຮ່ວມໃນສົນທິສັນຍານັ້ນແມ່ນເພີ່ມຂຶ້ນຢ່າງຫລວງຫລາຍໃນປະຈຸບັນ. ໃນວັນທີ 30\09\2008 ແມ່ນມີ 162 ປະເທດພາຄີຂອງສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ; ມີ 159 ປະເທດພາຄີຂອງສົນທິສັນຍາສາກົນວ່າ ດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ; ມີ 173 ປະເທດພາຄີຂອງສົນທິສັນຍາສາກົນວ່າດ້ວຍການຕ້ານການຈຳແນກເຊື້ອຊາດ; ມີ 185 ປະເທດພາຄີຂອງສົນທິສັນຍາສາກົນວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງ; ແລະ ມີ 145 ປະເທດພາຄີຂອງສົນທິສັນຍາສາກົນ ວ່າດ້ວຍການຕ້ານການທໍລະມານ ແລະ ການກະທຳທີ່ໄຮ້ປ່າເຖື່ອນ, ໄຮ້ມະນຸດສະທຳ ຫຼື ການລົງໂທດ ຫຼື ກປະຕິບັດທີ່ເຮັດໃຫ້ເສຍກຽດສັກສີ ແລະ ໄຮ້ມະນຸດສະທຳ; ມີ 193 ປະເທດພາຄີຂອງສົນທິສັນຍາສາກົນວ່າດ້ວຍສິດທິຂອງເດັກນ້ອຍ; ມີ 39 ປະເທດພາຄີຂອງສົນທິສັນຍາສາກົນວ່າດ້ວຍ ການປົກປ້ອງສິດຂອງແຮງງານຕ່າງດ້າວ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ; ແລະ ມີ 40 ປະເທດພາຄີຂອງສົນທິສັນຍາສາກົນວ່າດ້ວຍສິດ ທິຂອງຄົນພິການ.

[10] ມາຮອດວັນທີ 30\09\2008 ແມ່ນມີປະເທດພາຄີຂອງສົນທິສັນຍາສາກົນວ່າດ້ວຍການຖືກບັງຄັບໃຫ້ຫານສາບສູນພຽງແຕ່ 5 ປະເທດເທົ່ານັ້ນ. ສົນທິສັນຍານີ້ຈະມີຜົນບັງຄັບໃຊ້ກໍ່ຕໍ່ເມື່ອໄດ້ມີສະມາຊິກແລ້ວ 20 ປະເທດຂຶ້ນເມືອ.

[11] ປະເທດພາຄີອາດໃຫ້ສັດຕະຍາບັນອານຸສັນຍາຂອງສົນທິສັນຍາສາກົນວ່າດ້ວຍສິດທິຂອງເດັກນ້ອຍຖ້າຫາກເຫັນວ່າມັນສຳຄັນ ແຕ່ຍັງບໍ່ມີປະເທດພາ ຄີໃດໃຫ້ສັດຕະຍາບັນເທື່ອ.

- ອານຸສັນຍາຂອງສົນທິສັນຍາສາກົນວ່າດ້ວຍສິດທິຂອງເດັກນ້ອຍທີ່ມີສ່ວນກ່ຽວຂ້ອງກັບສົງຄາມ;
- ອານຸສັນຍາຂອງສົນທິສັນຍາສາກົນວ່າດ້ວຍສິດທິເດັກນ້ອຍທີ່ກ່ຽວຂ້ອງກັບການຂາຍເດັກນ້ອຍ, ການບັງຄັບຄັບໃຫ້ ເປັນໂສເພນີ ແລະ ຖ່າຍຮູບໂປ້;
- ອານຸສັນຍາຂອງສົນທິສັນຍາສາກົນວ່າດ້ວຍການຕ້ານການທໍລະມານ ແລະ ການກະທຳອື່ນໆທີ່ໄຮ້ມະນຸດສະທຳ, ຫຼືວ່າ ມີການລົງໂທດແບບປ່າເຖື່ອນ ແລະ ເຮັດໃຫ້ເຊື່ອມເສຍກຽດສັກສີ; ແລະ
- ອານຸສັນຍາຂອງສົນທິສັນຍາສາກົນວ່າດ້ວຍສິດທິຂອງຄົນພິການ.[12]

ສະພາສິດທິມະນຸດໃຫ້ການຮັບຮອງອານຸສັນຍາຂອງສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ, ແລະ ວັດທະນາທຳ.[13]

ຄະນະກຳມາທິການປະກອບດ້ວຍ 10-23 ຊ່ຽວຊານທີ່ເປັນອິດສະຫລະທີ່ໄດ້ຖືກຮັບຮອງວ່າມີຄວາມຮູ້ຄວາມສາ ມາດດ້ານສິດທິມະນຸດ. ຊ່ຽວຊານເຫຼົ່ານັ້ນແມ່ນໄດ້ຮັບການສະເໜີຊື່ມາຈາກປະທດພາຄີໃຫ້ເຂົ້າມາດຳລົງຕຳແໜ່ງເປັນ ໄລຍະເວລາ 4ປີ ແລະສາມາດໄດ້ຮັບການຄັດເລືອກເຂົ້າມາໃໝ່ໄດ້. ໃນປະຈຸບັນສົນທິສັນຍາແມ່ນໄດ້ຫລຸດອາຍຸການ ຂອງຄະນະກຳມາທິການລົງເຫຼືອ 2 ປີ.

IV

ທຸກຄະນະກຳມາທິການສິດທິມະນຸດແມ່ດຳເນີນງານໄປຕາມກອບສົນທິສັນຍາ ແລະ ປະຕິບັດຕາມພະແນກສົນທິສັນ ຍາຂອງສຳນັກງານຂ້າຫລວງໃຫຍ່ທີ່ກ່ຽວກັບການຮັບຂໍ້ເໜີ, ຮັບບົດລາຍງານ ແລະ ຮັບການສື່ສານກັບອົງກອນສິດທິມະນຸດ ຕ່າງໆ, ກະກຽມເຮັດບົດລາຍງານ, ເຮັດບົດຄົ້ນຄ້ວາວິໃຈ, ໃຫ້ການຮ່ວມມືທາງວິຊາການ, ໃຫ້ຄຳແນະນຳ ແລະ ນຳພາປະ ເທດພາຄີ, ຈັດກອງປະຊຸມ ແລະ ດຳເນີນງານດ້ານການຂົນສົ່ງເດີນທາງຖ້າຫາກມີການຮຽກຮ້ອງມາ.

ການດຳເນີນງານຂອງທຸກອົງກອນສິດທິມະນຸດນັ້ນແມ່ນຈະຢູ່ໃນສຳນັກງານທີ່ນະຄອນເຈນນີວາ ຫຼື ນະຄອນ ນິວຢອກ[14] (ໃນນະຄອນເຈນນີວາແມ່ນຈະຢູ່ຕຶກສຳນັກງານຂ້າຫລວງໃຫຍ່—Palais Wilson—ແຕ່ບາງຄັ້ງກໍ່ແມ່ນຢູ່ທີ່ Palais des Nations). ສຳນັກງານຂ້າຫລວງໃຫຍ່ແມ່ນມີໜ້າທີ່ໃນການອຳນວຍຄວາມສະດວກໃນການກຽມ ຫ້ອງປະຊຸມ, ກຽມເອກະສານ ແລະ ເຕັກນິກຕ່າງໆເພື່ອໃຫ້ບໍລິການແກ່ຜູ້ຊ່ຽວຊານ, ຜູ້ແທນ, ແລະ ບັນດາພາກສ່ວນທີ່ມາ ຈາກພາກປະຊາສັງຄົມທີ່ເປັນຄົນພິການໃຫ້ໄດ້ນຳໃຊ້ເພື່ອຄວາມສະດວກໃນການເຮັດວຽກຮ່ວມກັບອົງກອນສິດທິມະນຸດ.

---

[12] ມາຮອດວັນທີ 30\09\2008 ແມ່ນມີ 111 ປະເທດພາຄີຂອງອານຸສັນຍາວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ; ມີ 68 ປະເທດພາຄີຂອງອານຸສັນຍາສະບັບທີສອງວ່າດ້ວຍດິດທິທາງດ້ານການເມືອງແລະພົນລະເຮືອນທີ່ເນັ້ນການລົບລ້າງການປະຫານຊີວິດ; ມີ 92 ປະເທດພາຄີຂອງອານຸສັນຍາວ່າດວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງ, ມີ 123 ປະເທດພາຄີຂອງອານຸສັນຍາວ່າດ້ວຍສິດທິເດັກນ້ອຍ ທີ່ມີສ່ວນຮ່ວມໃນສົງຄາມ; ມີ 129 ປະເທດພາຄີຂອງອານຸສັນຍາວ່າດວຍສິດທິເດັກນ້ອຍກ່ຽວກັບການຂາຍເດັກນ້ອຍ, ການບັງຄັບໃຫ້ເປັນໂສເພນີ ແລະ ການຖ່າຍຮູບໂປ້; ມີ 35 ປະເທດພາຄີຂອງອານຸສັນຍາວ່າດ້ວຍການຕ້ານການທໍລະມານ, ຕ້ານການກະທຳ ຫຼື ການລົງໂທດທີ່ປ່າເຖື່ອນ, ໄຮ້ມະນຸດສະທຳດ ແລະ ເຮັດໃຫ້ເສື່ອມເສຍກຽດສັກສີ; ມີ 24 ປະເທດພາຄີຂອງອານຸສັນຍາວ່າດ້ວຍສິດທິຂອງຄົນພິການ.

[13] ສະມັດຊາໃຫຍ່ມີເປົ້າໝາຍທີ່ຈະຮັບຮອງເອົາໃນປີ 2008.

[14] ການດຳເນີນງານຂອງຄະນະກຳມາທິການສິດທິມະນຸດແມ່ນຈັດໃນນະຄອນນິວຢອກ; ການດຳເນີນງານຂອງຄະນະກຳມາທິການເພື່ອຕ້ານການ ເລືອກປະຕິບັດຕໍ່ແມ່ຍິງແມ່ນຈະຈັດຢູ່ທີ່ທັງໃນນະຄອນນິວຢອກ ແລະ ນະຄອນເຈນນີວາ.

| ລະບົບຂອງອົງກອນສິດທິມະນຸດ | | |
|---|---|---|
| ອົງກອນສິດທິມະນຸດ | ການສ້າງສົນທິສັນຍາ | ອານຸສັນຍາເພີ່ມເຕີມ |
| **ຄະນະກຳມາທິການສິດທິມະນຸດສ້າງຕັ້ງໃນປີ 1977** | **ສົນທິສັນຍາວ່າດ້ວຍສິດທິທາງການເມືອງແລະ ພົນລະເຮືອນສ້າງຂື້ນໃນປີ 1966** | **ອານຸສັນຍາວ່າດ້ວຍສິດທິທາງການເມືອງແລະພົນລະເຮືອນ** (ອະນຸຍາດໃຫ້ບຸກຄົນຍື່ນຄຳຮ້ອງທຸກໄດ້), ຮັບຮອງໃນປີ 1966. **ອານຸສັນຍາສະບັບທີສອງແມ່ນແນໃສ່ການລົບລ້າງການປະຫານຊີວິດ ຮັບຮອງໃນປີ 1989** |
| **ຄະນະກຳມາທິການວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ ຮັບຮອງໃນປີ 1985** | **ສົນທິສັນຍາວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ ຮັບຮອງໃນປີ 1966** | **ອານຸສັນຍາວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ ຮັບຮອງໂດຍສະພາສິດທິມະນຸດໃນປີ 2008.** ອານຸສັນຍາແມ່ນຈະອານະຍາດໃຫ້ບຸກຄົນຍື່ນຄຳຮ້ອງທຸກໄດ້ພາຍຫລັງທີ່ໄດ້ຮັບຮອງອານຸສັນຍາຢ່າງເປັນທາງ ການແລ້ວ. |
| **ຄະນະກຳມາທິການວ່າດ້ວຍການຕ້ານການຈຳແນກເຊື້ອຊາດຮັບ ຮອງໃນປີ 1970** | **ສົນທິສັນຍາວ່າດ້ວຍການຕ້ານການຈຳແນກເຊື້ອຊາດຮັບຮອງ ໃນປີ 1965** | ບໍ່ມີອານຸສັນຍາກ່ຽວຂ້ອງ |
| **ຄະນະກຳມາທິການວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງຮັບຮັງໃນປີ 1982** | **ສົນທິສັນຍາວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງ ຮັບຮັງໃນປີ 1979** | **ອານຸສັນຍາວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງ ຮັບຮັງໃນປີ** (ອານຸຍາດໃຫ້ບຸກຄົນຍື່ນຄຳຮ້ອງທຸກ ແລະ ສອບຖາມໄດ້) ຮັບຮອງໃນປີ 1999 |
| **ຄະນະກຳມາທິການວ່າດ້ວຍການຕ້ານການທໍລະມານຮັບຮອງໃນປີ 1987** | ສົນທິສັນຍາສາກົນວ່າດ້ວຍການຕ້ານການທໍລະມານ ແລະ ການກະທຳອື່ນໆທີ່ໄຮ້ມະນຸດສະທຳ, ຫຼືວ່າມີການລົງໂທດແບບປ່າເຖື່ອນແລະເຮັດໃຫ້ເສື່ອມເສຍກຽດສັກສີຮັບຮອງໃນປີ 1984 | ໃຫ້ເບິ່ງໃນຕາຕະລາງ |

| ອົງກອນສິດທິມະນຸດ | ການສ້າງສົນທິສັນຍາ | ອານຸສັນຍາເພີ່ມເຕີມ |
|---|---|---|
| **ອານຸຄະນະກຳມາທິການເພື່ອຕ້ານການທໍລະມານຮັບຮອງໃນປີ** 2006 | **ອານຸສັນຍາ**ວ່າດ້ວຍການຕ້ານການທໍລະມານ ແລະ ການກະທຳອື່ນໆທີ່ໄຮ້ມະນຸດສະທຳ, ຫຼືວ່າມີການລົງໂທດແບບປ່າເຖື່ອນແລະເຮັດໃຫ້ເຊື່ອມເສຍກຽດສັກສີ (ມີ ການສ້າງກົນໄກການກວດສອບແຫ່ງຊາດແລະສາກົນ) ຮັບຮອງ ໃນປີ 2002 | |
| **ຄະນະກຳມາທິການວ່າດ້ວຍສິດທິເດັກນ້ອຍຮັບຮອງໃນປີ** 1991 | **ສົນທິສັນຍາວ່າດ້ວຍສິດທິເດັກນ້ອຍຮັບຮອງໃນປີ** 1989 | **ອານຸສັນຍາວ່າດ້ວຍສິດທິຂອງເດັກນ້ອຍທີ່ມີສ່ວນຮ່ວມໃນຍາມສົງຄາມຮັບຮອງໃນປີ** 2000. **ອານຸສັນຍາວ່າດ້ວຍສິດທິຂອງເດັກນ້ອຍວ່າດ້ວຍການຂາຍ, ເປັນໂສເພນີ ແລະ ຖ່າຍຮູບໂປ້ຮັບຮອງໃນປີ** 2000 |
| **ຄະນະກຳມາທິການວ່າດ້ວຍສິດທິແຮງງານຕ່າງດ້າວແລະຄອບຄົວຂອງເຂົາເຈົ້າຮັບຮອງໃນປີ** 2004 | **ສົນທິສັນຍາວ່າດ້ວຍສິດທິແຮງງານຕ່າງດ້າວແລະຄອບຄົວຂອງເຂົາເຈົ້າຮັບຮອງໃນປີ** 1990 | ບໍ່ມີອານຸສັນຍາກ່ຽວຂ້ອງ |
| **ຄະນະກຳມາທິການວ່າດ້ວຍສິດທິຂອງຄົນພິການຮັບຮອງໃນປີ** 2008 | **ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການຮັບຮອງໃນປີ** 2006 | **ອານຸສັນຍາວ່າດ້ວຍສິດທິຂອງຄົນພິການ** (ອານຸຍາດໃຫ້ບຸກຄົນຍື່ນຄຳຮ້ອງທຸກ ແລະ ສອບຖາມໄດ້) ຮັບຮອງໃນປີ 2006 |
| **ຄະນະກຳມາທິການວ່າດ້ວຍການຕ້ານຖືກບັງຄັບໃຫ້ຫາຍສາບສູນ** (ຮ່າງໃນປີ 2008, ແຕ່ບໍ່ທັນໄດ້ຮັບຮອງເທື່ອ) | **ສົນທິສັນຍາວ່າດ້ວຍການປ້ອງກັນການຖືກບັງຄັບໃຫ້ຫາຍສາບສູນຮັບຮອງໃນປີ 2006** (ຮ່າງໃນປີ 2008, ແຕ່ບໍ່ທັນໄດ້ຮັບຮອງເທື່ອ) | ບໍ່ມີອານຸສັນຍາກ່ຽວຂ້ອງ |

## ຂໍ້ມູນຂອງສຳນັກງານຂ້າຫລວງໃຫຍ່ກ່ຽວກັບອົງກອນສິດທິມະນຸດ

ຂໍ້ມູນເພີ່ມເຕີມກ່ຽວກັບສົນທິສັນຍາ ແລະ ອົງກອນສິດທິມະນຸດແມ່ນສາມາດເອົາໄດ້ທີ່ເວບໄຊ້ ແລະ ເອກະສານຂໍ້ມູນທົ່ວໄປຂອງສຳນັກງານຂ້າຫລວງໃຫຍ່ເຊັ່ນ:

- ເອກະສານນ້ຳເບີ 10 (Rev.1): ສິດທິຂອງເດັກນ້ອຍ
- ເອກະສານນ້ຳເບີ 12: ຄະນະກຳມາທິການເພື່ອຕ້ານການຈຳແນກເຊື້ອຊາດ
- ເອກະສານນ້ຳເບີ 15 (Rev.1): ສິດທິທາງການເມືອງ ແລະ ພົນລະເຮືອນ: ຄະນະກຳມາທິການສິດທິມະນຸດ
- ເອກະສານນ້ຳເບີ 16 (Rev.1): ຄະນະກຳມ່ທິການເພື່ອສິດທາງທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ
- ເອກະສານນ້ຳເບີ 17 (Rev.1): ຄະນະກຳມາທິການເພື່ອຕ້ານການທໍລະມານ
- ເອກະສານນ້ຳເບີ 22 (Rev.1): ການເລືອກປະຕິບັດຕໍ່ແມ່ຍິງ: ຄະນະກຳມ່ທິການ ແລະ ສົນທິສັນຍາ
- ເອກະສານນ້ຳເບີ 24 (Rev.1): ສົນທິສັນຍາວ່າດ້ວຍແຮງງານຕ່າງດ້າວ ແລະ ຄະນະກຳມາທິການແຮງງານຕ່າງດ້າວ
- ເອກະສານນ້ຳເບີ 30 (Rev.1): ລະບົບສົນທິສັນຍາທິດທິມະນຸດ: ການນຳສະກ່ຽວກັບສົນທິສັນຍາສິດທິມະນຸດທີ່ສຳຄັນ ແລະ ອົງກອນສິດທິມະນຸດ; ແລະ
- ເອກະສານນ້ຳເບີ 7 (Rev.1): ຂະບວນການຍື່ນຄຳຮ້ອງທຸກ

ບັນຊີລາຍການຂອງຂໍ້ມູນທົ່ວໄປທີ່ອັບເດດໃນປະປະຈຸບັນແມ່ນສາມາດເບິ່ງໄດທີ່ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່.

ສຳລັບຂໍ້ມູນກ່ຽວກັບຂະບວນການເຮັດບົດລາຍງານຂອງປະເທດພາຄີແມ່ນສາມາກສຶກສາໄນ້ທີ່ບົດລາຍງານກ່ຽວກັບວິທີການເຮັດວຽກຂອງອົງກອນສິດທິມະນຸດທີ່ກ່ຽວຂ້ອງກັບຂະບວນການລາຍງານຂອງປະເທດພາຄີ (HRI\MC\2008\4)

## B. ອົງກອນສິດທິມະນຸດດຳເນີນງານແບບໃດ?

ອົງກອນສິດທິມະນຸດປະຕິບັດໜ້າທີ່ຫລາຍຢ່າງໃນການກວດສອບການຈັດຕັ້ງປະຕິບັດສົນທິສັນຍາຂອງບັນດາປະເທດ ພາຄີ. ເຖິງແມ່ນວ່າອົງກອນສິດທິມະນຸດມີການປະສານງານກັນ ແຕ່ວ່າພວດເຂົາກໍ່ມີຂະບວນການ ແລະ ວິທີການເຮັດ ວຽກທີ່ຕ່າງກັນ. ບາງຕົວຢ່າງທີ່ຍົກໃຫ້ເຫັນຄວາມແຕກຕ່າງນັ້ນແມ່ນການເຮັດວຽກຮ່ວມກັນກັບໜ່ວຍງານພາກປະ ຊາສັງຄົມທີ່ອະທິບາຍແຈ້ງໃນຕອນທ້າຍຂອງຄູ່ມືນີ້.

### 1. ພັນທະລາຍງານຂອງປະເທດພາຄີ

ໃນເວລາທີ່ປະເທດໃດໜຶ່ງໃຫ້ສັດຕະຍາບັນ ຫຼື ໄດ້ເຂົ້າຮ່ວມເປັນພາຄີຂອງສົນທິສັນຍໃດໜຶ່ງແລ້ວ, ປະເທດດັ່ງກ່າວ ແມ່ນຈະມີພັນທະສົ່ງບົດລາຍງານໃນແຕ່ລະໄລຍະໃຫ້ຄະນະກຳມາທິການທີ່ກ່ຽວຂ້ອງເພື່ອທົບທວນການຈັດຕັ້ງປະຕິບັດສົນທິສັນຍານັ້ນໆ . ໃນບົດລາຍງານນັ້ນປະເທດພາຄີຕ້ອງແຍກເລື່ອງກ່ຽວກັບທາງກົດໝາຍ, ການບໍລິຫານ, ທາງຕຸ ລາການ ແລະ ດ້ານອື່ນໆທີ່ຕົນໄດ້ນຳເອົາຫຼັກການໃນສົນທິສັນຍາໄປຈັດຕັ້ງປະຕິບັດແນວໃດ. ນອກນີ້ ໃນບົດງາຍງານ ກໍ່ຄວນຍົກເອົາບັນຫາທີ່ຕົນເຫັນວ່າມັນຫຍຸ້ງຢາກໃນການຈັດຕັ້ງປະຕິບັດສົນທິສັນຍານັ້ນມາລາຍງານ. ບົດລາຍງານທີ່ ຍື່ນໃຫ້ຄະນະກຳມາທິການນັ້ນແມ່ນຈະໄດ້ຖືກກວດສອບຢ່າງລະອຽດໃນຕໍ່ໜ້າຜູ້ແທນຂອງປະເທດພາຄີທີ່ກ່ຽວຂ້ອງ.

ບົດລາຍງານສະບັບທຳອິດແມ່ນຕ້ອງໄດ້ສົ່ງພາຍໃນໜຶ່ງ ຫຼື ສອງປີພາຍຫຼັງທີ່ປະເທດທີ່ກ່ຽວຂ້ອງນັ້ນໄດ້ ເຂົ້າເປັນພາຄີໄດ້ຢ່າງສົມບູບແລ້ວ. ສ່ວນບົດລາຍງານສະບັບຕໍ່ມານັ້ນແມ່ນຂຶ້ນຢູ່ກັບການກຳນົດຂອງສົນທິສັນຍາ ແລະ ຂອງຄະນະກຳມາທິການນັ້ນໆ. ຕາມປົກກະຕິແລ້ວແມ່ນພາຍໃນສອງຫາຫ້າປີ.

ຄະນະກຳມາທິການຫລາຍພາກສ່ວນກໍ່ອາດອານຸຍາດໃຫ້ມີການສົ່ງບົດລາຍງານຫລາຍຢ່າງພ້ອມໆກັນ. ອົງກອນສິດທິມະນຸດສ່ວນຫລາຍແລ້ວຈະແຈ້ງໃຫ້ປະເທດພາຄີຊາບກ່ຽວກັບເຂດກຳນົດເວລາໃນການສົ່ງບົດລາຍງານ.

ຫລາຍໆປະເທດພາຄີແມ່ນຄວນຈະອານຸຍາດໃຫ້ຄະນະກຳມາທິການສິດທິມະນຸດເຂົ້າສັງເກດການໃນເວລາກະກຽມເຮັດບົດລາຍງານ, ການປະຕິບັດທີ່ວ່ານີ້ແມ່ນບໍ່ພຽງແຕ່ເປັນການປະຕິບັດຕາມພັນທະທາງສາກົນທີ່ມີ ແຕ່ມັນກໍ່ປຽບເໝືອນເປັນການເປີດໂອກາດໃນການປະເມີນບັນຫາການປົກປ້ອງສິດທິມະນຸດພາຍໃນປະເທດຂອງຕົນເພື່ອຈະໄດ້ປັບປຸງແຜນນະໂຍບາຍໃນຕໍ່ໜ້າ.

## 2. ການພິຈາລະນາບົດລາຍງານຂອງປະເທດພາຄີໂດຍຄະນະກຳມາທິການສິດທິມະນຸດ ລາຍການຂອງຫົວເລື່ອງຕ່າງໆ

ເພື່ອເຮັດໃຫ້ການດຳເນີນງານເປັນໄປດ້ວຍຄວາມສະດວກວ່ອງໄວ, ທາງຄະນະກຳມາທິການແມ່ນໄດ້ກຽມບັນດາຫົວ ເລື່ອງ ແລະ ຄຳຖາມຕ່າງໆໄວ້ ແລ້ວກໍ່ສົ່ງໃຫ້ປະເທດພາຄີຮັບຮູ້. ຕາມປົກກະຕິແລ້ວປະເທດພາຄີທີ່ໄດ້ຮັບບັນດາຄຳ ຖາມ ແລະ ຫົວເລື່ອງຕ່າງໆນັ້ນແມ່ນຕ້ອງໄດ້ຕອບກັບຄືນມາເປັນລາຍລັກອັກສອນ; ບັນດາຄຳຕອບທີ່ສົ່ງມານັ້ນກໍຈະໄດ້ຖືກລົງ**ເຜີຍແຜ່**ໃນເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ຕໍ່ໄປ.

ນອກນີ້ບັນດາຄຳຕອບທີ່ສົ່ງມາມັນຍັງສາມາດຊ່ວຍເປັນຕົວເສີມໃຫ້ແກ່ບົດລາຍງານຂອງປະເທດພາຄີ ແລະ ມັນມີຄວາມສຳຄັນຫລາຍໃນເວລາທີ່ປະເທດພາຄີມີການລາຍງານຊັກຊ້າໃນຊ່ວງການສົ່ງບົດລາຍງານປະຈຳໄລຍະ ແລະ ການກວດດກາບົດລາຍງານ.

ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ຍິງ, ຄະນະກຳມາທິການວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ, ແລະ ວັດທະນາທຳ, ແລະ ຄະນະກຳມາທິການວ່າດ້ວຍສິດທິເດັກ ແມ່ນໄດ້ຈັດປະຊຸມເປັນເວລາໜຶ່ງອາທິດ ເຊິ່ງເປັນການກະກຽມຫົວເລື່ອງແລະຄຳຖາມຕ່າງໆທີ່ກ່ຽວຂ້ອງກັບບົດລາຍງານທີ່ໄດ້ຮັບນັ້ນໄວ້ເພື່ອດຳເນີນງານໃນ ຂັ້ນຕໍ່ໄປ. ຄະນະກຳມາທິການສິດທິມະນຸດຈະມອບພາລະກິດຂ້າງເທິງນີ້ໃຫ້ແກ່ໜ່ວຍງານທົບທວນບົດລາຍງານ[15] ທີ່ໄດ້ດຳເນີນງານໃນຂັ້ນຕອນກະກຽມທີ່ຜ່ານມານັ້ນເພື່ອດຳເນີນງານທົບທວນບົດລາຍງານຂອງປະເທດພາຄີຕໍ່ໄປ.

ບັນດາຄະນະກຳມະທິການທີ່ກ່າວມາຂ້າງເທິງນັ້ນແມ່ນຈະໄດ້ມີການແຕ່ງຕັ້ງສະມາຊິກຜູ້ໃດໜຶ່ງຂອງຕົນເປັນຜູ້ນຳພາທົບທວນບົດລາຍງານເພື່ອສອບຖາມຄວາມເປັນຈິງກັບປະເທດພາຄີ.

### ທີ່ມາຂອງຂໍ້ມູນຈາກແຫຼ່ງອື່ນ

ອີງຕາມບົດລາຍງານຂອງປະເທດພາຄີ

ອົງກອນສິດທິມະນຸດແມ່ນສາມາດຮັບເອົາຂໍ້ມູນການລາຍງານກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາຈາກພາກສ່ວນ ອື່ນຄື: ຈາກອົງກອນຕ່າງໆຂອງ ສປຊ, ບັນດາອົງກອນລະຫວ່າງປະເທດທີ່ກ່ຽວກັບໂຄງການ ແລະ ກອງທຶນອື່ນໆ, ສະຖາບັນສິດທິມະນຸດແຫ່ງຊາດ, ໜ່ວຍງານພາກປະຊາສັງຄົມ, ອົງການ NGOs ໃດໜຶ່ງ (ທັງພາຍໃນ ແລະ ສາກົນ), ແລະ ສະຖາບັນການສຶກສາຕ່າງໆ.

[15] ໜ່ວຍງານທົບທວນບົດລາຍງານຂອງປະເທດພາຄີແມ່ນປະກອບດ້ວຍຜູ້ນຳພາບົດລາຍງານຄົນໜຶ່ງ ແລະ ສະມາຊິກທີມງານອີກປະມານ 5 ຫາ 6 ທ່ານທີ່ຖືກແຕ່ງຕັ້ງມາຈາກປະທານຂອງແຕ່ລະຄະນະກຳມາທິການ.

**ການພິຈາລະນາບົດລາຍງານຂອງປະເທດພາຄີ**

ໃນຂະບວນການດຳເນີນງານທົບທວນບົດລາຍງານ, ບັນດາປະເທດພາຄີຕ່າງໆແມ່ນໄດ້ຖືກເຊີນເຂົ້າຮ່ວມເພື່ອເພື່ອໃຫ້ຂໍ້ມູນ ເພີ່ມເຕີມ ແລະ ຕອບຄຳສອບຖາມຕ່າງໆ. ອີງຕາມຂໍ້ມູນທີ່ມີ ຄະນະກຳມາທິການແມ່ນໄດ້ດຳເນີນການທົບທວນບົດລາຍງານດັ່ງກ່າວຮ່ວມກັບຕົວແທນຂອງປະເທດພາຄີ. ເຫດທີ່ເຮັດວຽກທົບທວນຮ່ວມກັນນີ້ກໍ່ແມ່ນເພື່ອຊ່ວຍໃຫ້ລັດທະບານປະເທດພາຄີນັ້ນໄດ້ເອົາບັນຫາຕ່າງໆທີ່ພົບພໍ້ໄປນຳໃຊ້ໃນການຈັດຕັ້ງປະຕິບັດສົນທິສັນຍາໃຫ້ມີປະສິດທິພາບ ແລະ ສົມບູນເທົ່າມີສາມາດເຮັດໄດ້. ຄະນະກຳມາທິການບໍ່ແມ່ນອົງກອນທາງຕຸລາການ, ພວກເຂົາພຽງເປັນອົງກອນທີ່ໃຫ້ຄຳແນະນຳ, ຊຸກຍູ້, ແລະ ກວດສອບການຈັດຕັ້ງປະຕິບັດສົນທິສັນຍາຂອງປະເທດພາຄີຂອງສົນທິສັນຍາເທົ່ານັ້ນ.

ຂໍ້ມູນອັບເດດກ່ຽວກັບການດຳເນີນງານທົບທວນຂອງຄະນະກຳມາທິການສິດທິມະນຸດ ແລະ ຕາຕະລາງເຂົ້າຮ່ວມຂອງປະເທດພາຄີແມ່ນສາມາດເອົາໄດ້ທີ່ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່.

## ສະຫລຸບຂໍ້ສັງເກດ ແລະ ໃຫ້ຄຳແນະນຳ

ອີງຕາມການພົບປະສົນທະນາກັບປະເທດພາຄີ ແລະ ບັນດາຂໍ້ມູນທີ່ມີ, ຄະນະກຳມາທິການສິດທິມະນຸດແມ່ນຈະໄດ້ຮັບຮອງເອົາມາດຕະການທີ່ຮັບຮູ້ກັນໃນນາມວ່າບົດສະຫລຸບການສັງເກດການ.[16] ໃນບົດສະຫລຸບນີ້ແມ່ນໄດ້ລວບລວມເອົາທັງບັນຫາຈຸດອ່ອນທີ່ປະເທດພາຄີຕ້ອງໄດ້ນຳໄປແກ້ໄຂ ແລະ ຈຸດດີທີ່ໄດ້ດຳເນີນງານຈັດຕັ້ງປະຕິບັດມາແລ້ວ. ບາດກ້າວທີ່ສຳຄັນອີກອັນໜຶ່ງກໍ່ຄືວ່າປະເທດພາຄີຕ້ອງໄດ້ລົງບົດລາຍງານທີ່ກ່ຽວກັບການໄດ້ນຳເອົາບັນດາຄຳແນະນຳ ແລະ ຫຼັກການຕ່າງໆຈາກການທົບທວນຄັ້ງທີ່ຜ່ານມາໄປຈັດຕັ້ງປະຕິບັດແນວໃດແດ່ແລ້ວເພື່ອໃຫ້ທາງຄະນະກຳມາທິການສິດທິມະນຸດໄດ້ຮັບຊາບ.

## ການຕິດຕາມການປະຕິບັດຕາມຄຳແນະນຳ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຕາມຄຳແນະນຳໄດ້ຜົນ ທາງຄະນະກຳມາທິການສິດທິມະນຸດແມ່ນໄດ້ແນະນຳບັນດາຂັ້ນຕອນທີ່ຄວນນຳໄປໃຊ້ໃຫ້ແກ່ປະເທດພາຄີ. ໃນບາງຄຳແນະນຳຂອງຄະນະກຳມາທິການທີ່ມີໃນບົດສະຫລຸບການທົບທວນກໍ່ແມ່ນໄດ້ຮຽກຮ້ອງໃຫ້ປະເທດພາຄີຕ້ອງໄດ້ສົ່ງບົດລາຍງານທີ່ກ່ຽວກັບການນຳເອົາບັນດາຄຳແນະນຳສະເພາະ ຫຼື ພິເສດໃດໜຶ່ງໄປຈັດຕັ້ງປະຕິບັດແນວໃດແດ່ແລ້ວໃຫ້ຫົວໜ້າທີມງານທົບທວນບົດຕາມເວລາທີ່ກຳນົດໃຫ້ ແລະ ຫົວໜ້າທົບທວນນີ້ກໍ່ຈະລາຍງານຕໍ່ໃຫ້ຄະນະກຳມາທິການໄດ້ຮັບຊາບຕໍ່ໄປ.

ບາງສະມາຊິກຂອງຄະນະກຳມາທິການກໍ່ຈະໄດ້ລົງໄປຢ້ຽມຢາມປະເທດພາຄີຕາມການຖືກເຊີນເພື່ອລົງໄປກວດສອບເບິ່ງສະພາບການຈັດຕັ້ງປະຕິບັດສົນທິສັນຍາຕາມການລາຍງານ ແລະ ຕາມຄຳແນະນຳຂອງຄະນະກຳມາທິການ.

---

[16] ຫຼື ເອີ້ນວ່າ "ຄຳຄິດເຫັນຈາກການທົບທວນ" ໂດຍອີງຕາມການໃຊ້ຄຳເວົ້າຂອງແຕ່ລະຄະນະກຳມາທິການ

IV

## 3. ການພິຈາລະນາຄຳຮ້ອງທຸກຂອງບຸກຄົນກ່ຽວກັບການຖືກລະເມີດສິດຈາກປະເທດພາຄີ

ຄະນະກຳມາທິການສິດທິມະນຸດທັງ 7 ຄະນະອາດຈະດຳເນີນການພິຈາລະນາເບິ່ງບົດລາຍງານຖ້າຫາກມັນມີເຫດຜົນພຽງພໍທີ່ໄດ້ມາຈາກບຸກຄົນທີ່ຮ້ອງທຸກວ່າສິດທິຂອງຕົນໄດ້ຖືກລະເມີດຈາກປະເທດພາຄີ. ຄະນະກຳມາທິການທີ່ວ່ານີ້ປະ ກອບມີ: ຄະນະກຳມາທິການເພື່ອຕ້ານການຈຳແນກເຊື້ອຊາດ, ຄະນະກຳມາທິການສິດທິມະນຸດ, ຄະນະກຳມາທິການ ຕ້ານການທໍລະມານ, ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ຍິງ, ຄະນະກຳມາທິການເພື່ອສິດທິຂອງແຮງງານ ຕ່າງດ້າວ, ຄະນະກຳມາທິການເພື່ອສິດທິຂອງຄົນພິການ, ແລະ ຄະນະກຳມາທິການເພື່ອຕ້ານການຖືກບັງຄັບໃຫ້ຫາຍ ສາບສູນ. ມາຮອດປີ 2008 ຄະນະກຳມາທິການວ່າດ້ວຍສິດທິຂອງແຮງງານຕ່າງດ້າວນັ້ນແມ່ນຍັງບໍ່ທັນໄດ້ຖືກຮັບ ຮອງເທື່ອ ແລະ ຄະນະກຳມາທິການຕ້ານການຖືກບັງຄັບໃຫ້ຫາຍສາບສູນນັ້ນກໍ່ຍັງບໍ່ທັນໄດ້ຮັບການສ້າງຕັ້ງເທື່ອ. ເພື່ອເປັນການຈັດຕັ້ງປະຕິບັດສິ່ງທີ່ຂາດຫາຍນີ້ ອານຸສັນຍາວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳກໍ່ ໄດ້ໃຫ້ບຸກຄົນທຳການຍື່ນຄຳຮ້ອງທຸກກ່ຽວກັບບັນຫາດັ່ງກ່າວໄດ້.

ຄະນະກຳມາທິການສິດທິມະນຸດແມ່ນບໍ່ສາມາດພິຈາລະນາບັນດາຄຳຮ້ອງທຸກຕ່າງໆໄດ້ຖ້າຫາກວ່າປະເທດພາຄີທີ່ກ່ຽວຂ້ອງນັ້ນບໍ່ໄດ້ຮັບຮອງເຂດອຳນາດນຳຄະນະກຳມາທິການຕາມເງື່ອນໄຂມາດຕາທີ່ກ່ຽວຂ້ອງໃນສົນທິສັນຍາ ຫຼື ອານຸສັນຍາດັ່ງກ່າວ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຍື່ນຄຳຮ້ອງທຸກຂອງບຸກຄົນແມ່ນສາມາດເບິ່ງໄດ້ໃນບົດທີ VIII (ການຍື່ນຄຳຮ້ອງທຸກກ່ຽວກັບການລະເມີດສິດທິມະນຸດ) ໃນຄູ່ມືນີ້.

ລາຍລະອຽດກ່ຽວກັບການຍື່ນຄຳຮ້ອງທຸກຂອງບຸກຄົນໃຫ້ແກ່ອົງກອນສິດທິມະນຸດ (ຫຼືເອີ້ນກັນວ່າການຮ້ອງຟ້ອງ) ທີ່ກ່ຽວກັບບັນດາຄຳແນະນຳ ແລະ ຂັ້ນຕອນໃນການຍື່ນຄຳຮ້ອງທຸກແມ່ນສາມາດເບິ່ງໄດ້ທີ່ເວບໄຊ້ຂອງສຳນັກ ງານຂ້າຫລວງໃຫຍ່ວ່າດ້ວຍຂໍ້ມູນອົງກອນສິດທິມະນຸດ.

## 4. ຄຳຮ້ອງຟ້ອງ ແລະ ຂໍ້ພິພາກລະຫວ່າງລັດ

ໃນຫລາຍສົນທິສັນຍາແມ່ນອານຸຍາດໃຫ້ລັດພາຄີໃດໜຶ່ງໄດ້ມີສິດຮ້ອງຟ້ອງລັດພາຄີອື່ນກ່ຽວກັບບັນຫາການລະເມີດ ສິດທິມະນຸດໄດ້. ມາຮອດປີ 2008 ຫຼັກການນີ້ຍັງບໍ່ໄດ້ຖືກນຳໃຊ້ເທື່ອ.

### 5. ການສອບຖາມ

ສີ່ຄະນະກຳມາທິການ-ຄະນະກຳມາທິການຕ້ານການທໍລະມານ, ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ ຍິງ, ຄະນະກຳມາທິການເພື່ອສິດຂອງຄົນພິການ, ແລະ ຄະນະກຳມາທິການຕ້ານການຖືກບັງຄັບໃຫ້ຫາຍສາບສູນ (ຖ້າໄດ້ຖືກສ້າງຕັ້ງ)-ອາດຈະເລີ່ມດຳເນີນການສອບສວນ ໃນກໍລະນີທີ່ໄດ້ຮັບຂໍ້ມູນກ່ຽວກັບການລະເມີດສົນທິສັນຍາ ທີ່ຮ້າຍແຮງ. ການສອບສວນອາດຈະບໍ່ໄດ້ດຳເນີນການກັບລັດທີ່ບໍ່ໄດ້ຮັບຮອງເອົາຂະບວນການດັ່ງກ່າວນີ້, ແລະ

ຄະນະກຳມາທິການກໍ່ບໍ່ໄດ້ມີສິດທີ່ທີ່ຈະດຳເນີນການໃດໆໃນການສອບສວນຫາຄວາມຈິງທີ່ໄດ້ຮັບຈາກການລາຍງານ.[17]

ໃນກໍລະນີທີ່ໄດ້ຮັບອານຸຍາດຈາກລັດພາຄີທີ່ກ່ຽວຂ້ອງ, ຂະບານການດຳເນີນການສອບສວນອາດຈະເລີ່ມຕົ້ນດ້ວຍການລົງ ຢ້ຽມຢາມພື້ນທີ່. ພາຍຫລັງທີ່ໄດ້ພົບເຫັນສິ່ງຕ່າງໆ, ທາງຄະນະກຳມາທິການກໍ່ຈະໄດ້ສົ່ງສິ່ງທີ່ໄດ້ນັ້ນໃຫ້ກັບລັດພາຄີທີ່ກ່ຽວ ຂ້ອງທີ່ລວມມີທັງຄຳຄິດເຫັນ ແລະ ຄະແນະນຳຕ່າງໆ.

ການກວດສອບນັ້ນແມ່ນປິດລັບ ແລະ ລັດທີ່ກ່ຽວຂ້ອງຕ້ອງໃຫ້ການຮ່ວມມືເປັນຢ່າງດີໃນຂະບວນການດັ່ງກ່າວ.

ຂໍ້ມູນເພີ່ມສາມາດເອົາໄດ້ທີ່ເອກະສານຂໍ້ມູນທົ່ວໄປເລກທີ 30 ຂອງລະບົບສົນທິສັນຍາສິດທິມະນຸດອົງການ ສປຊ

6. **ຂະບວນການຮີບດ່ວນ ແລະ ແຈ້ງເຕືອນ**

ຕັ້ງແຕ່ປີ 1993, ຄະນະກຳມາທິການວ່າດ້ວຍການຕ້ານການຈໍາແນກເຊື້ອຊາດກໍ່ໄດ້ພັດທະນາຂະບວນການແຈ້ງເຕືອນ ແລະ ການດຳເນີນການຮີບດ່ວນ. [18] ຂະບວນການແຈ້ງເຕືອນມີຈຸປະສົງເພື່ອຕ້ານບໍ່ໃຫ້ບັນຫາທີ່ມີຢູ່ນັ້ນລຸກລາມໄປແຮງ ກ່ວາເກົ່າ, ຫຼື ບໍ່ໃຫ້ເກີດຊ້ຳໆອີກ. ຂະບວນດຳເນີນການແບບຮີບດ່ວນແມ່ນມີຈຸດປະສົງແກ້ໄຂກັບບັນຫາຢ່າງວ່ອງໄວ ເພື່ອຕ້ານ ຫຼື ຫລຸດຜ່ອນຂະໜາດ ຫຼື ຈະນວນການລະເມີດສົນທິສັນຍາວ່າດ້ວຍການຕ້ານການຈຳແນກເຊື້ອຊາດ. ໃນຕົວຈິງແລ້ວ ຂະບວນການທີ່ວ່ານີ້ແມ່ນໄດ້ຖືກນຳໃຊ້ມາປະຈຳ. ການລິເລີ່ມນຳໃຊ້ຂະບວນການນັ້ນແມ່ນມາຈາກຄະນະ ກຳມາທິການເອງ ຫຼື ມາຈາກພາກສ່ວນອື່ນໆເຊັ່ນ: ພາກປະຊາສັງຄົມ, ກຸ່ມຄົນພື້ນເມືອງອື່ນໆ.

# 7. ຄຳເຫັນທົ່ວໄປ

ແຕ່ລະອົງກອນສິດທິມະນຸດແມ່ນໄດ້ຈັດພິມເລື່ອງການໃຫ້ຄວາມໝາຍບັນດາຫລັກການຂອງສົນທິສັນຍາທີ່ຜ່ານການທົບທວນໄວ້ໃນຮູບແບບຄຳ ແນະນຳທົ່ວໄປ (ຄະນະກຳມາທິການວ່າດ້ວຍການຕ້ານການຈຳແນກເຊື້ອຊາດ ແລະ ຄະນະກຳມາທິ ການວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງໃຊ້ຄຳສັບວ່າ "ຄຳແນະນຳທົ່ວໄປ".

ຄຳຄິດເຫັນທົ່ວໄປໄດ້ໃຫ້ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດສົນຍິສັນຍາ. ໃນຄຳແນະນຳແມ່ນມີຫລາຍຫົວຂໍ້ເຊິ່ງລວມ ມີຄຳອະທິບາຍທີ່ຈະແຈ້ງກ່ຽວກັບຂໍ້ກຳນົດຕ່າງໆທີ່ສຳຄັນຈົນເຖິງບັນດາຂໍ້ມູນທີ່ກ່ຽວຂ້ອງກັບມາດຕາສະເພາະໃດໜຶ່ງຂອງສົນທິສັນຍາທີ່ລັດພາ ຄີຄວນເອົາເຂົ້າໃນບົດລາຍງານຂອງຕົນ.

---

[17] ໃນເວລາທີ່ໃຫ້ສັດຕະຍາບັນ ຫຼື ຂໍເຂົ້າຮ່ວມໃນສົນທິສັນຍາ ລັດພາຄີຂອງສົນທິສັນຍາວ່າດ້ວຍການຕ້ານການທໍລະມານອາດຈະເລືອກບໍ່ປະຕິບັດ ຂໍ້ກຳນົດໃດໜຶ່ງຕາມມາດຕາທີ 28; ລັດພາຄີຂອງອານຸສັນຍາວ່າດ້ວຍການລົບລ້າງການເລືອກປະຕິບັດຕໍ່ແມ່ຍິງອາດຈະຂໍຍົກເວັ້ນສິດຂອງຄະນະ ກຳມາທິການດ້ວຍການແຈ້ງໂດຍອີງຕາມມາດຕາທີ 10. ລັດພາຄີທີ່ເລືອກບໍ່ຮັບເງື່ອນໄຂຂ້າງເທິງນີ້ແມ່ນສາມາດຮັບເອົາເງື່ອນໄຂທີ່ວ່ານີ້ຕາມ ພາຍຫຼັງໄດ້.

[18] ໃຫ້ເບິ່ງເອກະສານຊ້ອນທ້າຍ A/48/18

ຄຳຄິດເຫັນ ແລະ ຄຳແນະນຳຕ່າງໆທີ່ຖືກຮັບຮອງຈາກຄະນະກຳມາທິການສິດທິມະນຸດແມ່ນໄດ້ຮັບການເກັບລວບລວມໄວ້ໃນແຕ່ລະປີ. ເພື່ອຄົ້ນຫາບັນດາເອກະສານ ແລະ ຂໍ້ມູນທີ່ກ່ຽວກັບວາລະຂອງການດຳເນີນງານທີ່ຈະມາເຖິງນັ້ນແມ່ນສາມາດເບິ່ງໄດ້ທີ່ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ວ່າດ້ວຍຂໍ້ມູນອົງກອນສິດທິມະນຸດ.



**8. ວາລະຂອງການສົນທະນາທົ່ວໄປ/ການສົນທະນາທີ່ສຳຄັນ**

ຫລາຍອົງກອນສິດທິມະນຸດກໍ່ໄດ້ຈັດວັນເລວາການສົນທະນາກ່ຽວກັບຫົວຂໍ້ ຫຼື ບັນຫາທີ່ໜ້າເປັນຫວ່າງຫລາຍຢ່າງ. ກາສົນທະນາທີ່ສຳຄັນນີ້ແມ່ນເປີດໃຫ້ສາທາລະນະເຂົ້າຮ່ວມໄດ້ເຊັ່ນ: ຄູ່ຮ່ວມງານຂອງ ສປຊ, ຄະນະຜູ້ແທນຂອງ ລັດພາຄີ, ໜ່ວຍງານພາກປະຊາສັງຄົມ, ໂດຍສະເພາະແມ່ນອົງການ NGOs, ສະຖາບັນການສຶກສາຕ່າງໆ, ຜູ້ຊ່ຽວຊານ ແລະ ສະມາຄົມວິຊາຊີບຕ່າງໆ. ການມີສ່ວນຮ່ວມຂອງພາກສ່ວນເຫລົ່ານີ້ແມ່ນເປັນການຊ່ວຍໃນການ ຮ່າງຄຳຄິດເຫັນໃໝ່ໆໃຫ້ແກ່ຄະນະກຳມາທິການສິດທິມະນຸດ. ການມີສ່ວນຮ່ວມຍັງເປັນການສະແດງໃຫ້ລັດພາຄີ ແລະ ອົງການທີ່ກ່ຽວຂ້ອງໄດ້ຮັບຮູ້ເຖິງຄວາມຈຳເປັນຂອງສົນທິສັນຍານຳອີກ.

**9. ກອງປະຊຸມປະຈຳປີຂອງປະທານອົງກອນສິດທິມະນຸດ ແລະ ລະຫວ່າງບັນດາຄະນະກຳມາທິການ**

ກອງປະຊຸມປະຈຳປີຂອງປະທານແມ່ນ ຈັດຢູ່ທີ່ນະຄອນເຈນນີວາເພື່ອເປີດໂອກາດໃຫ້ບັນດາອົງກອນສິດທິມະນຸດໄດ້ພົບປະສົນທະນາກັນ ແລະ ຊອກຫາວິທີທາງໃນການເຮັດໃຫ້ສົນທິສັນຍາຕ່າງໆໃຫ້ໄດ້ຮັບການປະຕິບັດຢ່າງມີປະສິດ ທິພາບ. ບັນຫາທີ່ຍົກມາໃນຫ້ອງປະຊຸມແມ່ນລວມມີເລື່ອງການພັດທະນາ ແລະ ການປັບປຸງຂະບວນການລາຍງານ ສິດທິມະນຸດ, ການສ້າງຄວາມສາມັກຄີໃນຮູບແບບການດຳເນີນງານຂອງຄະນະກຳມາທິການ, ຕິດຕາມກອງປະຊຸມ ສາກົນ ແລະ ຕິດຕາມບັນຫາທາງດ້ານການເງິນ. ການໃຫ້ຄຳປຶກສາແບບບໍ່ເປັນທາງການແກ່ລັດພາຄີ, ຄູ່ຮ່ວມງານ ຂອງ ສປຊ ແລະ NGOs ແມ່ນເປັນໜຶ່ງໃນຫົວເລື່ອງຂໍ້ທີ່ປຶກສາໃນທີ່ປະຊຸມຂອງປະທານ.

ກອງປະຊຸມລະຫວ່າງຄະນະກຳມາທິການສິດທິມະນຸດຈະລວມມີບັນດາປະທານຂອງແຕ່ລະອົງກອນສິດທິມະນຸດ ແລະ ອີກສອງທ່ານທີ່ມາຈາກແຕ່ລະຄະນະກຳມາທິການ. ກອງປະຊຸມດັ່ງກ່າວແມ່ນໄດ້ມີການປຶກສາຫາລືກັນຢ່າງລະອຽດກ່ຽວກັບບັນດາຄຳແນະນຳຕ່າງໆໂດຍສະເພາະແມ່ນດ້ານວິທີການການເຮັດວຽກ ແລະ ບັນຫາອື່ນໆທີ່ບໍ່ໄດ້ປຶກສາໃນທີ່ປະຊຸມຂອງປະທານ.

ຂໍ້ມູນເພີ່ມເຕີມແມ່ນສາມາດເອົາໄດ້ໃນເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່

## 10. ການປະຕິຮູບອົງກອນສິດທິມະນຸດ

ຂະບວນການ ແລະ ວິທີການດຳເນີນງານຂອງອົງກອນສິດທິມະນຸດແມ່ນກຳລັງຢູ່ໃນການສົນທະນາກ່ຽວກັບການປະຕິ ຮູບທີ່ອົງການ ສປຊ ກຳລັງໄດ້ພິຈາລະນາຢູ່.[19] ການປະຕິຮູບອົງກອນສິດທິມະນຸດນີ້ແມ່ນແນໃສ່ດ້ານການປະສານງານ ແລະ ຄວາມສາມະຄີກ່ຽວກັບວິທີການຂອງການເຮັດວຽກ, ໃນນັ້ນລວມມີການຮັບຮອງ "ຍຸດທະວິທີ" ແລະ ການປັບປຸງການ ລາຍງານຂອງລັດພາຄີໂດຍໃຫ້ນຳໃຊ້ເອກະສານທີ່ສຳຄັນທີ່ກຳນົດໄວ້ແບບດຽວກັນ ແລະ ເນັ້ນກ່ຽວກັບ ການລາຍງານສົນທິສັນຍາສະເພາະໃດໜຶ່ງ.[20]

ນອກຈາກນີ້, ອົງກອນສິດທິມະນຸດແມ່ນກຳລັງດຳເນີນງານເພື່ອສ້າງໃຫ້ການປະສານງານມີປະສິດທິພາບລະຫວ່າງຕົວອົງ ກອນເອງ ແລະ ສະພາສິດທິມະນຸດ, ໂດຍສະເພາະແມ່ນດ້ານຂະບວນການທົບທວນສົນທິສັນຍາສາກົນເປັນໄລຍະໃນຮູບ ແບບໃໝ່, ແລະ ການພັດທະນາເພື່ອຮັກສາກົນໄກການປະສານງານກັບໜ່ວຍງານທີ່ໄດ້ຮັບພາລະໜ້າທີ່ໃນຂະບວນ ການດຳເນີນງານພິເສດ.[21] ໃນຂະບວນການສ້າງບັນດາອົງກອນສິດທິມະນຸດ ແລະ ກົນໄກຕ່າງໆ, ມີຫລາຍຢ່າງທີ່ກ່ຽວກັບ ໂຄງສ້າງແມ່ນຕ້ອງໄດ້ຮັບການປະຕິຮູບໂດຍສະເພາະແມ່ນເລື່ອງການລວມອົງກອນສິດທິມະນຸດເຂົ້ານຳກັນ, ຕາມການສະເໜີຂອງສຳນັກງານຂ້າຫລວງໃຫຍ່ໃນປີ 2005 ໂດຍທ່ານນາງ Louise Arbour.

---

[19] ຕາມບົດລາຍງານປີ 2002 ຂອງ ສປຊ, "ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການ ສປຊ: ລະບຽບການເພື່ອການປ່ຽນແປງໃນອານາຄົດ" (A/57/387 ແລະ Corr.1), ແລະ ການໂອ້ລົມຂອງ ປະທານເລຂາທິການໃຫຍ່ ສປຊ ທ່ານ ບານກີມູນທີ່ແນະນຳໃຫ້ອົງກອນສິດທິມະ ນຸດຕ່າງໆໃຫ້ມີການຮ່ວມມືກັນຢ່າງແໜ້ນແຟ້ນເພື່ອຄວາມສຳເລັດໃນວຽກງານ. ໃນປີ 2005, ບົດລາຍງານຂອງ ສປຊ "ເສລີພາບທີ່ກ້ວາງໃຫຍ່: " ເພື່ອການພັດທະນາ, ຄວາມໝັ້ນຄົງ ແລະ ສິດທິມະນຸດໝົດທຸກຄົນ", ທ່ານ ເລຂາທິການໃຫຍ່ຮຽກຮ້ອງໃຫ້ "ລວບລວມບັນດາລະບຽບການທີ່ ກ່ຽວກັບການເຮັດບົດລາຍງານໃຫ້ອົງກອນສິດທິມະນຸດໃຫ້ສຳເລັດ ແລະ ເລີ່ມຈັດຕັ້ງປະຕິເພື່ອວ່າອົງກອນສິດທິມະນຸດຈະໄດ້ ເຮັດໜ້າທີ່ຂອງຕົນເປັນລະບົບແບບໜຶ່ງດຽວ" (A/59/2005, ວັກ. 147).

[20] ໃຫ້ເບິ່ງ "ລະບຽບການຄວາມສາມະຄີກ່ຽວກັບບົດລາຍງານພາຍໃຕ້ສົນທິສັນຍາສິດທິມະນຸດຕ່າງໆ, ເຊິ່ງລວມມີລະບຽບການທີ່ມີ ໃນເອກະສານສຳຄັນທົ່ວໄປ ແລະ ເອກະສານສະເພາະຂອງສົນທິສັນຍາ" (HRI/MC/2005/3).

[21] ໃຫ້ເບິ່ງ "ການຈັດຕັ້ງປະຕິບັດທີ່ມີປະສິດທິພາບຂອງເຄື່ອງມືສາກົນຕ່າງໆທີ່ກ່ຽວກັບສິດທິມະນຸດ, ໂດຍສະເພາະແມ່ນພັນທະ ການລາຍງານພາຍໃຕ້ສົນທິສັນຍາສິດທິມະນຸດສາກົນ" (A/62/224).

### C. ວິທີການເຂົ້າເຖິງ ແລະ ເຮັດວຽກຮ່ວກັບອົງກອນສິດທິມະນຸດ

ການໄດ້ເຮັດວຽກຮ່ວມກັນກັບອົງກອນສິດທິມະນຸດແມ່ນຈະເປັນບາດກ້າວທີ່ດີໃຫ້ແກ່ພາກສ່ວນປະຊາສັງຄົມໃນການພັດທະນາວຽກງານສິດທິມະນຸດ ແລະ ພັດທະນາລະບຽບການຂອງສິດທິມະນຸດ. ໃນລະດັບຊາດໜ່ວຍງານພາກປະຊາສັງຄົມແມ່ນມີບົດບາດສຳຄັນໃນການກວດສອບ, ແລະ ຕິດຕາມກິດຈະກຳການສົ່ງເສີມ ແລະ ວຽກງານດ້ານຕ່າງໆຂອງອົງ ກອນສິດທິມະນຸດ. ວຽກງານຂອງອົງກອນສິດທິມະນຸດແມ່ນເປັນປະໂຫຍດຫລາຍສຳລັບໜ່ວຍງານພາກປະຊາສັງຄົມໃນດ້ານການມີສ່ວນຮ່ວມໃນກິດຈະກຳຕ່າງໆໂດຍສະເພາະແມ່ນກ່ຽວກັບວົງຈອນການລາຍງານ, ຂະບວນການຍື່ນຄຳ ຮ້ອງທຸກ, ການສອບສວນ ແລະ ການແຈ້ງເຕືອນແບບຮີບດ່ວນ.

ອົງການ NGOs ແມ່ນເປັນອົງການພາກປະຊາສັງຄົມທີ່ສຳຄັນມາແຕ່ອາດີດທີ່ໄດ້ຮ່ວມມືກັບອົງກອນສິດທິມະນຸດ, ໂດຍສະເພາະແມ່ນໃນພາລະກິດສຳຄັນຂອງອົງກອນ. ດ້ານພາກສ່ວນປະຊາສັງຄົມອື່ນໆກໍ່ແມ່ນໄດ້ໃຫ້ການຮ່ວມ ມືກັບອົງກອນສິດທິມະນຸດເປັນຢ່າງດີໂດຍສະເພາະໃນດ້ານຂະບວນການເຮັດບົດລາຍງານຕ່າງໆ, ພາກສ່ວນທີ່ວ່ານີ້ມີ: ຜູ້ຊ່ຽວຊານ, ນັກເຄື່ອນໄຫວສິດທິມະນຸດ, ຜູ້ແທນຂອງສະຖາບັນການສຶກສາ ແລະ ການຄົ້ນຄົ້ວຕ່າງໆ, ແລະ ສະມາຊິກຂອງສະມາຄົມວິຊາຊີບອື່ນໆ. ການມີສ່ວນຮ່ວມນັ້ນສ່ວນຫລາຍແລ້ວແມ່ນການສົ່ງຂໍ້ມູນໃຫ້ແກ່ຄະນະ ກຳມາທິການສິດທິມະນຸດເຊິ່ງຂໍ້ມູນສ່ວນໃຫຍ່ແມ່ນມາຈາກ ອົງການ NGOs ທີ່ມີປະສົບການ ແລະ ຫ້າວຫັນໃນລະບົບການລາຍງານ.

ສົນທິສັນຍາວ່າດ້ວຍສິດທິເດັກ, ວ່າດ້ວຍການປົກປ້ອງແຮງງານຕ່າງດ້າວ ແລະ ຄອບຄົວຂອງເຂົາເຈົ້າ, ແລະ ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການແມ່ນໄດ້ໃຫ້ການສັງເກດການເພື່ອຊອກຫາອົງກອນທີ່ຈະມາດຳເນີນງານຕາມພາລະບົດບາດຂອງສົນທິສັນຍາຂອງຕົນ, ອົງກອນທີ່ວ່ານີ້ແມ່ນແມ່ນຖືກຕີຄວາມໝາຍວ່າຈະເປັນອົງການ NGOs ໂດຍອີງຕາມສົນທິສັນຍາສອງສະບັບທຳອິດ. ນອກຈາກນີ້, ຄະນະກຳມາທິການວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ, ແລະ ວັດທະນາທຳ ແລະ ຄະນະກຳມາທິການວ່າດ້ວຍສິດທິເດັກຍັງໄດ້ຮັບຮອງລະບຽບການກ່ຽວກັບການມີສ່ວນຮ່ວມ ຂອງພາກປະຊາສັງຄົມ (ໃນກໍລະນີນີ້ແມ່ນໄດ້ເນັ້ນກ່ຽວກັບອົງການ NGOs). [22]

ຮູບແບບການມີສ່ວນຮ່ວມຂອງພາກປະຊາສັງຄົມກັບອົງກອນສິດທິມະນຸດແມ່ນມີຄວາມແຕກຕ່າງກັນໄປໃນແຕ່ລະອົງ ກອນ. ລະບຽບການນີ້ແມ່ນມີຢູ່ໃນເອກະສານຊ້ອນທ້າຍໃນຄູ່ມືບົດນີ້.

1. ການສົ່ງເສີມໃຫ້ຮັບຮອງກົນໄກສິດທິມະນຸດສາກົນໃໝ່ ແລະ ການໃຫ້ສັດຕະຍາບັນ ຫລື ເຂົ້າຮ່ວມໃນສົນທິສັນຍາ

ພາກປະຊາສັງຄົມແມ່ນສາມາດສະແດງບົດບາດທີ່ສຳຄັນໃນການພັດທະນາ ແລະ ຮັບຮອງເອົາກົນໄກສິດທິມະນຸດອັນ ໃໝ່. ການສະແດງບົດບາດນີ້ມັນສະແດງອອກໃນການຊຸກຍູ້ໃຫ້ມີການພັດທະນາສົນທິສັນຍາໃໝ່ ແລະ ສົ່ງເສີມໃຫ້ລັດພາຄີໃຫ້ການຮັບຮອງເອົາສົນທິສັນຍາເຫລົ່ານັ້ນ, ພາກສ່ວນປະຊາສັງຄົມຍັງສາມາດຊ່ວຍກະຕຸ້ນໃຫ້ມີກົນໄກສາກົນແບບ ໃໝ່ໆ ແລະ ມີການປົກປ້ອງສິດທິມະນຸດໄປນຳ.

[22] ໃຫ້ເບິ່ງ “ການມີສ່ວນຮ່ວມຂອງ NGOs ໃນກິດຈະກຳຕ່າງໆຂອງຄະນະກຳມາທິການວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ” (E/C.12/2000/6) ແລະ ລະບຽບການໃນການມີສ່ວນຮ່ວມຂອງຄູ່ຮ່ວມງານ (NGOs ແລະ ຜູ້ຊ່ຽວຊານ) ໃນໜ່ວຍງານກະກຽມຂອງຄະນະກຳມາທິການວ່າດ້ວຍສິດທິເດັກ (CRC/C/90, annex VIII).

### ບົດບາດຂອງໜ່ວຍງານພາກປະຊາສັງຄົມໃນການພັດທະນາມາດຕະຖານສິດທິມະນຸດແບບໃໝ່

ສົນທິສັຍາວ່າດ້ວຍສິດທິຂອງຄົນພິການ ແລະ ອານຸສັນ ຍາທີ່ກ່ຽວຂ້ອງ.

ໃນເດືອນທັນວາ 2006 ສະມັດຊາໃຫຍ່ໄດ້ຮັບຮອງເອົາສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ ແລະ ອານຸສັນຍາທີ່ກ່ຽວຂ້ອງ. ພາກປະຊາສັງຄົມໂດຍສະເພາະແມ່ນຄົນພິ ການ ແລະ ອົງການຕົວແທນ ຂອງເຂົາເຈົ້າແມ່ນໄດ້ສະແດງບົດ ບາດສຳຄັນໃນທຸກຂັ້ນຕອນເພື່ອພັກດັນໃຫ້ມີການຮັບຮອງເອົາສົນທິສັນຍາ ແລະ ອານຸສັນຍາຂ້າງເທິງນີ້. ຕົວແທນຈາກພາກປະຊາສັງຄົມແມ່ນມີສ່ວນໃນການເຈລະຈາ

ຊຸກຍູ້ປະເທດຕ່າງໆໃຫ້ສັດຕະຍາບັນສົນທິສັນຍາ. ການເຈລະຈາກ່ຽວກັບສົນທິສັນຍາຄົນ ພິການນີ້ແມ່ນຕັ້ງແຕ່ປີ 2002-2006, ເຊິ່ງມັນເປັນສົນທິສັນຍາທີ່ໄດ້ມາຈາກການເຈລະຈາທີ່ໄວທີ່ສຸດ. ໃນ ຊ່ວງທີ່ມີການຮັບຮອງ, ປະທານຂ້າຫລວງໃຫຍ່ ທ່ານນາງ Louise Arbour ກໍ່ໄດ້ສັງເກດເຫັນວ່າການຮ່ວມ ມືລະຫວ່າງພາກສ່ວນລັດຖະບານ, ສປຊ, ພາກປະຊາສັງຄົມ, ແລະ ສະຖາບັນສິດທິມະນຸດແຫ່ງຊາດໃນການຮ່າງແມ່ນໄດ້ດີເກີນຄາດ,

ທ່ານນາງ Louise Arbour ກ່າວວ່າ: *ຂ້າພະເຈົ້າຢາກປະກອບສ່ວນໃຫ້ແກ່ຊຸມຊົນຄົນພິການທີ່ໄດ້ຮັບການສະໜັບສະໜູນຢ່າງເຂັ້ມແຂງໃນເວລານີ້. ບົດບາດຂອງພາກສ່ວນຕ່າງໆແມ່ນພົ້ນເດັ່ນ. ຍິ່ງ ໄປກ່ວານີ້ ສົນທິສັນຍາເພື່ອຄົນພິການແມ່ນບໍ່ມີເອກະສານໃດ ຫຼື ຖະແຫລງການໃດທີ່ຈະມາທຽບໄດ້ໃນຄວາມກ້າວໜ້າເຄື່ອນໄຫວເພື່ອຄົນພິການໃນທຸກຂອກທຸກມຸມ-ເພື່ອສ້າງ ຄວາມເທົ່າທຽມ ແລະ ນຳມາເຊິ່ງ ຄວາມຍຸດຕິທຳພາຍໃຕ້ລະບຽບກົດໝາຍທີ່ສ້າງໄວ້ນີ້.*

# ການເຮັດວຽກຮ່ວມກັບໂຄງ
# ການສິດທິມະນຸດແຫ່ງອົງການສະຫະປະຊາຊາດ

IV

## ສົນທິສັນຍາສາກົນວ່າດ້ວຍການປົກປ້ອງບຸກຄົນທີ່ຖືກບັງຄັບໃຫ້ຫາຍສາລສູນ

ໜ່ວຍງານພາກປະຊາສັງຄົມໂດຍສະເພາະແມ່ນສະມາຄົມຂອງຄອບຄົວຜູ້ທີ່ຫາຍສາບສູນແມ່ນມີຄວາມຫ້າວຫັນໃນການມີສ່ວນຮ່ວມໃນ ວຽກງານຂອງຄະນະກຳມາທິການສິດທິມະນຸດຊຸດທີ່ໄດ້ຮ່າງເນື້ອໃນ ສົນທິສັນຍາຜ່ານມາ. ທ່ານນາງ Marta Ocampo de Vásquez, ຜູ້ທີ່ເຄີຍມີລູກສາວ ແລ້ວຫາຍສາບສູນໄປໃນປະເທດ ອາເຈນຕິນາແມ່ນມາຮັບເປັນຕົວ ແທນໃຫ້ແກ່ສະຫະພັນຂອງສະມາ ຄົມຊາວອາເມລິກາເພື່ອຍາດພີ່ ນ້ອງຂອງຜູ້ທີ່ຖືກຫາຍສາບສູນ-ຖືກກັກຂັງ (FEDEFAM), ໄດ້ນຳ ພາດົນນະລົງໃຫ້ຢຸດຕິການບັງຄັບ ໃຫ້ຫາຍສາບສູນ ແລະ ຊຸກຍູ້ໃຫ້ ມີການຮັບຮອງເອົາກົນໄກສາ ກົນທີ່ຊ່ວຍແກ້ໄຂບັນຫາດັ່ງດັ່ງ ກ່າວທີ່ແກ່ຍາວມາເປັນເວລາ 30 ກ່ວາປີແລ້ວ.

ໃນທີ່ປະຊຸມທີ່ສຳຄັນຂອງສະພາສິດທິມະນຸດໃນລະຫວ່າງວັນທີ 22 ມິຖຸນາ 2006 ກ່ອນທີ່ຈະມີການ ຮັບຮອງສົນທິສັນຍາທ່ານນາງ Ms. de Vásquez ໄດ້ເວົ້າ ວ່າ: ໃນເດືອນ ພຶດສະພາ 1997 ຂ້າພະເຈົ້າໄດ້ເຂົ້າຮ່ວມຂະບວນ ການເຄື່ອນໄຫວຂອງບັນດາຜູ້ເປັນແມ່ໃນເມືອງ Plaza de Maryo... ຮ່ວມກັບບັນດາແມ່ ຍິງອື່ນໆໃນຂະບວນການ ແລະ ນັ້ນກໍ່ເປັນບາດກ້າວທຳອິດທີ່ຂ້າພະເຈົ້າໄດ້ເລີ່ມຕົ້ນວຽກງານນີ້ມາ. ໃນຕອນນັ້ນຂ້າພະເຂົ້າໄດ້ເລີ່ມເຫັນວ່າການຄົ້ນຫາບໍ່ພຽງແຕ່ເພື່ອລູກ ສາວ ແລະ ລູກເຂີຍທີ່ຫາຍໄປ ເທົ່ານັ້ນ, ແຕ່ແມ່ນການຄົ້ນຫາທຸກ ຄົນທີ່ຫາຍໄປໃນປະເທດອາເຈນຕິ ນ້າ, ໃນເຂດອາເມລິກາລາຕິນ ແລະ ໃນທົ່ວໂລກ-ໃນປະຈຸບັນອີກ ດ້ວຍ. ຂ້າພະເຈົ້າເອງກໍ່ຢາກຮູ້ຄື ກັນວ່າພາຍຫລັງທີ່ຄົນທີ່ເຮົາຮັກໄດ້ຖືກກັກຂັງ ແລະ ຫາຍສາບສູນໄປ ພວກເຮົາແມ່ນມີຄວາມຮູ້ສຶກເຈັບ ປວດຄືກັນບໍ່ວ່າສິ່ງທີ່ເກີດຂຶ້ນນັ້ນແມ່ນບໍ່ບໍ່ສາມາດແກ້ໄຂໄດ້. ບໍ່ມີທາງເລືອກ ອື່ນ, ບໍ່ມີກົດໝາຍ ຫຼື ລະບົບຍຸດຕິທຳ ໃດທີ່ຈະເຂົ້າມາຊ່ວຍແກ້ໄຂບັນຫາ. ສຸດທ້າຍມັນກໍ່ເປັນຄວາມທຶດທູ່ຂອງ ພວກເຮົາທີ່ບໍ່ສາມາດຮຽກຮ້ອງການ ຊ່ວຍເຫຼືອຈາກສາກົນ. ສະນັ້ນເຫດຜົນ ທີ່ ພວກເຮົາຢູ່ນຳກັນບ່ອນນີ້ກໍ່ແມ່ນ ເພື່ອຮຽກຮ້ອງໃຫ້ທ່ານປະທານ ພ້ອມ ດ້ວຍ ແຂກຜູ້ມີກຽດຈາກສະພາສິດທິ ມະນຸດໃນທີ່ນີ້ຈົ່ງພ້ອມກັນຮັບຮອງເອົາສົນທິ ສັນຍາສະບັບດັ່ງກ່າວນີ້. ພວກເຮົາເອງ ໄດ້ເດີນທາງມາທົ່ວ ໂລກດ້ວຍຄວາມຫວັງທີ່ມີທັງດ້ານບວກ ແລະ ດ້ານລົບນຳກັນ, ແຕ່ມື້ນີ້ ພວກເຮົາແມ່ນມີໂອກາດທີ່ຈະສ້າງ ຄວາມເປັນຈິງໃຫ້ໂລກຂອງເຮົາວ່າຕໍ່ ໄປນີ້ຈະບໍ່ມີຜູ້ທີ່ຈະຖືກບັງຄັບໃຫ້ຫາຍ ສາບສູນໄປອີກແລ້ວ.

ຖ້າຫາກລັດໃດໜຶ່ງຍັງບໍ່ທັນໄດ້ໃຫ້ສັດຕະນາບັນ ຫຼື ເຂົ້າຮ່ວມສົນທິສັນຍາ ຫຼື ອານຸສັນຍາ, ໜ່ວຍງານພາກປະຊາສັງຄົມແມ່ນສາມາດພັກດັນໃຫ້ລັດຖະບານດັ່ງກ່າວມາເຂົ້າຮ່ວມດ້ວຍວິທີການປະສານງານກັບສະຖາບັນສິດທິມະນຸດແຫ່ງ ຊາດ ແລະ ໜ່ວຍງານສື່ ຫຼື ດ້ວຍວິທີສ້າງຄວາມຕື່ນຕົວໃຫ້ແກ່ສາທາລະນະໃຫ້ເຂົ້າໃຈບັນຫາດັ່ງກ່າວ.

ຂໍ້ມູນກ່ຽວກັບການໃຫ້ສັດຕະຍາບັນສົນທິສັນຍາ ແລະ ອານຸສັນຍາແມ່ນສາມາດເບິ່ງ ໄດ້ທີ່ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່.

## 2. ການກວດກາພັນທະການລາຍງານຂອງລັດພາຄີ

ລັດພາຄີສ່ວນຫລາຍແລ້ວແມ່ນບໍ່ສາມາດປະຕິບັດຕາມພັນທະທີ່ມີດ້ວຍເຫດຜົນຕ່າງໆກັນໄປນາໆປະການ. ໜ່ວຍງານພາກປະຊາສັງຄົມອາດເຮັດໜ້າທີ່ໃນການຊ່ວຍຊຸກຍູ້ໃຫ້ລັດພາຄີເຫລົ່ານັ້ນໃຫ້ປະຕິບັດພັນທະສົ່ງບົດລາຍງານຕາມເວລາທີ່ກຳນົດ ໄວ້ ແລະ ຍັງສາມາດສ້າງຄວາມຕື່ນຕົວໃຫ້ສາທາລະນະໃຫ້ຮັບຮູ້ກ່ຽວກັບພັນທະຂອງລັດຖະບານທີ່ມີໃນການສົ່ງບົດລາຍງານໃຫ້ທັນກັບວັນເວລາທີ່ກຳນົດ. ໜ່ວຍງານພາກປະຊາສັງຄົມຍັງສາມາດຊ່ວຍໃຫ້ຂໍ້ມູນເພີ່ມເຕີມໃຫ້ລັດພາຄີກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາຕາມພັນທະທີ່ມີໃນສົນທິສັນຍາ, ແລະ ພາກປະຊາສັງຄົມຍັງສາມາດເຮັດວຽກຮ່ວມກັບລັດພາຄີເພື່ອນຳໄປສູ່ການຈັດຕັ້ງປະຕິບັດຕາມສົນທິສັນຍາຢ່າງມີປະສິດທິພາບ.

ໃນກໍລະນີທີ່ລັດພາຄີຫາກບໍ່ສາມາດສົ່ງບົດລາຍງານຕາມເວລາທີ່ກຳນົດໄວ້ ແລະ ກໍ່ບໍ່ໄດ້ໃຫ້ເຫດຜົນໃດໆກ່ຽວກັບການບໍ່ສົ່ງບົດລາຍງານແກ່ຄະນະກຳມາທິການສິດທິມະນຸດ, ຄະນະກຳມະທິການສິດທິມະນຸດອາດຈະພິຈາລະນາວ່າລັດດັ່ງກ່າວບໍ່ໄດ້ປະຕິບັດຕາມພັນທະຂອງຕົນ. ຂັ້ນຕອນດຳເນີນງານທີ່ວ່ານີ້ເອີ້ນວ່າຂະບວນການທົບທວນເປັນໄລຍະ.

ໜ່ວຍງານພາກປະຊາສັງຄົມພ້ອມດ້ວຍຄູ່ຮ່ວມງານຂອງ ສປຊ, ແມ່ນສາມາດປະກອບຂໍ້ມູນໃສ່ຂະບວນການທົບທວນບົດລາຍ ງານໄດ້. ອີງຕາມຂໍ້ມູນທີ່ໄດ້ ແລະ ຈາກການສົນທະນາກັບລັດພາຄີ, ຄະນະກຳມາທິການກໍ່ຈະໄດ້ເຮັດບົດສະຫລຸບລາຍງານທີ່ມີທັງບັນດາຄຳຄິດເຫັນຕ່າງໆນຳ.

### 3. ການສົ່ງຂໍ້ມູນທີ່ເປັນລາຍລັກອັກສອນ

ຕະຫລອດໃນຂະຂວນການທົບທວນບົດລາຍງານ, ຄະນະກຳມາທິການແມ່ນຍິນດີທີ່ຈະຮັບເອົາບັນດາການລາຍງານເພີ່ມເຕີມທຸກເລື່ອງທີ່ກ່ຽວຂ້ອງກັບສົນທິສັນຍາເພື່ອວ່າການລາຍງານຂໍ້ມູນເພີ່ມນັ້ນຈະເຮັດໃຫ້ການກວດສອບການຈັດຕັ້ງປະຕະບັດສົນທິສັນຍາຂອງລັດພາຄີໄດ້ຢ່າງມີປະສິດທິພາບ. ການສົ່ງຂໍ້ມູນເພີ່ມເຕີມທາງທີ່ດີທີ່ສຸດສຳລັບພາກປະຊາສັງຄົມນັ້ນຄວນ ສົ່ງເປັນລາຍລັກອັກສແນ. ບົດລາຍງາຍທີ່ດີແມ່ນຄວນໄດ້ຮັບການຮ່ວມມືກັບພາກສ່ວນປະຊາສັງຄົມອື່ນໆນຳ.

ຮູບແບບການສົ່ງບົດລາຍງານນັ້ນແມ່ນມີຄວາມແຕກຕ່າງກັນລະຫວ່າງອົງກອນສິດທິມະນຸດຕ່າງໆ. ໂດຍທົ່ວໄປແລ້ວພາກສ່ວນປະຊາສັງຄົມຄວນສົ່ງບົດລາຍງານ ແລະ ຂໍ້ມູນອື່ນໆຂອງຕົນໃຫ້ຄະນະກຳມາທິການສິດທິມະນຸດພາຍຫລັງທີ່ລັດພາຄີໄດ້ສົ່ງບົດລາຍງານຂອງເຂົາເຈົ້າແລ້ວ ຫຼື ສົ່ງກ່ອນທີ່ຈະມີການພິຈາລະນາບົດລາຍງານຂອງລັດພາຄີ.

ຄະນະກຳມາທິການສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ, ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ຍິງ ແລະ ຄະນະກຳມາທິການສິດທິເດັກຍິນດີຮັບເອົາທຸກການລາຍງານທີ່ເປັນລາຍລັກອັກສອນຈາກ NGOs ທັງພາຍໃນ ແລະ ສາກົນ, ແລະ ຈາກພາກປະຊາສັງຄົມ ( ໂດຍສະເພາະແມ່ນບັນດາຜູ້ຊ່ຽວຊານສະເພາະ, ສະຖາບັນການສຶກສາຕ່າງໆ, ສະມາຄົມວິຊາຊີບ ແລະ ພະນັກງານລັດຖະສະພາຕ່າງໆ) ທີ່ເຮັດໜ້າທີ່ໃນດ້ານຕ່າງໆ. ຄະນະກຳມາທິການສິດທິເດັກມີເງື່ອນໄຂໃຫ້ສົ່ງບົດລາຍງານທີ່ເປັນລາຍລັກອັກສອນສອງເດືອນກ່ອນກອງປະຊຸມກະກຽມຂອງຄະນະກຳມາທິການຈະເລີ່ມ ຂຶ້ນ. ໜ່ວຍງານພາກປະຊາສັງຄົມເຊິ່ງລວມມີບັນດາສະຖາບັນການສຶກສາ ແລະ ສະມາຄົມວິຊາຊີບຕ່າງໆ ແມ່ນສາມາດສົ່ງບົດລາຍງານທີ່ເປັນລາຍລັກອັກສອນໃຫ້ແກ່ກອງເລຂາທົບທວນບົດລາຍງານຂອງຄະນະກຳມາທິການຕ້ານການທໍລະ ມານ ແລະ ຄະນະກຳມາທິການສິດທິມະນຸດ.

ຂໍ້ມູນທີ່ຂຽນສົ່ງມາໃຫ້ຄະນະກຳມາທິການສິດທິມະນຸດນັ້ນຖືວ່າເປັນຂໍ້ຈາກສາທາລະນະ. ແນວໃດກໍ່ດີ, ຄະນະກຳມາທິການຈະເກັບຮັກສາຂໍ້ມູນນັ້ນໄວ້ຢ່າງປິດລັບຖ້າຫາກໄດ້ມີການຮຽກຮ້ອງໃຫ້ປິດລັບ.

ບົດລາຍງານທີ່ຂຽນສົ່ງມາຈາກພາກປະຊາສັງຄົມນັ້ນຈະບໍ່ຖືວ່າເປັນເອກະສານທາງການຂອງ ສປຊ, ແລະ ຈະບໍ່ໄດ້ ຖືກພິມ ແລະ ແປເປັນພາສາອື່ນ. ເພາະສະນັ້ນມັນຈຶ່ງມີຄວາມສຳຄັນສຳລັບພາກປະຊາສັງຄົມທີ່ຈະພິຈາລະນາວ່າຂີຂຽນ ລາຍງານເປັນພາສາຫຍັງ ແລະ ຕ້ອງຂຽນລາຍງານເປັນພາສາທາງການທີ່ຄະນະກຳມາທິການນຳໃຊ້.

**ກ່ອນຈະສົ່ງບົດລາຍງານ, ມັນມີຄວາມສຳຄັນທີ່ຕ້ອງໄດ້ກວດກາ:**

- ເບິ່ງວ່າປະເທດດັ່ງກ່າວໄດ້ເປັນພາຄີຂອງສົນທິສັນຍານັ້ນຫຼືບໍ່, ຖ້າຫາກເປັນ ກໍ່ໃຫ້ເບິ່ງຂໍ້ມູນວ່າລັດພາຄີດັ່ງກ່າວໄດ້ ຕັ້ງຂໍ້ສະຫງວນໄວ້ແນວໃດ. (ຕາມປົກກະຕິແລ້ວ, ຂໍ້ສະຫງວນທີ່ມີກໍ່ບໍ່ສາມາດຫ້າມບໍ່ໃຫ້ພາກປະຊາສັງຄົມລາຍງານ ສິ່ງທີ່ພົບເຫັນ ແລະ ແຈ້ງໃຫ້ຄະນະກຳມາທິການຮັບຊາບ);
- ເບິ່ງກຳນົດເວລາທີ່ຕ້ອງສົ່ງບົດລາຍງານຄັ້ງຕໍ່ໄປ ແລະ ເບິ່ງໄລຍະເວລາກຳນົດການທົບທວນຂອງຄະ ນະກຳມາທິ ການໃນຄັ້ງຕໍ່ໄປ. ກຳນົດການທີ່ກ່າວມານີ້ແມ່ນມີການປ່ຽນແປງເລື້ອຍໆ, ດັ່ງນັ້ນມັນຈຶ່ງຈຳເປັນທີ່ຕ້ອງໄດ້ປະສານງານກັບກອງເລຂາຂອງຄະນະກຳມາທິການຢູ່ຕະຫລອດເພື່ອຕິດຕາມການປ່ຽນແປງດັ່ງກ່າວ;
- ເບິ່ງບັນຫາທີ່ສຳຄັນທີ່ໄດ້ຖືກດຳເນີນການທົບທວນ. ມັນມີຄວາມຈຳເປັນສຳລັບພາກປະຊາສັງຄົມທີ່ຈະຕ້ອງໄດ້ຮຽນຮູ້ກ່ຽວກັບບົດລາຍງານຂອງລັດພາຄີໃນຄັ້ງທີ່ຜ່ານມາ ກໍ່ຄືການຮຽນຮູ້ກ່ຽວກັບບົດສະຫລຸບ ແລະ ບັນດາຂໍ້ຄົງຄ້າງຕ່າງໆ ທີ່ມີຜ່ານມາ; ແລະ
- ເບິ່ງລະບຽບການລາຍງານຂອງແຕ່ລະອົງກອນສິດທິມະນຸດ (ເພື່ອວ່າພາກປະຊາສັງຄົມຈະສາມາດຊ່ວຍກວດສອບບົດລາຍງານຂອງລັດພາຄີນັ້ນວ່າເປັນໄປຕາມລະບຽບການຫຼືບໍ່).

IV

## ການຂຽນບົດລາຍງາຍສົ່ງ

ທາງເລືອກທີ່ດີທີ່ສຸດສໍາລັບພາກປະຊາສັງຄົມກໍ່ຄືການສົ່ງບົດລາຍງານທີ່ເປັນລາຍລັກອັກສອນໄປຄຽງຄູ່ກັນກັບບົດລາຍງານຂອງລັດພາຄີໃຫ້ແກ່ຄະນະກໍາມາທິການສິດທິມະນຸດ.

ກ່ອນພາກປະຊາສັງຄົມຈະຂຽນບົດລາຍງານຂອງຕົນ, ມັນມີຄວາມຈໍາເປັນທີ່ຕ້ອງໄດ້ຮຽນຮູ້ລະບຽບການ ຂຽນບົດລາຍງານຂອງຄະນະກໍາມາທິການສິດທິມະນຸດກ່ອນ. ບົດລາຍງານທີ່ຂຽນນັ້ນແມ່ນຄວນຈະຂຽນຄ້າຍຄືກັບໂຄງ ຮ່າງບົດລາຍງານທາງການຂອງລັດພາຄີ. ວັດຖຸປະສົງ ການຂຽນບົດລາຍງານນັ້ນແມ່ນຄວນວິເຄາະເປັນລະບົບກ່ຽວກັບ ກົດໝາຍໃດ, ນະໂຍບາຍໃດ, ແລະ ການຈັດຕັ້ງປະຕິບັດໃດທີ່ສອດຄ່ອງກັບຫຼັກການ ແລະ ມາດຕະຖານຂອງສົນທິສັນຍາ.

## ການຂຽນບົດລາຍງານຄວນຈະ:

- ຈະແຈ້ງ ແລະ ແນ່ນອນ, ຕົງປະເດັນ ແລະ ມີຫຼັກການ;
- ເນັ້ນເອົາບັນຫາທີ່ສໍາຄັນທີ່ເຫັນວ່າມັນເປັນຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດສົນທິສັນຍາ, ແລະ ຄວນມີຄໍາແນະນໍາເພື່ອປັບປຸງສະພາບສິດທິມະນຸດຂອງປະເທດດັ່ງກ່າວ; ແລະ
- ຕ້ອງສົ່ງໃຫ້ໄວທີ່ສຸດກ່ອນທີ່ຈະມີຕາຕະລາງການດໍາເນີນການທົບທວນອອກມາ, ບົດລາຍງານທີ່ສົ່ງໄດ້ໄວນີ້ແມ່ນຈະຊ່ວຍໃຫ້ຄະນະກໍາມາທິການໄດ້ມີເວລາທໍາການທົບທວນເອົາບັນຫາຕ່າງໆເພື່ອກຽມເຂົ້າໃນລາຍການທີ່ຈະຕ້ອງໄດ້ທົບ ທວນກວດກາ, ມີເວລາໃນການກະກຽມການດໍາເນີນງານ, ແລະ ເພື່ອເຮັດບົດສະຫລຸບຈາການທົບທວນສົມບູນຂຶ້ນ.

## ລະບຽບການ:

- ຂໍ້ມູນທີ່ພາກປະຊາສັງຄົມລາຍງານນັ້ນຕ້ອງກ່ຽວຂ້ອງກັບລັດພາຄີໃດໜຶ່ງສະເພາະ ແລະ ກ່ຽວຂ້ອງກັບວຽກງານຂອງຄະນະກໍາມາທິການສິດທິມະນຸດ. ຖ້າເປັນໄປໄດ້ ບົດລາຍງານຄວນໃສ່ຂໍ້ມູນອ້າງອີງເຖິງມາດຕາໃດຂອງສົນທິສັນຍາທີ່ໄດ້ຖືກລະເມີດ;
- ການກ່າວອ້າງເຖິງບັນຫາການລະເມີດນັ້ນຕ້ອງມີຫຼັກຖານ ແລະ ເອກະສານມາປະກອບ;
- ທຸກຂໍ້ມູນຕ້ອງໄດ້ຮັບການອ້າງຢ່າງຖືກຕ້ອງ. ເມື່ອນໍາເອົາເອກະສານຂອງ ສປຊ ມາອ້າງແມ່ນຕ້ອງບອກວ່າ ມາແຕວັກໃດ, ສິ່ງທີ່ສໍາຄັນກໍ່ຄືບໍ່ຄວນອ້າງເລກໜ້າເພາະເລກໜ້າໃນແຕ່ລະພາສາຂອງເອກະສານແມ່ນບໍ່ຄືກັນ. ການອ້າງອີງນີ້ຄວນຈະໃຊ້ກັບເອກະສານບົດລາຍງານຂອງລັດພາຄີຄືກັນ, ແລະ ຕ້ອງອ້າງອີງເຖິງເອກະສານສະບັບພາສາໃດຂອງເອກະສານທາງການຂອງ ສປຊ;
- ຂໍ້ມູນທີ່ໄດ້ຈາກພາກປະຊາສັງຄົມນັ້ນຕ້ອງໄດ້ສົ່ງໃຫ້ກອງເລຂາຂອງຄະນະກໍາມາທິການສິດທິມະນຸດທັງເປັນຟາຍອີເລັກໂຕນິດ ແລະ ເປັນເອກະສານພິມເພາະວ່າທາງກອງເລຂາບໍ່ສາມາດທີ່ຈະສ້າງເອກະສານດັ່ງກ່າວເພີ່ມອີກໄດ້;
- ເອກະສານທີ່ເປັນລັກສະນະໃຊ້ຄໍາສັບທີ່ບໍ່ເໝາະສົມແມ່ນຈະບໍ່ໄດຮັບການພິຈາລະນາ.

ຂໍ້ມູນກ່ຽວກັບການສົ່ງບົດລາຍງານຂອງພາກປະຊາສັງຄົມນັ້ນແມ່ນສາມາດເບິ່ງໄດ້ທີ່ເວບໄຊ້ຂອງສໍານັກງານຂ້າຫລວງ ໃຫຍ່ ຫຼື ຂໍ້ມູນທີ່ກ່ຽວກັບຄະນະກໍາມາທິການສິດທິເດັກກໍ່ແມ່ນສາມາດເບິ່ງໄດ້ທີ່ເວບໄຊ້ຂອງເຄືອຂ່າຍສິດທິເດັກ (ກຸ່ມ NGOs ເພື່ອສິດທິເດັກນ້ອຍ). ທ່ານສາມາດເບິ່ງຂໍ້ມູນເພີ່ມໃນຫ້ອງຕາຕະລາງໃນທ້າຍບົດນີ້ກ່ຽວກັບການຂຽນສົ່ງຂໍ້ມູນ ໃຫ້ແກ່ແຕ່ລະອົງກອນສິດທິມະນຸດ.

IV

ກອງປະຊຸມວິຊາການກ່ຽວກັບການຂຽນບົດລາຍງານວ່າດ້ວຍການຈັດຕັ້ງປະຕິບັດສົນທິສັນຍາສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ

ໃນເດືອນມິຖຸນາ 2007, ສຳນັກງານຂ້າຫລວງໃຫຍ່ປະຈຳປະເທດຈໍເຈຍໄດ້ຈັດກອງປະຊຸມວິຊາການໃຫ້ແກ່ຜູ້ແທນ NGOs ປະມານ 20 ອົງການທີ່ເມືອງ ບີລີຊີກ່ຽວກັບວິທີການສົ່ງບົດລາຍງານໃຫ້ແກ່ຄະນະກຳມາທິການວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ. ມີຕົວແທນຈາກຄະນະກຳມາທິການສອງທ່ານທີ່ນຳພາຈັດກອງປະຊຸມໂດຍມີຈຸດປະສົງ:

- ສ້າງຄວາມຕື່ນຕົວກ່ຽວກັບກົນໄກສິດທິມະນຸດສາກົນ, ກົນໄກການກວດສອບ ແລະ ພາລະບົດບາດພິເສດຂອງ NGOs;
- ຊຸກຍູ້ຄວາມເຂົ້າໃຈກ່ຽວກັບຫຼັກການຄວາມເທົ່າທຽມ, ບໍ່ມີການຈຳແນກ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ; ແລະ
- ເສີມສ້າງຄວາມຮູ້ກ່ຽວກັບບົດບາດຂອງໜ່ວຍງານພາກປະຊາສັງຄົມໃນການກວດສອບຄວາມກ້າວໜ້າໃນການຈັດຕັ້ງປະຕິບັດສົນທິສັນຍາ.

ເພື່ອເປັນການຕໍ່ເນື່ອງຈາກກອງປະຊຸມດັ່ງກ່າວ, ໃນປີ 2007 ເອງກໍ່ໄດ້ມີການຈັດກອງປະຊຸມໃຫ້ NGOs ໃນທ້ອງຖິ່ນຫລາຍກອງປຸມຕໍ່ເນື່ອງກັນ.

## 4 . ການເຂົ້າຮ່ວມ ແລະ ປະກອບສ່ວນໃນກອງປະຊຸມອົງກອນສິດທິມະນຸດ

### ການເຂົ້າຮ່ວມກອງປະຊຸມ

ບົດລາຍງານຂອງລັດພາຄີແມ່ນໄດ້ພິຈາລະນາໃນກອງປະຊຸມສະເພາະທີ່ພາກປະຊາສັງຄົມອາດເຂົ້າຮ່ວມໃນຖານະເປັນຜູ້ສັງເກດການ. ການເຂົ້າຮ່ວມກອງປະຊຸມຂອງຄະນະກຳມາທິການແມ່ນຈະເຮັດໃຫ້ພາກປະຊາສັງຄົມສາມາດທີ່ຈະ:

- ໄດ້ຮູ້ຈັກກັບຄະນະກຳມາທິການທັງໝົດ ຫຼື ສະມາຊິກຂອງຄະນະກຳມາທິການບາງທ່ານ;
- ສັງເກດເຫັນການສົນທະນາກັນລະຫວ່າງລັດພາຄີກັບຄະນະກຳມາທິການ; ແລະ
- ຮຽນຮູ້ຕົວຈິງກ່ຽວກັບບັນຫາຕ່າງໆທີ່ຍົກມາສົນທະນາ ແລະ ການໃຫ້ຄຳເຫັນແນະນຳຈາກຄະນະກຳມາທິການ.

ລະບຽບ ແລະ ການຈັດຕັ້ງປະຕິບັດກ່ຽວກັບການເຂົ້າຮ່ວມກອງປະຊຸມ ຫຼື ໃນໄລຍະກະກຽມກອງປະຊຸມຂອງຄະນະກຳມາທິການຂອງພາກປະຊາສັງຄົມແມ່ນມີຄວາມແຕກຕ່າງກັນໃນແຕ່ລະຄະນະກຳມາທິການ.

ການຂໍເຂົ້າຮ່ວມກອງປະຊຸມຂອງຄະນະກຳມາທິການສິດທິມະນຸດນັ້ນແມ່ນຄວນຈະຮ້ອງຂໍນຳກອງເລຂາທີ່ກ່ຽວຂ້ອງລ່ວງໜ້າເສຍກ່ອນ.

### ການປະກອບສ່ວນໃນກອງປະຊຸມ

ພາກປະຊາສັງຄົມທີ່ລວມມີຜູ້ຊ່ຽວຊານຕ່າງໆ, ຕົວແທນຂອງສະຖາບັນການສຶກສາ ແລະ ກຸ່ມວິຊາຊີບຕ່າງໆອາດຈະສາມາດປະກອບສ່ວນຢ່າງເຕັມທີ່ໃນກອງປະຊຸມ. ໃນຄະນະທີ່ທາງພາກປະຊາສັງຄົມທີ່ບໍ່ໄດ້ເຂົ້າຮ່ວມການສົນທະ ນາລະຫວ່າງລັດພາຄີ ແລະ ຄະນະກຳມາທິການນັ້ນ, ພາກປະຊາສັງຄົມແມ່ນສາມາດມອບຂໍ້ມູນທີ່ຕື່ມໄດ້ກຽມໃນບົດລາຍງານນັ້ນໃຫ້ແກ່ຄະນະກຳມາທິການຮັບຊາບ.

ຄະນະກຳມາທິການສ່ວນຫລາຍແລ້ວແມ່ນຈະໃຫ້ເວລາສ່ວນໃດໜຶ່ງແກ່ພາກປະຊາສັງຄົມເພື່ອລາຍງານປາກ ເປົ່າ. ຂໍ້ມູນເພີ່ມເຕີມກ່ຽວກັບການລາຍງານປາກເປົ່າໃນທີ່ປະຊຸມແມ່ນສາມາດເບິ່ງໄດ້ທີ່ເອກະສານຊ້ອນທ້າຍຂອງບົດຄູ່ມືນີ້

## ກອງປະຊຸມຂອງຄະນະກຳມາທິການ

ຄະນະກຳມາທິການສິດທິມະນຸດ, ຄະນະກຳມາທິການສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ, ຄະນະກຳມາທິການຕ້ານການທໍລະມານ, ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ຍິງ ແລະ ຄະນະກຳມາທິການເພື່ອສິດທິຂອງແຮງງານຕ່າງດ້າວແມ່ນໄດ້ຈັດວາລະສ່ວນໃດໜຶ່ງໃນທີ່ປະຊຸມໃຫ້ແກ່ພາກປະຊາສັງຄົມໄດ້ລາຍງານປາກເປົ່າ. ການລາຍງານນີ້ແມ່ນຈະເຮັດໃຫ້ພາກປະຊາສັງຄົມໄດມີໂອກາດທີ່ຈະນຳສະເໜີຂໍ້ມູນທີ່ສຳຄັນທີ່ມີໃນບົດບາຍງານຂອງເຂົາເຈົ້າໃຫ້ແກ່ຄະນະກຳມາທິການໄດ້ຮັບຊາບ.

ຂໍ້ສັງເກດກໍ່ຄືວ່າ ມີພຽງຄະນະກຳມາທິການສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ, ແລະ ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ຍິງເທົ່ານັ້ນທີ່ບໍ່ອານຸຍາດໃຫ້ພາກປະຊາສັງຄົມລາຍງານຂໍ້ມູນປາກເປົ່າໃນທີ່ປະຊຸມປິດສະເພາະຂອງຄະນະກຳມາທິການ.

## ກອງປະຊຸມກະກຽມ

ຄະນະກຳມາທິການສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ, ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ຍິງ ແລະ ຄະນະກຳມາທິການສິດທິເດັກແມ່ນໄດ້ຈັດວາລະພິເສດໃນທີ່ປະຊຸມແກ່ພາກປະຊາສັງຄົມເພື່ອປະກອບສ່ວນໃນກອງ ປະຊຸມກະກຽມ. ແຕ່ໃນບາງຄະນະກຳມາທິການກໍ່ບໍ່ອານຸຍາດໃຫ້ປະກອບສ່ວນແບບນີ້ ແຕ່ວ່າມັນກໍ່ມີທາງເປັນໄປໄດ້ທີ່ຈະຂໍຈັດກອງປະຊຸມແບບເປັນທາງການເພື່ອພົບປະກັບຄະນະກຳມາທິການໄດ້ແຕ່ຕ້ອງຮ້ອງຂໍນຳກອງເລຂາທີ່ກ່ຽວຂ້ອງກ່ອນ.

ການປະກອບຂໍ້ມູນຂອງພາກປະຊາສັງຄົມໃນກອງປະຊຸມກະກຽມນັ້ນອາດຈະບໍ່ໄດ້ເອົາລວມໃສ່ໃນລາຍການບັນຫາຕ່າງໆເພື່ອສົ່ງໃຫ້ລັດພາຄີຮັບຊາບ. ກອງປະຊຸມກະກຽມແມ່ນຮັບ ຫຼື ອານຸຍາດໃຫ້ພາກປະຊາສັງຄົມຍື່ນບົດລາຍງານ ຫຼື ຂໍ້ມູນຕ່າງໆໄດ້. ຄະນະກຳມາທິການສ່ວນຫລາຍແລ້ວແມ່ນບໍ່ອານຸຍາດໃຫ້ຕົວແທນຈາກລັດພາຄີເຂົ້າຮ່ວມກອງປະຊຸມກະກຽມນັ້ນໄດ້.

### ລະບຽບການສຳລັບການລາຍງານປາກເປົ່າໃນທີ່ປະຊຸມຂອງຄະນະກຳມາທິການ ແລະ ໃນທີ່ກອງປະຊຸມກະກຽມ.

- ການລາຍງານປາກເປົ່າແມ່ນຕ້ອງກ່ຽວຂ້ອງກັບສົນທິສັນຍາໃດໜຶ່ງ;
- ການລາຍງານຕ້ອງຢູ່ໃນເວລາທີ່ກຳນົດ;
- ສິ່ງອຳນວຍຄວາມສະດວກຂອງການແປພາສາແມ່ນມີພ້ອມໃນທີ່ປະຊຸມ, ພາກປະຊາສັງຄົມຕ້ອງກະກຽມການລາຍງານປາກເປົ່າຂອງຕົນໃນເອກະສານພິມແລ້ວສົ່ງໃຫ້ແກ່ນັກແປພາສາ;
- ຄະນະປະສານງານໃນເລື່ອງໃດໜຶ່ງບໍ່ຄວນມີຈຳນວນຫລວງຫລາຍເກີນໄປ; ແລະ
- ການໃຊ້ພາສາ ຫຼື ຄຳສັບທີ່ບໍ່ເໝາະສົມແມ່ນຈະບໍ່ອານຸຍາດໃຫ້ໃຊ້ ແລະ ໃຜກໍ່ຕາມທີ່ໃຊ້ຄຳເວົ້າໃນລັກສະນະດັ່ງກ່າວແມ່ນຈະຖືກບັງຄັບໃຫ້ອອກຈາກກອງປະຊຸມ

NGOs ແລະ ພາກປະຊາສັງຄົມຕ່າງໆແມ່ນຕ້ອງປະສານງານກັບກອງເລຂາຖ້າມີຈຸປະສົງທີ່ຈະເຂົ້າຮ່ວມກອງ ປະຊຸມທີ່ກ່ຽວຂ້ອງ.

## ກອງປະຊຸມສັ້ນແບບບໍ່ເປັນທາງການ

ຕາມປົກກະຕິແລ້ວກອງປະຊຸມຄະນະກຳມາທິການຈະໃຫ້ໂອກາດແກ່ພາກປະຊາສັງຄົມໃນການເຂົ້າພົບກັບສະມາຊິກຂອງຄະນະກຳມາທິການແບບບໍ່ເປັນທາງການ. ກອງປະຊຸມສັ້ນໆແບບບໍ່ເປັນທາງການນີ້ສ່ວນຫລາຍແລ້ວແມ່ນພາກປະຊາ ສັງຄົມຈະເປັນຄົນຈັດ, ການຈັດນັ້ນອາດແມ່ນໄປຄຽງຄູ່ກັບກອງປະຊຸມທີ່ເປັນທາງການ, ສ່ວນຫລາຍແລ້ວແມ່ນຈະຈັດໃນຊ່ວງເວລາທີ່ພັກທ່ຽງກອງປະຊຸມທາງການໃນລະຫວ່າງບ່າຍ 1-3 ໂມງ. ກອງປະຊຸມດັ່ງກ່າວແມ່ນບໍ່ມີນັກແປພາສາໃຫ້.

ຈຸດປະສົງຂອງກອງປະຊຸມແມ່ນແນໃສ່ບັນຫາ ແລະ ລັດພາຄີທີ່ທາງຄະນະກຳມາທິການພວມດຳເນີນການທົບ ທວນຢູ່. ຕາມປົກກະຕິແລ້ວກອງປະຊຸມແບບບໍເປັນທາງການນີ້ແມ່ນຈະຈັດກ່ອນ ຫຼື ໃນໄລຍະດຽວກັນກັບກອງປະຊຸມທີ່ພິຈາລະນາທົບທວນບົດລາຍງານຂອງລັດພາຄີ. ການຈັດກອງປະຊຸມແບບບໍ່ເປັນທາງການທີ່ມີການປະສານງານ ແລະ ບໍລິຫານຈັດການເປັນຢ່າງດີນີ້ແມ່ນໄດ້ຮັບການຕອບຮັບເຂົ້າຮ່ວມຈາກບັນດາສະມາຊິກຄະນະກຳມ່ທິການ ແລະ ຈະມີປະສິດທິພາບຫລາຍກ່ວາຫລາຍໆກອງປະຊຸມແບບດຽວກັນນີ້. ດັ່ງນັ້ນທາງພາກປະຊາສັງຄົມແມ່ນຕ້ອງໄດ້ມີການປະສານ ງານເປັນຢ່າງດີ.

ເຄີຍມີຕົວຢ່າງທີ່ກອງເລຂາຄະນະກຳມາທິການໄດ້ອຳນວຍຄວາມສະດວກໃຫ້ກອງປະຊຸມດ້ວຍການໃຫ້ຫ້ອງ ປະຊຸມ ແລະ ອຸປະກອນຕ່າງໆ ພ້ອມທັງຊ່ວຍໃນການປະສານງານກັບຄະນະກຳມາທິການກ່ຽວກັບກອງປະຊຸມ.

## 5. ການຕິດຕາມບົດສະຫລຸບກອງປະຊຸມຂອງຄະນະກຳມາທິການສິດທິມະນຸດ

ໃນເວລາທີ່ກອງປະຊຸມຂອງຄະນະກຳມາທິການໄດ້ຖືກຈັດຂຶ້ນ ແລະ ບົດສະຫລຸບກອງປະຊຸມກໍ່ໄດ້ຮັບການຮັບຮອງແລ້ວ, ທາງພາກປະຊາສັງຄົມແມ່ນສາມາດດຳເນີນການຕິດຕາມການຈັດຕັ້ງປະຕິບັດໃນປະເທດໃດໜຶ່ງເພື່ອສ້າງຄວາມຕື່ນຕົວກ່ຽວກັບຄຳແນະນຳຂອງຄະນະກຳມາທິການແລະກະຕຸ້ນໃຫ້ລັດພາຄີຮີບດ່ວນຈັດຕັ້ງປະຕິບັດຕາມຄຳແນະນຳເຫລົ່ານັ້ນ.

ດັ່ງນັ້ນມັນຈຶ່ງມີຄວາມສຳຄັນຫລາຍສຳລັບພາກປະຊາສັງຄົມທີ່ຈະຕ້ອງສຶກສາໃຫ້ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບບົດສະຫລຸບຂອງຄະນະກຳມາທິການນັ້ນໃຫ້ດີ.

ແນະນຳໃຫ້ເຂົ້າເບິ່ງເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ເພື່ອລົງທະບຽນອີເມວໄວ້ເພື່ອຮັບຂໍ້ມູນແຈ້ງເຕືອນກ່ຽວກັບຄຳແນະນຳຂອງຄະນະກຳມາທິການສິດທິມະນຸດ.

**ໜ່ວຍງານພາກປະຊາສັງຄົມອາດຈະຕິດຕາມການຈັດຕັ້ງປະຕິບັດຕາມຄຳແນະນຳໄດ້ຄື:**

- ໃຫ້ການຮ່ວມມືກັບລັດພາຄີເພື່ອຊ່ວຍເຂົາເຈົ້າໃຫ້ມີຄວາມສາມາດປະຕິບັດໄປຕາມຄຳແນະນຳ; ພາກປະຊາສັງຄົມສ່ວນຫລາຍແລ້ວແມ່ນເຮັດໜ້າທີ່ຄືກັນກັບຜູ້ນຳພາໃນການສົ່ງເສີມການປະຕິຮູບລະບົບກົດໝາຍແຫ່ງຊາດ ແລະ ຈັດຕັ້ງນະໂຍບາຍພາຍໃນປະເທດ. ນອກນີ້ທາງພາກປະຊາສັງຄົມຍັງສາມາດນຳເອົາຫຼັກການໃນບົດສະຫລຸບກອງປະຊຸມຂອງຄະນະກຳມາທິການເປັນພື້ນຖານໃນການສົນທະນາກັບລັດພາຄີ ແລະ ໃຊ້ເຂົ້າໃນການດຳ ເນີນງານຂອງຕົນ;
- ດຳເນີນການກວດກາສະພາບສິດທິມະນຸດ ແລະ ສະພາບການຈັດຕັ້ງປະຕິບັດຕາມຄຳແນະນຳຂອງຄະນະກຳມາທິການໃນປະເທດໃນໜຶ່ງ;
- **ສ້າງຄວາມຕື່ນຕົວກ່ຽວກັບຂະບວນການດຳເນີນງານຂອງກອງປະຊຸມ**ຄະນະກຳມາທິການທີ່ກ່ຽວກັບບັນດາຄຳແນະນຳທີ່ລັດພາຄີມີພັນທະຕ້ອງໄດ້ປະຕິບັດຕາມ, ແລະ ທີ່ກ່ຽວກັບວິທີການນຳເອົາ

ຄຳແນະນຳໄປໃຊ້ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສິດທິມະນຸດແຫ່ງຊາດ. ການສະໜັບສະໜູນນີ້ອາດເຮັດໃນຮູບແບບ ກອງປະຊຸມປຶກສາຫາລື, ກອງປະຊຸມໂຕະມົນ, ການຈັດສຳມະນາ ແລະ ຈັດກອງປະຊຸມແບບແລກປ່ຽນໂດຍໃຫ້ການສະໜັບ ສະໜູນໃນການແປ ແລະ ຈັດພິມບົດສະຫລຸບທົ່ວທວນ; ຫຼື ໃຫ້ການຮ່ວມມືກັບສະຖາບັນສິດທິມະນຸດ ແລະ ອົງການສື່ຕ່າງໆ.

- ປະກອບສ່ວນເຂົ້າໃນວຽກງານຂອງອົງກອນສິດທິມະນຸດດ້ວຍການແຈ້ງໃຫ້ຄະນະກຳມາທິການຊາບກ່ຽວກັບຄວາມຄືບໜ້າຂອງລັດພາຄີໃນການຈັດຕັ້ງປະຕິບັດສົນທິສັນຍາຕາມຄຳແນະນຳ ແລະ ລາຍງານຂໍ້ມູນທີ່ເຫັນວ່າຈຳເປັນ ແລະ ມີປະໂຫຍດ.

## 6. ວິທີສົ່ງບົດລາຍງານຂອງພາກສ່ວນບຸກຄົນໃຫ້ແກ່ອົງກອນສິດທິມະນຸດ

ບຸກຄົນໃດກໍ່ຕາມທີ່ເຫັນວ່າສິດທິຂອງຕົນທີ່ມີພາຍໃຕ້ສົນທິສັນຍາໃດໜຶ່ງຫາກຖືກລະເມີດໂດຍລັດພາຄີຂອງສົນທິສັນຍາດັ່ງກ່າວແມ່ນສາມາດສົ່ງບົດລາຍງານດັ່ງກ່າວໃຫ້ແກ່ຄະນະກຳມາທິການທີ່ກ່ຽວຂ້ອງໄດ້ ຖ້າຫາກເຫັນວ່າລັດພາຄີດັ່ງກ່າວຫາກໄດ້ຮັບຮອງສິດໃນການໄຕ່ສວນບົດລາຍງານຂອງຄະນະກຳມາທິການທີ່ກ່ຽວຂ້ອງນັ້ນແລ້ວ. ການລາຍງານດັ່ງກ່າວອາດໃຊ້ວິທີຜ່ານທາງປະເທດທີສາມໄດ້ໂດຍອາດຜ່ານທາງພາກປະຊາສັງຄົມໃນນາມຂອງບຸກຄົນຖ້າຫາກໄດ້ມອບສິດໃຫ້ໜ່ວຍງານດັ່ງກ່າວດຳເນີນການໃຫ້ (ໃບມອບສິດ ຫຼື ໃບແຕ່ງຕັ້ງ) ຫຼື ວິທີອື່ນໆ.

ກ່ອນທີ່ຈະສົ່ງຄຳຮ້ອງທຸກໄປຫາຄະນະກຳມາທິການນັ້ນຜູ້ກ່ຽວຂ້ອງຕ້ອງໄດ້ຜ່ານຂະບວນການແກ້ໄຂພາຍໃນປະເທດເສຍ ກ່ອນ ຫຼື ໄດ້ນຳໃຊ້ທຸກວິທີການພາຍໃນເພື່ອແກ້ໄຂແລ້ວເທົ່ານັ້ນ.

ສຳລັບຂໍ້ມູນເພີ່ມເຕີມແມ່ນເບິ່ງໄດ້ທີ່ເອກະສານຊ້ອນທ້າຍຂອງຄູ່ມືບົດນີ້ ແລະ ໃນບົດທີ VIII (ການຍື່ນຄຳຮ້ອງທຸກກ່ຽວກັບບັນຫາການລະເມີດສິດທິມະນຸດ) ຂອງຄູ່ມືນີ້.

## 7. ການໃຫ້ຂໍ້ມູນເພື່ອການສອບສວນທີ່ປິດລັບ

ໜ່ວຍງານພາກປະຊາສັງຄົມອາດຈະຂໍໃຫ້ຄະນະກຳມາທິການດຳເນີນການສອບສວນແບບປິດລັບດ້ວຍການສະນັບສະໜູນຂໍ້ມູນເພີ່ມເຕີມ. ການສອບສວນແບບປິດລັບແມ່ນເປັນກົນໄກທີ່ສຳຄັນທີ່ອານຸຍາດໃຫ້ພາກປະຊາສັງຄົມໄດ້ນຳເອົາສະ ພາບການ ແລະ ບັນຫາການລະເມີດສິດມາໃຫ້ຄະນະກຳມາທິການໄດ້ຮັບຊາບ.

ການສອບສວນແບບປິດລັບສ່ວນຫລາຍແລ້ວແມ່ນຈະອີງໃສ່ຂໍ້ມູນທີ່ໄດ້ຈາກ NGOs ເປັນສ່ວນໃຫຍ່. ຕົວຢ່າງ: ການສອບສວນແບບປິດລັບທີ່ທາງຄະນະກຳມາທິການວ່າດ້ວຍການຕ້ານການທໍລະມານໄດ້ດຳເນີນການສອບ 7 ຄັ້ງ (ກ່ຽວຂ້ອງກັບ ປະເທດບຣາຊິວ, ອີຢິບ, ແມກຊິໂກ, ເປຣູ, ເຊີເບຍແອນມອນເຕີນີໂກຣ, ຊຣີລັງກາ, ແລະ ເຕີກີ) ທີ່ຜ່ານມາແມ່ນໄດ້ອີງ ຕາມຂໍ້ມູນທີ່ໄດ້ຈາກ NGOs ເປັນສ່ວນໃຫຍ່. ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ຍິງແມ່ນໄດ້ສຳເລັດ ການສອບສວນມາຢ່າງໜຶ່ງແລ້ວຈາກປະເທດ (ເມກຊິໂກ).

ໜ່ວຍງານພາກປະຊາສັງຄົມອາດຈະໃຫ້ຂໍ້ມູນເພີ່ມແກ່ຄະນະກຳມາທິການໃນເວລາທີ່ການສອບສວນໄດ້ເລີ່ມຕົ້ນແລ້ວ.

## ການມີສ່ວນຮ່ວມຂອງ NGOs ໃນການເລີ່ມການສອບສວນທີ່ປິດລັບ

ການສອບສວນຄັ້ງທີໜຶ່ງທີ່ຢູ່ໃນມາດຕາ 8 ຂອງອານຸສັນຍາວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງແມ່ນອີງໃສ່ຂໍ້ມູນພື້ນຖານທີ່ຄະນະກຳມາທິການໄດ້ຮັບມາຈາກ NGOs—ອົງການ Equality Now, Casa Amiga ແລະ ຄະນະກຳມາທິການເພື່ອ ການປົກ ປ້ອງ ແລະ ສົ່ງເສີມສິດທິ ມະນຸດ ແຫ່ງເມກຊິໂກ—ທີ່ກ່ຽວຂ້ອງກັບການຂ້າ ແລະ ການຫາຍສາບສູນ ປະມານ 200 ກ່ວາຄົນທີ່ເປັນແມ່ຍິງຢູ່ທີ່ເມືອງ Ciudad Juarez ໃນເມກຊິໂກ. ອົງການ NGOs ໄດ້ລາຍງານລາຍລະອຽດທີ່ມີມູນຄວາມຈິງຂອງການລັກພາຕົວ, ການຂົ່ມຂືນ ແລະ ການຄາດຕະກຳມາຕັ້ງແຕ່ປີ 1993. ຕາມຄຳເຫັນຂອງຄະນະກຳມາທິການແມ່ນຖືວ່າຂໍ້ມູນໃຊ້ໄດ້ ແລະ ເຫັນວ່າຂໍ້ມູນມີຄວາມຈິງກ່ຽວກັບການລະເມີດສິດທິມະນຸດຢ່າງຮ້າຍແຮງ. ໃນລະຫວ່າງການສອບສວນທີ່ມີ ຂຶ້ນໃນປີ 2003 ເຫັນວ່າອົງການ NGOs ໄດ້ໃຫ້ຂໍ້ມູນເພີ່ມຫລາຍ ຢ່າງ ແລະ ຕິດຕາມລົງພື້ນທີ່ໃນເມກຊິໂກກັບສະມາຊິກຄະນະກຳມາທິການສອງທ່ານ. ການມີສ່ວນ ຮ່ວມຢ່າງຫ້າວຫັນຂອງອົງການ NGOs ແລະ ລັດພາຄີແມ່ນ ເຮັດໃຫ້ບົດລາຍງານມີຄວາມເຊື່ອຖືທີ່ກ່ຽວຂ້ອງກັບບັນຫາການລະເມີດສິດທິມະນຸດ ແລະ ພື້ນຖານທາງສັງຄົມ ແລະ ວັດທະນາທຳທີ່ກ່ຽວຂ້ອງກັບເຫດການ, ລົງເລິກດ້ານພື້ນຖານຂອງການສ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ໃຫ້ຄຳແນະນຳທີ່ເໝາະສົມເພື່ອສົ່ງເສີມການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງໃຫ້ມີປະສິດທິພາບ.

ບົດລາຍງານ ແລະ ການຕອບຂໍ້ສອບຖາມຂອງປະເທດເມກຊິກໂກແມ່ນສາມາດເບິ່ງໄດ້ທີ່ເວບໄຊ້ຂອງພະແນະສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ.

ໜ່ວຍງານພາກປະຊາສັງຄົມທີ່ປະສົງຢາກສົ່ງຂໍ້ມູນໃຫ້ແກ່ການສອບສວນທີ່ປິດລັບນີ້ສາມາດສົ່ງໄປທີ່:

**(ຊື່ຂອງຄະນະກຳມາທິການ)**
ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 29

**8. ການໃຫ້ຂໍ້ມູນເພື່ອແຈ້ງເຕືອນດ່ວນ ແລະ ການດຳເນີນການທີ່ຮີບດ່ວນ**

ຂໍ້ມູນທີ່ທາງພາກປະຊາສັງຄົມສົ່ງໃຫ້ຄະນະກຳມາທິການຕ້ານການຈຳແນກເຊື້ອຊາດນັ້ນແມ່ນສາມາດຊ່ວຍໃຫ້ມີການດຳເນີນການແກ້ໄຂຢ່າງວ່ອງໄວທີ່ກ່ຽວກັບການແຈ້ງເຕືອນ ແລະ ການປະຕິບັດການທີ່ຮີບດ່ວນ. ໃນອາດີດທີ່ ຜ່ານມາກໍ່ເຫັນວ່າຂໍ້ມູນທີ່ໄດ້ມາຈາກ NGOs ແລະ ກຸ່ມຄົນພື້ນເມືອງນັ້ນສາມາດຊ່ວຍໃນການດຳເນີນ ງານທີ່ກ່າວມານີ້ໄດ້ຫລາຍຢ່າງ.

ຂໍ້ມູນເພີ່ມເຕີມກ່ຽວກັບການຮ້ອງທຸກຂອງບຸກຄົນແມ່ນສາມາດເບິ່ງໄດ້ທີ່ເອກະສານຊ້ອນທ້າຍຂອງ ບົດນີ້ ແລະ ບົດທີ VIII (ການຍື່ນຄຳຮ້ອງທຸກທີ່ກ່ຽວກັບການລະເມີດສິດທິມະນຸດ) ໃນຄູ່ມືນີ້.

**9. ການເຂົ້າຮ່ວມ ແລະ ການປະກອບສ່ວນໃນກອງປະຊຸມປະຈຳປີຂອງປະທານ ແລະ ບັນດາຄະນະກຳມາທິການຕ່າງໆ**

ກອງປະຊຸມດັ່ງກ່າວແມ່ນໃຫ້ພາກປະຊາສັງຄົມເຂົ້າໄດ້ແຕ່ເປັນພຽງຜູ້ສັງເກດການເທົ່ານັ້ນ.

ກອງປະຊຸມລະຫວ່າງຄະນະກຳມາທິການແມ່ນມີລະບຽບໃຫ້ NGOs ເຂົ້າຮ່ວມໄດ້ເຊິ່ງມັນຈະກ່ຽວຂ້ອງກັບເລື່ອງ ພາລະໜ້າທີ່, ຂະບວນການ ແລະ ວິທີການເຮັດວຽກທີ່ກ່ຽວຂ້ອງກັບສົນທິສັນຍາ.

## D. ເອກະສານຂໍ້ມູນຂອງສຳນັກງານຂ້າຫລວງໃຫຍ່

**ໃນໜ້າເວບໄຊ້ຂອງອົງກອນສິດທິມະນຸດແຫ່ງສຳນັກງານຂ້າຫລວງໃຫຍ່**

ຂໍ້ມູນ ແລະ ເອກະສານຕ່າງໆໃນເວບໄຊ້ທີ່ກ່ຽວຂ້ອງກັບອົງກອນສິດທິມະນຸດແມ່ນເປີດກ້ວາງໃຫ້ສາທາລະນະນຳໃຊ້ໄດ້. ແຕ່ລະອົງກອນສິດທິມະນຸດແມ່ນມີເວບໄຊ້ເປັນຂອງຕົນເອງທີ່ເຕັມໄປດ້ວຍຂໍ້ມູນຂ່າວສານທີ່ກ່ຽວກັບອົງກອນເອງ, ກ່ຽວກັບການໃຫ້ສັດຕະຍາບັນ, ກອງປະຊຸມທີ່ຜ່ານມາ ແລະ ທີ່ຈະມາເຖິງ, ວິທີການເຮັດວຽກ ແລະ ດ້ານອື່ນໆ.

ນອກນີ້ ຖານຂໍ້ມູນອົງກອນສິດທິມະນຸດໃນເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ຍັງໃຫ້ຄົນທົ່ວໄປເຂົ້າເຖິງໂດຍສະເພາະແມ່ນກ່ຽວກັບບັນດາອົງກອນສິດທິມະນຸດ, ເຊິ່ງລວມໄປເຖິງບົດລາຍງານຂອງລັດພາຄີ, ບົດສະຫລຸບການທົບທວນ, ຄຳແນະນຳທົ່ວໄປ ແລະ ເລື່ອງລາວການສື່ສານກັບສ່ວນບຸກົນ.

**ຂໍ້ມູນທົ່ວໄປຂອງສຳນັກງານຂ້າຫລວງໃຫຍ່**

ຂໍ້ມູນທົ່ວໄປນີ້ແມ່ນໄດ້ໃຫ້ຂໍ້ມູນກ່ຽວກັບສົນທິສັນຍາສິດທິມະນຸດສາກົນ ແລະ ອົງກອນສິດທິມະນຸດ. ຂໍ້ມູນທີ່ກ່ຽວຂ້ອງນີ້ແມ່ນໄດ້ຮັບການອັບເດດເປັນປະຈຳແລະສາມາດຕິດຕາມໄດ້ທີ່ເວບໄຊ້ຂອງສຳນັກງານຂ້າ ຫລວງໃຫຍ່.

**ແຜ່ນວີຊີດີຂອງອົງກອນສິດທິມະນຸດແຫ່ງສຳນັກງານຂ້າຫລວງໃຫຍ່ "ນຳເອົາສິດທິມະນຸດກັບບ້ານ"**

ສຳນັກງານຂ້າຫລວງໃຫຍ່ໄດ້ຜະລິດເຄື່ອງມືການຝຶກອົບຮົມກ່ຽວກັບວຽກງານຂອງອົງກອນສິດທິມະນຸດລົງໃສ່ໃນແຜ່ນວີຊີດີທີ່ໃສ່ຊື່ວ່າ "ອົງກອນສິດທິມະນຸດ: ນຳເອົາສິດທິມະນຸດກັບບ້ານ". ແຜ່ນວີຊີດີດັ່ງກ່າວແມ່ນສາມາດຂໍໄດ້ທີ່ໜ່ວຍ ງານຂໍ້ມູນຂ່າວສານ ແລະ ສຳນັກພິມແຫ່ງສຳນັກງານຂ້າຫລວງໃຫຍ່. ອີເມວ: publications@ohchr.org.

**ການເຂົ້າເຖິງຂໍ້ມູນໃນລະບົບອິນເຕີເນັດ**

ສາມອົງກອນສິດທິມະນຸດໄດ້ເຊື່ອມຕໍ່ການເຂົ້າເຖິງຂໍ້ມູນຂອງຕົນໃສ່ໃນເວບຂອງສຳນັກງານຂ້າຫລວງໃຫຍ່ຄື: ຄະນະກຳມາທິການຕ້ານການທໍລະມານ, ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ຍິງ, ແລະ ຄະນະກຳມາທິການເພື່ອສິດທິຂອງແຮງງານຕ່າງດ້າວ. ຂໍ້ມູນໃນລະບົບອິນເຕີເນັດນີ້ແມ່ນສາມາດຊອກຫາຂໍ້ມູນລາຍລະອຽດກ່ຽວກັບ ບັນດາບົດລາຍງານຂອງລັດພາຄີໄດ້, ເຂົ້າຫາບົດລາຍງານຂອງພາກປະຊາຊົນ, ເຂົ້າຫາຂໍ້ມູນທີ່ກ່ຽວຂ້ອງກັບບັນດາ ກອງປະຊຸມ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງໄດ້.

IV

ສຳລັບລະຫັດທີ່ໃຊ້ເຂົ້າຫາລະບົບຖານຂໍ້ມູນຂ້າງເທິງນີ້ແມ່ນສາມາດຂຽນແບບຟອມສະມັກອອນລາຍໃນເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ໃນໜ້າທີ່ກ່ຽວກັບສະພາສິດທິມະນຸດ. ໃນເວລາທີ່ຂຽນແບບຟອກສະມັກສຳເລັດແລເວ, ລະຫັດ ແລະ ຊື່ນຳໃຊ້ແມ່ນຈະຖືກສົ່ງໃຫ້ທາງອີເມວ.

**ດັດສະນີຂໍ້ມູນຂອງສິດທິມະນຸດສາກົນ**

ດັດສະນີຂໍ້ມູນນີ້ແມ່ນເປັນກົນໄກຂໍ້ມູນອອນລາຍທີ່ສ້າງຂື້ນມາເພື່ອອຳນວຍຄວາມສະດວກໃຫ້ແກ່ການຊອກຫາຂໍ້ມູນທາງເນັດທີ່ເປັນຂອງອົງກອນສິດທິມະນຸດ ແລະ ຂະບວນການດຳເນີນງານພິເສດຂອງສະພາສິດທິມະນຸດ. ເວບໄຊ້ໃໝ່ນີ້ (ມາສາມດເຂົ້າຜ່ານທາງເວບຂອງສຳນັກງານຂ້າຫລວງໃຫຍ່ໄດ້) ແມ່ນມີຂໍ້ມູນທຸກຢ່າງທີ່ກ່ຽວກັບບົດສະຫລຸບການທົບທວນທີ່ທາງອົງການສິດທິມະນຸດເປັນຜູ້ພິມອອກເຊິ່ງເລີ່ມມາຕັ້ງແຕ່ປີ 2000, ເອກະສານແມ່ນລວມມີທັງບົດສະຫລຸບ ແລະ ເອກະສານຄຳແນະນຳຂອງຂະບວນການພິເສດຂອງສະພາສິດທິມະນຸດທີ່ກ່ຽວກັບປະເທດໃດໜຶ່ງສະເພາະທີ່ ເລີ່ມມາແຕ່ປີ 2006. ອີກບໍ່ດົນດັດສະນີຂໍ້ມູນກໍ່ຈະມີ ແລະ ສາມາດເຂົ້າເຖິງຖານຂໍ້ມູນກ່ຽວກັບບັນດາເອກະສານ ຄຳແນະນຳທີ່ສ້າງຂື້ນໃນກອບຂອງກົນໄກການທົບທວນເປັນໄລຍະຂອງສະພາສິດທິມະນຸດ.

# ດັດສະນີຂໍ້ມູນ: ຖານຂໍ້ມູນຂອງອົງກອນສິດທິມະນຸດ

ໃນເມື່ອບັນດາຄະນະກຳມາທິການມີພາລະກິດທີ່ຄ້າຍຄືກັນ, ທັງຂັ້ນຕອນ ແລະ ການປະຕິບັດ, ແຕ່ວ່າລະອົງກອນກໍ່ມີລະບຽບ ການທີ່ຕ່າງກັນ. ຂໍ້ມູນຂ້າງລຸ່ມນີ້ແມ່ນໃຫ້ລາຍລະອຽດແບບພາບລວມຂອງແຕ່ລະອົງກອນ.

## ຄະນະກຳມາທິການສິດທິມະນຸດ

**ດຳເນີນການກວດກາ**

ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນ

**ສະມາຊິດ**

ມີຜູ້ຊ່ຽວຊານເອກະລາດ 18ທ່ານປະຈຳເຊິ່ງມີ ອາຍຸ ການ 4ປີ ແລະສາມາດຖືກເລືອກເຂົ້າມາໃໝ່ໄດ້ອີກ.

**ວຽກກອງປະຊຸມ**

ຄະນະກຳມາທິການຈະປະຊຸມກັນເປັນໄລຍະສາມອາທິດ ແລະຈັດຂື້ນສາມຄັ້ງຕໍ່ປີ, ປົກກະຕິແລ້ວແມ່ນຈະຈັດຢູ່ທີ່ສຳນັກ ງານທີ່ນະຄອນນິວຢອກໃນເດືອນມີນາ ແລະ ຈັດໃນ ເດືອນກໍລະ ກົດ ແລະ ໃນເດືອນຕຸລາ/ພະຈິກທີ່ສຳນັກງານໃນນະຄອນ ເຈນນີວາ.

**ລະບຽບການລາຍງານ**

ລັດພາຄີຈະຕ້ອງລາຍງານຄັ້ງແລກຫລັງຈາກເຂົ້າເປັນພາຄີໄດ້ ໜຶ່ງປີ ແລະ ຄັ້ງຕໍ່ໄປແມ່ນອີງຕາມການຮຽກ ຮ້ອງຂອງ ຄະນະກຳມາທິການ (ໃນລະຫວ່າງສາມ-ຫາ້ປີ). ຕາມປົກ ກະຕິແລ້ວຈະກຳນົດການລາຍງານຄັ້ງຕໍ່ໄປແມ່ນຢູ່ໃນບົດສະ ຫລຸບທົບທວນຄັ້ງທີ່ຜ່ານມາ.

**ການຊຸບຂໍ້ມູນສົ່ງ**

ອົງການ NGOs ແລະ ໜ່ວຍງານພາກປະຊາສັງຄົມອື່ນ ໆເຊັ່ນ: ສະຖາບັນການ ຄົ້ນຄ້ວາຫຼືການສຶກສາ, ແລະ ສະມາຄົມວິ ຊາຊີບຕ່າງໆອາດ ລາຍງານຂໍ້ມູນເປັນລາຍ ລັກອັກສອນໃຫ້ແກ່ ກອງເລຂາຂອງຄະນະກຳມາທິການສິດທິມະນຸດ. ການລາຍ ງານນີ້ແມ່ນສາມາດເຮັດໃນເວລາ ໃດກໍ່ໄດ້ແຕ່ວ່າຖ້າຈະໃຫ້ດີກໍ່ ແມ່ນຕ້ອງລາຍງານກ່ອນກອງປະຊຸມພິຈາລະນາທົບທວນບົດ ລາຍງານຂອງລັດພາຄີທີ່ຈະເລີ່ມໃນສອງອາທິດ ແລະ ກ່ອນທີກ ອາທິດຂອງກອງປະ ຊຸມໜ່ວນງານຮັບພິຊອບບົດລາຍງານ ລະຫວ່າງປະເທດ ທີ່ຈະເລີ່ມດຳເນີນການພິຈາລະນາບັນຊີລາຍ ການຂອງບັນຫາຕ່າງໆເພື່ອຈະໄດ້ທົວທວນໃນກອງປະຊຸມຄັ້ງຕໍ່ ໄປຂອງຄະນະກຳມາທິການ. ຂໍ້ມູນທັງໝົດແມ່ນ ຕ້ອງໄດ້ ຍື່ນເປັນເອກະ ສານອີເລັກໂຕຣນິກ ແລະ ເອກະ ສານພິມ (ຢ່າງໜ້ອຍແມ່ນ 25ຊຸດ) ສົ່ງໃຫ້ກອງເລຂາຂອງ ຄະນະກຳມາທິການສິດ ທິມະນຸດຕາມທີ່ຢູ່ລຸ່ມ.

**ການເຂົ້າຮ່ວມກອງປະຊຸມຄະນະກຳມາທິການ**

NGOs ແລະ ໜ່ວຍງານພາກປະຊາສັງຄົມອື່ນໆອາດ ເຂົ້າຮ່ວມກອງປະຊຸມໃນນາມເປັນຜູ້ສັງເກດການ. ກ່ອນ ອື່ນໝົດຕ້ອງ ຂຽນຄຳຮ້ອງຂໍເຂົ້າຮ້ວມແລ້ວສົ່ງໃຫ້ກອງເລ ຂາທີ່ກ່ຽວຂ້ອງຕາມທີ່ຢູ່ຂ້າງລຸ່ມ. ໃນມື້ທຳອິດຂອງກອງ ປະຊຸມທີ່ບົດລາຍງານຂອງລັດພາຄີຈະຖືກພິຈາລະນາ, ຄະນະກຳມາທິການຈະມີວາລະສ່ວນໃດໜຶ່ງໃຫ້ແກ່ພາກປະ ຊາສັງຄົມໂດຍສະເພາະແມ່ນ NGOs ເພື່ອລາຍງານປາກ ເປົ່າແບບຫຍໍ້ໆໃນທີ່ປະຊຸມລັບ.ໃນຊ່ວງພັກກິນເຂົ້າເຊົ້າ ແລະ ເຂົ້າທ່ຽງ ສ່ວນໃຫຍ່ແລ້ວແມ່ນຈະມີການຈັດກອງປະຊຸມ ນ້ອຍເພື່ອຮັບຟັງການລາຍງານຂໍ້ມູນໃໝ່ໆທີ່ກ່ຽວກັບປະເທດໃດໜຶ່ ງຈາກ NGOs ແລະ ພາກປະຊາສັງຄົມອື່ນໆ.

ໜ່ວຍງານທີ່ຮັບພິຊອບບົດລາຍງານຂອງລັດພາຄີຈະ ປະຊຸມກັນແບບສ່ວນຕົວໃນຊ່ວງກອງປະຊຸມຂອງຄະນະກຳມາທິກ ານກຳລັງດຳເນີນຢູ່ເພື່ອກະກຽມບັນດາບັນຊີລາຍ ການຂອງບັນຫາຕ່າງໆທີ່ກ່ຽວຂ້ອງກັບບົດລາຍງານຂອງ ລັດພາຄີທີ່ຈະໄດ້ນຳສະເໜີໃນກອງປະຊຸມຂອງຄະນະກຳມາທິກາ ນໃນຄັ້ງຕໍ່ໄປ. ສຸດທ້າຍ-ໜ່ວຍງານພາກປະຊາສັງຄົມ ແມ່ນ ສາມາດຈັດກອງປະຊຸມນ້ອງກັບຄະນະກຳມາທິການ ໄດ້.

**ການຮ້ອງທຸກຂອງບຸກຄົນ**

ການຮ້ອງທຸກທີ່ກຳນົດໃນອານຸສັນຍາສະບັບທຳອິດແມ່ນສາ ມາດສົ່ງໃຫ້ແກ່:

**ທີມງານຮັບຄຳຮ້ອງທຸກ**

Office of the United Nations High Commissioner for Human Rights

Palais des Nations,8–14, avenue de la Paix

CH–1211 Geneva 10 - Switzerland Fax: + 41 (0)22 917 90 22 (particularly for urgent complaints) E-mail: **tb-petitions@ohchr.org**

ລາຍລະອຽດການຕິດຕໍ່ກອງເລຂາ

Human Rights Committee

Office of the United Nations High Commissioner for Human Rights

Palais des Nations

8–14, avenue de la Paix

CH–1211 Geneva 10 - Switzerland

Fax: + 41 (0)22 917 90 29

Phone: +41 (0)22 917 93 32 or +41 (0)22 917 93 95

ເພື່ອສຶກສາເພີ່ມເຕີມກ່ຽວກັບຄະນະກຳມາທິການສິດທິມະນຸດແມ່ນສາມາດສຶກສາໄດ້ທີ່ເອກະສານຄວາມຮູ້ທົ່ວໄປເລກທີ 15 (**Rev.1**). ເພື່ອສຶກສາເພີ່ມເຕີມກ່ຽວກັບອານຸສັນຍາສະບັບ
ທຳອິດຂອງສົນທິສັນຍາແມ່ນສາມາດເຂົ້າເບິ່ງໃນເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ໃນໜ້າເວບຂອງອົງກອນສິດທິມະນຸດ.

ແບບຟອມການຮ້ອງທຸກແມ່ນເບິ່ງໄດ້ທີ່ບົດທີ VIII (ການຍື່ນຄຳຮ້ອງທຸກກ່ຽວກັບການລະເມີດສິດ) ໃນຄູ່ມືນີ້

## ຄະນະກຳມະທິການສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ

**ດຳເນີນການກວດກາ**

ສົນທິສັນຍາສາກົນວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ (ICESCR). ຂໍ້ສັງເກດຄືວ່າສະພາສິດທິມະນຸດໄດ້ຮັບຮອງອານຸສັນຍາເພີ່ມເຕີມແກ່ສົນທິສັນຍານີ້ໃນເດືອນມິຖຸນາ 2008.

**ສະມາຊິກ**

ມີຜູ້ຊ່ຽວຊານເອກະລາດ 18ທ່ານປະຈຳເຊິ່ງມີ ອາຍຸ ການ 4ປີ ແລະ ສາມາດຖືກເລືອກເຂົ້າມາໃໝ່ໄດ້ອີກ.

**ວຽກກອງປະຊຸມ**

ຄະນະກຳມາທິການຈະປະຊຸມກັນສອງຄັ້ງຕໍ່ປີ, ແຕ່ລະຄັ້ງຈະໃຊ້ເວລາຢູ່ສາມອາທິດ, ໃນຈຳນວນສາມອາທິດນີ້ແມ່ນຈະໃຊ້ເວລາໜຶ່ງອາທິດປະຊຸມຮ່ວມກັບໜ່ວຍງານກະກຽມກອງປະຊຸມ, ຕາມປົກກະຕິແລ້ວ ກອງປະຊຸມແມ່ນຈັດໃນ ເດືອນພຶດສະພາ ແລະ ພະຈິດຢູ່ທີ່ສຳນັກງານ ສປຊ ປະຈຳນະຄອນເຈນນີວາ.

**ລະບຽບການລາຍງານ**

ເຖິງວ່າສົນທິສັນຍາບໍ່ໄດ້ກຳນົດໄລຍະຂອງການລາຍງານ, ແຕ່ມັນກໍ່ເປັນທຳນຽມທີ່ເຄີຍປະຕິບັດກັນມາວ່າລັດພາຄີຕ້ອງສົ່ງບົດລາຍງານສະບັບທຳອິດພາຍໃນສອງປີຫຼັງຈາກໄດ້ເປັນພາຄີຂອງສົນທິສັນຍາແລ້ວ, ຫຼັງຈາກນັ້ນກໍ່ໃຫ້ສົ່ງບົດລາຍງານໃນທຸກໆຫ້າປີ, ຫຼື ອີງຕາມການຮຽກຮ້ອງຂອງຄະນະກຳມາທິການ.

**ການສົ່ງຂໍ້ມູນທີ່ເປັນລາຍລັກອັກສອນ**

NGOs ແລະ ໜ່ວຍງານພາກປະຊາສັງຄົມອື່ນໆເຊັ່ນ: ມູນລະນິທິການຄົ້ນຄ້ວ, ສະມາຄົມວິຊາຊີບ, ແລະ ກຸ່ມຄົນພື້ນເມືອງອາດຈະສົ່ງຂໍ້ມູນຂ່າວສານເປັນລາຍລັກອັກສອນໃຫ້ແກ່ກອງເລຂາຂອງກອງປະຊຸມທົບທວນບົດລາຍງານ ແລະ ກອງປະຊຸມກະກຽມ. ຂໍ້ມູນນັ້ນອາດສົ່ງໃນເວລາໃດກໍ່ໄດ້ ແຕ່ທາງທີ່ດີແມ່ນຄວນສົ່ງເປັນທັງເອກະສານພິມ ແລະ ພາຍອີເລັກໂຕນິກຕາມທີ່ຢູ່ຂ້າງລຸ່ມກ່ອນກອງປະຊຸມຈະເລີ່ມໃນໜຶ່ງອາທິດ. ເອກະສານຄວນສົ່ງໃຫ້ກອງປະຊຸມທົບທວນບົດລາຍງານຢ່າງໜ້ອຍ 25 ຊຸດ ແລະ 10 ຊຸດສຳລັບກອງປະຊຸມກະກຽມ.

ແນວໃດກໍ່ດີ ກອງເລຂາແມ່ນຈະເຮັດເອກະສານຂໍ້ມູນທີ່ໄດ້ຈາກພາກປະຊາສັງຄົມນັ້ນໃຫ້ເປັນເອກະສານ

ທາງການເພື່ອໃຫ້ເປັນເອກະສານທີ່ສາມາດແຈກຢາຍໃຫ້ບັນດາຜູ້ແທນຈາກລັດພາຄີເວັ້ນເສຍແຕ່ຂໍ້ມູນດັ່ງກ່າວນັ້ນໄດ້ ຖືກຂໍໃຫ້ "ປິດລັບ".

ອົງການ NGOs ໃນຖານະເປັນທີ່ປຶກສາໃຫ້ແກ່ສະພາ ເສດຖະກິດ ແລະ ສັງຄົມ (ECOSOC) (ຫຼືວ່າເປັນຄູ່ຮ່ວມງານ) ອາດຈະສົ່ງບົດຄວາມໃຫ້ແກ່ກອງເລຂາເພື່ອດຳເນີນການຈັດພິມເປັນພາສາທາງການຂອງຄະນະກຳມາທິການໃຫ້ແກ່ທີ່ປະຊຸມທົບທວນບົດລາຍງານ. ບົດຄວາມຂອງ NGOs ນັ້ນຈະຕ້ອງຕົງປະເດັນກ່ຽວກັບມາດຕາໃດໜຶ່ງ ຂອງສົນທິສັນຍາ, ເນັ້ນບັນຫາທີ່ເຫັນວ່າມັນມີຄວາມສຳຄັນ, ແລະບົດຄວາມຕ້ອງສົ່ງມາຮອດກອງເລຂາກ່ອນກອງປະຊຸມທົບທວນຈະເປີດເປັນໃນເວລາສາມເດືອນຂ້າງໜ້າ.

### ການເຂົ້າຮ່ວມກອງປະຊຸມຂອງຄະນະກຳມາທິການ

ພາກປະຊາສັງຄົມອາດເຂົ້າຮ່ວມກອງປະຊຸມໄດ້ໃນຖານະເປັນຜູ້ສັງເກດການ. ການຂໍເຂົ້າຮ່ວມນັ້ນຕ້ອງໄດ້ຂຽນຄຳຮ້ອງຂໍແລ້ວສົ່ງໃຫ້ກອງເລຂາທີ່ກ່ຽວຂ້ອງຮັບພິຈາລະນາ. ອົງການຈັດຕັ້ງສາກົນພາກເອກະຊົນ, ສະຖາບັນສິດທິມະນຸດແຫ່ງຊາດ ແລະ ຊຽວຊານຕ່າງໆອາດໄດ້ຮັບອານຸຍາດໃຫ້ກ່າວສະເໜີເລື່ອງໃດໜຶ່ງໃນຕອນເຊົ້າມື້ທຳອິດຂອງກອງປະຊຸມໜ່ວຍງານກະກຽມ, ໂດຍທົ່ວໄປແລ້ວຈະຖືກໃນວັນຈັນຕັ້ງ ແຕ່ 10:30 – 13:00, ຫຼືວ່າຈະແມ່ນຕອນທີ່ເປີດການຮັບຟັງການລາຍງານຈາກພາກປະຊາສັງຄົມໃນມື້ທຳອິດຂອງກອງປະຊຸມທົບທວນແຕ່ 15:00-16:00, ເວລາທີ່ໃຫ້ກ່າວສະເໜີແມ່ນ 15ນາທີ.

ໃນແຕ່ລະກອງປະຊຸມ ຄະນະກຳມາທິການຈະໃຊ້ເວລາໜຶ່ງ ມື້ໃນວັນຈັນຂອງອາທິດທີສາມຂອງກອງປະຊຸມເພື່ອປຶກສາຫາລືບັນຫາທີ່ສຳຄັນສະເພາະກ່ຽວກັບສົນທິສັນຍາ. ຜູ້ເຂົ້າຮ່ວມທີ່ຊຳນານງານສະເພາະດ້ານຈາກອົງການຈັດຕັ້ງສາກົນພາກເອກະຊົນ ແລະ ພາກປະຊາສັງຄົມຕ່າງໆເຊິ່ງລວມມີນັກວິຊາການທາງການສຶກສາ ແລະການຄົ້ນຄົ້ວ ແລະ ສະຊາຊີກຈາກກຸ່ມວິຊາຊີບຕ່າງໆແມ່ນອາດຈະສົ່ງເອກະສານທີ່ສຳຄັນ ຫຼື ເຂົ້າຮ່ວມກອງປະຊຸມໃນມື້ທີ່ເປີດເພື່ອການສົນທະນາ.

**ລາຍລະອຽດການຕິດຕໍ່ຫາກອງເລຂາ ຄະນະກຳມາທິການສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ**

c/o Office of the United Nations
High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 29

ຂໍ້ມູນເພີ່ມເຕີມກ່ຽວກັບຄະນະກຳມາທິການສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳແມ່ນສາມາດສຶກສາໄດ້ຕາມເອກະສານຂໍ້ມູນທົ່ວໄປເລກທີ 16 (rev. 1).

ຂໍ້ມູນເພີ່ມເຕີມກ່ຽວກັບການຮ່ວມງານກັບຄະນະກຳມາທິການແມ່ນສາມາດເບິ່ງໄດ້ທີ່ເວບໄຊ້ຂອງສຳນັກງານຂ້າຫລວງໃຫຍ່ໃນໜ້າອົງກອນສິດທິມະນຸດ.

## ຄະນະກຳມາທິການຕ້າການຈຳແນກເຊື້ອຊາດ

***ເຮັດໜ້າທີ່ກວດກາ***

ສົນທິສັນຍາສາກົນວ່າດ້ວຍການລົບລ້າງການຈຳແນກເຊື້ອຊາດໃນທຸກຮູບແບບ (ICERD).

**ສະມາຊິກ**

ມີຜູ້ຊ່ຽວຊານເອກະລາດ 18ທ່ານປະຈຳເຊິ່ງມີ ອາຍຸການ 4ປີ ແລະສາມາດຖືກເລືອກເຂົ້າມາໃໝ່ໄດ້ອີກ.

**ວຽກກອງປະຊຸມ**

ຄະນະກຳມາທິການຈະປະຊຸມກັນທີ່ສຳນັກງານ ສປຊ ໃນນະຄອນເຈນນິວາ ເຊິ່ງຈັດກອງປະຊຸມປີລະສອງຄັ້ງ ແລະ ໄຊ້ເວລາປະຊຸມກັນແມ່ນສາມອາທິດ.

**ລະບຽບການລາຍງານ**

ລັດພາຄີຂອງສົນທິສັນຍາຕ້ອງລາຍງານການຈັດຕັ້ງປະຕິບັດສົນທິສັນຍາພາຍຫຼັງທີ່ເຂົ້າເປັນພາຄີແລ້ວໜຶ່ງປີ ແລະ ການລາຍງານຄັ້ງຕໍ່ໄປແມ່ນທຸກໆສອງປີ. ຢ່າງໃດກໍ່ດີ, ຕາມປົກກະຕິແລ້ວໃນວັກສຸດທ້າຍຂອງບົດສະຫລຸບທົບທວນກໍ່ໄດ້ກຳນົກແຈ້ງກ່ຽວກັບວາລະການລາຍງານໃນຄັ້ງຕໍ່ໄປ.

**ການລາຍງານທີ່ເປັນລາຍລັກອັກສອນ**

ອົງການຈັດຕັ້ງສາກົນພາກເອກະຊົນ ແລະ ພາກປະຊາສັງຄົມຕ່າງໆເຊັ່ນ: ສະມາຄົມວິຊາຊີບ, ສະຖາບັນການສຶກສາ, ກຸ່ມຄົນພື້ນເມືອງ ແລະ ສະຖາບັນສະເພາະດ້ານຕ່າງໆທີ່ປະຕິບັດໜ້າທີ່ໃດໜຶ່ງທີ່ກ່ຽວຂ້ອງກັບວຽກງານຂອງຄະນະກຳມາທິການ ແມ່ນອາດຈະສາມາດສົ່ງຂໍ້ມູນທີ່ເປັນລາຍລັກອັກສອນຫຼືລາຍງານໃຫ້ແກ່ກອງເລຂາທີ່ກ່ຽວຂ້ອງໄດ້. ມັນຈະເປັນການດີຖ້າຫາກວ່າການລາຍງານດັ່ງກ່າວສາມາດສົ່ງມາກ່ອນສອງເດືອນກ່ອນທີ່ຈະມີກອງປະຊຸມທົບທວນເປີດຂື້ນ.

ບົດລາຍງານທີ່ວ່ານີ້ຕ້ອງເຮັດເປັນທັງຟາຍເອກະສານພີມ ແລະ ຟາຍອີເລກໂຕນິກແລ້ວສົ່ງໃຫ້ກອງເລຂາຕາມທີ່ຢູ່ຂ້າງລຸມໃນຈຳນວນ 37 ຊຸດຢ່າງຕ່ຳ. ໜ່ວຍງານພາກປະຊາສັງຄົມໃດທີ່ມີຄວາມຫຍຸ້ງຍາກກ່ຽວກັບລະບຽບການທີ່ກ່າວມານີ້ແມ່ນສາມາດຂໍຄວາມຊ່ວຍເຫຼືອໄດ້ຈາກໜ່ວຍງານບໍລິການຂໍ້ມູນກ່ຽວກັບການຕ້ານການຈຳແນກເຊື້ອຊາດ (ARIS), ຫຼືຂໍນຳອົງການຈັດຕັ້ງສາກົນພາກເອກະຊົນທີ່ປະຈຳໃນນະຄອນເຈນນິວາທີ່ເຮັດໜ້າທີ່ຊ່ວຍສົ່ງຂໍ້ມູນເຂົ້າ ແລະ ອອກໃຫ້ແກ່ຄະນະກຳມາທິການ; ໜ່ວຍງານ ARIS ໃຫ້ການບໍລິ ການແກ່ NGOs ພາຍໃນ ແລະ ສາກົນ, ໜ່ວຍງານສິດ ທິມະນຸດ ແລະ ບຸກຄົນຕ່າງໆ.

ຄະນະກຳມາທິການຍັງຮັບເອົາຄຳຄິດເຫັນທີ່ບໍ່ແມ່ນລັກສະນະເປັນບົດລາຍງານ, ແຕ່ເປັນລັກສະນະຄຳເຫັນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດສົນທິສັນຍາຂອງລັດພາຄີທີ່ມີຄວາມຊັກຊ້າໃນການສົ່ງບົດລາຍງານເປັນໄລຍະ ເວລາ 5ປີ, ແລະ ຂໍ້ກຳນົດໃນມາດຕະການແຈ້ງເຕືອນ ແລະ ດຳເນີນການແບບຮີບດ່ວນ. ໜ່ວຍງານພາກປະຊາສັງຄົມໂດຍສະເພາະແມ່ນ NGOs ອາດຈະສົ່ງຂໍ້ມູນຫາຄະນະກຳມາທິການເພື່ອຂໍໃຫ້ດຳເນີນການແກ້ໄຂສະພາບການໃດໜຶ່ງທີ່ເຫັນວ່າມັນຮີບດ່ວນ ແລະ ຢູ່ພາຍໄຕ້ຂະບວນການດຳເນີນງານຂ້າງເທິງນັ້ນ.

**ການເຂົ້າຮ່ວມກອງປະຊຸມຂອງຄະນະດຳມາທິການ**

ໜ່ວຍງານພາກປະຊາສັງຄົມອາດເຂົ້າຮ່ວມໄດ້ແຕ່ຈະຢູ່ໃນຖານະເປັນຜູ້ສັງເກດການ. ການຂໍເຂົ້າຮ່ວມນັ້ນຕ້ອງໄດ້ຂຽນຄຳຮ້ອງຂໍແລ້ວສົ່ງໄປໃຫ້ກອງເລຂາທີ່ກ່ຽວຂ້ອງຕາມທີ່ຢູ່ຂ້າງລຸ່ມເພື່ອຮັບພິຈາລະນາ. ຄະນະກຳມາທິການແມ່ນບໍ່ໄດ້ໃຫ້ການພົບປະກັບໜ່ວຍງານພາກປະຊາສັງຄົມ ຫຼື NGOs ໃນເວລາທີ່ກຳລັງດຳເນີນກອງປະຊຸມທີ່ເປັນທາງການນັ້ນແຕ່ຢ່າງໃດ, ແຕ່ພາກປະຊາສັງຄົມຍັງສາມາດຂໍຈັດກອງປະຊຸມແບບບໍ່ເປັນທາງການກັບຄະນະກຳມາທິການໄດ້ໃນຊ່ວງເວລາທີ່ພັກກິນເຂົ້າທ່ຽງໃນເວລາປະມານ 13:45-14:45. ການຂໍຈັດກອງປະຊຸມທີ່ວ່ານີແມ່ນຕ້ອງໄດ້ຂໍຄວາມຊ່ວຍເຫລືອຈາກກອງເລຂາໃນການຈອງຫ້ອງປະຊຸມ, ຫຼືອາດຂໍຄວາມຊ່ວຍເຫລືອຈາກ ARIS ໃນການຊ່ວຍຈັດກອງປະຊຸມ.

ຄະນະກຳມາທິການຍັງຈັດໃຫ້ມີການສົນທະນາບັນຫາທີ່ສຳຄັນຕາມປົກກະຕິທີ່ມັນກ່ຽວຂ້ອງກັບການຈຳແນກເຊື້ອຊາດທີ່ມີການເຊີນພາກປະຊາສັງຄົມເຂົ້າຮ່ວມເຊັ່ນ:

ນັກວິຊາການດ້ານການສຶກສາ, ຜູ້ຊ່ຽວຊານ, NGOs ແລະ ສະຖາບັນຊໍານານງານສະເພາະ. ອົງການເຫລົ່ານີ້ແມ່ນສາມາດສະແດງຄໍາຄິດເຫັນກ່ຽວກັບບັນຫາທີ່ກ່ຽວຂ້ອງກັບທີ່ປະຊຸມໄດ້.

**ການຍື່ນຄໍາຮ້ອງທຸກຂອງບຸກຄົນ**

ພາຍໄຕ້มາດຕາທີ 14 ຂອງສົນທິສັນຍາບຸກຄົນສາມາດຍື່ນຄໍາຮ້ອງທຸກໄປທີ່:

**Petitions Team**
Office of the United Nations
High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland Fax:
+41 (0)22 917 90 22 (particularly for urgent complaints)
E-mail: tb-petitions@ohchr.org

**ລາຍລະອຽດການຕິດຕໍ່ກັບກອງເລຂາ ຄະນະກໍາມາທິການລົບລ້າງການຈໍາແນກເຊື້ອຊາດ**
c/o Office of the United Nations
High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 29

ຂໍ້ມູນເພີ່ມເຕີມກ່ຽວກັບ ARIS ແມ່ນສາມາດເອົາໄດທີ່:
Website: http://www.antiracism-info.org.[23]
E-mail: centre-docs@antiracism-info.org

ຂໍ້ມູນເພີ່ມເຕີມກ່ຽວກັບຄະນະກໍາມາທິການຕ້ານການຈໍາແນກເຊື້ອຊາດແມ່ນສາມາດສຶກສາໄດ້ທີ່ເອກະສານຄວາມຮູ້ທົ່ວໄປເລກທີ 12.

ແບບຟອມການຮ້ອງທຸກແມ່ນເອົາໄດ້ທີ່ເອກະສານຊ້ອນທ້າຍຂອງບົດນີ້ (ການຍື່ນຄໍາຮ້ອງທຸກກ່ຽວກັບການຖືກລະເມີດສິດທິມະນຸດ) ໃນປຶ້ມຄູ່ມືນີ້.

23 ສໍານັກງານ OHCHR ຈະບໍ່ຮັບພິຊອບໃດໆຕໍ່ຂໍ້ມູນນອກເວບໄຊ້ຂອງສໍານັກງານ ແລະສໍານັກງານເອງກໍ່ບໍ່ໄດ້ມີການເຊື່ອມຕໍ່ໃດໆກັບເວບໄຊ້ອື່ນໆທີ່ບໍ່ກ່ຽວຂ້ອງ.

## *ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ຍິງ*

*ວຽກກອດກາ*

ສົນທິສັນຍາສາກົນວ່າດ້ວຍການລົບລ້າງທຸກຮູບແບບການເລືອກປະຕິບັດຕໍ່ແມ່ຍິງ(CEDAW) ແລະ ອານຸສັນຍາທີ່ ກ່ຽວຂ້ອງ.

**ສະມາຊິກ**

ມີຜູ້ຊ່ຽວຊານເອກະລາດ 23 ທ່ານປະຈຳເຊິ່ງມີອາຍຸການ 4ປີ ແລະສາມາດຖືກເລືອກເຂົ້າມາໃໝ່ໄດ້ອີກ.

**ວຽກກອງປະຊຸມ**

ຄະນະກຳມາທິການຈະປະຊຸມກັນປີລະສອງຫາສາມເທື່ອທີ່ສຳນັກງານ ສປຊ ໃນນະຄອນເຈນນີວາ ແລະ ນິວຢອກ, ແລະໄຊ້ເວລາປະຊຸມກັນແມ່ນສອງອາທິດຕໍ່ເທື່ອ ແຕ່ສ່ວນ ຫລາຍແລ້ວແມ່ນຈະມີກອງປະຊຸມຄະນະກະກຽມກ່ອນໜຶ່ງອາທິດ.

**ລະບຽບການລາຍງານ**

ລັດພາຄີຂອງສົນທິສັນຍາຕ້ອງລາຍງານການຈັດຕັ້ງປະຕິບັດສົນທິສັນຍາຂອງພາຍຫຼັງທີ່ເຂົ້າເປັນພາຄີແລ້ວໜຶ່ງປີ ແລະ ການລາຍງານຄັ້ງຕໍ່ໄປແມ່ນ ທຸກໆສີ່ປີ ຫຼື ຕາມການຮຽກຮ້ອງຂອງຄະນະກຳມາທິການ.

**ການສົ່ງຂໍ້ມູນທີ່ເປັນລາຍລັກອັກສອນ**

NGOs ແລະ ໜ່ວຍງານພາກປະຊາສັງຄົມເຊັ່ນ: ກຸ່ມແມ່ ຍິງ, ອົງການຈັດຕັ້ງທາງສາດສະໜາ, ຜູ້ຊ່ຽວ ຊານອິດສະ ຫລະ ແລະ ສະມາຊິກລັດຖະສະພາແມ່ນສາມາດສົ່ງຫຼືລາຍງານຂໍ້ມູນໃຫ້ແກ່ກອງເລຂາໄດ້. ສຳຄັນທີ່ສຸດແມ່ນຕ້ອງສົ່ງກ່ອນສອງອາທິດກ່ອນທີ່ກອງປະຊຸມກະກຽມຈະເປີດ ຫຼືໃຫ້ສົ່ງກ່ອນສອງເດືອນກ່ອນກອງປະຊຸມທົບທວນຈະເປີດ. ບົດລາຍງານທີ່ວ່ານີ້ຕ້ອງເຮັດເປັນທັງຝາຍເອກະສານພິມ ແລະ ຟາຍອີເລກໂຕນິກແລ້ວສົ່ງໃຫ້ກອງເລຂາ ຕາມທີ່ຢູ່ຂ້າງລຸມໃນຈຳນວນ 35 ຊຸດຢ່າງຕ່ຳ. NGOs ແລະ ພາກປະຊາສັງຄົມຕ່າງໆເຊັ່ນ: ສະຖາບັນການສຶກສາແມ່ນອາດເລືອກການສົ່ງຂໍ້ມູນຂອງຕົນໄປຫາອົງການປົກປ້ອງສິດທິຂອງແມ່ຍິງສາກົນແຫ່ງອາຊີປາຊີຟິກ (IWRAW-AP), ອົງການ NGO ຊຳນານງານສະເພາະທີ່ເຮັດວຽກໃນການສົ່ງຂໍ້ມູນເຂົ້າອອກໃຫ້ແກ່ຄະນະກຳມາທິການ.[24]

**ການເຂົ້າຮ່ວມກອງປະຊຸມຂອງຄະນະກຳມາທິການ**

ພາກປະຊາສັງຄົມອາດສາມາດເຂົ້າຮ່ວມໄດ້ແຕ່ຈະຢູ່ໃນຖານະເປັນຜູ້ສັງເກດການເທົ່ານັ້ນ. ການຂໍເຂົ້າຮ່ວມນັ້ນຕ້ອງໄດ້ຂຽນຄຳຮ້ອງຂໍແລ້ວສົ່ງໄປໃຫ້ກອງເລຂາທີ່ກ່ຽວຂ້ອງຕາມທີ່ຢູ່ຂ້າງລຸ່ມເພື່ອຮັບພິຈາລະນາ. ພາກປະຊາສັງຄົມໂດຍສະເພາະແມ່ນ NGOs ແມ່ນສາມາດລາຍງານປາກເປົ່າແກ່ໜ່ວຍງານກະກຽມກອງປະຊຸມໄດ້ (ປົກກະຕິແລ້ວແມ່ນໃນຕອນເຊົ້າຂອງກອງ ປະຊຸມມື້ທຳອິດ). ໜ່ວຍງານກະກຽມກອງປະຊຸມແມ່ນຈະໄດ້ປະຊຸມກັນໃນໄລຍະທ້າຍຂອງກອງປະຊຸມທົບທວນກ່ອນທີ່ບົດລາຍງານຂອງລັດພາຄີຈະຖືກໄຕ່ສວນຈົບໝົດ. NGOs ອາດຈະໄດ້ຮັບອານຸຍາດໃຫ້ລາຍງາຍປາກເປົ່າແກ່ຄະນະກຳມາທິການໃນມື້ທຳອິດຂອງກອງປະຊຸມໃນແຕ່ລະອາທິດ. ການຂໍຈັດກອງປະຊຸມແບບບໍ່ເປັນທາງການກັບຄະນະກຳມາທິການແມ່ນສາມາດເຮັດໄດ້ພຽງແຕ່ຕ້ອງປະສານງານກັບກອງເລຂາຕາມທີ່ຢູ່ຂ້າງລຸ່ມນີ້ເສຍກ່ອນ.

**ການຮ້ອງທຸກຂອງບຸກຄົນ**

ການຮ້ອງທຸກທີ່ຢູ່ພາຍໄຕ້ອານຸສັນຍາສາມາດສົ່ງໄປຫາ:

Petitions Team
Office of the United Nations
High Commissioner for Human Rights
Palais des Nations, 8–14, avenue de la Paix,
CH–1211 Geneva 10 - Switzerland
Fax: +41 (0)22 917 90 22 (ກໍລະນີຮີບດ່ວນ)
E-mail: tb-petitions@ohchr.org

24. ສຳນັກງານ OHCHR ຈະບໍ່ຮັບພິຊອບໃດໆຕໍ່ຂໍ້ມູນນອກເວບໄຊ້ຂອງສຳນັກງານ ແລະສຳນັກງານເອງກໍ່ບໍ່ໄດ້ມີການເຊື່ອມຕໍ່ໃດໆກັບເວບໄຊ້ອື່ນໆທີ່ບໍ່ກ່ຽວຂ້ອງ.

**ລະບຽບການຮ້ອງທຸກ**

ລາຍລະອຽດຂອງອານຸສັນຍາຂອງສົນທິສັນຍາແມ່ນສາມາດເບິ່ງໄດ້ທີ່ບົດທີ VIII ( ການຍື່ນຄຳຮ້ອງທຸກກ່ຽວກັບການຖືກລະເມີດສິດທິ) ໃນປຶ້ມຄູ່ມືນີ້. ແບບຟອມການສື່ສານສາມາດເອົາໄດ້ທີ່ລະບົບອອນລາຍໃນເວບໄຊ້ຂອງພະແນກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງທີ່ເປັນພາສາທາງການຂອງ ສປຊ.

**ການສອບສວນທີ່ປິດລັບ**

ພາກປະຊາສັງຄົມໂດຍສະເພາະແມ່ນ NGOs ອາດສາມາດສົ່ງຂໍ້ມູນທີ່ເປັນລາຍລັກອັກສອນກ່ຽວກັບການລະເມີດສົນທິສັນຍາຢ່າງຮ້າຍແຮງ ແລະ ເປັນລະບົບໃຫ້ແກ່ກອງເລຂາໄດ້. ການລາຍງານນັ້ນຕ້ອງເຊື່ອຖືໄດ້ ແລະ ມີຫຼັກຖານວ່າລັດພາຄີນັ້ນໄດ້ລະເມີດໃນພາກສ່ວນໃດຂອງສົນທິສັນຍາ.

**ລາຍລະອຽດຕິດຕໍ່ຫາກອງເລຂາ**

**ຄະນະກຳມາທິການຕ້ານການເລືອກປະຕິບັດຕໍ່ແມ່ຍິງ**

c/o Office of the United Nations High Commissioner for Human Rights

Palais des Nations

8–14, avenue de la Paix

CH–1211 Geneva 10 - Switzerland

Fax: +41 (0)22 917 90 29

E-mail: cedaw@ohchr.org

ຂໍ້ມູນເພີ່ມເຕີມກ່ຽວກັບຄະນະກຳມາທິການສາມາດເອົາໄດທີ່ເອກະສານຄວາມຮູ້ທົ່ວໄປເລກທີ 22 ແລະ 7. ສຳລັບລະບຽບການຂັ້ນຕອນກ່ຽວກັບການຂຽນບົດລາຍງານໃຫ້ແກ່ຄະນະກຳມາທິການແມ່ນສາມາດເບິ່ງໄດ້ໃນເວບໄຊ້ຂອງ **IWRAW-AP.**

## ຄະນະກຳມາທິການຕ້ານການທໍລະມານ

*ວຽກງານກອດກາ*

ສົນທິສັນຍາສາກົນວ່າດ້ວຍການຕ້ານການທໍລະມານ ແລະ ການປະຕິບັດ ຫຼື ການລົງໂທດອື່ນໆທີ່ເປັນການທາລຸນ, ໄຮ້ມະນຸດສະທຳ ຫຼື ເຮັດໃຫ້ເຊື່ອມເສຍກຽດສັກສີ (CAT).

**ສະມາຊິກ**

ມີຜູ້ຊ່ຽວຊານເອກະລາດ 10 ທ່ານປະຈຳເຊິ່ງມີ ອາຍຸ ການ 4ປີ ແລະສາມາດຖືກເລືອກເຂົ້າມາໃໝ່ໄດ້ອີກ.

**ວຽກກອງປະຊຸມ**

ຄະນະກຳມາທິການຈະປະຊຸມກັນປີລະສອງເທື່ອທີ່ສຳນັກງານ ສປຊ ໃນນະຄອນເຈນີວາ (ໃຊ້ເວລາປະຊຸມກັນແມ່ນສາມອາທິດໃນລະຫວ່າງເດືອນພຶດສະພາ ແລະ ສອງອາທິດໃນເດືອນພະຈິກ) ແລະຈະມີກອງປະຊຸມຄະນະກະກຽມໜຶ່ງອາທິດ.

**ລະບຽບການລາຍງານ**

ລັດພາຄີຂອງສົນທິສັນຍາຕ້ອງລາຍງານການຈັດຕັ້ງປະຕິບັດສົນທິສັນຍາພາຍຫຼັງທີ່ເຂົ້າເປັນພາຄີແລ້ວໜຶ່ງປີ ແລະ ການລາຍງານຄັ້ງຕໍ່ໄປແມ່ນທຸກໆສີ່ປີ

**ການສົ່ງຂໍ້ມູນທີ່ເປັນລາຍລັກອັກສອນ**

NGOs ແລະ ໜ່ວຍງານພາກປະຊາສັງຄົມເຊັ່ນ: ກຸ່ມຜູ້ເຄາະຮ້າຍ, ອົງການຈັດຕັ້ງທາງສາດສະໜາ, ຕົວແທນຂອງສະຫະພັນກຳມະບານ, ແລະ ກຸ່ມວິຊາຊີບຕ່າງໆແມ່ນສາມາດສົ່ງຫຼືລາຍງານຂໍ້ມູນໃຫ້ແກ່ກອງເລຂາໄດ້. ການສົ່ງບົດລາຍງານນັ້ນແມ່ນຄວນ ສົ່ງກ່ອນກອງປະຊຸມທົບທວນຈະເລີ່ມໃນ 6ອາທິດ. ຂໍ້ມູນທີ່ຈະປ້ອນໃສ່ບັນຊີລາຍການຕ່າງໆແມ່ນຄວນສົ່ງກ່ອນສາມເດືອນກ່ອນທີ່ບັນຊີລາຍການທີ່ວ່ານັ້ນຈະຖືກຮັບຮອງເອົາ. ບົດລາຍງານທີ່ວ່ານີ້ຕ້ອງເຮັດເປັນທັງຝາຍ ເອກະສານພິມ ແລະ ຟາຍອີເລກໂຕນິກແລ້ວສົ່ງໃຫ້ກອງເລຂາ ຕາມທີ່ຢູ່ຂ້າງລຸມໃນຈຳນວນ 15 ຊຸດຢ່າງຕໍ່າ.

ແນວໃດກໍ່ດີ ກອງເລຂາແມ່ນຈະເຮັດເອກະສານຂໍ້ມູນທີ່ໄດ້ຈາກພາກປະຊາສັງຄົມນັ້ນໃຫ້ເປັນເອກະສານທາງການເພື່ອໃຫ້ເປັນເອກະສານທີ່ສາມາດແຈກຢາຍໃຫ້ບັນດາຜູ້ແທນຈາກລັດພາຄີເວັ້ນເສຍແຕ່ຂໍ້ມູນດັ່ງກ່າວນັ້ນໄດ້ຖືກຂໍໃຫ້ "ປິດລັບ".

**ການເຂົ້າຮ່ວມກອງປະຊຸມຂອງຄະນະກຳມາທິການ**

ພາກປະຊາສັງຄົມອາດມາສາມດເຂົ້າຮ່ວມໄດ້ແຕ່ຈະຢູ່ໃນຖານະເປັນຜູ້ສັງເກດການເທົ່ານັ້ນ. ການຂໍເຂົ້າຮ່ວມນັ້ນຕ້ອງໄດ້ຂຽນຄຳຮ້ອງຂໍແລ້ວສົ່ງໄປໃຫ້ກອງເລຂາທີ່ກ່ຽວຂ້ອງຕາມທີ່ຢູ່ຂ້າງລຸ່ມເພື່ອຮັບພິຈາລະນາ. ພາກປະຊາສັງຄົມໂດຍສະເພາະແມ່ນ NGOs ແມ່ນສາມາດລາຍງານປາກເປົ່າແກ່ໜ່ວຍງານກະກຽມກອງປະຊຸມໄດ້. ການເຂົ້າຮ່ວມກອງປະຊຸມໄລຍະສັ້ນຂອງຜູ້ທີ່ຖືກເຄາະຮ້າຍປົກກະຕິແລ້ວແມ່ນໄດ້ຮັບການສະໜັບສະໜູນຈາກ NGOs . ກອງປະຊຸມທີ່ວ່ານີ້ແມ່ນລົງເລິກໃນປະ ເທດໃດໜຶ່ງສະເພາະ ແລະ ສ່ວນຫລາຍຈະຈັດໃນຊ່ວງ 5-6 ໂມງແລງໃນມື້ກ່ອນທີ່ການສົນທະນາລະຫວ່າງລັດພາຄີ ແລະ ຄະນະກຳມາທິການຈະໄດ້ເລີ່ມໃນມື້ຕໍ່ໄປ.

**ການຮ້ອງທຸກຂອງບຸກຄົນ**

ສາມາດເຮັດໄດ້ພາຍໃຕ້ມາດຕາ 22 ຂອງສົນທິສັນຍາດ້ວຍການສົ່ງໄປທີ່:

**Petitions Team**
Office of the United Nations High Commissioner for Human Rights Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 22 (ກໍລະນີຮີບດ່ວນ)
E-mail: **tb-petitions@ohchr.org**

ແບບຟອມການຮ້ອງທຸກແມ່ນມີໃນບົດທີ VIII (ການຍື່ນຄຳຮ້ອງທຸກກ່ຽວກັບການຖືກລະເມີດສິດ) ໃນປຶ້ມຄູ່ມືນີ້.

**ການສອບສວນທີ່ປິດລັບ**

ພາກປະຊາສັງຄົມອາດສາມາດສົ່ງຂໍ້ມູນທີ່ເປັນລາຍລັກອັກສອນກ່ຽວກັບການລະເມີດສົນທິສັນຍາຢ່າງຮ້າຍແຮງແລະເປັນລະບົບໃຫ້ແກ່ກອງເລຂາໄດ້. ການລາຍງານນັ້ນຕ້ອງເຊື່ອຖືໄດ

IV

ແລະ ມີຫຼັກຖານວ່າລັດພາຄີນັ້ນລະເມີດໃນພາກສ່ວນໃດຂອງສົນທິສັນຍາ.

ລາຍລະອຽດຕິດຕໍ່ຫາກອງເລຂາ

Committee against Torture
c/o Office of the United Nations
High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 29

ຂໍ້ມູນເພີ້ມເຕີມກ່ຽວກັບຄະນະກຳມາທິການແມ່ນສາມາດເບິ່ງໄດ້ທີ່ເອກະສານຂໍ້ມູນທົ່ວໄປເລກທີ 17

## ຄະນະກຳມາທິການເພື່ອປ້ອງການທໍລະມານ

*ວຽກງານກວດກາ*

ສົນທິສັນຍາສາກົນວ່າດ້ວຍການຕ້ານການທໍລະມານ ແລະ ການປະຕິບັດ ຫຼື ການລົງໂທດອື່ນໆທີ່ເປັນການທາລຸນ, ໄຮ້ມະນຸດສະທຳ ຫຼື ເຮັດໃຫ້ເຊື່ອມເສຍກຽດສັກສີ (OPCAT).

**ສະມາຊິກ**

ມີຜູ້ຊ່ຽວຊານເອກະລາດ 10 ທ່ານປະຈຳເຊິ່ງມີ ອາຍຸ ການ 4ປີ ແລະສາມາດຖືກເລືອກເຂົ້າມາໃໝ່ໄດ້ອີກໜຶ່ງຄັ້ງ. ເມື່ອໃດທີ່ລັດພາຄີຂອງອານຸສັນຍານີ້ເພີ່ມຂຶ້ນຮອດ 50, ສະມາຊິກຂອງຄະນະກຳມາທິການກໍ່ຈະເພີ່ມຂຶ້ນເປັນ 25 ທ່ານ.

**ວຽກກອງປະຊຸມ**

ອານຸຄະນະກຳມາທິການຈະປະຊຸມປີລະສາມເທື່ອເຊິ່ງໃຊ້ເວລາຢູ່ໜຶ່ງອາທິດປະຊຸມກັນທີ່ສຳນັກງານ ສປຊ ທີ່ນະຄອນເຈນນີວາ. ນອກນັ້ນທາງອານຸກຳມາທິການຍັງລົງພື້ນທີ່ເພື່ອກວດເບິ່ງສະພາບທີ່ໄດ້ຮັບລາຍງາຍວ່າມີການລະເມີດສິດເສລີພາບ, ເພື່ອປ້ອງກັນການທໍລະມານ ແລະ ການປະຕິບັດອື່ນໆທີ່ເຫັນວ່າໄຮ້ມະນຸດສະທຳ ແລະ ເຮັດໃຫ້ເຊື່ອເສຍກຽດສັກສີ.

**ລະບຽບການສຳລັບລັດພາຄີ**

ລັດພາຄີຕ້ອງສ້າງ, ມອບໝາຍ ຫຼື ຮັກສາໜຶ່ງຫຼືຫລາຍອົງກອນພາຍໃນທີ່ມີໜ້າທີ່ລົງພື້ນທີ່ກວດກາ (ອົງການທີ່ວ່າອາດແມ່ນ ສະຖາບັນສິດທິມະນຸດແຫ່ງຊາດ, ອົງການກວດສອບ, ຄະນະກຳມາທິການລັດຖະສະພາ, ຫຼື NGOs) ເພື່ອປ້ອງກັນບໍ່ໃຫ້ມີການທໍລະມານ ຫຼື ການລົງໂທດອື່ນໆທີ່ເປັນການທາລຸນ, ໄຮ້ມະນຸດສະທຳ ຫຼື ເຮັດໃຫ້ເຊື່ອມເສຍກຽດສັກສີ. ນອກນີ້ລັດພາຄີຍັງຕ້ອງໄດ້ອານຸຍາດໃຫ້ອານຸກຳມາທິການ ແລະ ອົງກອນພາຍໃນໄດ້ລົງກວດກາທຸກພື້ນທີ່ທີ່ຮັບຜິຊອບ ແລະ ຄຸ້ມຄອງບ່ອນທີ່ອາດມີບຸກຄົນໃດໜຶ່ງໄດ້ຖືກຕັດອິດ ສະລະພາບ. ການລົງກວດສອບນັ້ນແມ່ນສາມາດເຮັດໃຫ້ກາກປ້ອງກັນບໍ່ໃຫ້ມີການທໍລະມານຫຼື ການລົງໂທດອື່ນໆທີ່ເປັນການທາລຸນ, ໄຮ້ມະນຸດສະທຳ ຫຼື ເຮັດໃຫ້ເຊື່ອມເສຍກຽດສັກສີໄດ້.

ຂໍ້ມູນເພີ່ມເຕີມກ່ຽວກັບອານຸກຳມາທິການແມ່ນເບິ່ງໄດ້ທີ່ເວບໄຊ້ຂອງ ສຳນັກງານ OHCHR.

# ການເຮັດວຽກຮ່ວມກັບໂຄງ
# ການສິດທິມະນຸດແຫ່ງອົງການສະຫະປະຊາຊາດ

## ຄະນະກຳມາທິການສິດທິເດັກ

***ວຽກກວດກາ***

ກວດກາສົນທິສັນຍາສາກົນວ່າດ້ວຍສິດທິເດັກ(CRC) ແລະ ອານຸສັນຍາທີ່ ກ່ຽວຂ້ອງ.

**ສະມາຊິກ**

ມີຜູ້ຊ່ຽວຊານເອກະລາດ 18 ທ່ານປະຈຳເຊິ່ງມີ ອາຍຸ ການ 4ປີ ແລະສາມາດຖືກເລືອກເຂົ້າມາໃໝ່ໄດ້ອີກ.

**ວຽກກອງປະຊຸມ**

ຄະນະກຳມາທິການຈະປະຊຸມກັນປີລະສາມເທື່ອທີ່ສຳນັກງານ ສປຊ ໃນນະຄອນເຈນີວາໃນເດືອນມັງກອນ, ພຶດສະພາ, ແລະ ກັນຍາ. ກອງປະຊຸມຈະໃຊ້ເວລາສາມອາທິດຕໍ່ເທື່ອ, ແລະ ກອງປະຊຸມໜ່ວຍງານກະກຽມແມ່ນສາມຄັ້ງເຊິ່ງແຕ່ ລະຄັ້ງຈະໃຊ້ເວລາຢູ່ໜຶ່ງອາທິດ.

**ລະບຽບການລາຍງານ**

ລັດພາຄີຕ້ອງລາຍງານຄັ້ງທຳອິດຫລັງຈາກໄດ້ເປັນພາຄີ ຂອງສົນທິສັນຍາແລ້ວໜຶ່ງປີ, ສ່ວນຄັ້ງຕໍ່ໄປແມ່ນທຸກໆຫ້າປີ. ນອກນີ້ລັດພາຄີຍັງຕ້ອງລາຍງານຕາມພັນທະທີ່ມີໃນອານຸສັນ ຍາ, ປົກກະຕິແລ້ວແມ່ນຕ້ອງໄດ້ລາຍງານຫລັງຈາກໄດ້ເປັນ ພາຄີແລ້ວສອງປີ: ສ່ວນຄັ້ງຕໍ່ໄປແມ່ນຂຶ້ນຢູ່ກັບການຮຽກ ຮ້ອງຂອງຄະນະກຳມາທິການ (ຫຼືວ່າຕ້ອງລາຍງານທຸກໆຫ້າ ປີຖ້າຫາກວ່າລັດດັ່ງກ່າວເປັນພາຄີຂອງອານຸສັນຍາທັງສອງຫຼືໜຶ່ງສ ະບັບແຕ່ບໍ່ແມ່ນສົນທິສັນຍາ).

**ການລາຍງານທີ່ເປັນລາຍລັກອັກສອນ**

NGOs ແລະ ພາກປະຊາສັງຄົມອື່ນໆເຊັ່ນ: ອົງການຂອງ ເດັກນ້ອຍຕ່າງໆ, ອົງການທາງສາດສະໜາ, ສະມາຄົມວິຊາ ຊີບ, ແລະ ບັນດາອົງການຈັດຕັ້ງສັງຄົມຕ່າງໆແມ່ນອາດ ສາມາດສົ່ງຫຼືລາຍງານໃຫ້ແກ່ກອງເລຂາທີ່ກ່ຽວຂ້ອງໄດ້. ການລາຍງານນັ້ນຈະເປັນການດີຖ້າຫາກວ່າໄດ້ສົ່ງກ່ອນ ກອງປະໜ່ວຍງານກະກຽມຈະເປີດພາຍໃນສອງເດືອນ. ເອກະ ສານລາຍງານນີ້ຕ້ອງເຮັດເປັນ 20 ຊຸດຢ່າງໜ້ອຍ ແລະ ຕ້ອງເຮັດເປັນເອກະສານພິມ ແລະ ຟາຍອີເລກໂຕນິກເພື່ອ ໃຫ້ກອງເລຂາຕາມທີ່ຢູ່ຂ້າງລຸມນີ້. ໜ່ວຍງານພາກປະຊາ ສັງຄົມອາດຂໍໃຫ້ຂໍ້ມູນທີ່ເຂົາເຈົ້າສົ່ງໃຫ້ນັ້ນປິດລັບກໍ່ໄດ້. ສຳລັບອົງການ NGOs ທີ່ຢາກສົ່ງຂໍ້ມູນໃຫ້ຄະນະກຳມາ ທິການນັ້ນແມ່ນສາມາດຕິດຕໍ່ກຸ່ມອົງການ NGOs ທີ່ເຮັດ ວຽກເພື່ອສິດທິຂອງເດັກ, ສະມາຄົມອົງການ NGOs ສາກົນທີ່ເຮັດວຽກກ່ຽວກັບການອຳນວຍຄວາມສະດວກໃຫ້ ແກ່ການຈັດຕັ້ງປະຕິບັດສົນທິສັນຍາ. ກຸ່ມ NGOs ແມ່ນມີລະບົບເຄືອຂ່າຍທີ່ໃຫ້ການສະໜັບສະໜູນການມີສ່ວນ ຮ່ວມຂອງ NGOs ໂດຍສະເພາະແມ່ນເຄືອຂ່າຍພາຍໃນ ໃຫ້ເຂົ້າຮ່ວມຂະບວນການລາຍງານຂອງຄະນະກຳມາ ທິການ. ນອກຈາກ NGOs ແລ້ວ ໜ່ວຍງານພາກ ປະຊາສັງຄົມກໍ່ແມ່ນອົງກອນທີ່ຢາກໃຫ້ມີສ່ວນຮ່ວມໃນການປະກ ອບສ່ວນຂໍ້ມູນຂ່າວສານດ້ວຍການຮ່ວມມືກັບເຄືອຂ່າຍ CRC ພາຍໃນປະເທດ ຖ້າຫາກມີເຄືອຂ່າຍດັ່ງກ່າວຢູ່.

ກຸ່ມ NGOs ສາມາດໃຫ້ການຕິດຕໍ່ໄດ້ທີ່:

NGO Group for the Convention on the Rights of the Child, Secretariat

1, rue de Varembé

CH-1202 Geneva - Switzerland

Phone: +41 (0)22 740 4730

Fax : +41 (0)22 740 1145

E-mail : secretariat@childrightsnet.org

Website: http://www.childrightsnet.org[25]

***ການເຂົ້າຮ່ວມກອງປະຊຸມຂອງຄະນະກຳມາທິການ***

ພາກປະຊາສັງຄົມອາດມາສາມາດເຂົ້າຮ່ວມໄດ້ແຕ່ຈະຢູ່ໃນຖານະເ ປັນຜູ້ສັງເກດການເທົ່ານັ້ນ. ການຂໍເຂົ້າຮ່ວມນັ້ນຕ້ອງ ໄດ້ຂຽນຄຳຮ້ອງຂໍແລ້ວສົ່ງໄປໃຫ້ກອງເລຂາທີ່ກ່ຽວຂ້ອງ ຕາມທີ່ຢູ່ຂ້າງລຸ່ມເພື່ອຮັບພິຈາລະນາ.

IV

25 ສຳນັກງານ OHCHR ຈະບໍ່ຮັບຜິຊອບໃດໆຕໍ່ຂໍ້ມູນນອກເວບໄຊ້ຂອງສຳນັກງານ ແລະສຳນັກງານເອງກໍ່ບໍ່ໄດ້ມີການເຊື່ອມຕໍ່ ໃດໆກັບເວບໄຊ້ອື່ນໆທີ່ບໍ່ກ່ຽວຂ້ອງ

ພາກປະຊາສັງຄົມແມ່ນຈະໄດ້ຮັບການຖືກເຊີນໃຫ້ເຂົ້າຮ່ວມກອງປະຊຸມທີ່ມີໄລຍະສອງຫາສາມສະໂມງຂອງໜ່ວຍງານກະກຽມເພື່ອເປັນການປະກອບຂໍ້ມູນໃໝ່ໆຖ້າມີ. ຊ່ຽວຊານສະເພາະ ແລະ ອົງການຈັດຕັ້ງຊາວໜຸ່ມແມ່ນມີຄວາມສຳຄັນໃນການໃຫ້ຂໍ້ມູນແກ່ກອງປະຊຸມຂອງໜ່ວຍງານກະກຽມຂອງຄະນະກຳມາທິການ. ການຂໍເຂົ້າຮ່ວມໃນກອງປະຊຸມແມ່ນສາມາດຂໍໄດ້ທີ່ກອງເລຂາທີ່ກ່ຽວຂ້ອງຢ່າງໜ້ອຍສອງເດືອນກ່ອນກອງປະຊຸມຈະເລີ່ມ. ອີງຕາມການຂໍເຂົ້າຮ່ວມ, ທາງຄະນະກຳມາທິການແມ່ນກໍ່ຈະເຮັດໜັງສືເຊີນໃຫ້ແຕ່ລະພາກສ່ວນຕາມການຮ້ອງຂໍໂດຍປົກກະຕິແລ້ວທາງ NGOs (ຈະມີຂໍ້ມູນທີ່ກ່ຽວກັບວຽກງານຂອງຄະນະກຳມາທິການໃນການພິຈາລະນາບົດລາຍງານຂອງລັດພາຄີ). ການໃຫ້ກ່າວນຳສະເໜີນັ້ນ ແມ່ນຈະອານຸຍາດໃຫ້ຜູ້ທີ່ເຂົ້າຮ່ວມຈາກພາກປະຊາສັງຄົມຂອງລັດພາຄີທີ່ກ່ຽວຂ້ອງເວົ້າໄດ້ປະມານ 15 ນາທີ ແລະ 5 ນາທີ ສຳລັບອົງການອື່ນໆ, ສ່ວນເວລາທີ່ເຫຼືອນັ້ນແມ່ນສຳລັບການສົນທະນາ. ໃນແຕລະປີຄະນະກຳມາທິການຍັງໄດ້ຈັດ ການສົນທະນາທົ່ວໄປເປັນເວລາ ໜຶ່ງມື້ ແລະ ພາກປະຊາສັງຄົມ, ເດັກນ້ອຍ ແລະ ຜູ້ຊ່ຽວຊານແມ່ນຍິນດີໃຫ້ເຂົ້າຮ່ວມ.

**ລາຍລະອຽດການຕິດຕໍ່ກອງເລຂາ**

**Committee on the Rights of the Child**
c/o Office of the United Nations
High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 29

ຂໍ້ມູນເພີ່ມເຕີມກ່ຽວກັບລະບຽບການລາຍງານໃຫ້ແກ່ຄະນະກຳມາທິການສິດທິເດັກແມ່ນສາມາດເບິ່ງໄດ້ທີ່ເວບໄຊ້ຂອງກຸ່ມ.

ຂໍ້ມູນເພີ່ມເຕີມກ່ຽວກັບລະບຽບການຂໍເຂົ້າຮ່ວມກອງປະຊຸມຂອງຄະນະກຳມາທິການຈາກ NGOs ແລະ ຊ່ຽວຊານສະເພາະແມ່ນເບິ່ງໃນເວບໄຊ້ຂອງສຳນັກ ງານ OHCHR.

ເພື່ອສຶກສາຕື່ມກ່ຽວກັບຄະນະກຳມາທິການສິດທິເດັກແມ່ນເບິ່ງໄດ້ທີ່ເອກະສານຄວາມຮູ້ທົ່ວໄປເລກທີ 10 (Rev. 1).

## ຄະນະກຳມາທິການປົກປ້ອງສິດທິຂອງແຮງງານຕ່າງດ້າວ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ

*ວຽກງານກວດກາ*

ຄະນະກຳມາທິການປົກປ້ອງສິດທິຂອງແຮງງານຕ່າງດ້າວ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ (ICRMW).

**ສະມາຊິກ**

ມີຜູ້ຊ່ຽວຊານເອກະລາດ 10 ທ່ານປະຈຳເຊິ່ງມີ ອາຍຸ ການ 4ປີ ແລະສາມາດຖືກເລືອກເຂົ້າມາໃໝ່ໄດ້ອີກ. ເມື່ອໃດທີ່ລັດພາຄີຂອງອານຸສັນຍານີ້ເພີ່ມຂື້ນຮອດ 14 ລັດ, ສະມາຊິກຂອງຄະນະກຳມາທິການກໍ່ຈະເພີ່ມຂື້ນເປັນ 41 ທ່ານ. ເບິ່ງມາດຕາທີ 72

**ວຽກກອງປະຊຸມ**

ຄະນະກຳມາທິການຈະປະຊຸມປີລະສອງເທື່ອເຊິ່ງຈະຈັດໃນສຳນັກງານ ສປຊ ທີ່ນະຄອນເຈນນີວາໃນລະຫວ່າງເດືອນ ເມສາ ແລະ ພະຈິກ.

***ລະບຽບການລາຍງານ***

ຫລັງຈາກເປັນພາຄີແລ້ວໜຶ່ງປີລັດດັ່ງກ່າວຕ້ອງໄດ້ສົ່ງບົດລາຍງານ, ສ່ວນຄັ້ງຕໍ່ໄປແມ່ນທຸກໆຫ້າປີ.

**ການລາຍງານທີ່ເປັນລາຍລັກອັກສອນ**

NGOs ແລະ ພາກປະຊາສັງຄົມອື່ນໆເຊັ່ນ: ອົງການບໍລິການທາງສັງຄົມ, ຊ່ຽວຊານສະເພາະ ແລະ ສະພັນກຳມະບານ ສາມາດສົ່ງຫຼືລາຍງານໃຫ້ແກ່ກອງເລຂາທີ່ກ່ຽວຂ້ອງໄດ້.

ເອກະ ສານລາຍງານນີ້ຕ້ອງເຮັດເປັນຟາຍອີເລັກໂຕນິກ ແລະ ເອກະສານພິມ15 ຊຸດຢ່າງໜ້ອຍແລ້ວສົ່ງໃຫ້ກອງເລຂາຕາມທີ່ຢູ່ຂ້າງລຸ່ມນີ້.

ພາກປະຊາສັງຄົມໃດຫາກຢາກສົ່ງຂໍ້ມູນໃຫ້ຄະນະກຳມາທິການແມ່ນສາມາດຕິດຕໍ່ໄດ້ທີ່ເຄືອຂ່າຍ NGO ສາກົນທີ່ດຳເນີນງານກ່ຽວກັບສົນທິສັນຍາແຮງງານຕ່າງ ດ້າວ, ສະມາຄົມ NGOs ສາກົນທີ່ເຮັດວຽກຮ່ວມກັນເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດສົນທິສັນຍາ. ຂໍ້ມູນຕິດຕໍ່ແມ່ນ:

NGO Platform

c/o December 18

Rue de Varembé 1

P.O. Box 96

CH–1211 Geneva 20 - Switzerland

Phone: +41 (0)22 919 10 42

Fax: +41 (0)22 919 10 48

E-mail: ipmwc@december18.net

Website: http://www.december18.net[26]

***ການເຂົ້າຮ່ວມກອງປະຊຸມຂອງຄະນະກຳມາທິການ***

ພາກປະຊາສັງຄົມອາດມາສາມາດເຂົ້າຮ່ວມໄດ້ແຕ່ຈະຢູ່ໃນຖານະເປັນຜູ້ສັງເກດການເທົ່ານັ້ນ. ການຂໍເຂົ້າຮ່ວມນັ້ນຕ້ອງ ໄດ້ຂຽນຄຳຮ້ອງຂໍແລ້ວສົ່ງໄປໃຫ້ກອງເລຂາທີ່ກ່ຽວຂ້ອງຕາມທີ່ຢູ່ຂ້າງລຸ່ມເພື່ອຮັບພິຈາລະນາ.

ເພື່ອກະກຽມການທົບທວນບົດລາຍງານຂອງລັດ ພາຄີ, ພາກປະຊາສັງຄົມໂດຍສະເພາະແມ່ນ NGOs ແມ່ນໄດ້ຖືກເຊີນໃຫ້ເຂົ້າຮ່ວມກອງປະຊຸມປິດລັບຮ່ວມກັບຄະນະກຳມາທິການເພື່ອໃຫ້ລາຍງານປາກເປົ່າກ່ຽວກັບສະພາບແຮງງານຕ່າງດ້າວໃນລັດພາຄີທີ່ກ່ຽວຂ້ອງ, ແລະ ເພື່ອຕອບຄຳຖາມຂອງຄະນະກຳມາທິການ. ກອງປະຊຸມດັ່ງກ່າວນີ້ແມ່ນເປັນການຈັດກ່ອນທີ່ຈະມີກອງປະຊຸມທາງການເພື່ອພິຈາລະນາບົດລາຍງານຂອງລັດພາຄີທີ່ກ່ຽວຂ້ອງ.

ໃນເວລາທີ່ກອງປະຊຸມພວມດຳເນີນການພິຈາລະນາບົດລາຍງານ, ທາງພາກປະຊາສັງຄົມແມ່ນມີໂອກາດທີ່ຈະລາຍງານປາກເປົ່າຄຽງຄູ່ກັນກັບຂໍ້ມູນທີ່ເປັນລາຍລັກອັກສອນທີ່ສົ່ງມາກ່ອນໜ້ານີ້ໃຫ້ທີ່ປະຊຸມຮັບຊາບ.

26 ສຳນັກງານ OHCHR ຈະບໍ່ຮັບພິຊອບໃດໆຕໍ່ຂໍ້ມູນນອກເວບໄຊ້ຂອງສຳນັກງານ ແລະສຳນັກງານເອງກໍ່ບໍ່ໄດ້ມີການເຊື່ອມຕໍ່ໃດໆກັບເວບໄຊ້ອື່ນໆທີ່ບໍ່ກ່ຽວຂ້ອງ

NGOs, ນັກວິຊາການທາງການສຶກສາ, ແລະ ຕົວແທນຈາກວິຊາຊີບຕ່າງໆແມ່ນໄດ້ຮັບການເຊີນ ໃຫ້ເຂົ້າຮ່ວມກອງປະຊຸມພິເສດຂອງຄະນະກຳມາທິ ການເພື່ອປຶກສາຫາລືບັນຫາທີ່ສຳຄັນ.

**ການຮ້ອງທຸກຂອງບຸກຄົນ**

ກ່ອນທີ່ຄະນະກຳມາທິການຈະມີສິດຮັບຄຳຮ້ອງທຸກ ຂອງສ່ວນບຸກຄົນນັ້ນກໍ່ຕໍ່ເມື່ອມີລັດພາຄີຈຳນວນ 10 ລັດໃຫ້ການຮັບຮອງພາລະບົດບາດນີ້ເສຍກ່ອນໂດຍ ອີງຕາມມາດຕາທີ 77 ຂອງສົນທິສັນຍານີ້.

**ລາຍລະອຽດການຕິດຕໍ່ຫາກອງເລຂາ:**

**Committee on the Protection of the Rights of All Migrant Workers and Members of Their Families**
c/o Office of the United Nations
High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 29
E-mail: **cmw@ohchr.org**

ຂໍ້ມູນເພີ່ມເຕີມກ່ຽວກັບຄະນະກຳມາທິການແມ່ນຢູ່ໃນເອກະສານຄວາມຮູ້ທົ່ວໄປເລກທີ 24 (Rev.1).

## ຄະນະກຳມາທິການປົກປ້ອງສິດທິຂອງຄົນພິການ

**ວຽກກວດກາ**

ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ ແລະ ອານຸສັນຍາທີ່ກ່ຽວຂ້ອງ

**ສະມາຊິກ**

ຄະນະກຳມາທິການຈະເລີ່ມຕົ້ນດ້ວຍ 12 ຊ່ຽວຊານອິດສະຫລະ ທີ່ເຖືກ ເລືອກມາປະຈຳການ 4ປີ ແລະ ສາມາດຖືກ ເລືອກເຂົ້າມາໃໝ່ໄດ້ອີກ. ໃນຄະນະຕ້ອງມີທີມງານທີ່ເປັນຄົນພິການນຳ. ພາຍຫລັງທີ່ສົນທິສັນຍາດັ່ງກ່າວນີ້ ໄດ້ມີລັດພາຄີຄົບ 60 ລັດ, ຈຳນວນຄະນະກຳມາທິການ ກໍ່ຈະໄດ້ເພີ່ມ ຂື້ນເປັນ 18 ທ່ານທັນທີ. ລັດພາຄີແມ່ນຄວນຈະຫ້າວຫັນໃນການມີສ່ວນຮ່ວມກັບບັນດາກິດຈະກຳ ແລະ ອົງການຂອງຄົນພິການໃນເວລາທີ່ໄດ້ສົ່ງລາຍຊື່ຜູ້ເຂົ້າສະມັກເປັນຄະນະກຳມາທິການດັ່ງກ່າວ.

**ວຽກກອງປະຊຸມ**

ມາຮອດປີ 2008 ຍັງບໍ່ທັນໄດ້ຄະນະກຳມາທິການເທື່ອ

**ລະບຽບການລາຍງານ**

ຫລັງຈາກໄດ້ເປັນພາຄີແລ້ວສອງປີ ລັດດັ່ງກ່າວແມ່ນຕ້ອງ ໄດ້ສົ່ງບົດລາຍງານສະບັບທຳອິດ ແລະ ການສົ່ງຄັ້ງຕໍ່ໄປແມ່ນທຸກໆ 4 ປີ ຫຼື ຂື້ນຢູ່ກັບການຮຽກຮ້ອງຂອງຄະນະກຳມາທິການ.

**ການຍື່ນຄຳຮ້ອງທຸກຂອງບຸກຄົນ**

ຄະນະກຳມາທິການແມ່ນມີສິດທີ່ຈະໃຫ້ການສື່ສານກັບບຸກຄົນ ຫຼື ກຸ່ມຄົນຕ່າງໆໄດ້. ແບບຟອມການຮ້ອງທຸກນັ້ນແມ່ນສາມາດເບິ່ງໄດ້ໃນບົດທີ VIII (ການຍື່ນຄຳຮ້ອງທຸກກ່ຽວກັບການຖືກລະເມີດສິດ) ໃນປື້ມຄູ່ມືນີ້.

**ການສອບຖາມທີ່ປິດລັບ**

ພາກປະຊາສັງຄົມໂດຍສະເພາະແມ່ນ NGOs ສາມາດທີ່ຈະສົ່ງຂໍ້ມູນຕ່າງໆທີ່ກ່ຽວກັບບັນຫາການລະເມີດສົນທິສັນຍາທີ່ຮ້າຍແຮງ ແລະ ເປັນລະບົບໃຫ້ແກ່ກອງເລຂາໄດ້. ຂໍ້ມູນດັ່ງກ່າວຕ້ອງມີຄວາມເຊື່ອຖືໄດ້ ແລະ ສາມາດຊີ້ໃຫ້ເຫັນເຖິງຫຼັກຖານທີ່ລັດພາຄີໄດ້ລະເມີດບ່ອນໃດຂອງສົນທິສັນຍາ.

**ມາດຕາ 33**

ໃນມາດຕານີ້ແມ່ນໄດ້ກຳນົດລະອຽດກ່ຽວກັບພາລະບົດບາດຂອງພາກປະຊາສັງຄົມໃນການກວດກາການຈັດຕັ້ງປະຕິບັດສົນທິສັນຍາ.

ລາຍລະອຽດໃນມາດຕານີ້ລະບຸວ່າພາກປະຊາສັງຄົມແມ່ນມີສ່ວນຮ່ວມຢ່າງເຕັມທີ່ກັບຂະບວນການກວດກາທີ່ລັດພາຄີຕ່າງໆໄດ້ຮ່ວມກັນສ້າງຕັ້ງຂື້ນ, ເພາະສະນັ້ນພາກປະຊາສັງຄົມຈື່ງໄດ້ຮັບພາລະບົດບາດເປັນຈຸດສູນກາງໃນການສົ່ງເສີມການຈັດຕັ້ງປະຕິບັດສົນທິສັນຍາ.

ລາຍລະອຽດຕິດຕໍ່ຫາກອງເລຂາ:

Committee on the Rights of Persons with Disabilities
c/o Office of the United Nations
High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 29
E-mail: crpd@ohchr.org

ຂໍ້ມູນເພີ່ມເຕີມກ່ຽວກັບວຽກງານຂອງ **OHCHR ທີ່ກ່ຽວກັບສົນທິສັນຍາ ແລະ ບັນຫາຂອງຄົນພິການແມ່ນສາມາດເບິ່ງໄດ້ທີ່ເວບໄຊ້ຂອງ** OHCHR.

ຂໍ້ມູນເພີ່ເຕີມກ່ຽວກັບສົນທິສັນຍາ ແລະ ອານຸສັນຍາທີ່ກ່ຽວຂ້ອງແມ່ນສາມາດອ່ານໄດ້ທີ່ສິ່ພິມຂອງ OHCHR ໃນຫົວຂໍ້ *From Exclusion to Equality: Realizing the Rights of Persons with Disabilities* (HR/PUB/07/6).

IV

## ຄະນະກຳມາທິການຕ້ານການຖືກບັງຄັບໃຫ້ຫາຍສາບສູນ

( ມາຮອດປີ 2008 ແມ່ນຍັງບໍ່ໄດ້ຮັບການຮັບຮອງເທື່ອ)

***ຈະກອດກາ***

ສົນທິສັນຍາວ່າດ້ວຍການປົກປ້ອງສິດຂອງຄົນທີ່ຖືກບັງຄັບໃຫ້ຫາຍສາບສູນ

**ສະມາຊິກ**

ຕະນະກຳມາທິການຈະມີທີມງານອິດສະຫລະຢູ່ 10 ທ່ານ ແລະ ຈະໄດ້ດຳລົງຕຳແໜ່ງຢູ່ 4ປີເຊິ່ງສາມາດຖືກເລືອກເຂົ້າມາໃໝ່ໄດ້ອີກ.

**ລະບຽບການລາຍງານ**

ການສົ່ງບົດລາຍງານແມ່ນຫລັງຈາກໄດ້ເປັນພາຄີແລ້ວພາຍໃນສອງປີ.

**ການປະຕິບັດການຮີບດ່ວນ**

ຄະນະກຳມາທິການແມ່ນມີສິດທີ່ຈະຕອບຮັບການລາຍງານທີ່ຮີບດ່ວນເພື່ອຊ່ວຍຊອກຫາຜູ້ທີ່ຖືກຫາຍສາບສູນ. ຜູ້ທີ່ຖືກຫາຍສາບສູນນັ້ນຕ້ອງແມ່ນມາຈາກລັດພາຄີຂອງສົນທິສັນຍາເທົ່ານັ້ນ.

**ການຍື່ນຄຳຮ້ອງທຸກ**

ຄະນະກຳມາທິການຈະມີສິດໃນການຮັບສື່ສານຂໍ້ມູນກ່ຽວກັບສ່ວນບຸກຄົນກໍ່ຕໍ່ເມື່ອລັດພາຄີດັ່ງກ່າວໄດ້ໃຫ້ການຮັບຮອງເອົາລະບຽບການຕາມມາດຕາມີ 31ຂອງສົນທິສັນຍານີ້ເສຍກ່ອນ.

***ການສອບຖາມ***

ພາກປະຊາສັງຄົມໂດຍສະເພາະ NGOs ແມ່ນສາມາດສົ່ງຂໍ້ມູນຂ່າວສານທີ່ກ່ຽວກັບການລະເມີດສົນທິສັນຍາຂອງລັດພາຄີໄດ້ໂດຍອີງຕາມຂໍ້ກຳນົດໃນມາດຕາທີ 33. ນອກນີ້ຄະນະກຳມາທິການຍັງມີສິດທີ່ຈະລາຍງານຕໍ່ສະມັດຊາໃຫຍ່ຂອງ ສປຊ ກ່ຽວກັບບັນຫາການຖືກບັງຄັບໃຫ້ຫາຍສາບສູນນັ້ນຍັງມີຢູ່ໃນ ລັດພາຄີທີ່ກ່ຽວຂ້ອງ. ເບິ່ງຂໍ້ມູນເພີ່ມກ່ຽວກັບການຖືກບັງຄັບໃຫ້ຫາຍສາບສູນໄດ້ທີ່ເອກະສານຄວາມຮູ້ທົ່ວໄປເລກທີ 6 (Rev.2).

# V. ສະພາສິດທິມະນຸດ

## ພາບລວມຂອງສະພາສິດທິມະນຸດ

***ສະພາສິດທິມະນຸດແມ່ນຫຍັງ?***

ສະພາສິດທິມະນຸດແມ່ນອົງກອນລະຫວ່າງລັດທີ່ສຳຄັນຂອງ ສປຊ ທີ່ມີໜ້າທີ່ຮັບພິຊອບວຽກງານສິດທິມະ ນຸດ. ສະພາຖືກສ້າງຂື້ນໂດຍມະຕິ ເລກທີ 60\251 ຂອງສະມັດຊາ ໃຫຍ່, ສະພາເຂົ້າມາດຳເນີນງານ ແທນ ແລະ ປະຕິຮູບບັນດາວຽກ ງານ, ກົນໄກ, ໜ້າທີ່ ແລະ ຄວາມຮັບພິຊອບຂອງຄະນະກຳມາທິການວ່າດ້ວຍສິດທິມະນຸດທີ່ຜ່ານມາ. ສຳນັກງານຂ້າຫລວງໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ (OHCHR) ແມ່ນເປັນກອງເລຂາໃຫ້ແກ່ສະພາສິດທິມະນຸດແບບທີ່ເຄີຍເປັນກອງເລຂາໃຫ້ຄະນະກຳມາທິການສິດທິມະນຸດຊຸດເກົ່ານັ້ນ.

**ສະພາສິດທິມະນຸດເຮັດວຽກແບບໃດ?**

ສະພາປະກອບດ້ວຍສະມາຊິກ 47 ລັດພາຄີທີ່ປະຈຳຢູ່ໃນນະຄອນເຈນນີວາ,ສະມາຊິກສະພາຈະປະຊຸມກັນຢ່າງໜ້ອຍ10 ອາທິດຕໍ່ປີເຊີ່ງອາດແບ່ງອອກເປັນແຕ່ລະໄລຍະການປະຊຸມ ແລະ ບໍ່ໃຫ້ປະຊຸມກັນເກີນສາມຄັ້ງຕໍ່ປີແຕ່ສະພາຍັງສາມາດປະຊຸມກັນແບບບໍ່ປັບທາງການໄດ້ຕາມຄວາມຈຳເປັນ. ໃນເມື່ອກ່ອນທາງຄະນະກຳມາທິການສິດທິມະນຸດເຄີຍເປັນອົງກອນຊ່ວຍວຽກຂອງສະພາເສດ ຖະກິດ ແລະ ສັງຄົມ(ECOSOC), ໃນປະຈຸບັນສະພາສິດທິມະນຸດແມ່ນເປັນອົງກອນຊ່ວຍວຽກຂອງສະມັດຊາໃຫຍ່. ວຽກງານຫຼັກຂອງສະພາກໍ່ແມ່ນຊ່ວຍແກ້ໄຂບັນຫາການລະເມີດສິດທິມະນຸດທີ່ເປັນການລະເມີດແບບຮ້າຍແຮງ ແລະ ເຮັດເປັນລະບົບ, ນອກຈາກນີ້ສະພາຍັງເຮັດວຽກໃນການສົ່ງເສີມການຮ່ວມມືປະສານນ ງານ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສິດທິມະນຸດໃນ ອົງການ ສປຊ ໃຫ້ມີປະ ສິດທິ ພາບໄປເລື້ອຍໆ.

ໃນວັນທີ 18 ມິຖຸນາ 2007 ທ່າມກາງກອງປະຊຸມຄັ້ງທຳອິດຂອງສະພາກໍ່ໄດ້ມີການຕົກລົງຮັບຮອງເອົາບັນດາລະ ບຽບການ, ກົນໄກ ແລະ ໂຄງສ້າງຂອງສະພາເພື່ອເປັນພື້ນຖານແນວທາງໃຫ້ສະພາໃນການເຮັດວຽກ. ຂະບວນການທີ່ຮັບຮອງມາຂ້າງເທິງນັ້ນແມ່ນກຳນົດໃນມະຕິ ເລກທີ 5/1ທີ່ລວມ ມີທັງວາລະການ ເຮັດວຽກຂອງສະພາ, ລະບຽບການດຳ ເນີນງານ ແລະ ການປັບປຸງລະບົບການ ໃຫ້ຄຳແນະນຳຂອງຜູ້ຊ່ຽວຊານ ແລະ ຂັ້ນ ຕອນການແກ້ໄຂຄຳຮ້ອງທຸກທີ່ສືບເນື່ອງມາແຕ່ຄະນະກຳມາທິການທີ່ຜ່ານມາ. ມັດ ຕິເລກທີ 5/1 ຍັງໄດ້ສ້າງຮູບແບບສຳລັບການປະຕິບັດງານຂອງກົນໄກການ ທົບທວນສາກົນ ແລະ ສ້າງວິທີການເພື່ອ ທົບທວນ, ໃຫ້ຄຳອະທິບາຍ ແລະ ປັບປຸງ ທຸກຂະບວນການດຳເນີນງານສະເພາະ.

ປື້ມຄູ່ມືທີ່ເປັນພາຍອອນລາຍແມ່ນສາມາດເອົາໄດ້ທີ່ເວບໄຊ້ຂອງOHCHR: http://www.ohchr.org/civilsocietyhandbook/ ໃນເວບຍັງສາມາດເຂົ້າຂໍ້ມູນທີ່ເສື່ອມຕໍ່ກັບຂໍ້ມູນອື່ນໆ ຫຼື ສາມາດດາວໂລດແຕ່ລະບົດຂອງຄູ່ມືນີ້ໄດ.

*ວິທີເຂົ້າຫາ ແລະ ຮ່ວມງານກັບ ສະພາສິດທິມະນຸດໃນພາລະກິດ ແລະ ກົນໄກຕ່າງໆ*

ຢູ່ໃນມະຕິເລກທີ 60\251 ຂອງ ມັດຊາ ໃຫຍ່ກໍ່ໄດ້ຮັບຮູ້ເຫັນຄວາມ ສຳຄັນເຖິງບົດບາດຂອງ NGOs ແລະ ໜ່ວຍງານພາກ ປະຊາສັງ ຄົມພາຍໃນ ແລະ ສາກົນທີ່ມີສ່ວນ ໃນການສົ່ງເສີມ ແລະ ປົກປ້ອງສິດ ທິມະນຸດ.

ການເຂົ້າຮ່ວມເປັນຜູ້ສັງເກດ ການໃນກອງປະຊຸມຂອງສະພາຈາກ ພາກສ່ວນ NGOs ກໍ່ແມ່ນອີງຕາມ ລະບຽບການປະຕິບັດຕາມຄະນະກຳ ມາທິການຊຸດເກົ່າທີ່ກຳນົດໄວ້. ລະ ບຽບການທີ່ກຳນົດດັ່ງກ່າວນີ້ແມ່ນ ໄດ້ຮັບການປັບປຸງ ແລະ ພັດທະນາມາຕະຫລອດເພື່ອວ່າການ ເຂົ້າຮ່ວມເປັນຜູ້ສັງເກດການໃນ ກອງປະຊຸມນັ້ນຈະເປັນປະໂຫຍດແ ກ່ສະພາ.[27]

ໃນຖານະທີ່ເປັນທີ່ປຶກສາ ໃຫ້ແກ່ສະພາເສດຖະກິດ ແລະ ສັງຄົມ, NGOs ແມ່ນຈະມີສະ ຖານະເປັນຜູ້ສັງເກດການໃນ ກອງປະສະພາສິດທິມະນຸດ, ສ່ວນ NGOs ແລະ ພາກປະຊາສັງຄົມທີ່ບໍ່ ໄດ້ມີສະຖານະດັ່ງກ່າວແມ່ນສາມາດປ ະກອບສ່ວນວຽກງານໃນກົນໄກ ແລະ ການພັດທະນາສິດທິມະນຸດ ຂອງສະພາໄດ້ຫລາຍຊ່ອງທາງ. ຂໍ້ມູນຂ່າວສານທາງກອງປະຊຸມຂອງ ສະພາສິດທິມະນຸດຍັງໄດ້ໃຫ້ການ ຖ່າຍທອດສົດຜ່ານທາງລະບົບອອນ ລາຍຂອງ OHCHR, ມີ ເອກະສານຕ່າງໆໄວ້ບໍລິການ ໃນເວບໄຊ້ຂອງສະພາ ແລະ ໃນລະບົບອິນເຕີເນັດສະເພາະ. ຂໍ້ມູນການປະຊຸມສ່ວນຫລາຍ ແລ້ວແມ່ນຈະໂພສໃນໜ້າເວບ ໄຊ້ຂອງສະພາກ່ອນກອງປະຊຸມ ຈະເລີ່ມໃນອີກສອງອາທິດຂ້າງ ໜ້າ.

[27] ໃຫ້ເບິ່ງມະຕິຂອງສະມັດຊາໃຫຍ່ເລດທີ 60/251 ແລະ ຂອງສະພາສິດທິມະນຸດ 5/1.

## ຂໍ້ມູນຕິດຕໍ່ທີ່ສຳຄັນທີ່ກ່ຽວຂ້ອງກັບສະພາສິດທິມະນຸດ

**The Human Rights Council Branch**

**Human Rights Council Branch**

**Office of the United Nations High Commissioner for Human Rights**

Palais des Nations

8–14, avenue de la Paix

CH–1211 Geneva 10 - Switzerland

Phone: +41 (0)22 917 92 56

Fax: +41 (0)22 917 90 11

**The Civil Society Unit**

**OHCHR Civil Society Unit**

**Office of the United Nations High Commissioner for Human Rights**

Palais des Nations

8–14, avenue de la Paix

CH–1211 Geneva 10 - Switzerland

Phone: +41 (0)22 917 90 00

E-mail: civilsocietyunit@ohchr.org

**ຂໍ້ມູນທີ່ກ່ຽວກັບສະຖານະເປັນທີ່ປຶກສາໃຫ້ແກ່ ECOSOC**

*United Nations headquarters,* NGO Section

United Nations Department of Economic and Social Affairs Section

One UN Plaza, Room DC-1-1480

New York, NY 10017

Phone: +1 212 963 8652

Fax: +1 212 963 9248

E-mail: desangosection@un.org

*United Nations Office at Geneva (UNOG)*

**NGO Liaison Office**

**Office of the Director-General**

Office 153, Palais des Nations

8–14, avenue de la Paix

CH-1211 Geneva 10 - Switzerland

Phone: +41 (0)22 917 21 27

Fax: +41 (0)22 917 05 83

E-mail: ungeneva.ngoliaison@unog.ch

## ສະພາສິດທິມະນຸດແມ່ນຫຍັງ?
## ການປ່ຽນຮູບແບບຈາກຄະນະກຳມາທິການສິດທິມະນຸດມາເປັນສະພາສິດທິມະນຸດ

ສະພາສິດທິມະນຸດຖືກສ້າງຕັ້ງຂື້ນໂດຍສະມັດຊາໃຫຍ່ໃນມະຕິເລກທີ 60\251 ໃນວັນທີ 15 ມີນາ 2006, ເຊິ່ງເປັນອົງກອນລະຫວ່າງປະເທດອັນສຳຄັນຂອງ ສປຊ. ສະພາສິດທິມະນຸດແມ່ນເຂົ້າມາແທນທີ່ຄະນະກຳມາທິການສິດທິມະນຸດຊຸດເກົ່າທີ່ໄດ້ຖືກສ້າງຕັ້ງມາເປັນເວລາຫລາຍກ່ວາ 60 ປີ ແລະ ຖືວ່າເປັນອົງກອນຫລັກໃນລະບົບສິດທິ ມະນຸດຂອງ ສປຊ. ກອງປະຊຸມຄັ້ງສຸດທ້າຍຂອງຄະນະກຳມາທິການສິດທິມະນຸດແມ່ນຈັດໃນ ເດືອນມີນາ 2006 ເຊິ່ງເປັນກອງປະຊຸມຄັ້ງທີ 62. ຄວາມສຳເລັດທາງດ້ານຫຼັກການ ແລະ ມາດຕະຖານຂອງຄະນະກຳມາທິການຈຶ່ງໄດ້ພາໃຫ້ເກີດມີຂະບວນການດຳເນີນງານຂອງສະພາສິດທິມະນຸດ.

ຄະນະກຳມາທິການສິດທິມະນຸດໃນເມື່ອກ່ອນນັ້ນເປັນອົງກອນຊ່ວຍວຽກສະພາເສດຖະກິດ ແລະ ສັງຄົມ, ໃນປະຈຸບັນສະພາສິດທິມະນຸດແມ່ນເປັນອົງກອນຊ່ວຍວຽກແກ່ສະມັດຊາໃຫຍ່. ການປ່ຽນແປງຍົກລະດັບໃໝ່ນີ້ແມ່ນໄດ້ຖືເອົາສິດທິມະນຸດເປັນໜຶ່ງໃນສາມເສົາຫຼັກຂອງ ສປຊ ເຊິ່ງລວມມີດ້ານການພັດທະນາ ແລະ ດ້ານສັນຕິພາບ ແລະ ຄວາມໝັ້ນຄົງ. ການສ້າງຕັ້ງສະພາສິດທິມະນຸດນີ້ແມ່ນເປັນການຢືນຢັນເອົາຄວາມຕັ້ງໃຈຂອງ ສປຊ ທີ່ຈະພັດທະນາວຽກງານກົນໄກສິດທິມະນຸດທີ່ຄາດຫວັງຈະນຳເອົາມາດຕະຖານສິດທິມະນຸດມາສູ່ທຸກຂົງເຂດ-ດ້ານການເມືອງ, ພົນລະເຮືອນ, ເສດຖະກິດ, ສັງຄົມ ແລະ ວັດທະນາທຳ ເຊິ່ງລວມໄປເຖິງສິດທິໃນການໄດ້ຮັບການພັດທະນາ.

ໃນມະຕິເລກທີ 60\251, ສະມັດຊາໃຫຍ່ແມ່ນໄດ້ມອບພາລະໜ້າທີ່ໃຫ້ແກ່ສະພາສິດທິມະນຸດໃຫ້ດຳເນີນ ການທົບທວນ, ປັບປຸງ ແລະ ພັດທະນາພາລະບົດບາດ, ກົນໄກ, ໜ້າທີ່ ແລະ ຄວາມຮັບພິຊອບທັງໝົດຖ້າຫາກເຫັນວ່າມີຄວາມຈຳເປັນຕ້ອງໄດ້ປ່ຽນແປງໃນຖານະທີ່ຕົນເອງໄດ້ເຂົ້າມາຮັບພິຊອບໜ້າທີ່ແທນຄະນະກຳມາທິການສິດທິມະ ນຸດ. ສະພາສິດທິມະນຸດຈະຕ້ອງດຳເນີນການໃຫ້ສຳເລັດຕາມການມອບໝາຍໃຫ້ພາຍໃນໜຶ່ງປີທີ່ເຂົ້າມາຮັບພິຊອບ ໃນວຽກງານດັ່ງກ່າວ. ວິທີການເຮັດວຽກຂອງສະພາແມ່ນຕ້ອງ:

- ໂປ່ງໃສ, ຍຸດຕິທຳ ແລະ ເປັນກາງ;
- ຕັ້ງໃຈປະຕິບັດໜ້າທີ່;
- ສາມາດເປັນທີ່ປຶກສາທີ່ມີປະສິດທິພາບ;
- ເປີດກວ້າງໃຫ້ມີການຕິດຕາມພົບປະສົນທະນາເພື່ອໃຫ້ຄຳຄິດເຫັນ ແລະ ນຳໄປຈັດຕັ້ງປະຕິບັດ;
- ເປີດກວ້າງໃຫ້ມີການຮ່ວມມືໃນກົນໄກຕ່າງໆຂອງສະພາ.

ສະມັດຊາໃຫຍ່ຈະດຳເນີນການທົບທວນສະຖານະພາບຂອງສະພາສິດທິມະນຸດພາຍໃນ 5ປີ.[28]

28 ເບິ່ງມະຕິເລກທີ 60\251 ທີ່ສະມັດຊາໃຫຍ່ຮຽກຮ້ອງໃຫ້ສະພາສິດທິມະນຸດດຳເນີນການທົບທວນວຽກງານ ແລະ ໜ້າທີ່ຂອງຕົນເອງພາຍຫລັງທີ່ໄດ້ຮັບການສ້າງຕັ້ງມາໄດ້ 5ປີແລ້ວ ແລະ ໃຫ້ລາຍງານຕໍ່ສະມັດຊາໃຫຍ່.

**ລາຍລະອຽດການສ້າງຕັ້ງສະຖາບັນສະພາສິດທິມະນຸດ (ມະຕິເລກທີ 5/1)**

ໃນວັນທີ 18 ມິຖຸນາ 2007 ພາຍຫລັງກອງປະຊຸມຊຸດທໍາອິດຂອງສະພາ ແລະ ອີງຕາມຊ່ວງເວລາທີ່ຊຸ້ນຊ້ຽວໃນ "ການສ້າງຕັ້ງສະຖາບັນ", ສະພາສິດທິມະນຸດແມ່ນເຫັນດີກ່ຽວກັບບັນຊີລາຍການໜ້າວຽກ, ກົນໄກ ແລະ ໂຄງສ້າງຂອງ ຕົນ.

ການຮັບຮອງແມ່ນກໍານົດໃນມະຕິຂອງສະພາເລກທີ 5/1 ກ່ຽວກັບການສ້າງສະຖາບັນສະພາສິດທິມະນຸດສປຊ,[29] ລາຍລະອຽດລວມມີ:

- ລະບຽບການ ແລະ ກອບການເຮັດວຽກ;
- ວິທີການເຮັດວຽກແບບໃໝ່ ແລະ ກົດລະບຽບໃໝ່ຂອງການຄັດເລືອກຄະນະກໍາມາທິການຕາມລະບຽບການຂອງ ສະມັດຊາໃຫຍ່
- ຂະບວນການຮ້ອງທຸກ (ເອົາອັນໃໝ່ມາແທນລະບຽບການ 1503);
- ຄະນະກໍາມາທິການໃຫ້ຄໍາປຶກສາສະພາສິດທິມະນຸດ (ເຂົ້າມາແທນອານຸຄະນະກໍາມາທິການກ່ຽວກັບການປົກປ້ອງ ແລະ ສົ່ງເສີມສິດທິມະນຸດ);
- ຫຼັກການ, ຂັ້ນຕອນ ແລະ ຮູບແບບການແນະນໍາກ່ຽວກັບການດໍາເນີນງານໃໝ່ຂອງກົນໄກການທົບທວນ ສາກົນ ເປັນໄລຍະ (UPR); ແລະ
- ເງື່ອນໄຂສໍາລັບການສືບຕໍ່ທົບທວນ, ການຊີ້ແຈງ ແລະ ການປັບປຸງພັນທະໜ້າທີ່ຂອງຂະບວນການດໍາເນີນງານ ພິເສດ.

## ກົນໄກ ແລະ ພັນທະໜ້າທີ່ຂອງສະພາສິດທິມະນຸດເປັນແບບໃດ?

**ສະມາຊິກ**

ສະມາຊິກຂອງສະພາປະກອບດ້ວຍ 47 ລັດພາຄີທີ່ຖືກຄັດເລືອກມາໂດຍຕົງ ແລະ ເປັນສ່ວນບຸກຄົນຈາກການລົງຄະແນນ ສຽງແບບປິດລັບຕັດສິນໂດຍຄະແນນສຽງສ່ວນຫລາຍຈາກປະເທດສະມາຊິກໃນສະມັດຊາໃຫຍ່. ປະຫວັດທາງດ້ານ ສິດທິມະນຸດ, ຄໍາໝັ້ນສັນຍາ ແລະ ຄວາມເສຍສະຫລະໃຫ້ແກ່ວຽກງານສິດທິມະນຸດແມ່ນເປັນບັນທັດຖານໃນການ ຄັດເລືອກເອົາຜູ້ສະໝັກ. ລັດພາຄີທີ່ເປັນສະມາຊິດຂອງສະພາສິດທິມະນຸດນີ້ຈະມີອາຍຸການສາມປີ ແລະ ຈະບໍ່ມີສິດລົງ ສະໝັກໄດ້ອີກທັນທີຖ້າໄດ້ດໍາລົງຕໍາແໜ່ງມາແລ້ວສອງສະໄໝຕິດຕໍ່ກັນ.

ໃນກໍລະນີທີ່ລັດສະມາຊິກຂອງສະພາຫາກໄດ້ມີການລະເມີດສິດທິມະນຸດຢ່າງຮ້າຍແຮງ ແລະ ເປັນລະບົບ, ສະມັດຊາໃຫຍ່ກໍ່ຈະດໍາເນີນການລົງຄະແນນໂດຍເອົາຄະແນນສຽງສ່ວນຫລາຍເປັນອັນຕັດສິນວ່າລັດສະມາຊິກດັ່ງກ່າວ ນັ້ນຕ້ອງໄດ້ອອກຈາກຕໍາແໜ່ງໃນສະພາສິດທິມະນຸດໄປທັນທີ.



ລາຍຊື່ລັດສະມາຊິກຂອງສະພາສິດທິມະນຸດແມ່ນສາມາດເບິ່ງໃນເວບໄຊ້ຂອງ OHCHR.

[29] ມະຕິ 5/1 ຖືກຮັບຮອງໂດຍສະມັດຊາໃຫຍ່ໃນມັດເລກທີ 62/219.

**ກອງປະຊຸມ**

ໃນຂະນະທີ່ຄະນະກໍາມາທິການຊຸດກ່ອນໄດ້ປະຊຸມກັນພຽງແຕ່ປີລະຄັ້ງທີ່ໃຊ້ເວລາຢູ່ 6 ອາທິດ, ສະພາສິດທິມະນຸດແມ່ນຈະປະຊຸມກັນຢ່າງໜ້ອຍສາມຄັ້ງຕໍ່ປີ, ແຕ່ລະຄັ້ງອາດໃຊ້ເວລາຢູ່ສິບອາທິດໂດຍຈະປະຊຸມກັນຢູ່ສໍານັກງານ ສປຊ ຢູ່ນະຄອນເຈນນີວາ. ກອງປະຊຸມຫຼັກສີ່ອາທິດທໍາອິດນັ້ນແມ່ນຈະເລີ່ມໃນເດືອນມີນາ.

ສະພາຍັງອາດສາມາດຈັດກອງປະຊຸມພິເສດຕາມການຮຽກຮ້ອງຂອງລັດສະມາຊິກ, ກອງປະຊຸມຈະເປີດຂຶ້ນໄດ້ ກໍ່ຕໍ່ເມື່ອມີລັດສະມາຊິກເຂົ້າຮ່ວມປະມານສອງສ່ວນສາມ.[30] ມາຮອດເດືອນກັນຍາ 2008 ສະພາໄດ້ຈັດກອງປະຊຸມແບບພິເສດນີ້ມາແລ້ວເຈັດຄັ້ງ.[31]

ສະພາຍັງມີການຈັດຄະນະປຶກສາຫາລື ແລະ ກິດຈະກໍາພິເສດເພື່ອສົ່ງເສີມການສົນທະນາ ແລະ ຄວາມເຂົ້າ ໃຈເຊິ່ງກັນ ແລະກັນກ່ຽວກັບບັນຫາສະເພາະໃດໜຶ່ງ. ມາຮອດເດືອນກັນຍາ 2008 ສະພາໄດ້ຈັດກິດຈະກໍາແບບພິເສດນີ້ມາແລ້ວເຈັດຄັ້ງ.[32] ກິດຈະກໍາດັ່ງກ່າວລວມມີການປຶກສາຫາລືປະຈໍາປີກ່ຽວກັບຄົນພິການ[33] ແລະ ການນໍາເອົາບັນຫາທາງເພດເຂົ້າມາໃນວຽກງານ ແລະ ເຂົ້າໃນກົນໄກຂອງສະພາ.[34]

**ພັນທະໜ້າທີ່ ແລະ ກົນໄກຕ່າງໆ**

A. ກົນໄກການທົບທວນ

ກົນໄກການທົບທວນ (UPR) ເປັນກົນໄກສິດທິມະນຸດໃໝ່. ກົນໄກດັ່ງກ່າວແມ່ນສະພາສິດທິມະນຸດຈະໃຫ້ການທົບທວນຕາມໄລຍະທີ່ກໍານົດເພື່ອເບິ່ງການຈັດຕັ້ງປະຕິບັດຕາມພັນທະ ແລະ ຕາມຄໍາໝັ້ນສັນຍາຂອງບັນດາລັດພາຄີທັງ 192 ປະເທດ. (UPR) ແມ່ນກົນໄກການຮ່ວມມືທີ່ອີງໃສ່ການພົບປະສົນທະນາກັບລັດພາຄີທີ່ຢູ່ໃນການທົບທວນ. ການດໍາເນີນງານທີ່ວ່ານີ້ແມ່ນເປັນພຽງວຽກງານເສີມບໍ່ແມ່ນວຽກທີ່ເຮັດໜ້າທີ່ຄືກັນກັບຂອງບັນດາຄະນະກໍາມາທິການສິດທິມະນຸດຕ່າງໆ.

---

30 ກອງປະຊຸມສາມາດເປີດຂຶ້ນໄດ້ດ້ວຍການສະໜັບສະໜູນຈາກສະມາຊິກຈໍານວນໃດໜຶ່ງກໍ່ໄດ້ເຊິ່ງມັນແຕກຕ່າງຈາກການຈັດຂອງຄະນະກໍາມາທິການຊຸດເກົ່າທີ່ຕ້ອງການສະມາຊິກສະໜັບສະໜູນເປັນຈໍານວນຫລວງຫລາຍ (ຈໍານວນໜຶ່ງສ່ວນສາມຂອງ 47 ປະເທດສະມາຊິກຕໍ່ຈໍານວນ 53 ປະເທດສະມາ ຊິກທັງໝົດ). ກອງປະຊຸມພິເສດຂອງຄະນະກໍາມາທິການຊຸດກ່ອນນັ້ນສາມາດຈັດໄດ້ພຽງຫ້າຄັ້ງເທົ່ານັ້ນ.

31 ສາມຄັ້ງຈັດກ່ຽວກັບເຂດປົກຄອງປາເລສໄຕ (ເດືອນກໍລະກົດ ແລະ ພະຈິກ 2006 ແລະ ມັງກອນ 2008), ໜຶ່ງຄັ້ງກ່ຽວກັບປະເທດເລບາ ນອນ (ເດືອນ ສິງຫາ 2006), ໜຶ່ງຄັ້ງກ່ຽວກັບເຂດດາໂຟ (ເດືອນທັນວາ 2008), ໜຶ່ງຄັ້ງກ່ຽວກັບພະມ້າ (ເດືອນ ຕຸລາ 2007), ແລະ ອີກໜຶ່ງຄັ້ງແມ່ນກອງປະຊຸມພິເສດກ່ຽວກັບບັນຫາໄພພິບັດທາງອາຫານໃນໂລກ (ເດືອນພຶດສະພາ 2008).

32 ສອງຄັ້ງກ່ຽວກັບການຮັບຮອງ ແລະ ການນໍາໃຊ້ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ (ເດືອນມີນາ 2007 ແລະ ມິຖຸນາ 2008), ໜຶ່ງຄັ້ງກ່ຽວກັບຮ່າງລະບຽບການຂອງ ສປຊ ເພື່ອການນໍາໃຊ້ ແລະ ເງື່ອນໄຂຂອງການດູແລເດັກນ້ອຍຢ່າງເໝາະສົມ (ເດືອນມິຖຸນາ 2008), ໜຶ່ງຄັ້ງກ່ຽວກັບການສົນທະນາດ້ານສິດທິມະນຸດໃນຫລາຍມູມທາງວັດທະນາທໍາ ( ເດືອນ ມີນາ 2008), ໜຶ່ງຄັ້ງກ່ຽວກັບ ເປົ້າໝາຍສິດທິມະນຸດ (ເດືອນມີນາ 2008) ແລະ ໜຶ່ງຄັ້ງກ່ຽວກັບຄົນທີ່ຫາຍສາບສູນ (ກັນຍາ 2008).

33 ການສົນທະນາຄັ້ງທໍາອິດແມ່ນຈະຈັດຂຶ້ນຢູ່ທີ່ກອງປະຊຸມສາມັນຄັ້ງທີ່ສິບຂອງສະພາສິດທິມະນຸດ, ເພື່ອປຶກສາຫາລືກັນ ກ່ຽວກັບມາດຕະການທາງກົດໝາຍທີ່ສໍາຄັນເພື່ອໃຫ້ສັດຕະຍາບັນ ແລະ ຈັດຕັ້ງປະຕິບັດສົນທິສັນຍາສາກົນວ່າດ້ວຍສິດທິຂອງຄົນພິການຢ່າງມີປະສິດທິພາບ. ສໍານັກງານ OHCHR ໄດ້ຮັບການແນະນໍາໃຫ້ດໍາເນີນການກະກຽມສຶກສາປະເດັນທີ່ກ່າວມານີ້ໂດຍປຶກສາຫາລືກັບອົງການອື່ນໆໂດຍສະ ເພາະແມ່ນອົງການພາກປະຊາສັງຄົມ.

34 ເບິ່ງມະຕິ 6\30 ຂອງເດືອນທັນວາ 2007. ກອງປະຊຸມຄັ້ງທໍາອິດກ່ຽວກັບບັນຫາທີ່ພາໃຫ້ເກີດມີການລະເມີດຕໍ່ແມ່ຍິງແມ່ນໄດ້ຈັດຢູ່ ກອງປະຊຸມຄັ້ງທີ ແປດ ແລະ ແບ່ງອອກເປັນສອງຄະນະ: ຄະນະທີໜຶ່ງແມ່ນລົງເລິກກ່ຽວກັບຄວາມຮຸນແຮງທີ່ມີຕໍ່ແມ່ຍິງ, ແລະ ຄະນະທີສອງ ແມ່ນລົງເລິກກ່ຽວກັບອັດ ຕາການເສຍຊີວິດຂອງຜູ້ເປັນແມ່. ໃນເດືອນກັນຍາ 2008 ສະພາໄດ້ນໍາພາຄະນະປຶກສາກ່ຽວກັບການນໍາ ເອົາບັນຫາທາງເພດເຂົ້າສູ່ໃນວຽກ ງານຂອງສະພາ.

UPR ແມ່ນເປັນຂະບວນການດໍາເນີນງານທີ່ປະກອບດ້ວຍຫລາຍຂັ້ນຕອນພາຍໃນວົງຈອນສີ່ປີຄື:

- ການກະກຽມຂໍ້ມູນທີ່ຈະກ່ຽວຂ້ອງກັບຂະບວນການທົບທວນ (ມີເອກະສານຂໍ້ມູນທີ່ລັດພາຄີໄດ້ກຽມໄວ້ກໍ່ຄືບົດລາຍ ງານແຫ່ງຊາດ), ເອກະສານຕ່າງໆຂອງ ສປຊ ທີ່ສໍານັກງານ OHCHR ໄດ້ກະກຽມ, ແລະ ເອກະສານທີ່ກ່ຽວ ຂ້ອງກັບການຮຽກຮ້ອງຕ່າງໆເຊິ່ງ OHCHR ເປັນຜູ້ກະກຽມ;
- ການດໍາເນີນການທົບທວນແມ່ນຈະຖືກດໍາເນີນໃນກອງປະຊຸມໜ່ວຍງານຮັບພິຊອບຂອງ UPR ເຊິ່ງມີສະມາຊິກ ຂອງ ສະພາສິດທິມະນຸດ 47 ປະເທດເຂົ້າຮ່ວມ ແລະ ຈະໄດ້ປະຕິບັດໜ້າທີ່ເປັນເວລາສອງອາທິດຕໍ່ຄັ້ງໃນຈໍານວນສາມກອງ ປະຊຸມທົບທວນ;[35]
- ການພິຈາລະນາ ແລະ ຮັບຮອງຜົນຈາກການທົບທວນແມ່ນຈະໄດ້ຮັບຮອງເອົາໃນທີ່ປະຊຸມສາມັນຂອງສະພາສິດ ທິມະນຸດ; ແລະ
- ຕິດຕາມການຈັດຕັ້ງປະຕິບັດຂອງລັດພາຄີຕາມຄໍາແນະນໍາທີ່ມີໃນບົດສະຫລຸບຈາກກອງປະຊຸມທົບທວນ.

ໜ່ວຍງານທີ່ກ່ຽວຂ້ອງທີ່ອາດໄດ້ເຂົ້າຮ່ວມໃນຂັ້ນຕອນຕ່າງໆຂ້າງເທິງນີ້ມີ: NGOs, ນັກເຄື່ອນໄຫວປົກປ້ອງສິດທິມະນຸດ, ສະຖາບັນການສຶກສາ ແລະ ການຄົ້ນຄົ້ວຕ່າງໆ, ອົງການລະດັບພາກພື້ນ, ແລະ ຕົວແທນອົງການພາກປະຊາສັງຄົມ.

ຂໍ້ມູນເພີ່ເຕີມກ່ຽວກັບຂະບວນການທົບທວນແມ່ນສາມາດເບິ່ງໄດທີ່ບົດທີ VII (ຂະບວນການທົບທວນ) ໃນປື້ມຄູ່ມືນີ້

## B. ຄະນະກໍາມາທິການໃຫ້ຄໍາປຶກສາຂອງສະພາສິດທິມະນຸດ

ນະຄະທີ່ປຶກສານີ້ແມ່ນເປັນອົງກກອນຊ່ວຍວຽກຂອງສະພາເຊິ່ງໄດ້ຮັບການສ້າງຂຶ້ນມາເພື່ອແທນທີ່ອານຸຄະນະກໍາມາທິການກ່ຽວກັບການສົ່ງເສີມ ແລະ ປົກປ້ອງສິດທິມະນຸດຂອງຄະນະກໍາມາທິການສິດທິມະນຸດຊຸດເກົ່າ, ແລະ ມີໜ້າທີ່ຄືກັນກັບອົງກອນທີ່ໃຫ້ຄໍາປຶກສາທາງດ້ານເສດຖະກິດ ແລະ ການເມືອງສະເພາະ. ນອກນີ້ຄະນະຍັງເຮັດໜ້າທີ່ຫຼັກໃນດ້ານກາສຶກສາ ຄົ້ນຄົ້ວຕາມການຊີ້ນໍາຂອງສະພາສິດທິມະນຸດ.

ໃນເມື່ອທາງຄະນະກໍາມາທິການທີ່ປຶກສາບໍ່ສາມາດອອກມະຕິ ຫຼື ຕັດສິນໃຈໃນບັນຫາໃດໜຶ່ງ, ຫຼື ຂໍແຕ່ງຕັ້ງໜ່ວຍງານຊ່ວຍວຽກໄດ້, ທາງຄະນະກໍ່ແມ່ນສາມາດຂໍຄໍາແນະນໍາຈາກສະພາສິດທິມະນຸດໃນດ້ານ:

- ຮັກສາຄວາມມີປະສິດທິພາບໃນຂະບວນການດໍາເນີນງານຕ່າງໆ; ແລະ
- ເຮັດບົດຄົ້ນຄົ້ວທີ່ກ່ຽວກັບກອບຂອງວຽກງານຂອງຕົນ.

ໃນຄະນະທີປຶກສາປະກອບມີຊ່ຽວຊານ 18 ທ່ານທີ່ມາຈາກແຕ່ລະອົງກອນໃນ 5 ພາກພື້ນຂອງ ສປຊ (ອັບຟຣິກາ, ອາຊີ, ຢູໂຣບຕາເວັນອອກ, ລາຕິນອາເມລິກາ ແລະ ແຖບຖະເລຄາລິບບ້ຽນ, ແລະ ຢູໂຣບຕາເວັນຕົກ ແລະ ອື່ນໆ). ສະມາຊິດຂອງຄະນະແມ່ນມີອາຍຸການສາມປີ ແລະ ສາມາດຖືກເລືອກເຂົ້າມາໄດ້ອີກໜຶ່ງຄັ້ງ.

35 ຄະນະກໍາມາທິການໃຫ້ຄໍາປຶກສາຈະປະຊຸມໃນໜ່ວຍງານຂອງ UPR ເປັນສອງກຸ່ມ, ແຕ່ລະກຸ່ມແມ່ນມີ 16 ລັດສະມາຊິກເຂົ້າຮ່ວມ-ບໍ່ໃຫ້ເຂົ້າຮ່ວມເກີນ 48 ລັດສະມາຊິກໃນແຕ່ລະປີ.

36 ~~ເຖິງຢ່າງໃດກໍ່ຕາມມະຕິ 5\1~~ ກໍານົດວ່າສໍາລັບອາຍຸການຂອງສະມາຊິກໜຶ່ງສ່ວນສາມໃນຊຸດທໍາອິດແມ່ນມີພຽງ1ປີ ແລະ ສ່ວນທີສອງຂອງໜຶ່ງສ່ວນສາມນັ້ນແມ່ນຈະໄດ້ອາຍຸການ 2ປີ, ເຫດຜົນກໍ່ເພື່ອເປັນການໝູນວຽນໃນແຕ່ລະປີ

ຄະນະກຳມາທິການໃຫ້ຄຳປຶກສາຈະປະຊຸມກັນປີລະ 2 ຄັ້ງເຊິ່ງຈະໃຊ້ເວລາບໍ່ໃຫ້ເກີນ 10 ວັນລາດສະການ, ແລະ ອາດສາມາດຈັດກອງປະຊຸມພິເສດໂດຍອີງຕາມການອານຸມັດຂອງສະພາສິດທິມະນຸກ.

ຂໍ້ມູນເພີ່ມເຕີມກ່ຽວກັບຄະນະກຳມາທິການໃຫ້ຄຳປຶກສາແມ່ນສາມາດເບິ່ງເວບໄຊ້ຂອງ OHCHR

## B. ຂະບວນການຮ້ອງທຸກ

ຂະບວນການນີ້ແມ່ນຊ່ວຍແກ້ໄຂບັນຫາການລະເມີດສິດທິມະນຸດທີ່ໄດ້ຮັບການຢືນຢັນຈາກຫລາຍມຸມໃນໂລກບໍ່ວ່າຈະເກີດໃນບ່ອນໃດ ແລະໃນສະພາບການໃດຂອງໂລກ. ການດຳເນີນງານແມ່ນອີງຕາມລະບຽບການ 1503 ຂອງຄະນະກຳມາທິການຊຸດເກົ່າ ແລະ ໄດ້ປັບປຸງເພື່ອໃຫ້ແທດເໝາະໃນການຮັບປະກັນເຖິງຄວາມທ່ຽງທຳ, ເປັນກາງ, ມີປະສິດ ທິພາບ, ໃສ່ໃຈຜູ້ເຄາະຮ້າຍ, ແລະ ດຳເນີນການວ່ອງໄວ.

ການດຳເນີນງານແມ່ນອີງຕາມການລາຍງານຈາກບຸກຄົນ, ກຸ່ມຄົນ ຫຼື ອົງການຈັດຕັ້ງໃດໜຶ່ງທີ່ຮຽກຮ້ອງ ຄວາມເປັນທຳ ຫຼື ມີຂໍ້ມູນກ່ຽວກັບການລະເມີດສິດ. ໜ່ວຍງານທີ່ຮັບພິຊອບໃນຂະບວນການຊ່ວຍເຫຼືອແມ່ນມີສອງໜ່ວຍ ງານຄື: ໜ່ວຍງານສື່ສານ ແລະ ໜ່ວຍງານກວດກາສະຖານະການ. ໜ່ວຍງານເຫລົ່ານີ້ຈະຊ່ວຍກວດສອບຮັບຂໍ້ມູນ ໃນການສື່ສານ ແລະ ນຳມາທຽບໃສ່ການລະເມີດຕໍ່ບັນດາຫລັກການຕ່າງໆທີ່ເຫັນວ່າມັນຕົກໃນສະພາບໃດຂອງການ ລະເມີດສິດທິມະນຸດ ແລະ ລະເມີດສິດເສລີພາບຂັ້ນພື້ນຖານ ແລ້ວຈະສະຫລຸບສົ່ງໃຫ້ສະພາສິດທິມະນຸດໄດ້ຮັບຊາບ.

ຫລັງຈາກນັ້ນສະພາສິດທິມະນຸດຈະດຳເນີນການກວດກາເບິ່ງຄືນບົດລາຍງານທີ່ໄດ້ຈາກໜ່ວຍງານຮັບພິ ຊອບແບບປິດລັບ (ຖ້າບໍ່ມີການຕັດສິນໃຈຢ່າງອື່ນ) ແລະ ອາດຈະ:

- ບໍ່ດຳເນີນການໃດໆຖ້າຫາກເຫັນວ່າສະພາບທີ່ໄດ້ຮັບລາຍງານມານັ້ນມັນບໍ່ໄດ້ຢູ່ໃນເຂດອຳນາດຕົນ;
- ດຳເນີນການທົບທວນສະຖານະການ ແລະ ຮຽກຮ້ອງໃຫ້ລັດພາຄີທີ່ກ່ຽວຂ້ອງນັ້ນອອກມາຊີ້ແຈງພາຍໃນເວ ທີ່ກຳນົດ;
- ດຳເນີນການທົບທວນສະຖານະການ ແລະ ແຕ່ງຕັ້ງຊ່ຽວຊານເອກະລາດທີ່ມີຄຸນນະວຸດທິສູງເພື່ອດຳເນີນການ ກວດກາສະພາບ ແລະ ລາຍງານກັບຄືນຫາສະພາສິດທິມະນຸດ; ຫຼື
- ແນະນຳໃຫ້ OHCHR ດຳເນີນການຊ່ວຍເຫລືອຮ່ວມມືທາງວິຊາການ, ຊ່ວຍເຫລືອທາງດ້ານການສ້າງ ຄວາມອາດສາມາດ ຫລື ໃຫ້ຄຳແນະນຳແກ່ລັດພາຄີທີ່ກ່ຽວຂ້ອງ.

ຂໍ້ມູນເພີ່ມເຕີມກ່ຽວກັບຂະບວນການຮ້ອງທຸກແມ່ນສາມາດເບິ່ງໄດ້ໃນບົດທີ VIII (ການຢື່ນຄຳຮ້ອງທຸກກ່ຽວກັບການຖືກລະເມີດສິດ) ໃນປື້ມຄູ່ມືນີ້.

## D. ຂະບວນການພິເສດ

ຂະບວນການພິເສດເປັນຊື່ທົ່ວໄປທີ່ຕັ້ງໃຫ້ແກ່ກົນໄກສິດທິມະນຸດ, ເປັນອົງກອນທີ່ໄດ້ຮັບການສ້າງຕັ້ງຂຶ້ນຈາກຄະນະ ກຳມາທິການຊຸດເກົ່າ ແລະ ຢູ່ພາຍໃຕ້ສະພາສິດທິມະນຸດໃນປະຈຸບັນເພື່ອດຳເນີນການກວດກາ, ໃຫ້ຄຳແນະນຳ, ແລະ ລາຍງານຕໍ່ສາທາລະນະກ່ຽວກັບສະພາບສິດທິມະນຸດໃນບາງປະເທດ ຫຼື ໃນເຂດປົກຄອງຕ່າງໆ (ເປັນພາລະບົດບາດລະ ດັບປະເທດ), ຫຼື ລາຍງານກ່ຽວກັບເຫດການລະເມີດສິດທິມະນຸດທີ່ໃຫຍ່ໆໃນທົ່ວໂລກ (ເປັນພາລະບົດທີ່ມີຄວາມໝາຍ ສຳຄັນ).

ຜູ້ທີ່ໄດ້ຮັບພາລະບົດບາດ (ຜູ້ລາຍງານພິເສດ, ຜູ້ແທນພິເສດ, ຜູ້ແທນຕ່າງໆ, ຊ່ຽວຊານເອກະລາດ, ແລະ ສະມາຊິກຂອງໜ່ວຍງານຕ່າງໆ) ແມ່ນຈະໃຫ້ການຊ່ວຍເຫລືອຢ່າງສຸດຄວາມສາມາດ. ການປະຕິບັດໜ້າທີ່ລວມມີ:

- ຮັບ, ແລກປ່ຽນ ແລະ ວິເຄາະຂໍ້ມູນກ່ຽວກັບສະຖານະການສິດທິມະນຸດ;
- ແກ້ໄຂຄຳຮ້ອງທຸກຂອງບຸກຄົນ;
- ດຳເນີນການສຶກສາບັນຫາຕ່າງໆ;
- ສົ່ງໜັງສື ຫຼື ຄຳຮ້ອງຂໍດ່ວນກ່ຽວກັບການລະເມີດໃຫ້ແກ່ລັດພາຄີ;
- ລົງຢ້ຽມຢາມພື້ນທີ່ຕາມການເຊີນຂອງລັດຖະບານ, ເກັບກຳຂໍ້ມູນທີ່ພົບເຫັນ ແລະ ໃຫ້ຄຳແນະນຳຕາມທີ່ ໄດ້ພົບພໍ້ຈາກການລົງຢ້ຽມຢາມ;
- ແນະນຳໃຫ້ມີການຮ່ວມມືທາງວິຊາການໃນລະດັບຊາດ; ແລະ
- ເຂົ້າຮ່ວມໃນວຽກງານສົ່ງເສີມທົ່ວໄປ.

ສຳນັກງານ OHCHR ແມ່ນໃຫ້ການປະກອບສ່ວນແກ່ຜູ້ທີ່ໄດ້ຮັບພາລະບົດຂອງຂະບວນການ ພິເສດທາງດ້ານບຸກຄະລາກອນ, ດ້ານການເດີນທາງ ແລະ ການຄົ້ນຄ້ວເພື່ອສະໜັບສະໜູນວຽກງານຂອງເຂົາເຈົ້າ.

ຂໍ້ມູນເພີ່ເຕີມກ່ຽວກັບຂະບວນການດຳເນີນງານພິເສດແມ່ນສາມາດເບິ່ງໄດ້ທີ່ບົດທີ VI (ຂະບວນການດຳເນີນງານພິເສດ) ໃນປື້ມຄູ່ມືນີ້.

## E. ກຸ່ມໜ່ວຍງານຂອງສະພາສິດທິມະນຸດ

ເປັນໜ່ວຍງານເພື່ອການປ່ຽນແປງກ່ຽວກັບສິດທິໃນການພັດທະນາທີ່ໄດ້ຖືກສ້າງຕັ້ງຂຶ້ນຈາກຄະນະກຳມາທິການສິດທິ ມະນຸດຊຸດເກົ່າ.[37] ໃນເດືອນມີນາ 2007 ສະພາສິດທິມະນຸດໄດ້ໃຫ້ພາລະໜ້າທີ່ໃໝ່ແກ່ໜ່ວຍງານດັ່ງກ່າວເປັນເວລາ 2ປີ (ມະຕິ 4/4).

ໜ່ວຍງານດັ່ງກ່າວຈະປະຊຸມປະຈຳປີເຊິ່ງຈະໃຊ້ເວລາຢູ່ຫ້າວັນ. ຈຸດປະສົງກໍ່ເພື່ອ:

- ກວດກາ ແລະ ທົບທວນຄວາມກ້າວໜ້າໃນການສົ່ງເສີມ ແລະ ຈັດຕັ້ງປະຕິບັດສິດທິໃນການພັດທະນາ;

37 ໃຫ້ເບິ່ງມະຕິ 1998/72 ແລະ ການຕັດສິນໃຈຂອງ ECOSOC ເລກທີ 1998/269.

- ທົບທວນບົດລາຍງານ ແລະ ຂໍ້ມູນທີ່ໄດ້ຮັບຈາກລັດພາຄີ, ຈາກອົງກອນ ສປຊ ແລະ ອົງການຈັດຕັ້ງສາກົນອື່ນໆ; ແລະ
- ນຳສະເໜີບົດລາຍງານໃຫ້ແກ່ສະພາສິດທິມະນຸດເພື່ອພິຈາລະນາກ່ຽວກັບແຜນງານຕ່າງໆເຊິ່ງລວມມີຄຳແນະນຳໃຫ້ OHCHR ກ່ຽວກັບການຈັດຕັ້ງປະຕິບັດສິດທິໃນການພັດທະນາ, ແລະ ແນະນຳກ່ຽວກັບຄວາມເປັນໄປໄດ້ໃນການຮ່ວມມືຊ່ວຍເຫລືອທາງວິຊາການຕາມການຮຽກຮ້ອງຂໍຈາກລັດພາຄີ.

ຢູ່ໃນມະຕິດຽວກັນຂ້າງເທິງນັ້ນ, ສະພາສິດທິມະນຸດກໍ່ໄດ້ຕໍ່ອາຍຸການໃຫ້ແກ່ໜ່ວຍງານລະດັບສູງທີ່ເຮັດໜ້າທີ່ກ່ຽວກັບສິດທິໃນການພັດທະນາເປັນເວລາສອງປີໂດຍວາງພາລະໜ້າທີ່ໃຫ້ຕາມກອບຂອງກຸ່ມໜ່ວຍງານດ້ານສິດທິ ທີ່ໃນການພັດທະນາ. ໜ່ວຍງານດັ່ງກ່າວແມ່ນມີຊ່ຽວຊານຫ້າທ່ານປະຈຳທີ່ໄດ້ຮັບການສະເໜີມາຈາກປະທານຂອງກຸ່ມໜ່ວຍງານວ່າດ້ວຍສິດທິໃນການພັດທະນາດ້ວຍການປຶກສາຫາລືກັບບັນດາອົງກອນທາງພາກພື້ນຂອງ ສປຊ ແລະ ສະມາຊິກຈາກສະຖາບັນຕ່າງໆເຊິ່ງລວມມີບັນດາຜູ້ແທນຈາກສະຖາບັນການຄ້າ, ການເງິນ ແລະ ການພັດທະນາຕ່າງໆ. ກອງປະຊຸມຂອງໜ່ວຍງານແມ່ນມີປີລະເທື່ອເຊິ່ງຈະໃຊ້ເວລາຢູ່ເຈັດວັນລາດສະການ ແລະ ມີໜ້າທີ່ລາຍງານໃຫ້ແກ່ກຸ່ມ ຂອງໜ່ວຍງານ.

## F. ກອງປະຊຸມທາງສັງຄົມ

ໃນປີ 2007 ສະພາສິດທິມະນຸດໄດ້ຕໍ່ອາຍຸການຂອງໜ່ວຍງານກອງປະຊຸມທາງສັງຄົມ, ໂດຍໃຫ້ຮັກສາໄວ້ເປັນ "ເວທີເພື່ອການພົບປະສົນທະນາລະຫວ່າງໜ່ວຍງານກົນໄກສິດທິມະນຸດ ສປຊ ແລະ ອົງການຕ່າງໆທີ່ກ່ຽວຂ້ອງເຊັ່ນວ່າ ອົງການຂັ້ນຮາກຖານຕ່າງໆ. ນອກຈາກໃຫ້ການຕໍ່ອາຍຸການແລ້ວ ສະພາສິດທິມະນຸດຍັງໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນຂອງໜ່ວຍງານກອງປະຊຸມນີ້ວ່າເປັນເວທີທີ່ສຳຄັນໃຫ້ແກ່ການປະສານງານໃນລະດັບຊາດ, ພາກພື້ນ ແລະ ລະດັບສາກົນເພື່ອເປັນການສົ່ງເສີມການຢູ່ຮ່ວມກັນທາງສັງຄົມໂດຍອີງໃສ່ຫຼັກການຄວາມເປັນທຳທາງສັງຄົມ, ຄວາມເທົ່າທຽມ, ແລະຄວາມສະມະຄີເຊິ່ງມັນບໍ່ຕ່າງຫຍັງກັບເປັນການແກ້ໄຂບັນຫາສິ່ງທ້າທາຍ ແລະ ຄວາມຫລາກຫລາຍທາງສັງຄົມ ທີ່ໄປຕາມຍຸກສະຫະສະວັດ" (ມະຕິ 6\13).

ການລິເລີ່ມຂອງອານຸກຳມາທິການຊຸດເກົ່າ, ໜ່ວຍງານກອງປະຊຸມທີ່ວ່ານີ້[38] ແມ່ນໄດ້ເກີດມາຈາກກອງປະຊຸມກະກຽມສອງວັນກ່ອນຈະເປີດກອງປະຊຸມປະຈຳປີຂອງອານຸກຳມາທິການທີ່ຈັດກ່ຽວກັບສິດທິທາງດ້ານເສດຖະກິດ, ສັງຄົມ ແລະວັດທະນາທຳ. ໃນເມື່ອກ່ອນໜ່ວຍງານກອງປະຊຸມທາງສັງຄົມນີແມ່ນຂຶ້ນກັບອານຸກຳມາທິການ ແຕ່ໃນປະຈຸບັນໜ່ວຍງານນີ້ແມ່ນເປັນກົນໄກຂອງສະພາສິດທິມະນຸດອິດສະຫລະ.

ກອງປະຊຸມຂອງໜ່ວຍງານແມ່ນປະມີປີລະເທື່ອ ແລະ ຈະໃຊ້ເວລາຢູ່ສາມວັນເພື່ອລົງເລິກສະເພາະບັນຫາທີ່ສຳຄັນເພື່ອໃຫ້ສອດຄ່ອງກັບວຽກຂອງສະພາສິດທິມະນຸດ. ກອງປະຊຸມຄັ້ງທຳອິດແມ່ນໃນປີ 2008 ເຊິ່ງເຮັດໜ້າທີ່ເປັນກົນໄກຂອງສະພາສິດທິມະນຸດ ແລະ ໃນກອງປະຊຸມຄັ້ງນັ້ນກໍ່ມີບັນດາຜູ້ທີ່ມີພາລະໜ້າທີ່ກ່ຽວຂ້ອງໄດ້ພາກັນເຂົ້າຮ່ວມຕາມການເຊີນຂອງສະພາສິດທິມະນຸດ. ໃນທີ່ປະຊຸມກໍ່ໄດ້ມີການສອບຖາມໃຫ້ຮ່າງບົດສະຫລຸບ ແລະຄຳແນະນຳຕ່າງໆທີ່ຈະນຳໄປສະເໜີໃຫ້ແກ່ອົງກອນທີ່ກ່ຽວຂ້ອງໂດຍໃຫ້ຜ່ານສະພາສິດທິມະນຸດ ແລະ ເນັ້ນ:

- ບັນຫາທີ່ກ່ຽວຂ້ອງກັບການຫລຸດຜ່ອນຄວາມທຸກຍາກໃນມູມຂອງສິດທິມະນຸດ;

38 ຢ່າໄປສັບສົນກັບກອງປະຊຸມທາງສັງຄົມສາກົນ

- ຮັບເອົາຍຸດທະວິທີສຳລັບການຫລຸດຜ່ອນຄວາມທຸກຍາກທີ່ທາງອົງການຂັ້ນຮາກຖານໄດ້ນຳສະເໜີຕໍ່ທີ່ປະຊຸມ; ແລະ
- ສ້າງມາດຕະການທາງສັງຄົມໃຫ້ເຂົ້າກັບຍຸກສະທະສະວັດ.

ກອງປະຊຸມທາງສັງຄົມແມ່ນເປັນປະທານໂດຍທ່ານປະທານຂອງນັກຂຽນລາຍງານທີ່ໄດ້ຮັບການແຕ່ງຕັ້ງໂດຍປະທານສະພາສິດທິມະນຸດໃນແຕ່ລະປີເຊິ່ງຈະຄັດເລືອກເອົາຜູ້ສະໝັກທີ່ທາງໜ່ວຍງານໃນພາກພື້ນຕ່າງໆເປັນຜູ້ສົ່ງລາຍຊື່ເຂົ້າມາ.

ຂໍ້ມູນເພີ່ມເຕີມກ່ຽວກັບກອງປະຊຸມທາງສັງຄົມແມ່ນສາມາດເບິ່ງໃນເວບໄຊ້ຂອງ OHCHR.

## G. ກອງປະຊຸມວ່າດ້ວຍບັນຫາຂອງຊົນເຜົ່າ

ກອງປະຊຸມດັ່ງກ່າວ[39] ແມ່ນໄດ້ເຂົ້າມາແທນໜ່ວຍງານທີ່ເຮັດວຽກກ່ຽວກັບຊົນເຜົ່າຂອງຄະນະກຳມາທິການຊຸດກ່ອນ. ການດຳເນີນງານຂອງກອງປະຊຸມແມ່ນເພື່ອເປັນເວທີໃຫ້ແກ່ການສົ່ງເສີມການຮ່ວມມື ແລະ ການສົນທະນາບັນຫາທີ່ກ່ຽວກັບກຸ່ມ ຄົນທີ່ຖືສັນຊາດ ຫຼື ເປັນຊົນເຜົ່າ, ມີຄວາມເຊື່ອຖືສາດສະໜາ ຫຼື ມີຄວາມເດັ່ນດ້ານພາສາປາກເວົ້າດ້ວຍວິທີການ:

- ໃຫ້ການຊ່ວຍທາງດ້ານສິ່ງອຳນວຍຄວາມສະດວກ ແລະ ໃຫ້ຄວາມຮູ້ທາງວິຊາການແກ່ຜູ້ຊ່ຽວຍານອິດສິຫລະທີ່ເຮັດວຽກໃນບັນຫາຊົນເຜົ່າ; ແລະ
- ຄົ້ນຫາ ແລະ ວິເຄາະເອົາແນວທາງແກ້ໄຂທີ່ດີທີ່ສຸດ, ວິເຄາະຫາສິ່ງທີ່ທ້າທາຍ, ໂອກາດ ແລະ ການລິເລີ່ມໃນການຈັດຕັ້ງປະຕິບັດຖະແຫລງການວ່າດ້ວຍສິດທິຂອງຄົນທີ່ຢູ່ໃນສັນຊາດ, ຊົນເຜົ່າ, ສາດສະໜາ, ແລະ ພາສາຂອງຊົນເຜົ່າ.

ໃນແຕ່ລະປີກອງປະຊຸມແມ່ນຈະໄດ້ຈັດຂຶ້ນປີລະເທື່ອທີ່ນະຄອນເຈນີວາເຊິ່ງໃຊ້ເວລາຢູ່ສອງວັນເພື່ອດຳເນີນການປຶກສາຫາລື ແລະ ວາງຈຸດປະສົງໃນການປະກອບສ່ວນໃຫ້ແກ່ຄວາມພະຍາຍາມຂອງຂ້າຫລວງໃຫຍ່ທີ່ຢາກຈະພັດທະນາປັບປຸງການປະສານງານລະຫວ່າງກົນໄກ, ອົງກອນ ແລະ ສຳນັກງານພິເສດ, ກອງທຶນ ແລະ ໂຄງການຂອງ ສປຊ ທີ່ກ່ຽວຂ້ອງກັບການສົ່ງເສີມ ແລະ ປົກປ້ອງສິດທິຂອງຄົນຊົນເຜົ່າໂດຍສະເພາະແມ່ນໃນພາກພື້ນຕ່າງໆ.[40]

ໃນເວລາດຽວກັນ ທ່ານປະທານຂອງກອງປະຊຸມແມ່ນ (ໄດ້ຮັບການແຕ່ງຕັ້ງຈາກປະທານສະພາສິດທິມະນຸດໃນແຕ່ ລະປີໂດຍຜັດປ່ຽນເລືອກເອົາມາຈາກແຕ່ລະພາກພື້ນ) ຮັບພິຊອບໃນການເຮັດບົດສະຫລຸບຂອງກອງປະຊຸມ, ຜູ້ຊ່ຽວຊານອິດສະຫລະທີ່ເຮັດໜ້າທີ່ດ້ານຊົນເຜົ່າຈະເປັນຜູ້ນຳພາວຽກງານລວມ ແລະ ກະກຽມກອງປະຊຸມປະຈຳປີ. ຜູ້ຊ່ຽວຊານອິດສະຫລະນີ້ ຍັງໄດ້ຮັບກຽດໃຫ້ອອກຄຳຄິດເຫັນໃສ່ໃນບົດລາຍງານຂອງກອງປະຊຸມ ແລະ ແນະນຳກ່ຽວກັບບັນຫາທີ່ຈະນຳມາສົນທະນາໃນ ຄັ້ງຕໍ່ໄປ, ແລະ ສົ່ງໃຫ້ສະພາສິດທິມະນຸດເພື່ອພິຈາລະນາ.

ພາຍຫລັງຄົບຮອບສີ່ປີຂອງການດຳເນີນງານ, ສະພາສິດທິມະນຸດແມ່ນຈະໄດ້ດຳເນີນການທົບທວນວຽກງານຂອງ ກອງປະຊຸມເຊັ່ນເຄີຍທົບທວນໃນປີ 2002.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບກອງປະຊຸມຊົນເຜົ່າ ແລະ ຊ່ຽວຊານອິດສະຫລະໃນວຽກງານຊົນເຜົ່າແມ່ນສາມາດ ເບິ່ງ ໃນເວບໄຊ້ຂອງ OHCHR

39. ແມ່ນໄດ້ຮັບການສ້າງຕັ້ງຈາກມະຕິສະພາສິດທິມະນຸດເລກທີ 6\15 ວັນທີ 20 ກັນຍາ 2007.

40. ໃນທີ່ປະຊຸມປະຈຳປີທີ່ຈັດໃນວັນທີ 15 ທັນວາ 2000, ກອງປະຊຸມແມ່ນຕັ້ງເປົ້າທີ່ຈະພິຈາລິນາກ່ຽວກັບການເຂົ້າສູ່ການສຶກສາຂອງ ຄົນຊົນເຜົ່າ.

## H. ກົນໄກຊ່ຽວຊານກ່ຽວກັບສິດທິຂອງຄົນພື້ນເມືອງ

ກົນໄກຊ່ຽວຊານກ່ຽວກັບສິດທິຂອງຄົນພື້ນເມືອງ41 ແມ່ນເຂົ້າມາປ່ຽນແທນໜ່ວຍງານສິດທິມະນຸດຂອງຄົນພິການຂອງຄະນະກຳມາທິການຊຸດເກົ່າ. ໃນຖານະທີ່ເປັນອົງກອນຊ່ວຍວຽກຂອງສະພາສິດທິມະນຸດ, ກົນໄກຊ່ຽວຊານແມ່ນເປັນຜູ້ສະໜອງຮູ້ຄວາມສາມາດດ້ານສິດທິຂອງຄົນພື້ນເມືອງໃຫ້ແກ່ສະພາຕາມການຮຽກຮ້ອງ ແລະ ຕາມໜ້າວຽກຂອງ ກົນໄກ. ກົນໄກຊ່ຽວຊານມີໜ້າທີ່ຕຽມບົດລາຍງານປະຈຳປີໃຫ້ແກ່ສະພາສິດທິມະນຸດ, ລົງເລິກກ່ຽວກັບການສຶກສາ ແລະ ການຄົ້ນຄ້ວ, ແລະ ອາດຈະສະເໜີແຜນບົດຄົ້ນຄ້ວຕາມໜ້າວຽກຂອງຕົນໃຫ້ແກ່ສະພາພິຈາລະນາຕາມເຫັນສົມຄວນ.

ກົນໄກຊ່ຽວຊານປະກອບດ້ວຍຊ່ຽວຊານອິດສະຫລະຢູ່ຫ້າທ່ານ, ມີອາຍຸການສາມປີ ແລະ ອາດໄດ້ຮັບການເລືອກເຂົ້າມາໃໝ່ອີກ. ກອງປະຊຸມຂອງກົນໄກແມ່ນຈະໃຊ້ເວລາຢູ່ປະມານຫ້າວັນເຊິ່ງລວມມີທັງກອງປະຊຸມປິດລັບ ແລະ ເປີດກວ້າງ ແລະ ມີອິດສະຫລະໃນການເລືອກແບບແຜນການເຮັດວຽກຂອງຕົນໄດ້ເຖິງວ່າແຜນດັ່ງກ່າວຈະບໍ່ໄດ້ຮັບອານຸມັດເປັນເອກະສັນກໍ່ຕາມ.

ນັກຂຽນລາຍງານພິເສດກ່ຽວກັບສະພາບການຂອງສິດທິ ແລະ ເສລີພາບຂັ້ນພື້ນຖານຂອງຄົນພື້ນເມືອງ ແລະ ສະມາຊິກຂອງກອງປະຊຸມປະຈຳຂອງບັນຫາຄົນພື້ນເມືອງແມ່ນສາມາດເຂົ້າຮ່ວມກອງປະຊຸມ ແລະ ປະກອບສ່ວນໃນກອງປະຊຸມປະຈຳປີຂອງກົນໄກໄດ້.

V

ຂໍ້ມູນເພີ່ມເຕີມກ່ຽວກັບກົນໄກຜູ້ຊ່ຽວຊານ ແລະ ນັກຂຽນລາຍງານພິເສດກ່ຽວກັບສະພາບການຂອງສິດທິ ແລະ ເສລີພາບຂັ້ນພື້ນຖານຂອງຄົນພື້ນເມືອງແມ່ນສາມາດເບິ່ງໄດ້ທີ່ເວບໄຊ້ຂອງ OHCHR.

## I. ຖະແຫລງການ ແລະ ແຜນງານຈັດຕັ້ງປະຕິບັດແຫ່ງເມືອງເດີບານ

ໃນປີ 2001 ກອງປະຊຸມໂລກກ່ຽວກັບການຕ້ານການຈຳແນກເຊື້ອຊາດ, ຕ້ານຄວາມກຽດຊັງ ແລະ ຄວາມເປັນຊາດ ນິຍົມແມ່ນໄດ້ຈັດຂຶ້ນທີ່ເມືອງເດີບານ ປະເທດອັບຟຣິກາໃຕ້. ຖະແຫລງການເດີບານ ແລະ ແຜນງານປະຕິບັດທີ່ໄດ້ຮັບການຮັບຮອງໃນທີ່ປະຊຸມແມ່ນໄດ້ບັນທຶກຄຳໝັ້ນສັນຍາທີ່ບັນດາລັດພາຄີໄດ້ຮັບປາກວ່າຈະເຮັດວຽກຮ່ວມກັນເພື່ອກຳ ຈັດບັນຫາການແບ່ງແຍກເຊື້ອຊາດ, ການຈຳແນກສີຜິວ, ຄວາມກຽດຊັງ ແລະ ຄວາມເປັນຊາດນິຍົມ. ຄຳໝັ້ນສັນຍາ ເຫຼົ່ານັ້ນແມ່ນເປັນດັ່ງແຜນງານທີ່ລະອຽດ ແລະ ສາມາດດັດປັບໃສ່ການປະຕິບັດໜ້າທີ່ຕາມເປົ້າໝາຍຮ່ວມກັນເພື່ອຍົກ ສູງຄວາມຕື່ນຕົວກ່ຽວກັບຄວາມເທົ່າທຽມ ແລະ ການບໍ່ຈຳແນກເຊິ່ງກັນແລະກັນ.

ໃນປີ 2006 ສະມັດຊາໃຫຍ່ແຫ່ງ ສປຊ ໄດ້ຕັດສິນໃຈຈະຈັດປະຊຸມເພື່ອທົບທວນບັນຫາທີ່ໄດ້ຈາກກອງປະຊຸມໃນປີ 2009 ວ່າດ້ວຍການຈັດຕັ້ງປະຕິບັດຖະແຫລງການ ແລະ ແຜນງານແຫ່ງເມືອງເດີບານ. ສະມັດຊາໃຫຍ່ໄດ້ຮຽກຮ້ອງໃຫ້ສະພາສິດທິມະນຸດເປັນຜູ້ກຽມກອງປະຊຸມໂດຍໃຫ້ນຳໃຊ້ສາມກົນໄກ[42] ຂອງສະພາທີ່ມີຢູ່ເພື່ອສ້າງຮ່າງແຜນງານ, ສ້າງຄູ່ມືທີ່ອັບເດດ ແລະ ໃຫ້ລາຍງານກ່ຽວກັບການດຳເນີນງານທີ່

---

[41] ໄດ້ຮັບການສ້າງຂຶ້ນໂດຍມະຕິສະພາສິດທິມະນຸດ 6\36 ໃນວັນທີ 14 ທັນວາ 2007.

[42] ໜ່ວຍງານລະຫວ່າງປະເທດກ່ຽວກັບການຈັດຕັ້ງປະຕິບັດທີ່ມີປະສິດທິພາບຂອງຖະແຫລງການ ແລະ ແຜນດຳເນີນງານແຫ່ງເມືອງເດີບານ, ທີມງານຂອງຊ່ຽວຊານອິດສະຫລະທີ່ເດັ່ນໆໃນດ້ານການຈັດຕັ້ງປະຕິບັດຖະແຫລງການ ແລະ ແຜນດຳເນີນງານແຫ່ງເມືອງເດີບານ ແລະ ທີມງານຂອງຜູ້ຊ່ຽວຊານກ່ຽວກັບຄົນພື້ນເມືອງໃນອັບຟຣິກາ.

ເລີ່ມມາແຕ່ປີ 2007.[43] ຄະນະກຳມາທິການກະກຽມເພື່ອທົບທວນກອງປະຊຸມຂອງສະພາສິດທິມະນຸດເຫັນ ວ່າກອງປະຊຸມທົບທວນຄວນຈະຈັດໃນນະຄອນເຈນນີວາໃນເດືອນເມສາ 2009.

1. **ໜ່ວຍງານລະຫວ່າງປະເທດເພື່ອການຈັດຕັ້ງປະຕິບັດທີ່ມີປະສິດທິພາບຂອງຖະແຫລງການ ແລະ ແຜນງານແຫ່ງເມືອງເດີບານ.**

ໜ່ວຍງານດັ່ງກ່າວແມ່ນໄດ້ຮັບການສ້າງຕັ້ງຂື້ນໂດຍຄະນະກຳມາທິການສິດທິມະນຸດຊຸດກ່ອນ (ມະຕິ 2002\68). ໃນ ເດືອນມິຖຸນາ 2006 ສະພາສິດທິມະນຸດໄດ້ເພີ່ມໄລຍະເວລາການເຮັດວຽກອອກໄປອີກສາມປີ (ມະຕິ 1\5). ໜ່ວຍງານ ລະຫວ່າງປະເທດແມ່ນໄດ້ຮັບພາລະບົດບາດຄື:

- ໃຫ້ຄຳແນະນຳກ່ຽວກັບວິທີການຈັດຕັ້ງປະຕິບັດທີ່ມີປະສິດທິພາບຂອງຖະແຫລງການ ແລະ ແຜນງານແຫ່ງເມືອງ ເດີບານ;
- ກະກຽມບັນດາມາດຕະຖານສາກົນທີ່ເໝາະສົມເພື່ອສ້າງຄວາມເຂັ້ມແຂງ ແລະ ຍົກລະດັບກົນໄກສາກົນໃນການຕ້ານ ການຈຳແນກເຊື້ອຊາດ, ສີຜິວ, ຄວາມກຽດຊັງ ແລະ ຄວາມບໍ່ຍອມຮັບກັນແລະກັນຢ່າງຮອບດ້ານ.

ຂໍ້ມູນເພີ່ມກ່ຽວກັບໜ່ວຍງານລະຫວ່າງປະເທດຂ້າງເທິງນັ້ນແມ່ນສາມາດເບິ່ງໄດ້ທີ່ເວບໄຊ້ຂອງ OHCHR.

V

2. **ທີມງານຂອງຊ່ຽວຊານອິດສະຫລະກ່ຽວກັບການຈັດຕັ້ງປະຕິບັດຖະແຫລງການ ແລະ ແຜນງານແຫ່ງເມືອງເດີບານ**

ກອງປະຊຸມໂລກໄດ້ຮຽກຮ້ອງການຮ່ວມມືຈາກຂ້າຫລວງໃຫຍ່ແລະຜູ້ຊ່ຽວຊານອິດສະຫລະທັງຫ້າທ່ານເພື່ອຕິດຕາມການຈັດຕັ້ງປະຕິບັດບັນດາ ຂໍ້ກຳນົດຂອງຖະແຫລງການ ແລະ ແຜນງານແຫ່ງເມືອງເດີບານ.[44]

ໃນປີ 2003 ຊ່ຽວຊານອິດສະຫລະ (ໜຶ່ງທ່ານມາຈາກແຕ່ລະພາກພື້ນ) ແມ່ນໄດ້ຮັບການແຕ່ງຕັ້ງຈາກເລຂາ ທິການໃຫຍ່ ສປຊ, ທ່ານ ໂກຟີ່ອານັນ, ເປັນການຄັດເລື່ອກມາຈາກບັນດາຜູ້ສະມັກທີ່ທ່ານປະທານຂອງຄະນະກຳມາທິການ ສິດທິມະນຸດເປັນຜູ້ສະເໜີລາຍຊື່ມາຫລັງຈາກທີ່ໄດ້ປຶກສາຫາລືກັບໜ່ວຍງານພາກພື້ນຕ່າງໆ.

ພາລະໜ້າທີ່ທີ່ໄດ້ຮັບມອບໝາຍແມ່ນ:[44]

- ຕິດຕາມການຈັດຕັ້ງປະຕິບັດຖະແຫລງການ ແລະ ແຜນງານແຫ່ງເມືອງເດີບານໂດຍຮ່ວມມືກັບຂ້າຫລວງໃຫຍ່; ແລະ
- ຊ່ວຍວຽກຂອງຂ້າຫລວງໃຫຍ່ໃນການກະກຽມຮ່າງບົດລາຍງານທີ່ຮັບຜິຊອບເພື່ອສົ່ງໃຫ້ແກ່ສະພາສິດທິມະນຸດ ແລະ ສະມັດຊາ ໃຫຍ່ໂດຍອີງຕາມຂໍ້ມູນ ແລະ ຄວາມຄິດເຫັນຕ່າງໆທີ່ໄດ້ຈາກບັນດາລັດພາຄີ, ອົງກອນສິດທິມະນຸດ, ຂະບວນການພິເສດ ແລະ ກົນໄກອື່ນໆຂອງສະພາສິດທິມະນຸດ, ອົງການຈັດຕັ້ງສາກົນລະດັບໂລກ ແລະ ພາກພື້ນ, NGOs, ແລະ ສະຖາບັນ ສິດທິມະນຸດແຫ່ງຊາດ (NHRIs).

43 ເບິ່ງມະຕິສະມັດຊາໃຫຍ່ 61/149

44 ເບິ່ງວັກທີ 191 ( ຂອງແຜນງານຈັດຕັ້ງປະຕິບັດ ແລະ ມະຕິຂອງສະມັດຊາໃຫຍ່ 56\266.

45 ເບິ່ງມະຕິຂອງຄະນະກຳມາທິການສິດທິມະນຸດ 2003\30 ແລະ ເບິ່ງມະຕິສະມັດຊາໃຫຍ່ 59\177.

ຂໍ້ມູນເພີ່ມເຕີມກ່ຽວກັບຊ່ຽວຊານອິດສະຫລະທີ່ມີຊື່ສຽງ ແລະ ຂໍ້ມູນປະຈຸບັນກ່ຽວກັບທີມງານຂອງ ຜູ້ຊ່ຽວຊານວ່າດ້ວຍຄົນພື້ນເມືອງອັບຟຣິກາແມ່ນສາມາດເອົາໄດ້ທີ່ເວບໄຊ້ຂອງ OHCHR.

## 2. ໜ່ວຍງານຜູ້ຊ່ຽວຊານກ່ຽວກັບຄົນພື້ນເມືອງອັບຟຣິກາ

ໜ່ວຍງານດັ່ງກ່າວແມ່ນເປັນຂະບວນການພິເສດຂອງສະພາສິດທິມະນຸດ. ໜ່ວຍງານນີ້ແມ່ນເຄີຍຖືກສ້າງຕັ້ງມາຈາກຄະນະກຳມາທິການໂດຍອີງຕາມການຮຽກຮ້ອງຂອງກອງປະຊຸມໂລກ. ຄະນະໜ່ວຍງານປະກອບມີຊ່ຽວຊານອິດສະຫລະຫ້າທ່ານທີ່ຄັດເລືອກມາຈາກແຕ່ລະພາກພື້ນ. ໜ່ວຍງານແມ່ນໄດ້ປະຊຸມກັນປີຍະເທື່ອເຊິ່ງຈະໃຊ້ເວລາຢູ່ຫ້າມື້ ແລະ ກໍລົງຢ້ຽມຢາມພື້ນທີ່ຕາມການເຊີນຂອງລັດຕ່າງໆເພື່ອໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຄົນພື້ນເມືອງອັບຟຣິກາທີ່ຢູ່ ໃນແຕ່ລະພາກພື້ນຂອງໂລກ. ນອກນີ້ທາງໜ່ວຍງານຍັງໄດ້ມີໜ້າທີ່ລາຍງານປະຈຳປີໃຫ້ແກ່ສະພາສິດທິມະນຸດອີກດ້ວຍ. **ພາລະໜ້າທີ່ຂອງໜ່ວຍງານແມ່ນ:**[46]

- ສຶກສາບັນຫາກ່ຽວກັບການຈຳແນກເຊື້ອຊາດທີ່ຄົນພື້ນເມືອງອັບຟຣິກາໄດ້ພົບພໍ້ໃນຊີວິດປະຈຳວັນ ແລະ ຂໍຂໍ້ມູນນຳ ລັດຖະບານທີ່ກ່ຽວຂ້ອງຕ່າງໆ, ນຳ NGOs, ແລະ ຈາກພາກສ່ວນອື່ນໆເຊິ່ງອາດໄດ້ຂໍ້ມູນດ້ວຍວິທີການຈັດກອງ ປະຊຸມທີ່ເປັນແບບເປີດກວ້າງ;
- ສະເໜີມາດຕະການເພື່ອຮັບປະກັນການເຂົ້າເຖິງລະບົບຍຸດຕິທຳໃຫ້ແກ່ຄົນພື້ນເມືອງອັບຟຣິກາໃຫ້ໄດ້ຢ່າງຄົບຖ້ວນ ແລະ ມີປະສິດທິພາບ;
- ຍື່ນຂໍ້ສະເໜີກ່ຽວກັບແຜນງານ, ການຈັດຕັ້ງປະຕິບັດ ແລະ ການບັງຄັບໃຊ້ມາດຕະການທີ່ມີປະສິດທິພາບເພື່ອລົບລ້າງຂະບວນການຈຳແນກເຊື້ອຊາດແກ່ຄົນພື້ນເມືອງແຫ່ງອັບຟຣິກາ;
- ສ້າງແຜນງານໄລຍະສັ້ນ, ກາງ ແລະ ຍາວເພື່ອລົບລ້າງການຈຳແນກເຊື້ອຊາດໃຫ້ແກ່ຄົນພື້ນເມືອງອັບຟຣິກາ;
- ສ້າງຂໍ້ສະເໜີກ່ຽວກັບການລົບລ້າງການຈຳແນກເຊື້ອຊາດໃຫ້ແກ່ຄົນພື້ນເມືອງອັບຟຣິກາໃນທຸກມູມໂລກ; ແລະ
- ດຳເນີນການແກ້ໄຂທຸກບັນຫາກ່ຽວກັບຄວາມຢູ່ດີກິນດີຂອງຄົນອັບຟຣິກາ ແລະ ຄົນພື້ນເມືອງອັບຟຣິກາທີ່ກຳນົດໃນຖະແຫລງການ ແລະ ແຜນງານແຫ່ງເມືອງເດີບານ.

## 3. ຄະນະກຳມາທິການສະເພາະກິດກ່ຽວກັບການພິຈາລະນາມາດຕະຖານນຳໃຊ້ທີ່ເໝາະສົມ

ຄະນະກຳມາທິການດັ່ງກ່າວແມ່ນໄດ້ຮັບການສ້າງຕັ້ງຂື້ນຈາກສະພາສິດທິມະນຸດໃນເດືອນທັນວາ 2006 ໂດຍໄດ້ມອບ ໝາຍໜ້າທີ່ເປັນວຽກບູລິມະສິດ ແລະ ຕາມຄວາມຈຳເປັນເພື່ອໃຫ້ພັດທະນາບັນດາມາດຕະຖານທີ່ເໝາະສົມບໍ່ວ່າຈະເປັນ ໃນຮູບແບບຂອງສົນທິສັນຍາ ຫຼື ວ່າເປັນອານຸສັນຍາຕ່າງໆຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບຂອງການ ຈຳແນກເຊື້ອຊາດ. ມາດຕະຖານທີ່ເໝາະສົມນີ້ແມ່ນ:[47]

- ເຕີມຊ່ອງວ່າງຂອງສົນທິສັນຍາ; ແລະ
- ສ້າງມາດຕະຖານໃໝ່ໂດຍເນັ້ນໃສ່ການກຳຈັດທຸກຮູບແບບຂອງການຈຳແນກເຊື້ອຊາດເຊິ່ງລວມມີຮູບແບບໃນການຍຸແຍ່ໃຫ້ກຽດຊັງ, ແລະ ແບ່ງແຍກທາງສາດສະໜາ ແລະ ເຊື້ອຊາດ.

---

46 ເບິ່ງມະຕິຄະນະກຳມາທິການສິດທິມະນຸດ 2000\68 ແລະ 2003\30

47 ເບິ່ງມະຕິກົກລົງຂອງສະພາສິດທິມະນຸດ 3\103 ແລະ 6\21

ກອງປະຊຸມຂອງຄະນະກຳມາທິການສະເພາະກິດແມ່ນຈະມີປີລະເທື່ອເຊິ່ງຈະໃຊ້ເວລາຢູ່ສິບວັນລາດສະການໃນການສ້າງ ຮ່າງກົນໄກທາງກົດໝາຍທີ່ຈຳເປັນ. ກອງປະຊຸມຄັ້ງທຳອິດແມ່ນໃນເດືອນສິງຫາ 2008 ແລະ ມີພັນທະຕ້ອງລາຍງານ ເປັນປົກກະຕິໃຫ້ແກ່ສະພາສິດທິມະນຸດກ່ຽວກັບຄວາມຄືບໜ້າໃນວຽກງານຂອງຕົນ.

**5. ຄະນະກຳມາທິການກະກຽມກອງປະຊຸມທົບທວນແຫ່ງເມືອງເດີບານ ແລະ ໜ່ວຍງານທີ່ປຶກສາກອງປະຊຸມລະຫວ່າງປະ ເທດເພື່ອການຕິດຕາມວຽກງານຂອງຄະນະກຳມາທິການກະກຽມກອງປະຊຸມທົບທວນແຫ່ງເມືອງເດີບານ.**

ໃນປີ 2007 ສະມັດຊາໃຫຍ່ໄດ້ຈັດກອງປະຊຸມເພື່ອມອບພາລະໜ້າທີ່ໃຫ້ແກ່ຄະນະກະກຽມກອງທົບທວນແຫ່ງເມືອງ ເດີບານ.[49] ຄະນະກຳມາທິການກະກຽມໄດ້ຈັດກອງປະຊຸມໃນເດືອນສິງຫາ 2007, ຫລັງຈາກນັ້ນກໍ່ໄດ້ຈັດກອງ ປະຊຸມທີ່ສຳຄັນຂຶ້ນອີກເປັນເວລາ 10 ມື້ລາດສະການເຊິ່ງໄດ້ຈັດຂຶ້ນໃນເດືອນເມສາ ແລະ ຕຸລາ 2008 ເພື່ອຄັດ ເລືອກເອົາແບບແຜນທີ່ຈະຈັດກອງປະຊຸມທົບທວນເຊັ່ນ:

- ວາງວັດຖຸປະສົງເປົ້າໝາຍ;
- ໂຄງຮ່າງຂອງເອກະສານຜົນສະຫລຸບຈາກກອງປະຊຸມ;
- ຈະຈັດກອງປະຊຸມລະດັບໃດ;
- ຈະຈັດກອງປະຊຸມກະກຽມໃນລະດັບພາກພື້ນ ແລະ ໃນລະດັບຊາດ;
- ຈະຈັດວັນທີ່ໃດ ແລະ ຢູ່ໃສ.

ໜ່ວຍງານທີ່ປຶກສາກອງປະຊຸມລະຫວ່າງປະເທດເພື່ອການຕິດຕາມວຽກງານຂອງຄະນະກຳມາທິການກະກຽມກອງປະຊຸມ ທົບທວນແຫ່ງເມືອງເດີບານແມ່ນໄດ້ຮັບການສ້າງຕັ້ງຂຶ້ນຈາກສະພາສິດທິມະນຸດຢູ່ທີ່ກອງປະຊຸມຂອງຄະນະກຳມາທິການກະກຽມໃນເດືອນເມສ າ 2008 ເຊິ່ງມີພາລະໜ້າທີ່ຄື: [50]

- ຕິດຕາມເບິ່ງວຽກງານຂອງຄະນະກຳມາທິການກະກຽມເຊິ່ງອາດຕ້ອງໄດ້ດຳເນີນການທົບທວນເລື່ອງຂອງການມີ ສ່ວນຮ່ວມຕ່າງໆ ແລະ ເລີ່ມສົນທະນາກ່ຽວກັບຮ່າງເອກະສານບົດສະຫລຸບຜົນຂອງກອງປະຊຸມ;
- ທົບທວນເບິ່ງບົດລາຍງານ ແລະ ເອກະສານຕ່າງໆເພີ່ມເຕີມທີ່ສົ່ງມາໃຫ້ແກ່ຄະນະກຳມາທິການກະກຽມກອງປະຊຸມ.

ຂໍ້ມູນເພີ່ມເຕີມກ່ຽວກັບຄະນະກຳມາທິການກະກຽມເພື່ອກອງປະຊຸມທົບທວນເດີບານ ແລະ ໜ່ວຍງານທີ່ປຶກສາລະຫວ່າງປະເທດແມ່ນໃຫ້ເບິ່ງໃນເວບໄຊ້ OHCHR

48 ເບິ່ງມະຕິສະມັດຊາໃຫຍ່ 61\149.

49 ເບິ່ງມະຕິ 3\2, ແລະ 6\23

50 ເບິ່ງມະຕິຕົກລົງ PC.2/4.

**ວິທີເຂົ້າເຖິງ ແລະ ເຮັດວຽກຮ່ວມກັບສະພາສິດທິມະນຸດ ແລະ ບັນດາກົນໄກ ແລະ ໜ່ວຍງານຕ່າງໆຂອງສະພາ.**

**ການຈັດແຈງການດໍາເນີນງານໃຫ້ພາກສ່ວນ NGOs ໃຫ້ມີສ່ວນຮ່ວມໃນກອງປະຊຸມຂອງສະພາສິດທິມະນຸດ**

*"...ການປຶກສາຫາລືແລະການມີສ່ວນຮ່ວມຂອງຜູ້ສັງເກດການເຊິ່ງລວມມີປະເທດຕ່າງໆທີ່ບໍ່ໄດ້ເປັນພາຄີຂອງສະພາ, ອົງກອນຊໍານານງານສະເພາະ, ອົງການຈັດຕັ້ງລະຫວ່າງປະເທດ ແລະ ສະຖາບັນສິດທິມະນຸດແຫ່ງຊາດພ້ອມດ້ວຍ NGOs ຕ່າງໆແມ່ນສາມາດເຂົ້າຮ່ວມໄດ້ໂດຍອີງຕາມການຈັດແຈງໃຫ້ຕາມມະຕິຂອງສະພາເສດຖະກິດ ແລະ ສັງຄົມ 1996\31 ລົງວັນທີ 25 ກໍລະກົດ 1996, ແລະ ການຈັດຕັ້ງປະຕິບັດຂອງຄະນະກໍາມາທິການສິດທິມະນຸດ ທີ່ຜ່ານມາ, ອົງການທີ່ເຂົ້າຮ່ວມຕ່າງໆນັ້ນແມ່ນຈະໄດ້ປະກອບສ່ວນໃນກອງປະຊຸມຢ່າງເຕັມທີ່."* [51]

ໃນມະຕິເລກທີ 60\251, ສະມັດຊາໃຫຍ່ຍອມຮັບວ່າອົງການພາກປະຊາສັງຄົມ ແລະ NGOs ໃນລະດັບ ຊາດ, ພາກພື້ນ, ແລະ ສາກົນແມ່ນຖືວ່າມີຄວາມສໍາຄັນຫລາຍໃນການປະກອບສ່ວນສົ່ງເສີມ ແລະ ປົກປ້ອງສິດທິມະ ນຸດ. ນອກນີ້ສະມັດຊາໃຫຍ່ຍັງໄດ້ກໍານົດໃຫ້ NGOs ມີສ່ວນຮ່ວມໃນວຽກງານຂອງສະພາສິດທິມະນຸດ:

- ໃຫ້ອີງຕາມການຈັດແຈງ ແລະ ການປະຕິບັດທີ່ຜ່ານມາຂອງຄະນະກໍາມາທິການ (ຕາມມະຕິ ECOSOC 1996\31);
- ຮັບປະກັນໃຫ້ການມີສ່ວນຮ່ວມຂອງ NGOs ແລະ ຜູ້ສັງເກດການອື່ນໆໃຫ້ໄດ້ຮັບປະສິດທິພາບຢ່າງເຕັມທີ່.

ການຈັດແຈງ ແລະ ການປະຕິບັດຂອງຄະນະກໍາມາທິການສິດທິມະນຸດທີ່ຜ່ານມາກ່ຽວກັບການໃຫ້ມີສ່ວນ ຮ່ວມຂອງ NGOs ແມ່ນໄດ້ສົ່ງມອບຕໍ່ໃຫ້ສະພາສິດທິມະນຸດຢ່າງສົມບູນ. ໂດຍເປັນໄປຕາມພັນທະຂອງສະພາສິດທິ ມະນຸດທີ່ຕ້ອງຮັບປະກັນວ່າການມີສ່ວນຮ່ວມຂອງພາກສ່ວນຕ່າງໆນັ້ນແມ່ນຈະເປັນການມີສ່ວນຮ່ວມ "ທີ່ມີປະສິດທິ ພາບສູງສຸດ", ດັ່ງນັ້ນ ການຈັດແຈງ ແລະ ການປະຕິບັດໃນການມີສ່ວນຮ່ວມນີ້ແມ່ນໄດ້ຮັບການພັດທະນາ ແລະ ປັບປຸງຂຶ້ນເລື້ອຍໆ.

**ໃນສະຖານະທີ່ NGOs ເປັນທີ່ປຶກສາໃຫ້ແກ່ ECOSOC, ອົງການດັ່ງກ່າວ ແມ່ນສາມາດເຂົ້າຮ່ວມກອງປະຊຸມ ຂອງສະພາສິດທິມະນຸດໄດ້ແຕ່ໃນຖານະເປັນຜູ້ສັງເກດການ.**

*ບົດບາດຂອງ NGOs ແມ່ນມີຄວາມສໍາຄັນສໍາລັບການສົ່ງເສີມ ແລະ ປົກປ້ອງສິດທິມະນຸດໃນລະດັບຊາດ, ພາກພື້ນ ແລະ ສາກົນ. ການເຂົ້າຮ່ວມໃນວຽກງານຂອງ NGOs ໃນສອງປີທໍາອິດທີ່ສະພາສິດທິມະນຸດໄດ້ຮັບການສ້າງຕັ້ງ ຂຶ້ນນັ້ນແມ່ນຖືວ່າເປັນບາດກ້າວສໍາຄັນໃນການຍົກສູງບົດບາດຂອງ ສປຊ. NGOs ແມ່ນມີບົດບາດໃນການຮ່ວມ ສ້າງສະຖາບັນສະພາສິດທິມະນຸດ, ປະກອບສ່ວນໃນສິ່ງຕ່າງໆທີ່ຈໍາເປັນແລະສໍາຄັນ, ໂດຍສະເພາະແມ່ນກ່ຽວກັບ ການປຶກສາຫາລືເພື່ອພິຈາລະນາຮັບຮອງເອົາບັນດາແຜນງານຂອງສະພາສິດທິມະນຸດ.*

*ນອກນີ້ ໃນຖານະທີ່ NGOs ໄດ້ເຮັດວຽກງານດ້ານສິດທິມະນຸດຄືກັນກັບສະພາສິດທິມະນຸດນັ້ນກໍ່ເຫັນວ່າ ວຽກງານດັ່ງກ່າວແມ່ນໄດ້ຮັບການພັດທະນາຂຶ້ນເລື້ອຍໆຈາກທີ່ເຄີຍເປັນອົງການທີ່ "ມີແຕ່ຊື່ ແລະ ບໍ່ໄດ້ຮັບການ ຍອມຮັບ" ກໍ່ກ້າວໄປສູ່ອົງການທີ່ມີບົດບາດສໍາຄັນໃນການຮ່ວມມືປະສານງານກັບບັນດາລັດຖະບານ ແລະ ໜ່ວຍງານທີ່ກ່ຽວຂ້ອງຕ່າງໆ. ການມີສ່ວນຮ່ວມທີ່ວ່ານີ້ແມ່ນມີເປົ້າໝາຍໃນການພັດທະນາປ່ຽນແປງສະພາບ ສິດທິມະນຸດໃນຂົງເຂດຕ່າງໆ.*

---

51 ເບິ່ງມະຕິສະມັດຊາໃຫຍ່ 60\251 ແລະ ເອກະສານຊ້ອນທ້າຍ ມະຕິສະພາສິດທິມະນຸດ 5\1

V

*ເພາະສະນັ້ນ ການເຂົ້າຮ່ວມ ແລະ ສິ່ງທີ່ປະກອບສ່ວນຕ່າງໆມາຈາກ NGOs ທ້ອງຖິ່ນແມ່ນຖືວ່າມີຄວາມສຳຄັນຫລາຍ ໂດຍສະເພາະໃນປະຈຸບັນທີ່ສະພາສິດທິມະນຸດໄດ້ຈັດກອງປະຊຸມເລື້ອຍໆ ແລະ ມີວຽກງານທັບທວນຫລາຍຢ່າງ. ສະຫລຸບ ແລ້ວ, ສິ່ງທ້າທາຍທີ່ສະພາສິດທິມະນຸດ ແລະ NGOs ປະເຊີນຢູ່ນັ້ນແມ່ນການຂັບເຄື່ອນປະກອບສ່ວນໃຫ້ໄດ້ຫລາຍກ່ວາ ການມີສ່ວນຮ່ວມໃນວຽກງານຂອງສະພາສິດທິມະນຸດ, ນັ້ນກໍ່ຄືການເຂົ້າເປັນຄູ່ຮ່ວມງານທີ່ແທ້ຈິງລະຫວ່າງລັດພາຄີ ແລະ ພາກປະຊາສັງຄົມ.*

**ທ່ານເອກອັກຄະລັດສະທູດ Luis Alfonso de Alba ຈາກແມັກຊິໂກ,**

**ເປັນປະທານຄົນແລກຂອງສະພາສິດທິມະນຸດ (2006-07).**

NGOs ແມ່ນມີຄວາມພໍໃຈດີທີ່ມີສ່ວນຮ່ວມໃນວຽກງານຂອງສະພາສິດທິມະນຸດທີ່ໄດ້ຮັບການສືບທອດມາຈາກຄະນະ ກຳມາທິການສິດທິມະນຸດຊຸດເກົ່າເຊິ່ງຖືໄດ້ວ່າມັນເປັນອັນໜຶ່ງອັນດຽວກັນກັບລະບົບຂອງ ສປຊ. ໃນມູມອີກດ້ານໜຶ່ງ, ສະພາສິດທິມະນຸດໃນຖານະທີ່ເປັນອົງກອນລະຫວ່າງປະເທດແມ່ນໄດ້ຮັບຄວາມຮູ້ ແລະ ປະສົບການ, ໄດ້ເຫັນບົດບາດ ການດຳເນີນງານ ແລະ ການມີສ່ວນຮ່ວມຂອງອົງການລະດັບຮາກຖານຈາກພາກສ່ວນ NGOs ຫລາຍຢ່າງ.

ຕັ້ງແຕ່ມີກອງປະຊຸມໃນເດືອນ ມີຖຸນາ 2006, NGOs ແມ່ນມີຄວາມພໍໃຈໃນການມີສ່ວນຮ່ວມທີ່ມີຄວາມໝາຍ ແລະ ໃກ້ຊິດກັບສະພາສິດທິມະນຸດ. ໃນກອງປະຊຸມສາມັນເດືອນ ມີນາ 2008, NGOs ແມ່ນມີຕົວແທນເຂົ້າຮ່ວມປະມານ 1116 ທ່ານ. ໃນກອງປະຊຸມດັ່ງກ່າວນັ້ນ NGOs ໄດ້ມີຂໍ້ມູນລາຍງານຢູ່ 98 ສະບັບ, ໃຫ້ການລາຍງານປາກເປົ່າ 224 ເທື່ອ ແລະ ໄດ້ຈັດກອງປະຊຸມນອກລອບ 69 ຄັ້ງ. ທ່ານປະທານສະພາສິດທິມະນຸດ ແລະ ກອງເລຂາແມ່ນໄດ້ສືບຕໍ່ຈະ ປະຕິບັດ ແລະ ບໍລິຫານຕາມຄະນະກຳມາທິການຊຸດເກົ່າ ໂດຍສະເພາະແມ່ນວິທີການເລືອກເອົາແນວທາງປະຕິບັດທີ່ດີທີ່ສຸດທີ່ໄດ້ມາຈາກບັນດາກອງປະຊຸມຕ່າງໆທີ່ໄດ້ຈັດຫລາຍໆຄັ້ງໃນແຕ່ລະປີ.

ມີພຽງ NGOs ທີ່ມີຖານະເປັນທີ່ປຶກສາແກ່ ECOSOC ເທົ່ານັ້ນທີ່ສາມາດເຂົ້າຮ່ວມໃນກອງປະຊຸມຂອງສະພາສິດທິມະນຸດໃນຖານະເປັນຜູ້ສັງເກດການ. ຜູ້ທີ່ເປັນຕົວແທນເຂົ້າຮ່ວມກອງປະຊຸມຈາກພາກ NGOs ແມ່ນຂື້ນຢູ່ກັບ ການຄັດເລືອກຂອງ NGOs ເອງ. ເມື່ອໄດ້ຮັບຖານະເປັນຜູ້ສັງເກດການແລ້ວ, NGOs ທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ແມ່ນຈະໄດ້ຮັບບູລິມະສິດ ແລະ ການແບ່ງງານຈາກສະພາສິດທິມະນຸດໃຫ້ເຮັດໜ້າທີ່ຄື:

- ຍື່ນເອກະສານທີ່ເປັນລາລັກອັກສອນຕ່າງໆໃຫ້ແກ່ສະພາສິດທິມະນຸດກ່ອນທີ່ຈະມີການເປີດກອງປະຊຸມ;
- ໃຫ້ຄຳຄິດເຫັນທາງປາກເປົ່າກ່ຽວກັບບັນດາລາຍການຂອງວາລະກອງປະຊຸມຂອງສະພາສິດທິມະນຸດ;
- ເຂົ້າຮ່ວມການສົນທະນາ, ການປຶກສາຫາລື ແລະ ການແລກປ່ຽນຄຳຄິດຄຳເຫັນຕ່າງໆ;
- ຈັດ "ກອງປະຊຸມນອກລອບ" ກ່ຽວກັບວຽກງານຂອງສະພາສິດທິມະນຸດ.

NGOs ໃນຖານະທີ່ເປັນທີ່ປຶກສາແກ່ ECOSOC ແມ່ນຍັງມີຄວາມຮັບພິຊອບທີ່ຕ້ອງໄດ້ປະຕິບັດຕາມບັນດາຫລັກການ ທີ່ກ່ຽວຂ້ອງກັບການຈັດຕັ້ງ ແລະ ການດຳເນີນງານໃນກອບສາຍພົວພັນເປັນທີ່ປຶກສາໃຫ້ກັນແລະກັນ. ໂດຍສະເພາະແມ່ນ ຂໍ້ກຳນົດໃນມະຕິຂອງ ECOSOC 1996\31 ທີ່ກຳນົດວ່າ NGOs ອາດຈະຖືກຖອນ ຫຼື ຢຸດຕິການເຂົ້າຮ່ວມ ໃນທີ່ປະຊຸມຂອງ ສປຊ ຫຼື ຖືກຖອນຈາກການເປັນທີ່ປຶກສາ (ບໍ່ວ່າຈະຕົກໃນກໍລະນີທີ່ມີຜູ້ໃດໜຶ່ງເຄື່ອນໄຫວລະເມີດໃນນາມ ຂອງອົງການກໍ່ຕາມ) ເຊິ່ງມັນເປັນການລະເມີດພັນທະໜ້າທີ່ທີ່ໄດ້ກຳນົດໃນຫຼັກການ ແລະ ເປົ້າໝາຍຂອງ ກົດບັດ ສປຊ.

## ການຂໍເຂົ້າຮ່ວມກອງປະຊຸມ

ບັນດາຕົວແທນຂອງ NGOs ທີ່ມີຖານະເປັນທີ່ປຶກສາໃຫ້ແກ່ ECOSOC ແມ່ນຄວນຂໍອານຸຍາດນຳສະພາສິດທິມະນຸດຖ້າຫາກມີຈຸດປະສົງຢາກເຂົ້າຮ່ວມກອງປະຊຸມ.

**ໜັງສືຂໍອານຸຍາດແມ່ນຕ້ອງ:**

- ມີກາປະທັບທາງການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ;
- ມີລາຍລະອຽດກ່ຽວກັບຫົວຂໍ້ ແລະ ໄລຍະເວລາທີ່ຢາກເຂົ້າຮ່ວມກອງປະຊຸມ;
- ໄດ້ຮັບການເຊັນຢັ້ງຢືນຈາກປະທານ ຫຼື ຜູ້ແທນລະດັບສູງຂອງອົງການທີ່ປະຈຳໃນນະຄອນເຈນນີວາ;
- ຂຽນຊື່ຂອງຜູ້ທີ່ຕ້ອງການເຂົ້າຮ່ວມໃນກອງປະຊຸມສະພາສິດທິມະນຸດໃນນາມອົງການຂອງຕົນ.
  ສິ່ງທີ່ຄວນໃສ່ໃຈກໍ່ຄືວ່າລາຍຊື່ທີ່ຂຽນມານັ້ນຕ້ອງໃຫ້ຄືກັນກັບຊື່ຂອງຕົນທີ່ຢູ່ໃນບັນດາເອກະສານຢັ້ງຢືນຕ່າງໆ ແລະ ການຂຽນນາມສະກຸນກໍ່ຕ້ອງໃຫ້ຂຽນເປັນໂຕອັກສອນໃຫຍ່.

ເພື່ອຢາກຖືກພິຈາລະນາ, NGOs ທີ່ເປັນທີ່ປຶກສາຂອງ ECOSOC ນັ້ນຄວນຈະສົ່ງເອກະສານທາງແຟັກ, ໃສ່ລາຍລະອຽດຫົວຂໍ້ກອງປະຊຸມ ແລະ ຮ້ອງຂໍການເຂົ້າຮ່ວມທີເບີແຟັກ: +41 (0)22 917 90 11.

V

## ຖະແຫລງການທີ່ເປັນລາຍລັກອັກສອນ

ກ່ອນຈະເປີດກອງປະຊຸມສະພາສິດທິມະນຸດ, NGOs ໃນຖານະເປັນທີ່ປຶກສາໃຫ້ແກ່ ECOSOC ອາດຈະຢື່ນຖະແຫລງການທີ່ກ່ຽວຂ້ອງກັບວຽກງານສະພາສິດທິມະນຸດໃຫ້ແກ່ສະພາໃນນາມສ່ວນຕົວຫຼືແບບໃນນາມ NGOs ກໍໄດ້. ຖະແຫລງການທີ່ວ່ານີ້ຕ້ອງກ່ຽວກັບຄວາມອາດສາມາດພິເສດຂອງ NGOs. ຫລັງຈາກທີ່ໄດ້ຮັບ ແລະ ດຳເນີນ ການທົບທວນຈາກກອງເລຂາແລ້ວ, ຖະແຫລງການຂອງ NGOs ແມ່ນຈະກາຍເປັນສ່ວນໜຶ່ງຂອງເອກະສານທາງ ການ ຂອງກອງປະຊຸມສະພາສິດທິມະນຸດ.

**ຂໍ້ຄວາມທີ່ຄວນເອົາໃຈໃສ່:**

- NGOs ໃນຖານະທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ແມ່ນອາດຢື່ນຖະແຫລງການຂອງຕົນບໍ່ໃຫ້ກາຍ 2.000 ຄຳ;
- NGOs ໃນຖານະທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ພິເສດ ຫຼື ຕາມບັນຊີລາຍຊື່ແມ່ນອາດຢື່ນຖະແຫລງການຂອງ ຕົນບໍ່ໃຫ້ກາຍ 1.500 ຄຳ.

NGOs ແມ່ນຄວນຈະສຶກສາຂໍ້ມູນເພີ່ມເຕີມໄດ້ຕາມເວບໄຊ້ຂອງ OHCHR ໃນໜ້າທີ່ກ່ຽວກັບພາກສ່ວນສະພາສິດທິມະນຸດ.

ຖະແຫລງການຄວນຈະຢື່ນໃຫ້ແກ່ກອງເລຂາຂອງສະພາສິດທິມະນຸດໄດ້ຕາມທີ່ຢູ່: hrcngo@ohchr.org

## ຖະແຫລງການປາກເປົ່າ

NGOs ໃນຖານະທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ແມ່ນອາດຈະສະເໜີຄວາມຄິດເຫັນທາງປາກເປົ່າທີ່ກ່ຽວຂ້ອງກັບ ລາຍການຕ່າງໆທີ່ສຳຄັນ, ອາດໃຫ້ຄຳຄິດເຫັນຜ່ານທາງການສົນທະນາທົ່ວໄປ ແລະ ການປຶກສາຫາລືທີ່ກອງປະຊຸມ ສະພາສິດທິມະນຸດໄດ້. ຮູບແບບການສະເໜີທາງປາກເປົ່າຂອງ NGOs ແມ່ນຄວນຂໍເຂົ້າມີສ່ວນຮ່ວມໃນບັນດາກອງ ປະຊຸມ ຂອງສະພາສິດທິມະນຸດທີ່ມີການປະຊຸມກັນຕະຫລອດປີ, ຂໍ້ມູນກ່ຽວກັບກອງປະຊຸມຕ່າງໆແມ່ນສາມາດຊອກຫາໄດ້ ທີ່ໜ້າເວບສເພາະຂອງສະພາສິດທິມະນຸດກ່ຽວກັບຂໍ້ມູນການປະສານງານກັບ NGOs.

ຜູ້ແທນຂອງ NGOs ທີ່ມີຈຸດປະສົງຈະຂໍສະເໜີຂໍ້ມູນທາງປາກເປົ່າແມ່ນຄວນລົງທະບຽນໃນນາມສ່ວນຕົວທີ່ ເອກະສານ "ລາຍຊື່ຜູ້ທີ່ຈະສະເໜີ" ທີ່ກຽມໄວ້ໃນຫ້ອງປະຊຸມ (ກອງປະຊຸມການສົນທະນາ). ເອກະສານແບບຟອມສຳລັບ ສ່ວນບຸກຄົນ ແລະ ເປັນກຸ່ມແມ່ນສາມາດດາວໂລດໄດ້ທີ່ເວບຂອງສະພາສິດທິມະນຸດ ແລະ ຄວນຈະນຳແບບຟອມທີ່ກອກ ແລ້ວນັ້ນມາສະເໜີຍັງໂຕະລົງທະບຽນດ້ວຍຕົວເອງ.

ສິ່ງທີ່ຄວນໃສ່ໃຈກໍ່ຄືວ່າ NGOs ແມ່ນບໍ່ໄດ້ຮັບອານຸຍາດໃຫ້ແຈກຢາຍເອກະສານ, ແຜ່ນພັບ ຫຼື ເອກະສານອື່ນໆ ໃນທີ່ຫ້ອງປະຊຸມສົນທະນາ. ຢ່າງໃດກໍ່ດີ, ເອກະສານກອບປີ້ຂອງລາຍລະອຽດທີ່ຈະສະເໜີທາງປາກເປົ່ານັ້ນ ອາດຈະວາງ ໄວ້ແຈກທີ່ໂຕະທີ່ກຽມໄວ້ໃນຫ້ອງປະຊຸມ. ສ່ວນເອກະສານອື່ນຂອງ NGOs ແມ່ນຄວນຈະວາງໄວ້ທີ່ໂຕະທີ່ ກຽມໄວ້ໃຫ້ສະ ເພາະໃນຂ້າງຫ້ອງປະຊຸມ.

**ກອງປະຊຸມນອກລອບ**

NGOs ໃນຖານະທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ພາຍຫລັງທີ່ໄດ້ຮັບອານຸມັດໃຫ້ເຂົ້າຮ່ວມກອງປະຊຸມຂອງສະພາສິດທິມະນຸດແມ່ນອາດສາມາດຈັດກອງປະຊຸມທົ່ວໄປທີ່ກ່ຽວຂ້ອງກັບ ວຽກງານຂອງສະພາສິດທິມະນຸດ. ກອງປະຊຸມເຫລົ່ານີ້ແມ່ນເອີ້ນກັນວ່າ "ກອງປະຊຸມນອກລອບ" ແລະ ອາດຈະ ຈັດໃກ້ໆກັບຫ້ອງ ປະຊຸມເຊິ່ງປົກກະຕິແລ້ວແມ່ນໃນຊ່ວງເວລາພັກກິນເຂົ້າທ່ຽງ.

ຕາມປົກກະຕິແລ້ວກອງປະຊຸມນອກລອບແມ່ນປະຈັດຮວມກັນ ແລະ ເປີດໃຫ້ມີການສົນທະນາ, ກອງປະຊຸມ ນອກລອບແມ່ນ ເປັນເວທີທີ່ສຳຄັນໃຫ້ແກ່ NGOs ໄດ້ມີໂອກາດໃນການແລກປ່ຽນຄວາມຮູ້ປະສົບການ ແລະ ເຂົ້າມີສ່ວນ ຮ່ວມໃນການສົນ ທະນາ ກັບບັນດາ NGOs ດ້ວຍກັນ, ກັບລັດພາຄີ ແລະ ອົງການຕ່າງໆທີ່ກ່ຽວຂ້ອງ (ເຊິ່ງລວມມີໜ່ວຍ ງານທີ່ໄດ້ຮັບພາລະໜ້າທີ່ສະ ເພາະ) ກ່ຽວກັບບັນຫາສິດທິມະນຸດ ແລະ ສະພາບການຕ່າງໆທີ່ກ່ຽວຂ້ອງ ແລະ ສຳຄັນ ຕໍ່ສະພາສິດທິມະນຸດ.

ຫ້ອງທີ່ຈະຈັດກອງປະຊຸມນອກລອບແມ່ນຟຣີ ແລະ ຈະໃຫ້ຜູ້ທີ່ຈອງຫ້ອງປະຊຸມກ່ອນໄດ້ຮັບບູລິມະສິດກ່ອນໝູ່ຕາມຫຼັກ ການ "ຈອງກ່ອນໄດ້ກ່ອນ." ກອງປະຊຸມນອກລອບທີ່ຢາກຈະຈັດຮ່ວມກັນແມ່ນຕ້ອງໄດ້ກອກແບບຟອມກອງປະຊຸມຮ່ວມ.[52] NGOs ທີ່ຈັດກອງປະຊຸມນອກລອບແມ່ນສາມາດເຊີນຜູ້ເຂົ້າຮ່ວມທີ່ບໍ່ໄດ້ຮັບອານຸຍາດເຂົ້າຮ່ວມກອງປະຊຸມສະ ພາສິດທິ ມະນຸດໃຫ້ເຂົ້າ ຮ່ວມໄດ້.ລາຍຊື່ຜູ້ທີ່ຈະເຊີນເຂົ້າຮ່ວມນັ້ນແມ່ນຕ້ອງໄດ້ນຳມາສະເໜີໃຫ້ແກ່ກອງເລຂາສະພາສິດທິມະນຸດ ແລະ ໃຫ້ແກ່ຫ້ອງການຮັກ ສາຄວາມປອດໄພຊາບລ່ວງໜ້າ 48 ສະໂມງເພື່ອຂໍອະນຸມັດ. ຜູ້ທີ່ຈະເຂົ້າຮ່ວມກອງປະຊຸມ ນອກລອບແມ່ນຈະໄດ້ຮັບບັດເຂົ້າ ຮ່ວມທີ່ລະບຸວ່າສາມາດເຂົ້າຮ່ວມກອງປະຊຸມນອກລອບເທົ່ານັ້ນ.

NGOs ທີ່ຈັດກອງປະຊຸມນອກລອບແມ່ນມີຄວາມຮັບຜິຊອບຕໍ່ເນື້ອໃນກອງປະຊຸມ ແລະ ຕໍ່ສິ່ງທີ່ອາດຈະເກີດຂື້ນຈາກຜູ້ເຂົ້າຮ່ວມ ແລະ ຄວນໃສ່ໃຈວ່າ:

52 ເບິ່ງເພີ່ມໄດ້ທີ່ເວບຂອງສະພາສິດທິມະນຸດ.

- ກອງເລຂາແມ່ນຈະບໍ່ມີການຊ່ວຍໃນລ່າມແປພາສາໃຫ້ແກ່ກອງປະຊຸມນອກລອບ. NGOs ສາມາດນໍາເອົານັກ ແປພາສາມາດ້ວຍຕົວເອງໄດ້ ແຕ່ຕ້ອງໄດ້ສະເໜີໃຫ້ກອງເລຂາຮັບຊາບກ່ອນທີ່ຈະເປີດກອງປະຊຸມ;
- ບໍ່ອາຍຸຍາດໃຫ້ມີການຖ່າຍຮູບ ຫຼື ຖ່າຍວິດີໂດໃນຫ້ອງປະຊຸມນອກລອບ ຍົກເວັ້ນແຕ່ນັກຂ່າວ ແລະ ຊ່າງຖ່າຍຮູບທີ່ໄດ້ຮັບອານຸຍາດແລ້ວຈາກສໍານັກງານ ສປຊ ທີ່ນະຄອນເຈນນີວາ (UNOG).

ການຂໍຈອງຫ້ອງປະຊຸມແມ່ນຄວນສົ່ງໄປທີ່ນໍ້າເບີແຟກ: + 41 (0) 22 917 90 11
ຂໍ້ມູນເພີ່ມເຕີມກ່ຽວກັບການໄດ້ຮັບອານຸມັດ, ຖະແຫລງການລາຍລັກອັກສອນ ແລະ ປາກເປົ່າ, ແລະ ກອງປະຊຸມນອກລອບແມ່ນສາມາດເບິ່ງໄດ້ທີ່ເວບສະເພາະຂອງສະພາສິດທິມະນຸດ

**ການມີສ່ວນຮ່ວມ ແລະ ເຂົ້າຮ່ວມໃນວຽກງານ ແລະ ກົນໄກຂອງສະພາສິດທິມະນຸດ**

**A. ກົນໄກການທົບທວນ**

ຂໍ້ມູນເພີ່ມເຕີມກ່ຽວກັບວິທີເຂົ້າຫາ ແລະ ມີສ່ວນຮ່ວມກັບກົນໄກການທົບທວນເບິ່ງໃນບົດທີ VII (ກົນໄກການທົບທວນ) ໃນປື້ມຄູ່ມືນີ້.

**B. ຄະນະກໍາມາທິການທີ່ປຶກສາສະພາສິດທິມະນຸດ**

***ການເຂົ້າຮ່ວມ ແລະ ປະກອບສ່ວນໃສ່ວຽກງານຂອງຄະນະກໍາມາທິການທີ່ປຶກສາ***

ຄະນະຊຸດເກົ່າຂອງຄະນະກໍາມາທິການທີ່ປຶກສາ ຫຼືວ່າ ອານຸຄະນະກໍາມາທິການນັ້ນແມ່ນໄດ້ຮັບຜົນປະໂຫຍດຫລາຍຢ່າງ ຈາກການເຂົ້າຮ່ວມກອງປະຊຸມຂອງ NGOs ທີ່ເປັນທີ່ປຶກສາໃຫ້ແກ່ ECOSOC. ມາຮອດເດືອນກັນຍາ 2008 ໃນຄະນະ ທີ່ຄະນະກໍາມາທິການທີ່ປຶກສາພວມສ້າງລະບຽບການ ແລະ ວິທີການດໍາເນີນງານຂອງຕົນ, ສະພາສິດທິມະນຸດກໍ່ໄດ້ແນະນໍາ ໃຫ້ສ້າງການພົວພັນກັບ NGOs ແລະ ພາກປະຊາສັງຄົມອື່ນໆຕາມພາລະໜ້າທີ່ຂອງຕົນ. ບັນດາລັດພາຄີກໍ່ໄດ້ຮັບການແນະ ນໍາໃຫ້ດໍາເນີນການປຶກສາຫາລືກັບພາກປະຊາສັງຄົມກ່ອນທີ່ຈະສະເໜີລາຍຊື່ຜູ້ສະມັກຂອງຕົນເພື່ອຄັດເລືອກເຂົ້າໄປເຮັດວຽກໃນຄະນະກໍາມາທິກາ ນທີ່ປຶກສານັ້ນ.

NGOs ແມ່ນມີສິດທີ່ຈະເຂົ້າຮ່ວມໃນວຽກງານຂອງຄະນະກໍາມາທິການທີ່ປຶກສາໂດຍອີງຕາມການຈັດແບ່ງ ແລະ ການປະຕິບັດທີ່ຜ່ານມາຂອງຄະນະກໍາມາທິການສິດທິມະນຸດຊຸດເກົ່າ ແລະ ຂອງສະພາສິດທິມະນຸດເຊິ່ງກໍານົດ ໄວ້ໃນມະຕິຂອງ ECOSOC 1996/31 ໄປພ້ອມໆກັນກັບການຮັບປະກັນການມີສ່ວນຮ່ວມແບບມີປະສິດທິພາບ ຂອງ NGOs.

NGOs ທີ່ສົນໃຈຈະເຂົ້າຮ່ວມເປັນຜູ້ສັງເກດການໃນກອງປະຊຸມຂອງຄະນະກໍາມາທິການທີ່ປຶກສາແມ່ນສາ ມາດຕິດຕໍ່ໄດ້ທີ່ກອງເລຂາ.

ຂໍ້ມູນເພີ່ມເຕີມກ່ຽວກັບວິທີປະກອບສ່ວນໃນວຽກງານຂອງຄະນະກຳມາທິການທີ່ປຶກສາແມ່ນສາມາດຕິດຕໍ່: HRCAdvisoryCommittee@ohchr.org.

### C. ຂະບວນການຮ້ອງທຸກ

ຂໍ້ມູນເພີ່ມເຕີມກ່ຽວກັບວິທີປະກອບຂໍ້ມູນໃຫ້ແກ່ຂະບວນການຮ້ອງທຸກແມ່ນສາມາດເບິ່ງໄດ້ທີ່ບົດທີ VIII (ການຍື່ນຄຳຮຽກຮ້ອງກ່ຽວກັບການລະເມີດສິດທິມະນຸດ)ໃນປື້ມຄູ່ມືນີ້, ສາມາດຕິດຕໍ່ໄດທີ່: CP@ohchr.org.

### D. ຂະບວນການພິເສດ

ຂໍ້ມູນເພີ່ມເຕີມກ່ຽວກັບວິທີເຂົ້າຫາ ແລະ ມີສ່ວນຮ່ວມກັບຂະບວນການພິເສດແມ່ນສາມາດເບິ່ງໃນບົດທີ VI (ຂະບວນການພິເສດ) ໃນປື້ມຄູ່ມືນີ້.

### E. ໜ່ວຍປະຕິບັດງານຂອງສະພາສິດທິມະນຸດ

**ໜ່ວຍງານທີ່ປຶກສາກ່ຽວກັບສິດທິໃນຮັບການພັດທະນາ**

**ການມີສ່ວນຮ່ວມໃນກອງປະຊຸມຂອງໜ່ວຍປະຕິບັດງານ**

ໃນຄະນະທີ່ໜ່ວຍປະຕິບັດງານເຮັດໜ້າເປັນທີ່ປຶກສາ, NGOs ທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ແມ່ນອາດເຂົ້າຮ່ວມໃນບັນດາກອງປະຊຸມເປີດກວ້າງຂອງໜ່ວຍປະຕິບັດງານຂອງສະພາສິດທິມະນຸດໄດ້

NGOs ທີ່ເຂົ້າຮ່ວມໃນກອງປະຊຸມຂອງໜ່ວຍງານຂອງລະດັບສູງກ່ຽວກັບການຈັດຕັ້ງປະຕິບັດສິດໃນການພັດທະນາແມ່ນຈະມີໂອກາດທີ່ຈະກ່າວຄຳຄິດເຫັນໃນພິທີເປີດກອງປະຊຸມ. NGOs ທີ່ເປັນທີ່ປຶກ ສາໃຫ້ແກ່ ECOSOC ທີ່ມີຄວາມສົນໃຈໃນການເຂົ້າຮ່ວມໃນກອງປະຊຸມຂອງໜ່ວຍງານ ຫຼື ໜ່ວຍງານລະດັບສູງແມ່ນຄວນຈະກອກແບບຟອມລົງທະບຽນໃຫ້ສຳເລັດ (ສາມາດເອົາໄດ້ທີ່ເວບຂອງ OHCHR ) ແລ້ວສົ່ງໄປທີ່:

The Accreditation Officer, Fax: +41 (0)22 928 9010, Tel: +41 (0)22 928 9829

***ການປະກອບສ່ວນໃນວຽກຂອງໜ່ວຍປະຕິບັດງານ***

ໜຶ່ງໃນໜ້າວຽກທີ່ສຳຄັນທີ່ມອບໃຫ້ໜ່ວຍງານແມ່ນການທົບທວນບົດລາຍງານ ແລະ ທົບທວນທຸກຂໍ້ມູນທີ່ໄດ້ຮັບຈາກ NGOs ກ່ຽວກັບສາຍພົວພັນລະຫວ່າງບັນດາກິດຈະກຳຂອງ NGO ແລະ ສິດທິໃນການພັດທະນາ.
ໜ່ວຍປະຕິບັດງານແມ່ນຍິນດີຮັບເອົາທຸກການລາຍງານ ແລະ ຂໍ້ມູນຈາກ NGO ແລະ ພາກປະຊາສັງຄົມຕ່າງໆ.

ຢ່າງໃດກໍ່ກໍ ວຽກງານດັ່ງກ່າວນີ້ແມ່ນໄດ້ຮັບການຊ່ວຍເຫລືອບາງຢ່າງຈາກໜ່ວຍປະຕິບັດງານລະດັບສູງໂດຍສະເພາະແມ່ນໄດ້ຂໍ້ມູນມາຈາກບັນດາກອງປະຊຸມຂອງໜ່ວຍປະຕິບັດງານທີ່ເປີດກວ້າງໃຫ້ຫຼາຍພາກສ່ວນຈາກ NGOs ແລະ ພາກປະຊາສັງຄົມຕ່າງໆເຂົ້າຮ່ວມ.

NGOs ແລະ
ພາກປະຊາສັງຄົມຕ່າງໆແມ່ນຄວນຈະສົ່ງຖະແຫຼງການຂອງຕົນພ້ອມທັງຄວນມີສ່ວນຮ່ວມໃນບັນດາກິຈະກຳຂອງໜ່ວຍປະຕິບັດງານ, ມີສ່ວນຮ່ວມໃນແຜນງານ ແລະ ການຈັດຕັ້ງປະຕິບັດຕາມຄຳແນະນຳຂອງໜ່ວຍງານລວມ.

## F. ກອງປະຊຸມທາງສັງຄົມ

### *ການເຂົ້າຮ່ວມໃນກອງປະຊຸມທາງສັງຄົມ*

ກອງປະຊຸມທາງສັງຄົມແມ່ນເປີດໃຫ້ອົງການຈັດຕັ້ງຕ່າງໆທີ່ມີຄວາມສົນໃຈສາມາດເຂົ້າຮ່ວມໄດ້ເຊັ່ນ:[53]

- ອົງການລະຫວ່າງປະເທດ;
- ພາກສ່ວນຕ່າງໆທີ່ຢູ່ໃນລະບົບຂອງ ສປຊ, ໂດຍສະເພາະແມ່ນຜູ້ທີ່ໄດ້ຮັບມອບໝາຍທາງດ້ານກົນໄກ ແລະ ຂະບວນການດຳເນີນງານດ້ານສິດທິມະນຸດ;
- ຄະນະກຳມາທິການທາງເສດຖະກິດພາກພື້ນ
- ອົງການແລະສຳນັກງານພິເສດ, ໂດຍສະເພາະແມ່ນອົງກອນເພື່ອການພັດທະນາແຫ່ງ ສປຊ (UNDP), ກອງທຶນລະຫວ່າງປະເທດ (IMF), ທະນາຄານໂລກ, ແລະ ອົງການການຄ້າໂລກ;
- ຕົວແທນຂອງສະຖາບັນສິດທິມະນຸດແຫ່ງຊາດ ແລະ NGOs ທີ່ເປັນທີ່ປຶກສາໃຫ້ແກ່ ECOSOC;
- NGOs ຕ່າງໆໂດຍສະເພະແມ່ນອົງການທີ່ຫາກໍ່ໄດ້ຮັບການສ້າງຕັ້ງຂື້ນມາຄື: ໜ່ວຍງານທີ່ມີຂະໜາດນ້ອຍ, ສະມາຄົມຈາກຕົວເມືອງແລະຊົນນະບົດທີ່ມາຈາກທຸກສາລະທິດ, ກຸ່ມຕໍ່ຕ້ານຄວາມທຸກຍາກ, ອົງການຂອງຊາວນາ ແລະ ຊາວສວນລວມທັງສະມາຄົມຂອງເຂົາເຈົ້າ, ອົງການອາສາ, ອົງການຊາວໜຸ່ມ, ອົງການຂອງຊຸມຊົນ, ສະຫະພັນກຳມະບານ ແລະ ສະມາຄົມຂອງຜູ້ອອກແຮງງານ, ຕົວແທນຂອງພາກເອກະຊົນ, ທະນາຄານໃນພາກພື້ນ, ອົງການທາງການເງິນຕ່າງໆ ແລະ ອົງກອນເພື່ອການພັດທະນາຕ່າງໆ.

ການເຂົ້າຮ່ວມຂອງໃນກອງປະຊຸມຂອງພາກສ່ວນປະຊາສັງຄົມແມ່ນອີງຕາມການກຳນົດໃນມະຕິຂອງ ECOSOC 1996\31, ແລະ ການປະຕິບັດທີ່ເຄີຍດຳເນີນງານມາຈາກຄະນະກຳມາທິການຊຸດເກົ່າທີ່ເນັ້ນຄວາມສຳຄັນຂອງການມີສ່ວນຮ່ວມຈາກພາກສ່ວນຕ່າງໆຂ້າງເທິງນັ້ນ. ນອກນີ້ທາງສະພາສິດທິມະນຸດຍັງຂໍໃຫ້ OHCHR ຊ່ວຍຊອກຫາວິທີທີ່ມີປະສິດທິພາບເພື່ອໃຊ້ໃນການສົນທະນາປຶກສາຫາລື ແລະ ຂະຫຍາຍການມີເຂົ້າຮ່ວມ ກອງປະຊຸມທາງສັງຄົມໃຫ້ພາກສ່ວນຕ່າງໆໃຫ້ທົ່ວທຸກພາກພື້ນໂດຍສະເພາະແມ່ນບັນດາປະເທດທີ່ກຳລັງພັດທະນາເພື່ອເປັນການສ້າງຄູ່ຮ່ວມງານກັບ NGO, ພາກເອກະຊົນ ແລະ ອົງການຈັດຕັ້ງສາກັນ.[54]

ອົງການພາກປະຊາສັງຄົມທີ່ສົນໃຈເຂົ້າຮ່ວມກອງປະຊຸມທາງສັງຄົມແມ່ນສາມາດຕິດຕໍ່ໄດ້ທີ່ກອງເລຂາ. ຂໍ້ມູນເພີ່ມເຕີມແມ່ນສາມາດຕິດຕໍໄດ້ທີ່: socialforum@ohchr.org

53 ເບິ່ງມະຕິສະພາສິດທິມະນຸດ 6\13

54 ເບິ່ງມະຕິສະພາສິດທິມະນຸດ 6\13

G. ກອງປະຊຸມກ່ຽວກັບຊົນເຜົ່າ

***ການເຂົ້າຮ່ວມໃນກອງປະຊຸມຊົນເຜົ່າ***

ກອງປະຊຸມແມ່ນເປີດກວ້າງໃຫ້ແກ່ NGOs ທີ່ມີຖານະເປັນທີ່ປຶກສາໃຫ້ແກ່ ECOSOC ແລະ NGOs ຕ່າງໆທີ່ມີເປົ້າໝາຍ ແລະ ວັດຖຸປະສົງດຽວກັນກັບເນື້ອໃນຂອງກົດບັດ ສປຊ. ກອງປະຊຸມ ແມ່ນຍັງເປີດໂອກາດໃຫ້ແກ່ພາກສ່ວນປະຊາສັງຄົມທີ່ລວມມີບັນດາສະຖາບັນການສຶກສາ ແລະ ຊ່ຽວຊານຕ່າງໆທີ່ເຮັດວຽກດ້ານຊົນເຜົ່າໄດ້ເຂົ້າຮ່ວມ.

ພາກປະຊາສັງຄົມທີ່ສົນໃຈເຂົ້າຮ່ວມກອງປະຊຸມ ຫຼື ເຮັດວຽກກ່ຽວກັບຊົນເຜົ່ານັ້ນແມ່ນສາມາດຕິດຕໍ່ກອງເລຂາ ໄດ້. ຂໍ້ມູນເພີ່ມເຕີມແມ່ນສາມາດອີເມວໄປທີ່: minorityforum@ohchr.org.

***ການສະເໜີລາຍຊື່ເພື່ອເຂົ້າຄັດເລືອກເປັນປະທານຂອງກອງປະຊຸມ***

ອີງຕາມມະຕິ 5\1 ຂອງສະພາສິດທິມະນຸດ, NGOs ໃນຖານະທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ແລະ ຜູ້ສັງເກດການຂອງສະພາສິດທິມະນຸດລວມທັງບັນດາລັດພາຄີຕ່າງໆແມ່ນສາມາດສະເໜີລາຍຊື່ຜູ້ໃດໜຶ່ງເພື່ອເຂົ້າຄັດເລືອກເປັນປະທານກອງປະຊຸມກ່ຽວກັບຊົນເຜົ່າໄດ້.

**H. ກົນໄກຜູ້ຊ່ຽວຊານກ່ຽວກັບສິດທິຂອງຄົນພື້ນເມືອງ**

***ການເຂົ້າຮ່ວມກອງປະຊຸມກົນໄກຂອງຜູ້ຊ່ຽວຊານ***

ກອງປະຊຸມປະຈຳປີຂອງກົນໄກຜູ້ຊ່ຽວຊານແມ່ນເປີດກວ້າງໃຫ້ແກ່ຫລາຍພາກສ່ວນຈາກພາກປະຊາສັງຄົມເຂົ້າຮ່ວມເຊັ່ນ: NGOs ແລະ ອົງການທີ່ກ່ຽວຂ້ອງກັບຄົນພື້ນເມືອງ.

***ກອງທຶນອາສາເພື່ອຄົນພື້ນເມືອງ***

ໜ່ວຍງານພາກປະຊາສັງຄົມຄວນຈະໃສ່ໃຈເລື່ອງກອງທຶນອາສາເພື່ອຄົນພື້ນເມືອງທີ່ສ້າງຂຶ້ນມາເພື່ອຊ່ວຍເຫຼືອທາງການ ເງິນແກ່ຕົວແທນຂອງຊຸມຊົນ ແລະ ອົງການຂອງຄົນພື້ນເມືອງທີ່ຈະມີໂອກາດໄດ້ເຂົ້າຮ່ວມກອງປະຊຸມຂອງກົນໄກຂອງ ຜູ້ຊ່ຽວຊານ ແລະ ເຂົ້າຮ່ວມກອງປະຊຸມທາງການກ່ຽວກັບຄົນພື້ນເມືອງ.

ພາກປະຊາສັງຄົມໃດທີ່ສົນໃຈທີ່ຈະຂໍເຂົ້າຮ່ວມ ຫຼື ປະກອບສ່ວນໃນກອງປະຊຸມກົນໄກຊ່ຽວຊານແມ່ນສາມາດ ຕິດຕໍ່ໄດ້ທີ່: expertmechanism@ohchr.org

ຂໍ້ມູນເພີ່ມເຕີມກ່ຽວກັບກອງທຶນອາສາເພື່ອຄົນພື້ນເມືອງທີ່ລວມມີທັງວິທີການຄັດເລືອກຜູ້ທີ່ຈະໄດ້ຮັບການຊ່ວຍເຫຼືອຈາກກອງທຶນແມ່ນສາມາດເບິ່ງໄດ້ໃນບົດທີ IX (ກອງທຶນ ແລະ ກອງທຶນຊ່ວຍເຫຼືອ) ຢູ່ໃນປຶ້ມ ຄູ່ມືນີ້.

***ການສະເໜີລາຍຊື່ເພື່ອຄັດເລືອກເຂົ້າໄປໃນກົນໄກຜູ້ຊ່ຽວຊານ***

ອີງຕາມມະຕິຂອງສະພາສິດທິມະນຸດ 5\1, NGOS ແລະ ອົງການສິດທິມະນຸດອື່ນໆອາດມີສິດທີ່ຈະສະເໜີລາຍຊື່ຜູ້ສະມັກເພື່ອຄັດເລືອກເປັນຜູ້ຊ່ຽວຊານອິດສະຫລະເພື່ອເຂົ້າໄປເຮັດວຽກໃນກົນໄກຜູ້ຊ່ຽວຊານ. ສ່ວນບຸກຄົນກໍ່ອາດຂໍສະມັກດ້ວຍຕົນເອງໄດ້.

ເງື່ອນໄຂໃນການແຕ່ງຕັ້ງຜູ້ຊ່ຽວຊານອິດສະຫລະແມ່ນຕ້ອງອີງໃສ່ຄວາມຮູ້ຄວາມສາມາດ ແລະ ປະສົບການໃນຂົງເຂດທີ່ກ່ຽວຂ້ອງ, ມີເອກະລາດ, ມີຄວາມທ່ຽງທຳ, ມີມະນຸດສຳພັນ ແລະ ມີຄວາມຫ້າວຫັນ. ການຄັດເລືອກຍັງຕ້ອງໄດ້ເບິ່ງດ້ານຄວາມສະເໝີພາບດ້ານຍິງຊາຍ, ທາງດ້ານພາກພື້ນ ແລະ ເປັນຕົວແທນທີ່ມາຈາກລະບົບກົດໝາຍທີ່ຫລາກຫລາຍ.

ຂໍ້ມູນເພີ່ມເຕີມກ່ຽວກັບການສະເໜີລາຍຊື່ຜູ້ສະມັກ ແລະ ກ່ຽວກັບວິທີການແຕ່ງຕັ້ງແມ່ນສາມາດຕິດຕໍ່ນຳກອງເລຂາໄດ້ທີ່:
hrcexpertmechanism@ohchr.org.

Fax: +41 (0)22 917 9011

Tel: +41 (0)22 917 9223

## I. ຖະແຫລງການ ແລະ ແຜນງານປະຕິບັດແຫ່ງເມືອງເດີບານ

ຂໍ້ມູນກ່ຽວກັບວິທີການເຂົ້າຮ່ວມ ແລະ ປະກອບສ່ວນໃນວຽກງານຂອງກົນໄກຂອງສະພາສິດທິມະນຸດທີ່ກ່ຽວຂ້ອງກັບກອງປະຊຸມໂລກແຫ່ງເມືອງເດີບານແມ່ນສາມາດຕິດຕໍ່ໄດ້ທີ່:

Anti-Discrimination Unit
Office of the United Nations High Commissioner for Human Rights
8–14, avenue de la Paix
CH–1211 Geneva 10, Switzerland
E-mail: adusecretariat@ohchr.org
Tel: +41 (0)22 928 92 08
Fax: +41 (0)22 928 90 50

## 1. ໜ່ວຍງານລະຫວ່າງປະເທດກ່ຽວກັບການຈັດຕັ້ງປະຕິບັດທີ່ມີປະສິດທິພາບຂອງຖະແຫລງ ການ ແລະ ແຜນງານແຫ່ງເມືອງເດີບານ

ໃນຄະນະທີ່ໜ່ວຍງານເປັນອົງກອນທີ່ປຶກສາ, NGOs ໃນຖານະທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ແລະ NGOs ທີ່ເຄີຍໄດ້ຮັບການພິຈາລະນາໃຫ້ເຂົ້າຮ່ວມກອງປະຊຸມຄັ້ງທີ່ແລ້ວນັ້ນແມ່ນສາມາດເຂົ້າຮ່ວມໄດ້ອີກ. NGOs ທີ່ເຂົ້າໃນທີ່ປະຊຸມແມ່ນມີໂອກາດທີ່ຈະຖະແຫລງໃນທີ່ປະຊຸມທາງປາກເປົ່າ ແລະ ຍື່ນເອກະສານທີ່ເປັນລາຍລັກອັກສອນໄດ້.

**2. ກຸ່ມຂອງຊ່ຽວຊານອິດສະຫລະທີ່ມີຊື່ສຽງ**

NGOs ໃດທີ່ສົນໃຈໃນການຍື່ນບົດລາຍງານໃຫ້ແກ່ກຸ່ມຂອງຜູ້ຊ່ຽວຊານແມ່ນສາມາດຕິດຕໍ່ໄດ້ທີ່ໜ່ວຍງານຕ້ານການຈຳແນກຂອງ OHCHR

**3. ກຸ່ມໜ່ວຍງານຂອງຊ່ຽວຊານກ່ຽວກັບຄົນພື້ນເມືອງອັບຝຣິກາ**

NGOs ທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ແລະ NGOs ທີ່ເຄີຍໄດ້ຮັບອານຸຍາດເຂົ້າຮ່ວມໃນທີ່ປະຊຸມໂລກຄັ້ງກ່ອນ ແມ່ນສາມາດເຂົ້າຮ່ວມກອງປະຊຸມຂອງໜ່ວຍງານໄດ້. NGOs ທີ່ເຂົ້າຮ່ວມໃນທີ່ປະຊຸມແມ່ນຈະມີໂອກາດຍື່ນຖະແຫລງການທີ່ເປັນລາຍລັກອັກສອນ ແລະ ນຳສະເໜີທາງປາກເປົ່າໄດ້.

ສຳລັບຂໍ້ມູນປະຈຸບັນກ່ຽວກັບການເຂົ້າຮ່ວມໃນກອງປະຊຸມໜ່ວຍງານຜູ້ຊ່ຽວຊານແມ່ນສາມາດເບິ່ງໄດທີ່ ເວບຂອງ OHCHR

NGOs ແລະ ພາກປະຊາສັງຄົມອື່ນໆແມ່ນຈະຖືກຂໍໃຫ້ສະໜອງຂໍ້ມູນໃຫ້ແກ່ໜ່ວຍງານ ແລະ ລາຍງານສະພາບການທີ່ກ່ຽວຂ້ອງເພື່ອວ່າໜ່ວຍງານຜູ້ຊ່ຽວຊານຈະສາມາດໃຊ້ຂໍ້ມູນດັ່ງກ່າວນັ້ນໃນການປະຕິບັດງານຕໍ່ໄປ. NGOs ແລະ ພາກປະຊາສັງຄົມຕ່າງໆແມ່ນຄວນຈະໃຫ້ການຮ່ວມມືປະສານງານ, ໃຫ້ຂໍ້ມູນ ແລະ ຈັດໃຫ້ບຸກຄົນຕ່າງໆໃຫ້ໄດ້ມີໂອກາດໂອ້ລົມກັບໜ່ວຍງານໃນເວລາທີ່ລົງພື້ນທີ່.

**4. ຄະນະກຳມາທິການສະເພາະກິດກ່ຽວກັບການຄັດເລືອກເອົາບັນດາມາດຕະຖານທີ່ເໝາະສົມ**

NGOs ທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ແລະ NGOs ທີ່ເຄີຍໄດ້ເຂົ້າຮ່ວມກອງປະຊຸມໂລກແມ່ນສາມາດເຂົ້າຮ່ວມກອງປະຊຸມຂອງໜ່ວຍງານ ແລະ ມີໂອກາດທີ່ຈະສະແດງຄຳເວົ້າທາງປາກເປົ່າໃນທີ່ປະຊຸມໄດ້.

ພາກປະຊາສັງຄົມແມ່ນໄດ້ຖືກເຊີນໃຫ້ສະໜອງຂໍ້ມູນ ແລະ ຜົນການສຶກສາຄົ້ນຄ້ວາໃຫ້ແກ່ຄະນະກຳມາທິການ ສະເພາະກິດ. ສຳລັບອົງການໃດທີ່ມີຈຸດປະສົງຢາກປະກອບສ່ວນຂໍ້ມູນດັ່ງກ່າວແມ່ນສາມາດຕິດຕໍ່ໜ່ວຍງານຕ້ານການ ຈຳແນກຂອງ OHCHR

**5. ຄະນະກຳມາທິການກະກຽມເພື່ອກອງປະຊຸມທົບທວນແຫ່ງເມືອງເດີບານ ແລະ ໜ່ວຍງານທີ່ປຶກສາກອງປະຊຸມລະຫວ່າງປະເທດເພື່ອຕິດຕາມວຽກງານຂອງຄະນະກຳມາທິການກະກຽມກອງປະຊຸມທົບທວນແຫ່ງເມືອງເດີບານ**

ຄະນະກຳມາທິການກະກຽມ ແລະ ໜ່ວຍງານທີ່ປຶກສາລະຫວ່າງປະເທດແມ່ນໄດ້ຮັບການສ້າງຕັ້ງຂຶ້ນຈາກຂະບວນການກະກຽມກອງປະຊຸມທົບທວນ. ເງື່ອນໄຂ ແລະ ການຈັດຕາມຂ້າງລຸ່ມນັ້ນແມ່ນເພື່ອອົງການ NGOs ທີ່ຈະເຂົ້າຮ່ວມໃນກອງປະຊຸມກະກຽມຂອງຄະນະກຳມາທິການ. NGOs ທີ່ເຄີຍໄດ້ເຂົ້າຮ່ວມໃນກອງປະຊຸມຜ່ານມາແມ່ນສາມາດເຂົ້າຮ່ວມກອງປະຊຸມຂອງຄະນະກະກຽມໄດ້ອີກ.

- NGOs ທີ່ເປັນທີ່ປຶກສາໃຫ້ແກ່ ECOSOC ແມ່ນຈະຖືກເຊີນໃຫ້ເຂົ້າຮ່ວມໃນທຸກກອງປະຊຸມກະກຽມໄດ້ຢ່າງ ເຕັມທີ່ໂດຍອີງຕາມມະຕິ 1996/31ຂອງ ECOSOC;
- NGOs ທີ່ບໍ່ໄດ້ເປັນທີ່ປຶກສາໃດໆເຊິ່ງເຄີຍໄດ້ເຂົ້າຮ່ວມກອງປະຊຸມໂລກ ແລະ ຕິດຕາມກົນໄກຕ່າງໆຜ່ານມາແມ່ນຈະມີສິດເຂົ້າຮ່ວມກອງປະຊຸມກະກຽມໄດ້ຢ່າງເຕັມທີ່ ຖ້າຫາກວ່າບໍ່ມີການຂັດຄ້ານຈາກລັດພາຄີທີ່ກ່ຽວຂ້ອງ. ໃນກໍລະນີທີ່ມີການຂັດຄ້ານກ່ຽວກັບ NGOs, ແລະ NGOs ສາມາດດຳເນີນການຕອບໂຕ້, ແລະ ທາງຄະນະ

ກຳມາທິການກະກຽມຈະເປັນຜູ້ທີ່ຕັດສິນບັນຫາໂດຍຈະອີງໃສ່ຂັ້ນຕອນມາດຕະຖານທີ່ກຳນົດໃນມະຕິ ເລກທີ 1996/31;

- NGOs ທີ່ບໍ່ໄດ້ມີຖານະເປັນທີ່ປຶກສາ ແລະ ບໍ່ໄດ້ຮັບນຸຍາດເຂົ້າຮ່ວມໃນກອງປະຊຸມໂລກ ແລະ ບໍ່ໄດ້ຕິດຕາມກົນໄກຕ່າງໆແມ່ນອາດສາມາດຍື່ນຄຳຮ້ອງຂໍເຂົ້າຮ່ວມກອງປະຊຸມຂອງຄະນະກຳມາທິການກະກຽມໃຫ້ແກ່ກອງເລຂາໄດ້. ຫລັງຈາກໄດ້ຮັບຄຳຮ້ອງຕ່າງໆແລ້ວ ທາງກອງເລຂາກໍ່ຈະດຳເນີນການກວດກາເບິ່ງຄວາມສົມບູນຂອງຄຳຮ້ອງຕາມເງື່ອນໄຂທີ່ມີໃນມະຕິເລກທີ 1996/31;
- ບັນດາຜູ້ແທນຂອງຄົນພື້ນເມືອງທີ່ກ່ຽວຂ້ອງໃນມະຕິ 1995/32 ຂອງ ECOSOC ແມ່ນສາມາດເຂົ້າຮ່ວມໃນກອງປະຊຸມຂອງຄະນະກຳມາທິການກະກຽມໄດ້. ສ່ວນບັນດາຜູ້ແທນຂອງຄົນພື້ນເມືອງອື່ນໆກໍ່ສາມາດທີ່ຈະໄດ້ເຂົ້າຮ່ວມກອງປະຊຸມໄດ້ແຕ່ຕ້ອງໄດ້ເບິ່ງເງື່ອນໄຂໃນມະຕິ 1996/31 ເສຍກ່ອນ.

NGOs ທີ່ເຂົ້າຮ່ວມໃນກອງປະຊຸມຂອງຄະນະກຳມາທິການກະກຽມ ແລະ ກອງປະຊຸມຂອງໜ່ວຍງານທີ່ປຶກສານັ້ນແມ່ນຈະມີໂອກາດໄດ້ນຳສະເໜີທາງປາກເປົ່າພ້ອມທັງໄດ້ມີໂອກາດຢື່ນຂໍ້ຄວາມທີ່ນຳສະເໜີນັ້ນເປັນລາຍລັກອັກສອນໄປນຳ.

NGOs ທີ່ມີຖານະເປັນທີ່ປຶກສາໃຫ້ແກ່ ECOSOC ແລະ NGOs ທີ່ເຄີຍໄດ້ຮັບອານຸຍາດໃຫ້ເຂົ້າຮ່ວມໃນ ກອງປະຊຸມໂລກ ແລະ ໄດ້ຕິດຕາມບັນດາກົນໄກຕ່າງໆພ້ອມທັງຄະນະກຳມາທິການແມ່ນສາມາດເຂົ້າຮ່ວມກອງ ປະຊຸມທົບທວນໄດ້.[55]

NGOs ທີ່ບໍ່ໄດ້ຢູ່ໃນສະຖານະຂ້າງເທິງນັ້ນແມ່ນບໍ່ຮັບອານຸຍາດເຂົ້າຮ່ວມກອງປະຊຸມໂລກ ແລະ ບໍ່ໄດ້ຕິດຕາມບັນດາກົນໄກຕ່າງໆແມ່ນຈະໄດ້ຮັບການແນະນຳໃຫ້ຢື່ນຄຳຮ້ອງຂໍເຂົ້າຮ່ວມກອງປະຊຸມທົບທວນໄດ້.

---

55 ເບິ່ງ "ບົດລາຍງານຂອງສະພາສິດທິມະນຸດກ່ຽວກັບການກະກຽມເພື່ອກອງປະຊຸມທົບທວນແຫ່ງເມືອງເດີບານ: ບົດລາຍງານຂອງຄະນະກຳມາທິການກະກຽມກ່ຽວກັບກອງປະຊຸມຊຸດທຳອິດ" (A/62/375, rule 66).

## ແຫລ່ງຂໍ້ມູນຂອງ OHCHR

## ເວບໄຊ້ຂອງສະພາສິດທິມະນຸດ

ພາກປະຊາສັງຄົມຄວນຈະຕິດຕາມບັນດາຂໍ່ມູນຕ່າງໆໃນເວບຂອງສະພາສິດທິມະນຸດເປັນປະຈຳເພື່ອເປັນການອັບເດດຂໍ້ມູນຂ່າວສານກ່ຽວກັບການເຂົ້າຮ່ວມກອງກອງປະຊຸມຂອງສະພາ. ຕາມປົກກະຕິຂໍ້ມູນກອງປະຊຸມສະເພາະແມ່ນຈະໂພສໃສ່ໃນເວບຂອງສະພາກ່ອນກອງປະຊຸມສາມັນຈະເລີ່ມໃນອີກສອງອາທິດ.

### ລະບົບອິນເຕີເນັດສະເພາະ

ລະບົບເນັດສະເພາະແມ່ນຈະເຊື່ອມຕໍ່ກັບເວບຂອງສະພາສິດທິມະນຸດເຊິ່ງມີຂໍ້ມູນຄື:

- ຮ່າງມະຕິຂອງສະພາສິດທິມະນຸດ ແລະ ການຕົກລົງຕ່າງໆ;
- ເອກະສານທີ່ເປັນຂໍ້ມູນຕ່າງໆທີ່ບໍ່ເປັນທາງການທີ່ໄດ້ຮັບຈາກປະເທດ ແລະ ໜ່ວຍງານທີ່ກ່ຽວຂ້ອງ
- ຄຳຖະແຫລງປາກເປົ່າທີ່ນຳສະເໜີໂດຍບັນດາລັດພາຄີ, ລັດສັງເກດການ, ແລະ NGOs ພ້ອມດ້ວຍຜູ້ທີ່ເຂົ້າຮ່ວມໃນ ກອງປະຊຸມສາມັນ ແລະ ວິສາມັນຂອງສະພາສິດທິມະນຸດ ແລະ ໃນກອງປະຊຸມຕ່າງໆ.

ລະບົບອິນເຕີເນັດສະເພາະຍັງມີຂໍ້ມູນທີ່ກ່ຽວຂ້ອງກັບເວບໄຊ້ຂອງ NGO ທີ່ມີຂໍ້ມູນກ່ຽວກັບກອງປະຊຸມ ສະເພາະໃດໜຶ່ງ.

ສຳລັບລະຫັດເຂົ້າຫາເວບສະເພາະນັ້ນແມ່ນສາມາດສະມັກທາງອອນລາຍໄດ້ທີ່ເວບຂອງສະພາສິດທິມະນຸດຜ່ານທາງເວບຂອງ OHCHR. ໃນເວລາທີ່ກອກແບບຟອມສຳເລັດແລ້ວ, ລະຫັດທີ່ຂໍນັ້ນກໍ່ຈະຖືກສົ່ງເຂົ້າໄປຫາທາງອີເມວ.

## ລະບົບວີດີໂອອອນລາຍ

ກອງປະຊຸມທົ່ວໄປຂອງສະພາສິດທິມະນຸດ ແລະ ບາງກົນໄກຂອງສະພາແມ່ນສາມາດເບິ່ງທາງວີດີໂອອອນລາຍແບບຖ່າຍ ທອດສົດໄດ້. ວີດີໂອອອນລາຍທາງເວບຍັງມີບັນດາວີດີໂອຫລາຍຢ່າງກ່ຽວກັບກອງປະຊຸມທີ່ເກັບໄວ້ໃນເນັດເພື່ອໃຫ້ບໍ ລິການອີກດ້ວຍ. ວີດີໂອຈະສາມາດເບິ່ງໄດ້ກໍຕໍ່ເມື່ອໄດ້ດາວໂລດໂປຣແກມສະເພາະຂອງວີດີໂອມາໄວ້ເສຍກ່ອນ.

ວີດີໂອອອນລາຍແມ່ນສາມາດເຂົ້າຫາໄດ້ທາງເວບຂອງສະພາສິດທິມະນຸດໂດຍຜ່ານທາງເວບຂອງ OHCHR.


ສະພາສິດທິມະນຸດ
ກົນໄກການທົບ ທວນ
ໜ່ວຍງານຂອງ UPR
ຄະນະທີ່ປຶກສາສ ະພາສິດທິມະນຸດ
ຂະບວນການ ຮ້ອງທຸກ.
ໜ່ວຍງານສື່ສານ
ໜ່ວຍງານສຶກສາ ສະພາບການ
ຂະບວນການພິ ເສດ
ວຽກລະດັບຊາດ
ວຽກທີ່ສຳຄັນ
ໜ່ວຍງານຕ່າງໆ
ໜ່ວຍງານທີ່ປຶກ ສາກ່ຽວກັບສິດ ໃນການພັດທະ ນາ
ກອງປະຊຸມສະ ເພາະ
ກອງປະຊຸມສຳ ລັບຄົນຊົນເຜົ່າ
ກົນໄກຂອງຜູ້ ຊ່ຽວຊານກ່ຽວ ກັບສິດຂອງຄົນ ພື້ນເມືອງ
ກົນໄກທີ່ກ່ຽວ ຂ້ອງກັບຖະ ແຫລງການ ແລະ ແຜນງານແຫ່ງ ເມືອງເດີບານ

## ເອກະສານຊ້ອຍທ້າຍ: ການເຂົ້າເຖິງແລະການເຮັດວຽກຮ່ວມກັບສະພາສິດທິມະນຸດທັງໃນດ້ານໜ້າທີ່ແລະກົນໄກຂອງສະພາ

| ກອງປະຊຸມ/ກົນໄກ | ພາກປະຊາສັງຄົມໃດ (CSAs) ທີ່ສາມາດເຂົ້າຮ່ວມກອງປະຊຸມຂອງກົນໄກໄດ້? | ພາກປະຊາສັງຄົມສາມາດປະກອບສ່ວນຫຍັງແດ່ໃນກອງປະຊຸມທີ່ເຂົ້າຮ່ວມນັ້ນ? | ພາກປະຊາສັງຄົມໃດທີ່ສາມາດປະກອບສ່ວນໃນວຽກງານຂອງກົນໄກໄດ້ (ໃຫ້ໄດ້ຫລາຍກ່ວາການເຂົ້າຮ່ວມຊື່ໆ)? | ການປະກອບສ່ວນຄວນເປັນໄປໃນຮູບແບບໃດ? |
|---|---|---|---|---|
| **ກອງປະຊຸມສາມັນແລະວິສາມັນຂອງສະພາສິດທິມະນຸດ** | NGOs ທີ່ມີຖານະເປັນທີ່ປຶກສາໃຫ້ແກ່ ECOSOC ພ່າຍຫລັງທີ່ໄດ້ຮັບ ອານຸມັດແລ້ວ | • ຢື່ນວັດຖຸປະສົງເປັນລາຍລັກອັກສອນ;<br>• ຮ້ອງຂໍທາງປາກເປົ່າ;<br>• ຈັດກອງປະຊຸມນອກລອບ | NGOs ທີ່ມີຖານະເປັນທີ່ປຶກສາໃຫ້ແກ່ ECOSOC ເທົ່ານັ້ນທີ່ສາມາດສົ່ງ ຂໍ້ມູນທີ່ເປັນລາຍລັກອັກສອນໃຫ້ແກ່ກອງປະຊຸມາສາມັນແລະວິສາມັນ | NGOs ທີ່ມີຖານະເປັນທີ່ປຶກສາໃຫ້ແກ່ ECOSOC ຄວນຈະສຶກສາລະບຽບ ການເພື່ອຮຽນຮູ້ການຂຽນລາຍງານ |
| **ການທົບທວນສາກົນເປັນໄລຍະ** | NGOs ທີ່ມີຖານະເປັນທີ່ປຶກສາໃຫ້ແກ່ ECOSOC ພ່າຍຫລັງທີ່ໄດ້ຮັບ ອານຸມັດແລ້ວ | • ເປັນເຈົ້າພາບກອງປະຊຸມເພື່ອຂໍ້ມູນຂ່າວສານ<br>• ສາມາດໃຫ້ຄຳແນະນຳກ່ອນຈະມີການຮັບຮອງບົດສະຫຼຸບຜົນກອງປະຊຸມສາມັນຂອງສະພາສິດທິມະນຸດ | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ເຮັດວຽກຮ່ວມກັບລັດຖະບານ ເພື່ອກະກຽມບົດລາຍ ງານແຫ່ງຊາດ;<br>• ປະກອບສ່ວນໃນການຢື່ນເອກະສານຂອງໜ່ວຍງານທີ່ກ່ຽວຂ້ອງເພື່ອມີສ່ວນຮ່ວມ ໃນບົດສະຫລຸບວຽກງານຂອງ OHCHR<br>• ດຳເນີນການຕິດຕາມຜົນຂອງ UPR (ບົດສະຫລຸບ, ຄຳແນະນຳ, ຄຳໝັ້ນສັນຍາ ແບບສະມັກໃຈ/ການ ເສຍສະຫລະ) |
| **ຄະນະກຳມາທິການທີ່ປຶກສາຂອງສະພາສິດທິມະນຸດ** | NGOs ທີ່ມີຖານະເປັນທີ່ປຶກສາໃຫ້ແກ່ ECOSOC ພ່າຍຫລັງທີ່ໄດ້ຮັບ ອານຸມັດແລ້ວ | • ຢື່ນຄຳຮ້ອງທີ່ເປັນລາຍລັກອກສອນ<br>• ຮ້ອງຂໍທາງປາກເປົ່າ | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ສະເໜີລາຍຊື່ຜູ້ສະມັກເພື່ອຄັດເລືອກເຂົ້າໄປໃນຄະນະກຳມາທິການທີ່ປຶກສາ |

| | | | | |
|---|---|---|---|---|
| **ຂະບວນການຮ້ອງທຸກ** | ພາກປະຊາສັງຄົມແມ່ນບໍ່ສາມາດເຂົ້າຮ່ວມກອງປະຊຸມກ່ຽວກັບການ ຮ້ອງທຸກ ຫຼື ຂະບວນການທີ່ກ່ຽວຂ້ອງ | ບໍ່ມີ | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ຍື່ນຄໍາຮ້ອງທຸກພາຍໃຕ້ຂໍ້ກໍານົດກ່ຽວກັບການຮ້ອງທຸກ |

| **ກອງປະຊຸມ/ກົນໄກ** | **ພາກປະຊາສັງຄົມໃດ (CSAs) ທີ່ສາມາດເຂົ້າຮ່ວມກອງປະຊຸມຂອງກົນໄກໄດ້?** | **ພາກປະຊາສັງຄົມສາມາດປະກອບສ່ວນຫຍັງແດ່ໃນກອງປະຊຸມທີ່ເຂົ້າຮ່ວມນັ້ນ?** | **ພາກປະຊາສັງຄົມໃດທີ່ສາມາດປະກອບສ່ວນໃນວຽກງານຂອງກົນໄກໄດ້ (ໃຫ້ໄດ້ຫລາຍກ່ວາການເຂົ້າຮ່ວມເທື່ອ)?** | **ການປະກອບສ່ວນຄວນເປັນໄປໃນຮູບແບບໃດ?** |
|---|---|---|---|---|
| **ຂະບວນການພິເສດ** | NGOs ແລະ ພາກປະຊາສັງຄົມຕ່າງໆອາດສາມາດຈັດປະຊຸມກັບຜູ້ທີ່ໄດ້ຮັບໜ້າທີ່ໃນໄລຍະຄັດເລືອກກອງປະຊຸມຍ່ອຍຂອງກອງປະຊຸມປະຈໍາປີຂອງຂະບວນການພິເສດ | • ເຂົ້າຮ່ວມສົນທະນາກັບຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນລະຫວ່າງການຄັດເລືອກກອງປະຊຸມ ຍ່ອຍຂອງກອງປະຊຸມປະຈໍາປີຂອງຂະບວນການພິເສດ<br>• NGOs ທີ່ມີຖານະເປັນທີ່ປຶກສາ ໃຫ້ແກ່ ECOSOC ແມ່ນສາມາດເຂົ້າຮ່ວມສົນທະນາກັບຜູ້ທີ່ໄດ້ຮັບໜ້າທີ່ໃນກອງປະຊຸມສາມັນຂອງສະພາສິດທິມະນຸດ | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ຍື່ນຄໍາອຸທອນ/ຄະດີສ່ວນບຸກຄົນທີ່ດ່ວນ<br>• ໃຫ້ການສະໜັບສະໜູນການລົງພື້ນທີ່<br>• ດໍາເນີນການຊັກຊວນ, ເຜີຍແຜ່, ຕິດຕາມ ແລະ ຈັດຕັ້ງປະຕິບັດວຽກງານຂອງຂະບວນການພິເສດ<br>• ຮ່ວມປະຊຸມຜູ້ທີ່ໄດຮັບມອບໝາຍ<br>• ສະເໜີລາຍຊື່ເຂົ້າຮັບພາລະໜ້າທີ່ |
| **ໜ່ວຍງານທີ່ປຶກສາກ່ຽວກັບສິດທິໃນການພັດທະນາ** | NGOs ທີ່ມີຖານະເປັນທີ່ປຶກສາໃຫ້ແກ່ ECOSOC ພ່າຍຫລັງທີ່ໄດ້ຮັບ ອານຸມັດແລ້ວແມ່ນສາມາດເຂົ້າຮ່ວມໃນທີ່ປະຊຸມເປີດກວ້າງຂອງໜ່ວຍງານ. ຫຼາຍພາກສ່ວນປະຊາສັງຄົມແມ່ນສາມາດເຂົ້າຮ່ວມປະຊຸມຂອງໜ່ວຍປະຕິບັດງານລະດັບສູງໄດ້. | NGOs ທີ່ເຂົ້າຮ່ວມປະຊຸມກັບໜ່ວຍປະຕິບັດງານລະດັບສູງແມ່ນມີໂອກາດທີ່ຈະນໍາສະເໜີກ່າວເປີດເວທີ. ຢ່າງໃດກໍ່ດີ ໂອກາດທີ່ວ່ານີ້ແມ່ນບໍ່ໄດ້ໃຊ້ໃນທີ່ປະຊຸມຂອງໜ່ວຍງານ. | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ຍື່ນຄໍາຖະແຫຼງໃຫ້ແກ່ໜ່ວຍງານ<br>• ຮ່ວມມືກັບໜ່ວຍປະຕິບັດງານ<br>• ຈັດຕັ້ງປະຕິບັດຕາມຄໍາແນະນໍາຂອງໜ່ວຍງານ |

| | | | | |
|---|---|---|---|---|
| **ກອງປະຊຸມທາງສັງຄົມ** | ພາກສ່ວນຕ່າງໆທີ່ມາຈາກພາກປະຊາສງຄົມແມ່ນສາມາດເຂົ້າຮ່ວມໄດ້ | • ໃຫ້ຂໍ້ຄິດເຫັນກ່ຽວກັບວຽກງານສິດທິມະນຸດຂອງກົນໄກສາກົນໃນທີ່ປະຊຸມ<br>• ແລກປ່ຽນບົດຮຽນທີ່ເປັນປະໂຫຍດໃນທີ່ປະຊຸມ<br>• ສະເໜີອົງການຂັ້ນຮາກຖານໃນທີ່ປະຊຸມ | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ສົ່ງຂໍ້ມູນຂ່າວສານໃຫ້ແກ່ກອງປະຊຸມທາງສັງຄົມ |

| ກອງປະຊຸມ/ກົນໄກ | ພາກປະຊາສັງຄົມໃດ (CSAs) ທີ່ສາມາດເຂົ້າຮ່ວມກອງປະຊຸມຂອງກົນໄກໄດ້? | ພາກປະຊາສັງຄົມສາມາດປະກອບສ່ວນຫຍັງແດ່ໃນກອງປະຊຸມທີ່ເຂົ້າຮ່ວມນັ້ນ? | ພາກປະຊາສັງຄົມໃດທີ່ສາມາດປະກອບສ່ວນໃນວຽກງານຂອງກົນໄກໄດ້ (ໃຫ້ໄດ້ຫລາຍ ກ່ອາການເຂົ້າຮ່ວມຊື່ງ)? | ການປະກອບສ່ວນຄວນເປັນໄປໃນຮູບແບບໃດ? |
|---|---|---|---|---|
| **ກອງປະຊຸມກ່ຽວກັບບັນຫາຊົນເຜົ່າ** | ຫຼາຍໆພາກສ່ວນປະຊາສັງຄົມ, NGOs, ສະຖາບັນການສຶກສາ ແລະຊ່ຽວຊານກ່ຽວກັບບັນຫາຊົນເຜົ່າແມ່ນເຂົ້າຮ່ວມໄດ້ | • ໃຫ້ການນຳສະເໜີ/ກ່າວສະເໜີທາງປາກເປົ່າ<br>• ນຳສະເໜີເປັນລາຍລັກອັກສອນ | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ສົ່ງຂໍ້ມູນໃຫ້ແກ່ກອງປະຊຸມ<br>• NGOs ທີ່ມີຖານະເປັນທີ່ປຶກສາໃຫ້ແກ່ECOSOC ແມ່ນສາມາດສະເໜີລາຍຊື່ຜູ້ສະໝັກເພື່ອຄັດເລືອກເຂົ້າໄປເປັນປະທານຂອງກອງປະຊຸມ |
| **ກົນໄກຜູ້ຊ່ຽວຊານກ່ຽວກັບສິດທິຂອງຄົນພື້ນເມືອງ** | ຫຼາຍໆພາກສ່ວນປະຊາສັງ ຄົມ, NGOs, ຄົນ ແລະ ອົງການຊົນເຜົ່າແມ່ນສາມາດເຂົ້າຮ່ວມໄດ້ | • ໃຫ້ການນຳສະເໜີ/ກ່າວສະເໜີທາງປາກເປົ່າ<br>• ນຳສະເໜີເປັນລາຍລັກອັກສອນ | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ສົ່ງຂໍ້ມູນໃຫ້ແກ່ກົນໄກຜູ້ຊ່ຽວຊານ<br>• ສະເໜີລາຍຊື່ຜູ້ສະໝັກເພື່ອຄັດເລືອກເປັນຊ່ຽວຊານອິດ ສະຫຼະ |
| **ໜ່ວຍງານລະຫວ່າງປະເທດກ່ຽວກັບການຈັດຕັ້ງປະຕິບັດທີ່ມີປະສິດທິພາບຂອງຖະແຫລງການ ແລະ ແຜນງານແຫ່ງເມືອງເດີບານ** | NGOs ທີ່ມີຖານະເປັນທີ່ປຶກສາ ໃຫ້ແກ່ ECOSOC, ແລະ NGOs ທີ່ໄດ້ຮັບອານຸມັດໃຫ້ເຂົ້າຮ່ວມກອງປະຊຸມໂລກແຫ່ງເມືອງເດີບານ | • ໃຫ້ການນຳສະເໜີ/ກ່າວສະເໜີທາງປາກເປົ່າ<br>• ນຳສະເໜີເປັນລາຍລັກອັກສອນ | ມີແຕ່ພາກປະຊາສັງຄົມທີ່ຕົກຢູ່ໃນກຸ່ມທີ່ຢູ່ທາງຊ້າຍມືນັ້ນແມ່ນອາດປະກອບສ່ວນຂໍ້ມູນໃຫ້ແກ່ໜ່ວຍ ງານລະຫວ່າງປະເທດໄດ້ | • ສົ່ງຂໍ້ມູນໃຫ້ແກ່ໜ່ວຍງານຕ່າງໆ |

| | | | | |
|---|---|---|---|---|
| **ກຸ່ມຂອງຊ່ຽວຊານເອກະລາດທີ່ມີຊື່ສຽງ** | ຕາມຫລັກການແລ້ວຈະເປັນກອງປະຊຸມປິດ. ຢ່າງໃດກໍ່ດີ ກອງປະຊຸມອາດເຊີນພາກປະຊາສັງຄົມເຂົ້າຮ່ວມເພື່ອແລກປ່ຽນບົດຮຽນໄດ້ | • ແລກປ່ຽນຄວາມຄິດເຫັນຕາມການເຊື້ອເຊີນຂອງພ່ວຍງານ | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ສົ່ງຂໍ້ມູນໃຫ້ແກ່ກຸ່ມຕ່າງໆ |

| ກອງປະຊຸມ/ກົນໄກ | ພາກປະຊາສັງຄົມໃດ (CSAs) ທີ່ສາມາດເຂົ້າຮ່ວມກອງປະຊຸມຂອງກົນໄກໄດ້? | ພາກປະຊາສັງຄົມສາມາດປະກອບສ່ວນຫຍັງແດ່ໃນກອງປະຊຸມທີ່ເຂົ້າຮ່ວມນັ້ນ? | ພາກປະຊາສັງຄົມໃດທີ່ສາມາດປະກອບສ່ວນໃນວຽກງານຂອງກົນໄກໄດ້ (ໃຫ້ໄດ້ຫລາຍ ກ່ອາການເຂົ້າຮ່ວມຊື່ງ)? | ການປະກອບສ່ວນຄວນເປັນໄປໃນຮູບແບບໃດ? |
|---|---|---|---|---|
| ໜ່ວຍງານຂອງຜູ້ຊ່ຽວຊານກ່ຽວກັບຄົນພື້ນເມືອງອັບຝຣິກາ | NGOs ທີ່ມີຖານະເປັນທີ່ ປຶກສາໃຫ້ແກ່ ECOSOC, ແລະ NGOs ທີ່ໄດ້ຮັບອານຸມັດໃຫ້ເຂົ້າຮ່ວກອງປະຊຸມໂລກແຫ່ງເມືອງເດີບານ | • ໃຫ້ການນຳສະເໜີ/ກ່າວສະເໜີທາງປາກເປົ່າ<br>• ນຳສະເນີເປັນລາຍລັກອັກສອນ | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ສົ່ງຂໍ້ມູນໃຫ້ແກ່ໜ່ວຍງານຕ່າງໆ<br>• ສົ່ງຂໍ້ມູນໃຫ້ແກ່ກ່ຽວກັບສະພາບການໃນລະຫວ່າງພາລະກິດຢ້ຽມຢາມຂອງໜ່ວຍງານ<br>• ປະຊຸມກັບສະມາຊິກໃນລະຫວ່າງການລົງພື້ນທີ່ |
| ຄະນະກຳມາທິການກະກຽມເພື່ອກອງປະຊຸມທົບທວນແຫ່ງເມືອງເດີບານ.<br>ໜ່ວຍງານທີ່ປຶກສາກອງປະຊຸມລະຫວ່າງປະເທດເພື່ອຕິດຕາມວຽກງານຂອງຄະນະກຳມາທິການກະກຽມເພື່ອກອງປະຊຸມທົບທວນແຫ່ງເທືອງເດີບານ | • NGOs ທີ່ມີຖານະເປັນທີ່ປຶກ ສາ ໃຫ້ແກ່ ECOSOC<br>• NGOs ທີ່ໄດ້ຮັບອານຸມັດໃຫ້ ເຂົ້າຮ່ວກອງປະຊຸມໂລກແຫ່ງເມືອງເດີບານ<br>• NGOs (ຖ້າບໍ່ໄດ້ມີຖານະເປັນທີ່ປຶກສາແລະບໍ່ໄດ້ເຂົ້າຮ່ວມກອງປະຊຸມໂລກແຫ່ງເມືອງເດີບານ) ແມ່ນສາມາດສົ່ງຄຳຮ້ອງຂໍເຂົ້າຮ່ວມໄດ້<br>• ຜູ້ແທນຂອງຄົນພື້ນເມືອງ | • ໃຫ້ການນຳສະເໜີ/ກ່າວສະເໜີທາງປາກເປົ່າ<br>• ນຳສະເນີເປັນລາຍລັກອັກສອນ | ມີແຕ່ພາກປະຊາສັງຄົມທີ່ຕັ້ງຢູ່ໃນກຸ່ມທີ່ຢູ່ທາງຊ້າຍມືນັ້ນແມ່ນອາດປະກອບສ່ວນຂໍ້ມູນໃຫ້ຄະນະກຳມາທິການກະກຽມ ແລະ ແກ່ໜ່ວຍງານທີ່ປຶກສາກອງປະຊຸມລະຫວ່າງປະເທດ ໄດ້ | • ສົ່ງຂໍ້ມູນທີ່ເປັນລາຍລັກອັກສອນໃຫ້ແກ່ຄະນະກຳມາທິການກະກຽມ ແລະ ໜ່ວຍງານທີ່ປຶກສາລະຫວ່າງປະເທດ |

| | | | | |
|---|---|---|---|---|
| **ຄະນະກຳມາທິການສະເພາະກິດກ່ຽວກັບການພິຈາລະນາເອົາມາດຕະຖານທີ່ເໝາະສົມ** | NGOs ທີ່ມີຖານະເປັນທີ່ ປຶກສາໃຫ້ແກ່ ECOSOC, ແລະ NGOs ທີ່ໄດ້ຮັບອານຸມັດໃຫ້ເຂົ້າຮ່ວມກອງປະຊຸມໂລກແຫ່ງເມືອງເດີບານ | • ໃຫ້ການນຳສະເໜີ/ກ່າວສະເໜີທາງປາກເປົ່າ<br>• ນຳສະເໜີເປັນລາຍລັກອັກສອນ | ພາກປະຊາສັງຄົມທີ່ກ່ຽວຂ້ອງ | • ສິ່ງຂໍ້ມູນແລະສິ່ງທີ່ພົບເຫັນ ໃຫ້ແກ່ຄະນະກຳມາທິການ ສະເພາະກິດ |

# VI. ຂະບວນການພິເສດ

**ພາບລວມຂອງຂະບວນການພິເສດ**

**ຂະບວນການພິເສດແມ່ນໃຜ?**

**"ຂະບວນການພິເສດ"**
ແມ່ນຊື່ທົ່ວໄປທີ່ຕັ້ງໃຫ້ແກ່ກົນໄກທີ່ໄດ້ຮັບການສ້າງຕັ້ງມາຈາກຄະນະກຳມາທິການສິດທິມະນຸດຊຸດເກົ່າ ແລະ ຖືກແທນດ້ວຍສະ ພາສິດທິມະນຸດເພື່ອດຳເນີນການກວດກາ, ກວດສອບ, ແນະນຳແລະລາຍງານຢ່າງເປີດເຜີຍກ່ຽວກັບສະພາບສິດມະນຸດຢູ່ໃນບາງປະເທດຫຼືບາງເຂດປົກຄອງ (ໜ້າທີ່ລະດັບປະເທດ), ຫຼື ກ່ຽວກັບປະກົດການລະເມີດສິດທິມະນຸດທີ່ຮ້າຍແຮງໃນທົ່ວໂລກ (ເປັນໜ້າທີ່ສະເພາະ). ມາຮອດເດືອນກັນຍາ 2008 ແມ່ນມີຂະບວນການພິເສດຢູ່ 38 ໜ່ວຍ ງານ (30 ໜ້າທີ່ສະເພາະ ແລະ 8 ໜ້າທີ່ລະດັບປະເທດ) ທີ່ພວມດຳເນີນການຢູ່.

ຊ່ຽວຊານທີ່ຄັດເລືອກເຂົ້າມາໃນຂະ ບວນການນັ້ນແມ່ນເປັນຊ່ຽວຊານ ທີ່ອິດສະຫລະ (ຜູ້ທີ່ໄດ້ຮັບມອບໝາຍ)ແລະ ອາດເປັນທີ່ ຮູ້ກັນດີໃນນາມນັກຂຽນລາຍງານພິເສດ, ຜູ້ແທນຕ່າງໆ, ຜູ້ແທນພິເສດຕ່າງໆ, ບັນດາຊ່ຽວຊານເອກະລາດຫຼືສະມາຊິດຂອງໜ່ວຍງານຕ່າງໆ.

ສຳນັກງານຂ້າຫລວງໃຫຍ່ (OHCHR) ເປັນຜູ້ສະໜອງທາງ ດ້ານບຸກຄະລາກອນ, ການເດີນທາງ ແລະ ການຄົ້ນຄ້ວາເພື່ອໃຫ້ການສະໜັບສະໜູນ ວຽກງານຂອງຂະບວນການພິເສດ.

**ຂະບວນການພິເສດເຮັດວຽກແນວໃດ?**

ຂະບວນການພິເສດປະຕິບັດໜ້າທີ່ຄື:

- ປະສານງານຕິດຕໍ່ປະຈຳວັນກັບຜູ້ເຄາະຮ້າຍ ແລະ ຜູ້ທີ່ມີຄວາມ ສ່ຽງດ້ານການຖືກລະເມີດສິດ ແລະ ໃຫ້ຄວາມຮູ້ໃນການປົກປ້ອງສິດທິຂອງພວກເຂົາ.
- ດຳເນີງານໃນກອບຂອງສິດທິມະນຸດທີ່ໜ້າເປັນຫວ່ງບໍ່ວ່າຈະເປັນເລື່ອງ ສ່ວນຕົວຫຼືກ່ຽວກັບບັນຫາທົ່ວໆໄປກໍ່ຕາມ, ການດຳເນີນງານແມ່ນຜ່ານທາງການສື່ສານໂດຍຕົງກັບລັດຖະບານ;
- ດຳເນີນການຊອກຫາຄວາມເປັນຈິງໃນປະເທດທີ່ກ່ຽວຂ້ອງແລະລາຍງານບັນຫາພ້ອມທັງໃຫ້ຄຳແນະນຳ;
- ກະກຽມສຶກສາບັນຫາສະເພາະທີ່ສາມາດເປັນຕົວຢ່າງແລະ ເປັນມາດຕະຖານ;
- ຍົກສູງຄວາມຕື່ນຕົວໂດຍຜ່ານທາງສື່ມວນຊົນກ່ຽວກັບບັນຫາທີ່ຢູ່ໃນຄວາມຮັບພິຊອບຂອງຕົນ. ອັນທີ່ແຕກຕ່າງກັບອົງກອນສິດທິມະນຸດກໍ່ຄືວ່າ ຂະບວນການພິເສດນີ້ແມ່ນສາມາດດຳເນີນງານໄດ້ທຸກທີ່ບໍ່ວ່າຈະຢູ່ໃນລັດທີ່ບໍ່ໄດ້ເປັນພາຄີຂອງກົດໝາຍທີ່ກ່ຽວຂ້ອງກໍ່ຕາມແລະບໍຈຳເປັນຕ້ອງຜ່ານຂະບວນການຍຸດຕິທຳພາຍໃນກ່ອນ.

---

ປື້ມຄູ່ມືນີ້ແມ່ນມີໃນເວບຂອງ OHCHR: http://www.ohchr.org/civilsocietyhandbook/ ໃນເວບຈະມີໃຫ້ດາວໂລດໄດ້ ແລະ ສາມາດເຊື່ອມຕໍ່ກັບແຫລ່ງຂໍ້ມູນອື່ນໆໄດ້.

**ວິທີເຂົ້າຫາ ແລະ ເຮັດວຽກຮ່ວມກັບຂະບວນການພິເສດ**

ພາກປະຊາສັງຄົມ, ສ່ວນບຸກ ຄົນ, ຫຼື ກຸ່ມຄົນແມ່ນສາມາດເຂົ້າເຖິງແລະເຮັດວຽກຮ່ວມກັບຂະບວນການພິເສດໄດ້. ການເຂົ້າເຖິງແລະເຮັດວຽກຮ່ວມແມ່ນ:

- ລາຍງານເລື່ອງບັນຫາສ່ວນຕົວໃຫ້ຂະບວນການພິເສດ;
- ໃຫ້ຂໍ້ມູນແລະວິເຄາະກ່ຽວກັບສະພາບການສິດທິມະນຸດທີ່ໜ້າເປັນຫ່ວງ;
- ໃຫ້ການສະໜັບສະໜຸນແກ່ການລົງພື້ນທີ່ຂອງຂະບວນການພິເສດ;
- ດຳເນີນການດົນນະລົງ, ເຜີຍ ແຜ່, ຕິດຕາມການຈັດຕັ້ງປະຕິບັດວຽກງານຂອງຂະບວນການພິເສດໃນລະດັບຊາດ;
- ເຊີນຜູ້ທີ່ໄດ້ມອບໝາຍໜ້າທີ່ໃນຂະ ບວນການພິເສດເຂົ້າຮ່ວມໃນກິດຈະກຳຂອງຕົນ;
- ພົບປະກັບຜູ້ແທນຂອງຂະບວນການພິເສດຕະຫລອດປີແລະເຂົ້າຮ່ວມກອງປະຊຸມປະຈຳປີຂອງຜູ້ທີ່ໄດ້ມອບໝາຍໜ້າທີ່ໃນຂະບວນການພິເສດ.

ພາກປະຊາສັງຄົມຍັງສາມາດສະເໜີລາຍຊື່ຄັດເລືອກເຂົ້າຮັບໜ້າທີ່ໃນຂະບວນການພິເສດໄດ້.

ການຕິດຕໍ່ຫາຜູ້ທີ່ໄດ້ຮັບມອອບໝາຍໜ້າທີ່ໃນຂະບວນການພິເສດ

E-mail: SPDInfo@ohchr.org (ສຳລັບການສອບຖາມແລະຂໍ້ມູນທົ່ວໄປ)

urgent-action@ohchr.org (ສຳລັບສ່ວນບຸກຄົນ/ການຮ້ອງທຸກເທົ່ານັ້ນ)

Fax: +41 (0)22 917 90 06

ສົ່ງໄປສະນີ: Quick Response Desk
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland

ພາກປະຊາສັງຄົມຄວນຈະໃສ່ຫົວຂໍ້ໃນອີເມວຫຼືແຟັກຫຼືໃນຫົວເອກະສານຈົດໝາຍວ່າຢາກສົ່ງໃຫ້ຂະບວນການພິເສດໃດ. ໃນຄະນະທີ່ຂະບວນການພິເສດແມ່ນມີທີ່ຢູ່ອັນດຽວກັນ, ການລະບຸຊື່ຂອງຂະບວນການພິເສດສະເພາະນັ້ນແມ່ນສາມາດເຮັດໃຫ້ການຕອບຮັບໄດ້ໄວຂຶ້ນ. ມັນມີຄວາມຈຳເປັນທີ່ຈະຕ້ອງແຈ້ງໃນໜັງສືທີ່ສົ່ງນັ້ນວ່າຢາກໃຫ້ຮູ້ການຢືນນັ້ນໃນນາມຂໍ້ມູນທົ່ວໄປ, ແບບສ່ວນຕົວ ຫຼື ຮູບແບບອື່ນໆ ( ເຊັ່ນ: ການເຊີນເຂົ້າຮ່ວມປະຊຸມ, ຮຽກຮ້ອງໃຫ້ຈັດປະຊຸມກັບຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ແລະ/ຫຼືກັບຜູ້ຊ່ວຍຂອງຂະບວນການ)

**ຂະບວນການພິເສດແມ່ນຫຍັງ?**

**ການນຳສະເໜີຂະບວນການພິເສດ**

**"ຂະບວນການພິເສດ"** ແມ່ນຊື່ທົ່ວໄປທີ່ໃສ່ຊື່ໃຫ້ແກ່ກົນໄກໂດຍຄະນະກຳມາທິການສິດທິມະນຸດຊຸດເກົ່າ ແລະ ສືບທອດໂດຍສະພາສິດທິມະນຸດເພື່ອແກ້ໄຂສະພາບການໃນປະເທດໃດໜຶ່ງ ຫຼື ບັນຫາສະເພາະໃດໜຶ່ງໃນທົ່ວໂລກ. ໂຄງຮ່າງທີ່ສຳຄັນຂອງຂະບວນການພິເສດກໍ່ຄືເລື່ອງຂອງຄວາມຮັບພິຊອບໃນການດຳເນີນງານກັບບັນການລະເມີດສິດທິມະນຸດທີ່ເກີດຂື້ນໃນທຸກມູມໂລກໄດ້ຢ່າງໄວວາ.

ພາລະໜ້າທີ່ຂອງຂະບວນດານພິເສດໂດຍທົ່ວໄປແລ້ວຕ້ອງມີຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນໃຫ້ດຳເນີນການກວດກາ, ແນະນຳ ແລະ ລາຍງານຢ່າງເປີດເຜີຍຕໍ່ສາທາລະນະກ່ຽວກັບສະພາບສິດທິມະນຸດໃນປະເທດໃດໜຶ່ງຫຼືເຂດປົກ ຄອງໃດໜຶ່ງ (ໜ້າທີ່ລະດັບຊາດ), ຫຼື ກ່ຽວກັບປະກົດການລະເມີດສິດທິມະນຸດທີ່ຮ້າຍແຮງທົ່ວໂລກ (ໜ້າທີ່ສະເພາະ). ໃນແຕ່ລະໜ້າທີ່ຂອງຂະບວນການພິເສດນັ້ນແມ່ນໄດ້ຖືກກຳນົດໃນມະຕິວ່າດ້ວຍການສ້າງຂະບວນການພິເສດ. ໜ້າທີ່ສະເພາະແມ່ນໄດ້ຮັບການຕໍ່ອາຍຸການໃນທຸກໆສາມປີ ແລະ ທຸກໆປີສຳລັບໜ້າທີ່ລະດັບຊາດ.[56] ມາຮອດເດືອນກັນຍາ 2008 ແມ່ນມີຂະບວນການພິເສດເຖິງ 38 ໜ່ວຍງານທີ່ດຳເນີນງານໃນພາລະບົດບາດສະເພາະ 30 ໜ່ວຍງານ ແລະ ພາລະກິດລະດັບຊາດ 8 ໜ່ວຍງານ(ເບິ່ງເອກະສານຊ້ອນທ້າຍໃນບົດນີ້).

ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດແມ່ນອາດເປັນຕົວບຸກຄົນ (ນັກຂຽນລາຍງານພິສະເພາະ, ຜູ້ແທນພິເສດຂອງເລຂາທິການໃຫຍ່, ຜູ້ແທນຂອງເລຂາທິການໃຫຍ່ ຫຼື ຊ່ຽວຊານອິດສະຫລະ) ຫຼື ໃນນາມເປັນກຸ່ມ (ໜ່ວຍງານໃດໜຶ່ງ).[57] ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ແມ່ຈະມີອາຍຸການສູງສຸດຫົກປີໂດຍບໍ່ມີເງິນເດືອນ ຫຼື ຄ່າຕອບ ແທນໃດໆຈາກໜ້າທີ່. ຄວາມມີເອກະລາດຂອງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ນັ້ນແມ່ນມີຄວາມສຳຄັນຫລາຍຕໍ່ກັບຄວາມ ເປັນກາງໃນວຽກງານທີ່ດຳເນີນຢູ່.

ສຳນັກງານຂ້າຫລວງໃຫຍ່ (OHCHR) ໃຫ້ການຊ່ວຍເຫຼືອແກ່ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນດ້ານບຸກຄະລາກອນ, ການເດີນທາງແລະການຄົ້ນຄ້ວເພື່ອເປັນການສະນັບສະໜູນໃນວຽກງານຂອງເຂົາເຈົ້າ.

ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ແມ່ນ:

- ຮັບ ແລະ ວິເຄາະຂໍ້ມູນກ່ຽວກັບສະພາບສິດທິມະນຸດທີ່ໄດ້ຮັບມາຈາກຫລາຍພາກສ່ວນ;
- ສ້າງເຄືອຂ່າຍ ແລະ ແລກປ່ຽນຂໍ້ມູນກັບຄູ່ຮ່ວມງານໃນ ແລະ ນອກກົງຈັກຂອງ ສປຊ, ແລະ ທັງອົງການສາກົນພາກລັດ ແລະ ພາກປະຊາຊົນ;
- ດຳເນີນການຄົ້ນຫາຄວາມກະຈ່າງແຈ້ງທີ່ຮີບດ່ວກັບພາກລັດທີ່ກ່ຽວກັບການລະເມີດສິດທີ່ເກີດຂື້ນ ແລະ ຖ້າມີຄວາມຈຳເປັນແມ່ນໃຫ້ຮຽກຮ້ອງກັບລັດຖະບານໃຫ້ອອກມາດຕະການໃດໜຶ່ງເພື່ອປົກປ້ອງ ແລະ ຮັບປະກັນ ຫຼື ຢຸ້ງຢາບັນຫາສິດ ທິມະນຸດທີ່ເກີດຂື້ນ;

56 ໃຫ້ເບິ່ງມະຕິ 5\1 ວັນທີ 60, ເອກະສານຊ້ອນທ້າຍ, ແລະ "ອາຍຸການຂອງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດ" (A/HRC/PRST/8/2).

57 ຕາມປົກກະຕິແລ້ວໜ່ວຍງານຕ່າງໆແມ່ນຈະມີບຸກຄະລາກອນຢູ່ຫ້າທ່ານ, ແຕ່ລະໜ່ວຍງານແມ່ນມາຈາກກົງຈັກຂອງ ສປຊ ໃນແຕ່ລະພາກພື້ນ: ອັບຟຣິກາ, ອາຊີ, ລາຕິນອາເມລິກາແລະຄາລິບບຽນ, ຢູໂຣບຕາເວັນອອກ, ຢູ່ໂຣບຕາເວັນຕົກ ແລະ ອື່ນໆ.

- ຍົກສູງຄວາມຕື່ນຕົວກ່ຽວກັບປະກົດການ ແລະ ສະພາບສິດທິມະນຸດທີ່ເກີດຂື້ນ, ໄພຂົ່ມຂູ່ ແລະ ຄວາມຮຸນແຮງກ່ຽວກັບ ສິດທິມະນຸດ.
- ເມື່ອມີສະພາບການທີ່ຮີບດ່ວນ, ມັນຈຳເປັນຕ້ອງໃຫ້ສື່ມວນຊົນອອກຂ່າວ ແລະ ອອກຖະແຫລງການໃຫ້ສາທາລະນະໄດ້ ຮັບຊາບ;
- ລົງຢ້ຽມຢາມພື້ນທີ່ທີ່ເກີດເຫດເພື່ອປະເມີນເບິ່ງສະພາບການພາຍໃນກອບຂອງຄວາມຮັບພິຊອບ, ແລະ ໃຫ້ຄຳແນະນຳ ແກ່ລັດຖະບານເພື່ອຫາວິທີແກ້ໄຂ;
- ລາຍງານ ແລະ ໃຫ້ຄຳແນະນຳແກ່ສະພາສິດທິມະນຸດ ແລະ ແກ່ສະມັດຊາໃຫຍ່ຕາມພາລະບົດຂອງເຂົາເຈົ້າ (ໃນບາງກໍລະນີແມ່ນລາຍງານແກ່ສະພາຄວາມໝັ້ນຄົງ) ກ່ຽວກັບ: ກິດຈະກຳປະຈຳພາຍໃຕ້ຄວາມຮັບພິຊອບ; ການລົງພື້ນທີ່, ແລະ ທ່າອ່ຽງ ແລະ ປະກົດການສະເພາະໃດໜຶ່ງ;
- ສືບຕໍ່ສຶກສາກ່ຽວກັບການພັດທະນາຮູບແບບຄວາມຮັບພິຊອບ ແລະ ມາດຕະຖານສະເພາະທີ່ຢູ່ໃນກອບຄວາມຮັບພິ ຊອບ, ແລະ ອາດຈະໃຫ້ຄວາມຮູ້ດ້ານກົດໝາຍກ່ຽວກັບບັນຫາສະເພາະໃດໜຶ່ງ.

**ທົບທວນ, ຕີລາຄາ ແລະ ປັບປຸງລະບົບຂະບວນການພິເສດ**

ຕາມມະຕິ 60\251 ຂອງສະມັດຊາໃຫຍ່ແມ່ນໄດ້ຮຽກຮ້ອງໃຫ້ສະພາສິດທິມະນຸດຕ້ອງໄດ້ດຳເນີນການທົບທວນ, ປັບ ປຸງ ແລະ ຕີລາຕາລະບົບຂະບວນການພິເສດຖ້າຫາກເຫັນວ່າມີຄວາມຈຳເປັນ. ໃນມະຕິ 5\1 ກ່ຽວກັບການສ້າງສະ ຖາບັນຂອງສະພາສິດທິມະນຸດແຫ່ງ ສປຊ, ສະພາໄດ້ດຳເນີນການຄັດເລືອກ ແລະ ແຕ່ງຕັ້ງຂະບວນການ ໃຫ້ແກ່ຜູ້ທີ່ໄດ້ ຮັບມອບໝາຍໜ້າທີ່ໃນຂະບວນການພິເສດ, ພ້ອມທັງສ້າງວິທີການເພື່ອດຳເນີນການທົບທວນ, ຕີລາຄາ ແລະ ປັບປຸງ ພາລະໜ້າທີ່ຂອງຂະບວນການພິເສດ. ນອກນັ້ນສະພາກໍ່ຍັງໃຫ້ການຮັບຮອງມະຕິ 5/2 ທີ່ວາງລະບຽບການໃຫ້ແກ່ຜູ້ທີ່ ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດຂອງສະພາສິດທິມະນຸດ.

ພາລະໜ້າທີ່ໃນສອງປະເທດ (ເບລາຣຸດ ແລະ ຄິວບາ) ແມ່ນສືບຕໍ່ພາຍໄຕ້ຂໍ້ກຳນົດໃນມະຕິ 5\1. ໃນກອງ ປະຊຸມສາມັນຄັ້ງທີ 9ຂອງຂະບວນການພິເສດ, ສະພາສິດທິມະນຸດແມ່ນໄດ້ສ້າງພາລະໜ້າທີ່ສະເພາະໄວ້ຢູ່ສອງຢ່າງ (ນັກຊ່ຽນລາຍງານພິເສດກ່ຽວກັບຮູບແບບການຕົກເປັນທາດເຊີ່ງລວມມີທັງສາຍເຫດ ແລະ ຜົນກະທົບ, ແລະ ຊ່ຽວຊານເອກະລາດກ່ຽວກັບພັນທະທາງສິດທິມະນຸດໃນດ້ານສິດໃນການເຂົ້າຫານ້ຳດື່ມທີ່ສະອາດ ແລະ ມີສຸກຂະອາ ນາໄມ) ນອກນີ້ສະພາຍັງໄດ້ເພີ່ມໜ້າທີ່ລະດັບປະເທດອີກຢູ່ສອງປະເທດ (ສາທານະລັດຄອງໂກ ແລະ ໄລບີເລຍ)

ຂໍ້ມູນເພີ່ມເຕີມກ່ຽວກັບສະພາສິດທິມະນຸດແມ່ນສາມາດສຶກສາໄດ້ທີ່ບົດທີ V (ສະພາສິດທິມະນຸດ) ໃນປື້ມຄູ່ມືນີ້

**ການຄັດເລືອກ ແລະ ການແຕ່ງຕັ້ງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່**

ເງື່ອນໄຂທົ່ວໄປໃນການຄັດເລືອກ

ອີງຕາມມະຕິ 5/1, ເງື່ອນໄຂທົ່ວໄປຂ້າງລຸ່ມນີ້ແມ່ນສຳລັບການສະເໜີລາຍຊື່, ການຄັດເລືອກ ແລະ ການແຕ່ງຕັ້ງ:

- ຄວາມຮູ້;
- ປະສົບການກ່ຽວຂ້ອງ;
- ເປັນເອກະລາດ;
- ທ່ຽງທຳ;
- ມີຄວາມສື່ສັດເປັນສ່ວນຕົວ
- ເປັນກາງ

ໃນການແຕ່ງຕັ້ງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ນັ້ນແມ່ນໄດ້ຄຳນຶງເຖິງຄວາມເທົ່າທຽມທາງເພດ ແລະ ຄວາມສະເໝີພາບທາງພາກພື້ນພ້ອມທັງເບິ່ງຄວາມເທົ່າທຽມຂອງຜູ້ທີ່ເປັນຕົວແທນຈາກພາກສ່ວນລະບົບກົດໝາຍຕ່າງໆ.

**ໃຜມີສິດໄດ້ຮັບການຄັດເລືອກ?**

ບຸກຄົນທີ່ມີຄຸນນະວຸດສູງທີ່ມີຄວາມຮູ້ຄວາມສາມາດ, ມີປະສົບການທີ່ກ່ຽວຂ້ອງ, ມີປະສົບການທາງວິຊາຊີບທີ່ແໜ້ນໃນຂົງ ເຂດສິດທິມະນຸດ ແລະ ມີຄວາມຍືດຍຸ່ນ/ມີເວລາໃຫ້ວຽກງານແມ່ນຈະໄດ້ຮັບການພິຈາລະນາແຕ່ງຕັ້ງເປັນຜູ້ທີ່ໄດ້ຮັບມອບ ໝາຍໜ້າທີ່.[58]

ບຸກຄົນໃດທີ່ມີຕຳແໜ່ງໜ້າທີ່ກັບລັດຖະບານ ຫຼື ໃນອົງການ ແລະ ໜ່ວຍງານໃດໜຶ່ງ (NGOs), ສະຖາບັນ ສິດທິມະນຸດແຫ່ງຊາດ ແລະ ອົງການສິດທິມະນຸດຕ່າງໆ ທີ່ມັນອາດສົ່ງຜົນໃຫ້ເກີດຄວາມຂັດແຍ່ງດ້ານຜົນປະໂຫຍດຂອງ ວຽກງານທີ່ເຮັດຢູ່ແມ່ນຈະບໍ່ໄດ້ຮັບການພິຈາລະນາ.

ຫຼັກການຫ້າມບໍ່ໃຫ້ເຮັດໜ້າທີ່ສິດທິມະນຸດທີ່ພ້ອມກັນຫລາຍຢ່າງແມ່ນສາມາດຕັດສິນບັນຫາການແຕ່ງຕັ້ງ ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໄດ້. ອັນນີ້ໝາຍຄວາມວ່າບຸກຄົນໃດໜຶ່ງບໍ່ຄວນຈະມີໜ້າທີ່ຕຳແໜ່ງຫລາຍຢ່າງໃນເວລາດຽວກັນທີ່ກ່ຽວກັບກົນໄກວຽກງານສິດທິມະນຸດຂອງ ສປຊ.

**ໃຜສາມາດສະເໜີລາຍຊື່ໄດ້?**

ຜູ້ທີ່ສາມາດສະເໜີລາຍຊື່ເຂົ້າຄັດເລືອກໃນຂະບວນການພິເສດໄດ້ຄື:

- ລັດຖະບານ;
- ໜ່ວຍງານຕ່າງໆໃນພາກພື້ນທີ່ເຮັດໜ້າທີ່ໃນກົງຈັກສິດທິມະນຸດຂອງ ສປຊ;
- ອົງການຈັດຕັ້ງສາກົນ ຫຼື ຫ້ອງການຕ່າງໆ (ເຊັ່ນ: OHCHR);
- NGOs;
- ອົງກອນສິດທິມະນຸດຕ່າງໆ; ແລະ
- ສ່ວນບຸກຄົນ

58 ເບິ່ງມະຕິຕົກລົງຂອງສະພາສິດທິມະນຸດ 6/102.

**ບັນຊີລາຍຊື່ຂອງຜູສະມັກທົ່ວໄປ ແລະ ບັນຊີລາຍການຂອງຕຳແໜ່ງຫວ່າງ**
ອີງຕາມລາຍຊື່ທີໄດ້ຮັບ, OHCHR ແມ່ນຈະໄດ້ກະກຽມ, ຮັກສາ ແລະ ອັບເດດບັນຊີລາຍຊື່ຜູ້ທີ່ມີສິດໄດ້ຮັບການຄັດ ເລືອກເປັນໄລຍະໆ. ຂໍ້ມູນຂອງຜູ້ສະມັກແມ່ນມີທັງຂໍ້ມູນສ່ວນຕົວ, ຂົງເຂດຄວາມຮູ້ ແລະ ປະສົບການທາງວິຊາຊີບ. ສຳນັກງານ OHCHR ຍັງໄດ້ໂພສກ່ຽວກັບບັນດາຕຳແໜ່ງຫວ່າງຕ່າງໆໃນເວບອີກດ້ວຍ.

ບັນຊີລາຍຊື່ຜູ້ທີ່ມີສິດໄດ້ຮັບການຄັດເລືອກແມ່ນມີໃນເວບສະເພາະຂອງສະພາສິດທິມະນຸດ

## ໜ່ວຍງານທີ່ປຶກສາ

ໜ່ວຍງານທີ່ປຶກສາທີ່ມີຕົວແທນສະມາຊິກໜຶ່ງທ່ານມາຈາກທັງຫ້າພາກພື້ນທີ່ມີຄວາມຮູ້ຄວາມສາມາດໃນການປະຕິບັດໜ້າທີ່ແມ່ນຈະດຳເນີນການກວດກາບັນຊີລາຍຊື່ທົ່ວໄປຂອງOHCHR ແລະ ພ້ອມທັງສະເໜີລາຍຊື່ຜູ້ສະມັກຂອງຕົນເອງເພື່ອ ເຂົ້າຄັດເລືອກເປັນປະທານຂອງສະພາສິດທິມະນຸດ. ຄຳແນະນຳຂອງໜ່ວຍງານຈະຕ້ອງເປີດເຜີຍ ແລະ ເຊື່ອຖືໄດ້.

**ເມື່ອພິຈາລະນາເຖິງຄວາມຮູ້ທີ່ຈຳເປັນ, ປະສົບການ, ທັກສະ ແລະ ເງື່ອນໄຂອື່ນໆສຳລັບແຕ່ລະຕຳແໜ່ງ ຫວ່າງ, ໜ່ວຍງານທີ່ປຶກສາແມ່ນຕ້ອງຄຳນຶງເຖິງຄວາມເໝາະສົມ, ຄວາມຄິດເຫັນຂອງພາກສ່ວນທີ່ກ່ຽວຂ້ອງໂດຍ ສະ ເພາະແມ່ນຂອງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນປະຈຸບັນ ຫຼື ພົ້ນອອກຈາກຕຳແໜ່ງໄປແລ້ວ.** ໜ່ວຍງານທີ່ປຶກສາປະ ກອບດ້ວຍ OHCHR.

## ການແຕ່ງຕັ້ງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່

ອີງຕາມຄຳແນະນຳຂອງໜ່ວຍງານທີ່ປຶກສາ ແລະ ອີງຕາມການປຶກສາຫາລືຢ່າງກວ້າງຂວາງ, ທ່ານປະທານສະພາສິດ ທິມະນຸດຈະສ້າງລາຍຊື່ຂຶ້ນມາເປັນຂອງຕົນເອງ ທີ່ໄດ້ຜ່ານການກວດກາເບິ່ງຄວາມເໝາະສົມກັບຕຳແໜ່ງຫວ່າງທີ່ມີຢູ່. ບັນຊີລາຍຊື່ທີ່ວ່ານີ້ແມ່ນຈະສົ່ງໃຫ້ແກ່ສະມາຊິດຂອງສະພາສິດທິມະນຸດ ແລະ ລັດຜູ້ສັງເກດການຢ່າງໜ້ອຍ ກ່ອນກອງປະ ຊຸມຈະເລີ່ມໃນອີດສອງອາທິດ ແລະ ຖ້າຫາກຈຳເປັນ ທ່ານປະທານກໍ່ຈະດຳເນີນການປຶກສາຫາລືກັບ ພາກສ່ວນຕ່າງໆເພື່ອ ເປັນການຮັບປະກັນວ່າລາຍຊື່ທີ່ທາງສະພາສະເໜີມານັ້ນແມ່ນມີຄວາມເໝາະສົມ. ຂະບວນ ການແຕ່ງຕັ້ງນັ້ນແມ່ນຈະສົມ ບູນກໍ່ຕໍ່ເມື່ອລາຍຊື່ຂອງທ່ານປະທານໄດ້ຮັບການອານຸມັດຈາກສະພາສິດທິມະນຸດກ່ອນ.

ທັງບັນຊີລາຍຊື່ຂອງໜ່ວຍງານທີ່ປຶກສາ ແລະ ຂອງທ່ານປະທານແມ່ນສາມາດເຂົ້າເບິ່ງໄດ້ເວບສະເພາະຂອງສະ ພາສິດທິມະນຸດໃນພາກສ່ວນຂະບວນການພິເສດ

**ກອງປະຊຸມປະຈຳປີ ແລະ ຄະນະກຳມາທິການປະສານງານຂອງຂະບວນການພິເສດ**

ຕັ້ງແຕ່ປີ 1994 ກອງປະຊຸມປະຈຳປີຂອງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດທີ່ໄດ້ຖືກຈັດໃນນະຄອນເຈນີວານັ້ນແມ່ນຖືວ່າເປັນກອງປະຊຸມທີ່ໄປຕາມກອງປະຊຸມໂລກກ່ຽວກັບສິດທິມະນຸດ. ຖະແຫລງການ ແລະ ແຜນງານແຫ່ງ ນະຄອນວຽນນາທີ່ໄດ້ຮັບການຮັບຮອງໃນທີ່ກອງປະຊຸມໂລກນັ້ນແມ່ນໄດ້ເນັ້ນຄວາມສຳຄັນຂອງການຮັກສາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຂອງຂະບວນການພິເສດ ແລະ ເຈາະຈົງວ່າຂະບວນການພິເສດຄວນຈະໄດ້ຮັບບົດບາດໃນການສ້າງຄວາມສາມະຄີ ແລະ ສາມາດບັນຍາຍກ່ຽວກັບໜ້າວຽກຂອງຕົນໃນທີ່ປະຊຸມແຕ່ລະໄລຍະໄດ້.

ກອງປະຊຸມປະຈຳປີແມ່ນຍັງເປັນໂອກາດໃຫ້ແກ່ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໄດ້ພົບປະ ແລະ ແລກປ່ຽນແນວຄວາມຄິດກັບບັນດາລັດພາຄີຕ່າງໆ, ຄະນະຂອງສະພາສິດທິມະນຸດ, ອົງກອນສິດທິມະນຸດຕ່າງໆ, NGOs ແລະ ໜ່ວຍງານພາກ ປະຊາສັງຄົມ, ພ້ອມທັງໄດ້ພົບກັບບັນດາຜູ້ແທນຈາກກອງເລຂາຂອງ ສປຊ, ສຳນັກງານ ແລະ ໂຄງການກ່ຽວກັບບັນຫາຕ່າງໆທີ່ເຫັນໄດ້ມາຈາກການລົງຢ້ຽມຢາມພື້ນທີ່ ແລະ ຕາມຄຳແນະນຳຕ່າງໆ.

ສຳລັບຂໍ້ມູນເພີ່ມກ່ຽວກັບກອງປະຊຸມປະຈຳປີຂອງຂະບວນການພິເສດແມ່ນສາມາດເບິ່ງໄດ້ໃນເວບຂອງ OHCHR

ຄະນະກຳມາທິການປະສານງານຂອງຂະບວນການພິເສດແມ່ນໄດ້ຮັບການສ້າງຕັ້ງຂື້ນຢູ່ທີ່ກອງປະຊຸມປະຈຳປີຄັ້ງທີ່ສິບສອງຂອງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນປີ 2007. ຄະນະກຳມາທິການປະສານງານຈະອຳນວຍຄວາມສະດວກການປະສານງານລະຫວ່າງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ ແລະ OHCHR , ລະບົບສິດທິມະນຸດຂອງ ສປຊ ແລະ ພາກປະຊາສັງຄົມ ຕ່າງໆ.

ຄະນະກຳມາທິການປະສານງານປະກອບດ້ວຍຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ 6 ທ່ານທີ່ຖືກຄັດເລືອກມາໃຫ້ດຳ ລົງຕຳແໜ່ງໜຶ່ງປີ ແລະ ເປັນປະທານຄະນະແມ່ນຜູ້ໃດໜຶ່ງໃນທີມງານຂອງຕົນ.[59] ການຄັດເລືອກສະມາຊິກແມ່ນຈະ ໄດ້ດຳເນີນຢູ່ທີ່ກອງປະຊຸມປະຈຳປີ ແລະ ຈະຄຳນຶງເຖິງຄວາມເທົ່າທຽມທາງດ້ານເພດ ແລະ ທີ່ມາຈາກພາກພື້ນຕ່າງໆ, ຄຳນຶງເຖິງຄວາມເທົ່າທຽມຂອງຜູ້ແທນແຕ່ລະຂົງເຂດ ແລະ ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ພິເສດລະດັບປະເທດທີ່ກ່ຽວຂ້ອງ ກັບຄະນະກຳມາທິການ.

ຄະນະກຳມາທິການປະສານງານໄດ້ຮັບການສະນັບສະໜູນຈາກພະແນກຂະບວນການພິເສດຂອງ OHCHR.

ຂໍ້ມູນປະຈຸບັນເພີ່ມເຕີມກ່ຍວກັບຄະນະກຳມາທິການປະສານງານຂອງຂະບວນການພິເສດແມ່ນສາມາດເບິ່ງໄດ້ໃນເວບ ຂອງ OHCHR

59 ທ່ານປະທານຄົນກ່ອນຍັງປະຈຳຢູ່ໃນຄະນະກຳມາທິການອີກ ໜຶ່ງປີ.

**ຂະບວນການພິເສດເຮັດວຽກແນວໃດ?**

ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ແມ່ນແມ່ນສາມາດນຳໃຊ້ກົນໄກເຄື່ອງມືຫລາຍຢ່າງທີ່ມີໄວ້ແລ້ວເພື່ອຄວາມສຳເລັດຂອງ ວຽກງານ, ເຄື່ອງມືເຫຼົ່ານັ້ນມີ:

- ດຳເນີນການສື່ສານ;
- ລົງພື້ນທີ່;
- ພິມບົດລາຍງານອອກ;
- ກະກຽມສຶກສາບັນຫາສະເພາະ;
- ພິມໜັງສືອອກທາງສື່ຕ່າງໆ

ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ແມ່ນຍັງໄດ້ມີລະບຽບການແນະນຳກ່ຽວກັບການປະຕິບັດວຽກງານຈາກຄູ່ມືຂອງຂະບວນ ການພິເສດ ແລະ ລະບຽບການຂອງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດ.

**A. ລະບຽບການ ແລະ ຄູ່ມືສຳລັບຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດ**

**ລະບຽບການສຳລັບຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດ**

ລະບຽບການສຳລັບຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດແມ່ນໄດ້ຮັບການຮັບຮອງຈາກສະພາສິດທິມະນຸດໃນປີ 2007. ວັດຖຸປະສົງຂອງສະພາແມ່ນຕ້ອງການໃຫ້ລະບົບຂອງຂະບວນການພິເສດນັ້ນໄດ້ມີປະສິດທິພາບ ຂຶ້ນກ່ວາເກົ່າໂດຍໄດ້ລະບຸມາດຕະຖານຂອງການປະພຶດດ້ານຈັນຍາທຳແລະການດຳເນີນງານຕາມວິຊາຊີບທີ່ຜູ້ ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດນັ້ນຈະຕ້ອງໄດ້ຮຽນຮູ້ ແລະ ປະຕິບັດໃນເວລາທີ່ເຂົ້າຮັບຕຳແໜ່ງ.

**ຄູ່ມືສຳລັບຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດ**

ຄູ່ມືດັ່ງກ່າວແມ່ນໃດ້ຮັບການຮັບຮອງຈາກບັນດາຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດເອງ, ວັດຖຸປະສົງ ກໍ່ແມ່ນ ເພື່ອໃຊ້ເປັນແບບແຜນໃນການປະຕິບັດໜ້າທີ່. ນອກນັ້ນຄູ່ມືຍັງມີຈຸດປະສົງໃຫ້ໜ່ວຍງານອື່ນໆໄດ້ມີຄວາມເຂົ້າ ໃຈໃນຂະບວນການພິເສດ. ໃນຄູ່ມືແມ່ນພະຍາຍາມທີ່ຈະສ່ອງແສງໃຫ້ເຫັນເຖິງວິທີການປະຕິບັດທີ່ດີໆ ແລະ ເພື່ອຊ່ວຍ ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດໄດ້ນຳໃຊ້ເຂົ້າໃນວຽກງານສົ່ງເສີມ ແລະ ປົກປ້ອງສິດທິມະ ນຸດຂອງຕົນ.

ທີ່ຈິງແລ້ວ ຄູ່ມືນີ້ແມ່ນໄດ້ຮັບການຮັບຮອງມາຕັ້ງແຕ່ຕົ້ນຈາກກອງປະຊຸມປະຈຳປີຄັ້ງທີ່ຫົກຂອງຜູ້ທີ່ໄດ້ ຮັບມອບ ໝາຍໜ້າທີ່ໃນຂະບວນການພິເສດໃນປີ 1999. ຕັ້ງແຕ່ນັ້ນມາ ຄູ່ມືກໍ່ໄດ້ຮັບການປັບປຸງມາເລື້ອຍໆເພື່ອ ສະທ້ອນໃຫ້ ເຫັນເຖິງການປ່ຽນແປງໂຄງສ້າງຂອງກົນໄກສິດທິມະນຸດຂອງ ສປຊ, ເຫັນເຖິງການພັດທະນາໃໝ່ໆທີ່ ກ່ຽວຂ້ອງກັບພາລະໜ້າທີ່ ແລະ ການປ່ຽນແປງແບບວິທີເຮັດວຽກຂອງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນ ການພິເສດ.

ສຳລັບຄູ່ມືລ້າສຸດເນື້ອໃນແມ່ນໄດ້ມາຈາກພາກລັດ, NGOs, ແລະ ພາກສ່ວນຕ່າງໆ. ຄູ່ມືແມ່ນຈະມີໄລຍະການທົບທວນ ແລະ ປະຕິບັດຕາມຄວາມສອດຄ່ອງກັບຂໍ້ກຳນົດຂອງລະບຽບການ.

VI

ຂໍ້ມູນເພີ່ມເຕີມກ່ຽວກັບຄູ່ມືຂອງຂະບວນການພິເສດແມ່ນສາມາດເບິ່ງໄດ້ທີ່ເວບສະເພາະຂອງຂະບວນດານພິເສດ.

**B. ການສື່ສານ**

ໜຶ່ງໃນກິດຈະກຳຂອງຂະບວນການພິເສດແມ່ນການສື່ສານກັບສ່ວນບຸກຄົນໂດຍອີງຕາມຂໍ້ມູນທີ່ມີ ແລະ ໄດ້ຮັບຈາກພາກສ່ວນຕ່າງໆທີ່ໜ້າເຊື່ອຖື (ໂດຍສະເພາະຈາກພາກສ່ວນປະຊາສັງຄົມ).

ການແຊກເຂົ້າໃນການສື່ສານນັ້ນແມ່ນກ່ຽວຂ້ອງກັບການສົ່ງໜັງສືໄປຫາທາງລັດຖະບານ (ໜັງສືຢັ້ງຢືນສະ ພາບການ) ໂດຍຮຽກຮ້ອງຂໍຂໍ້ມູນເພີ່ມເຕີມທີ່ກ່ຽວຂ້ອງ ແລະ ໃຫ້ຕອບໂຕ້ກ່ຽວກັບສະພາບການທີ່ລາຍງານມາ ແລະ ຖ້າຫາກຈຳເປັນກໍ່ແມ່ນຂໍໃຫ້ທາງລັດຖະບານອອກມາດຕະການເພື່ອປົກປ້ອງ ຫຼື ກວດສອບຄວາມເປັນຈິງ (ໜັງສືດ່ວນ). ການປະຕິບັດການທີ່ວ່ານີ້ແມ່ນເປັນທີ່ຮູ້ກັນວ່າເປັນ “**ການສື່ສານ**”

| |
|---|
| **ການສື່ສານໃນປີ 2007**<br>ໄດ້ມີການສື່ສານກັນແລ້ວຈຳນວນ<br>1003 ຄັ້ງໃນປີ 2007<br>49ເປີເຊັນຂອງການສື່ສານນັ້ນແມ່ນການສື່ສານຮ່ວມ<br>ມີ 2294 ຄະດີສ່ວນບຸກຄົນທີ່ໄດ້ຮັບການຊ່ວຍເຫລືອ; 13 ເປີເຊັນຂອງຄະດີນັ້ນແມ່ນກ່ຽວຂ້ອງກັບຜູ້ຍິງ<br>ທາງລັດຖະບານໃຫ້ການໂຕ້ກັບ 52 ເປີເຊັນໃນຈຳນວນ 128 ປະເທດທີ່ໄດ້ສື່ສານກັນ |

**ໜັງສືດ່ວນ**ແມ່ນຈະຖືກສົ່ງທັນທີພາຍຫລັງທີ່ເຫັນວ່າການລະເມີດແມ່ນພວມຢູ່ໃນການສູນເສຍຊີວິດ, ສະພາບການຖືກຂົ່ມຂູ່, ຫຼື ທັງໃນສະພາບທີ່ກຳລັງຈະເກີດ ແລະ ພວມດຳເນີນຢູ່ເຊິ່ງມັນກ່ຽວຂ້ອງກັບການລະເມີດທີ່ຮ້າຍແຮງ. ໜັງສືລາຍງານສະພາບການແມ່ນຈະໄດ້ຖືກສົ່ງໃນເວລາທີ່ຂະບວນການສື່ສານຮີບດ່ວນບໍ່ໄດ້ຖືກນຳໃຊ້, ເຫດຜົນກໍ່ເພື່ອເປັນການສື່ສານຂໍ້ມູນ ແລະ ຮຽກຮ້ອງໃຫ້ມີການອະທິບາຍຄວາມກະຈ່າງແຈ້ງກ່ຽວກັບເລື່ອງທີ່ເກີດຂື້ນ.

**ຜູ້**ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດແມ່ນອາດດຳເນີນການສື່ສານໃນຫລາຍເລື່ອງໃນເວລາ ດຽວກັນ. ການຕັດສິນໃຈທີ່ຈະດຳເນີນການສື່ສານກັບລັດທີ່ກ່ຽວຂ້ອງຫຼືບໍ່ນັ້ນແມ່ນເປັນເລື່ອງການຕັດສິນຂອງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດ ແລະ ອີງຕາມເງື່ອນໄຂຂອງສະພາບການ ແລະ ເງື່ອນໄຂທີ່ກຳນົດໃນລະບຽບ ການ. ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ແມ່ນຍັງຕ້ອງໄດ້ເບິ່ງເວລາ ແລະ ຄວາມເປັນມາຂອງຄະ ດີທີ່ກ່ຽວຂ້ອງກັບຂໍ້ມູນທີ່ໄດ້ຈາກພາກລັດນັ້ນວ່າມັນມີສ່ວນກ່ຽວຂ້ອງແນວໃດກັບໜ້າທີ່ຂອງຕົນ.

ໃນກິດຈະກຳການເກັບກຳຂໍ້ມູນຂ່າວສານ, ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ແມ່ນຕ້ອງ:

- ປະຕິບັດຕາມຫຼັກການຂອງການໃຊ້ຄວາມຮອບຄອບ, ຄວາມໂປ່ງໃສ, ຄວາມເປັນກາງ ແລະ ການຂີດຂຽນ;
- ຮັກສາຄວາມລັບຂອງແຫລ່ງຂໍ້ມູນເພາະມັນອາດຈະນຳເອົາຄວາມເສຍຫາຍມາສູ່ຜູ້ທີ່ໃຫ້ຂໍ້ມູນໄດ້;
- ອີງຕາມວັດຖຸປະສົງ ແລະ ຄວາມເປັນຈິງທີ່ໜ້າເຊື່ອຖືຂອງຫລັກຖານທີ່ຈະນຳໃຊ້ເຂົ້າໃນການລາຍງານ ແລະ ປິດສະຫລຸບແບບທົ່ວໄປ; ແລະ

- ໃຫ້ໂອກາດແກ່ຜູ້ແທນຂອງປະເທດທີ່ກ່ຽວຂ້ອງໄດ້ໃຫ້ຄຳຄິດເຫັນແກ່ບົດສະຫລຸບສະຖານະການທີ່ໄດ້ ແລະ ໄດ້ອະທິບາຍເຫດຜົນຕໍ່ກັບເລື່ອງລາວທີ່ເກີດຂຶ້ນ. ບົດໂຕ້ຕອບທີ່ເປັນລາຍລັກອັກສອນຂອງລັດທີ່ກ່ຽວຂ້ອງກໍ່ຕ້ອງໄດ້ຕິດຄັດເປັນເອກະສານຊ້ອນທ້າຍຂອງບົດລາຍງານໄປນຳ.

**C. ການລົງພື້ນທີ່**

***ການລົງຢ້ຽມຢາມພື້ນທີ່*** (ຫຼື ພາລະກິດຊອກຫາຄວາມເປັນຈິງ) ແມ່ນເປັນເຄື່ອງມືທີ່ສຳຄັນທີ່ມີໄວ້ໃຫ້ແກ່ຂະບວນການພິເສດ. ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ແມ່ນມີໜ້າທີ່ສົ່ງໜັງສືໃຫ້ ແກ່ລັດຖະບານເພື່ອຮຽກຮ້ອງຂໍອານຸຍາດລົງຢ້ຽມຢາມພື້ນທີ່, ແລະ ຖ້າຫາກໄດ້ຮັບອານຸມັດ, ການລົງພື້ນທີ່ກໍ່ຈະເລີ່ມ ຕົ້ນຂຶ້ນ. ໃນບາງປະເທດກໍແມ່ນໄດ້ອອກ "ໜັງສືເຊີນທາງການ" ຕາມຫລັກການແລ້ວໜັງສືເຊີນນັ້ນໝາຍເຖິງຄວາມພ້ອມທີ່ຈະຕ້ອນຮັບການລົງຢ້ຽມຢາມຂອງຂະບວນການພິເສດ. ການລົງພື້ນທີ່ແມ່ນຕ້ອງໄດ້ປະຕິບັດຕາມຂໍ້ກຳນົດຂອງລະບຽບການ ແລະ ຄູ່ມືສຳລັບພາລະກິດຊອກຫາຄວາມເປັນຈິງໂດຍຂະບວນການພິເສດ.[60]

ມາຮອດປີ 2008 ແມ່ນມີຫລາຍກ່ວາ 60 ປະເທດທີ່ໄດ້ອອກໜັງສືເຊີນ

ຂໍ້ມູນເພີ່ມເຕີມສຳລັບບັນຊີຂອງປະເທດທີ່ໄດ້ອອກໜັງສືເຊີນແມ່ນສາມາດເບິ່ງໄດ້ໃນເວບຂອງ OHCHR

ການລົງພື້ນທີ່ແມ່ນຕ້ອງໄດ້ອານຸຍາດໃຫ້ຂະບວນການພິເສດດຳເນີນການກວດກາສະພາບສິດທິມະນຸດທົ່ວໄປໃນປະເທດດັ່ງກ່າວ ແລະ/ຫຼື ສະພາບການໃນສະຖາບັນ, ສະພາບທາງກົດໝາຍ, ທາງນິຕິບັດຍັດ, ແລະ ທາງການບໍລິຫານໃນປະເທດທີ່ກ່ຽວຂ້ອງໂດຍຢູ່ພາຍໃຕ້ກອບຂອງໜ້າທີ່ທີ່ໄດ້ຮັບມອບໝາຍ. ໃນລະຫວ່າງການລົງຢ້ຽມຢາມແມ່ນຕ້ອງ ໄດ້ພົບປະກັບເຈົ້າໜ້າທີ່ລະດັບ ປະເທດ, ຜູ້ແທນຂອງພາກປະຊາສັງຄົມ, ຜູ້ເຄາະຮ້າຍຈາກການລະເມີດສິດ, ທີມງານຂອງ ສປຊ, ສະຖາບັນການສຶກສາ, ສຳນັກງານທາງການທູດ ແລະ ສື່ມວນຊົນຕ່າງໆ.

ຕາມຫຼັກການພື້ນຖານຂອງການຊອກຫາຄວາມເປັນຈິງ, ຂະບວນການພິເສດແມ່ນສາມາດໃຫ້ຄຳແນະນຳໃສ່ໃນບົດ ລາຍງານ ແລະ ສົ່ງໃຫ້ສະພາສິດທິມະນຸດຕາມພາຍຫລັງໄດ້. ບາງທ່ານທີ່ໄດ້ຮັບມອບໝາຍໜ້າທີ່ແມ່ນ ຍັງສາມາດຈັດກອງປະ ຊຸມຖະແຫລງຂ່າວ ແລະ ພິມເຜີຍແຜ່ສິ່ງທີ່ໄດ້ພົບພໍ້ນັ້ນພາຍຫລັງສຳເລັດການລົງພື້ນທີ່ແລ້ວ. ຄວາມສຳເລັດຂອງການລົງຢ້ຽມຢາມແມ່ນມີສ່ວນມາຈາກການຮ່ວມມືຂອງພາກລັດ ແລະ ການເຂົ້າຮ່ວມຂອງພາກປະຊາສັງຄົມໃນລະຫວ່າງ-ກ່ອນ-ຫລັງການລົງຢ້ຽມຢາມເຊິ່ງມັນເປັນການສະໜັບສະໜູນວຽກງານຂອງຂະບວນການພິເສດເປັນຢ່າງດີ.

**D. ການລາຍງານ ແລະ ການປະກອບສ່ວນໃຫ້ແກ່ສະພາສິດທິມະນຸດ**

ຂະບວນການພິເສດແມ່ນຕ້ອງໄດ້ລາຍງານປະຈຳປີທີ່ກ່ຽວຂ້ອງກັບວຽກງານທີ່ປະຕິບັດໃນຜ່ານມາໃຫ້ແກ່ສະພາສິດທິມະນຸດຕາມການຮຽກຮ້ອງຂອງສະພາ. ໃນບາງກໍລະນີ ສະພາອາດຮຽກຮ້ອງໃຫ້ຂະບວນການພິເສດຕ້ອງລາຍງານກ່ຽວກັບ ບັນຫາ ຫຼື ຫົວຂໍ້ໃດໜຶ່ງທີ່ເຫັນວ່າຈຳເປັນ. ບົດລາຍງານຕ້ອງເປີດເຜີຍ ແລະ ເປັນໄປຕາມລະບຽບການເພື່ອຕິດຕາມ ຫຼື ເຄື່ອນໄຫວໄປຕາມພາລະໜ້າທີ່ຂອງຕົນ.

---

60 ລະບຽບການສຳລັບການລົງຢ້ຽມຢາມພື້ນທີ່ແມ່ນໄດ້ຖືກຮັບຮອງຢູ່ທີ່ກອງປະຊຸມປະຈຳປີຄັ້ງທີສີ່ຂອງຂະບວນການພິເສດ (1997), (E/CN.4/1998/45) ແລະ ເປັນຫລັກການທີ່ລັດຖະບານທີ່ກ່ຽວຂ້ອງຕ້ອງໄດ້ປະຕິບັດຕາມລະບຽບການລົງພື້ນທີ່.

ບົດລາຍງານປະຈຳປີແມ່ນມີເນື້ອໃນຂໍ້ມູນຂ່າວສານກ່ຽວກັບວິທີການເຮັດວຽກ, ການວິເຄາະທາງດ້ານທິດສະດີ, ທ່າອຽງໃນການພັດທະນາທົ່ວໄປໂດຍອີງໃສ່ພາລະໜ້າທີ ແລະ ອາດໃສ່ເນື້ອໃນທີ່ກ່ຽວກັບຄຳແນະນຳທົ່ວໄປກໍ່ໄດ້. ໃນບົດລາຍງານຍັງສາມາດໃສ່ບົດສະຫລຸບຂອງການສື່ສານທີ່ມີການພົວພັນກັບລັດຖະບານ. ບົດລາຍງາຍກ່ຽວກັບການລົງ ຢ້ຽມຢາມຕາມປົກກະຕິແລ້ວຈະເອົາໄວ້ໃສ່ໃນລາຍການຂອງກຳນົດການຂອງວຽກງານປະຈຳປີ. ໃນບາງກໍລະນີກໍ່ແມ່ນມີ ການຮຽກຮ້ອງໃຫ້ລາຍງານໃຫ້ແກ່ສະມັດຊາໃຫຍ່ແຫ່ງ ສປຊ ທີ່ປະຊຸມກັນທີ່ນະຄອນນິວຢອກປີລະເທື່ອໃນລະຫວ່າງເດືອນກັນ ຍາຫາເດືອນທັນວາ.

ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ຂອງຂະບວນການສິດທິມະນຸດຍັງມີສ່ວນໃນການໃຫ້ຄວາມຮູ້ດ້ານຕ່າງໆໃຫ້ແກ່ວຽກງານຂອງສະພາສິດທິມະນຸດ.

ຂໍ້ມູນກ່ຽວກັບບົດລາຍງານຂອງຂະບວນການພິເສດແມ່ນສາມາດເບິ່ງໄດ້ທີ່ເວບຂອງ OHCHR

**ກອງປະຊຸມພິເສດກ່ຽວກັບວິກິດການດ້ານອາຫານໃນໂລກ**

ໃນເດືອນພຶດສະພາ 2008 ນັກຂຽນລາຍງານພິເສດກ່ຽວກັບສິດທິໃນດ້ານອາຫານຄືທ່ານ Olivier De Schutter, ທ່ານໄດ້ຮຽກຮ້ອງໃຫ້ສະພາສິດທິມະນຸດດຳເນີນການຈັດກອງປະຊຸມພິເສດກ່ຽວກັບວິກິດການທາງອາຫານໃນໂລກ. ເພື່ອຕອບສະໜອງຕາມການຮຽກ ຮ້ອງ, ສະພາກໍ່ໄດ້ຈັດກອງປະຊຸມພິເສດດັ່ງກ່າວຂຶ້ນກ່ຽວກັບ"ຜົນກະທົບທາງລົບຕໍ່ສິດທິທາງອາຫານໃນຍຸກຄວາມຫຍຸ້ງຍາກໃນວິກິດການທາງອາຫານໃນໂລກເຊິ່ງມັນໄດ້ສ້າງຄວາມວຸ້ນວາຍໃຫ້ລາຄາອາຫານແພງຂຶ້ນ" ໃນວັນທີ 22 ພຶດສະພາ 2008. ນັກລາຍງານພິເສດກ່ຽວກັບສິດທິທາງອາຫານແມ່ນໄດ້ເຂົ້າຮ່ວມໃນກອງປະຊຸມແລະມີຄວາມຫ້າວຫັນໃນກອງປະຊຸມພິເສດທີ່ບໍ່ເຄີຍໄດ້ຈັດມາຈັກເທື່ອກ່ຽວກັບຫົວທີ່ສະເພາະນີ້.

## E. ການສຶກສາສະເພາະເລື່ອງ

ຜູ້ທີ່ໄດຮັບມອບໝາຍໜ້າທີ່ໃນຂະບວນການພິເສດແມ່ນສາມາດກະກຽມທີ່ຈະສຶກສາບັນຫາສະເພາະເລື່ອງທີ່ເປັນເຄື່ອງມືອັນສຳຄັນເພື່ອສ້າງເປັນແນວທາງໃຫ້ແກ່ລັດຖະບານກໍ່ຄືບັນດາພາກປະຊາສັງຄົມໃຫ້ຮູ້ກ່ຽວກັບເນື້ອໃນກົດເກນ ແລະການຈັດຕັ້ງປະຕິບັດກົນໄກ ແລະ ມາດຕະຖານສິດທິມະນຸດ. ຜູ້ທີ່ໄດຮັບມອບໝາຍໜ້າທີ່ໃນຂະບວນການພິເສດກໍ່ຍັງສາ ມາດຈັດ ແລະເຂົ້າຮ່ວມກອງປະຊຸມຊ່ຽວຊານກ່ຽວກັບຫົວຂໍ້ສິດທິມະນຸດແບບສະເພາະເລື່ອງນັ້ນໄດ້.

**ກອງປະຊຸມຊ່ຽວຊານ-ການສ້າງຄວາມເຂັ້ມແຂງໃນການປ້ອງກັນເພດຍິງຈາກການທໍລະມານ**

ໃນເດືອນກັນຍາ 2007 ກອງປະຊຸມຊ່ຽວຊານກ່ຽວກັບ "ການສ້າງຄວາມເຂັ້ມແຂງໃຫ້ແກ່ການປ້ອງກັນເພດຍິງບໍ່ໃຫ້ຖືກທໍລະ ມານ" ແມ່ນຖືກຈັດໂດຍ OHCHR ໃນນາມຂອງນັກລາຍງານພິເສດກ່ຽວກັບການທໍລະມານ ແລະຮູບການລົງໂທດຫຼືປະຕິບັດທີ່ເຮັດໃຫ້ເຊື່ອມເສຍກຽດສັກສີແລະໄຮ້ມະນຸດສະທຳ. ການຈັດກອງປະຊຸມກໍເພື່ອຈະປະກອບສ່ວນການປ້ອງກັນຢ່າງເປັນລະບົບກ່ຽວກັບການຕ້ານການທໍລະມານຕໍ່ແມ່ຍິງທີ່ໜ້າເປັນຫ່ວງ ແລະ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ເພດຍິງ. ມີຜູ້ຊ່ຽວຊານ25ທ່ານທີ່ມາຈາກພາກພື້ນຕ່າງໆແລະຈາກບັນດາNGOs ແລະ ອົງການຈັດຕັ້ງສາກົນ ພາກລັດ (ລວມມີກົນໄກການຕໍ່ຕ້ານການທໍລະມານແຫ່ງ ສປຊ ແລະ ໃນພາກ ພື້ນ) ກໍ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມປຶກສາຫາລືດັ່ງກ່າວ.

## F. ຂ່າວປະຊາສຳພັນ

ຂະບວນການພິເສດສາມາດ-ໃນນາມສ່ວນຕົວ ຫຼື ຮ່ວມກັນ-ອອກຂ່າວປະຊາສຳພັນທີ່ເນັ້ນສະພາບການສະເພາະ ຫຼື ກົນໄກສາກົນທີ່ປະເທດຕ່າງໆຕ້ອງໃຫ້ການເຄົາລົບ.

ຊຸດເອກະສານກອບປີ້ຂອງຂ່າວປະຊາສຳພັນ, ຖະແຫລງການ ແລະ ຂໍ້ຄວາມອື່ນໆທີ່ອອກໂດຍຂະບວນການພິເສດແມ່ນສາມາດເບິ່ງໄດ້ທີ່ເວບຂອງ OHCHR

**ວິທີເຂົ້າຫາ ແລະ ເຮັດວຽກຮ່ວມກັບຂະບວນການພິເສດ**

VI

"ພາກປະຊາສັງຄົມທົ່ວໄປ, ແລະ NGOs ລະດັບຊາດ, ພາກພື້ນ ແລະ ສາກົນເປັນອັນສະເພາະ ແມ່ນໄດ້ມີການສະໜັບສະໜູນແກ່ຂະບວນການພິເສດແບບບໍ່ສາມາດວັດຄຸນຄ່າໄດ້. ພວກເຂົາໄດ້ປະກອບສ່ວນໃນຂໍ້ມູນຂ່າວສານ ແລະ ການວິເຄາະຕ່າງໆ, ຊ່ວຍເຜີຍແຜ່ສິ່ງທີ່ພົບເຫັນຂອງຂະບວນການພິເສດ, ຊ່ວຍໃນການຕິດຕາມກິດຈະກຳ, ຊ່ວຍ ຮ່າງແລະຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນງານພາຍໃນທີ່ກ່ຽວຂ້ອງເພື່ອການສຶກສາທາງດ້ານສິດທິມະນຸດທີ່ຈະເປັນການຊ່ວຍໃນການປັບປຸງສະພາບການຂອງບັນຫາຕ່າງໆພາຍໃຕ້ຂະບວນການພິເສດ. ການພົບປະກັບບັນດາຜູ້ແທນຂອງອົງການຕ່າງໆແມ່ນມີຄວາມສຳຄັນໃນຫລາຍດ້ານທີ່ກ່ຽວຂ້ອງກັບວຽກງານຂອງຂະບວນການພິເສດເຊິ່ງລວມມີບັນດາກິດຈະກຳຕ່າງໆທີ່ມີໃນນະຄອນເຈນນີວາ ແລະ ນິວຢອກ, ກ່ຽວກັບວຽກໃນສະໜາມ, ແລະ ດ້ານອື່ນໆ. ເພາະສະນັ້ນ ມັນຈຶ່ງເໝາະສົມສຳລັບຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດເພື່ອທີ່ຈະໃຫ້ການ ພິຈະລະນາຢ່າງມີເຫດຜົນ ແລະ ທັນເວລາຕໍ່ກັບໜັງສືເຊີນຈາກ NGOs ແລະ ສະຖາບັນການສຶກສາຕ່າງໆເພື່ອ ທີ່ເຊີນເຂົ້າຮ່ວມໃນກິດຈະກຳຕ່າງໆເຊັ່ນ: ກອງປະຊຸມ, ການປຶກສາຫາລື, ການໂຕ້ບັນຫາ, ແລະ ການຫາລືໃນລະ ດັບພາກພື້ນ. ສຳນັກງານ OHCHR ຄວນຈະໄດ້ຮັບການແຈ້ງຢູ່ຕະຫລອດກ່ຽວກັບວຽກງານຕ່າງໆຂອງຜູ້ທີ່ໄດຮັບມອບໝາຍໜ້າທີ່ໃນຂະບວນການພິເສດໃນຖານະທີ່ມີສ່ວນພົວພັນກັບພາກປະຊາສັງຄົມ"

**ຄູ່ມືການດຳເນີນງານຂອງຂະບວນການພິເສດຂອງສະພາສິດທິມະນຸດ (ວັກທີ. 133)**

ຫລາຍປີທີ່ຜ່ານມາ ຂະບວນການພິເສດໄດ້ສ້າງສາຍພົວພັນ ແລະ ຮ່ວມມືກັບບັນດາພາກປະຊາສັງຄົມຕ່າງໆ. ຂະບວນການພິເສດໄດ້ໃຫ້ການຊ່ວຍເຫລືອປົກປ້ອງແກ່ຜູ້ທີ່ເຄາະຮ້າຍ ແລະ ຜູ້ທີ່ຈະຕົກເປັນເຫຍື່ອ, ແລະ ໄດ້ໃຫ້ການຊ່ວຍເຫລືອສ້າງຄວາມເຂັ້ມແຂງແກ່ບຸກຄົນເຫລົ່ານັ້ນ. ຂະບວນການພິເສດແມ່ນມີພາລະບົດບາດຫຼາຍຢ່າງເຊິ່ງແຕ່ລະຢ່າງກໍ່ມີແບບວິທີການພັດທະນາການມີສ່ວນຮ່ວມ ແລະ ການຮ່ວມມືທີ່ແຕກຕ່າງກັນ.

ຄວາມມີປະສິດທິພາບໃນລະບົບຂອງຂະບວນການພິເສດໃນການປົກປ້ອງສິດທິມະນຸດ ແລະ ປ້ອງກັນການລະເມີດກໍ່ແມ່ນຂື້ນຢູ່ກັບການມີສ່ວນຮ່ວມທີ່ຫ້າວຫັນຂອງໜ່ວຍງານສິດທິມະນຸດອື່ນໆນຳໂດຍສະເພາະແມ່ນພາກປະຊາສັງຄົມ. ອົງການ NGOs ໃນລະດັບຊາດ, ພາກພື້ນ, ແລະ ສາກົນ, ແລະ ພາກປະຊາສັງຄົມຕ່າງໆແມ່ນເປັນຄູ່ຮ່ວມງານທີ່ສຳ ຄັນຂອງຂະບວນການພິເສດ. ນອກນີ້ພາກປະຊາສັງຄົມຍັງຢູ່ໃນແຖວໜ້າໃນການພັດທະນາມາດຕະຖານສິດທິມະນຸດເປັນ ເວລາມາດົນນານແລ້ວ, ແລະພາກປະຊາສັງຄົມຍັງໄດ້ລະດົມໃຫ້ມີການສ້າງພາລະບົດບາດໃໝ່ໃຫ້ແກ່ຂະບວນການ ພິເສດອີກດ້ວຍ.

ປະເພດຂອງພາກປະຊາສັງຄົມທີ່ສາມາດເຂົ້າຮ່ວມໃນຂະບວນການພິເສດໄດ້ຄື:

- ອົງການສິດທິມະນຸດ (NGOs, ສະມາຄົມ, ກຸ່ມຜູ້ເຄາະຮ້າຍ);
- ນັກເຄື່ອນໄຫວດ້ານສິດທິມະນຸດ;
- ອົງການທີ່ເຮັດວຽກກ່ຽວຂ້ອງ;
- ສະຫະພັນ ແລະ ເຄືອຂ່າຍ (ສິດທິແມ່ຍິງ, ສິດທິເດັກ, ສິດຂອງຄົນຊົນເຜົ່າ ແລະ ສິດທາງສິ່ງແວເລ້ອມ);
- ຄົນພິການ ແລະ ອົງການທີ່ເຮັດວຽກແກ່ຄົນພິການ;
- ໜ່ວຍງານໃນຊຸມຊົນ (ກຸ່ມຄົນພື້ນເມືອງ, ຊົນເຜົ່າຕ່າງໆ);
- ອົງການທາງສາດສະໜາ (ໂບດ, ກຸ່ມສາດສະໜາ);
- ສະຫະພັນ (ສະຫະພັນກຳມະບານກໍ່ຄືສະມາຄົມວິຊາຊີບຕ່າງໆເຊັ່ນ: ສະມາຄົມນັກຂ່າວ, ສະພາທະນາຍຄວາມ
- ສະມາຄົມຜູ້ພິພາກສາ, ສະຫະພັນນັກສຶກສາ);
- ການເຄື່ອນໄຫວທາງດ້ານສັງຄົມ (ການເຄື່ອນໄຫວເພື່ອສັນຕິພາບ, ການເຄື່ອນໄຫວຂອງນັກຮຽນ, ການເຄື່ອນໄຫວເພື່ອປະຊາທິປະໄຕ);
- ວິຊາຊີບທີ່ປະກອບສ່ວນໂດຍກົງກັບການພັດທະນາສິດທິມະນຸດ (ພະນັກງານອົງການມະນຸດສະທຳ, ທະນາຍຄວາມ, ແພດໝໍ ແລະ ພະນັກງານສາທາລະນະສຸກ);
- ຍາດພີ່ນ້ອງຂອງຜູ້ຖືກເຄາະຮ້າຍ; ແລະ
- ສະຖາບັນສາທາລະນະທີ່ມີກິດຈະກຳແນໃສ່ໃນການສົ່ງເສີມສິດທິມະນຸດ (ໂຮງຮຽນ, ມະຫາວິທະຍາໄລ, ອົງກອນການຄົ້ນຄວ້າຕ່າງໆ).

# ການເຮັດວຽກຮ່ວມກັບໂຄງ
# ການສິດທິມະນຸດແຫ່ງອົງການສະຫະປະຊາຊາດ

**ການປະສານຮ່ວມມືຂອງຂະບວນການພິເສດກັບພາກປະຊາສັງຄົງໃນປີ 2007 (ຄິດເປັນເປີເຊັນ)**




ພາກປະຊາສັງຄົມ, ສ່ວນບຸກຄົນ ຫຼື ກຸ່ມຄົນແມ່ນອາດຈະເຂົ້າຫາແລະເຮັດວຽກກັບຂະບວນການພິເສດໄດ້. ບໍ່ຄືກັນກັບອົງ ກອນສິດທິມະນຸດ ສປຊ, ຂະບວນການພິເສດແມ່ນມີສິດເຄື່ອນໄຫວໃນປະເທດທີ່ບໍ່ໄດ້ເປັນພາຄີຂອງສົນທິສັນຍາໃດໜຶ່ງໄດ້, ແລະ ກະບໍ່ຈຳເປັນ ຕ້ອງໄປຜ່ານຂະບວນການພາຍໃນຂອງລັດໃດໜຶ່ງກ່ອນທີ່ຈະສາມາດເຂົ້າເຖິງຂະບວນການພິເສດ.

**ເພາະສະນັ້ນຂະບວນການພິເສດແມ່ນເປັນບ່ອນທີ່ປະເທດໃດ ຫຼື ບັນຫາສິດທິມະນຸດໃດໜຶ່ງກໍ່ສາມາດເຂົ້າຫາໄດ້ໂດຍຢູ່ພາຍ ໃຕ້ກອບຂອງພາລະໜ້າທີ່ທີ່ມີ.**

ພາກປະຊາສັງຄົມອາດຈະປະກອບສ່ວນໃນວຽກງານຂອງຂະບວນການພິເສດດ້ວຍການ:

- ລາຍງານກ່ຽວກັບບັນຫາການລະເມີດສິດທິມະນຸດທີ່ເກີດຂຶ້ນກັບບຸກຄົນໃຫ້ແກ່ຂະບວນການພິເສດທີ່ກ່ຽວຂ້ອງ;
- ໃຫ້ການສະໜັສະໜູນແກ່ການລົງຢ້ຽມຢາມລັດໃດໜຶ່ງ, ໃຫ້ຂໍ້ມູນ, ວິເຄາະກ່ຽວກັບການລະເມີດສິດທິມະນຸດໃຫ້ແກ່ຂະ ບວນການພິເສດຕ່າງໆ;
- ປະຕິບັດມາດຕະການປ້ອງກັນດ້ວຍການໃຫ້ຂໍ້ມູນແກ່ຂະບວນການພິເສດກ່ຽວບັນຫາຂໍ້ກຳນົດກົດໝາຍໃໝ່ໆທີ່ອາດຈະນຳໄປສູ່ການລະເມີດສິດທິມະນຸດໄດ້;
- ດຳເນີນການຕິດຕາມເບິ່ງການຈັດຕັ້ງປະຕິບັດຄຳແນະນຳຂອງຂະບວນການພິເສດໃນທ້ອງຖິ່ນແລະພາຍໃນປະເທດ.

ຍິ່ງໄປກ່ວານີ້ ພາກປະຊາສັງຄົມສາມາດໃຫ້ການສະໜັບສະໜູນເຜີຍແຜ່ວຽກງານແລະບັນຫາທີ່ພົບພໍ້ຂອງຂະບວນການພິ ເສດພາຍໃຕ້ກອບຂອງພັນທະໜ້າທີ່ທີ່ມີ.

ສາຍພົວພັນທີ່ສຳຄັນທີ່ສຸດລະຫວ່າງຂະບວນການພິເສດແລະພາກປະຊາສັງຄົມແມ່ນໄດ້ສະແດງອອກໃນພາລະບົດບາດຂອງ ນັກລາຍງານພິເສດກ່ຽວກັບສະພາບການຂອງນັກເຄື່ອນໄຫວສິດທິມະນຸດ.

## ນັກລາຍງານພິເສດກ່ຽວກັບສະພາບການຂອງນັກເຄື່ອນໄຫວສິດທິມະນຸດ

**ໃຜເປັນຜູ້ລາຍງານພິເສດກ່ຽວ
ກັບສະພາບຂອງເຄື່ອນໄຫວສິດທິມະນຸດ?**

ພາລະບົດບາດຂອງນັກລາຍງານພິ
ເສດກ່ຽວກັບສະພາບການຂອງນັກເຄື່ອນໄຫວ
ສິດທິມະນຸດ (ໃນເມື່ອ
ກ່ອນແມ່ນຜູ້ແທນພິເສດຂອງເລ
ຂາທິການໃຫຍ່ກ່ຽວກັບກັບສະພາບ
ການເຄື່ອນໄຫວສິດທິມະນຸດ)
ໄດ້ຖືກສ້າງຕັ້ງຂື້ນເປັນກົນໄກ
ຂະບວນການພິເສດໃນປີ 2000
ໂດຍມະຕິຂອງຄະນະກຳມາທິ
ການສິດທິມະນຸດເລກທີ 2000\61.
ມະຕິດັ່ງກ່າວ ແມ່ນ ໄດ້
ສະແດງໃຫ້ເຫັນຄວາມສຳຄັນ ແລະ
ບົດບາດຂອງນັກເຄື່ອນໄຫວສິດທິມະນຸດໃນທົ່
ວໂລກ. ການ "ປົກປ້ອງ"
ທະນາຍສິດທິມະນຸດແມ່ນຢູ່ໃນ
ຄວາມເປັນຫວ່ງຂອງນັກລາຍ ງານພິເສດ;
ມັນມີຄວາມສຳຄັນ
ທີ່ຕ້ອງໃສ່ໃຈທັງການປົກປ້ອງນັກເຄື່ອນໄຫວ
ແລະ
ການປົກປ້ອງສິດຂອງນັກເຄື່ອນໄຫວສິດທິມະ
ນຸດໄປນຳກັນ.

**ບົດບາດຫຼັກຂອງນັກລາຍງານພິເສດ ແມ່ນ:**

- ຊອກຫາ, ຮັບ, ກວດສອບ ແລະ
ໃຫ້ຂໍ້ມູນກ່ຽວກັບສະພາບການ ແລະ ສິດທິ
ຂອງທຸກຄົນທີ່ເຄື່ອນໄຫວໃນ ນາມສ່ວນບຸກ
ຄົນ ຫຼື ໃນນາມສະ ມາຄົມ,
ໃຫ້ການສົ່ງເສີມແລະປົກປ້ອງສິດທິ
ມະນຸດແລະເສລີພາບພື້ນຖານ;
- ໃຫ້ການຮ່ວມມືແລະສົນ
ທະນາກັບບັນດາລັດຖະບານ
ແລະນັກເຄື່ອນໄຫວອື່ນໆທີ່ມີ
ຄວາມສົນໃຈໃນການສົ່ງເສີມ
ແລະຈັດຕັ້ງປະຕິບັດຖະແຫລງ
ການສິດທິມະນຸດໃຫ້ມີປະສິດທິ
ພາບກ່ຽວກັບສິດແລະຄວາມ
ຮັບພິຊອບຂອງບຸກຄົນ, ຂອງກຸ່ມ ແລະ
ພາກສ່ວນຕ່າງໆໃນສັງຄົມ
ເພື່ອສົ່ງເສີມແລະປົກປ້ອງສິດແລະ
ເສລີພາບໃນລະດັບສາກົນສາກົນ
(ໂດຍຮູ້ກັນໃນນາມ "ຖະແຫລງ
ການວ່າດ້ວຍສິດທິນັກເຄື່ອນໄຫວ
ສິດທິມະນຸດ");
- ແນະນຳຍຸດທະສາດທີ່ມີ
ປະສິດທິພາບເພື່ອເປັນການປົກ
ປ້ອງນັກເຄື່ອນໄຫວສິດທິມະນຸດແລະໃຫ້ການ
ຕິດຕາມເບິ່ງການ
ຈັດຕັ້ງປະຕິບັດຕາມຄຳແນະນຳ.

**ນັກເຄື່ອນໄຫວສິດທິມະນຸດແມ່ນ ຫຍັງ?**

ແມ່ນທຸກຄົນທີ່ເຄື່ອນໄຫວໃນນາມສ່ວນບຸກຄົ
ນຫຼືສະມາຄົມທີ່ໃຫ້ການປົກປ້ອງ,
ສົ່ງເສີມແລະຮັບຮູ້ສິດທິທາງການເມືອງແລະ
ພົນລະເຮືອນ, ທາງເສດຖະກິດ,
ສັງຄົມແລະວັດທະນາທຳ.
ນັກເຄື່ອນໄຫວສິດທິມະນຸດຈະຕ້ອງ
ຍອມຮັບເອົາຫຼັກການສິດທິມະນຸດສາ
ກົນທີ່ກຳນົດໃນຖະແຫລງການສິດທິ
ມະນຸດສາກົນ. ທຸກຄົນຕ້ອງຮັບຮູ້ ແລະ
ບໍ່ຄວນປະຕິເສດຮັບຮູ້ສິດຂອງ ນັກ
ເຄື່ອນໄຫວສິດທິມະນຸດເພາະວ່າເຂົາ
ເຫຼົ່ານັ້ນເປັນຜູ້ປົກປ້ອງສິດທິມະນຸດ.

**ພາກປະຊາສັງຄົມເປັນນັກເຄື່ອນໄຫວສິດ
ທິມະນຸດໄດ້ບໍ່?**

ພະນັກງານແລະອາສາສະມັກທີ່ເຮັດ ວຽກ
ໃຫ້ພາກປະຊາສັງຄົມແລະ NGOs ໃນລະ
ດັບຊາດແລະສາກົນ, ສະຖາບັນ ຫຼື ສະມາ
ຄົມທີ່ເຮັດວຽກ ດ້ານສິດທິມະນຸດໃນທົ່ວ
ໂລກແມ່ນອາດ
ຈະຕົກໃນກໍລະນີເປັນນັກເຄື່ອນໄຫວສິດທິມະນຸດໄ
ດ້.

**ແມ່ນຫຍັງຄືຖະແຫລງການນັກເຄື່ອນໄຫວສິດທິມ
ະນຸດ?**

ຖະແຫລງການແມ່ນໄດ້ຮັບການຮັບ
ຮອງໃນເດືອນທັນວາ 1998, ຖະ
ແຫລງການວ່າດ້ວຍນັກເຄື່ອນໄຫວ
ສິດທິມະນຸດແມ່ນໄດ້ກຳນົດ "ການປົກປ້ອງ"
ສິດທິມະນຸດເປັນສິດທິທີ່ມີໃນໂຕມັນຢູ່ແລ້ວແລະ
ມັນໄດ້ຖືກຮັບຮູ້ວ່າຜູ້ໃດໜຶ່ງທີ່ເຮັດວຽກກ່ຽວກັບສິ
ດທິມະນຸດແມ່ນຈະກາຍເປັນ
"ນັກເຄື່ອນໄຫວສິດທິມະນຸດ."
ຖະແຫລງການກໍຍັງໃຫ້

ການສະໜັບສະໜູນແລະປົກປ້ອງນັກເຄື່ອນໄຫວສິດທິມະນຸດໃນການດຳເນີນວຽກງານຂອງເຂົາເຈົ້າ. ການປົກປ້ອງແມ່ນບໍ່ໄດ້ສ້າງສິດທິທີ່ໃໝ່ໆ ແຕ່ຈະນຳໃຊ້ສິດທິຕາມຫຼັກການທີ່ມີແລ້ວເພື່ອເຮັດໃຫ້ມັນງ່າຍຂື້ນໃນການນຳໃຊ້ເຂົ້າໃນການປະຕິບັດ ແລະ ເຫດເພາະ ກັບສະພາບການຂອງນັກເຄື່ອນໄຫວສິດທິມະນຸດ.

ບົດບາດອັນສຳຄັນຂອງນັກລາຍງານພິເສດແມ່ນການລາຍງານກ່ຽວກັບສະພາບການຂອງນັກເຄື່ອນໄຫວສິດທິມະນຸດໃນທົ່ວໂລກ ແລະ ກ່ຽວກັບຄວາມເປັນໄປໄດ້ທີ່ຈະສົ່ງເສີມການປົກປ້ອງນັກເຄື່ອນໄຫວສິດທິມະນຸດໃຫ້ໄດ້ເຕັມທີ່ຕາມທີ່ກຳນົດໃນຖະແຫລງການ.

**ວິທີທີ່ຈະຕິດຕໍ່ກັບຂະບວນການພິເສດ ຫຼື ລາຍງານສະພາບການລະເມີດສິດຂອງນັກເຄື່ອນໄຫວສິດທິມະນຸດ**

ພາກປະຊາສັງຄົມສາມາດຕິດຕໍ່ຂະບວນການພິເສດຕາມທີ່ຢູ່ຕໍ່ໄປນີ້ (ຢ່າລືມວ່າຜູ້ທີ່ຈະຕິດຕໍ່ນີ້ຕ້ອງບອກຢ່າງຈະແຈ້ງວ່າຈະສົ່ງຫາໜ່ວຍງານຮັບຜິຊອບນັກເຄື່ອນໄຫວສິດທິມະນຸດ) ຄື:

ນັກລາຍງານພິເສດກ່ຽວກັບສະພາບຂອງນັກເຄື່ອນໄຫວສິດທິມະນຸດ,
ສຳນັກງານຂ້າຫລວງໃຫຍ່
Palais des Nations
8–14, avenue de la Paix
CH–1211 Geneva 10
E-mail: To submit an allegation of a violation: urgent-action@ohchr.org

To contact the andate holder for other purposes:
defenders@ohchr.org
Fax: +41 (0)22 917 90 06
Phone: +41 (0)22 917 12 34

- ເບີໂທຂ້າງເທິງແມ່ນຂອງສຳນັກງານຂອງ ສປຊ ໃນນະຄອນເຈນນີວາ ປະເທດສະວິດເຊີແລນ. ເວລາໂທແມ່ນຕ້ອງຂໍເວົ້າກັບພະນັກງານທີ່ສຳນັກງານ OHCHR ທີ່ເຮັດວຽກກ່ຽວກັບຂະບວນ ການພິເສດໂດຍສະເພາະແມ່ນພະນັກງານທີ່ສະໜັບສະໜູນວຽກງານຂອງນັກລາຍງານພິເສດກ່ຽວກັບສະພາບຂອງນັກເຄື່ອນໄຫວສິດທິມະນຸດ



### ນັກເຄື່ອນໄຫວເພື່ອສິດທິມະນຸດແມ່ຍິງ

ໃນປີ 2002 ຜູ້ແທນພິເສດຂອງເລຂາທິການໃຫຍ່ກ່ຽວກັບສະພາບຂອງນັກເຄື່ອນໄຫວສິດທິມະນຸດທ່ານນາງ Hina Jilani, ໄດ້ນຳພາຈັດກອງປະຊຸມໂລກກ່ຽວກັບສິດທິຂອງນັກເຄື່ອນໄຫວສິດທິມະນຸດແມ່ຍິງທີ່ໄດ້ດົນນະລົງມາເປັນເວລາສາມປີແລ້ວເຊິ່ງໄດ້ຈັດຂື້ນທີ່ປະເທດສີລັງກາແລະມີບັນດາຜູ້ເຂົ້າຮ່ວມທີ່ເປັນຊ່ຽວຊານຂັ້ນນຳທາງດ້ານບົດບາດຍິງຊາຍ ແລະ ນັກເຄື່ອນໄຫວສິດທິມະນຸດແມ່ຍິງເຂົ້າຮ່ວມຫລາຍກ່ວາເຈັດສິບປະເທດ.

ໃນຊ່ວງການດຳລົງຕຳແໜ່ງຂອງທ່ານ Hina ເຊິ່ງເປັນຜູ້ແທນພິເສດກໍ່ໄດ້ກ່າວຢ້ຳວ່ານັກເຄື່ອນໄຫວສິດທິມະນຸດແມ່ຍິງແມ່ນມີຄວາມສ່ຽງຫລາຍກ່ວາເພດຊາຍ ແລະ ມີຄວາມສ່ຽງທາງດ້ານອັກຄະຕິ, ການກີດກັນ ແລະ ການຖືກປະຕິເສດຈາກພາກລັດແລະສັງຄົມທົ່ວໄປໂດຍສະເພາະແມ່ນໃນເວລາທີ່ເຂົ້າຮ່ວມໃນການປົກປ້ອງສິດທິແມ່ຍິງ[61] ຜູ້ແທນພິເສດຍັງໃຫ້ການໃສ່ໃຈໃນບັນຫາທີ່ມີການລະເມີດສິດທິຂອງນັກ ເຄື່ອນໄຫວສິດທິມະນຸດແມ່ຍິງທີ່ມີປະມານ 449 ຄະດີ ໃນ 1.314 ນັກ ເຄື່ອນໄຫວສິດທິມະນຸດແມ່ຍິງທີ່ຖືກລະເມີດໃນຊ່ວງທີ່ທ່ານໄດ້ດຳລົງຕຳແໜ່ງຢູ່. ທົກສິບຫ້າເປີເຊັນຂອງຄະດີຂ້າງເທິງນີ້ແມ່ນໄດ້ຖືກແກ້ໄຂໄປພ້ອມກັບການລາຍງານພິເສດກ່ຽວກັບຄວາມຮຸນແຮງທີ່ມີຕໍ່ແມ່ຍິງ, ສາຍເຫດ ແລະ ຜົນກະທົບ.

61 ເບິ່ງ E/CN.4/2002/106 ວັກທີ. 80-94.

**A. ການຍື່ນຄຳຮ້ອງທຸກຂອງສ່ວນບຸກຄົນໃຫ້ແກ່ຂະບວນການພິເສດ**

**ໃຜກໍ່ໄດ້ແມ່ນສາມາດຍື່ນຂໍ້ມູນທີ່ໜ້າເຊື່ອຖື ແລະ ມີຈິງກ່ຽວກັບການລະເມີດສິດທິມະນຸດໃຫ້ແກ່ຂະບວນການພິເສດຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃຫ້ຮັບຊາບຂໍ້ມູນດັ່ງກ່າວ.**

ການຍື່ນຄຳຮ້ອງທຸກຂອງສ່ວນບຸກຄົນໃຫ້ແກ່ຂະບວນການພິເສດນັ້ນແມ່ນໜຶ່ງໃນຂະບວນການທີ່ມີປະສິດທິພາບສູງສຸດໃນການຊອກຫາການເຂົ້າຮ່ວມໂດຍຕົງໃນຄະດີດັ່ງກ່າວ. ພາກປະຊາສັງຄົມແມ່ນສາມາດເຮັດໜ້າທີ່ເປັນຂົວຕໍ່ໃຫ້ແກ່ບຸກຄົນທີ່ກຳລັງຂໍການຊ່ວຍເຫລືອທີ່ເກີດຈາກການຖືກລະເມີດສິດ.

ຂໍ້ມູນທີ່ຖືກສົ່ງ ແລະ ຮັບຕາມປົກກະຕິແລ້ວແມ່ນປິດລັບ ແລະ ຈະຖືກຮັກສາໄວ້ຈົນກ່ວາທາງຂະບວນການ ພິເສດຈະເຮັດບົດລາຍງານເພື່ອສົ່ງໃຫ້ສະພາສິດທິມະນຸດເຊິ່ງມັນເປັນການເປີດເຜີຍຕໍ່ສາທາລະນະ ຫຼືວ່າ ທາງຂະ ບວນການພິເສດນັ້ນຕ້ອງການນຳໃຊ້ຂໍ້ມູນໃນການອອກຂ່າວສານເພື່ອໃຫ້ທັນເຫດການໃຫ້ສາທາລະນະກໍ່ຮັບຮູ້. ໃນບົດລາຍງານ ຂ້າງເທິງນັ້ນແມ່ນຕ້ອງໃສ່ເລື່ອງລາວທີ່ໄດ້ມີການສື່ສານໄປມາກັບລັດຖະບານທີ່ກ່ຽວຂ້ອງກັບຄະດີໃດໜຶ່ງ. ສິ່ງທີ່ຄວນໃສ່ ໃຈກໍ່ຄືວ່າ ຊື່ຂອງຜູ້ເຄາະຮ້າຍແມ່ນຕ້ອງໄດ້ລະບຸໃນບົດລາຍງານ, ຍົກເວັ້ນແຕ່ເດັກນ້ອຍ ຫຼື ຜູ້ເຄາະຮ້າຍປະເພດພິເສດ ເຊັ່ນ: ຜູ້ເຄາະຮ້າຍທາງເພດ.

ໃນການລາຍງານຂໍ້ມູນຂ່າວສານຕາມໜ້າທີ່ວຽກງານຂອງກົນໄກຂະບວນການພິເສດນັ້ນ, ອັນສຳຄັນອີກອັນໜຶ່ງກໍ່ຄືວ່າອົງການທີ່ເຄື່ອນໄຫວໃນນາມຂອງຜູ້ເຄາະຮ້າຍນັ້ນຕ້ອງແຈ້ງໃຫ້ຜູ້ກ່ຽວຮັບຮູ້ວ່າເລື່ອງລາວຂອງເຂົາເຈົ້າແມ່ນຈະໄດ້ຖືກສົ່ງໃຫ້ກົນໄກຂະບວນການພິເສດທີ່ຈະມີທັງຊື່ແລະນາມສະກຸນ (ປະຫວັດ) ລະບຸໃນເອກະສານທີ່ກ່ຽວຂ້ອງ ແລະ ອາດຈະສົ່ງໃຫ້ແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງອີກນຳ. ຢ່າງໃດກໍ່ດີ ໃນບາງກໍລະນີທີ່ມີການຍິນຍອມໃຫ້ເປີດເຜີຍຂໍ້ມູນຂອງ ຜູ້ທີ່ຖືກເຄາະຮ້າຍນັ້ນ, ຂໍ້ມູນທີ່ວ່າບາງຄັ້ງກໍບໍ່ຈຳເປັນຕ້ອງໄດ້ເປີດເຜີຍສະເໝີໄປ (ເຊັ່ນ: ຜູ້ເຄາະຮ້າຍອາດບໍ່ສາມາດເຂົ້າຫາໄດ້ເພາະອາດຖືກກັກຂັງໃນສະຖານທີ່ໃດໜຶ່ງ, ຫຼື ກໍລະນີທີ່ຄ້າຍກັນນີ້). ຫລາຍໜ່ວຍງານກໍ່ແມ່ນໄດ້ພັດທະນາບັນດາຄຳສອບຖາມສະເພາະເພື່ອທີ່ຈະໃຊ້ໃນເວລາສົ່ງຂໍ້ມູນຂ່າວສານກ່ຽວກັບບັນຫາການລະເມີດສິດທິມະນຸດ.

ໃນແຕ່ລະຂະບວນການພິເສດແມ່ນມີເງື່ອນໄຂການສື່ສານທີ່ແຕກຕ່າງກັນໄປ. ເຖິງຢ່າງໃດກໍ່ດີ, ຢ່າງໜ້ອຍຂໍ້ມູນທີ່ມີຂ້າງລຸ່ມນີ້ແມ່ນມີປະໂຫຍດທີ່ຈະເຮັດໃຫ້ການສົນທະນາສື່ສານໄດ້ຮັບໝາກຜົນ:

- ລາຍລະອຽດຂອງຜູ້ທີ່ຢືນຢັນວ່າຕົກເປັນຜູ້ເຄາະຮ້າຍ;
- ລາຍລະອຽດຂອງຜູ້ທີ່ຖືກກ່າວຫາວ່າເປັນຜູ້ກະທຳການລະເມີດ;
- ລາຍລະອຽດຂອງບຸກຄົນຕ່າງໆ, ຫຼື ອົງການຈັດຕັ້ງທີ່ສົ່ງຂໍ້ມູນໃຫ້ ( ຂໍ້ມູນທີ່ວ່ານີ້ແມ່ນຈະປິດເປັນຄວາມລັບ;
- ວັນເວລາ ແລະ ສະຖານທີ່ ທີ່ເກີດເຫດການ; ແລະ
- ລາຍລະອຽດກ່ຽວກັບສະພາບການທີ່ເກີດຂື້ນ

ມາດຕະຖານແບບຢ່າງຂອງຄຳສອບຖາມສຳລັບໜ່ວຍງານໃດໜຶ່ງສະເພາະແມ່ນມີໃຫ້ໃນເວບຂອງ OHCHR ໃນສ່ວນທີ່ກ່ຽວກັບຂໍ້ມູນວິທີການລາຍງານການລະເມີດສິດທິມະນຸດ.

ພາກປະຊາສັງຄົມອາດຈະລາຍງານຂໍ້ມູນທີ່ໄດ້ຈາກການຕິດຕາມເບິ່ງການຈັດຕັ້ງປະຕິບັດຕາມຄຳແນະນຳທີ່ຜ່ານມາວ່າສະພາບການແລະບັນຫາສິດທິມະນຸດນັ້ນໄດ້ມີຫຍັງປ່ຽນແປງໄປແນວໃນແດ່ແລ້ວ. ຂໍ້ມູນຕິດຕາມນີ້ແມ່ນມີປະໂຫຍດ ຫລາຍສຳລັບຂະບວນການພິເສດ.
ບາງເທື່ອພາກປະຊາສັງຄົມກໍ່ຮຽກຮ້ອງຂະບວນການພິເສດໃຫ້ລົງຢ້ຽມຢາມພື້ນທີ່ທີ່
ເຫັນວ່າຈຳເປັນເຊິ່ງອີງຕາມຂໍ້ມູນທີ່ໄດ້ຈາກຂະບວນການສື່ສານຕິດຕໍ່ໄປມາ.

ຂໍ້ມູນທີ່ສົ່ງໃຫ້ຂະບວນການພິເສດນັ້ນບໍ່ຄວນມີລັກສະນະກ່ຽວກັບທາງການເມືອງ, ມີຄວາມເປັນຈິງ ແລະ ບໍ່ເອົາມາຈາກຂ່າວຂອງສື່ມວນຊົນຢ່າງດຽວ.

ຄະດີສ່ວນບຸກຄົນ/ການຮ້ອງທຸກແມ່ນສາມາດສົ່ງໄດ້ຕາມ:

E-mail: urgent-action@ohchr.org

Fax: +41 (0)22 917 90 06; ຫຼື

ສົ່ງທາງໄປສະນີ: OHCHR-UNOG, 8-14 avenue de la Paix, CH–1211 Geneva 10, Switzerland.

ໃນເວລາສົ່ງຂໍ້ມູນ, ໃຫ້ລະບຸແຈ້ງວ່າຈະສົ່ງໃຫ້ພາກສ່ວນໃດຂອງຂະບວນການພິເສດພ້ອມທັງຂຽນລະອຽດກ່ຽວກັບທີ່ຢູ່ ແລະເບີແຟກຕ່າງໆໃຫ້ລະອຽດໃສ່ໃນຊອງໜັງສື.
ຂໍ້ມູນເພີ່ມເຕີມແມ່ນສາມາດເບິ່ງໄດ້ທີ່ບົດທີ VIII (ການຍື່ນຄຳຮ້ອງທຸກກ່ຽວກັບການຖືກລະເມີດສິດ) ໃນປື້ມຄູ່ມືນີ້, ແລະ ສາມາດຕິດຕໍ່ທາງອີເມວ: SPDInfo@ohchr.org.

### B. ການສະໜັບສະໜູນການລົງຢ້ຽມຢາມພື້ນທີ່

ການລົງພື້ນທີ່ຂອງຂະບວນການພິເສດແມ່ນມີຄວາມສຳຄັນຫລາຍສຳລັບການເກັບຂໍ້ມູນພາກສະໜາມເພາະເປັນຂໍ້ມູນຈາກການໄດ້ເຫັນຕົວຈິງໃນພື້ນທີ່ທີ່ກ່ຽວຂ້ອງ. NGOs ລະດັບຊາດ ແລະ ສາກົນ, ສະມາຊິກຂອງພາກປະຊາສັງຄົງ ແລະ ຂະບວນການເຄື່ອນໄຫວຂັ້ນຮາກຖານແມ່ນມີຄວາມສຳຄັນໃນການປະກອບສ່ວນທີ່ກໍ່ໃຫ້ເກີດມີການປ່ຽນແປງໃນແຕ່ລະການປະຕິບັດໜ້າທີ່.

#### 1. ການຂໍລົງຢ້ຽມຢາມພື້ນທີ່

ພາກປະຊາສັງຄົມແມ່ນສາມາດຂໍໃຫ້ລັດຖະບານອອກໜັງສືເຊີນຂະບວນການພິເສດໃຫ້ລົງຢ້ຽມຢາມພື້ນທີ່ເປັນກໍລະນີພິ ເສດ, ບາງຂະບວນການພິເສດກໍ່ແມ່ນຮ້ອງຂໍກັບລັດຖະບານທີ່ກ່ຽວຂ້ອງເພື່ອຂໍລົງຢ້ຽມຢາມພື້ນທີ່ເອງ. ການໄດ້ຮັບການແຈ້ງເຕືອນກ່ຽວກັບບັນຫາຂອງປະເທດໃດໜຶ່ງແມ່ນຈະເປັນຄຳຖາມທີ່ວ່າຂະບວນການພິເສດນັ້ນຄວນຈະລົງໄປກວດກາຫຼືບໍ່, ບາງຂະບວນການພິເສດກໍ່ຂໍລົງພື້ນທີ່ໂດຍອີງຕາມຂໍ້ມູນທີ່ໄດ້ (ຄະດີ/ການຮ້ອງທຸກ) ທີ່ສົ່ງມາ. ບາງຂະບວນການພິເສດກໍ່ແມ່ນໄດ້ລົງຢ້ຽມຢາມພື້ນທີ່ຮ່ວມກັບອົງການອື່ນໆ.

**2. ໃນເວລາທີ່ໄດ້ຮັບການຕອບຮັບການລົງພື້ນທີ່**

ຫລັງຈາກທີ່ໄດ້ຮັບການຕອບຮັບແລ້ວ (ໃນເວລາທີ່ລັດໃດໜຶ່ງໄດ້ອານຸມັດໃຫ້ຂະບວນການພິເສດລົງຢ້ຽມຢາມພື້ນທີ່ໄດ້ຕາມວັນເວລາທີ່ກຳນົດ), ພາກປະຊາສັງຄົມອາດຈະແຈ້ງໃຫ້ສາທາລະນະຮັບຊາບກ່ຽວກັບການລົງພື້ນທີ່ດັ່ງກ່າວ. ພາກປະຊາສັງຄົມແມ່ນຍັງສາມາດສົ່ງຂໍ້ມູນ ແລະ ຍົກເອົາບັນຫາທີ່ໜ້າເປັນຫ່ວງແຈ້ງໃຫ້ແກ່ຂະບວນການພິເສດຮັບຊາບກ່ອນທີ່ຈະເດີນທາງລົງພື້ນທີ່ໃນປະເທດໃດໜຶ່ງ. ການໄດ້ຮັບລາຍງານດັ່ງກ່າວແມ່ນຈະຊ່ວຍໃຫ້ຂະບວນການພິເສດໄດ້ຍົກເອົາບັນຫາທີ່ໄດ້ຮັບຊາບນັ້ນມາສົນທະນາກັບເຈົ້າໜ້າທີ່ກ່ອນການລົງພື້ນທີ່ຕົວຈິງ, ແລະ ຖ້າຈຳເປັນທາງຂະບວນການພິເສດອາດຈະເອົາບັນຫາທີ່ຮັບຊາບນັ້ນມາຊຸນໃສ່ຕາຕະລາງເພື່ອຈະດຳເນີນງານໃນການຢ້ຽມຢາມ ( ຕົວຢ່າງ: ການຮ້ອງຂໍເຂົ້າໄປເບິ່ງໃນສະຖານທີ່ກັກຂັງບາງບ່ອນ ຫຼື ສະຖານທີ່ລີ້ໄພຕ່າງໆ ຫຼື ຂໍນັດພົບກັບເຈົ້າໜ້າທີ່ລະດັບຊາດ ແລະ ທອ້ງຖິ່ນ ຫຼື ຂໍພົບກັບຜູ້ໃດໜຶ່ງເປັນການສ່ວນຕົວ).



**ການປະສານງານລະດັບຊາດລະຫວ່າງ NGOs ນຳກັນ**

ກຸ່ມຂອງ NGOs ໃນປະເທດບຣາຊິວ (Plataforma Dhesc) ໄດ້ສ້າງຕັ້ງລະບົບການກວດກາສິດທິມະນຸດທີ່ເປັນຂະບວນການພິເສດ. ແຕ່ລະວຽກງານແມ່ນຈະມີຄວາມຮັບພິ ຊອບໃນຢູ່ທີ່ເຂດທ້ອງຖິ່ນເຊິ່ງລົງເລິກດ້ານ ບັນຫາທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳ-ສິດທີທີ່ຈະໄດ້ຮັບທີ່ຢູ່ອາໃສ, ການສຶກສາ, ສະພາບແວດລ້ອມ, ອາຫານ, ສຸຂະພາບ ແລະ ມີວຽກເຮັດງານທຳ-ແລະ ສ້າງບົດລາຍງານກ່ຽວກັບບັນຫາທີ່ກ່າວມານີ້ ເພື່ອສົ່ງໃຫ້ຂະບວນການພິເສດທີ່ກ່ຽວຂ້ອງ. ການຈັດແບ່ງບັນຫາສະເພາະໃຫ້ແຕ່ທ້ອງຖິ່ງແມ່ນໄດ້ນຳໃຊ້ຊັບພະຍາກອນ ແລະ ຄວາມຮູ້ໄດ້ຢ່າງເຕັມທີ່, ນອກນີ້ການດຳເນີນງານຍັງໄດ້ຫລຸດຜ່ອນການເຮັດວຽກທີ່ຖັບຖົມກັນຂອງຫລາຍໜ່ວຍງານ ແລະ ມັນສາມາດສ້າງຄວາມມີປະສິດທິພາບໃຫ້ແກ່ວຽກງານຂອງຂະບວນການພິເສດໄດ້ຫລາຍຂື້ນ.

**3. ໃນລະຫວ່າງການລົງຢ້ຽມຢາມພື້ນທີ່**

ໃນລະຫວ່າງການລົງພື້ນທີ່, ພາກປະຊາສັງຄົມອາດຈະຂໍພົບກັບຜູ້ແທນຂະບວນການພິເສດດ້ວຍການຕິດຕໍ່ຫາຂະບວນ ການພິເສດ ຫຼື ພະນັກງານຂອງ OHCHR ທີ່ກ່ຽວຂ້ອງຢູ່ທີ່ນະຄອນເຈນນິວາ ຫຼື ໃນພາກພື້ນອື່ນໆ, ໃຊ້ການແຝກ ຫຼື ສົ່ງທາງໄປສະນີ ຫຼື ອີເມວກໍ່ໄດ້.



ຂໍ້ມູນເພີ່ມເຕີມກ່ຽວກັບສຳນັກງານທີ່ກ່ຽວຂ້ອງ ແລະ ໜ່ວຍງານບໍລິການສາມາດເບິ່ງໄດ້ໃນເວບຂອງ OHCHR

**4. ພາຍຫລັງການລົງຢ້ຽມຢາມພື້ນທີ່**

ພາກປະຊາສັງຄົມສາມາດສະແດງບົດບາດທີ່ສຳຄັນໃນການຕິດຕາມການຈັດຕັ້ງປະຕິບັດຕາມບົດສະຫລຸບ ແລະ ຄຳແນະນຳຕ່າງໆທີ່ໄດ້ຈາກການຢ້ຽມຢາມຄື:

- ຊ່ວຍເຜີຍແຜ່ບັນດາຄຳແນະນຳໃຫ້ແກ່ລະຖາບັນຕ່າງໆໃນທ້ອງຖິ່ນ;

- ຈັດພິມວຽກງານຂອງຂະບວນການພິເສດ ແລະ ຍົກສູງຄວາມຕື່ນຕົວທົ່ວໄປ;
- ພັດທະນາແຜນງານ ແລະ ກິດຈະກຳຕ່າງໆເພື່ອປະກອບສ່ວນໃນວຽກງານທີ່ເລີ່ມຈາກການລົງຢ້ຽມຢາມພື້ນທີ່;
- ເຮັດວຽກຮ່ວມກັບລັດຖະບານເພື່ອການຈັດຕັ້ງປະຕິບັດຕາມຄຳແນະນຳຕ່າງໆຂອງຂະບວນການພິເສດ;
- ປະກອບສ່ວນຂໍ້ມູນໃຫ້ແກ່ບົດລາຍງານການຕິດຕາມພິເສດທີ່ຈັດພິມໂດຍຂະບວນການພິເສດບາງທ່ານ
- ກວດກາບັນດາຂັ້ນຕອນທີ່ລັດຖະບານດຳເນີນການຈັດຕັ້ງປະຕິບັດຕາມຄຳແນະນຳ ແລະ ແຈ້ງລາຍງານໃຫ້ຂະບວນການພິເສດຮັບຊາບເປັນປະຈຳກ່ຽວກັບຄວາມຄືບໜ້າຂອງລັດຖະບານທີ່ດຳເນີນການໄປຕາມຄຳແນະນຳນັ້ນແນວໃດ.

**ພັດທະນາເຄືອຂ່າຍເພື່ອເຮັດວຽກກ່ຽວກັບການຈັດຕັ້ງປະຕິບັດຕາມຄຳແນະນຳຂອງຂະບວນການພິເສດ**

ຈາກການລົງຢ້ຽມຢາມຂອງນັກລາຍງານການພິເສດຄືທ່ານ Doudou Diène, ໃນປະເທດຍີ່ປຸ່ນໃນປີ 2005 ທີ່ກ່ຽວກັບຮູບແບບການຈຳແນກໃນປະຈຸບັນທາງດ້ານເຊື້ອຊາດ, ສີຜິວ, ຄວາມກຽດຊັງຊາວຕ່າງດ້າວ ແລະ ບັນຫາທີ່ກ່ຽວຂ້ອງ, ຂະບວນການເຄື່ອນໄຫວສາກົນເພື່ອຕ້ານການຈະແນກເຊື້ອຊາດ(IMADR) ແລະ 85 ໜ່ວຍງານສິດທິມະນຸດດ້ານຊົນເຜົ່າທີ່ໄດ້ສ້າງຕັ້ງເຄືອຂ່າຍ NGOs ເພື່ອລົບລ້າງການຈຳແນກ ເຊື້ອຊາດແມ່ນໄດ້ຖືກບັນທຶກໃນບົດລາຍງານຂອງທ່ານ.

ເຄືອຂ່າຍທີ່ວ່ານັ້ນແມ່ນຖືວ່າເປັນສູນກາງໃຫ້ແກ່ NGOs ທ້ອງຖິ່ງໃນການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຈຳແນກເຊື້ອຊາດໃນປະເທດຍີ່ປຸ່ນ ແລະ ເພື່ອການມີສ່ວນຮ່ວມກັບກົນໄກສາກົນ. ນັກລາຍງານພິເສດແມ່ນຍິນດີກັບການສ້າງເຄືອຂ່າຍດັ່ງກ່າວເພາະມັນເປັນເຄືອຂ່າຍການສົນທະນາທີ່ມີປະສິດທິພາບລະຫວ່າງເຈົ້າໜ້າທີ່, NGOs, ແລະ ສະມາຊິກຂອງຊຸມຊົນທີ່ມີປະສົບການຖືກຈຳແນກເຊື້ອຊາດ ແລະ ຄວາມກຽດຊັງ, ເຊິ່ງລວມມີຊົນເຜົ່າ Ainu

(ໄດ້ຖືກຮັບການຮັບຮູ້ຢ່າງເປັນທາງການຈາກປະເທດຍີ່ປຸ່ນວ່າເປັນຄົນພື້ນເມືອງໃນປີ 2008), ຊົນເຜົ່າແຫ່ງຊາດ ( ຄົນ Buraku ແລະ ຄົນ Okinawa), ລູກຫລານຂອງປະຊາຊົນຈາກອະດີດອານານິຄົມຍີ່ປຸ່ນ (ຄົນເກົາຫລີ ແລະ ຈີນ), ແລະ ຜູ້ອົບພະຍົບໃໝ່ໆຈາກແຖວອາຊີຕ່າງໆ, ອາຟຣິກາ, ອາເມລິກາໃຕ້ແລະບັນດາປະເທດຕາເວັນອອກກາງ.

C. **ການໃຫ້ຂໍ້ມູນແກ່ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ຈາກຂະບວນການພິເສດ**

NGOs ສາມາດນຳເອົາຂໍ້ມູນກ່ຽວກັບສະພາບການສິດທິມະນຸດສະເພາະຈາກປະເທດໃດໜຶ່ງ ຫຼື ຂໍ້ມູນໃນກອບຂອງກົດໝາຍ ແລະ ການຈັດຕັ້ງປະຕິບັດທີ່ກ່ຽວຂ້ອງກັບສິດທິມະນຸດມາລາຍງານໃຫ້ແກ່ຂະບວນການພິເສດໄດ້ຮັບຊາບ. ໃນເວລາດຽວກັນຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ຈາກຂະບວນການພິເສດອາດຈະຂໍຂໍ້ມູນສະເພາະໃດໜຶ່ງທີ່ກ່ຽວກັບຫົວເລື່ອງທີ່ຢູ່ໃນກອບໜ້າທີ່ຂອງຕົນ ຫຼື ຂໍຈັດກອງປະຊຸມປຶກສາຫາລືພິເສດກັບ NGOs ແລະ ພາກປະຊາສັງຄົມອື່ນໆ, ເຊິ່ງອາດລວມມີສະຖາບັນການສຶກສາ ແລະ ການຄົ້ນຄ້ວາຕ່າງໆ.

**ການປະສານງານຂອງພາກປະຊາສັງຄົມກັບຂະບວນການພິເສດກ່ຽວກັບສິດໃນການສຶກສາທີ່ທາງທີມງານກຳລັງໄດ້ສ້າງບົດລາຍງານກ່ຽວກັບສິດໃນການສຶກສາຂອງຄົນພິການ.**

ໃນປີ 2007 ນັກລາຍງານພິເສດກ່ຽວກັບສິດໃນການສຶກສາຄືທ່ານVernor Muñoz Villalobos, ເຊິ່ງໄດ້ທຸ່ມເທໃຫ້ແກ່ການຂຽນລາຍງານປະຈຳປີຄັ້ງທີສາມ (A/HRC/4/29) ກ່ຽວກັບສິດໃນການສຶກສາຂອງຄົນພິການ, ທ່ານໄດ້ອະທິບາຍວ່າຄົນພິການກໍ່ ແມ່ນໜຶ່ງໃນກຸ່ມຄົນທີ່ຖືກລະເມີດສິດດ້ວຍການຖືກປະຕິເສດໃຫ້ເຂົ້າສູ່ການສຶກສາ.

ບົດລາຍງານໄດ້ດຳເນີນການວິເຄາະຢ່າງເລິກເຊິ່ງກ່ຽວກັບສະຖາບັນ ແລະ ກອບທາງກົດໝາຍເຊິ່ງມັນກ່ຽວຂ້ອງກັບສິດເຂົ້າສູ່ການສຶກສາຂອງຄົນພິການ. ບົດລາຍງານຍັງໄດ້ກວດກາເບິ່ງຜົນສະທ້ອນຂອງ “ການສຶກສາຮ່ວມ” ວ່າເປັນສ່ວນປະກອບພື້ນຖານ ແລະ ສຳຄັນຕໍ່ສິດທີ່ຈະໄດຮັບການສຶກສາ, ແລະ ໄດ້ນຳສະເໜີໃຫ້ຮູ້ກ່ຽວກັບບັນດາອຸປະສັກ ແລະ ສິ່ງທ້າທາຍຕ່າງໆທີ່ເປັນໄພຕໍ່ການຮັບຮູ້ສິດໃນການສຶກສາຂອງຄົນພິການ.

ໃນການພັດທະນາບົດລາຍງານ, ຂະບວນການພິເສດກໍ່ໄດ້ປຶກສາຫາລືກັບອົງການຈັດຕັ້ງໃນປະເທດ ແລະ ພາກພື້ນ ເຊິ່ງລວມມີອົງການຂອງຄົນພິການ, ແລະ ໃຫ້ການຮັບເອົາຂໍ້ມູນມືໜຶ່ງ (ບົດຄົ້ນຄ້ວ, ສະຊິຕິ, ແລະ ທັດສະນະຕ່າງໆ) ຈາກອົງການຈັດຕັ້ງທີ່ມີຊື່ສຽງໃນປະເທດ ແລະ ພາກພື້ນ. ຂໍ້ມູນດັ່ງກ່າວນີ້ແມ່ນໄດ້ຊ່ວຍໃຫ້ທ່ານ Vernor ໃນການວິເຄາະຫາສິ່ງທ້າທາຍ ແລະ ອຸບປະສັກຕ່າງໆທີ່ເປັນໄພຕໍສິດໃນການສຶກສາຂອງຄົນພິການ, ແລະ ເພື່ອພັດທະນາຂໍ້ສະເໜີຕ່າງໆ. OHCHR ຮ່ວມກັບຂະບວນການພິເສດແມ່ນຍັງໄດ້ຈັດກອງປະຊຸມວິຊາການເປັນເວລາສິບສອງວັນກ່ຽວກັບສິດໃນການສຶກສາຂອງຄົນພິການເຊິ່ງວ່າມີຄົນພິການຫລາຍທ່ານ ແລະ ຜູ້ທີ່ເຮັດວຽກເພື່ອຄົນພິການກໍ່ໄດ້ພາກັນເຂົ້າຮ່ວມຢ່າງຫ້າວຫັນ. ການປະກອບສ່ວນຂອງຕົວແທນພາກປະຊາສັງຄົມໃນທີ່ປະຊຸມແມ່ນມັນໄດ້ສະທ້ອນໃຫ້ເຫັນເຖິງການມີສ່ວນຮ່ວມຢ່າງຫ້າວຫັນໃນການເຜີຍແຜ່ຂໍ້ມູນ ແລະ ແຈກຢາຍບົດລາຍງານໃຫ້ແກ່ຄົນພິການ ແລະ ອົງການທີ່ກ່ຽວຂ້ອງ, ມະຫາວິທະຍາ ໄລ, ສຳນັກງານລັດ, ແລະ ກຸ່ມພາກປະຊາສັງຄົມອື່ນໆ.

### ການປະກອບສ່ວນຂອງສະຖາບັນການສຶກສາໃຫ້ແກ່ຜູ້ແທນພິເສດຂອງເລຂາທິການໃຫຍ່ກ່ຽວກັບບັນຫາສິດທິມະນຸດກັບບໍລິສັດຂ້າມຊາດ ແລະ ວິສະຫະກິດຕ່າງໆ.

ບັນດາສະຖາບັນການສຶກສາຕ່າງໆໃນທົ່ວໂລກແມ່ນໄດ້ປະກອບສ່ວນໃຫ້ແກ່ວຽກງານຂອງຜູ້ແທນພິເສດຂອງເລຂາທິການໃຫຍ່ກ່ຽວກັບບັນຫາສິດທິມະນຸດກັບບໍລິສັດຂ້າມຊາດ ແລະ ວິສະຫະກິດຕ່າງໆ.

ການປະກອບສ່ວນນັ້ນໝາຍເຖິງການສຶກສາຄົ້ນຄ້ວາກ່ຽວກັບຫົວຂໍ້ສະເພາະໃດໜຶ່ງທີ່ສະເໜີມາຫຼືໄດ້ຮັບການເຫັນດີຈາກຜູ້ແທນພິເສດ, ການເຂົ້າຮ່ວມໃນກອງປະຊຸມຊ່ຽວຊານແລະ ກອງປະຊຸມປຶກສາຫາລື, ແລະ ການໃຫ້ຄຳຄິດເຫັນໃຫ້ແກ່ຜູ້ແທນພິເສດກ່ຽວກັບບັນຫາຕ່າງໆ.

ທຸກການປະກອບສ່ວນທີ່ທາງຜູ້ແທນພິເສດໄດ້ຮັບແມ່ນມີໃນເວບຂອງສູນຂໍ້ມູນຂ່າວສານເລື່ອງທຸລະກິດກັບສິດທິມະນຸດ.[62]

## D. ການເຮັດວຽກໃນທ້ອງຖິ່ນ, ໃນລະດັບປະເທດຫລື ໃນພາກພື້ນເພື່ອໃຫ້ການສະໜັບສະໜູນ, ເຜີຍແຜ່, ຕິດຕາມ ແລະ ຈັດຕັ້ງປະຕິບັດວຽກງານຂອງຂະບວນການພິເສດ.

ວຽກງານທີ່ກຳລັງກຳເນີນຢູ່ຂອງຂະບວນການພິເສດແມ່ນການສ້າງບົດລາຍງານ ແລະ ໃຫ້ຄຳແນະນຳ, ໃຫ້ການສະໜັບສະໜູນດ້ານຊັບພະຍາກອນຕ່າງໆທີ່ທາງພາກປະຊາສັງຄົມຈະສາມາດນຳໃຊ້ເຂົ້າໃນວຽກງານການເຜີຍແຜ່ທີ່ພວມດຳເນີນຢູ່. ການສະໜັບສະໜູນແມ່ນມີ:

1. **ຈັດຕັ້ງປະຕິບັດຕາມຄຳແນະນຳຂອງຂະບວນການພິເສດໃນລະດັບຊາດ**

ຕິດຕາມການຈັດຕັ້ງປະຕິບັດຂອງລັດຖະບານຕາມຄຳແນະນຳຂອງຂະບວນການພິເສດໂດຍສະເພາະແມ່ນພາຍຫລັງການລົງຢ້ຽມຢາມພື້ນທີ່ທີ່ຖືເປັນບົດບາດສຳຄັນທີ່ພາກປະຊາສັງຄົມສາມາດດຳເນີນການສ້າງຄວາມກ້າວໜ້າໃຫ້ແກ່ສິດທິມະນຸດ. ພາກປະຊາສັງຄົມອາດດຳເນີນການກວດກາຄວາມກ້າວໜ້າຂອງລັດຖະບານໃນການຈັດຕັ້ງປະຕິບັດຕາມຄຳແນະນຳ, ຫຼື ອາດຊອກຫາວິທີທາງຈັດຕັ້ງປະຕິບັດເອງຖ້າຫາກວ່າຄຳແນະນຳນັ້ນກ່ຽວກັບພາກປະຊາສັງຄົມ.

2. **ການຕັ້ງມາດຕະຖານທ້ອງຖິ່ນຫຼືລະດັບຊາດ**

ມາດຕະຖານລະຫວ່າງປະເທດ, ແບບຢ່າງຂອງກົດໝາຍ ຫຼື ຍຸດທະວິທີທີ່ສ້າງຂື້ນໂດຍຂະບວນການພິເສດ, ທາງພາກປະຊາສັງຄົມແມ່ນສາມາດນຳໃຊ້ເພື່ອລະດົມສ້າງຄວາມຕື່ນຕົວໃນບັນຫາໃດໜຶ່ງ, ດົນນະລົງເພື່ອປັບປຸງມາດຕະຖານທ້ອງຖິ່ງ ຫຼື ແຫ່ງຊາດ, ຫຼື ເຮັດໜ້າທີ່ເປັນເຄື່ອງມືໃນການຕີຄວາມໝາຍກົດໝາຍພາຍໃນໄດ້.

---

62 OHCHR ແມ່ນຈະບໍ່ມີຄວາມຮັບຜິດຊອບໃດໆຕໍ່ຂໍ້ມູນທີ່ບໍ່ໄດ້ຢູ່ໃນເວບຂອງສຳນັກງານ ແລະ ທາງສຳກັກງານເອງກໍ່ບໍ່ໄດ້ເຊື່ອມຕໍ່ຂໍ້ມູນໃດໆກັບເວບທີ່ບໍ່ໄດ້ກ່ຽວຂ້ອງ.

ພາກປະຊາສັງຄົມອາດຈະເປັນເຈົ້າພາບຈັດການຝຶກອົບຮົມເພື່ອການພັດທະນາມາດຕະຖານ, ແລະ ເພື່ອແນໃສ່ສ້າງຄວາມອາດສາມາດໃຫ້ແກ່ພາກປະຊາສັງຄົມອື່ນໆໃຫ້ມີຄວາມສາມດນຳໃຊ້ ແລະ ຮ່ວມງານກັບຂະບວນການພິເສດ. ຂະບວນການພິເສດແມ່ນມີບົດບາດໃນດ້ານການສ້າງຄວາມອາດສາມາດແບບນີ້ຢູ່ແລ້ວ.

### 3. ເຄື່ອງມືສຳລັບການພັດທະນາລະບຽບການດຳເນີນງານ

ຜົນງານຂອງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດແມ່ນມີລາຍລະອຽດກ່ຽວກັບສິດ ແລະ ພັນທະທີ່ພາກປະຊາສັງຄົມສາມາດນຳໃຊ້ໃນການພັດທະນາລະບຽບການດຳເນີນງານພາຍໃນຂອງຕົນໄດ້. ຕົວຢ່າງ:

- ຜົນງານຂອງນັກລາຍງານພິເສດກ່ຽວກັບສິດທາງການສຶກສາແມ່ນມີລະບຽບການທີ່ມີຄຸນຄ່າສຳລັບສະຖາບັນການ ສຶກສາຕ່າງໆ;
- ຜົນງານຂອງນັກລາຍງານພິເສດກ່ຽວກັບການທໍລະມານ ແລະ ການລົງໂທດ ແລະ ການປະຕິບັດທີ່ເຮັດ ໃຫ້ເຊື່ອມເສຍກຽດສັກສີ ແລະ ໄຮ້ມະນຸດສະທຳແມ່ນສາມາດຖືກນຳໃຊ້ໃນສູນກັກຂັງ ແລະ ຄຸກເພື່ອເອົາໄປພັດທະນາການ ຝຶກອົບຮົມພາຍໃນ ແລະ ພັດທະນາມາດຕະຖານໃນການດຳເນີນງານຂອງຕົນ;
- ຜົນງານຂອງນັກລາຍງານພິເສດກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ, ສາຍເຫດ ແລະ ຜົນສະທ້ອນແມ່ນມີນິຍາມຂອງ ຄວາມຮຸນແຮງຕໍ່ແມ່ຍິງ, ສາຍເຫດ ແລະ ວິທີການປະຕິບັດທີ່ດີທີ່ສຸດເພື່ອລົບລ້າງສິ່ງດັ່ງກ່າວ. ລະບຽບການ, ນິຍາມ, ແລະ ຂັ້ນຕອນຕ່າງໆແມ່ນສາມາດນຳໃຊ້ກັບໂຮງຮຽນ, ຄຸກ, ທີ່ພັກອາໃສຊົ່ວຄາວຂອງແມ່ຍິງ ຫຼື ອົງການຕ່າງໆທີ່ ກຳລັງດຳເນີນການປົກປ້ອງແມ່ຍິງໃຫ້ມີຄວາມປອດໄພ.

### E. ການພົບປະກັບຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດ

ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດແມ່ນມີວາລະໃຫ້ສຳລັບການພົບປະກັບພາກປະຊາສັງຄົມເຊິ່ງມັນເປັນ ສ່ວນໜຶ່ງຂອງວຽກງານປຶກສາຫາລືໃນນະຄອນເຈນນີວາ, ນີວຢອກ (ສຳລັບຜູ້ທີ່ເຂົ້າຮ່ວມໃນກອງປະຊຸມສະມັດຊາໃຫຍ່) ແລະ ໃນລະຫວ່າງການລົງຢ້ຽມຢາມພື້ນທີ່. ການພົບປະນີ້ແມ່ນມີຄວາມສຳຄັນເປັນພິເສດໃນການຊ່ວຍສ້າງຄູ່ຮ່ວມງານ ທີ່ກຳລັງດຳເນີນງານຢູ່ລະຫວ່າງຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ໃນຂະບວນການພິເສດ ແລະ ພາກປະຊາສັງຄົມ. ພະນັກງານ ທີ່ຊ່ວຍວຽກຂອງຂະບວນການພິເສດຢູ່ທີ່ສຳນັກງານ OHCHR ແມ່ນສາມາດຕິດຕໍ່ໄດ້ຕະຫລອດ ປີເພື່ອຂໍເຂົ້າພົບ.

**ຂໍ້ມູນຂ່າວສານຂອງສຳນັກງານ OHCHR**

**ເວບໄຊ້ຂອງຂະບວນການພິເສດ**

ພາກປະຊາສັງຄົມຄວນຈະສຶກສາຂໍ້ມູນເປັນປະຈຳກ່ຽວກັບຂະບວນການພິເສດທີ່ມີໃນເວບຂອງOHCHR ເພື່ອວ່າຈະໄດ້ອັບເດດຂໍ້ມູນທີ່ກ່ຽວຂ້ອງ. ເວບໄຊ້ແມ່ນຈະມີເປັນພາສາອັງກິດ, ຝຣັ່ງ, ຣັດເຊຍ, ແລະ ສະເປນ, ສ່ວນພາສາຈີນ ແລະ ອາຣັບແມ່ນກຳລັງສ້າງຢູ່.

**ເວບໄຊ້ຂອງສະພາສິດທິມະນຸດ**

ພາກປະຊາສັງຄົມຄວນສຶກສາຂໍ້ມູນເປັນປະຈຳກ່ຽວກັບສະພາສິສິດທິມະນຸດໃນເວບຂອງ OHCHR ເພື່ອຈະ ໄດ້ຂໍ້ມູນທີ່ອັບເດດທີ່ກ່ຽວກັບການເຂົ້າຮ່ວມໃນກອງປະຊຸມຂອງສະພາ, ແລະ ຂໍ້ມູນກ່ຽວກັບການນຳສະເໜີບົດ ລາຍງານຂອງຂະບວນການພິເສດ.

**ລະບົບເນັດສະເພາະ**

ຂໍ້ມູນກ່ຽວກັບວຽກງານຕ່າງໆຂອງຂະບວນການພິເສດແມ່ນມີໃນ:

- ເວບສະເພາະຂອງສະພາສິດທິມະນຸດທີ່ເຊື່ອມຕໍ່ເຖິງຂະບວນການພິເສດ;
- ເວບສະເພາະຂອງຂະບວນການພິເສດ

**ວາລະສານຂອງຂະບວນການພິເສດ**

OHCHR ໄດ້ພິມອອກວາລະສານຂອງຕົນປີລະສາມເທື່ອກ່ຽວກັບກິດຈະກຳຂອງຂະບວນການພິເສດ. ວາລະສານສາມາດດາວໂລດໄດ້ທີ່ເວບຂອງ OHCHR

ສຳລບລະຫັດຂອງການນຳໃຊ້ເຂົ້າໃນເວບສ້ເພາະນີ້ແມ່ນສາມາດສະມັກທາງອອກລາຍໄດ້. ໃນເວລາທີ່ກອກສຳເລັດແລ້ວ ລະຫັດການນຳໃຊ້ກໍ່ຈະຖືກສົ່ງໃຫ້ທາງອີເມວທັນທີ

**ສະຖິຕິ ແລະ ຂໍ້ມູນປະຈຳປີກ່ຽວກັບຂະບວນການພິເສດ**

OHCHR ຈະສະຫລຸບປະຈຳປີກ່ຽວກັບສະຖິຕິ ແລະ ຂໍ້ມູນຂອງຂະບວນການພິເສດ. ບົດສະຫລຸບ ດັ່ງກ່າວແມ່ນກ່ຽວກັບການຕິດຕໍ່ສື່ສານໄປມາ, ການລົງຢ້ຽມຢາມພື້ນທີ່, ການລາຍງານ, ການອອກ ຖະແຫລງຂ່າວ, ການປະສານງານ ແລະ ເຫດການຕ່າງໆທີ່ສຳຄັນ. ບົດສະຫລຸບທີ່ວ່ານີ້ແມ່ນສາມາດ ເອົາໃນເວບຂອງ OHCHR ໄດ້.

## ການລວບລວມຄຳແນະນຳຂອງຂະບວນການພິເສດພິເສດປະຈຳປີ

OHCHR ຈະລວບລວມຄຳແນະນຳຂອງຂະບວນການພິເສດປະຈຳປີ, ທີ່ທາງລັດຖະບານເປັນຜູ້ດຳເນີນການຈັດຕັ້ງປະຕິບັດ. ຂໍ້ມູນນີ້ສາມາດເອົາໄດ້ທີ່ເວບຂອງ OHCHR.

## ດັດສະນີທາງສິດທິມະນຸດສາກົນ

ດັດສະນີທາງສິດທິມະນຸດສາກົນ (ດັດສະນີ) ແມ່ນເປັນລະບົບຂໍ້ມູນອອນລາຍ, ອອກແບບມາເພື່ອອຳນວຍຄວາມສະດວກໃຫ້ແກ່ການເຂົ້າຫາເອກະສານຂອງອົງກອນສິດທິມະນຸດ ແລະ ຂະບວນການພິເສດຂອງສະພາສິດທິມະນຸດ. ເວບໃໝ່ນີ້ (ສາມາດເຂົ້າຫາທາງເວບຂອງ OHCHR) ແມ່ນມີບັນດາບົດສະຫລຸບຂອງການສັງເກດການທັງໝົດທີ່ສ້າງຂື້ນໂດຍອົງກອນສິດທິມະນຸດຕັ້ງແຕ່ປີ 2000, ນອກນີ້ຍັງມີເອກະສານທີ່ກ່ງວກັບບົດສະຫລຸບ ແລະ ບັນດາຄຳແນະນຳຕ່າງໆຂອງຂະບວນການພິເສດທີ່ປະເທດໃດໜຶ່ງໄດ້ຮັບຮອງເອົາມາແຕ່ປີ 2006. ຂໍ້ມູນດັດສະ ນີທີ່ວ່ານີ້ຈະໄດ້ເອົາບັນດາຄຳແນະນຳຂອງກົນໄກການທົບທວນເປັນໄຍລະຂອງສະພາສິດທິມະນຸດເຂົ້າໃສ່ຕື່ມໃນໄວໆນີ້.

W

**ເອກະສານຊ້ອນທ້າຍ**

ມາຮອດປີ 2008 ແມ່ນມີກົນໄກຂະບວນການພິເສດຢູ່ 38 ໜ່ວຍງານທີ່ດຳເນີນງານຢູ່ ( ມີ 30 ໜ້າທີສະເພາະ ແລະ 8 ໜ້າທີ່ໃນລະດັບຊາດ).

ສຳລັບລາຍຊື່ຂອງກົນໄກທີ່ວ່ານີ້ແມ່ນສາມາດເຂົ້າເບິ່ງໄດ້ທີ່ເວບຂອງ OHCHR

**A. ຕາຕະລາງຂອງໜ້າທີ່ສະເພາະ**

| ຫົວຂໍ້/ໜ້າທີ່ | ໜ້າທີ່ established | | ໜ້າທີ່ extended | |
|---|---|---|---|---|
| | ໃນປີ | ໂດຍ | ໃນປີ | ໂດຍ |
| ນັກລາຍງານພິເສດກ່ຽວກັບການມີທີ່ຢູ່ອາໃສທີ່ພຽງພໍແມ່ນເປັນສ່ວນປະກອບໜຶ່ງຂອງສິດທິຈະໄດ້ຮັບມາດຕະຖານການດຳລົງຊີວິດ | 2000 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2000/9 | 2007 | ມະຕິຂອງສະພາສິດທິມະນຸດເລກທີ 6/27 (ສຳລັບ 3ປີ) |
| ໜ່ວຍງານຂອງຊ່ຽວຊານກ່ຽວກັບຄົນພື້ນເມືອງອັບຝຣິກາ | 2002 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2002/68 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 9/14 (ສຳລັບ 3ປີ) |
| ໜ່ວຍງານກ່ຽວກັບການກັກຂັງໂດຍພະລັກການ | 1991 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1991/42 | 2007 | ມະຕິຂອງສະພາສິດທິມະນຸດເລກທີ6 /4 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບການຂາຍເດັກນ້ອຍ, ໂສເພນີເດັກ, ແລະ ການຖ່າຍຮູບໂປ້ຂອງເດັກ | 1990 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1990/68 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/13 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບສິດທິທາງການສຶກສາ | 1998 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1998/33 | 2008 | ມະຕິຂອງສະພາສິດທິມະນຸດເລກທີ8 /4 (ສຳລັບ 3ປີ) |
| ໜ່ວຍງານກ່ຽວກັບການບັງຄັບ ຫຼື ຫາຍສາບສູນໂດຍບໍ່ໄດ້ສະມັກໃຈ | 1980 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 20 (XXXVI) | 2007 | ມະຕິຂອງສະພາສິດທິມະນຸດເລກທີ 7/12 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບການວິສາມັນຄາດຕະກຳ, ແລະ ການຕັດສິນໂດຍພະລັກການ | 1982 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1982/35 | 2008 | ມະຕິຂອງສະພາສິດທິມະນຸດເລກທີ8 /3 (ສຳລັບ 3ປີ) |

| ຫົວຂໍ້/ໜ້າທີ່ | ໜ້າທີ່ established | | ໜ້າທີ່ extended | |
|---|---|---|---|---|
| | ໃນປີ | ໂດຍ | ໃນປີ | ໂດຍ |
| ຜູ້ຊ່ຽວຊານເອກະລາດກ່ຽວກັບບັນຫາຂອງສິດທິມະນຸດແລະຄວາມທຸກຍາກທີ່ຮ້າຍແຮງ. | 1998 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1998/25 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 8/11 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບສິດໃນດ້ານອາ ຫານ | 2000 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2000/10 | 2007 | ມະຕິຂອງສະພາສິດທິມະນຸດເລກທີ 6/2 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບການສົ່ງເສີມແລະປົກປ້ອງສິດໃນການສະແດງຄວາມຄິດເຫັນ ແລະ ປາກເວົ້າ | 1993 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1993/45 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/(ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບສິດໃນການເຊື່ອຖືສາດສະໜາ | 1986 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1986/20 | 2007 | ມະຕິຂອງສະພາສິດທິມະນຸດເລກທີ 6/37 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບສິດຂອງໝົດທຸຄົນທີ່ຈະຮັບມາດຕະຖານຂອງສຸກຂະພາບທາງຮ່າງກາຍແລະຈິດໃຈທີ່ດີທີ່ສຸດ | 2002 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2002/31 | 2007 | ມະຕິຂອງສະພາສິດທິມະນຸດເລກທີ 6/29 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບສະພາບຂອງນັກເຄື່ອນໄຫວສິດທິມະນຸດ (ເມື່ອກ່ອນແມ່ນຜູ້ແທນພິເສດຂອງເລຂາທິການໃຫຍ່) | 2000 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2000/61 | 2008 | ມະຕິຂອງສະພາສິດທິມະນຸດເລກ ທີ 7/8 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບຄວາມເປັນເອກະລາດຂອງຜູ້ພິພາກສາແລະນັກກົດໝາຍ | 1994 | ມັດຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1994/41 | 2008 | ມັດຕິຂອງສະພາສິດທິມະນຸດເລກ ທີ 8/6 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບສະພາບຂອງສິດທິແລະເສລີພາບພື້ນຖານຄົນພື້ນເມືອງ | 2001 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2001/57 | 2007 | ມະຕິຂອງສະພາສິດທິມະນຸດເລກທີ 6/12 (ສຳລັບ 3ປີ) |
| ຜູ້ແທນພິເສດຂອງເລຂາທິການກ່ຽວກັບສິດທິຂອງຜູ້ຍົກຍ້ານຖິ່ນຖານພາຍໃນປະເທດ | 2004 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2004/55 | 2007 | ມັດຕິຂອງສະພາສິດທິມະນຸດເລກທີ 6/32 (ສຳລັບ 3ປີ) |
| ໜ່ວຍງານກ່ຽວກັບການຕ້ານການວ່າຈ້າງທີ່ລະເມີດສິດທິມະນຸດ ແລະ ຂັດຂວາງການນຳໃຊ້ສິດໃນການເລືອກທີ່ຈະປົກຄອງຕົນ ເອງ | 2005 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2005/2 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/21 (ສຳລັບ 3ປີ) |

| ຫົວຂໍ້/ໜ້າທີ່ | ໜ້າທີ່ established | | ໜ້າທີ່ extended | |
|---|---|---|---|---|
| | ໃນປີ | ໂດຍ | ໃນປີ | ໂດຍ |
| ນັກລາຍງານພິເສດກ່ຽວກັບສິດທິຂອງຜູ້ອົບພະຍົບ | 1999 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1999/44 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 8/10 (ສຳລັບ 3ປີ) |
| ຊ່ຽວຊານເອກະລາດກ່ຽວກັບບັນຫາຊົນ ເຜົ່າ | 2005 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2005/79 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/6 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບຮູບແບບການຈຳແນກໃນປະຈຸບັນກ່ຽວກັບເຊື້ອຊາດ, ສີຜິວ, ຄວາມ ກຽດຊັງ, ແລະ ບັນຫາທີ່ກ່ຽວຂ້ອງອື່ນໆ | 1993 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1993/20 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/34 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບຮູບແບບການກະທຳໃນປະຈຸບັນກ່ຽວກັບຂ້າທາດ, ສາຍເຫດ ແລະ ຜົນສະທ້ອນ | 2007 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 6/14 (ສຳລັບ 3ປີ) | | |
| ຊ່ຽວຊານເອກະລາດກ່ຽວກັບສິດແລະຄວາມສາມະຄີສາກົນ | 2005 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2005/55 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/5 (ສຳລັບ 3ປີ) |
| ຊ່ຽວຊານເອກະລາດກ່ຽວກັບຜົນກະທົບຂອງໜີ້ສິນສາກົນ, ແລະ ພັນທະທາງການເງິນສາກົນທີ່ກ່ຽວຂ້ອງຂອງປະເທດທີ່ມີສິດເສລີພາບຢ່າງເຕັມທີ່ໂດຍສະເພາະແມ່ນທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທຳ. | 2000 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2000/82 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/4 (ສຳລັບ 3ປີ) |
| ຊ່ຽວຊານເອກະລາດກ່ຽວກັບບັນຫາພັນທະທາງສິດທິມະນຸດທີ່ກ່ຽວຂ້ອງກັບການມີນ້ຳກິນທີ່ສະ ອາດ ແລະ ປອດໄພ | 2008 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 7/22 (ສຳລັບ 3ປີ) | | |
| ນັກລາຍງານພິເສດກ່ຽວກັບການສົ່ງເສີມແລະປົກປ້ອງສິດໃນເວລາທີ່ເກີດການກໍ່ການຮ້າຍ | 2005 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2005/80 | 2007 | ມະຕິຂອງສະພາສິດທິມະນຸດເລກທີ 6/28 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບການທໍລະມານ ແລະ ການລົງໂທດ ຫຼື ປະຕິບັດທີ່ໄຮ້ມະນຸດສະທຳແລະເຮັດໃຫ້ເຊື່ອມເສຍກຽດສັກສີ | 1985 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1985/33 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 8/8 (ສຳລັບ 3ປີ) |

| ຫົວຂໍ້/ໜ້າທີ່ | ໜ້າທີ່ established | | ໜ້າທີ່ extended | |
|---|---|---|---|---|
| | ໃນປີ | ໂດຍ | ໃນປີ | ໂດຍ |
| ນັກລາຍງານພິເສດກ່ຽວກັບຜົນກະທົບທາງລົບຂອງການເຄື່ອນໄຫວທີ່ຜິດກົດໝາຍແລະການຖິ້ມສິ່ງເສດເຫລືອທີ່ມີສານພິດ, ອັນຕະລາຍ ແລະ ຂອງເສຍຕ່າງໆທີ່ມັນແຕະຕ້ອງເຖິງສິດ ທີຂອງຄົນ | 1995 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1995/81 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 9/1 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບສິດທີ່ກ່ຽວຂ້ອງກັບການຄ້າມະນຸດ, ໂດຍສະເພາະແມ່ນເດັກນ້ອຍ ແລະ ແມ່ຍິງ | 2004 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2004/110 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 8/12 (ສຳລັບ 3ປີ) |
| ຜູ້ແທນພິເສດຂອງເລຂາທິການກ່ຽວກັບສິດທິ ແລະບໍລິສັດຂ້າມຊາດ ແລະ ວິສະຫະກິດອື່ນໆ | 2005 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2005/69 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 8/7 (ສຳລັບ 3ປີ) |
| ນັກລາຍງານພິເສດກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ, ສາຍເຫດ ແລະ ຜົນກະທົບ | 1994 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1994/45 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/24 (ສຳລັບ 3ປີ) |

W

B. ຕາຕະລາງຂອງພາລະໜ້າທີ່ລະດັບປະເທດ

| ຫົວຂໍ້/ໜ້າທີ່ | ໜ້າທີ່ established | | ໜ້າທີ່ extended | |
|---|---|---|---|---|
| | ໃນປີ | ໂດຍ | ໃນປີ | ໂດຍ |
| ຊ່ຽວຊານອິດສະຫລະກ່ຽວກັບສະພາບການຂອງສິດທິມະນຸດໃນປະເທດບູລຣັນດີ | 2004 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2004/82 (ບໍ່ໄດ້ລະບຸອາຍຸການ) | 2008 | ມະຕິຂອງສະພາສິດທິມະນຸດເລກທີ 9/19 (ບໍ່ໄດ້ລະບຸອາຍຸການ) |
| ຜູ້ແທນພິເສດຂອງເລຂາທິການກ່ຽວກັບເພື່ອສິດຂອງຄົນກຳປູເຈຍ | 1993 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1993/6 | 2008 | ມະຕິຂອງສະພາສິດທິມະນຸດເລກທີ resolution 9/15 (ສຳລັບໜຶ່ງປີ) |
| ນັກລາຍງານພິເສດກ່ຽວກັບສະພາບສິດທິມະນຸດໃນສາທາລະນະລັດປະຊາຊົນເກົາຫຼີ | 2004 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2004/13 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/15 |
| ຊ່ຽວຊານເອກະລາດທີ່ໄດ້ຮັບການແຕ່ງຕັ້ງໂດຍເລຂາທິການໃຫຍ່ກ່ຽວກັບສະພາບສິດທິມະນຸດໃນປະເທດໄຮຕີ | 1995 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1995/70 | 2008 | ຖະແຫລງການຂອງສະພາສິດທິມະນຸດເລກທີ A/HCR/PRST/9/1 (ສຳລັບສອງປີ) |
| ນັກລາຍງານພິເສດກ່ຽວກັບສະພາບສິດທິມະນຸດໃນພະມ້າ | 1992 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1992/58 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/32 (ສຳລັບໜຶ່ງປີ) |
| ນັກລາຍງານພິເສດກ່ຽວກັບສະພາບສິດທິມະນຸດໃນເຂດປົກຄອງປາເລສໄຕຕັ້ງແຕ່ປີ 1967 | 1993 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1993/2 A ("ຈົນກ່ວາອິດສະລາເອວຈະຖອນໂຕອອກ") | | |
| ຊ່ຽວຊານເອກະລາດທີ່ໄດ້ຮັບການແຕ່ງຕັ້ງໂດຍເລຂາທິການໃຫຍ່ກ່ຽວກັບສະພາບສິດທິມະນຸດໃນປະເທດໂຊມາເລຍ | 1993 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 1993/86 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 7/35 (ສຳລັບໜຶ່ງປີ) |
| ນັກລາຍງານພິເສດກ່ຽວກັບສະພາບສິດທິມະນຸດໃນປະເທດຊູດານ | 2005 | ມະຕິຂອງຄະນະກຳມາທິການສິດທິມະນຸດເລກທີ 2005/82 | 2008 | ມະຕິຂອງສະພາສິດທິມະນຸດເລກທີ 9/17 (ສຳລັບເກົ້າເດືອນ) |

# VII. ກົນໄກການທົບທວນ

## ພາບລວມຂອງກົນໄກການທົບທວນ

### *ກົນໄກການທົບທວນແມ່ນ ຫຍັງ?*

ກົນໄກການທົບທວນ (UPR) ແມ່ນໄດ້ຮັບການສ້າງຕັ້ງຂື້ນ ຈາກມະຕິເລກທີ 60\251 ຂອງ ສະມັດຊາໃຫຍ່ ແລະ ເປັນອົງ ກອນ ໃໝ່ໃນດ້ານກົນໄກສິດທິມະນຸດ. ການທົບທວນມແມ່ນຈະດຳເນີນໄປ ເປັນໄລຍະຜ່ານທາງຂະບວນການ ຂອງສະພາສິດທິມະນຸດທີ່ທົບທວນ ເບິ່ງການຈັດຕັ້ງປະຕິບັດຕາມສົນທິສັນຍາ ຂອງບັນດາລັດພາຄີໃນ 192 ປະເທດ. UPR ເປັນກົນໄກ ການຮ່ວມມື ແລະ ແນໃສ່ການປະ ຕິບັດໜ້າທີ່ທີ່ບໍ່ໃຫ້ມີການທັບຖົມກັບໜ່ວຍ ງານອື່ນໆເຊັ່ນວຽກງານຂອງ ອົງກອນສິດທິມະນຸດ.

### UPR ເຮັດວຽກແບບໃດ?

ໃນມະຕິເລກທີ 5/1 ຂອງສະພາ ສິດທິມະນຸດແມ່ນໄດ້ກຳນົດ ໄລຍະ ແລະ ຂັ້ນຕອນການດຳເນີນ ງານໄວ້. UPR ແມ່ນຈະດຳເນີນ ງານ ຕາມວາລະໝູນວຽນສີ່ປີ ແລະ ຈະປະ ກອບມີຫລາຍຂັ້ນຕອນເຊັ່ນ:

- ການກະກຽມຂໍ້ມູນທີ່ຈະໄດ້ດຳເ ນີນການທົບທວນເຊັ່ນ: ຂໍ້ມູນ ຂອງທາງພາກລັດ (ບົດລາຍງານ ແຫ່ງຊາດ); ຂໍ້ມູນລວມຂອງ ສປຊ ກ່ຽວກັບລັດພາຄີທີ່ຈະຖືກດຳເນີນ ການທົບທວນເຊິ່ງສຳນັກງານ OHCHR ເປັນຜູ້ກະກຽມຂໍ້ມູນ; ແລະ ບົດສະຫລຸບຂໍ້ມູນຂອງພາກ ສ່ວນຕ່າງໆທີ່ສົ່ງມາໃຫ້ ( ພາກປະ ຊາສັງຄົມ) ແລະ ທາງ OHCHR ກໍ່ແມ່ນເປັນຜູ້ກະກຽມ ຂໍ້ເຊັ່ນກັນ.
- ການດຳເນີນການທົບທວນແມ່ນໄດ້ຈັດຢູ່ໃນນະຄອນເຈນນີວາໂດຍໜ່ວຍງານ UPR ເຊິ່ງປະກອບມີລັດພາຄີຂອງສະພາ ສິດທິມະນຸດຢູ່ 47 ລັດ ແລະ ດຳເນີນການ ສົນທະນາໄປແບບມີສ່ວນຮ່ວມລະຫວ່າງລັດ ພາຄີທີ່ກຳລັງຖືກທົບທວນ ແລະ ລັດສັງເກດ ການຂອງສະພາສິດທິມະນຸດ. ການທົບທວນ ແຕ່ລະຄັ້ງແມ່ນຈະໃຊ້ເວລາຢູ່ສາມອາທິດໃນແຕ່ ລະປີ ແລະ ຈະດຳເນີນການທົບທວນຢູ່ 16 ລັດ ໃນແຕ່ລະຄັ້ງ-ລວມທັງໝົກແມ່ນມີຢູ່ 48 ລັດທີ່ຖືກດຳເນີນການທົບທວນ;
- ໜ່ວຍປະຕິບັດງານໜຶ່ງຈະມີຢູ່ສາມ ນັກລາຍງານ ("troika"), ທີ່ມາ ຈາກລັດສະມາ ຊິກຂອງສະພາສິດທິ ມະນຸດທີ່ໃຫ້ຄວາມສະດວກແກ່ການ ທົບທວນຂອງແຕ່ລະລັດ.
- ການຮັບຮອງຜົນຂອງການທົບທວນ ຂອງປະຕິບັດງານໃນຕອນທ້າຍຂອງການທົ ບທວນ;

ປື້ມຄູ່ມືໃນແບບຟາຍດີຈີຕ້ແມ່ນສາມາດເອົາໄດ້ໃນເວບ: http://www.ohchr.org/civilsocietyhandbook/ ໃນເວບຍັງມີເປັນແຕ່ລະບົດ ແລະ ມີເອກະສານຕ່າງໆໃຫ້ດາວໂລດໄດ້.

- ການພິຈາລະນາຂອງສະພາສິດທິມະນຸດແລະການຮັບຮອງຜົນຂອງການທົບທວນຂອງ UPR ແມ່ນຈະໄດ້ປະຕິບັດໃນກອງປະຊຸມທົບທວນຄັ້ງຕໍ່ໄປຕາມທີ່ເຄີຍປະຕິບັດມາ; ແລະ
- ຕິດຕາມການຈັດຕັ້ງປະຕິບັດຕາມຄຳແນະນຳຈາກການທົບທວນຂອງລັດພາຄີ ແລະ ພາກສ່ວນທີ່ ກ່ຽວຂ້ອງເຊິ່ງລວມມີພາກປະຊາສັງຄົມນຳ.

**ວິທີທີ່ຈະຮ່ວມງານກັບກົນໄກການທົບທວນ**

ມະຕິ 5/1 ໄດ້ໃຫ້ໂອກາດແກ່ພາກສ່ວນຕ່າງໆທີ່ກ່ຽວຂ້ອງເຂົ້າຮ່ວມໃນຂະບວນການໄດ້. ເພາະສະນັ້ນ ການເຂົ້າຮ່ວມຂອງອົງການຈັດຕັ້ງລະຫວ່າງປະເທດ, ສະຖາບັນສິດທິມະ ນຸດ, ແລະ ພາກປະຊາສັງຄົມຕ່າງໆ ເຊິ່ງລວມມີ NGOs, ນັກເຄື່ອນໄຫວສິດທິມະນຸດ, ສະຖາບັນການ ສຶກສາ ແລະ ການຄົ້ນຄ້ວາຕ່າງໆ ຈຶ່ງມີຄວາມສຳຄັນໃນທຸກຂັ້ນຕອນ.

ພາກສ່ວນທີ່ມີສະຖານະເປັນທີ່ປຶກສາໃຫ້ແກ່ສະພາເສດຖະກິດ ແລະ ສັງຄົມນັ້ນແມ່ນຕ້ອງໄດ້ມີສ່ວນຮ່ວມໃນບັນດາກອງປະຊຸມຕ່າງໆ ຂອງ UPR ແລະ ສະພາສິດທິມະ ນຸດ. ເຖິງຢ່າງໃດກໍ່ຕາມພາກປະຊາສັງຄົມແມ່ນອາດຈະປະກອບສ່ວນໃຫ້ແກ່ວຽກງານຂອງ UPR ໄດ້ເຊັ່ນ:

- ເຂົ້າຮ່ວມໃນການປຶກສາຫາລືທີ່ທາງລັດຖະບານເປັນຜູ້ຈັດເພື່ອກະກຽມເຮັດບົດລາຍງານກ່ຽວກັບສະພາບການຂອງສິດທິມະນຸດພາຍໃນປະເທດ;
- ກະກຽມລາຍງານສະພາບການສິດທິມະນຸດຂອງປະເທດທີ່ພວມຢູ່ໃນການທົບທວນເພື່ອປະກອບໃສ່ໃນບົດສະຫລຸບຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງເຊິ່ງ OHCHR ເປັນຜູ້ກະກຽມ ຂໍ້ມູນ. ບົດສະຫລຸບຂອງ OHCHR ແມ່ນຈະໄດ້ຮັບການພິຈາລະນາຈາກໜ່ວຍງານທີ່ປະຕິບັດໜ້າທີ່ ການທົບທວນຢູ່;
- ປະກອບສ່ວນໃນການຕິດຕາມການຈັດຕັ້ງປະຕິບັດຕາມຄຳແນະນຳຂອງກອງປະຊຸມທົບທວນ.

ການດຳເນີນວຽກງານທົບທວນແມ່ນໄດ້ຖືກຖ່າຍທອດສົດທາງເວບໄຊ້ຂອງ OHCHR, ແລະ ມີຂໍ້ມູນເປັນເອກະສານໄວ້ໃຫ້ເບິ່ງໃນເວບ ຂອງ OHCHR ແລະ ໃນເວບສະ ເພາະຂອງ UPR ຂອງສະພາສິດທິ ມະນຸດເຊັ່ນກັນ.

VII

**ຂໍ້ມູນທີ່ສຳຄັນໃນການຕິດຕໍ່ຫາກົນໄກການທົບທວນ**

OHCHR Human Rights Council Branch
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Phone: +41 (0)22 917 92 69
Fax: +41 (0)22 917 90 11

OHCHR Civil Society Unit
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Phone: +41 (0)22 917 90 00
E-mail: civilsocietyunit@ohchr.org

**ກົນໄກການທົບທວນສາກົນເປັນໄລຍະແມ່ນຫຍັງ?**

**ການສ້າງຕັ້ງໜ່ວຍງານທົບທວນສາກົນເປັນໄລຍະ**

**ໜ່ວຍງານທົບທວນສາກົນເປັນໄລຍະ** (UPR) ແມ່ນໄດ້ຮັບການສ້າງຕັ້ງຂຶ້ນໂດຍມະຕິເລກທີ 60\251 ຂອງສະມັດ ຊາໃຫຍ່ລົງວັນທີ 18 ມີຖຸນາ 2006 ແລະ ຖືກຮັບຮອງໂດຍມະຕິ 5/1 ຂອງສະພາສິດທິມະນຸດລົງວັນທີ 18 ມິຖຸນາ 2007. (UPR) ເປັນອົງກອນໃໝ່ໃນດ້ານກົນໄກສິດທິມະນຸດ. ການທົບທວນແມ່ນຈະດຳເນີນໄປເປັນໄລຍະຜ່ານທາງ ຂະບວນການຂອງສະພາສິດທິມະນຸດທີ່ທົບທວນເບິ່ງການຈັດຕັ້ງປະຕິບັດຕາມສົນທິສັນຍາຂອງບັນດາລັດພາຄີໃນ 192 ປະເທດ. UPR ເປັນກົນໄກການຮ່ວມມື ແລະ ແນໃສ່ການປະຕິບັດໜ້າທີ່ທີ່ບໍ່ໃຫ້ມີການທັບຖົມກັບໜ່ວຍງານອື່ນເຊັ່ນວຽກ ງານຂອງອົງກອນສິດທິມະນຸດ.

UPR ຈະດຳເນີນງານຕາມວາລະໝູນວຽນໃນສີ່ປີ ແລະ ມີຂັ້ນຕອນການດຳເນີນງານຫລາຍຢ່າງເຊັ່ນ: ກະກຽມຂໍ້ມູນທີ່ຈະໄດ້ໃຊ້ໃນການດຳເນີນການທົບທວນ, ແລະ ຕິດຕາມການຈັດຕັ້ງປະຕິບັດຂອງລັດພາຄີຕາມຄຳແນະນຳ ແລະ ບົດສະຫລຸບຈາກການທົບທວນ. ການມີສ່ວນຮ່ວມກັບອົງການຈັດຕັ້ງລະ ຫວ່າງປະເທດ, ສະຖາບັນສິດທິມະ ນຸດ, ແລະ ພາກປະຊາສັງຄົມຕ່າງໆເຊິ່ງລວມມີ NGOs, ນັກເຄື່ອນໄຫວສິດທິມະນຸດ, ສະຖາບັນການ ສຶກສາ ແລະ ການຄົ້ນຄ້ວາຕ່າງໆ ແມ່ນມີຄວາມສຳຄັນໃນທຸກຂັ້ນຕອນ.

ບົດສະຫລຸບຂອງ UPR ໃນຮອບທຳອິດ, ສະພາສິດທິມະນຸດອາດຈະດຳເນີນການກວດຄືນດ້ານຮູບແບບ ແລະ ໄລຍະຂອງການທົບທວນວ່າມີຄວາມເໝາະສົມ ແລະ ໄດ້ຮຽນຮູ້ຫຍັງຕື່ມແນ່.

**ຫຼັກການ ແລະ ວັດຖຸປະສົງທີ່ນຳໃຊ້ໃນການທົບທວນ**

ມີຫລາຍໆຫຼັກການທີ່ UPR ນຳໃຊ້ເຂົ້າໃນການດຳເນີນງານ. UPR ຕ້ອງ:

- ສົ່ງເສີມຄວາມເປັນສາກົນ, ການຢູ່ຮ່ວມກັນ, ການເພິ່ງພາເຊິ່ງກັນແລະກັນ, ແລະ ຄວາມກ່ຽວຂ້ອງເຊິ່ງກັນ ແລະກັນຂອງສິດທິມະນຸດ;
- ສ້າງເປັນກົນໄກການຮ່ວມມືທີ່ອີງໃສ່ວັດຖຸປະສົງ ແລະ ຂໍ້ມູນທີ່ມີ ແລະ ເປັນຄູ່ສົນທະນາແບບມີສ່ວນຮ່ວມ;
- ຮັບປະກັນການປະຕິບັດທີ່ທົ່ວເຖິງ ແລະ ເທົ່າທຽມແກ່ທຸກໆລັດ;
- ເປັນຂະບວນການລະຫວ່າງປະເທດ, ເປັນອົງກອນແຫ່ງການຂັບເຄື່ອນແກ່ ສປຊ ແລະ ມີການປັບປຸງຕະຫລອດ;
- ເຂົ້າມີສ່ວນຮ່ວມການດຳເນີນການທົບທວນຢ່າງເຕັມເມັດເຕັມໜ່ວຍ;
- ເປັນອົງກອນເສີມທີ່ບໍ່ເຮັດວຽກທັບຖົມກັບກົນໄກສິດທິມະນຸດອື່ນໆເພື່ອເປັນການເພີ່ມຄຸນຄ່າຂອງອົງກອນຂຶ້ນ;
- ຫ້າວຫັນໃນການດຳເນີນງານທີ່ມີຄວາມໂປ່ງໃສ, ເປັນກາງ, ມີປະສິດທິຜົນ, ບໍ່ເປັນອົງກອນທີ່ກ່ຽວຂ້ອງທາງການເມືອງ;
- ບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ລັດພາຄີຈົນເກີນໄປ ຫຼື ໃຫ້ແກ່ພາລະຂອງສະພາສິດທິມະນຸດ;
- ບໍ່ແກ່ຍາວເວລາດຳເນີນງານຈົນເກີນໄປ; ດຳເນີນງານຕາມຄວາມເປັນຈິງ ແລະ ໃຊ້ເວລາເປັນປະໂຫຍດ, ຢ່າໃຊ້ຊັບພະຍາກອນມະນຸດ ແລະ ງົບປະມານຫລາຍເກີນໄປ;
- ຢ່າເຮັດໃຫ້ບົດບາດຂອງສະພາສິດທິມະນຸດຫລຸດລົງທີ່ມັນກ່ຽວຂ້ອງກັບການແກ້ໄຂບັນຫາທີ່ຮີບດ່ວນ;
- ດຳເນີນການຕາມຄວາມເທົ່າທຽມລະຫວ່າງເພດ;
- ໃສ່ໃຈເລື່ອງລະດັບຂອງການພັດທະນາ ແລະ ຈຸດແຕກຕ່າງຂອງປະເທດຕ່າງໆ; ແລະ
- ຮັບປະກັນໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໄດ້ມີໂອກາດເຂົ້າຮ່ວມໃນວຽກງານໂດຍສະເພາະແມ່ນ NGOs, ປະຕິບັດ ໄປຕາມມະຕິ 60/251 ຂອງສະມັດຊາໃຫຍ່ ແລະ ມະຕິ 1996\31 ຂອງສະພາເສດຖະກິດ ແລະ ສັງຄົມ, ແລະ ບັນດາການຕົກລົງຕ່າງໆຂອງທີ່ສະພາສິດທິມະນຸດໄດ້ໃຫ້ການຕັດສິນໃຈ.

**ວັດຖຸປະສົງຂອງ UPR ແມ່ນມີ:**

- ການປັບປຸງແກ້ໄຂບັນຫາສິດທິມະນຸດໃນພາກສະໜາມ;
- ສ້າງຄວາມສຳເລັດຕາມພັນທະ ແລະ ໜ້າທີ່ທີ່ມີກ່ຽວກັບສິດທິມະນຸດຂອງປະເທດຕ່າງໆ, ແລະ ດຳເນີນການປະເມີນສິ່ງທ້າທາຍ ແລະ ການພັດທະນາທີ່ອາດເປັນໄປໄດ້;
- ຮັກສາຄວາມເຂັ້ມແຂງຂອງລັດພາຄີ ແລະ ການຊ່ວຍເຫລືອທາງວິຊາການ ໂດຍດຳເນີນການປຶກສາຕາມການຍິນຍອມຂອງລັດພາຄີທີ່ກ່ຽວຂ້ອງ;
- ໃຫ້ການແລກປ່ຽນຍຸດທະວິທີກັບບັນດາປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ;
- ໃຫ້ການສະໜັບສະໜູນການຮ່ວມມືເພື່ອສົ່ງເສີມແລະປົກປ້ອງສິດທິມະນຸດ; ແລະ
- ກະຕຸ້ນໃຫ້ມີການຮ່ວມມືຢ່າງເຕັມທີ່ ແລະ ເຂົ້າຮ່ວມງານກັບສະພາສິດທິມະນຸດ, ກັບອົງກອນສິດທິມະນຸດ ແລະ ສຳນັກງານ (OHCHR).

ສອງກົນໄກທາງການເງິນຄືຂະບວນການທົບທວນກອງທຶນສຳຮອງອາສາ ແລະ ກອງທຶນອາສາເພື່ອການຊ່ວຍເຫລືອທາງວິຊາການແລະການເງິນ,[63] ແມ່ນໄດ້ສ້າງຕັ້ງຂຶ້ນເພື່ອອຳນວຍຄວາມສະດວກໃຫ້ແກ່ປະເທດດ້ອຍພັດທະນາ (ປະເທດດ້ອຍພັດທະນາໂດຍສະເພາະ) ໃນການເຂົ້າຮ່ວມໃນກົນໄກຂອງ UPR ແລະ ສະໜັບສະໜູນການຕິດຕາມການຈັດຕັ້ງປະຕິບັດໃນລະດັບປະເທດເປັນຕົ້ນ.

---

63 ເບິ່ງມະຕິຂອງສະພາສິດທິມະນຸດເລກທີ 6/17.

ກົນໄກການທົບທວນແມ່ນເຮັດວຽກແນວໃດ?

## A. ໄລຍະເວລາ, ລະບຽບການ ແລະ ພື້ນຖານຂອງການທົບທວນ

### ໄລຍະເວລາ

UPR ດຳເນີນງານເປັນວົງຈອນສີ່ປີ. ໃນກອງປະຊຸມຄັ້ງທີຫົກ ເດືອນກັນຍາ 2007, ສະພາສິດທິມະນຸດໄດ້ຮັບຮອງເອົາປະຕິທິນການເຮັດວຽກຂອງໜ່ວຍງານທົບທວນເພື່ອທົບທວນທຸກລັດພາຄີຂອງ ສປຊ ໃນຮອບວົງຈອນທຳອິດ.



ຂໍ້ມູນກ່ຽວກັບລຳດັບຂອງລັດທີ່ຖືກທົບທວນໃນຊ່ວງທຳອິດ (2008-2011) ນັ້ນແມ່ນສາມາດເບິ່ງ ໄດ້ເວບຂອງ OHCHR

### ລະບຽບການທົບທວນ

ລັດໃດຈະຖືກທົບທວນກ່ອນໝູ່ນັ້ນແມ່ນໄດ້ກຳນົດໃນລະບຽບການວ່າດ້ວຍຫຼັກການຂອງສາກົນ ແລະ ການປະຕິບັດທີ່ສະເໜີນພາບ. ມະຕິ 5/1 ແມ່ນໄດ້ກຳນົດລັກການລະອຽດກ່ຽວກັບການທົບທວນຄື:

- ທຸກປະເທດໃນໂລກທີ່ເປັນພາຄີແມ່ນຕ້ອງໄດ້ຮັບການທົບທວນໝົດ;
- ພາຄີຊຸດທຳອິດຂອງສະພາຄວາມໝັ້ນຄົງໂດຍສະເພາະແມ່ນກຸ່ມທີ່ໄດ້ຮັບອາຍຸການພຽງໜຶ່ງປີແມ່ນຈະໄດ້ຮັບການທົບທວນກ່ອນໝູ່;
- ສ່ວນປະເທດຕ່າງໆແລະປະເທດຜູ້ສັງເກດການຂອງສະພາສິດທິມະນຸດຕ່າງກໍ່ແມ່ນຈະໄດ້ຮັບການທົບທວນໝົດ; ແລະ
- ການເລືອກເອົາປະເທດທີ່ຈະມາທົບທວນຕາມລຳດັບນັ້ນກໍ່ຕ້ອງໄດ້ຄຳນຶງເຖິງຄວາມເທົ່າທຽມດ້ານພາກພື້ນອີກດ້ວຍ.

### ພື້ນຖານຂອງການທົບທວນ

ແຕ່ລະລັດຈະຖືກກວດສອບບົນພື້ນຖານຂອງ:

- ກົດບັດສະຫະປະຊາຊາດ;
- ຖະແຫຼງການສິດທິມະນຸດ;
- ກົນໄກສິດທິມະນຸດທີ່ເປັນພາຄີ ;
- ຄຳໝັ້ນສັນຍາ ແລະ ຄວາມຍິນຍອມຕາມຄວາມສະມັກໃຈ ເຊິ່ງລວມມີ(ຖ້າກ່ຽວຂ້ອງ) ການຖະແຫລງທີ່ໃຫ້ໄວ້ກ່ອນທີ່ຈະໄດ້ຖືກຄັດເລືອກເຂົ້າມາໃນສະພາສິດທິມະນຸດ; ແລະ
- ການນຳໃຊ້ກົດໝາຍມະນຸດສະທຳສາກົນ

## B. ຂະບວນການທົວທວນ

1. ການບັນທຶກເອກະສານ

   ການກະກຽມເອກະສານເພື່ອການທົບທວນແມ່ນເປັນບາດກ້າວສຳຄັນຂອງການດຳເນີນງານ. ການທົບທວນແມ່ນອີງຕາມຂໍ້ມູນທີ່ມີໃນເອກະສານສາມຢ່າງຄື:

- ຂໍ້ມູນທີ່ລັດພາຄີທີ່ໄດ້ກະກຽມໄວ້;
- ເອກະສານລວມຕ່າງໆຂອງ ສປຊ ທີ່ກຽມການໄວ້ໂດຍ OHCHR;
- ເອກະສານທີ່ທາງພາກສ່ວນຕ່າງໆສົ່ງມາ (OHCHR ຮັບຜິດຊອບກະກຽມ).
  ເອກະສານທັງສາມຢ່າງນີ້ແມ່ນໄດ້ໃຫ້ພາບລວມກ່ຽວກັບສະພາບການສິດທິມະນຸດທີ່ພື້ນເດັ່ນ ແລະ ສອດຄ່ອງກັບວຽກງານການທົບທວນ. ເອກະສານທັງສາມແມ່ນຄວນກຽມໄວ້ຢ່າງໜ້ອຍສາມອາທິດກ່ອນທີ່ຈະມີການດຳເນີນການທົບທວນ, ແລະ ສາມາດເຂົ້າເບິ່ງໄດ້ທີ່ເວບຂອງ OHCHR.

**(a)ຂໍ້ມູນທີ່ລັດພາຄີຕ້ອງໄດ້ກະກຽມ ( ບົດລາຍງານແຫ່ງຊາດ)**

ລັດພາຄີທີ່ກ່ຽວແມ່ນຈະໄດ້ນຳສະເໜີຂໍ້ມູນທີ່ຕົນໄດ້ກະກຽມເພື່ອການທົບທວນ, ຂໍ້ມູນອາດເປັນໃນຮູບແບບບົດລາຍ ງານແຫ່ງຊາດ, ລາຍງານທາງປາກເປົ່າ ແລະ ເປັນລາຍລັກອັກສອນ. ເອກະສານທີ່ສົ່ງມານັ້ນແມ່ນບໍ່ຄວນເກີນ ຊາວໜ້າ. ລັດທີ່ກ່ຽວຂ້ອງນັ້ນຄວນກະກຽມບົດລາຍທີ່ວ່ານັ້ນດ້ວຍວິທີການທີ່ຫລາກຫລາຍເຊິ່ງອາດຈະຈັດໃນຮູບແບບກອງປະຊຸມທີ່ປຶກສາຫາລືກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງເຊັ່ນ ພາກປະຊາສັງຄົມ.

**(b) ຂໍ້ມູນທີ່ລວບລວມຂອງ ສປຊ ເຊິ່ງ OHCHR ເປັນຜູ້ກະກຽມ**

OHCHR ຈະກະກຽມເອກະສານດັ່ງກ່າວແມ່ນບໍ່ໃຫ້ເກີນ 10 ໜ້າ, ຂໍ້ມູນທີ່ລວບລວມນັ້ນແມ່ນຈະມີ ບັນດາບົດລາຍງານ ແລະ ເອກະສານຂອງອົງກອນສິດທິມະນຸດ, ຂອງຂະບວນການພິເສດ, ແລະ ຂອງສຳນັກງານ ຕ່າງໆຂອງ ສປຊ.

**(c) ບົດສະຫລຸບທີ່ສົ່ງມາຈາກພາກສ່ວນຕ່າງໆເຊິ່ງ OHCHR ເປັນຜູ້ກະກຽມ**

OHCHR ຮັບຜິດຊອບກະກຽມເອກະສານບໍ່ໃຫ້ກາຍ 10 ໜ້າຂອງຂໍ້ມູນທີ່ໄດ້ມາຈາກພາກສ່ວນຕ່າງໆທີ່ກ່ຽວ ຂ້ອງກັບ UPR (ມາຈາກສະຖາບັນສິດທິມະນຸດແຫ່ງຊາດ ແລະ ພາກປະຊາສັງຄົມຕ່າງໆ). ຂໍ້ມູນທີ່ສົ່ງມາ ແມ່ນຈະໄດ້ນຳເຂົ້າພິຈາລະນາໃນຂະບວນການທົບທວນ.

**ລະບຽບການທົ່ວໄປສຳລັບການກະກຽມຂໍ້ມູນເພື່ອການທົບທວນ**

ໃນມະຕິຕົກລົງ 6\120, ສະພາສິດທິມະນຸດໄດ້ກຳນົດລະບຽບການທົ່ວໄປຂອງຕົນເພື່ອກຽມຂໍ້ມູນພາຍໄຕ້ UPR. ລະບຽບການທີ່ວ່ານີ້ແມ່ນຈະໄດ້ຖືກນຳໃຊ້ກັບລັດພາຄີ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ, ໂດຍສະເພາະແມ່ນກັບ OHCHR ເພື່ອເປັນການກະກຽມຂໍ້ມູນຕາມພັນທະທີ່ມີ, ແລະ ຂໍ້ມູນທີ່ສົ່ງໃຫ້ຂະບວນການທົບທວນນັ້ນຄວນມີ:

- ລາຍລະອຽດຂອງວິທີການ ແລະ ຂະບວນການປຶກສາຫາລືທີ່ກະກຽມເພື່ອເອົາຂໍ້ມູນ;
- ພື້ນຖານ ແລະ ກອບ (ໂດຍສະເພາະແມ່ນບັນດາກົດເກນຂອງສະຖາບັນ) ເພື່ອການສົ່ງເສີມ ແລະ ປົກປ້ອງສິດທິມະນຸດໃນປະເທດເຊິ່ງລວມມີ: ລັດຖະທຳມະນູນ, ລະບຽບກົດໝາຍ, ມາດຕະການທາງນະໂຍບາຍ, ນິຕິບັນຍັດແຫ່ງຊາດ, ພື້ນຖານໂຄງລ່າງດ້ານສິດທິມະນຸດ (ຕົວຢ່າງ: ສະຖາບັນສິດທິມະນຸດແຫ່ງຊາດ) ແລະ ຂອບເຂດຂອງພັນທະສາກົນທີ່ດຳເນີນໄປຕາມ "ພື້ນຖານຂອງການທົບທວນ" (ເບິ່ງຂໍ້ມູນຂ້າງເທິງ);
- ການປົກປ້ອງ ແລະ ສົ່ງເສີມສິດທິມະນຸດໃນພາກສະໜາມເຊິ່ງລວມມີການຈັດຕັ້ງປະຕິບັດຕາມພັນທະສິດທິມະນຸດສາກົນທີ່ເຫັນວ່າເປັນ "ພື້ນຖານຂອງການທົບທວນ",

VII

ລະບຽບກົດໝາຍແຫ່ງຊາດ ແລະ ບັນດາຄຳໝັ້ນສັນຍາທີ່ໃຫ້ໄວ້, ກິດຈະກຳຂອງສະຖາບັນສິດທິມະນຸດແຫ່ງຊາດ, ຄວາມຕື່ນຕົວຂອງຄົນທົ່ວໄປ, ແລະ ການຮ່ວມມືກັບກົນໄກສິດທິມະນຸດ; ແລະ

- ການຄົ້ນຫາຜົນງານ, ຍຸດທະວິທີ, ສິ່ງທ້າທາຍ, ແລະ ຄວາມສັບສົນວຸ້ນວາຍທີ່ມີ.

**ອະທິບາຍ/ໃຫ້ຂໍ້ມູນກ່ຽວກັບ:**

- ບູລິມະສິດແຫ່ງຊາດທີ່ສຳຄັນ, ການລິເລີ່ມ ແລະ ການໃຫ້ຄຳໝັ້ນສັນຍາວ່າຈະຕັ້ງໃຈຜ່ານຜ່າອຸປະສັກ ແລະ ບັນຫາຕ່າງໆ ພ້ອມທັງຈະປັບປຸງສະພາບສິດທິມະນຸດໃນກາກາສະໜາມ;
- ຄວາມຄາດຫວັງໃນດ້ານການສ້າງຄວາມອາດສາມາດ ແລະ ຖ້າຈຳເປັນກໍ່ຕ້ອງດຳເນີນການຮຽກຮ້ອງການຊ່ວຍເຫລືອທາງວິຊາການ;
- ຂໍ້ມູນອື່ນໆທີ່ເຫັນວ່າມັນກ່ຽວຂ້ອງ; ແລະ
- ໃນລະຫວ່າງການທົບທວນແມ່ນຕ້ອງໄດ້ຕິດຕາມເບິ່ງບົດສະຫລຸບຂອງການທົບທວນທີ່ຜ່ານມາ.

### 2 . ໜ່ວຍງານກ່ຽວກັບການທົບທວນສາກົນເປັນໄລຍະ

- ການທົບທວນລັດພາຄີຕາມຄວາມເປັນຈິງແລ້ວແມ່ນຈະໄດ້ຈັດຢູ່ໜ່ວຍງານຂອງ UPR.

ເປັນປະທານໂດຍທ່ານປະທານສະພາສິດທິມະນຸດ ແລະ ບັນດາລັດພາຄີຂອງສະພາໃນຈຳນວນ 47 ລັດ. ການທົບທວນແຕ່ລະຄັ້ງແມ່ນຈະໃຊ້ເວລາຢູ່ສາມອາທິດໃນແຕ່ລະປີ ແລະ ຈະດຳເນີນການທົບທວນຢູ່ 16 ລັດ ໃນແຕ່ລະອາທິດ-ລວມທັງ ໝົດແມ່ນມີຢູ່ 48 ລັດທີ່ຖືກດຳເນີນການທົບທວນໃນປີໜຶ່ງ. ການເລີ່ມຕົ້ນທຳອິດແມ່ນໃນປີ 2008.

ການທົບທວນແຕ່ລະລັດນັ້ນແມ່ນຈະໃຊ້ເວລາຢູ່ສາມສະໂມງໃນການສົນທະນາລະຫວ່າງລັດທີ່ກ່ຽວຂ້ອງ ແລະ ຄະນະເຊິ່ງລວມມີທັງປະເທດຜູ້ສັງເກດການຂອງສະພາສິດທິມະນຸດ. ໃນລະຫວ່າງການສົນທະນາ, ຄະນະ ແລະ ປະເທດຜູ້ສັງເກດການແມ່ນມີເວລາໜຶ່ງສະໂມງໃນການສອບຖາມລັດທີ່ຖືກທົບທວນນັ້ນ. ອີກດ້ານໜຶ່ງ, ລັດທີ່ຖືກທົບ ທວນນັ້ນແມ່ນມີເວລາໃນ ການນຳສະເໜີຂໍ້ມູນຂອງຕົນນັ້ນໜຶ່ງສະໂມງ, ຫລັງຈາກນັ້ນກໍ່ແມ່ນການຖາມຕອບໃນທີ່ປະຊຸມ ແລະ ຮັບຟັງຄຳແນະນຳ ຈາກຄະນະ ແລະ ຮັບເອົາຜົນຈາກການດຳເນີນການທົບທວນ.[64]

NGOs ທີ່ມີສະຖານະເປັນທີ່ປຶກສາໃຫ້ແກ່ ECOSOC ແມ່ນອາດເຂົ້າຮ່ວມໃນການທົບທວນຂອງ UPR ໄດ້, ແຕ່ວ່າບໍ່ສາມາດຖາມຫຼືອອກຄຳເຫັນໃດໆໃນທີ່ປະຊຸມໄດ້.

ຂໍ້ມູນກ່ຽວກັບວາລະການທົບທວນ ແລະ ຂໍ້ມູນທີ່ສຳລັບ NGOs ແມ່ນສາມາດເບິ່ງໃນເວບຂອງ OHCHR ທີ່ເຊື່ອມຕໍ່ຂໍ້ມູນຂອງ UPR

ພ

ສຳລັບຂໍ້ມູນອັບເດດກ່ຽວກັບສະຖານະການເປັນທີ່ປຶກສາແກ່ ECOSOC ແມ່ນສາມາດເບິ່ງໄດ້ໃນເວບຂອງພະແນກວຽກງານທາງເສດຖະກິດ ແລະ ສັງຄົມຂອງ ສປຊ.

64 ເບິ່ງ "ຮູບແບບການປະຕິບັດໃນຂະບວນການທົບທວນສາກົນ" (A/HCR/PRST/8/1).

## ກຸ່ມ Troikas

ແມ່ນກຸ່ມທີ່ມີນັກລາຍງານຢູ່ສາມທ່ານ (“troika”) ເພື່ອໃຫ້ການອຳນວຍຄວາມສະດວກແກ່ການທົບທວນຂອງ ແຕ່ລະລັດພາຄີ. ໃນແຕ່ລະການທົບທວນກໍ່ຈະມີກຸ່ມ Troikas ປະຈຳໃນຄະນະເຊິ່ງສະມາຊິກຂອງກຸ່ມແມ່ນໄດ້ມາ ຈາກ (ກຸ່ມທີ່ປະຈຳການໃນແຕ່ລະພາກພື້ນຂອງ ສປຊ) ທີ່ໄດ້ຮັບ ການຄັດເລືອກມາຈາກການລົງຄະແນນສຽງຂອງ ລັດພາຄີຂອງສະພາສິດທິມະນຸດ.[65] OHCHR ຈະເປັນຜູ້ໃຫ້ການຊ່ວຍເຫລືອແກ່ສະມາຊິກຂອງ Troikas ໃນການປະຕິບັດໜ້າທີ່. ລັດຕ່າງໆແມ່ນມີໂອກາດທີ່ຈະຍົກຄຳຖາມ/ບັນຫາທີ່ເປັນລາຍລັກອັກສອນ ແລ້ວສົ່ງໃຫ້ລັດທີ່ຖືກທົບທວນນັ້ນລ່ວງ ໜ້າກ່ອນທີ່ຈະເປີດການທົບທວນ. [66] ກຸ່ມ Troikas ແມ່ນມີໜ້າທີ່ຮັບຜິດ ຊອບໃນການຮັບເອົາບັນຫາທີ່ຍົກຂຶ້ນມາແລ້ວດຳເນີນການລວບລວມເອົາໄວ້.[67] ຫລັງຈາກນັ້ນ troika ຈະສົ່ງບັນ ດາບັນຫາທີ່ໄດ້ຮັບນັ້ນໃຫ້ແກ່ກອງເລຂາຂອງ UPR ເພື່ອໃຫ້ດຳເນີນການສົ່ງຕໍ່ໄປໃຫ້ລັດທີ່ຈະຖືກທົບທວນຕໍ່ໄປພາຍ ໃນ 10 ວັນຄ່າລາດສະການກ່ອນເປີດການທົບທວນ. ນອກນີ້ບັນດາບັນຫາທີ່ກ່າວມານີ້ແມ່ນຍັງໄດ້ຖືກສົ່ງໃຫ້ບັນ ດາປະເທດສະມາຊິກ ແລະ ປະເທດຜູ້ສັງເກດການຂອງສະພາສິດທິມະນຸດນຳອີກ.

3. **ເອກະສານສະຫຼຸບຜົນການທົບທວນ**

ຫລັງຈາກໄດ້ດຳເນີນການສົນທະນາແບບຝົດຝົ້ນແລ້ວ, ກຸ່ມ Troikas ທີ່ໄດ້ຮັບມອບໝາຍກໍ່ຈະອຳນວຍຄວາມ ສະດວກໃຫ້ແກ່ການກະກຽມເຮັດເອກະສານສະຫຼຸບຜົນຂອງການທົບທວນ (ບົດລາຍງານ) ໂດຍຮ່ວມມືກັບ ກອງເລຂາ UPR ແລະ ລັດຜູ້ສັງເກດການ. ໜ່ວຍງານທົບທວນກໍ່ຈະໃຫ້ເວລາ 30 ນາທີເພື່ອພິຈາລະນາ ແລະ ຮັບຮອງເອົາຜົນ ຂອງການທົບທວນພາຍໃນ 48 ສະໂມງພາຍຫລັງສຳເລັດການທົບທວນແລ້ວ. ຜົນຂອງການ ທົບທວນຂອງໜ່ວຍງານ ແມ່ນຈະຖືກຮັບຮອງເປັນເອກະສານອ້າງອີງເພື່ອຍັງຈະໃຫ້ໂອກາດແກ່ລັດທີ່ຖືກທົບ ທວນນັ້ນໄດ້ດຳເນີນການກວດກາເບິ່ງຄືນພາຍໃນສອງອາທິດເພື່ອມີຄຳເຫັນຕ່າງໆ.

ເອກະສານຜົນຂອງການທົບທວນແມ່ນມີຂໍ້ສະຫລຸບຂອງຂະບວນການດຳເນີນງານ, ແລະຄຳແນະ ນຳຕ່າງໆ, ເຊິ່ງມັນອາດຈະມີທັງຄຳປະຕິຍານ ແລະ ຄຳໝັ້ນສັນຍາທີ່ຈະຈັດຕັ້ງປະຕິບັດຕາມຂອງລັດທີ່ ກ່ຽວຂ້ອງ.

ແຕ່ລະລັດທີ່ຖືກທົບທວນແມ່ນຈະມີໂອກາດສະແດງຄຳເຫັນວ່າເຫັນດີນຳບົດສະຫລຸບຫລືບໍ່. ການມີຄຳເຫັນແມ່ນສາມາດເຮັດໄດ້ຄື:

- ໃນລະຫວ່າງກອງປະຊຸມທົບທວນ;
- ລະຫວ່າງກອງປະຊຸມທົບທວນ ແລະ ກອງປະຊຸມຂອງສະພາໃນຄັ້ງຕໍ່ໄປ; ຫຼື
- ໃນລະຫວ່າງການພິຈາລະນາຮັບຮອງເອົາຜົນການທົບທວນຈາກສະພາສິດທິມະນຸດ.

---

65 ລັດທີ່ຖືກທົບທວນອາດຈະຮ້ອງຂໍໃຫ້ມີຜູ້ໃດໜຶ່ງຈາກສາມທ່ານໃຫ້ມາແຕ່ພາກພື້ນຂອງຕົນເອງ ແລະ ຮຽກຮ້ອງໃຫ້ມີການສັບປ່ຽນສະມາ ຊິກຂອງ troika ພຽງຄັ້ງດຽວ. ສະມາຊິກຂອງ troika ອາດຈະຂໍຖອນຕົວຈາກການທົບທວນໃດໜຶ່ງກໍໄດ້.

66 ບັນຫາທີ່ຍົກມານັ້ນຈະຖືກສົ່ງໃຫ້ສະມາຊິກຂອງ troika ແລະ ຕ້ອງຮັກສາຂໍ້ມູນທີ່ສົ່ງໃຫ້ຢູ່ໃນກອບຂອງສາມທີ່ມາຂອງເອກະສານ UPR.

67 ເພື່ອປະຕິບັດແນວນັ້ນ troika ຈະຕ້ອງບໍ່ປ່ຽນແປງບັນຫາຕາມທີ່ໄດ້ຮັບມາ ແລະ ຈະຕ້ອງບໍ່ປະເມີນສິ່ງທີ່ໄດ້ນັ້ນ ຫຼື ປະເມີນສະພາບສິດທິມະນຸດຂອງລັດທີ່ຈະຖືກທົບທວນ.

VII

ບັນດາຄໍາແນະນໍາທີ່ໄດ້ຈາກຄະນະແມ່ນຈະຖືວ່າເປັນຜົນທີ່ໄດ້ຈາກທີ່ປະຊຸມ; ສ່ວນຄໍາເຫັນທີ່ທາງຄະນະບໍ່ເຫັນດີໃນທີ່ປະຊຸມກໍ່ຈະໄດ້ຮັບການບັນທຶກໄວ້ ແລະ ບັນທຶກໄວ້ຮ່ວມກັບບັນດາຄໍາເຫັນຕ່າງໆຂອງຄະນະ.

4. ການຮັບຮອງຜົນໃນທີ່ປະຊຸມໂດຍສະພາສິດທິມະນຸດ

ຫລັງຈາກຜົນຂອງການທົບທວນໄດ້ຮັບຮອງຈາກຄະນະຂອງ UPR, ຜົນຂອງການທົບທວນແຕ່ລະລັດແມ່ນຈະໄດ້ ຖືກສົ່ງໄປຫາສະພາສິດທິມະນຸດ. ຕາມປົກກະຕິແລ້ວ ສະພາສິດທິມະນຸດແມ່ນຈະໃຫ້ການຮັບຮອງເອົາຜົນທີ່ສົ່ງມານັ້ນໃນກອງປະຊຸມສາມັນຂອງຄະນະໃນຄັ້ງຕໍ່ໄປ, ການພິຈາລະນາຈະໃຊ້ເວລາຢູ່ປະມານໜຶ່ງສະໂມງຕໍ່ບົດສະຫລຸບຂອງແຕ່ລະປະເທດ.

**ອີງຕາມມະຕິ 5/1, ກ່ອນທີ່ຈະມີການຮັບຮອງເອົາຜົນການທົບທວນແມ່ນ:**

- ປະເທດທີ່ຖືກທົບທວນແມ່ນຈະມີໂອກາດໄດ້ນໍາສະເໜີຄວາມເຫັນຂອງຕົນກ່ຽວກັບບົດສະຫລຸບ/ຄໍາແນະນໍາຈາກ ການທົບທວນ, ກ່ຽວກັບຄໍາປະຕິຍານ ແລະ ຄໍາໝັ້ນສັນຍາທີ່ໃຫ້ໄວ້, ແລະ ຕອບບັນດາຄໍາຖາມ ຫຼື ບັນຫາທີ່ຍົກມາສົນທະນາ ແບບບໍ່ມີມູນຄວາມຈິງ.
- ລັດທີ່ຖືກທົບທວນ ແລະ ຄະນະຂອງສະພາສິດທິມະນຸດແມ່ນຈະມີໂອກາດໄດ້ກ່າວຄໍາເຫັນກ່ຽວກັບຜົນກອງປະຊຸມ; ແລະ
- ພາກສ່ວນອື່ນໆ (NHRIs ແລະ NGOs ທີ່ມີສະຖານະເປັນທີ່ປຶກສາແກ່ ECOSOC) ແມ່ນຈະມີໂອກາດ ໃຫ້ຄໍາຄິດເຫັນຕ່າງໆ.

ໃນເວລາທີ່ຮັບຮອງຜົນການທົບທວນ, ສະພາສິດທິມະນຸດຍັງສາມາດທີ່ຈະລົງຄໍາເຫັນຕື່ມໄດ້ຖ້າຫາກວ່າການຕິດຕາມເບິ່ງການຈັດຕັ້ງປະຕິບັດນັ້ນມີຄວາມຈໍາເປັນ.

**5. ການຕິດຕາມເບິ່ງການຈັດຕັ້ງປະຕິບັດ**

ຜົນ/ຄໍາແນະນໍາຈາກການທົບທວນແມ່ນຈະບັນທຶກໃສ່ໃນເອກະສານສະຫລຸບຜົນທີ່ລັດທີ່ຖືກທົບທວນນັ້ນບໍ່ໄດ້ມີຄໍາເຫັນຂັດຄ້ານແລ້ວແມ່ນຖືວ່າເປັນພື້ນຖານທີ່ UPR ຈະໄດ້ດໍາເນີນການຕິດຕາມຕໍ່ໄປ.

ສະຫລຸບການທົບທວນທີ່ວ່ານີ້ແມ່ນເປັນພັນທະຂອງລັດທີ່ຖືກທົບທວນຕ້ອງໄດ້ນໍາໄປຈັດຕັ້ງປະຕິບັດ (ທີ່ມີທັງບົດສະຫລຸບ, ຄໍາແນະນໍາ, ການປະຕິຍານ ແລະ ຄໍາໝັ້ນສັນຍາ); ເຖິງຢ່າງໃດກໍ່ດີ ມະຕິ 5/1 ກໍານົດວ່າພາກສ່ວນຕ່າງໆທີ່ກ່ຽວຂ້ອງເຊິ່ງລວມມີພາກປະຊາສັງຄົມແມ່ນມີບົດໃນຂະບວນການຈັດຕັ້ງປະຕິບັດ. ສະມາຄົມລະຫວ່າງປະເທດແມ່ນມີບົດບາດໃນການຊ່ວຍລັດຕ່າງໆຈັດຕັ້ງປະຕິບັດຕາມບົດສະຫລຸບໂດຍສະເພາະແມ່ນການສ້າງຄວາມອາດສາມາດ ແລະ ການຊ່ວຍເຫລືອທາງວິຊາການ. ການຊ່ວຍເຫຼືອດັ່ງກ່າວແມ່ນຕ້ອງໄດ້ຜ່ານການປຶກສາຫາລື ແລະ ການຍິນຍອມຈາລັດທີ່ກ່ຽວຂ້ອງ.

ພາຍຫລັງທີ່ຜ່ານຂະບວນການທົບທວນຄັ້ງທີ່ຜ່ານມາແລ້ວ, ການທົບທວນຄັ້ງຕໍ່ໄປກໍ່ແມ່ນຈະເນັ້ນບັນຫາທີ່ໄດ້ສະຫລຸບຈາກຄັ້ງທີ່ຜ່ານມາວ່າມີການປະຕິບັດຕາມແນວໃດແນ່ແລ້ວ. ສຸດທ້າຍ ຖ້າຫາກບໍ່ມີຫຍັງຄືບໜ້າ, ທາງສະພາສິດທິມະນຸດອາດຈະປະກາດ ຫຼື ອອກຖະແຫລງວ່າລັດດັ່ງກ່າວແມ່ນບໍ່ໄດ້ປະຕິບັດຕາມຄໍາແນະນໍາ ຂອງ UPR ທັງໆທີ່ທາງ UPR ໄດ້ເຮັດທຸກຢ່າງໃນການຊ່ວຍເຫລືອແລ້ວ.

## ຂະບວນການຂອງ UPR

# ວົງຈອນສີ່ປີ

A. ການກຸງມຂໍ້ມູນໃຫ້ແກ່ການທົບທວນ ລວມມີ:
* ຂໍ້ມູນຈາກພາກລັດ,
ລວມມີຂໍ້ມູນທີ່ມາຈາກຈັດກອງປະຊຸມປຶກສາຫາລື (ບົດລາຍງານແຫ່ງຊາດ)
* OHCHR ຈະລວບລວມຂໍ້ມູນຂອງ ສປຊ
* ຂໍ້ມູນທີ່ສົ່ງມາຈາກພາກສ່ວນຕ່າງໆ (ກະກຸງມໂດຍ OHCHR)

B. ໜ່ວຍງານຂອງ UPR
• ປີໜຶ່ງຈະຈັດ ເປີນການທົບທວນສາມເທື່ອ, ເທື່ອລະສອງອາທິດ; ມີ 16 ປະເທດຖືກທົບທວນ (ທັງໝົດມີ 48 ປະເທດຖືກປະເມີນ)
• ຄື ເປີນການສົນທະນາແບບຝົດຝື້ນກັບລັດທີ່ຖືກທົບທວນ
• ຮັບຮອງຜົນສະຫລຸບຕາມປະຊາມັກຕິທີ່ມີຄໍາ ແນະນໍາ, ຂໍ້ສະຫລຸບ ແລະ ຄໍາໜັ້ນສັນຍາແບບສະມັກໃຈ
• ລັດທີ່ຖືກທົບທວນສາມາດສະແດງເຈດຈໍານົງທີ່ຈະຮັບ ຫຼືບໍ່ຮັບຕາມຂໍ້ສະຫລຸບ

C.
ກອງປະຊຸມສາມັນຂອງສະພາສິດທິມະນຸດ
*
ສະພາຈະພິຈາລະນາບົດສະຫລຸບແຕ່ລະ ຢ່າງແມ່ນໜຶ່ງສະໂມງ
* ລັດທີ່ຖືກທົບທວນ, ຄະນະຂອງສະພາ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆແມ່ນມີໂອກາດທີ່ຈະສະແດງຄໍາຄິດເຫັນກ່ອນ

D. ການຈັດຕັ້ງປະຕິບັດຕາມບົດສະຫລຸບ
* ເປັນຄວາມຮັບຜິດຊອບຂອງລັດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ
* ສະມາຄົມສາກົນຈະໃຫ້ການຊ່ວຍເຫຼືອແກ່ການສ້າງຄວາມອາດສາມາດ ແລະ ຊ່ວຍດ້ານວິຊາການ
* ສະພາສິດທິມະນຸດ, ພາຍລັງທີ່ໄດ້ເຮັດທຸວິທີທາງແລ້ວ, ສາມາດ ປະກາດວ່າລັດດັ່ງກ່າວແມ່ນບໍ່ໄດ້ປະຕິບັດ ຕາມ UPR

## ວິທີເຂົ້າຮ່ວມງານກັບກົນໄກທົບທວນສາກົນ

ພາກປະຊາສັງຄົງມີບົດບາດສຳຄັນໃນການປະກອບສ່ວນໃນແຕ່ລະຂັ້ນຕອນດຳເນີນງານຂອງ UPR-ໃນການກະກຽມສົ່ງ ຂໍ້ມູນເພື່ອການທົບທວນ, ເຂົ້າຮ່ວມການທົບທວນ, ແລະ ຊ່ວຍຕິດຕາມການຈັດຕັ້ງປະຕິບັດຕາມຂໍ້ສະຫຼຸບແລະຄຳແນະນຳ ຂອງ UPR.

### A. ດຳເນີນງານຮ່ວມກັບລັດຖະບານເພື່ອກຽມບົດລາຍງານແຫ່ງຊາດ

ມະຕິ 5\1 ໄດ້ຮຽກຮ້ອງໃຫ້ລັດຕ່າງໆດຳເນີນການກະກຽມຂໍ້ມູນທີ່ຈະສົ່ງໃຫ້ຂະບວນການທົບທວນໂດຍມີການຈັດຜ່ານຂະ ບວນການປຶກສາຫາລືກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ. ຜູ້ມີສ່ວນຮ່ວມອາດເປັນ NHRIs, ຜູ້ແທນ ພາກປະຊາສັງຄົມເຊັ່ນ: NGOs, ນັກເຄື່ອນໄຫວສິດທິມະນຸດ, ສະຖາບັນການສຶກສາ ແລະ ການຄົ້ນຄ້ວາຕ່າງໆ.

ບົດຮຽນຂອງ UPR ໃນປະຈຸບັນແມ່ນໄດ້ມີຕົວຢ່າງຫລາຍໆຢ່າງຂອງ "ຍຸດທະວິທີ" ສຳລັບພາກປະຊາສັງຄົມ ແລະ ລັດຖະບານທີ່ກ່ຽວກັບການກຽມບົດລາຍງາຍແຫ່ງຊາດ.

ການປະກອບສ່ວນໃຫ້ແກ່ການກະກຽມຂໍ້ມູນໃນປະເທດ (ບົດລາຍງານແຫ່ງຊາດ)

ໃນການກ້າວເຂົ້າສູ່ຂະບວນການທົບທວນຂອງສະວິດເຊີແລນໃນທີ່ປະຊຸມຄັ້ງທີສອງຂອງຄະນະ UPR ໃນປີ 2008, ທີມງານຂອງ NGOs ໃນຈຳນວນ 32 ອົງການໄດ້ປະຊຸມກັນເພື່ອຮ່ວມມືໃນການກະກຽມສົ່ງລາຍງານຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ. ສາມອົງການ NGOs ແມ່ນເປັນຜູ້ປະສານງານ (Amnesty International - Swiss section, Humanrights.ch ແລະ CODAP), ອົງການ "NGO Coalition"ແມ່ນກະກຽມສົ່ງຮ່າງຂໍ້ມູນສະບັບແລກໃຫ້ແກ່ລັດຖະບານສະວິສ. ລັດຖະບານສະຫະພັນສະວິສກໍໄດ້ສົ່ງຮ່າງສະບັບດັ່ງກ່າວໃຫ້ UPR ກັບອົງການ NGO Coalition ແລະ ກໍ່ໄດ້ເຊີນສະມາຊິກຂອງອົງການດັ່ງກ່າວເຂົ້າຮ່ວມປະຊຸມປຶກສາຫາລືກັບລັດຖະບານ. ໃນທີ່ປະຊຸມ, ອົງການ Coalition ກໍ່ໄດ້ໃຫ້ຄຳຄິດເຫັນທີ່ມີປະໂຫຍດກ່ຽວກັບຮ່າງບົດລາຍງານຂອງລັດຖະບານ ແລະ ໄດ້ນຳສະເໜີຂໍ້ແນະນຳຕ່າງໆໄປນຳ. ຫລາຍໆຂໍ້ຄິດເຫັນຂອງ Coalition ແມ່ນໄດ້ເອົາເຂົ້າໃສ່ຮ່າງສະບັບແທ້ຂອງບົດລາຍງານແຫ່ງຊາດທີ່ຈະຖືກສົ່ງໃຫ້ UPR, ທາງພາກລັດເອງກໍແມ່ນ ໄດ້ເສຍສະຫລະເວລາໂດຍ ເອົາພາກສ່ວນໃດໜຶ່ງຂອງບົດລາຍງານມາດຳເນີນການຄົ້ນຄ້ວາເພື່ອຊອກຫາວິທີການແກ້ໄຂກັບບັນຫາທີ່ຖືກຍົກຂື້ນມາຈາກ Coalition.

### B. ການສົ່ງຂໍ້ມູນຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ

ອີງຕາມມະຕິ 5\1, ພາກສ່ວນຕ່າງໆທີ່ກ່ຽວຂ້ອງຍັງໄດ້ຮັບການເຊີນໃຫ້ສົ່ງຂໍ້ມູນກ່ຽວກັບລັດທີ່ກຳລັງຖືກທົບທວນເພື່ອເປັນການປະກອບສ່ວນໃສ່ບົດລາຍງານຂອງໜ່ວຍງານຕ່າງໆທີ່ສຳນັກງານ OHCHR ເປັນຜູ້ລວບລວມ. ການລວບລວມນີ້ຖືວ່າເປັນໜຶ່ງໃນສາມແຫລ່ງຂໍ້ມູນທີ່ຈະຖືກນຳໃຊ້ເຂົ້າໃນຂະບວນການທົບທວນ.

ຂໍ້ມູນຈາກພາກສ່ວນຕ່າງໆຄວນມີຄວາມເຊື່ອຖືໄດ້ ແລະ ມີມູນຄວາມຈິງກ່ຽວກັບລັດທີ່ຖືກທົບທວນ.

OHCHR ແມ່ນຈະເປັນຜູ້ລວບລວມເອົາບັນດາເອກະສານຂໍ້ມູນຕ່າງໆທີ່ໄດ້ມາຈາກພາກສ່ວນທີ່ກ່ຽວຂ້ອງໄວ້ເປັນ ຊຸດເອກະສານຂໍ້ມູນອັນດຽວ. ເອກະສານຂໍ້ມູນທີ່ວ່າແມ່ນສາມາດເບິ່ງໄດ້ໃນເວບຂອງ OHCHR.

ການກະກຽມສົ່ງຂໍ້ມູນຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆໃຫ້ແກ່ OHCHR

ໜ່ວຍງານສິດທິມະນຸດ (HRWG) - ໃນປະເທດອິນໂດເນເຊຍແມ່ນເປັນໜ່ວຍງານທີ່ເຕົ້າໂຮມບັນດາອົງການສິດທິມະນຸດແຫ່ງປະເທດອິນໂດເນເຊຍ, ເປັນອົງການທີ່ສົ່ງ ຂໍ້ມູນໃຫ້ແກ່ຂະບວນການທົບທວນ ຂອງ UPR ເພື່ອໃຊ້ໃນການທົບທວນປະເທດອິນໂດນເນເຊໃນກອງປະຊຸມທົບທວນຄັ້ງທີ່ໜຶ່ງໃນເດືອນ ເມສາ 2008.
ໃນການກຽມສົ່ງຂໍ້ມູນນັ້ນ HRWG ກໍ່ໄດ້ດຳເນີນການຈັດຂະບວນການເກັບຂໍ້ມູນຕັ້ງແຕ່ຂັ້ນຮາກຖານໂດຍໄດ້ເຊີນບັນດາ NGOs ພາຍໃນທີ່ຮູ້ບັນຫາສຳຄັນເພື່ອໃຊ້ໃນການສົນທະນາກັບກົນໄກ UPR ແລະ ເພື່ອພັດທະນາສາລະບານ ແລະໂຄງສ້າງຂອງເອກະສານຂໍ້ມູນທີ່ຈະສົ່ງ. ຫລັງຈາກແລ້ວກອງປະຊຸມແຕ່ລະ NGO ກໍ່ໄດ້ຮັບມອບ ໝາຍໃຫ້ຮັບພິຊອບກະກຽມຂໍ້ມູນທີ່ຕົນເອງຖະນັດ, ໃນຄະນະທີ່ HRWG ຮັບພິຊອບໃນການສົ່ງຂໍ້ມູນໃຫ້ກອງເລຂາ OHCHR UPR. (HRWG)ປະເທດອິນໂດເນເຊຍຍັງຮ່ວມມືກັບ Komnas HAM, ສະຖາບັນສິດທິມະນຸດແຫ່ງຊາດອິນໂດເນເຊຍ, ແລະ ໄດ້ເຂົ້າຮ່ວມສົນທະນາກັບກະຊວງການຕ່າງປະເທດອິນໂດເນເຊຍ ໃນການກຽມສົ່ງຂໍ້ມູນຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

**ຮູບແບບເອກະສານທີ່ຈະສົ່ງ**

*ພາກສ່ວນຕ່າງໆແມ່ນໄດ້ຮັບການເຊີນໃຫ້ສົ່ງຂໍ້ມູນແກ່ OHCHR:*

- ຄວນເຮັດໄປຕາມໂຄງສ້າງຂອງລະບຽບການທົ່ວໄປສຳລັບການກະກຽມຂໍ້ມູນພາຍໃຕ້ UPR

ທີ່ໄດ້ກຳນົດໃນມະຕິຕົກລົງເລກທີ 6\102 (ເບິ່ງຂໍ້ມູນໃນພາກທີ່ແລ້ວ);

- ບໍ່ໃຫ້ກາຍ 5 ໜ້າ ຫຼື ໃນກໍລະນີທີ່ມີຂໍ້ມູນທີ່ມາຈາກຫລາຍໆພາກສ່ວນກໍ່ແມ່ນບໍ່ໃຫ້ກາຍສິບໜ້າ;
- ຂໍ້ມູນຕ້ອງຢູ່ໃນກອບຂອງສີ່ປີ;
- ຂຽນເປັນພາສາທາງການຂອງ ສປຊ, ອັງກິດ ຫຼືວ່າ ຝຣັ່ງ;
- ຂຽນບັນຍາຍວັດຖຸປະສົງ ແລະ ເຫດຜົນໃນການສົ່ງຂໍ້ມູນສັ້ນໆຈັກໜຶ່ງວັກ;
- ສົ່ງເປັນຟາຍເວີດທຳມະນາທີ່ມີວັກ ແລະ ໜ້າເອກະສານ;
- ມີບົດນຳທີ່ຂຽນສະຫລຸບທຸກຢ່າງທີ່ສຳຄັນ;

- ອະທິບາຍຄຳສັບທີ່ສຳຄັນ ແລະ ກ່ຽວຂ້ອງກັບຂໍ້ມູນ (ເຊັ່ນວ່າ ຄວາມຮຸນແຮງພາຍໃນ);
- ຢ່າປະເມີນຂໍ້ມູນ ແລະ ໃຫ້ຄຳຄິດເຫັນຕ່າງໆເພື່ອສະຫລຸບສິ່ງໃຫ້ອົງກອນສິດທະມະນຸດ ຫຼື ສິ່ງໃຫ້ແກ່ຂະບວນການພິເສດຂອງສະພາສິດທິມະນຸດ, ເຖິງວ່າຂໍ້ມູນນັ້ນຈະກ່ຽວຂ້ອງກັບການຈັດຕັ້ງປະຕິບັດກໍ່ຕາມ;68 ແລະ
  - ຫຼີກຫຼ່ຽງການອ້າງອີງ ຫຼື ເອົາຂໍ້ມູນຈາກພາກສ່ວນອື່ນໆ.

ສິ່ງທີ່ຄວນປະຕິບັດ:

- ຫ້າມສົ່ງຂໍ້ມູນກາຍຫ້າ ຫຼື ສິບໜ້າ;
- ຂໍ້ມູນທີ່ສົ່ງແມ່ນຕ້ອງເປັນທັກພາສາທາງການຂອງ ສປຊ, ການໃຊ້ພາສາອື່ນແມ່ນຈະບໍ່ໄດ້ຮັບການພິຈາລະນາຂໍ້ມູນ;
- ຕ້ອງສົ່ງພາຍເວລາທີ່ກຳນົດໃຫ້;
- ຫ້າມໃຊ້ຄຳສັບທີ່ບໍ່ເໝາະສົມ (ຍຸແຍ່ສ້າງຄວາມຮຸນແຮງ, ໃຊ້ພາສາທີ່ເປັນການແບ່ງແຍກເປັນຕົ້ນ)

ພາກປະຊາສັງຄົມແມ່ນຄວນສຶກສາຂໍ້ມູນເປັນປະຈຳທີ່ກ່ຽວກັບວຽກງານຂອງ UPR ໃນເວບຂອງ OHCHR ເພື່ອຮັບຮູ້ກຳນົດເວລາ ແລະ ລະບຽບໃນການສົ່ງຂໍ້ມູນ. ພາກສ່ວນອື່ນໆທີ່ກ່ຽວຂ້ອງແມ່ນຄວນສົ່ງຂໍ້ມູນໃຫ້ແກ່ OHCHR ລ່ວງໜ້າເຈັດເດືອນກ່ອນກອງປະຊຸມທົບທວນຈະເລີ່ມ.



ພາກປະຊາສັງຄົມທີ່ຢາກສົ່ງຂໍ້ມູນ ແລະ ປະກອບສ່ວນໃນໃສ່ໃນເອກະສານຂອງພາກສ່ວນຕ່າງໆທີ່ OHCHR ເປັນຜູ້ລວບລວມນັ້ນແມ່ນສາມາດ ຕິດຕໍ່ UPR ຕາມ UPRsubmissions@ohchr.org.

ພາກປະຊາສັງຄົມບໍ່ຄວນສົ່ງຂໍ້ມູນທາງແຟກ ຫຼື ທາງໄປສະນີໃຫ້ແກ່ກອງເລຂາ OHCHR, ແຕ່ຖ້າມີບັນຫາທາງອີເມວແມ່ນສາມາດສົ່ງທາງແຟກກໍ່ໄດ້ໄປຫາເບີ **+41 (0)22 917 90 11**.

ນອກນີ້ພາກປະຊາສັງຄົມຄວນສຶກສາຕາມລະບຽບການທາງວິຊາການເພື່ອສົ່ງຂໍ້ມູນຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

### C. ການເຂົ້າຮ່ວມກອງປະຊຸມຂອງໜ່ວຍງານ UPR

NGOs ທີ່ມີສະຖານະເປັນທີ່ປຶກສາໃຫ້ແກ່ ECOSOC ທີ່ໄດ້ຮັບອານຸມັດ ແລະ ເຂົ້າຮ່ວມກອງປະຊຸມແມ່ນບໍ່ສາມາດອອກຄຳເຫັນໃດໝໃນທີ່ປະຊຸມໄດ້.

ຂໍ້ມູນກ່ຽວກັບສິດທີ່ຈະໄດ້ຮັບອານຸມັດເຂົ້າຮ່ວມກອງປະຊຸມນັ້ນແມ່ນສາມາດເບິ່ງໄດ້ທີ່ເວບຂອງ OHCHR



M

68 ການສັງເກດການ ແລະ ຄຳເຫັນຂອງອົງກອນສິດທິມະນຸດ ແລະ ຂະບວນການພິເສດແມ່ນຈະໄດ້ເອົາເຂົ້າໃສ່ເອກະສານລວບລວມຂອງ ສປຊ ທີ່ກະກຽມໂດຍ OHCHR.

**ກອງປະຊຸມເພື່ອຂໍ້ມູນຂ່າວສານ**

NGOs ທີ່ມີສະຖານະເປັນທີ່ປຶກສາໃຫ້ແກ່ ECOSOC ທີ່ໄດ້ຮັບອານຸມັດໃຫ້ເຂົ້າຮ່ວມກອງປະຊຸມຂອງໜ່ວຍງານ UPR ແມ່ນສາມາດຈັດກອງປະຊຸມກ່ຽວກັບຂໍ້ມູນແລະຂ່າວສານໃນລະຫວ່າງທີ່ກອງປະຊຸມພວມດຳເນີນຢູ່. NGOs ທີ່ສົນໃຈຈະຈັດກອງປະຊຸມດັ່ງກ່າວແມ່ນສາມາດຂໍອານຸຍາດນຳກອງເລຂາ UPR.

**D. ການເຂົ້າຮ່ວມກອງປະຊຸມຂອງສະພາສິດທິມະນຸດ**

NGOs ທີ່ມີສະຖານະເປັນທີ່ປຶກສາໃຫ້ແກ່ ECOSOC ແມ່ນສາມາດເຂົ້າຮ່ວມກອງຊຸມສາມັນຂອງສະພາສິດທິມະນຸດກ່ຽວກັບການພິຈາລະນາຮັບຮອງເອົາຂໍ້ສະຫລຸບຜົນຂອງການທົບທວນ.

NGOs ທີ່ມີສະຖານະເປັນທີ່ປຶກສາໃຫ້ແກ່ ECOSOC ແມ່ນມີໂອກາດທີ່ຈະອອກກຄຳເຫັນທົ່ວໄປໃນທີ່ປະຊຸມກ່ອນທີ່ສະພາສິດທິມະນຸດຈະຮັບຮອງເອົາຜົນຂອງການທົບທວນນັ້ນ.

ຂໍ້ມູນກ່ຽວກັບສິດທີ່ຈະໄດ້ເຂົ້າຮ່ວມປະຊຸມນຳສະພາສິດທິມະນຸດນັ້ນແມ່ນສາມາດເບິ່ງໄດ້ໃນບົດທີ V (ສະພາສິດທິມະນຸດ) ຂອງປຶ້ມຄູ່ມືນີ້.

**E. ການຕິດຕາມການຈັດຕັ້ງປະຕິບັດຕາມຜົນຂອງກອງປະຊຸມທົບທວນ**

ມະຕິ 5\1 ກຳນົດວ່າລັດທີ່ຖືກທົບທວນນັ້ນແມ່ນມີພັນທະທີ່ຕ້ອງໄດ້ປະຕິບັດຕາມຄຳແນະນຳ (ບົດສະຫຼຸບ ແລະ ຄຳເຫັນແນະນຳ, ຄຳໝັ້ນສັນຍາ ແລະ ຄຳປະຕິຍານຕົນ). ມະຕິ 5\1 ຍັງກຳນົດວ່າບັນດາພາກສ່ວນທີ່ກ່ຽວຂ້ອງອື່ນໆລວມມີພາກປະຊາສັງຄົມນັ້ນແມ່ນມີບົດບາດສຳຄັນຕໍ່ຂະບວນການຈັດຕັ້ງປະຕິບັດທີ່ກ່າວມານີ້.

ພາກປະຊາສັງຄົມເຊິ່ງລວມມີ NGOs, ສະຖາບັນການສຶກສາ, ສື່ມວນຊົນ, ກຳມະບານ, ແລະ ກຸ່ມວິຊາຊີບຕ່າງໆແມ່ນສາມາດຊ່ວຍເຮັດໜ້າທີ່ໃນການຕິດຕາມການຈັດຕັ້ງປະຕິບັດທີ່ກ່າວມານັ້ນໄດ້ເຊັ່ນ:

- ເຮັດວຽກຮ່ວມກັບສະຖາບັນແຫ່ງຊາດຕ່າງໆ (ລັດຖະບານ, ສະພາ, ອົງການຕຸລາການ ແລະ NHRIs)ເພື່ອຊ່ວຍພາກລັດຖະບານໃຫ້ສາມາດປະຕິບັດໄປຕາມພັນທະທີ່ມີ; ພາກປະຊາສັງຄົມແມ່ນເຮັດໜ້າທີ່ເປັນໂຕສຳຄັນໃນການສົ່ງເສີມການປະຕິຮູບດ້ານກົດໝາຍແຫ່ງຊາດ ແລະ ພັດທະນານະໂຍບາຍຕ່າງໆ. ນອກນັ້ນບົດສະຫລຸບຂອງກອງປະຊຸມທົບທວນຍັງສາມາກນຳເອົາມາເປັນພື້ນຖານ ໃນການສົນທະນາກັບລັດຖະບານ ແລະ ນຳໄປໃຊ້ປັບປຸງວຽກງານຂອງພາກປະຊາສັງຄົມໄດ້ນຳ.
- ກວດກາສະພາບສິດທິມະນຸດ ແລະ ນຳໃຊ້ວິທີການຕ່າງໆເຂົ້າໃນຂະບວນການການຈັດຕັ້ງປະຕິບັດຕາມ UPR;
- ສ້າງຄວາມຕື່ນຕົວຮັບຮູ້ກ່ຽວກັບ UPR, ລັດທີ່ຖືກປະເມີນນັ້ນຕ້ອງໄດ້ນຳເອົາຜົນການເມີນໄປຈັດຕັ້ງປະຕິບັດ ແລະ ພັດທະນາກົນໄກສິດທິມະນຸດພາຍໃນໃຫ້ເຂັ້ມແຂງ. ການດຳເນີນການທີ່ວ່ານີ້ແມ່ນສາມາດຈັດການປະຊຸມ ປຶກສາຫາລື, ກອງປະຊຸມໂຕະມົນ, ແລະ ການສຳມະນາຕ່າງໆ, ຫຼື ດຳເນີນການແປຜົນການທົບທວນນັ້ນເປັນພາສາຂອງຕົນແລ້ວຈັດພິມເຜີຍແຜ່, ຫຼື ປະສານງານຮ່ວມມືກັບ NHRI ແລະ ສື່ມວນຊົນ ຫຼື ໃຊ້ວິທີການຕ່າງໆທີ່ສາມາດສ້າງຄວາມຕື່ນຕົວຮັບຮູ້ກ່ຽວກັບຜົນຂອງກອງປະຊຸມ UPR ໃຫ້ທາງສາທາລະນະໄດ້ຮັບຊາບ.

- ມີສ່ວນຮ່ວມກັບສະຖາບັນແຫ່ງຊາດຕ່າງໆເພື່ອກະກຽມຂໍ້ມູນໃຫ້ແກ່ການທົບທວນຄັ້ງຕໍ່ໄປ;
- ປະສານງານກັບພາກປະຊາສັງຄົມໃນການກະກຽມສິ່ງຂໍ້ມູນໃຫ້ແກ່ OHCHR ທີ່ກ່ຽວກັບການຕິດຕາມການຈັດຕັ້ງປະຕິບັດຜົນກອງປະຊຸມ UPR.

**ການຕິດຕາມການຈັດຕັ້ງປະຕິບັດບົດສະຫລຸບຂອງ UPR**

*ຕິດຕາມການຈັດຕັ້ງປະຕິບັດຜົນການທົບທວນທີ່ຮັບຮອງໂດຍໜ່ວຍງານ UPR*

ພາຍຫລັງການທົບທວນ ແລະ ຮັບຮອງບົດສະຫລຸບການທົບທວນກ່ຽວກັບປະເທດບຣາຊິວ, ໃນປີ 2008 ອົງການ Conectas ທີ່ເປັນອົງການສິດທິມະນຸດໃນບຣາຊິວແມ່ນໄດ້ດຳເນີນການຄື:

- ເອົາບົດສະຫຼູບດັ່ງກ່າວທີ່ມີທັງຄຳແນະນຳ ແລະ ບັນດາຄຳປະຕິຍານມາແປເປັນພາສາປໍຕູເກດ
- ວິເຄາະເນື້ອໃນຂອງບົດທົບທວນທີ່ທາງລັດຖະບານບຣາຊິວໄດ້ຮັບຮູ້ເຖິງຄວາມສຳຄັນ, ແລະ ອົງການ Conectas ຍັງໄດ້ໃຫ້ຄຳເຫັນທາງປາກເປົ່າໃນທີ່ປະຊຸມທົບທວນຂອງສະພາສິດທິມະນຸດຄັ້ງທີແປດອີກດ້ວຍ.
- ໃຫ້ການຮ່ວມມືກັບມະສາ ຄົມ NGOs ແຫ່ງປະເທດ ບຣາຊິວ (Comitê Brasileiro de Direitos Humanos e Política Externa), ອົງການ Conectas ໄດ້ຈັດການສົນທະນາກ່ຽວກັບຂະບວນການຂອງ UPR ຮ່ວມກັບຄະນະກຳມາທິການ ສິດທິມະນຸດຂອງສະພາແຫ່ງ ຊາດບຣາຊິວ. ບັນດາພາບວີດີໂອທີ່ອອນລາຍໃນເວບກ່ຽວກັບການທົບທວນປະເທດບຣາຊິວແມ່ນຖືກນຳມາສາຍໃຫ້ເບິ່ງໃນ ທີ່ປະຊຸມ.

ການຕິດຕາມການຈັດຕັ້ງປະຕິບັດຕາມ**ບົດລາຍງານ**ຂອງ UPR ທີ່ໄດ້ຮັບຮອງເອົາໂດຍສະພາສິດທິມະນຸດ.

ຕັ້ງແຕ່ສະພາສິດທິມະນຸດໄດ້ຮັບຮອງເອົາບົດສະຫລຸບການທົບທວນຂອງປະເທດບຣາຊິວ, ອົງການ Conectas ກໍ່ໄດ້:

- ດຳເນີນການຕິດຕາມການປະຕິບັດຕາມ**ບົດລາຍງານ**ຂອງ UPR ແລະ ການໃຫ້ຄຳປະຕິຍານທີ່ຈະປະຕິບັດຕາມດ້ວຍການສ້າງຄູ່ຮ່ວມງານ ກັບ NGOs ທີ່ເຮັດວຽກກ່ຽວກັບບັນຫາສະເພາະໃດໜຶ່ງເພື່ອປະເມີນຄວາມກ້າວໜ້າໃນການຈັດຕັ້ງປະຕິບັດຕາມບົດສະຫລຸບຂອງ UPR, ແລະ ຮ່ວມມືກັບລັດຖະບານເພື່ອຊອກຫາວິທີ ແລະ ແນວທາງເພື່ອຈັດຕັ້ງປະຕິບັດ ຕາມ UPR. Conectas ຍັງໄດ້ໃຫ້ແກການແລກປ່ຽນບົດຮຽນປະສົບການກັບອົງການຈັດຕັ້ງທີ່ເປັນຄູ່ຮ່ວມງານຕ່າງໆໃນປະເທດອາເຈນຕິນາ, ເປລູ, ຟີລິປິນ ແລະ ອັບຟຣິກາໃຕ້ເພື່ອປະກອບສ່ວນໃນຂະບວນການທົບທວນຂອງປະເທດເຫລົ່ານີ້.

**ຊັບພະຍາກອນຂອງ OHCHR**

**ເວບໄຊ້ຂອງກົນໄກການທົບທວນ**

ພາກປະຊາສັງຄົມແມ່ນຄວນຈະສຶກສາຂໍ້ມູນຂອງ UPR ເປັນປະຈຳ ເຊິ່ງສາມາດເຂົ້າຫາຂໍ້ມູນໄດ້ໃນທາງເວບຂອງ OHCHR ເພື່ອຈະໄດ້ຂໍ້ມູນໃໝ່ໆ ແລະ ກ່ຽວກັບຂະບວນການທົບທວນ.

**ເວບຂອງສະພາສິດທິມະນຸດ**

ພາກປະຊາສັງຄົມແມ່ນຄວນຈະສຶກສາຂໍ້ມູນຂອງສະພາສິດທິມະນຸດເປັນປະຈຳ ເຊິ່ງສາມາດເຂົ້າຫາຂໍ້ມູນໄດ້ໃນທາງ ເວບຂອງ OHCHR ເພື່ອຈະໄດ້ຂໍ້ມູນໃໝ່ໆ ແລະ ກ່ຽວກັບວຽກງານຂອງສະພາ. ຕາມປົກກະຕິແລ້ວຂໍ້ມູນສະ ເພາະກ່ຽວກັບກອງປະຊຸມແມ່ນຈະໂພສລົງໃນເວບຕະຫລອດ.

**ລະບົບເນັດສະເພາະ**

ລະບົບເນັດສະເພາະແມ່ນຈະເຊື່ອມຕໍ່ກັບເວບຂອງສະພາສິດທິມະນຸດໂດຍສະເພາະ. ໃນເວບກໍ່ແມ່ນຈະມີພາກສ່ວນທີ່ສາມາດເຊື່ອມຕໍ່ໄປຫາຂໍ້ມູນທີ່ກ່ຽວກັບວຽກງານຂອງ UPR ເຊັ່ນ:

- ຂໍ້ມູນກ່ຽວກັບລັດທີ່ກຳລັງລໍຖ້າການທົບທວນ;
- ເອກະສານກ່ຽວກັບການທົບທວນໃນຫົວຂໍ້ໃດໜຶ່ງ;
- ບັນດາຄຳຖາມຕ່າງໆທີ່ທາງຄະນະຂອງສະພາສິດທິມະນຸດໄດ້ຍົກຂຶ້ນມາໃນທີ່ປະຊຸມ ແລະ ຈະຖືກຍົກຂຶ້ນມາສົນທະນາໃນການທົບທວນທີ່ຈະມາເຖິງ;
- ຄຳເຫັນຕ່າງໆທີ່ທາງລັດສັງເກດການ ແລະ ຄະນະໃນທີ່ປະຊຸມໄດ້ຍົກຂຶ້ນມາທາງປາກເປົ່າ; ແລະ
- ຜົນຂອງກອງປະຊຸມທີ່ໄດ້ຖືກຮັບຮອງຈາກຄະນະທົບທວນ.

ສຳລັບລະຫັດທີ່ຈະໃຊ້ເຂົ້າໃນເວບສະເພາະນັ້ນແມ່ນສາມາດສະມັກເອົາທາງອອນລາຍໄດ້, ຫລັງຈາກກອກແບບຟອມແລ້ວ ລະຫັດຈະຖືກສົ່ງໃຫ້ທາງອີເມວທັນທີ

**ວີດີໂອອອນລາຍທາງເວບ**

ຂະບວນການທົບທວນສາມາດເບິ່ງໄດ້ຈາກການຖ່າຍທອດສົດທີ່ເວບຂອງສະພາສິດທິມະນຸດ.
ວີດີໂອອອນລາຍແມ່ນມີວີດີໂອຕ່າງໆທັງເກົ່າແລະໃໝ່ກ່ຽວກັບການທົບທວນທີ່ຜ່ານມາໄວ້ບໍລິການ.
ພາບວີດີໂອຈະສາມາດເບິ່ງໄດ້ແມ່ນຕ້ອງດາວໂລດຊອບແວຂອງວີດີໂອມາໄວ້ກ່ອນ

ການບໍລິການວີດີໂອອອນລາຍແມ່ນສາມາດເບິ່ງໄດ້ໃນເວບຂອງ OHCHR

# VIII. ການຍື່ນຄຳຮ້ອງທຸກກ່ຽວກັບການລະເມີດສິດທິມະນຸດ

ພາບລວມຂອງຂະບວນການຍື່ນຄຳຮ້ອງທຸກ

*ຂະບວນການນີ້ແມ່ນຫຍັງ?*

ຂະບວນການຮ້ອງທຸນນີ້ແມ່ນເປັນກົນໄກທີ່ຮັບເອົາເລື່ອງລາວຕ່າງໆທີ່ສົ່ງມາກ່ຽວກັບການຖືກລະເມີດສິດທິ ເພື່ອລາຍງານ ໃຫ້ອົງການ ສປຊ ໄດ້ຮັບຊາບ. ກົນໄກ ນີ້ທີຢູ່ສາມພາກ ສ່ວນຄື:

- ການຍື່ນຄຳຮ້ອງທຸກສ່ວນບຸກຄົນທີ່ຢູ່ພາຍໄຕ້ສົນທິນັນຍາສິດທິມະ ນຸດ (ການຮ້ອງຟ້ອງ);
- ການສື່ສານລາຍງານພາຍ ໄຕ້ຂະບວນການພິເສດຂອງສິດທິມະນຸດ;
- ຂະບວນການຮ້ອງທຸກຂອງສະພາສິດທິມະນຸດ

**ຂະບວນການນີ້ເຮັດວຽກແບບໃດ?**

ແຕ່ລະຂະບວນການແມ່ນມີລະບຽບການຂອງຕົນເອງ, ມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໄປນຳ.

ສຳລັບທັງສາມຂະບວນການຂ້າງເທິງນັ້ນແມ່ນຕ້ອງສຶກສາໃຫ້ຄັແນ່ກ່ອນທີ່ຈະຕັດສິນໃຈໄປຕາມກົນໄກນັ້ນໆເຊັ່ນ:

- ຂະບວນການຍື່ນຄຳຮ້ອງທຸກຂອງບຸກຄົນກ່ຽວກັບການຖືກລະເມີດສິດທິນັ້ນແມ່ນມີພຽງຫ້າສົນທິສັນຍາສາກົນເທົ່ານັ້ນທີ່ຮັບຮອງການຮ້ອງທຸກດັ່ງກ່າວ;
- ການລາຍງານສື່ສານສ່ວນບຸກຄົນແມ່ນຈະຢູ່ພາຍໄຕ້ພາລະໜ້າທີ່ຂອງຂະບວນການພິເສດຂອງສະພາສິດທິມະນຸດໃນ ພາກພື້ນ ແລະ ໃນກໍລະນີທີ່ສຳຄັນ ເທົ່ານັ້ນ; ແລະ
- ຂະບວນການຮ້ອງທຸກຂອງສະພາສິດທິມະນຸດແມ່ນຈະແກ້ໄຂບັນຫາທີ່ໃຫຍ່ໆ ແລະ ມີມູນຄວາມຈິງຂອງການລະເມີດສິດທິແລະພື້ນຖານເສລີພາບທີ່ເກີດຂຶ້ນໃນທົ່ວໂລກ.

**ວິທີ ແລະ ຂັ້ນຕອນຂອງການເຮັດວຽກຮ່ວມກັບກັບຂະບວນການພິເສດ**

ທຸກພາກປະຊາສັງຄົມໂດຍອີງຕາມເງື່ອນໄຂຂອງແຕ່ລະຂະບວນການແມ່ນສາມາດເຂົ້າຫາ ແລະ ເຮັດວຽກຮ່ວມກັບຂະບວນການພິເສດໄດ້ໂດຍບໍ່ໄດ້ຄຳນຶງເຖິງສະຖານະພາບທີ່ມີຕໍ່ອົງການ ສປຊ. ການຮ້ອງທຸກພາຍໄຕ້ບັນດາສາມຂະບວນການທີ່ກ່າວມານັ້ນສ່ວນບຸກຫຼືຕົວແທນສາມາດຍື່ນຄຳຮ້ອງທຸກທີ່ຍືນຍັນວ່າໄດ້ຖືກລະເມີດສິດນັ້ນໄດ້, ຕົວຢ່າງ, ອົງການ NGOs ຈະເປັນຜູ້ຍື່ນໃຫ້ກໍ່ໄດ້. ພາກປະຊາສັງຄົມປົກກະຕິແລ້ວແມ່ນ ສາມາດເປັນຕົວແທນໃຫ້ແກ່ບຸກຄົນໃນການຊອກຫາຄວາມເປັນທຳຈາກການຖືກລະເມີດສິດດ້ວຍການກະກຽມຂໍ້ມູນສົ່ງ ຫຼື ລາຍງານກ່ຽວກັບສະພາບການດັ່ງກ່າວ.

ປື້ມຄູ່ມືນີ້ແມ່ນມີໃນເວບຂອງ OHCHR : http://www.ohchr.org/civilsocietyhandbook/ ໃນເວບແມ່ນຈະມີເປັນປຶ້ມ ຫຼື ເປັນແຕ່ລະບົດໃຫ້ດາວໂລດໄດ້.

ເຖິງຢ່າງໃດກໍ່ດີ ຜູ້ທີ່ສົ່ງລາຍງານໃນນາມຜູ້ອື່ນແມ່ນຄວນຕ້ອງໄດ້ຮັບການເ ຫັນຈາກຜູ້ກ່ຽວຂ້ອງເສຍກ່ອນ ແລະ ຜູ້ກ່ຽວຂ້ອງນັ້ນຕ້ອງໄດ້ຮັບຮູ້ວ່າເລື່ອງລາວຂອງຕົນນັ້ນກຳລັງຈະຖືກສົ່ງໄປຫາອົງການທີ່ກ່ຽວຂອງ ເພື່ອຮຽກຮ້ອງສິດທິບາງຢ່າງ. ລະບຽບການຂອງແຕ່ລະຂະບວນການແມ່ນຄວນໄດ້ຮັບການສຶກສາ ໃຫ້ເຂົ້າໃຈກ່ອນກ່ອນທີ່ຈະດຳເນີນການໃດໆຕໍ່ໄປ.

### ຂໍ້ມູນສຳຄັນໃນການຕິດຕໍ່ຫາກົນໄກສິດທິມະນຸດ

ການຮ້ອງທຸກພາຍໄຕ້ສົນທິສັນຍາສິດທິມະນຸດ

(ເຖິງຄະນະກຳມາທິການວ່າດ້ວຍສິດທິມະນຸດ, ເຖິງຄະນະກຳມາທິການວ່າດ້ວຍການຕ້ານການທໍລະມານ, ເຖິງຄະນະກຳມາທິການວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງ, ເຖິງຄະນະກຳມາທິການວ່າດ້ວຍການຕ້ານການຈຳແນກເຊື້ອຊາດ, ແລະ ເຖິງຄະນະກຳມາທິການວ່າດ້ວຍສິດທິຂອງຄົນພິການ)

Petitions Team
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 22
E-mail: tb-petitions@ohchr.org

**ການສື່ສານລາຍງານພາຍ ໄຕ້ ຂະບວນການພິເສດຂອງສິດທິມະນຸດ**

Special Procedures Division
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 06
E-mail: urgent-action@ohchr.org

**ຂະບວນການຮ້ອງທຸກຂອງ ສະພາສິດທິມະນຸດ**

Human Rights Council Branch (complaint procedure)
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 – Switzerland, Fax: +41 (0)22 917 90 11
E-mail: CP@ohchr.org

**ຂະບວນການຮ້ອງທຸກແມ່ນຫຍັງ?**

ລະບົບຂອງ ສປຊ ແມ່ນຈະເນັ້ນໃສ່ພັນທະຂອງລັດຖະບານ ແລະ ຈະດຳເນີນງານໃນລະດັບປະເທດ. ແນວໃດກໍ່ດີ ລະບົບ ສິດທິມະນຸດຂອງ ສປຊ ແມ່ນໄດ້ກຳນົດຂະບວນການຕ່າງໆທີ່ສາມາດເປີດໃຫ້ແກ່ສ່ວນບຸກຄົນ ແລະ ກຸ່ມຄົນທີ່ກຳ ລັງຊອກ ຫາການຊ່ວຍເຫລືອຈາກ ສປຊ ກ່ຽວກັບເລື່ອງສິດທິມະນຸດ. ການດຳເນີນງານທີ່ວ່ານີ້ແມ່ນຖືກເອີ້ນວ່າເປັນຂະບວນ ການການຮ້ອງທຸກ.

ໂດຍຜ່ານຂະບວນການດັ່ງກ່າວ ບັນດາບຸກຄົນແມ່ນສາມາດນຳເອົາບັນຫາທີ່ກ່ຽວຂ້ອງມາສະເໜີໃຫ້ ສປຊ ໄດ້ຮັບຊາບ; ໃນທຸກໆປີກໍ່ແມ່ນມີຄົນຈຳນວນຫລວງຫລາຍທີ່ໄດ້ນຳໃຊ້ຂະບວນການນີ້.

ການຮ້ອງທຸກແມ່ນອາດສົ່ງຂໍ້ມູນໄປຫາສາມຂະບວນການທີ່ວ່າມາຂ້າງເທິງນັ້ນຄື:

- ຂະບວນການທາງສົນສີສັນຍາສິດທິມະນຸດ (ການຮ້ອງຟ້ອງ);
- ກົນໄກຂະບວນການພິເສດຂອງສະພາສິດທິມະນຸດ; ແລະ
- ຂະບວນການຮ້ອງທຸກຂອງສະພາສິດທິມະນຸດ.

ສຳລັບເລື່ອງລາວສະຖານະການໃດໜຶ່ງ ຂະບວນການຕ່າງໆທີ່ກ່າວມານັ້ນແມ່ນສາມາດຂໍນຳໃຊ້ໄດ້ຫລາຍ ກ່ວາໜຶ່ງຂະບວນການກໍ່ໄດ້

**ຂະບວນການພິເສດເຮັດວຽກແບບໃດ?**

ມັນມີຄວາມສຳຄັນຫລາຍທີ່ຈະຕ້ອງໄດ້ສຶກສາຢ່າງຮອບຄອບວ່າຂະບວນການໃດເໝາະສົມສຳລັບຄະດີ ຫຼື ເລື່ອງລາວ ໃດໜຶ່ງ. ແຕ່ລະຂະບວນການກໍ່ມີຂັ້ນຕອນແລະລະບຽບການສະເພາະໃຜລາວ. ດັ່ງນັ້ນຜູ້ໃດ, ໜ່ວຍງານໃດ ແລະ ອົງການໃດທີ່ເປັນຕົວແທນຂອງຜູ້ໃດໜຶ່ງກ່ອນທີ່ຈະນຳໃຊ້ຂະບວນໃດໜຶ່ງແມ່ນ ຕ້ອງໄດ້ສຶກສາໃຫ້ຄັກກ່ອນ.

**A. ການຮ້ອງທຸກສ່ວນບຸກຄົນພາຍໃຕ້ສົນທິສັນຍາສິດທິມະນຸດສາກົນ**

ມີເຈັດສົນທິສັນຍາສິດທິມະນຸດສາກົນທີ່ຮັບການຮ້ອງທຸກຈາກສ່ວນບຸກຄົນເຊັ່ນ:

- ສົນທິສັນຍາສາກົນວ່າດ້ວຍສິດທິທາງການເມືອງ ແລະ ພົນລະເຮືອນທີ່ກຳນົດໃນອານຸສັນຍາທີ່ກ່ຽວ ຂ້ອງສະບັບທຳອິດ;
- ສົນທິສັນຍາສາກົນວ່າດ້ວຍການຕ້ານການທໍລະມານ ແລະ ຕ້ານການປະຕິບັດ ຫຼື ລົງໂທດທີ່ໄຮ້ມະນຸດສະທຳ ແລະ ເຊື່ອມເສຍກຽດກັກສີພາຍໃຕ້ມາດຕາທີ 22;
- ສົນທິສັນຍາສາກົນວ່າດ້ວຍການຕ້ານການເລືອກປະຕິບັດຕໍ່ແມ່ຍິງທີ່ກຳນົດໃນອານຸສັນຍາທີ່ກ່ຽວຂ້ອງ (ສົນທິສັນຍານີ້ແມ່ນຍັງຮັບການຮ້ອງທຸກເປັນກຸ່ມຄົນອີກດ້ວຍ);
- ສົນທິສັນຍາສາກົນວ່າດ້ວຍການຕ້ານການຈຳແນກເຊື້ອຊາດກຳນັດໃນມາດຕາ 14 (ສົນທິສັນຍານີ້ແມ່ນຍັງຮັບການຮ້ອງທຸກເປັນກຸ່ມຄົນອີກດ້ວຍ);

VIII

- ສົນທິສັນຍາສາກົນວ່າດ້ວຍການປົກປ້ອງສິດຂອງແຮງງານຕ່າງດ້າວແລະຄອບຄົວຂອງເຂົາເຈົ້າແມ່ນກຳນັດໃນ ມາດຕາ 77. ແນວໃດກໍ່ດີ ສົນທິສັນຍາສະບັບດັ່ງກ່າວນີ້ແມ່ນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດເທື່ອຈົນກ່ວາ ວ່າຈະມີລັດພາຄີໃຫ້ການຮັບຮອງປະມານສິບລັດເສຍກ່ອນ.[69]
- ສົນທິສັນຍາສາກົນວ່າດ້ວຍສິດທິຂອງຄົນພິການແມ່ນກຳນົດໃນອານຸສັນຍາທີ່ກ່ຽວຂ້ອງ (ສົນທິສັນຍານີ້ແມ່ນຍັງ ຮັບການຮ້ອງທຸກເປັນກຸ່ມຄົນ ແລະ ເປັນສ່ວນບຸກຄົນ); ແລະ
- ສົນທິສັນຍາສາກົນວ່າດ້ວຍການປົກປ້ອງບຸກຄົນທີ່ຖືກບັງຄັບໃຫ້ຫາຍສາບສູນແມ່ນກຳນົດໃນມາດຕາ 31. ມາຮອດປີ 2008 ສົນທິສັນຍາດັ່ງກ່າວແມ່ນຍັງບໍ່ໄດ້ຖືກຮັບຮອງເທື່ອ

ການນຳໃຊ້ແບບທາງອ້ອມຂອງສົນທິສັນຍາດັ່ງກ່າວນີ້ກໍ່ແມ່ນອາດຈະນຳໃຊ້ອານຸສັນຍາຂອງສົນທິສັນຍາວ່າດ້ວຍສິດທິທາງເສດຖະກິດ, ສັງຄົມ ແລະ ວັດທະນາທຳກໍ່ໄດ້.[70]

## ຈຸດແຂງ

- ຂໍ້ສະດວກທີ່ສຳຄັນຂອງການຍື່ນຄຳຮ້ອງທຸກໃຫ້ແກ່ອົງກອນສິດທິມະນຸດກໍ່ແມ່ນພາຍຫລັງທີ່ລັດພາຄີໄດ້ໃຫ້ຖະແຫຼງ ການຍອມຮັບສົນທິສັນຍາທີ່ກ່ຽວຂ້ອງ, ລັດດັ່ງກ່າວແມ່ນຈະມີພັນທະໃນການຈັດຕັ້ງປະຕິບັດ ໂດຍສະເພາະ ແມ່ນພັນທະທີ່ຈະຊ່ວຍເຫລືອຜູ້ທີ່ຖືກລະເມີດສິດ. ອົງກອນສິດທິມະນຸດທີ່ກ່ຽວຂ້ອງທີ່ຮັບການຮ້ອງທຸກຈາກບຸກຄົນກໍ່ ແມ່ນຈະມີອຳນາດຕັດສິນບັນຫາວ່າແມ່ນມີການລະເມີດສົນທິສັນຍາຫຼືບໍ່, ແລະ ລັດທີ່ກ່ຽວຂ້ອງກໍມີພັນທະທີ່ຈະອຳ ນວຍຄວາມສະດວກໃນການຊອກຫາຄວາມເປັນຈິງໃຫ້ແກ່ອົງກອນສິດທິມະນຸດ;
- ອົງກອນສິດທິມະນຸດແມ່ນສາມາດອອກມາດຕະການຊົ່ວຄາວໃນກໍລະນີທີ່ສຸກເສີນເພື່ອຢຸດຢັ້ງສະຖານະການຈົນ ກ່ວາຈະມີການຕັດສິນໃຈໃດໜຶ່ງກ່ຽວກັບບັນຫາ. ມາດຕະການຊົ່ວຄາວນີ້ແມ່ນຕ້ອງຖືກນຳໃຊ້ແບບສັນຕິຈົນກ່ວາ ວ່າຈະມີການຕັດສິນໃຈແນວໃດຕໍ່ໄປ;
- ການຕັດສິນໃຈຂອງອົງກອນສິດທິມະນຸດສາມາດນຳໃຊ້ໄດ້ຫລາຍກ່ວາເລື່ອງລາວຂອງບຸກຄົນ ແລະ ສາມາດອອກມາດຕະການທີ່ສາມາດຢຸດຢັ້ງສະຖານະການທີ່ອາດເກີດຂຶ້ນໃນອານາຄົດໄດ້;
- ອົງກອນສິດທິມະນຸດຍັງສາມາດພິຈາລະນາເບິ່ງບັນຫາທີ່ສົ່ງມາວ່າແມ່ນຢູ່ພາຍໃຕ້ເຂດອຳນາດຂອງຂະບວນການພິເສດຫຼືບໍ່

**ລະບຽບການ ແລະ ຂໍ້ຈຳກັດພິເສດ**

- ຄະດີທີ່ສົ່ງມານັ້ນຕ້ອງຢູ່ພາຍໃຕ້ຂອບເຂດອຳນາດຂອງອົງກອນສິດທິມະນຸດທີ່ສາມາດຮັບເອົາການຮ້ອງທຸກ ຕ່າງໆຈາກບຸກຄົນໄດ້;
- ລັດທີ່ກ່ຽວຂ້ອງຕ້ອງເປັນພາຄີຂອງສົນທິສັນຍານັ້ນໆເສຍກ່ອນ, ແລະ ຕ້ອງໄດ້ໃຫ້ສັດຕະຍາບັນອານຸສັນຍາທີ່ ກ່ຽວຂ້ອງນຳອີກ, ຫຼື ຖະແຫລງໃຫ້ການຮັບຮອງສິດພິເສດຂອງອົງກອນສິດທິມະນຸດກ່ຽວກັບການຮັບພິຈາລະ ນາຄຳຮ້ອງທຸກຈາກສ່ວນບຸກຄົນ;
- ໃນເວລາທີ່ຍື່ນຄຳຮ້ອງທຸກໃນນາມຕົວແທນໃຫ້ແກ່ບຸກຄົນໃດໜຶ່ງ, ສິ່ງທີ່ສຳຄັນກໍ່ແມ່ນຕ້ອງມີການຕົກລົງ ຫຼື ການມອບສິດຂອງຜູ້ເຄາະຮ້າຍ. ຖ້າຫາກວ່າບໍ່ມີການມອບສິດທີ່ວ່ານີ້ ຄຳຮ້ອງທຸກກໍ່ອາດບໍ່ໄດ້ຮັບການພິຈາລະນາ;

---

69 ມາຮອດປີ 2008 ມີພຽງປະເທດດຽວທີ່ໃຫ້ການຮັບຮອງ.

70 ອານຸສັນຍາໄດ້ຮັບການຮັບຮອງຈາກສະພາສິດທິມະນຸດໃນວັນທີ 18 ມິຖຸນາ 2008 ແລະ ຄາດວ່າສະມັດຊາໃຫຍ່ຈະໃຫ້ການ ຮັບຮອງຕື່ມຫລັງຈາກປີ 2008 ເປັນຕົ້ນໄປ

VIII

- ພາຍໃຕ້ສົນທິສັນຍາສາກົນວ່າດ້ວຍການລົບລ້າງການຈຳແນກເຊື້ອຊາດ, ການຮ້ອງທຸກຈະຕ້ອງຖືກພິຈາລະນາພາຍໃນຫົກເດືອນຈາກຂະບວນການຍຸດຕິທຳພາຍໃນທີ່ຮັບຄຳຮ້ອງດັ່ງກ່າວ;
- ທຸກຄຳຮ້ອງທຸກຕ້ອງໄດ້ຜ່ານຂະບວນການຍຸດຕິທຳພາຍໃນເສຍກ່ອນ, ຖ້າຫາກຄຳຮ້ອງທຸກນັ້ນບໍ່ໄດ້ຮັບການແກ້ໄຂຫຼືບໍ່ສາມາດແກ້ໄຂໄດ້, ຄະດີດັ່ງກ່າວແມ່ນສາມາດສົ່ງໄປຫາອົງກອນສິດມະນຸດໄດ້-ຄະດີແມ່ນຈະໄດ້ຖືກແກ້ໄຂຢ່າງມີປະສິດທິພາບຖ້າຫາກວ່າຄຳຮ້ອງທຸກນັ້ນໄດ້ໃຫ້ລາຍລະອຽດທີ່ຈະແຈ້ງແລະເປັນຈິງ;
- ການພິຈາລະນາຕັດສິນສຸດທ້າຍກ່ຽວກັບຄຳຮ້ອງນັ້ນແມ່ນຈະໃຊ້ເວລາຢູ່ປະມານສອງຫາສາມປີຕາມປົກກະຕິແລ້ວ;
- ໂດຍທົ່ວໄປແລ້ວຄຳຮ້ອງທີ່ສົ່ງໃຫ້ອົງກອນສິດທິມະນຸດນັ້ນແມ່ນບໍ່ໄດ້ກ່ຽວຂ້ອງກັບການລະເມີດສິດທິມະນຸດທີ່ມີ ທົ່ວໆໄປ;
- ອົງກອນສິດທິມະນຸດຈະບໍ່ຮັບພິຈາລະນາຄະດີທີ່ໄດ້ຖືກພິຈາລະນາມາແລ້ວຈາກຂະບວນການຍຸດຕິທຳສາກົນຫຼືພາກພື້ນ.[71]

ຂໍ້ມູນກ່ຽວກັບອົງກອນສິດທິມະນຸດແມ່ນສາມາດເບິ່ງໄດ້ໃນບົດທີ IV (ອົງກອນສິດທິມະນຸດ) ໃນປື້ມຄູ່ມືນີ້

### B. ການສື່ສານລາຍງານພາຍໃຕ້ຂະບວນການພິເສດ

ມີຫລາຍໆກົນໄກຂອງຂະບວນການພິເສດທີ່ຮັບຄຳຮ້ອງທຸກທີ່ມີທັງກໍລະນີສ່ວນບຸກຄົນ ແລະ ກໍລະນີການລະເມີດໃນແບບ ທົ່ວໆໄປ. ບຸກຄົນໃດ ຫຼື ຜູ້ທີ່ເຄື່ອນໄຫວແທນແມ່ນສາມາດຍື່ນຄຳຮ້ອງທຸກໃນນາມສ່ວນບຸກຄົນໃຫ້ແກ່ຂະ ບວນການພິເສດ ໄດ້, ຖ້າຫາກວ່າຂະບວນການນັ້ນມີໜ້າທີ່ຮັບຜິຊອບໃນດ້ານດັ່ງກ່າວ. ພາກປະຊາສັງຄົມແມ່ນສາມາດຊ່ວຍບຸກຄົນໃນການ ຊອກຫາຄວາມຍຸດຕິທຳເພື່ອປົກປ້ອງຈາກການຖືກລະເມີດສິດທິ.

## ຈຸດແຂງ

- ການລາຍງານສື່ສານຜ່ານຂະບວນການພິເສດແມ່ນເປັນຂະບວນການທີ່ອາດຈະຖືກນຳໃຊ້ແກ່ສ່ວນບຸກຄົນກໍ່ຄືການຖືກລະເມີດສິດທິແບບທົ່ວໆໄປ;
- ຂະບວນການນີ້ແມ້ນສາມາດເປັນເຄື່ອງມືໃນກໍລະນີຮີບດ່ວນເນື່ອງມາຈາກວ່າຂະບວນການນີ້ມີຂໍ້ກຳນົດກ່ຽວກັບມາດຕະການປ້ອງກັນທີ່ຮີບດ່ວນ (ຮັບຮູ້ກັນໃນນາມມາດຕະການຮີບດ່ວນ);
- ຄະດີໃດກໍ່ສາມາດສົ່ງໃຫ້ແກ່ຂະບວນການພິເສດໄດ້ໂດຍບໍ່ຈຳເປັນຕ້ອງກ່ຽວຂ້ອງກັບການໃຫ້ສັດຕະຍາບັນຂອງລັດດັ່ງກ່າວນັ້ນແຕ່ຢ່າງໃດເລີຍ;
- ບໍ່ຈຳເປັນຕ້ອງໄປຜ່ານຂະບວນການຍຸດຕິທຳພາຍໃນເສຍກ່ອນ;
- ການລາຍງານບໍ່ຈຳເປັນຕ້ອງແມ່ນຜູ້ທີ່ຖືກເຄາະຮ້າຍ, ເຖິງແມ່ນວ່າມັນຈຳເປັນຕ້ອງໃຫ້ລາຍລະອຽດເປັນຈິງ ກໍ່ຕາມ; ແລະ
- ຄຳຮ້ອງທຸກນັ້ນອາດຈະສົ່ງໃຫ້ແກ່ອົງກອນສິດທິມະນຸດຫຼືຂະບວນການພິເສດແລ້ວກໍ່ຕາມ (ຖ້າຢູ່ໃນກອບຂອງຄວາມ ຮັບຜິດຊອບ).

[71] ຂະບວນການນີ້ຖືວ່າຄ້າຍຄືກັບອົງກອນສິດທິມະນຸດ, ສານສິດທິມະນຸດແຫ່ງຢູ່ໂຣບ ຫຼື ສານສິດທິມະນຸດລະຫວ່າງລັດໃນອາເມລິກາ, ແຕ່ບໍ່ໄດ້ຄ້າຍຄືກັບຂະບວນການພິເສດຂອງສະພາສິດທິມະນຸດ.

VIII

## ຂໍ້ຈຳກັດ

- ຈະຕ້ອງມີຂະບວນການພິເສດໃດໜຶ່ງທີ່ສາມາດແກ້ໄຂບັນຫາສິດທິມະນຸດທີ່ສະເພາະ ຫຼື ມີປະເທດໃດໜຶ່ງ (ບໍ່ແມ່ນທຸກຂະບວນການພິເສດທີ່ສາມາດຊ່ວຍແກ້ໄຂບັນຫາສິດທິມະນຸດຂອງສ່ວນບຸກຄົນໄດ້);
- ຂະບວນການພິເສດເປັນພຽງໜ່ວຍງານກົນໄກທີ່ບໍ່ມີຂໍ້ຜູກພັນທາງກົດໝາຍ: ມັນຂຶ້ນຢູ່ກັບບັນດາລັດຕ່າງໆເອງທີ່ຈະປະຕິບັດຕາມຄຳແນະຂອງຂະບວນການພິເສດຫຼືບໍ່;
- ຂະບວນການພິເສດແມ່ນມີລະບຽບການດຳເນີນງານທີ່ແຕກຕ່າງກັນ.

ຂໍ້ມູນເພີ່ມເຕີມກ່ຽວກັບຂະບວນການພິເສດແມ່ນສາມາດເບິ່ງໄດ້ທີ່ບົດທີ VI (ຂະບວນການພິເສດ) ໃນປຶ້ມຄູ່ມືນີ້

### C. ຂະບວນການຮັບຄຳຮ້ອງທຸກຂອງສະພາສິດທິມະນຸດ

ບຸກຄົນ ຫຼື ກຸ່ມຄົນໃດກໍ່ໄດ້ແມ່ນສາມາດຢື່ນຄຳຮ້ອງທຸກໄດ້ຖ້າຫາກເຫັນວ່າສິດທິຂອງຕົນໄດ້ຖືກລະເມີດ, ຫຼື ໃຜກໍ່ແທ່ນສາມາດຢື່ນຄຳຮ້ອງໄປຫາຂະບວນການນີ້ໄດ້ຖ້າຫາກວ່າໄດ້ຍິນ ຫຼື ມີຂໍ້ມູນທີ່ກ່ຽວຂ້ອງ. ຂະບວນການຮັບຄຳຮ້ອງທຸກຂອງສະພາສິດທິມະນຸດແມ່ນເປັນພຽງໜ່ວຍງານສາກົນດຽວທີ່ຮັບເລື່ອງລາວໃນທຸກດ້ານກ່ຽວກັບສິດທິ ແລະ ເສລີພາບພື້ນຖານຈາກທົ່ວໂລກ.

ການລາຍງານສື່ສານຜ່ານຂະບວນການນີ້ແມ່ນບໍ່ໄດ້ກ່ຽວກັບການເປັນພາຄີຂອງສົນທິສັນຍາ ຫຼື ການມີພາລະໜ້າທີ່ຕາມຂະບວນການພິເສດ. ການດຳເນີນງານຂອງຂະບວນການແມ່ນເປັນໄປຕາມການລະເມີດສິດທິມະນຸດທີ່ຮຸນແຮງໃນລັດໃດໜຶ່ງ. ໜ້າທີ່ຂອງຂະບວນການແມ່ນບໍ່ໄດ້ກ່ຽວຂ້ອງກັບບຸກຄົນທີ່ຖືກລະເມີດ ຫຼື ຊ່ວຍແກ້ໄຂບັນຫາການຖືກລະເມີດສິດທິຂອງຜູ້ໃດໜຶ່ງ.

## ຈຸດແຂງ

- ຂະບວນການຂອງສະພາສາມາດຊ່ວຍແກ້ໄຂກັບບັນຫາການລະເມີດສິດທິມະນຸດໃນທຸກຂົງເຂດ ແລະ ທຸກການລະເມີດເສລີພາບພື້ນຖານ; ລັດທີ່ກ່ຽວຂ້ອງບໍ່ຈຳເປັນຕ້ອງເປັນພາຄີຂອງສົນທິສັນຍາໃດໜຶ່ງ ເພາະຂະບວນການດັ່ງກ່າວສາມາດເຂົ້າໄປແກ້ໄຂບັນຫາ ຫຼື ຮັບຄຳຮ້ອງທີ່ກ່ຽວກັບການລະເມີດໄດ້;
- ຄຳຮ້ອງຟ້ອງແມ່ນສາມາດລາຍງານກ່ຽວກັບປະເທດໃດກໍ່ໄດ້;
- ຄຳຮ້ອງຟ້ອງອາດມາຈາກຜູ້ເຄາະຮ້າຍ ຫຼື ໃຜກໍ່ໄດ້ທີ່ເປັນຕົວແທນການຮ້ອງຟ້ອງນັ້ນໂດຍບໍ່ຈຳເປັນຕ້ອງໄດ້ຮັບການເຫັນດີຈາກຜູ້ເຄາະຮ້າຍນັ້ນ;
- ຜູ້ທີ່ຢື່ນຄຳຮ້ອງຟ້ອງນັ້ນ (ຜູ້ທີ່ຂຽນໜັງສືລາຍງານ) ແມ່ນຈະໄດ້ຮັບລາຍງານການດຳເນີນການໃນທຸກຂັ້ນຕອນ ທີ່ສຳຄັນ; ແລະ
- ເງື່ອນໄຂການຮັບຄຳຮ້ອງຟ້ອງນັ້ນອາດຈະບໍ່ມີຫລາຍຄືກັນກັບຂະບວນການອື່ນໆ.

VIII

ຂໍ້ຈຳກັດທີ່ອາດເປັນໄປໄດ້

- ຂະບວນການອາດຈະໃຊ້ເວລາດົນເກີນໄປ ເພາະວ່າການພິຈາລະນານັ້ນແມ່ນໄດ້ຜ່ານຫລາຍຂັ້ນຕອນ, ເພາະນັ້ນ ມັນອາດຈະບໍ່ເໝາະສົມສະລັບກໍລະນີທີ່ຮີບດ່ວນ;
- ຜູ້ທີ່ຍື່ນຄຳຮ້ອງຟ້ອງນັ້ນຈະຕ້ອງໄດ້ຜ່ານຂະບວນການຍຸດຕິທຳຕາມເງື່ອນໄຂ ແລະ ປະສິດທິພາບທີ່ມີພາຍໃນເສຍ ກ່ອນ ກ່ອນທີ່ຈະສາມາດຍື່ນຄຳຮ້ອງທີ່ກ່ຽວຂ້ອງນັ້ນໄປຫາຂະບວນການສາກົນທີ່ກ່ຽວຂ້ອງໄດ້;
- ບໍ່ມີກົນໄກການດຳເນີນງານທີ່ຮີບດ່ວນໃນການປົກປ້ອງ; ການລາຍງານຈະຕ້ອງອີງຕາມຮູບແບບການລະເມີດມຮາໄດກຳນົດໄວ້ເທົ່ານັ້ນ, ອີກດ້ານໜຶ່ງກໍ່ແມ່ນເລື່ອງທີ່ມັນໄດ້ກະທົບກັບຫລາຍຄົນ, ແລະ ບໍ່ແມ່ນກ່ຽວກັບຜູ້ໃດໜຶ່ງ;
- ເນື່ອງຈາກການດຳເນີນງານແມ່ນເປັນຄວາມລັບ, ຂະບວນການດັ່ງກ່າວບໍ່ຄວນເຜີຍແຜ່ບັນຫາກ່ຽວກັບ ການລະເມີດໃນລັດໃດໜຶ່ງສູ່ສາທາລະນະ; ແລະ
- ເລື່ອງລາວໃດ ຫຼື ຄະດີໃດທີ່ໄດ້ຮັບການພິຈາລິນາຈາກຂະບວນການພິເສດ, ຈາກອົງກອນສິດທິມະນຸດ ຫຼື ຈາກໜ່ວຍງານໃດໜຶ່ງຂອງ ສປຊ ຫຼື ອົງການສິດທິມະນຸດໃນພາກພື້ນມາແລ້ວແມ່ນຈະບໍໄດ້ຮັບການພິຈາລະນາ.

ຂໍ້ມູນກ່ຽວກັບຂະບວນການຮ້ອງຟ້ອງແມ່ນສາມາດເບິ່ງໄດ້ທີ່ບົດທີ V (ສະພາສິດທິມະນຸດ) ໃນປຶ້ມຄູ່ມືນີ້

**ວິທີເຂົ້າຫາ ແລະ ເຮັດວຽກຮ່ວມກັບຂະບວນການຮ້ອງຟ້ອງ**

ພາກປະຊາສັງຄົມໃດກໍ່ໄດ້ໂດຍເນື່ອງມາຈາກລະບຽບການຂອງແຕ່ລະຂະບວນການແມ່ນສາມາດເຂົ້າຮ່ວມໃນຂະບວນ ການຮ້ອງຟ້ອງໄດ້. ການຮ້ອງຟ້ອງພາຍໄຕ້ແຕ່ຂະບວນການແມ່ນເປີດໂອກາດໃຫ້ພາກສ່ວນບຸກຄົນທີ່ເຫັນວ່າໄດ້ຖືກ ລະເມີດສິດແມ່ນສາມາດຍື່ນຄຳຮ້ອງຟ້ອງໄດ້ ຫຼື ຜູ້ໃດໜຶ່ງສາມາດຍື່ນແທນກໍ່ໄດ້ເຊັ່ນ: ພາກສ່ວນ NGOs.

ພາກປະຊາສັງຄົມແມ່ນສາມາດເຮັດໜ້າທີ່ເປັນສູນກາງເພື່ອໃຫ້ບຸກຄົນຕ່າງໆສາມາດຂໍການຊ່ວຍເຫລືອໃນ ການຊອກຫາຄວາມຍຸດຕິທຳເນື່ອງຈາກບັນຫາການຖືກລະເມີດສິດ, ຊ່ວຍຍື່ນຫຼືສົ່ງຄຳຮ້ອງຟ້ອງໃນນາມສ່ວນບຸກດ້ວຍການ ຕົກລົງ ຫຼືມອບສິດໃຫ້ດຳເນີນການແທນ, ບຸກຄົນທີ່ຂໍການຊ່ວຍເຫລືອນັ້ນຕ້ອງຮັບຮູ້ວ່າເລື່ອງລາວຂອງຕົນເອງແມ່ນຈະໄດ້ ຖືກ ດຳເນີນການຮ້ອງຟ້ອງໃນຂັ້ນຕໍ່ໄປ. ຕົວຢ່າງ, ໃນເວລາທີ່ຄຳຮ້ອງນັ້ນໄປຮອດຂະບວນການພິເສດ, ຂະບວນການພິເສດ ກໍ່ໄດ້ສົ່ງລາຍລະອຽດຂອງຄຳຮ້ອງນັ້ນໃຫ້ແກ່ລັດທີ່ກ່ຽວຂ້ອງໄດ້ຮັບຊາບ, ແລະຈະໄດ້ບັນທຶກໃສ່ບົດລາຍງານທີ່ເປີດ ເຜີຍຕໍ່ສາທາລະນະຕໍ່ໄປ. ໃນເວລາທີ່ຄຳຮ້ອງຟ້ອງນັ້ນໄດ້ຖືກສົ່ງໄປໃຫ້ອົງກອນສິດທິມະນຸດ, ລາຍລະອຽດຂອງຜູ້ທີ່ຍື່ນ ຄຳຮ້ອງນັ້ນກໍ່ຈະໄດ້ເປີດເຜີຍໃຫ້ແກ່ລັດທີ່ກ່ຽວຂ້ອງ. ເພາະສະນັ້ນ ມັນຈຶ່ງເປັນຈຳເປັນສຳລັບຜູ້ທີ່ເຄາະຮ້າຍທີ່ຈະຕ້ອງໄດ້ ຮັບຮູ້ຫຼັກການດັ່ງກ່າວນີ້ໄວ້.

ນອກນີ້ ເງື່ອນໄຂຂອງແຕ່ລະຂະບວນການກໍ່ຈຳເປັນຕ້ອງໄດ້ສຶກສາຮຽນຮູ້ເພື່ອເປັນແນວທາງໃນການຮຽກຮ້ອງຄວາມ ເປັນທຳຕາມຄວາມເໝາະສົມ.

## A. ການຮ້ອງທຸກຂອງບຸກຄົນພາຍໃຕ້ສົນທິສັນຍາສິດທິມະນຸດສາກົນ.

ບຸກຄົນ ຫຼື ຜູ້ທີ່ໄດ້ຮັບມອບສິດແມ່ນສາມາດຍື່ນຄໍາຮ້ອງທຸກໄດ້, ເຊັ່ນວ່າ ທະນາຍ, NGOs ຫຼືກຸ່ມວິຊາຊີບຕ່າງໆ. ເນື້ອໃນຂອງພາກນີ້ແມ່ນໄດ້ບັນຍາຍລາຍລະອຽດຂອງລະບຽບການຕ່າງໆທີ່ສາມາດເປັນພື້ນຖານໃຫ້ແກ່ການຍື່ນຄໍາຮ້ອງທຸກໄດ້.

## ເງື່ອນໄຂ

### 1. ລັດພາຄີທີ່ໃຫ້ສັດຕະຍາບັນ

ການຮ້ອງທຸກກ່ຽວກັບການຖືກລະເມີດສິດທິພາຍໃຕ້ສັນທິສັນຍາສິກທິມະນຸດສາກົນແມ່ນອາດຈະຍື່ນຟ້ອງລັດຖະບານທີ່ ກ່ຽວຂ້ອງໄດ້ຖ້າຫາກ:

- ລັດດັ່ງກ່າວເປັນພາຄີຂອງສົນທິສັນຍາບໍ່ວ່າເປັນການໃຫ້ສັດຕະຍາບັນ ຫຼື ດ້ວຍການເຂົ້າຮ່ວມ; ແລະ
- ລັດພາຄີດັ່ງກ່າວໄດ້ຮັບຮອງອໍານາດຂອງອົງກອນສິດທິມະນຸດຂອງສົນທິສັນຍາໃດໜຶ່ງເພື່ອໃຫ້ມີອໍານາດໃນ ການຮັບພິຈາລະນາຄໍາຮ້ອງທຸກນັ້ນ.

ອີງຕາມສົນທິສັນຍາແຕ່ລະຢ່າງ ແມ່ນຖືວ່າມີຄວາມຈໍາເປັນຕ້ອງໄດ້ເປັນ ພາຄີຂອງອານຸສັນຍາທີ່ກ່ຽວຂ້ອງນັ້ນ, ຫຼື ຈໍາເປັນຕ້ອງອອກຖະແຫລງການຮັບຮອງເອົາສົນທິສັນຍາທີ່ກ່ຽວຂ້ອງ ນັ້ນໆ. ສິ່ງທີ່ຄວນໃສ່ໃຈກໍຄືວ່າ ມີຫລາຍປະເທດທີ່ໄດ້ຂໍຕັ້ງຂໍ້ສະຫງວນຂອງສົນທິສັນຍາທີ່ມັນຈະເຮັດໃຫ້ພັນທະຂອງ ລັດພາຍ ໄຕ້ສົນທິສັນຍາດັ່ງກ່າວນັ້ນຫລຸດລົງ. ດັ່ງນັ້ນມັນຈໍາເປັນຕ້ອງໄດ້ສຶກສາເບິ່ງວ່າລັດດັ່ງກ່າວນັ້ນມີຂໍ້ສະຫງວນ ຫຼືບໍ່, ລາຍລະອຽດດັ່ງກ່າວສາມາດເບິ່ງໄດ້ໃນບາງພາກສ່ວນຂອງສົນທິສັນຍາໄດ້.[72]

### 2. ການລະເມີດສິດທິສ່ວນບຸກຄົນ

ຄໍາຮ້ອງທຸກຂອງບຸກຄົນພາຍໄຕ້ສົນທິສັນຍາແມ່ນກ່ຽວກັບບັນຫາການຖືກລະເມີດສິດໃນສ່ວນບຸກຄົນໃດໜຶ່ງ ຫຼື ຫລາຍ ກ່ວາໜຶ່ງຄົນ, ແລະ ມັນອາດຈະບໍ່ເໝາະສົມກັບບັນຫາທີ່ມີການລະເມີດສິດທົ່ວໄປທີ່ບໍ່ສາມາດລະບຸໄດ້ວ່າບຸກຄົນທີ່ ຖືກລະເມີດນັ້ນແມ່ນໃຜ.

### 3. ການແກ້ໄຂບັນຫາພາຍໃນ

ຄໍາຮ້ອງທຸກສ່ວນບຸກຄົນພາຍໄຕ້ສົນທິສັນຍາສິດທິສະນຸດສາກົນແມ່ນສາມາດຍື່ນໄດ້ຖ້າຫາກການແກ້ໄຂບັນຫາຢູ່ພາຍໃນບໍ່ໄດ້ຜົນ, ນັ້ນກໍໝາຍຄວາມວ່າບັນຫາທີ່ຍື່ນໄປນັ້ນໄດ້ຖືກດໍາເນີນການແກ້ໄຂໃນທຸກຂັ້ນຕອນຂອງຂະບວນການ ຍຸດຕິທໍາທີ່ມີພາຍໃນແລ້ວ ແຕ່ວ່າມັນບໍ່ໄດ້ຮັບຜົນ ຫຼື ໄດ້ຂໍດໍາເນີນການຜ່ານທາງຂະບວນການບໍລິຫານທີ່ມີຄວາມສາ ມາດ ແລະ ມີປະສິດທິພາບຕາມເວລາທີ່ກໍານົດ ແຕ່ບໍ່ໄດ້ຮັບການຕອບສະໜອງ. ລະບຽບການນີ້ຈະບໍ່ໄດ້ຖືກນໍາໃຊ້ ຖ້າຫາກວ່າຂະບວນການຍຸດຕິທໍາພາຍໃນບໍ່ມີປະສິດທິພາບ ຫຼືວ່າໃຊ້ເວລາດົນຈົນເກີນໄປ. ຄວາມໝາຍກໍ່ຄືວ່າ "ການໃຊ້ເວລາດົນເກີນໄປ" ໂດຍທົ່ວໄປແລ້ວແມ່ນຈະບໍ່ໄດ້ຮັບການພິຈາລະນາ ແລະ ຈະຕ້ອງໄດ້ເບິ່ງຕາມຈິງໃນແຕ່ກໍລະນີໄປ.

---

72 ຂໍ້ມູນກ່ຽວກັບການໃຫ້ສັຕະຍາບັນ ແລະ ການຂໍຕັ້ງຂໍ້ສະຫງວນໃນແຕ່ລະສົນທິສັນຍາແລະແຕ່ລະອານຸສັນຍາແມ່ນສາມາດເບິ່ງໄດ້ໃນເວບໄຊ້ທີ່ກ່ຽວຂ້ອງ.

### 4. ການເປັນຕົວແທນຍື່ນຄຳຮ້ອງທຸກໃຫ້ແກ່ຜູ້ຖືກເຄາະຮ້າຍ.

ບຸກຄົນຫຼືອົງການຈັດຕັ້ງສາມາດຍື່ນຄຳຮ້ອງທຸກໃນນາມຂອງບຸກຄົນອື່ນໄດ້ຖ້າຫາກວ່າໄດ້ຮັບການມອບສິດຈາກບຸກຄົນທີ່ກ່ຽວຂ້ອງ ເຊິ່ງອາດຈະຂຽນເປັນລາຍລັກອັກສອນໃນຮູບແບບຂອງ "ໃບມອບສິດ" ຫຼື "ໃບມອບອຳນາດ".[73]

### 5. ຂະບວນການຮ້ອງທຸກອື່ນໆ

ຖ້າໃນກໍລະນີທີ່ການຮ້ອງທຸກທີ່ກ່ຽວຂ້ອງນັ້ນຫາກໄດ້ຮັບການພິຈາລະນາໂດຍຂະບວນການພິຈາລະນາຂອງອົງກອນສິດທິ ມະນຸດຂອງ ສປຊ ອື່ນໆ, ອົງການຈັດຕັ້ງສາກົນລະດັບພາກພື້ນ ແລະ ສາກົນ, ຄຳຮ້ອງດັ່ງກ່າວແມ່ນຈະບໍ່ໄດ້ຮັບການພິຈາ ລະນາອີກຈາກອົງກອນສິດທິມະນຸດແຫ່ງ ສປຊ. ໃນກໍລະນີທີ່ຄຳຮ້ອງທີ່ກ່ຽວຂ້ອງນັ້ນຫາກໄດ້ຮັບການພິຈາລະນາ ຫຼື ຖືກປະ ຕິເສດຈາກສານສິດທິມະນຸດລະຫວ່າງລັດໃນອາເມລິກາ ແລະ ສານສິດທິມະນຸດຂອງຢູໂຣບແລ້ວ, ຄະດີດັ່ງກ່າວອາດ ໄດ້ຮັບການພິຈາລະນາອີກຈາກອົງກອນສິດທິມະນຸດ. ຄະດີທີ່ຢູ່ພາຍໃຕ້ເຂດອຳນາດຂອງບອນການພິເສດກໍ່ແມ່ນສາມາດ ຍື່ນໃຫ້ແກ່ອົງກອນສິດທິມະນຸດໄດ້.

### 6. ແບບຟອມຂອງການຮ້ອງທຸກ

ໃນຄະນະທີ່ການຍື່ນຄຳຮ້ອງທຸກນັ້ນແມ່ນຄວນຈະໃຊ້ແບບຟອມທີ່ມີໃຫ້ (ໃຫ້ເບິ່ງເອກະສານຊ້ອນທ້າຍ I ແລະ II ຂອງໃນປຶ້ມນີ້), ສ່ວນການສົ່ງຂໍ້ມູນຫຼືລາຍງານຕ່າງໆແມ່ນສາມາດໃຊ້ແບບຟອມໃດກໍ່ໄດ້. ການຍື່ນຄຳຮ້ອງທຸກ ນັ້ນແມ່ນຄວນຂຽນເປັນພາສາທາງການຂອງອົງກອນສິດທິມະນຸດທີ່ກ່ຽວຂ້ອງ.[74]

---

73 ການມອບສິດນັ້ນແມ່ນບໍ່ຈຳເປັນຖ້າຫາກວ່າສະພາບການທີ່ເກີດນັ້ນມີນ້ຳໜັກພໍທີ່ບໍ່ຈຳເປັນຕ້ອງໄດ້ໃຊ້ການມອບສິດດັ່ງກ່າວ

74 ປົກກະຕິແລ້ວພາສາທີ່ໃຊ້ແມ່ນ ພາສາອາຣັບ, ຈີນ, ອັງກິດ, ຝຣັ່ງ, ລັດເຊຍ ແລະ ສະເປນ, ແຕ່ມັນກໍ່ມີຄວາມຈຳເປັນຕ້ອງໄດ້ກວດເບິ່ງໃນ ເວບໄຊ້ຂອງ OHCHR ອີກກ່ຽວກັບພາສາໃດທີ່ໃຊ້ໃນແຕ່ລະອົງກອນ.

**ຂໍ້ມູນແບບໃດທີ່ຄວນເອົາໃສ່ໃນຄຳຮ້ອງຂອງທຸກສ່ວນບຸກຄົນພາຍໃຕ້ອົງກອນສິດທິມະນຸດ?**

- **ຂໍ້ມູນພື້ນຖານສ່ວນຕົວ**ຂອງຜູ້ທີ່ຖືກລະເມີດສິດທິ (ຊື່, ສັນຊາດ, ວັນເດືອນປີເກີດ);
- ຊື່ຂອງລັດພາຄີທີ່ຕ້ອງການຮ້ອງຟ້ອງ;
- ໃນກໍລະນີທີ່ຢື່ນຄຳຮ້ອງໃນນາມຂອງຜູ້ອື່ນ, ຜູ້ທີ່ຈະຢື່ນຄຳຮ້ອງນັ້ນແມ່ນຕ້ອງໄດ້ສະແດງຫລັກຖານການມອບ ສິດ (“ໃບມອບສິດ”, ເປັນເອກະສານພິມ) ຫຼື ເປັນແບບອື່ນກໍ່ໄດ້, ຖ້າຫາກວ່າບໍ່ມີໃບມອບສິດ ຫຼື ມີເອກະສານຢັ້ງຢືນການມອບອຳນາດໃຫ້ນັ້ນ, ຕົວແທນທີ່ກ່ຽວຂ້ອງຕ້ອງມີຄຳອະທິບາຍຢ່າງຈະແຈ້ງວ່າບໍ່ມີສິ່ງເຫລົ່ານັ້ນແມ່ນຍ້ອນຫຍັງ;
- ເຮັດເປັນລາຍການລະອຽດຂອງເຫດການທີ່ເກີດ, ນຳສະເໜີຢ່າງຊັດເຈນຕາມລຳດັບ;
- ລາຍລະອຽດຂອງຂັ້ນຕອນທີ່ໄດ້ຜ່ານຂະບວນການຍຸດຕິທຳພາຍໃນ, ລວມທັງບັນດາລາຍລະອຽດກ່ຽວກັບຂະບວນການແກ້ໄຂທາງການບໍລິຫານທີ່ອາດມີໃນລັດທີ່ກ່ຽວຂ້ອງ;
- ລາຍລະອຽດກ່ຽວກັບການເຄີຍຮ້ອງທຸກໃນເລື່ອງດຽວກັນ ຫຼື ຄວາມເປັນຈິງທີ່ກ່ຽວຂ້ອງກັບການໄດ້ຮັບຄວາມຊ່ວຍເຫລືອໃນການສອບສວນ ຫຼື ພິຈາລະນາແກ້ໄຂຈາກອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງມາແລ້ວ ຖ້າຫາກມີ;
- ລາຍການທີ່ຖົກຖຽງວ່າເປັນຫຍັງເລື່ອງລາວທີ່ເກີດຂື້ນນັ້ນແມ່ນກ່ຽວຂ້ອງກັບການລະເມີດສິດທິມະນຸດທີ່ມີໃນຂໍ້ກຳນົດຂອງສົນທິສັນຍາ. ສິ່ງທີ່ວ່ານີ້ແມ່ນຈະກ່ຽວຂ້ອງກັບມາດຕາທີ່ໄດ້ຖືກລະເມີດ;
- ທຸກເອກະສານຂໍ້ມູນທີ່ກ່ຽວຂ້ອງກັບການຮ້ອງທຸກ ແລະ ການພິຈາລະນາ (ຄຳຕັດສິນຂອງສານເປັນຕົ້ນ);
- ກອບປີເອກະສານກົດໝາຍພາຍໃນທີ່ກ່ຽວຂ້ອງ, ຖ້າມີ;
- ຕາມລະບຽບການທົ່ວໄປແລ້ວ, ຂໍ້ມູນການສື່ສານທີ່ມີຄຳສັບທີ່ບໍ່ເໝາະສົມແມ່ນຈະບໍ່ໄດຮັບການພິຈາລະນາ.

**7. ກຳນົດເວລາ**

ສົນທິສັນຍາສາກົນກ່ຽວກັບການລົບລ້າງທຸກຮູບແບບການຈຳແນກເຊື້ອຊາດເປັນພຽງສົນທິສັນຍາດຽວທີ່ໄດ້ກຳນົດອາຍຸການຂອງການຢື່ນຄຳຮ້ອງທຸກ. ຢ່າງໃດກໍ່ດີ ຖ້າເປັນໄປໄດ້ ຄຳຮ້ອງທຸກແມ່ນຄວນຢື່ນໄວເທົ່າໃດຍິ່ງດີພາຍຫລັງທີ່ມີການລະເມີດເກີດຂື້ນ ແລະ ການຮຽກຮ້ອງຄວາມເປັນທຳຈາກຂະບວນການພາຍໃນບໍ່ໄດ້ຮັບຜົນ.

ການຢື່ນຄຳຮ້ອງທຸກທີ່ຊ້າເກີນໄປແມ່ນອາດເຮັດໃຫ້ລັດທີ່ກ່ຽວຂ້ອງນັ້ນບໍ່ສາມາດຕອບບັນຫາທີ່ກ່ຽວຂ້ອງໄດ້ດີປານໃດ ແລະ ມັນຈະເປັນບັນຫາໃຫ້ແກ່ອົງກອນສິດທິມະນຸດໃນການປະເມີນສິ່ງທີ່ເກີດຂື້ນບໍ່ໄດ້ຢ່າງຊັດເຈນ.

ຄຳຮ້ອງທຸກທີ່ກ່ຽວຂ້ອງກັບການລະເມີດທີ່ເກີດຂື້ນກ່ອນການຮັບຮອງກົນໄກການແກ້ໄຂຄຳຮ້ອງທຸກນັ້ນແມ່ນຈະບໍໄດ້ຮັບການພິຈາລະນາ (ຍົກ ເວັ້ນໃນກໍລະນີທີ່ເຫດການນັ້ນຫາກມີຄວາມກ່ຽວເນື່ອງກັບການລະເມີດສົນທິສັນຍາ).

ຄຳຮ້ອງທຸກພາຍໃຕ້ສົນທິສັນຍາສາກົນກວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກເຊື້ອຊາດນັ້ນແມ່ນຕ້ອງໄດ້ຢື່ນພາຍໃນຫົກເດືອນຫລັງຈາກທີ່ໄດ້ໄປຜ່ານຂະບວນການຍຸດຕິທຳພາຍໃນແລ້ວ.

8. **ການປະຕິບັດການທີ່ຮີບດ່ວນ**

ແຕ່ລະຄະນະກຳມາທິການອາດດຳເນີນການຢ່າງໃດໜຶ່ງທີ່ຮີບດ່ວນທີ່ເປັນມາດຕະການແບບຊົ່ວຄາວຖ້າຫາກວ່າເຫດການທີ່ອັນຕະລາຍນັ້ນມີສະພາບທີ່ຮຸນແຮງຂື້ນກ່ອນທີ່ຈະມີການດຳເນີນການແກ້ໄກ້ຢ່າງເປັນທາງການ. ໂດຍປົກກະຕິແລ້ວ, ການລິເລີ່ມດັ່ງກ່າວແມ່ນຖືກປະຕິບັດໄປເພື່ອປ້ອງກັນເຫດການທີ່ອາດບໍ່ສາມາດແກໄຂໄດ້ຕໍ່ໄປ, ຕົວຢ່າງວ່າ ການຕັດສິນປະຫານຊີວິດ ຫຼື ການສົ່ງຜູ້ຮ້າຍຂ້າມແດນທີ່ມີຄວາມສ່ຽງໃນການປະເຊີນກັບການທໍລະມານ.

ບຸກຄົນຫຼືອົງການຈັດຕັ້ງທີ່ຮ້ອງຂໍໃຫ້ອົງກອນສິດທິມະນຸດໃຫ້ດຳເນີນການພິຈາລະນານຳໃຊ້ມາດຕະການຊົ່ວຄາວແມ່ນຄວນຈະລະບຸຈະແຈ້ງໃນຄຳຮ້ອງທຸກທີ່ຢື່ນໄປ.

9. **ບັນຫາທີ່ລະອຽດອ່ອນ**

ຖ້າຫາກວ່າມີບັນຫາທີ່ລະອຽດອ່ອນທີ່ກ່ຽວຂ້ອງກັບຄວາມເປັນສ່ວນຕົວຫຼືເລື່ອງສ່ວນບຸກຄົນທີ່ປະກົດອອກມາໃນຄຳຮ້ອງທຸກ, ມັນມີຄວາມເປັນໄປໄດ້ທີ່ຈະຮ້ອງຂໍໃຫ້ຄະນະກຳມາທິການຊ່ວຍເອົາຊື່ຂອງຜູ້ເຄາະຮ້າຍນັ້ນອອກຈາກຄຳຕັດສິດພິຈາລະນາຄັ້ງສຸດທ້າຍ ເພື່ອວ່າຊື່ ຫຼື ປະຫວັດຂອງຜູ້ກ່ຽວຈະບໍ່ໄດ້ຖືກເປີດເຜີຍຕໍ່ສາທາລະນະ.

**ອົງປະກອບຂອງການດຳເນີນງານ**

ຖ້າຫາກວ່າຄຳຮ້ອງທຸກຫາກກ່ຽວຂ້ອງກັບບັນຫາທີ່ລະບຸໄວ້ຂ້າງເທິງນັ້ນ, ຄຳຮ້ອງຂໍດັ່ງກ່າວກໍ່ຈະຖືກຈັດເຂົ້າໃນບັນຊີ(ເປັນການລົງທະບຽນ)ຢ່າງເປັນທາງການເພື່ອໃຫ້ທາງອົງກອນສິດທິມະນຸດທີ່ກ່ຽວຂ້ອງໄດ້ທຳການພິຈາລະນາຕໍ່ໄປ.

ຫລັງຈາກອົງກອນສິດທິມະນຸດໄດ້ຮັບຄຳຮ້ອງທຸກໃດໜຶ່ງແລ້ວ, ຄຳຮ້ອງດັ່ງກ່າວກໍ່ຈະຖືກສົ່ງໃຫ້ລັດພາຄີທີ່ກ່ຽວຂ້ອງຮັບຊາບເພື່ດດຳເນີນການໃຫ້ຂໍ້ຄິດເຫັນຕໍ່ໄປ. ໃນເວລາທີ່ລັດພາຄີທີ່ກ່ຽວຂ້ອງນັ້ນໄດ້ໃຫ້ຄຳເຫັນແລ້ວ, ທາງບຸກຄົນທີ່ຢື່ນຄຳຮ້ອງທຸກນັ້ນກໍ່ຈະມີໂອກາດໄດ້ໂຕ້ກັບຄຳເຫັນຂອງລັດດັ່ງກ່າວ. ໃນເວລານີ້ຖືວ່າຄຳຮ້ອງທີ່ກ່ຽວຂ້ອງນັ້ນແມ່ນພ້ອມທີ່ຖືກດຳເນີນການຈາກອົງກອນສິດທິມະນຸດໃນຂັ້ນຕອນຕໍ່ໄປ. ຖ້າຫາກວ່າລັດທີ່ກ່ຽວຂ້ອງຫາກບໍ່ມີຄຳເຫັນໃດໆຕໍ່ກັບຄຳຮ້ອງນັ້ນເຖິງວ່າລັດດັ່ງກ່າວຈະໄດ້ຮັບການທັກທ້ວງເປັນເວລາຫລາຍຄັ້ງແລ້ວກໍ່ຕາມ, ຄະນະກຳມາທິກາສິດທິມະນຸດກໍ່ຈະດຳເນີນການຕັດສິນຕາມຄຳຮ້ອງທຸກທີ່ໄດ້ຮັບນັ້ນເລີຍເນື່ອງຈາກວ່າມັນມີເຫດຜົນພຽງ.

ຂະບວນການທົບທວນຂອງອົງກອນສິດທິມະນຸດນັ້ນແມ່ນມີຢູ່ສອງຂັ້ນຕອນໃຫຍ່ອັນເປັນທີ່ຮູ້ຈັກກັນໃນນາມຂັ້ນຕອນ "ການຮັບເອົາ" ແລະ ຂັ້ນຕອນ "ການພິຈາລະນາຫາມູນຄວາມຈິງ". ໃນຂັ້ນຕອນການຮັບເອົານັ້ນ ອົງກອນສິດທິມະນຸດຈະພິ ຈາລະນາວ່າຄຳຮ້ອງດັ່ງກ່າວນັ້ນແມ່ນໄດ້ມີເງື່ອນໄຂຄົບຖ້ວນແລ້ວຫຼືບໍ່. ຖ້າຄຳຮ້ອງໄດ້ຮັບການພິ ຈາລະນາຮັບເອົາ, ຂັ້ນຕອນຕໍ່ໄປກໍຄືການພິຈາລະນາຫາມູນຄວາມຈິງ. ຕາມປົກກະຕິແລ້ວທັງສອງຂັ້ນຕອນນີ້ແມ່ນຈະຢູ່ ໃນຂະບວນການ ດຽວກັນ, ແຕ່ໃນບາງກໍລະນີກໍ່ຕ້ອງໄດ້ແຍກອອກເພາະອີງໃສ່ການຮຽກຮ້ອງຈາກລັດພາຄີທີ່ກ່ຽວຂ້ອງ. ຖ້າຫາກຄຳຮ້ອງ ນັ້ນບໍ່ໄດ້ຖືກຮັບເອົາ, ການພິຈາລະນາມູນຄວາມຈິງກໍ່ຈະຕົກໄປ.

ໃນການພິຈາລະນາແຕ່ລະຄຳຮ້ອງຂອງອົງກອນສິດທິມະນຸດນັ້ນແມ່ນຈະຖືກດຳເນີນໄປແບບປິດລັບ. ໃນກໍລະນີທີ່ຄຳຮ້ອງນັ້ນໄດ້ຮັບການພິຈາລະນາຕັດສິນຈາກອົງກອນສິດທິມະນຸດແລ້ວ, ຄຳຕັດສິນດັ່ງກ່າວກໍ່ຈະ ໄດ້ຖືກສົ່ງໃຫ້ຜູ້ຢື່ນຄຳ ຮ້ອງ ແລະ ໃຫ້ລັດທີ່ກ່ຽວຂ້ອງຕາມລຳດັບ. ຖ້າໃນກໍລະນີທີ່ທາງຄະນະກຳມາທິການສິດທິມະນຸດເຫັນວ່າ ຄຳຮ້ອງທຸກນັ້ນມີມູນຄວາມຈິງທີ່ຜູ້ຢື່ນຄຳຮ້ອງນັ້ນຕົກເປັນເຫຍື່ອຂອງການລະເມີດສິດຕາມຂໍ້ກຳນົດທີ່ມີໃນສົນທິສັນຍາຈາກລັດພາຄີທີ່ກ່ຽວ ຂ້ອງ, ໂດຍທົ່ວໄປທາງຄະນະກຳມາທິການກໍ່ຈະອອກມາດຕະການແກ້ໄຂ ແລະ ແນະນຳໃຫ້ລັດດັ່ງກ່າວປະຕິບັດຕາມກຳ ນົດເວລາທີ່ໃຫ້ໄວ້ (ປົກກະຕິແມ່ນຫົກເດືອນ) ເພື່ອດຳເນີນການແກ້ໄຂປັບປຸງຕາມການສະເໜີຂອງອົງກອນສິດທິມະນຸດ.

ເນື້ອໃນຂອງການພິຈາລະນາມູນຄວາມຈິງທີ່ຮັບຮອງແລ້ວ ຫຼື ບໍ່ໄດ້ຖືກຮັບພິຈາລະນາແມ່ນສາມາດເບິ່ງໄດ້ໃນເວບ ໄຊ້ຂອງ OHCHR ໃນພາກສ່ວນຂອງຫລັກການຕັດສິນຂອງອົງກອນສິດທິມະນຸດ.

**ສະຖານທີ່ຍື່ນຄຳຮ້ອງທຸກຈາກພາກສ່ວນບຸກຄົນພາຍໃຕ້ສົນທິສັນຍາສິດທິມະນຸດສາກົນ**

ຄຳຮ້ອງຄວນສົ່ງຫາ:

Petitions Team

Office of the United Nations High Commissioner for Human Rights

Palais des Nations

8–14, avenue de la Paix

CH–1211 Geneva 10 - Switzerland

Fax: +41 (0)22 917 90 22 (ສຳລັບກໍລະນີຮີບດ່ວນແມ່ນຄວນຈະຍື່ນທຸກເອກະສານທີ່ກ່ຽວຂ້ອງເປັນເອກະສານພິມ)

E-mail: tb-petitions@ohchr.org

ຕ້ອງລະບຸໃຫ້ແຈ້ງວ່າຕ້ອງການສົ່ງຄຳຮ້ອງຫາພາກສ່ວນໃດຂອງອົງກອນສິດທິມະນຸດ

## B. ການລາຍງານສື່ສານພາຍໃຕ້ຂະບວນການພິເສດ

ກົນໄກນີ້ແມ່ນອານຸຍາດໃຫ້ມີການລາຍງານສື່ສານບໍ່ວ່າຈະກ່ຽວກັບຄະດີສ່ວນບຸກຄົນ ຫຼື ກ່ຽວກັບການລະເມີດທົ່ວໄປ. ບຸກຄົນ ຫຼື ໜ່ວຍງານທີ່ເຄື່ອນໄຫວໃນນາມຂອງຜູ້ໃດໜຶ່ງແມ່ນສາມາດຍື່ນຄຳຮ້ອງທຸກຫາຂະບວນການພິເສດໄດ້.

ພາກປະຊາສັງຄົມແມ່ນສາມາດເຮັດໜ້າທີ່ເປັນສູນກາງໃຫ້ແກ່ສ່ວນບຸກຄົນ ຫຼື ອົງການຈັດຕັ້ງໃນການຊອກ ຫາການປົກປ້ອງຈາກການຖືກລະເມີດສິດທິໄດ້. ບຸກຄົນ ຫຼື ອົງການຈັດຕັ້ງທີ່ມີຈຸດປະສົງຢາກຈະຍື່ນຄຳຮ້ອງທຸກໄປ ຫາຂະບວນການພິເສດໃດໜຶ່ງ, ສິ່ງສຳຄັນກໍ່ແມ່ນຄວນຈະທຳການສຶກສາໃຫ້ດີກ່ອນວ່າລັດດັ່ງກ່າວ ຫຼື ກອບອຳນາດ ໜ້າທີ່ຂອງຂະບວນການັ້ນກ່ຽວຂ້ອງກັບຄະດີນັ້ນຫຼືບໍ່. ນອກຈາກນີ້ ການສຶກສາເບິ່ງເງື່ອນໄຂສະເພາະຂອງຂະບວນ ການພິເສດນັ້ນກໍ່ແມ່ນມີຄວາມສຳຄັນຫລາຍກ່ອນທີ່ຈະດຳເນີນການລາຍງານສື່ສານຕາມເງື່ອນໄຂທີ່ມີ ຫຼື ໄດ້ຮັບ ການຕອບຮັບການລາຍງານສື່ສານທີ່ວ່າ. ໂດຍສະເພາະແມ່ນບັນດາເງື່ອນໄຂພິເສດຂອງໜ່ວຍງານກ່ຽວກັບການ ກັກຂັງທີ່ບໍ່ຖືກຕ້ອງ ແລະ ໜ່ວຍງານກ່ຽວກັບການຖືກບັງຄັບໃຫ້ຫາຍສາບສູນທີ່ມີເງື່ອນໄຂພິເສດແຕກຕ່າງໄປ ຈາກໜ່ວຍງານອື່ນ.

ໃນການຮັບເອົາຄຳຮ້ອງທຸກຈາກສ່ວນບຸຄົນເພື່ອຈະດຳເນີນການພິຈາພິຈາລະນາຕໍ່ໄປນັ້ນແມ່ນຈະຂຶ້ນຢູ່ ກັບບັນທັດຖານການຕັດສິນໃຈຂອງຂະບວນການພິເສດ. ການຕັດສິນໃຈທີ່ຈະດຳເນີນການຕໍ່ໄປນັ້ນກໍ່ແມ່ນຕ້ອງໄດ້ອີງ ໃສ່ເງື່ອນທີ່ມີຂອງຂະບວນການພິເສດ ແລະ ປະຕິບັດຕາມລະບຽບການສຳລັບຂະບວນການພິເສດສະເພາະ. ໂດຍທົ່ວໄປແລ້ວເງື່ອນໄຂແມ່ນຈະກ່ຽວຂ້ອງກັບ:

- ຄວາມເປັນຈິງຂອງຂໍ້ມູນ, ທີ່ບໍ່ຄວນເອົາມາຈາກການລາຍງານຂ່າວສານທາງສື່ຕ່າງໆ;
- ຄວາມມີນ້ຳໜັກຂອງຂໍ້ມູນທີ່ໄດ້ຮັບ, ເຊິ່ງບໍ່ຄວນກ່ຽວຂ້ອງກັບບັນຫາທາງການເມືອງ;

VIII

- ລາຍລະອຽດຂອງຂໍ້ມູນທີ່ໄດ້ຮັບ; ແລະ
- ກອບໜ້າທີ່ຮັບຜິຊອບຂອງຂະບວນການພິເສດ.

ເພື່ອອຳນວຍຄວາມສະດວກໃຫ້ແກ່ການກວດກາການລະເມີດທີ່ໄດ້ຮັບລາຍງານມາ, ບັນດາແບບສອບຖາມ ຕ່າງໆ ທີ່ກ່ຽວຂ້ອງກັບຂະບວນການພິເສດແມ່ນສາມາດເບິ່ງໄດ້ໃນລະບົບອອນລາຍທີ່ມີສຳລັບສ່ວນບຸກຄົນທີ່ຢາກລາຍງານການລະ ເມີດທີ່ເກີດຂື້ນ (ຂໍ້ມູນຢູ່ຂ້າງລຸ່ມ). ເຖິງຢ່າງໃດກໍ່ດີ ສິ່ງທີ່ຄວນໃສ່ໃຈກໍ່ຄືວ່າການລາຍງານສື່ສານຈາກສ່ວນບຸກຄົນ ຫຼື ຜູ້ລາຍ ງານອື່ນໆແມ່ນຈະຖືກພິຈາລະນາເຖິງວ່າການລາຍງານນັ້ນບໍ່ໄດ້ໄປຕາມແບບສອບຖາມທີ່ກຳນົດກໍຕາມ. ຜູ້ທີ່ ທຳການ ລາຍງານສື່ສານແມ່ນຄວນຈະສົ່ງຂໍ້ມູນທີ່ໄດ້ພົບເຫັນເພີ່ມເຕີມທີ່ກ່ຽວກັບຂໍ້ມູນເກົ່ານັ້ນໃຫ້ແກ່ໜ່ວຍງານທີ່ຮັບຜິຊອບຢ່າງຕໍ່ເນື່ອງ

## ຂໍ້ມູນແບບໃດທີ່ຄວນປະກອບໃສ່ໃນຄຳຮ້ອງທຸກຂອງບຸກຄົນພາຍໃຕ້ຂະບວນການພິເສດ?

- ຊີວະປະຫວັດຂອງຜູ້ທີ່ເຄາະຮ້າຍ
- ລາຍລະອຽດຂອງຜູ້ກະທຳການລະເມີດ;
- ລາຍລະອຽດຂອງຕົວແທນທີ່ເຄື່ອນໄຫວໃນນາມຜູ້ເຄາະຮ້າຍ ( ຂໍ້ມູນຈະຖືກຮັກສາເປັນຄວາມລັບ);
- ວັນເດືອນປີ ແລະ ສະຖານທີ່ເກີດເຫດ; ແລະ
- ລາຍລະອຽດຂອງສະພາບການທີ່ເກີດການລະເມີດ.

ສິ່ງທີ່ຄວນໃສ່ໃຈ:

- ຕາມລະບຽບການທົ່ວໄປແລ້ວ, ການລາຍງານສື່ສານທີ່ໃຊ້ຄຳເວົ້າທີ່ບໍ່ເໝາະສົມແມ່ນຈະບໍໄດ້ຮັບການພິຈາລະນາ;
- ການລາຍງານຕ້ອງຈະແຈ້ງ ແລະ ມີຄວາມຈິງ;
- ຕ້ອງລະບຸຈະແຈ້ງວ່າຄຳຮ້ອງນັ້ນຕ້ອງການສົ່ງໃຫ້ພາກສ່ວນໃດໃນບັນດາຂະບວນການພິເສດ
- ຕ້ອງສຶກສາເບິ່ງເງື່ອນໄຂຂອງຂະບວນການພິເສດໃຫ້ຄັກແນ່ກ່ອນທີ່ຈະຍື່ນຄຳຮ້ອງທຸກໃດໆມາໃຫ້ຄະນະຮັບຜິຊອບ; ແລະ
- ການລາຍງານຕ້ອງຂຽນເປັນພາສາອັງກິດ, ພາສາຝຣັ່ງ ຫຼື ສະເປນ.

## ສະຖານທີ່ສົ່ງໜັງສືຮ້ອງທຸກຂອງບຸກຄົນພາຍໃຕ້ຂະບວນການພິເສດ.

Special Procedures Division

Office of the United Nations High Commissioner for Human Rights

Palais des Nations

8–14, avenue de la Paix, CH–1211 Geneva 10 - Switzerland

Fax: +41 (0)22 917 90 06,E-mail: urgent-action@ohchr.org

ຕ້ອງລະບຸຈະແຈ້ງວ່າຄຳຮ້ອງນັ້ນຕ້ອງການສົ່ງໃຫ້ພາກສ່ວນໃດໃນບັນດາຂະບວນການພິເສດຕາມທີ່ຢູ່ຂ້າງເທິງນີ້. ຢ່າລືມວ່າແຕ່ລະຂະ ບວນການພິເສດນັ້ນແມ່ນມີເງື່ອນໄຂໃນການຮັບຄຳຮ້ອງນັ້ນບໍ່ຄືກັນ. ການຍື່ນຄຳຮ້ອງນັ້ນຕ້ອງເປັນໄປຕາມເງື່ອນໄຂຂອງຂະບວນ ການພິເສດ. ລາຍລະອຽດຂອງເງື່ອນໄຂແມ່ນສາມາດເບິ່ງໄດ້ທີ່ເວບຂອງ OHCHR.

ບົນພື້ນຖານຂອງຂໍ້ມູນທີ່ໜ້າເຊື່ອຖືແລະມີຈິງທີ່ໄດ້ຮັບຈາກຜູ້ຖືກເຄາະຮ້າຍທີ່ກ່ຽວກັບການລະເມີດສິດ, ຂະບວນການພິເສດ ແມ່ນສາມາດສົ່ງລາຍລະອຽດການລາຍງານນັ້ນໃຫ້ແກ່ລັດຖະບານທີ່ກ່ຽວຂ້ອງໄດ້ຮັບຊາບ. ການສົ່ງທີ່ວ່ານີ້ແມ່ນຈະດຳເນີນຜ່ານຂະບວນການຂອງ OHCHR ແລະ ອາດສະສົ່ງລາຍງານໃນຮູບແບບເຫດການທີ່ດ່ວນ, ຖ້າຫາກມີການລະເມີດທີ່ຮ້າຍແຮງທີ່ຍັງດຳເນີນຢູ່, ຫຼື ການສົ່ງລາຍງານອາດເຮັດເປັນຈົດໝາຍແບບໃສ່ຂໍ້ກ່າວຫາ ຖ້າຫາກວ່າເຫດການນັ້ນໄດ້ເກີດຂື້ນ ແລ້ວ. ໂດຍຜ່ານການລາຍງານສື່ສານ ຂະບວນການພິເສດກໍ່ຈະສອບຖາມລັດພາຄີທີ່ກ່ຽວຂ້ອງເພື່ອໃຫ້ຄວາມກະຈ່າງແຈ້ງກ່ຽວກັບກໍລະນີພິເສດ/ມາດຕະການແກ້ໄຂທີ່ເໝາະສົມ. ນອກນີ້ທາງຂະບວນການພິເສດຍັງສາມາດຮຽກຮ້ອງໃຫ້ລັດຖະບານທີ່ກ່ຽວຂ້ອງໃຫ້ລາຍງານຜົນທີ່ໄດ້ຈາກການສືບສວນສອບສວນ ແລະ ການດຳເນີນການທີ່ກ່ຽວຂ້ອງນັ້ນ.

ໂດຍອີງຕາມຄຳຕອບທີ່ໄດ້ຮັບ, ທາງຂະບວນການພິເສດອາດຈະຕັ້ງຂໍ້ສອບຖາມອີກ ຫຼື ໃຫ້ຄຳເຫັນແນະນຳເພີ່ມ ຕື່ມ. ໃນບາງກໍລະນີ ເລື່ອງລາວທີ່ວ່ານີ້ແມ່ນອາດຖືກຕີພິມອອກໃຫ້ສາທາລະນະໄດ້ຮັບຮູ້ກໍເປັນໄດ້.

ພາຍໃຕ້ລະບຽບການຂອງສະພາສິດທິມະນຸດ, ທຸກຂະບວນການພິເສດແມ່ນຈະຕ້ອງລາຍງານກ່ຽວກັບກິດຈະກຳຂອງຂອງຕົນໃນກອງປະຊຸມປະຈຳປີ. ການລາຍງານສື່ສານທີ່ສົ່ງ ແລະ ໄດ້ຮັບນັ້ນ ຕາມປົກກະຕິແລ້ວແມ່ນຈະຖືກ ຮັກສາເປັນຄວາມລັບ ຈົນກ່ວາບົດລາຍງານປະຈຳປີຂອງຂະບວນການພິເສດທີ່ກ່ຽວຂ້ອງຈະພິມເຜີຍແຜ່ຕໍ່ໄປ, ຫຼື ຈົນກ່າວ ທາງທີມງານທີ່ຮັບພິຊອບຈະອອກຖະແຫລງທາງສື່.[75]

ຢ່າງໃດກໍ່ດີ ຢ່າລືມວ່າຊື່ຂອງຜູ້ຖືກເຄາະຮ້າຍແມ່ນຈະໄດ້ປະກົດໃນບົດລາຍງານຂອງຂະບວນການພິເສດ, ຍົກເວັ້ນໃນກໍລະນີຂອງເດັກນ້ອຍ ຫຼື ໃນສະຖານະການສະເພາະໃດໜຶ່ງ. ເນື່ອງຈາກຄວາມເປັນສາທາລະນະຂອງບົດລາຍງານຂອງກົນໄກຂະບວນການພິເສດ, ອັນທີ່ສຳຄັນອີກຢ່າງໜຶ່ງກໍ່ຄືບຸກຄົນຫຼືອົງການຈັດຕັ້ງທີ່ເຄືອນໄຫວໃນນາມຂອງຜູ້ຖືກເຄາະຮ້າຍນັ້ນຕ້ອງໄດ້ແຈ້ງໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວ ກັບເລື່ອງລາວຂອງຜູ້ກ່ຽວທີ່ຈະຖືກສົ່ງຕໍ່ໃຫ້ຂະ ບວນການພິເສດ, ພ້ອມທັງຊີວະປະຫວັດຫຍໍ້ຂອງຜູ້ກ່ຽວກໍ່ແມ່ນຕ້ອງໄດ້ລາຍງານໃຫ້ແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງໄດ້ຮັບ ຊາບ, ແລະ ຊື່ຂອງຜູ້ກ່ຽວ (ຊື່ຫຍໍ້)ກໍ່ອາດຈະປະກົດອອກໃນບົດລາຍງານຂອງ ຂະບວນການພິເສດກໍ້ເປັນໄດ້.

75 ອີງຕາມບົດລາຍງານປະຈຳປີ, ບາງຂະບວນການພິເສດກໍ່ອາດຈະໄດ້ຈັດພິມເອກະສານອື່ນໆເພື່ອເປັນການອະທິບາຍກ່ຽວ ກັບວຽກງານ ແລະ ຂອບເຂດ ໜ້າທີ່ຮັບພິຊອບຂອງພວກເຂົາ. ໂດຍສະເພາະແມ່ນໜ່ວຍງານກ່ຽວກັບການກັກຂັງທີ່ບໍ່ຖືກຕ້ອງ "ຂະບວນການປຶກສາຫາລື" ກ່ຽວກັບບັນຫາທົ່ວໄປ ແລະ "ຄຳຄິດເຫັນຕ່າງໆ" ທີ່ກ່ຽວຂ້ອງກັບການຮ້ອງທຸກໃນສ່ວນບຸກຄົນ; ແລະ ໜ່ວຍງານທີ່ກ່ຽວກັບການຖືກບັງຄັບໃຫ້ຫາຍສາບສູນ "ຄຳເຫັນທົ່ວໄປ" ກ່ຽວກັບຖະແຫລງການວ່າດ້ວຍ ການປົກປ້ອງບຸກຄົນທີ່ຫາຍສາບສູນ.

# ການຍື່ນຄຳຮ້ອງທຸກກ່ຽວກັບການລະເມີດສິດທິມະນຸດ

ແບບສອບຖາມທີ່ມີມາດຕະຖານສຳລັບການລາຍງານບັນຫາການລະເມີດສິດທິມະນຸດພາຍໃຕ້ພາລະໜ້າທີ່ຂອງໜ່ວຍງານດັ່ງຕໍ່ໄປນີ້:

- ໜ່ວຍງານທີ່ເຮັດວຽກກ່ຽວກັບການກັກຂັງທີ່ບໍ່ມີເຫດຜົນ
- ໜ່ວຍງານທີ່ເຮັດວຽກກ່ຽວກັບການບັງຄັບໃຊ້ ຫລື ການຫາຍສາບສູນແບບບໍ່ໄດ້ສະມັກໃຈ
- ໜ່ວຍງານທີ່ເຮັດວຽກກ່ຽວກັບການນຳໃຊ້ວິທີການວ່າຈ້າງໃຫ້ຂັດຂວາງຂະບວນການເຄື່ອນໄຫວທີ່ຢາກປົດປ່ອຍໂຕເອງ
- ນັກລາຍງານພິເສດກ່ຽວກັບວິສາມັນຄາດຕະກຳ, ການປະຫານຊີວິດໂດຍບໍ່ມີເຫດຜົນ
- ນັກລາຍງານພິເສດກ່ຽວກັບການສົ່ງເສີມແລະປົກປ້ອງສິດແລະເສລີພາບໃນການສະແດງຄວາມຄິດເຫັນແລະການສະແດງອອກ
- ນັກລາຍງານພິເສດກ່ຽວກັບສິດທິມະນຸດຂອງແຮງງານເຄື່ອນຍ້າຍ
- ນັກລາຍງານພິເສດກ່ຽວກັບການຂາຍເດັກນ້ອຍ, ໂສເພນີເດັກແລະການຖ່າຍຮູບພາບລາມົກເດັກ
- ນັກລາຍງານພິເສດກ່ຽວກັບການທໍລະມານແລະ ການລົງໂທດ ຫຼື ການປະຕິບັດທີ່ໄຮ້ມະນຸດສະທຳ ແລະ ເຊື່ອມເສຍກຽດສັກສີ
- ນັກລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ນແມ່ຍິງແລະເດັກນ້ອຍ
- ນັກລາຍງານພິເສດກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ, ສາເຫດແລະຜົນສະທ້ອນ; ແລະ
- ນັກລາຍງານພິເສດກ່ຽວກັບສະຖານະການຂອງຜູ້ເຄື່ອນໄຫວດ້ານສິດທິມະນຸດ

ຢ່າງໃດກໍຕາມ,

ການລາຍງານສື່ສານຈາກບຸກຄົນແລະພາກສ່ວນອື່ນໆຈະໄດ້ຮັບການພິຈາລະນາເຖິງແມ່ນວ່າຄຳຮ້ອງທຸກທີ່ຍື່ນມານັ້ນແມ່ນບໍໄດ້ເຮັດໃນຮູບແບບການສອບຖາມທີ່ມີໄວ້ໃຫ້ກໍ່ຕາມ.

VIII

### C. ຂະບວນການຮ້ອງທຸກຂອງສະພາສິດທິມະນຸດ

ພາຍໃຕ້ຂະບວນການຮ້ອງທຸກຂອງສະພາສິດທິມະນຸດ, ການລາຍງານແມ່ນອາດຈະຖືກຍື່ນມາຈາກບຸກຄົນໃດໜຶ່ງ ຫຼື ກຸ່ມຄົນໃດໜຶ່ງກໍໄດ້ຖ້າຫາກວ່າເຂົາເຈົ້າໃຫ້ການຢືນຢັນວ່າໄດ້ຖືກລະເມີດສິດທິ ຫຼື ໄດ້ຮູ້ເຫັນໂດຍຕົງທີ່ມີຄວາມເຊື່ອຖືໄດ້ກ່ຽວກັບການລະເມີດສິດທິມະນຸດ.

ອົງປະກອບທີ່ສຳຄັນກ່ຽວກັບລະບຽບການນີ້ແມ່ນໄດ້ຖືກກຳນົດຕາມຂ້າງລຸ່ມນີ້.

**ຂໍ້ມູນແບບໃດທີ່ຄວນເອົາໃສ່ໃນຄຳຮ້ອງທຸກພາຍໃຕ້ຂະບວນການຮ້ອງທຸກຂອງສະພາສິດທິມະນຸດ?**

- ຂໍ້ມູນຂອງຂອງບຸກຄົນ ຫຼືອົງການຈັດຕັ້ງທີ່ໃຫ້ການລາຍງານ (ຂໍ້ມູນທີ່ໄດ້ມານີ້ແມ່ນຈະໄດ້ຮັບການເກັບຮັກສາໄວ້ເປັນຄວາມລັບ ຖ້າຫາກມີການຮ້ອງຂໍ). ການຮ້ອງທຸກທີ່ບໍ່ໄດ້ລະບຸຊື່ແມ່ນຈະບໍ່ໄດ້ຮັບການພິຈາລະນາ;
- ລາຍລະອຽດຂອງຂໍ້ເທັດຈິງທີ່ກ່ຽວຂ້ອງຄວນມີຫລາຍທີ່ສຸດເທົ່າທີ່ເປັນໄປໄດ້, ລະບຸຊື່ຂອງຜູ້ຖືກເຄາະຮ້າຍ, ວັນທີ, ສະຖານທີ່ ແລະ ຫຼັກຖານອື່ນໆ;
- ຈຸດປະສົງຂອງການຮ້ອງທຸກ ແລະ ສິດທິທີ່ຖືກລະເມີດ;
- ຄຳອະທິບາຍຂອງວິທີການຮູບແບບທີ່ຖືກລະເມີດ ແລະ ເປັນການລະເມີດມີກະທົບໃສ່ຈຳນວນຫລາຍກ່ວາການລະເມີດໃນສ່ວນບຸກຄົນ; ແລະ
- ລາຍລະອຽດຂອງວິທີແກ້ໄຂພາຍໃນປະເທດທີ່ບໍ່ໄດ້ຜົນ, ຫຼື ຄຳອະທິບາຍຂອງວິທີການແກ້ໄຂດັ່ງກ່າວທີ່ບໍ່ມີປະສິດທິຜົນ ຫຼື ແກ່ຍາວເວລາດົນນານທີ່ບໍ່ມີເຫດຜົນ.

**ຫມາຍເຫດ:**

- ຄຳຮ້ອງຮຽນທັງຫມົດຈະຕ້ອງຂຽນເປັນລາຍລັກອັກສອນ. ກະລຸນາສັງເກດວ່າມັນບໍ່ມີເຫດຜົນພຽງພໍທີ່ຈະອ້າງຂໍ້ມູນທີ່ມາຈາກບົດລາຍງານຂອງສື່ມວນຊົນ. ຖ້າຫາກວ່າມີຈຸດປະສົງທີ່ຈະສົ່ງບົດລາຍງານສິດທິມະນຸດເປັນຫຼັກຖານນັ້ນແມ່ນຕ້ອງຄັດຕິດໜັງສືເຈດຈຳນົງຂອງຕົນເອງ, ອະທິບາຍເຫດຜົນທີ່ຕ້ອງການໃຫ້ຄຳຮ້ອງທຸກນັ້ນໃຫ້ໄດ້ຮັບການພິຈາລະນາພາຍໃຕ້ຂະບວນການຮ້ອງທຸກຂອງສະພາສິດທິມະນຸດ;
- ຄຳຮ້ອງທຸກນັ້ນຄວນທີ່ຈະຈຳກັດ 10-15 ຫນ້າ. ສ່ວນຂໍ້ມູນທີ່ຈະເພີ່ມເຕີມນັ້ນແມ່ນສາມາດສົ່ງຕາມທີຫລັງກໍໄດ້. ຄຳຮ້ອງທຸກສາມາດຂຽນເປັນພາສາອັງກິດ, ຝຣັ່ງ, ລັດເຊຍຫລືພາສາສະເປນກໍ່ໄດ້. ເອກະສານທີ່ຂຽນເປັນພາສາອື່ນ ໆ ແມ່ນຄວນຈະຕ້ອງແປຫຼືສະຫຼຸບໃຫ້ຢູ່ໃນຫນຶ່ງຂອງພາສາທີ່ກ່າວມານີ້; ແລະ
- ການລາຍງານທີ່ມີພາສາບໍ່ເຫມາະສົມ ຫລື ຫມິ່ນປະຫມາດແມ່ນຈະບໍ່ໄດ້ຮັບການພິຈາລະນາ.

ລາຍລະອຽດຂອງຮູບແບບແລະຂັ້ນຕອນຂອງກົນໄກການຮ້ອງທຸກນີ້ແມ່ນໄດ້ກຳນົດໄວ້ໃນມະຕິຂອງສະພາສິດທິມະ ນຸດເລກທີ 5/1. ຂໍ້ມູນທີ່ມີໃນພາກນີ້ແມ່ນອ້າງອີງມາຈາກມະຕິດັ່ງກ່າວ.

ເປັນທີ່ຄາດການວ່າຂໍ້ກຳນົດເບື້ອງຕົ້ນເຫຼົ່ານີ້ແລະວິທີການເຮັດວຽກໂດຍສະເພາະແມ່ນກ່ຽວກັບຂໍ້ສະເຫນີແນະນຳແລກປ່ຽນທີ່ໄດ້ຜ່ານຂັ້ນຕອນຕ່າງໆມາແມ່ນ ຈະໄດ້ຮັບການພັດທະນາຕໍ່ໄປ.

**ຂັ້ນຕອນຂອງຂະບວນການຮ້ອງທຸກມີດັ່ງນີ້:**

**ຂັ້ນຕອນທີ 1: ການຄັດເລືອກເບື້ອງຕົ້ນ**

ກອງເລຂາຂອງ OHCHR, ຮ່ວມກັບທ່ານປະທານຂອງໜ່ວຍປະຕິບັດການສື່ສານແມ່ນຈະໃຫ້ການກວດກາບັນດາຄຳ ຮ້ອງທັງໝົດ (ຄຳຮ້ອງທຸກ) ທີ່ໄດ້ຮັບມາວ່າມັນມີຄວາມສອດຄ່ອງກັບເງື່ອນໄຂພື້ນຖານທີ່ຈະຮັບພິຈາລະນາໄດ້ບໍ່, ພ້ອມ ກັນນັ້ນທາງໜ່ວຍງານກໍ່ຈະຄັດເລືອກຄຳຮ້ອງທີ່ບໍ່ສອດຄ່ອງນັ້ນອອກໄປ. ຖ້າຫາກວ່າຄຳຮ້ອງນັ້ນຖືກຮັບເອົາແລ້ວ ຜູ້ທີ່ຍື່ນຄຳຮ້ອງມານັ້ນກໍ່ແມ່ນຈະໄດ້ຮັບການຢືນຢັນເປັນລາຍລັກອັກສອນແລະຄຳຮ້ອງດັ່ງກ່າວກໍ່ຈະຖືກສົ່ງໃຫ້ລັດຖະບານທີ່ກ່ຽວຂ້ອງເພື່ອມີ ຄຳເຫັນຕໍ່ໄປ.

**ຂັ້ນຕອນທີ 2: ໜ່ວຍງານກ່ຽວກັບການລາຍງານສື່ສານ**

ໜ່ວຍງານກ່ຽວກັບການລາຍງານສື່ສານຈະປະກອບດ້ວຍສະມາຊິກທີ່ໄດ້ຮັບການແຕ່ງຕັ້ງມາຈາກຄະນະກຳມາທິການ ທີ່ປຶກສາສິດທິມະນຸດຈຳນວນຫ້າທ່ານ ແລະ ໄດ້ຮັບໜ້າທີ່ເພື່ອຈັດກອງປະຊຸມປຶກສາຫາລືຢ່າງໜ້ອຍປີລະສອງຄັ້ງ, ແຕ່ລະຄັ້ງແມ່ນຈະຈັດຢູ່ຫ້າວັນ.

ໜ່ວຍງານດັ່ງກ່າວນີ້ແມ່ນຈະໄດ້ດຳເນີນການກວດກາຄຳຮ້ອງທຸກທີ່ໄດ້ຜ່ານຂັ້ນຕອນຂອງການຄັດເລືອກເບື້ອງຕົ້ນມາແລ້ວ ແລະ ກວດກາບັນດາເອກະສານການຕອບກັບທີ່ໄດ້ຮັບຈາກລັດຖະບານເພື່ອຊອກຫາ ແລະ ທຳຄວາມເຂົ້າໃຈກ່ຽວກັບທີ່ໄປທີ່ມາຂອງບັນ ຫາທີ່ອາດຈະແຕະຕ້ອງກ່ຽວຂ້ອງກັບຮູບແບບການລະເມີດໃດໜຶ່ງທີ່ມີ ແລະ ສາມາດພິສູດໄດ້ເຖິງຄວາມເປັນຈິງຂອງບັນຫາການ ລະເມີດສິດທິ ແລະ ເສລີພາບຂັ້ນພື້ນຖານໄດ້.

**ຂັ້ນຕອນທີ 3: ໜ່ວຍງານກ່ຽວກັບສະຖານະການ**

ໜ່ວຍງານກ່ຽວກັບສະຖານະການແມ່ນປະກອບດ້ວຍສະມາຊິກຂອງສະພາສິດທິມະນຸດຫ້າທ່ານທີ່ເຮັດວຽກຕາມຄວາມສາມາດຂອງ ຕົນ, ແລະໄດ້ຮັບໜ້າທີ່ຈັດປະຊຸມຢ່າງຫນ້ອຍປີລະສອງຄັ້ງ, ແຕ່ລະຄັ້ງແມ່ນໃຊ້ເວລາຢູ່ຫ້າມື້ເພື່ອພິຈາລະນາສະຖານະການທີ່ໄດ້ຮັບຕໍ່ ມາຈາກໜ່ວຍງານກ່ຽວກັບການລາຍງານສື່ສານ. ກອງປະຊຸມກແມ່ນຈະປະເມີນເບິ່ງບັນດາຄຳຮ້ອງທີ່ກ່ຽວຂ້ອງກັບໜ້າທີ່ຕົນ ພ້ອມທັງເຮັດບົດລາຍງານເພື່ອສົ່ງໃຫ້ແກ່ສະພາສິດທິມະນຸດໃຫ້ຮັບຊາບກ່ຽວກັບບົດລາຍງານນັ້ນ. ນອກນັ້ນທາງໜ່ວຍງານຍັງຕ້ອງ ໄດ້ມີຄຳແນະນຳທີ່ສະເພາະກ່ຽວກັບວິທີການຈັດຕັ້ງປະຕິບັດຕໍ່ກັບບັນຫາທີ່ເກີດຂຶ້ນຖ້າເຫັນວ່າມັນຕົກຢູ່ໃນຮູບແບບການລະເມີດທີ່ຮ້າຍ ແຮງ. ອີກທາງເລືອກອື່ນກໍ່ແມ່ນການຕັດສິນໃຈທີ່ຈະໃຫ້ການຈັບຕາເບິ່ງສະຖານະການ ຫຼື ບໍ່ຮັບເອົາຄຳຮ້ອງທຸກດັ່ງກ່າວ.

> ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບຄະນະກຳມາທິການທີ່ປຶກສາສະພາສິດທິມະນຸດແມ່ນສາມາດເບິ່ງໃນບົດທີ V (ສະພາສິດທິມະນຸດ) ຂອງປຶ້ມຄູ່ມືນີ້.

**ຂັ້ນຕອນທີ 4: ສະພາສິດທິມະນຸດ**

ສະພາສິດທິມະນຸດຈະໃຫ້ການພິຈາລະນາເປັນໄລຍະ ແລະ ຕາມການຮຽກຮ້ອງກ່ຽວກັບການລາຍງານສະຖານະການທີ່ໄດ້ຮັບມາຈາກໜ່ວຍງານກ່ຽວກັບສະຖານະການ, ແຕ່ຢ່າງໜ້ອຍແມ່ນໜຶ່ງຄັ້ງຕໍ່ປີ. ສະພາຈະວິເຄາະບົດລາຍງານຂອງໜ່ວຍງານກ່ຽວກັບສະຖານະການທີ່ສົ່ງມາໃຫ້ແບບປິດລັບ, ນອກຈາກວ່າຈະຕັດສິນໃຈເປັນຢ່າງອື່ນ. ອີງຕາມການພິຈາ ລະນາສະຖານະການ, ສະພາອາດຈະດຳເນີນການຢ່າງໃດໜຶ່ງ, ຕາມປົກກະຕິແລ້ວແມ່ນຈະດຳເນີນການໃນຮູບແບບຂອງການອອກມະຕິແກ້ໄຂ ຫລື ມະຕິຕົກລົງ.

ສະພາອາດຈະຕັດສິນໃຊ້ມາດຕະການດັ່ງຕໍ່ໄປນີ້:

- ຢຸດການພິຈາລະນາສະຖານະການໃນເວລາທີ່ມາດຕະການ ຫຼື ການພິຈາລະນາບໍ່ໄດ້ຮັບການເຫັນດີ;

- ຈັບຕາເບິ່ງສະຖານະການແລະຮຽກຮ້ອງໃຫ້ລັດຖະບານທີ່ກ່ຽວຂ້ອງສະໜອງຂໍ້ມູນເພີ່ມເຕີມພາຍໃນໄລຍະເວລາທີ່ກຳນົດ;
- ຈັບຕາເບິ່ງສະຖານະການ ແລະ ແຕ່ງຕັ້ງຜູ້ຊ່ຽວຊານທີ່ມີເອກະລາດແລະມີຄຸນສົມບັດສູງເພື່ອຕິດຕາມກວດກາສະຖານະການແລະລາຍງານສະພາບຄືນໃຫ້ສະພາໄດ້ຮັບຊາບ;
- ຢຸດຕິການທົບທວນສະພາບບັນຫາພາຍໃຕ້ຂະບວນການຮ້ອງທຸກທີ່ປິດລັບເພື່ອທີ່ຈະໃຫ້ຂະບວນການແກ້ໄຂໃນລັກສະນະແບບດຽວຂອງພາກລັດທີ່ກ່ຽວຂ້ອງ;
- ໃຫ້ຄຳເຫັນແນະນຳແກ່ OHCHR ວ່າ ຄວນໃຫ້ການຮ່ວມມືດ້ານວິຊາການ, ການສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດ ຫຼື ໃຫ້ຄຳປຶກສາແກ່ລັດທີ່ກ່ຽວຂ້ອງ.

- ທຸກເອກະສານຂໍ້ມູນທີ່ໄດ້ຮັບຈາກບຸກຄົນແລະລັດຖະບານທີ່ກ່ຽວຂ້ອງກັບສະຖານະການທີ່ພວມຢູ່ໃນການພິຈາລະນາ, ເຊັ່ນດຽວກັນກັບການບັນຫາການຕົກລົງທີ່ໄດ້ມາຈາກການດຳເນີນໃນຂະບວນການຕ່າງໆແມ່ນຈະຖືກຮັກສາເປັນຄວາມລັບ. ຫຼັກການປິດລັບນີ້ຍັງນຳໃຊ້ກັບສະຖານະການທີ່ໄດ້ຍົກເລີກການຕິດຕາມໄປແລ້ວ.

**ສະຖານທີ່ບ່ອນສົ່ງຄຳຮ້ອງທຸກພາຍໃຕ້ຂະບວນການຮ້ອງທຸກຂອງສະພາສິດທິມະນຸດ**

Human Rights Council Branch (complaint procedure)
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 917 90 11
E-mail: CP@ohchr.org

VIII

## ເອກະສານຊ້ອນທ້າຍ I - ແບບຟອມການຮ້ອງທຸກສຳລັບການລາຍງານສື່ສານພາຍໃຕ້:

- ອະນຸສັນຍາກາສາກົນແບບເປັນທາງທາງເລືອກຂອງສົນທິສັນຍາວ່າດ້ວຍສິດທິທາງພົນລະເຮືອນ ແລະ ການເມືອງ;
- ສົນທິສັນຍາສາກົນວ່າດ້ວຍການຕ້ານການທໍລະມານແລະການລົງໂທດ ຫຼືການປະຕິບັດທີ່ໄຮ້ມະນຸດສະທຳແລະເຮັດໃຫ້ເຊື່ອມເສຍກຽດສັກສີ; ຫຼື
- ສົນທິສັນຍາສາກົນວ່າດ້ວຍການລົບລ້າງທຸກຮູບແບບຂອງການຈຳແນກເຊື້ອ

ກະລຸນາລະບຸໃຫ້ແຈ້ງວ່າໜ່ວຍງານໃດຂ້າງເທິງນ◌ັ◌ັນທີ່ທ່ານຢາກສົ່ງລາຍງານຫາ

ວັນທີ: ______________

I. ຂໍ້ມູນກ່ຽວກັບຜູ້ຮ້ອງທຸກ:

- ສົນທິສັນຍາສາກົນວ່າດ້ວຍການລົບລ້າງທຸກຮູບແບບຂອງການຈຳແນກເຊື້ອ
- ນາມສະກຸນ
- ຊື່
- ສັນຊາດ
- ວັນທີ່ແລະສະຖານທີ່ເກີດ
- ສະຖານທີ່ເພື່ອຕິດຕໍ່ກັບຫາຜູທີ່ຍື່ນຄຳຮ້ອງທຸກ
- ໃຫ້ບອກແຈ້ງວ່າຄຳຮ້ອງນີ້ແມ່ນຍື່ນໃນນາມ:

- ໃນນາມຂອງທ່ານເອງ
- ໃນນາມຂອງບຸກຄົນອື່ນ

[ຖ້າຫາກວ່າຄຳຮ້ອງທຸກຍື່ນມາໃນນາມຂອງບຸກຄົນອື່ນ:]

- ກະລຸນາໃຫ້ລາຍລະອຽດຂໍ້ມູນສ່ວນຕົວຂອງບຸກຄົນທີ່ເປັນຕົວແທນໃຫ້:
- ນາມສະກຸນ
- ຊື່
- ສັນຊາດ
- ວັນທີ່ແລະສະຖານທີ່ເກີດ
- ທີ່ຢູ່ຫຼືສະຖານທີ່ໃນປະຈຸບັນ.

ຖ້າວ່າທ່ານເປັນຕົວແທນຂອງຜູ້ທີ່ກ່ຽວຂ້ອງແລ້ວ, ກະລຸນາສະແດງຫຼັກຖານການມອບສິດ/ຈາກບຸກຄົນດັ່ງກ່າວດ້ວຍ

*ຫຼື*

ຖ້າຫາກທ່ານບໍ່ໄດ້ຮັບການມອບສິດແລ້ວ, ກະລຸນາອະທິບາຍລັກສະນະຂອງສາຍພົວພັນຂອງທ່ານກັບບຸກຄົນທີ່ກ່ຽວຂ້ອງພ້ອມທັງໃຫ້ລາຍລະອຽດວ່າເປັນຫຍັງທ່ານຈຶ່ງຕັດສິນໃຈເປັນຕົວແທນໃນການ ຍື່ນຄຳຮ້ອງທຸກດັ່ງກ່າວ.

**II. ລັດທີ່ກ່ຽວຂ້ອງ / ມາດຕາທີ່ລະເມີດ**

- ຊື່ຂອງລັດບໍ່ວ່າຈະເປັນພາຄີຂອງອະນຸສັນຍາ (ໃນກໍລະນີຂອງການຍື່ນຄຳຮ້ອງທຸກໄປຫາຄະນະກຳມາທິການສິດທິມະນຸດ) ຫລື ໄດ້ໃຫ້ສັດຕະຍາບັນທີ່ກ່ຽວຂ້ອງກໍຕາມ (ໃນກໍລະນີຂອງການຍື່ນຄຳຮ້ອງທຸກໄປຫາຄະນະກຳມາທິການຕ້ານການທໍລະມານຫລືຄະນະກຳມາທິການກ່ຽວກັບການລົບລ້າງການຈຳແນກເຊື້ອຊາດ);
- ມາດຕາຂອງສົນທິສັນຍາ ຫຼື ສົນທິສັນຍາທີ່ຄິດວ່າຖືກລະເມີດ.

VIII

III. ຄວາມຊົ້ນຫວັງຈາກການນໍາໃຊ້ຂະບວນການແກ້ໄຂພາຍໃນ / ການຍື່ນຄໍາຮ້ອງຫາຂະບວນການສາກົນຕ່າງໆ

- ຂັ້ນຕອນທີ່ຖືກນໍາໃຊ້ໂດຍ ຫຼື ໃນນາມຂອງຜູ້ທີ່ອ້າງວ່າຕົກເປັນຜູ້ເຄາະຮ້າຍເພື່ອຈະໄດ້ຮັບການແກ້ໄຂພາຍໃນລັດທີ່ກ່ຽວຂ້ອງສໍາລັບການລະເມີດທີ່ລາຍງານມາ-ລາຍລະອຽດທີ່ຂະບວນການໄດ້ຕິດຕາມເລື່ອງ, ລວມມີການຂໍ ຄວາມຊ່ວຍເຫຼືອຈາກສານ ແລະ ຈາກເຈົ້າໜ້າທີ່ຂອງລັດທີ່ຮັບຄໍາຮ້ອງ, ຂໍຄວາມຊ່ວຍ ເຫລືອເວລາໃດ, ແລະ ຜົນທີ່ ໄດ້ນັ້ນອອກມາເປັນແບບໃດ;
- ຖ້າຫາກວ່າຍັງບໍ່ທັນໄດ້ນໍາໃຊ້ຂະບວນການພາຍໃນຢ່າງເຕັມທີ່ເນື່ອງມາຈາກການປະຕິບັດໜ້າທີ່ຂອງຂະບວນການນັ້ນແມ່ນແກ່ເວລານານດົນເກີນໄປ, ຂະບວນການບໍ່ມີປະສິດທິພາບ, ຖືກປະຕິເສດການຂໍຄວາມຊ່ວຍເຫລືອ, ຫຼື ມີເຫດຜົນອື່ນໆກໍ່ແມ່ນໃຫ້ບອກລາຍລະອຽດມາ;
- ເຄີຍໄດ້ນໍາໃຊ້ຂະບວນການສາກົນທີ່ກ່ຽວຂ້ອງເພື່ອຂໍໃຫ້ດໍາເນີນການແກ້ໄຂ ຫຼື ກວດກາໃນເລື່ອງທີ່ກ່ຽວຂ້ອງ ນີ້ຫຼືບໍ່ (ຕົວຢ່າງ, ຄະນະກໍາມາທິການສິດທິມະນຸດລະຫວ່າງລັດຂອງອາເມລິກາ, ສານສິດທິມະນຸດແຫ່ງຢູໂຣບ, ຫລື ຄະນະກໍາມາທິການເພື່ອສິດທິຂອງຄົນອັບຝຣິກາ)?;
- ຖ້າເຄີຍແລ້ວ, ກໍ່ໃຫ້ລາຍລະອຽດກ່ຽວກັບການນໍາໃຊ້ຂະບວນການໃດ ຫຼື ສົ່ງເລື່ອງໃຫ້ໃຜ, ຍື່ນໃນເລື່ອງໃດ, ຍື່ນເວລາໃດ, ແລະ ຜົນທີ່ໄດ້ເປັນແນວໃດ.

IV. ຂໍ້ເທັດຈິງຂອງການຮ້ອງທຸກ

- ລາຍລະອຽດ, ຈັດໃຫ້ເປັນລໍາດັບ, ຂໍ້ເທັດຈິງ ແລະ ສະພາບການຂອງການລະເມີດທີ່ລາຍງານມາ - ລາຍງານ ມາທຸກເລື່ອງທີ່ກ່ຽວຂ້ອງເພື່ອຈະເປັນປະໂຫຍດໃຫ້ແກ່ການດໍາເນີນງານ ແລະ ການພິຈາລະນາ ເລື່ອງທີ່ສະເໜີຂຶ້ນ ມານັ້ນ. ຕ້ອງອະທິບາຍເຫດຜົນເປັນຫຍັງຈຶ່ງຄິດວ່າຂໍ້ເທັດຈິງ ແລະ ສະພາບການທີ່ກ່ຽວ ຂ້ອງນັ້ນແມ່ນໄດ້ແຕະຕ້ອງ ສິດທິຂອງທ່ານ;
- ລາຍເຊັນຂອງຜູ້ຂຽນຄໍາຮ້ອງ

V. ລາຍການຂອງເອກະສານທີ່ກ່ຽວຂ້ອງ (ສໍາເນົາເອກະສານ, ເອກະສານທີ່ບໍ່ແມ່ນຕົ້ນສະບັບທີ່ຕ້ອງໄດ້ປະກອບໃສ່ຄໍາຮ້ອງທຸກ):

- ໃບມອບສິດເປັນລາຍລັກອັກສອນ (ຖ້າຫາກເຄື່ອນໄຫວໃນນາມຂອງຄົນອື່ນ ແລະ ຈະບໍ່ຖືວ່າຂາດເອກະສານການມອບສິດອັນໃດໜຶ່ງສະເພາະ);
- ຄໍາຕັດສິນຂອງສານ ແລະ ຂອງເຈົ້າໜ້າທີ່ກ່ຽວກັບການຮ້ອງທຸກດັ່ງກ່າວ (ຖ້າສໍາເນົາເອກະສານກົດໝາຍມານໍາຍິ່ງເປັນການດີ);
- ສົ່ງຄໍາຮ້ອງໃຫ້ໃຜ ແລະ ຜົນການພິຈາລະນາຈາກຂະບວນການສວບສອບສາກົນ ຫຼື ອົງການຊ່ວຍແກ້ໄຂບັນຫາ;
- ເອກະສານອື່ນໆ ຫຼື ຫຼັກຖານທີ່ກ່ຽວຂ້ອງທີ່ສາມາດພິສູດເຖິງຄວາມເປັນຈິງໃນພາກທີ IV (ຂ້າງເທິງ) ທີ່ກ່ຽວກັບຂໍ້ເທັດຈິງທີ່ຮ້ອງທຸກ/ການຢືນຢັນຂອງທ່ານທີ່ວ່າທ່ານໄດ້ຖືກລະເມີດສິດທິຕາມຄວາມເປັນຈິງທີ່ໄດ້ສະເໜີມາ.

**ຖ້າບັນດາເອກະທີ່ກ່າວມານີ້ຫາກບໍ່ໄດ້ຄັດຕິດມາພ້ອມ ທ່ານຈະໄດ້ຖືກຂໍໃຫ້ເອົາຂໍ້ມູນມາສະໜັບສະໜູນກັບ ຄໍາຮ້ອງ ຫຼື ຖ້າສິ່ງທີ່ຄັດຕິດມານັ້ນຫາກບໍ່ໄດ້ເປັນພາສາທາງການແລ້ວ, ການຍື່ນຄໍາຮ້ອງທຸກ ທີ່ກ່ຽວຂ້ອງນັ້ນກໍ່ຈະຊ້າອອກໄປອີກ.**

## ເອກະສານຊ້ອນທ້າຍ II - ລະບຽບການຍື່ນຄຳຮ້ອງທຸກສຳລັບການລາຍງານສື່ສານພາຍໃຕ້:

- **ອະນຸສັນຍາຂອງສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບຂອງການຈຳແນກຕໍ່ແມ່ຍິງ**

- 1. ຂໍ້ມູນສ່ວນຕົວຂອງຜູ້ທີ່ລາຍງານສື່ສານ
- ນາມສະກຸນ
- ຊື່
- ວັນທີ່ແລະສະຖານທີ່ເກີດເຫດ
- ສັນຊາດ / ພົນລະເມືອງ
- ໜັງສືຜ່ານແດນ / ບັດປະຈຳຕົວ (ຖ້າມີ)
- ເພດ
- ສະຖານະຄອບຄົວ / ເດັກນ້ອຍ
- ອາຊີບ
- ຊົນເຜົ່າ, ສາດສະໜາ, ກຸ່ມໃນສັງຄົມ (ຖ້າຫາກວ່າກ່ຽວຂ້ອງ)
- ທີ່ຢູ່ປັດຈຸບັນ
- ທີ່ຢູ່ໄປສະນີສຳລັບການຕິດຕໍ່ກັບທີ່ເປັນຄວາມລັບ (ຖ້າຫາກມີ)
- ແຟກ / ໂທລະສັບ / e-mail
- ບອກແຈ້ງວ່າທ່ານກຳລັງຍື່ນຄຳຮ້ອງໃນນາມ:

- ຜູ້ທີ່ອ້າງວ່າຖືກເຄາະຮ້າຍເອງ; ຖ້າອ້າງວ່າເປັນຜູ້ຖືກເຄາະເປັນກຸ່ມແມ່ນຕ້ອງສະແດງຂໍ້ມູນພື້ນຖານຂອງແຕ່ລະຄົນ.
- ໃນນາມຜູ້ອື່ນທີ່ອ້າງວ່າຖືກເຄາະຮ້າຍ; ຕ້ອງໄດ້ສະເໜີຫຼັກຖານການມອບສິດ, ຫຼືເຫດຜົນທີ່ຍັງຍືນການເປັນຕົວແທນໂດຍບໍ່ຕ້ອງມີການມອບສິດ

2. ຂໍ້ມູນກ່ຽວກັບຜູ້ທີ່ອ້າງວ່າຕົກເປັນຜູ້ເຄາະຮ້າຍ (ຖ້າບໍ່ແມ່ນຜູທີ່ຂຽນຄຳຮ້ອງ)

- ນາມສະກຸນ
- ຊື່
- ວັນທີ່ແລະສະຖານທີ່ເກີດເຫດ
- ສັນຊາດ / ພົນລະເມືອງ
- ໜັງສືຜ່ານແດນ / ບັດປະຈຳຕົວ (ຖ້າມີ)
- ເພດ
- ສະຖານະຄອບຄົວ / ເດັກນ້ອຍ
- ອາຊີບ
- ຊົນເຜົ່າ, ສາດສະໜາ, ກຸ່ມໃນສັງຄົມ (ຖ້າຫາກວ່າກ່ຽວຂ້ອງ)
- ທີ່ຢູ່ປັດຈຸບັນ
- ທີ່ຢູ່ໄປສະນີສຳລັບການຕິດຕໍ່ກັບທີ່ເປັນຄວາມລັບ (ຖ້າຫາກມີ)
- ແຟກ / ໂທລະສັບ / e-mail

3. **ຂໍ້ມູນກ່ຽວກັບລັດພາຄີທີ່ກ່ຽວຂ້ອງ**

- ຊື່ຂອງລັດພາຄີ (ປະເທດ).

4. **ລັກສະນະຂອງການລະເມີດທີ່ຖືກກ່າວຫາ**

ສະຫນອງຂໍ້ມູນລະອຽດເພື່ອສະນັບສະໜູນຄໍາຮ້ອງທຸກຂອງທ່ານເຊິ່ງລວມມີ:

- ຄໍາອະທິບາຍລະອຽດຂອງການການລະເມີດທີ່ກ່າວຫາ ແລະ ຜູ້ທີ່ຖືກກ່າວຫາວ່າໄດ້ກະທໍາຜິດ
- ວັນເດືອນປີ
- ສະຖານທີ່
- ຂໍ້ກໍານົດໃນສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈໍາແນກຕໍ່ແມ່ຍິງທີ່ອ້າງວ່າໄດ້ຖືກລະເມີດ. ຖ້າການລາຍງານນັ້ນຫາກຫຼາຍກ່ວາຫນຶ່ງຢ່າງ, ມັນຈໍາເປັນຕ້ອງໄດ້ອະທິບາຍບັນຫາແຕ່ລະຢ່າງແຍກກັນ.

5. **ການນໍາໃຊ້ຂະບວນການພາຍໃນໝົດທຸກຢ່າງແລ້ວແຕ່ບໍ່ໄດ້ຮັບຜົນ**

ອະທິບາຍການທີ່ນໍາໃຊ້ຂະບວນການພາຍໃນໝົດທຸກຢ່າງແລ້ວແຕ່ບໍ່ໄດ້ຮັບຜົນ; ຕົວຢ່າງ, ຄວາມພະຍາຍາມທີ່ຈະໄດ້ຮັບການແກ້ໄຂທາງກົດໝາຍ, ທາງບໍລິຫານ, ນິຕິກໍາ, ນະໂຍບາຍ ຫຼືໂຄງການທີ່ຈະແກ້ໄຂ, ລວມທັງ:

- ປະເພດຂອງການແກ້ໄຂທີ່ສະແຫວງຫາ
- ວັນເດືອນປີ
- ສະຖານທີ່
- ໃຜເລີ່ມດໍາເນີນງານໃຫ້ກ່ອນໝູ່
- ເຈົ້າໜ້າທີ່ຄົນໃດ ຫຼື ອົງກອນໃດຊ່ວຍແກ້ໄຂ
- ຊື່ຂອງສານທີ່ດໍາເນີນຄະດີໃຫ້(ຖ້າມີ)
- ຖ້າຫາກວ່າວິທີແກ້ໄຂພາຍໃນຍັງບໍ່ທັນໄດ້ໃຊ້ຫມົດ,
- ຫມາຍເຫດ: ຄັດຕິດເອກະສານສໍາເນົາທີ່ກ່ຽວຂ້ອງທັງຫມົດ.

6 **ຂະບວນການສາກົນອື່ນໆ**

ເຄີຍໄດ້ນໍາໃຊ້ຂະບວນການສາກົນທີ່ກ່ຽວຂ້ອງເພື່ອຂໍໃຫ້ດໍາເນີນການແກ້ໄຂ ຫຼື ກວດກາໃນເລື່ອງທີ່ກ່ຽວຂ້ອງນີ້ຫຼືບໍ່ ຖ້າໄດ້ໃຊ້ແລ້ວກໍໃຫ້ອະທິບາຍ

- ປະເພດຂອງຂະບວນການ
- ວັນເດືອນປີ
- ສະຖານທີ່
- ຜົນທີ່ອອກມາ (ຖ້າມີ)

**ຫມາຍເຫດ: ຄັດຕິດສໍາເນົາຂອງເອກະສານທີ່ກ່ຽວຂ້ອງທັງຫມົດ.**

7. **ວັນທີ່ ແລະ ລາຍເຊັນ**

ວັນທີ / ສະຖານທີ່: ______________________

ລາຍເຊັນຂອງຜູ້ຂຽນ ແລະ / ຫຼື ຜູ້ຖືກເຄາະຮ້າຍ): ________

8 ບັນຊີລາຍການຂອງເອກະສານຄັດຕິດ (ບໍ່ຕ້ອງສົ່ງຕົ້ນສະບັບ, ພຽງແຕ່ສໍາເນົາກໍ່ໄດ້)

## IX. ກອງທຶນ ແລະ ກອງທຶນຊ່ວຍເຫລືອລ້າ

ກອງທຶນ ແລະ ກອງທຶນຊ່ວຍເຫລືອລ້າແມ່ນມີຈຳນວນຫລວງຫລາຍ, ບາງກອງທຶນແມ່ນໄດ້ຮັບການຄຸ້ມຄອງໂດຍກົງຈາກສຳນັກງານ (OHCHR) ທີ່ຈະໃຫ້ປະໂຫຍດໂດຍກົງແກ່(NGOs), ພາກປະຊາສັງຄົມ, ອົງການຂັ້ນຮາກຖານ, ສະມາຄົມວິຊາຊີບແລະບຸກຄົນ. ກອງທຶນເຫຼົ່ານີ້ແມ່ນສາມາດສະຫນັບສະຫນູນທາງດ້ານການເງິນແກ່ກິດຈະກຳ ຂອງພາກປະຊາສັງຄົມໃນຂົງເຂດສິດທິມະນຸດສະເພາະ.

ກອງທຶນແມ່ນມີໄວ້ໃຫ້ເພື່ອສະໜັບສະໜຸນບັນດາກິດຈະກຳຕ່າງໆທີ່ຢູ່ພາຍໃຕ້ພາລະໜ້າທີ່ຂອງຕົນ. OHCHR ແລະ ສຳນັກງານຂອງ ສປຊ ຕ່າງໆແມ່ນໃຫ້ການຄຸມຄອງກອງທຶນ ແລະ ກອງທຶນຊ່ວຍເຫືອລ້າຫລາຍຢ່າງເພື່ອຈະນຳ ໃຊ້ເຂົ້າໃນການຊ່ວຍເຫລືອພາກປະຊາສັງຄົມໃນຂົງເຂດໃດໜຶ່ງສະເພາະ. ກອງທຶນແມ່ນໄດ້ຮັບການປະກອບສ່ວນແບບອາ ສາສະມັກຈາກລັດຖະບານຕ່າງໆ, NGOs, ອົງການພາກເອກະຊົນ ຫຼື ພາກລັດ, ແລະ ໄດ້ຈາກສ່ວນບຸກຄົນທີ່ຢາກໃຫ້ ການສະນັບສະໜຸນວຽກງານຂອງອົງການຕ່າງໆ.

ອົງການພາກປະຊາສັງຄົມເຊັ່ນ: NGOs, ອົງການຂັ້ນຮາກຖານ, ກຸ່ມໃນຊຸມຊົນ, ແລະ ສະມາຄົມວິຊາຊີບຕ່າງໆ ໂດຍທົ່ວໄປແລ້ວແມ່ນສາມາດຮ້ອງຂໍການຊ່ວຍເຫລືອຈາກກອງທຶນ ແລະ ກອງທຶນຊ່ວຍເຫລືອລ້າໄດ້. ໃນບາງກໍລະນີ ສ່ວນບຸກຄົນກໍ່ອາດຂໍການຊ່ວຍເຫລືອນີ້ໄດ້ແຕ່ຄວນຈະສຶກສາເບິ່ງເງື່ອນໄຂໃຫ້ດີເສຍກ່ອນ ແລະ ຕ້ອງເບິ່ງວ່າຕົນເອງນັ້ນມີ ເງື່ອນໄຂພຽງແລ້ວຫຼືບໍ່.

**ສຳລັບອົງການ NGO ແລະ ພາກປະຊາສັງຄົມທີ່ມີສະຖານະທີ່ເປັນປຶກສາໃຫ້ແກ່ສະພາເສດຖະກິດແລະສັງຄົມສະຫະປະຊາຊາດ (ECOSOC) ແມ່ນສາມາດຂໍນຳໃຊ້ກອງທຶນທັງສອງໄດ້ຢ່າງໂດຍບໍ່ມີເງື່ອນໄຂ.**

### A. ກອງທຶນ ແລະ ກອງທຶນຊ່ວຍເຫລືອລ້າແມ່ນຫຍັງ?

**ກອງທຶນ ແລະ ກອງທຶນຊ່ວຍເຫລືອລ້າທີ່ໄດຮັບການຄຸມຄອງໂດຍ OHCHR ແມ່ນ:**

- **ກອງທຶນອາສາຂອງສະຫະປະຊາຊາດສຳລັບຜູ້ຖືກເຄາະຮ້າຍຈາກການທໍລະມານ**ທີ່ໃຫ້ການທຶນຊ່ວຍເຫລືອ ລ້າແກ່ພາກປະຊາສັງຄົມນັ້ນແມ່ນຈະໃຫ້ການຊ່ວຍເຫຼືກທາງດ້ານການແພດ, ທາງຈິດຕະແພດ, ສັງຄົມ, ເສດຖະກິດ, ກົດຫມາຍ, ມະນຸດສະທຳ ຫຼື ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການທໍລະມານ ແລະ ຊ່ວຍຄອບຄົວຂອງເຂົາ ເຈົ້າໃນຮູບແບບຕ່າງໆ. ພາກສ່ວນປະຊາສັງຄົມທີ່ມີເງື່ອນໄຂແມ່ນມີ NGOs, ສູນຟື້ນຟູພິເສດ, ນັກເຄື່ອນໄຫວສິດ ທິມະນຸດ, ເຊັ່ນວ່າ ທະນາຍຄວາມທີ່ເປັນຕົວແທນແກ່ຜູ້ຖືກເຄາະຮ້າຍ;

---

ປື້ມຄູ່ມືນີ້ແມ່ນສາມາດເອົາໄດ້ໃນເວບຂອງ OHCHR ທີ່: http://www.ohchr.org/civilsocietyhandbook/ ນອກນີຍັງສາມາດດາວໂລດປື້ມຄູ່ມືທີ່ເປັນແຕ່ລະບົດ ແລະ ຂໍ້ມູນທີ່ກ່ຽວຂ້ອງຕ່າງໆໄດ້

- ກອງທຶນອາສາສະໝັກສໍາລັບຄົນພື້ນເມືອງທີ່ໄດ້ໃຫ້ການຊ່ວຍເຫຼືອທຶນໃນການເດີນທາງເພື່ອອໍານວຍຄວາມສະດວກໃຫ້ແກ່ຜູ້ແທນຈາກຊຸມຊົນ ຫຼື ອົງການຂອງຄົນພື້ນເມືອງໃຫ້ໄດ້ມີໂອກາດເດີນທາງເຂົ້າຮ່ວມກອງປະຊຸມຂອງ ຂອງ ສປຊ ທີ່ກ່ຽວກັບບັນຫາຂອງຄົນພື້ນເມືອງ;
- ກອງທຶນສໍາຮອງອາສາແຫ່ງສະຫະປະຊາຊາດກ່ຽວກັບຮູບແບບການເປັນຂ້າທາດຮ່ວມສໍາໄໝ, ທີ່ໄດ້ໃຫ້ການຊ່ວຍເຫຼືອທຶນໂຄງານທີ່ນ້ອຍໆແກ່ພາກປະຊາສັງຄົມໂດຍສະເພາະ ເຊັ່ນ NGOs, ຊຸມຊົນ ແລະ ອົງການຊາວໜຸ່ມ, ກໍາມະບານ ຫຼື ສະມາຄົມວິຊາຊີບຕ່າງໆທີ່ມີສ່ວນຮ່ວມຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກຮູບແບບ ການເປັນຂ້າທາດຮ່ວມສະໄໝ; ແລະ
- ໂຄງການ "ການຊ່ວຍເຫຼືອຊຸມຊົນຮ່ວມກັນ" (ACT) ທີ່ໃຫ້ການຊ່ວຍເຫຼືອທຶນທີ່ນ້ອຍໆແກ່ການລິເລີ່ມໃນການຝຶກອົບຮົບ ແລະ ສຶກສາກ່ຽວກັບສິດທິມະນຸດ.

**ອີກສອງກອງທຶນທີ່ໃຫ້ການຊ່ວຍເຫຼືອແກ່ກິດຈະກໍາຂອງພາກປະຊາສັງຄົມກ່ຽວກັບບັນຫາຕ່າງໆທີ່ສໍາຄັນແມ່ນມີລາຍລະອຽດໃນບົດນີ້ຄື:**

- ກອງທຶນເພື່ອປະຊາທິປະໄຕແຫ່ງສະຫະປະຊາຊາດ, ທີ່ໃຫ້ການຊ່ວຍເຫຼືອທຶນສໍາລັບໂຄງການທີ່ຈະກໍ່ສ້າງ ແລະສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນປະຊາທິປະໄຕ, ສົ່ງເສີມສິດທິມະນຸດແລະຮັບປະກັນການມີສ່ວນຮ່ວມຂອງທຸກໜ່ວຍງານໃນຂະບວນການຊາທິປະໄຕ; ແລະ
- ກອງທຶນອາສາແຫ່ງສະຫະປະຊາຊາດກ່ຽວກັບຄົນພິການ, ທີ່ໃຫ້ການຊ່ວຍເຫຼືອລ້າຂະໜາດນ້ອຍເພື່ອເປັນການສະໜັບສະໜູນກິດຈະກໍາທີ່ແນໃສ່ເພື່ອສ້າງຄວາມອາດສາມາດໃຫ້ແກ່ພາກປະຊາສັງຄົມໃນການ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ.

ໃນຂະນະທີ່ການຄຸ້ມຄອງຂອງສອງກອງທຶນດັ່ງກ່າວແມ່ນຢູ່ພາຍໃຕ້ບັນດາສໍານັກງານຂອງ ສປຊ, ແຕ່ OHCHR ແມ່ນມີພາລະບົດບາດທີ່ໄດ້ຮັບມອບໝາຍໃຫ້ບໍລິຫານກອງທຶນທີ່ວ່ານີ້.

## ລາຍລະອຽດການຕິດຕໍ່

*OHCHR-administered funds*

United Nations Voluntary Fund for Victims of Torture
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Phone: +41 (0)22 917 93 15, Fax: +41 (0)22 917 90 17
E-mail: unvfvt@ohchr.org

### ກອງທຶນອາສາສະໝັກສຳລັບຊົນເຜົ່າພື້ນເມືອງ

Voluntary Fund for Indigenous Populations
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Phone: +41 (0)22 928 91 64 or +41 (0)22 928 91 42, Fax: +41 (0)22 928 90 66
E-mail: IndigenousFunds@ohchr.org

### ກອງທຶນອາສາສະໝັກແຫ່ງສະຫະປະຊາຊາດກ່ຽວກັບຮູບແບບການເປັນຂ້າທາດຮ່ວມສະໄໝ

United Nations Voluntary Fund on Contemporary Forms of Slavery Office of the United Nations
High Commissioner for Human Rights Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Phone: +41 (0)22 928 93 81 or +41 (0)22 928 91 64, Fax: +41 (0)22 928 90 66
E-mail: SlaveryFund@ohchr.org

'Assisting Communities Together' (ACT) Project
ACT Project
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 928 90 61
E-mail: ACTProject@ohchr.org

***ກອງທຶນທີ່ໄດ້ຮັບການຄຸ້ມຄອງໂດຍສໍານັກງານຕ່າງໆຂອງສະຫະປະຊາຊາດ ທີ່ OHCHR ມີພາລະບົດບາດໃນການບໍລິຫານ***

**ກອງທຶນຊາທິປະໄຕແຫ່ງສະຫະປະຊາຊາດ**

United Nations Democracy Fund (UNDEF) United Nations
One UN Plaza, Room DC1-1330
New York, NY 10017
United States of America
Phone: +1 917 367 42 10 or +1 917 367 80 62
Fax: +1 212 963 14 86
E-mail: democracyfund@un.org

**ກອງທຶນອາສາສະໝັກແຫ່ງສະຫະປະຊາຊາດກ່ຽວກັບຄົນພິການ**

United Nations Voluntary Fund on Disability
Secretariat for the Convention on the Rights of Persons with Disabilities
Department for Economic and Social Affairs
United Nations
Two UN Plaza, DC2-1372
New York, NY 10017, United States of America
Fax: +1 212 963 01 11, E-mail: enable@un.org

**B. ກອງທຶນ ແລະ ກອງທຶນຊ່ວຍເຫຼືອລ້າເຮັດວຽກແບບໃດ?**

**1 ກອງທຶນອາສາແຫ່ງສະຫະປະຊາຊາດສໍາລັບຜູ້ຖືກເຄາະຮ້າຍຈາກການຖືກທໍລະມານ**

ພາລະໜ້າທີ່ຂອງກອງທຶນອາສາແຫ່ງສະຫະປະຊາຊາດສໍາລັບຜູ້ຖືກເຄາະຮ້າຍຈາກການຖືກທໍລະມານແມ່ນໃຫ້ການຊ່ວຍເຫຼືອທຶນແກ່ໂຄງການຊ່ວຍເຫຼືອດ້ານມະນຸດສະທໍາ (ທາງການແພດ, ທາງຈິດໃຈ, ທາງດ້ານກົດໝາຍ, ສັງຄົມ ແລະ ທາງດ້ານການເງິນ) ໃຫ້ແກ່ຜູ້ຖືກເຄາະຮ້າຍຂອງການຖືກທໍລະມານ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າໂດຍຜ່ານຊ່ອງທາງຕ່າງໆ, ຕາມປົກກະຕິແລ້ວຈະຜ່ານທາງ ພາກປະຊາສັງຄົມເຊັ່ນ NGOs, ສູນຟື້ນຟູພິເສດ, ສະມາຄົມຂອງຜູ້ຖືກເຄາະຮ້າຍ, ມູນລະນິທິ ແລະໂຮງໝໍຕ່າງໆ, ແລະ ໃຫ້ການຊ່ວຍເຫຼືອແກ່ນັກເຄື່ອນໄຫວ ສິດທິມະນຸດເປັນບາງຄັ້ງຄາວ.
ໃຫ້ການພິຈາລະນາຄໍາຮ້ອງຂໍຈາກລັດຖະບານ, ຈາກສະພາແຫ່ງຊາດຫລືອົງການການບໍລິຫານ, ພັກການເມືອງ ຫຼື ຈາກຂະບວນການເຄື່ອນໄຫວເພື່ອເສລີແຫ່ງຊາດ.

ກອງທຶນອາສາສໍາລັບຜູ້ຖືກເຄາະຮ້າຍຈາກການຖືກທໍລະມານແມ່ນເປັນກອງທຶນທີ່ໃຫຍ່ທີ່ສຸດທີ່ໄດ້ຮັບການບໍລິຫານໂດຍ OHCHR ແລະ ເປັນກອງທຶນທີ່ໃຫ້ການຊ່ວຍເຫຼືອແກ່ພາກປະຊາສັງຄົມຢູ່ໃນໂລກຫຼາຍກວ່າ 60 ປະເທດ.
ກອງທຶນທີ່ວ່ານີ້ແມ່ນໄດ້ຮັບການຄຸ້ມຄອງໂດຍເລຂາທິການໃຫຍ່ສະຫະປະຊາຊາດກ່ຽວກັບການໃຫ້ຄໍາແນະນໍາແກ່ຄະນະກໍາມາທິການ.
ທາງຄະນະແມ່ນຈະມີການປະຊຸມກັນສອງຄັ້ງຕໍ່ປີ, ໃນເດືອນກຸມພາທີ່ກ່ຽວກັບບັນຫານະໂຍບາຍ ແລະ
ປະຊຸມໃນເດືອນຕຸລາແມ່ນເພື່ອພິຈາລະນາໃຫ້ທຶນ. ໃນກອງປະຊຸມກໍ່ຈະໄດ້ທົບທວນຄືນ ກ່ຽວກັບການນໍາໃຊ້ກອງທຶນທີ່ຜ່ານມາ ແລະ ກໍ່ຈະຮັບຮອງຂໍ້ສະເໜີແນະຕ່າງໆກ່ຽວກັບ

ການຊ່ວຍເຫຼືອລ້າອັນໃຫມ່, ແລະ ໃຫ້ການພົບປະກັບຜູ້ທີ່ໃຫ້ການບໍລິຈາກເງິນແກ່ກອງທຶນເປັນປົກກະຕິ, ເຊັ່ນດຽວກັນກັບບັນດາສະຖາບັນຕ່າງໆທີ່ບໍລິຈາກເງິນໃຫ້ກອງທຶນຄືກັນ, ແລະ
ໃນທີ່ປະຊຸມຍັງຈະໄດ້ໃຫ້ການສົນທະນາກ່ຽວກັບບັນຫານະໂຍບາຍທີ່ຈະໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍຈາກການຖືກທໍລະມານ.

ເລຂາທິການ ແລະ ຄະນະບໍລິຫານຂອງກອງທຶນແມ່ນຈະປະຈໍາຢູ່ໃນສໍານັກງານ OHCHR ນະຄອນເຈນນີວາ. ກອງເລຂາແມ່ນຈະເປັນຜູ້ພິຈາລະນາບັນດາໂຄງການທີ່ຍື່ນຄໍາຮ້ອງຂໍທຶນຕ່າງໆ, ໃນຂະນະທີ່ການຕັດສິນແມ່ນເປັນບົດບາດຂອງຄະນະບໍລິຫານທີ່ ເບິ່ງຕາມຄວາມເໝາະສົມ. ຄະນະບໍລິຫານແມ່ນຈະໃຫ້ການພິຈາລະນາຕາມເງື່ອນໄຂຕ່າງໆຄື:

- ເບິ່ງຈໍານວນຂອງຜູ້ຖືກເຄາະຮ້າຍຈາກການຖືກທໍລະມານ ພ້ອມທັງພິຈາລະນາເບິ່ງທາງດ້ານຄອບຄົວຂອງເຂົາເຈົ້າວ່າເໝາະສົມທີ່ຈະໄດ້ຮັບການຊ່ວຍເຫຼືອຈາກໂຄງການບໍ່;
- ເບິ່ງປະເພດຂອງການຖືກທໍລະມານທີ່ໄດ້ປະເຊີນ ແລະ ຜົນກະທົບຈາກການຖືກທໍລະມານ;
- ເບິ່ງປະເພດຂອງການຊ່ວຍເຫຼືອທີ່ຈໍາເປັນ;
- ເບິ່ງປະສົບການທາງວິຊາຊີບຂອງພະນັກງານໂຄງການທີ່ຈະໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍຈາກການຖືກທໍລະມານ;
- ດໍາເນີນການສຶກສາກໍລະນີຂອງຜູ້ຖືກເຄາະຮ້າຍທີ່ຈະພິຈາລະນາໃຫ້ການຊ່ວຍເຫຼືອ; ແລະ
- ເບິ່ງເຖິງຄວາມຈໍາເປັນທີ່ຈະໃຫ້ການຊ່ວຍເຫຼືອແກ່ໂຄງການຂະໜາດນ້ອຍສໍາລັບການຊ່ວຍເຫຼືອດ້ານມະນຸດສະທໍາແກ່ຜູ້ຖືກເຄາະຮ້າຍຈາກການຖືກທໍລະມານ, ໂຄງການທີ່ວ່າເຫຼົ່ານີ້ແມ່ນເປັນໂຄງການທີ່ມີທຶນຂະໜາດນ້ອຍເຊິ່ງນອນຢູ່ໃນພາກພື້ນບູລິມະສິດເຊັ່ນ: ອາຟຣິກາ, ອາຊີ, ອາຊີກາງ ແລະ ເອີຣົບຕາເວັນອອກ.
- ການຊ່ວຍເຫຼືອຈາກກອງທຶນແມ່ນຈະເປັນໄລຍະ 12 ເດືອນ. ຄໍາຮ້ອງສໍາລັບການຂໍສືບຕໍ່ໂຄງການກໍ່ແມ່ນສາມາດສົ່ງຫາກອງ ທຶນໄດ້ ແລະ ການຊ່ວຍເຫຼືອໃຫມ່ແມ່ນຈະໄດ້ຮັບການພິຈາລະນາໃຫ້ຖ້າຫາກວ່າທາງຄະນະບໍລິຫານເຫັນວ່າການນໍາໃຊ້ທຶນທີ່ຜ່ານມາແມ່ນມີປະສິດທິຜົນ, ບົດລາຍງານທາງດ້ານການເງິນແລະການກວດສອບທາງບັນຊີກ່ຽວກັບການນໍາໃຊ້ທຶນຕ້ອງແມ່ນເປັນທີ່ໜ້າພໍໃຈ.

**ວົງຈອນຂອງກອງທຶນທີ່ກໍານົດໃນແຕ່ລະປີຄື:**

- ກໍານົດເວລາສໍາລັບການຮັບຄໍາຮ້ອງ ແລະ ບົດລາຍງານກ່ຽວກັບການນໍາໃຊ້ທຶນທີ່ຜ່ານມາ: ວັນທີ 1 ເມສາ;
- ກອງເລຂາຈະຊ່ວຍເບິ່ງບັນດາຄໍາຮ້ອງ ກໍຄືການຄັດເລືອກຄໍາຮ້ອງທີ່ໄດ້ຮັບ: ເດືອນເມສາຫາກັນຍາ;
- ກອງປະຊຸມຂອງຄະນະກໍາມາທິການ: ເດືອນຕຸລາ;
- ສົ່ງຂໍ້ມູນໃຫ້ແກ່ຜູ້ສະໝັກກ່ຽວກັບຂໍ້ສະເໜີຂອງຄະນະກໍາມາທິການ: ເດືອນພະຈິກ;
- ມອບເງິນຊ່ວຍເຫຼືອ: ເດືອນມັງກອນຂອງປີໂດຍອີງຕາມເງື່ອນໄຂຂອງການຂໍທຶນ.

**ວິທີການເຂົ້າເຖິງກອງທຶນອາສາແຫ່ງສະຫະປະຊາຊາດສໍາລັບຜູ້ຖືກເຄາະຮ້າຍຈາກການຖືກທໍລະມານ**[76]

**ໃຜເປັນຜູ້ທີ່ມີສິດໄດ້ຮັບການຊ່ວຍເຫຼືອທຶນ?**

- ມີພຽງແຕ່ອົງການທີ່ບໍ່ແມ່ນພາກລັດທີ່ສາມາດໄດ້ຮັບທຶນ; ໃນນີ້ປະກອບມີອົງການ NGO, ສູນຟື້ນຟູພິເສດ, ສະມາຄົມຂອງຜູ້ຖືກເຄາະຮ້າຍ, ມູນລະນິທິ ແລະໂຮງໝໍ, ພ້ອມທັງໃຫ້ການຊ່ວຍເຫຼືອແກ່ນັກເຄື່ອນໄຫວ ສິດທິມະນຸດເປັນບາງຄັ້ງຄາວ, ເຊັ່ນ ທະນາຍຄວາມຂອງຜູ້ຖືກເຄາະຮ້າຍ.
- ຄໍາຮ້ອງຈາກລັດຖະບານ, ຂະບວນການເຄື່ອນໄຫວເພື່ອເສລີພາບແຫ່ງຊາດ ແລະ ພັກການເມືອງແມ່ນຈະບໍ່ໄດ້ພິຈາລະນາ

---

[76] ລັດຖະບານ, ອົງການ NGO ແລະ ພາກເອກະຊົນຫຼືສາທາລະນະອື່ນໆແມ່ນສາມາດປະກອບສ່ວນໃຫ້ແກ່ກອງທຶນໄດ້. ສໍາລັບຂໍ້ມູນກ່ຽວກັບວິທີການປະກອບສ່ວນແມ່ນສາມາດຕິດຕໍ່ຫາກອງເລຂາທີ່ກ່ຽວຂ້ອງໄດ້.

- ຜູ້ທີ່ໄດ້ຮັບປະໂຫຍດໂດຍກົງຈາກກອງທຶນແມ່ນຜູ້ທີ່ຕົກເປັນເຫຍື່ອຈາກການທໍລະມານ, ຕາມທີ່ກຳນົດໃນມາດຕາ 1 ຂອງຖະແຫຼງການກ່ຽວກັບການປົກປ້ອງທຸກຄົນຈາກການຖືກທໍລະມານ ແລະ ການປະຕິບັດອື່ນ ໆທີ່ປ່າເຖື່ອນ ແລະ ເຮັດໃຫ້ເຊື່ອມເສຍກຽດສັກສີ ຫຼື ມີຜົນກະທົບຕໍ່ຄອບຄົບຂອງເຂົາເຈົ້າໂດຍຕົງ.
- ພະນັກງານທີ່ມີສ່ວນຮ່ວມໃນໂຄງການແມ່ນຄວນມີປະສົບການໃນການຊ່ວຍເຫຼືອໂດຍກົງກແກ່ຜູ້ຖືກເຄາະຮ້າຍຈາກການຖືກທໍລະມານ ແລະໂຄງການຕ້ອງມີຕົວຕົນກ່ອນແລ້ວກ່ອນທີ່ຈະຍື່ນຄຳຮ້ອງຂໍທຶນຊ່ວຍເຫລືອໄດ້.
- ຄຳຮ້ອງຕ້ອງໃຊ້ແບບຟອມສະໝັກທີ່ມີໃນລະບົບອອນໄລນໃນເວັບໄຊ ຂອງ OHCHR ແລະ ຕ້ອງຢື່ນໃຫ້ກອງເລຂາກອງທຶນກ່ອນວັນທີ່ 1 ເມສາໃນແຕ່ລະປີ.

**ການຮ້ອງຂໍທຶນຊ່ວຍເຫຼືອເປັນຄັ້ງທຳອິດແມ່ນຄວນຈະ:**

- ໃຫ້ຂໍ້ມູນພື້ນຖານກ່ຽວກັບອົງການຈັດຕັ້ງຂອງຕົນ;
- ຕ້ອງສະແດງໃຫ້ເຫັນວ່າພະນັກງານຂອງຕົນມີປະສົບການທີ່ກ່ຽວຂ້ອງໃນການຊ່ວຍເຫຼືອໂດຍກົງກັບຜູ້ຖືກເຄາະຮ້າຍຈາກການຖືກທໍລະມານ (ຊີວະປະຫວັດຄວນຄັດຕິດມາພ້ອມ);
- ອະທິບາຍຈຸດປະສົງຂອງ ແລະ ເຫດຜົນຂອງໂຄງການ; ແລະ
- ອະທິບາຍເຖິງສະຖານະຂອງອົງການຕົນເອງ.

**ປະເພດຂອງໂຄງການແບບໃດທີ່ຈະໄດ້ຮັບການຍອມຮັບ?**

- ຄຳຮ້ອງຂໍການຊ່ວຍເຫຼືອນັ້ນຄວນຈະແນ່ໃສ່ໃນການຊ່ວຍເຫຼືອທາງການແພດ, ທາງຈິດໃຈ, ສັງຄົມ, ເສດຖະກິດ, ກົດໝາຍ,ມະນຸດສະທຳ ຫຼື ຮູບແບບອື່ນໆຂອງການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍຈາກການຖືກທໍລະມານແລະສະມາຊິກຂອງຄອບຄົວເຂົາເຈົ້າ;
- ຄຳຮ້ອງຂອງໂຄງການທີ່ກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃຫ້ໄດ້ມີໂອກາດກັບຄືນສູ່ສັງຄົມຫລືເສດຖະກິດເຊິ່ງລວມມີການຈັດຝຶກອົບຮົມວິຊາຊີບສຳລັບຜູ້ຖືກເຄາະຮ້າຍເປັນຕົ້ນ;
- ອີງຕາມກອງທຶນທີ່ມີ, ກອງທຶນແມ່ນມີຈຳນວນຈຳກັດໃນການໃຫ້ການຊ່ວຍເຫຼືອທາງດ້ານການຝຶກອົບຮົມທາງວິຊາຊີບຫຼືສຳລັບອົງການຈັດຕັ້ງຕ່າງໆທີ່ຈະຈັດກອງປະຊຸມແລະສຳມະນາທີ່ລົງເລິກກ່ຽວກັບການປະຕິບັດຕໍ່ຜູ້ຖືກເຄາະຮ້າຍຈາກການທໍລະມານ;
- ຄຳຮ້ອງຂອງໂຄງການທີ່ມີເປົ້າໝາຍໃນການດົນນະລົງຕ້ານການຖືກທໍລະມານ, ປ້ອງກັນການຖືກທໍລະມານຫຼືໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ໂຄງການອື່ນໆແມ່ນຈະບໍ່ໄດ້ຮັບການພິຈາລະນາ;
- ຄຳຮ້ອງຂອງໂຄງການທີ່ກ່ຽວກັບການສິບສອນ, ການສຶກສາ, ການຄົ້ນຄວ້າ, ການພິມເຜີຍແຜ່ຂ່າວສານ ຫຼື ມີກິດຈະກຳທີ່ຄ້າຍໆກັນແມ່ນຈະບໍ່ໄດ້ຮັບການພິຈາລະນາ;
- ຕາມລະບຽບນັ້ນ, ຄຳຮ້ອງຂອງໂຄງການທີ່ມີເປົ້າໝາຍໃນການຊ່ວຍເຫຼືອທາງການເງິນເພື່ອສ້າງຕັ້ງອົງການ NGO ໃໝ່ ຫຼື ສ້າງອົງການພາກປະຊາສັງຄົມອື່ນໆແມ່ນຈະບໍ່ໄດ້ຮັບການພິຈາລະນາ;
- ອົງການ NGO ແລະ ອົງການພາກປະຊາສັງຄົມທີ່ຍື່ນຄຳຮ້ອງຂໍໃຫ້ໂຄງການຊ່ວຍເຫຼືອທາງດ້ານກົດໝາຍໂດຍກົງແກ່ຜູ້ຖືກເຄາະຮ້າຍຈາກການທໍລະມານນັ້ນແມ່ນ ຄວນຈະສົ່ງຂໍ້ມູນເພີ່ມກ່ຽວກັບການຊ່ວຍເຫຼືອທາງດ້ານກົດໝາຍເພື່ອປ້ອງກັນຜູ້ຖືກເຄາະຮ້າຍຈາກອົງຕຸລາການທີ່ບໍໄດ້ເສຍຄ່າໃຊ້ຈ່າຍທີ່ໄດ້ກຳນົດໃນກົດໝາຍພາຍໃນ ວ່າມີຫຼືບໍ່. ບັນຊີລາຍຊື່ຂອງຜູ້ຖືກເຄາະຮ້າຍທີ່ຈະໃຫ້ການຊ່ວຍເຫຼືອພາຍໃຕ້ກອບການຊ່ວຍເຫຼືອດ້ານກົດໝາຍແມ່ນຄວນຄັດຕິດກັບຄຳຮ້ອງມາພ້ອມ;
- ກອງທຶນບໍ່ໄດ້ໃຫ້ການຊົດເຊີຍທາງດ້ານການເງິນແກ່ຜູ້ຖືກເຄາະຮ້າຍໃດໆ.

### ກອງທຶນສຸກເສີນ

ພາກສ່ວນປະຊາສັງຄົມແມ່ນສາມາດຍື່ນຄໍາຮ້ອງຂໍການຊ່ວຍເຫຼືອທີ່ສຸກເສີນລະຫວ່າງສອງພາກສ່ວນຂອງຄະນະບໍລິຫານງານເຊິ່ງໃນປະຈະບັນແມ່ນກໍາລັງໄດ້ຮັບການແກ້ໄຂກອງທຶນທີ່ພວມຢູ່ໃນພາວະຫຍຸ້ງຍາກທາງການເງິນ. ພາກສ່ວນປະຊາສັງຄົມຄວນຈະສົ່ງຄໍາຮ້ອງຂໍການຊ່ວຍເຫຼືອຈາກກອງທຶນສຸກເສີນຕາມແບບຟອມຂອງກອງເລຂາ, ພ້ອມທັງຕ້ອງໄດ້ໃຫ້ລາຍລະອຽດກ່ຽວກັບເຫດຜົນທີ່ວ່າເປັນຫຍັງຈຶ່ງຈໍາເປັນຕ້ອງຂໍຄວາມຊ່ວຍເຫຼືອກອງທຶນສຸກເສີນນີ້. ຄໍາຮ້ອງດັ່ງກ່າວແມ່ນຈະໄດ້ຮັບການພິຈາລະນາພຽງແຕ່ໃນກໍລະນີທີ່ສະຖານະການທີ່ເກີດຂື້ນນັ້ນແມ່ນບໍ່ມີທ່າອ່ຽງທີ່ຈະຈົບລົງ ໃນເວລາອັນໃກ້ ແລະ ມັນມີຄວາມສ່ຽງທີ່ຈະມີຜູ້ຖືກເຄາະຮ້າຍເພີ່ມຂື້ນ (ເຊັ່ນ:, ການອົບພະຍົບເປັນຂະບວນຂອງຜູ້ຖືກເຄາະຮ້າຍທີ່ເກີດຈາກການຖືກທໍລະມານຍ້ອນເກີດວິກິດການດ້ານມະນຸດສະທໍາ).

### ວິທີຍື່ນຄໍາຮ້ອງຫາກອງທຶນ

ຕາມລະບຽບການກໍ່ຄືວ່າຄໍາຮ້ອງຕ້ອງກອກ ແລະ ຍື່ນຕາມລະບົບແບບຟອມອອນໄລນ. ຍົກເວັ້ນ, ຄໍາຮ້ອງທີ່ເປັນເອກະສານສາມາດຍື່ນຜ່ານທາງອີເມວ ຫຼື ໄປສະນີ. ແບບຟອມແມ່ນສາມາດຂໍນໍາກອງເລຂາທີ່ກ່ຽວຂ້ອງໄດ້.

**ສະຖານຍື່ນຄໍາຮ້ອງ**

United Nations Voluntary Fund for Victims of Torture
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Phone: +41 (0)22 917 93 15
Fax: +41 (0)22 917 90 17
E-mail: unvfvt@ohchr.org

**ໃນເວລາທີ່ຍື່ນຄໍາຮ້ອງແມ່ນຄວນຄໍານຶງເຖິງ:**

- ກອງເລຂາຂອງກອງທຶນຈະບໍ່ຮັບຄໍາຮ້ອງຖ້າຫາກວ່າຄໍາຮ້ອງດັ່ງກ່າວບໍ່ໄດ້ໃຊ້ຮູບແບບຟອມຂອງກອງທຶນ, ບໍ່ມີຂໍ້ມູນຕາມເງື່ອນໄຂຂອງການຮ້ອງຂໍ, ຄໍາຮ້ອງບໍ່ໄດ້ຖືກລົງລາຍເຊັນ ແລະ ລົງວັນທີຈາກຫົວໜ້າໂຄງການ, ຫຼືວ່າມີຫລາຍອັນທີ່ບໍ່ໄດ້ປະຕິບັດຕາມເງື່ອນໄຂຂອງກອງທຶນ.
- ຄໍາຮ້ອງອາດຂຽນເປັນພາສາອັງກິດ, ພາສາຝຣັ່ງຫຼືສະເປນ

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບກອງທຶນອາສາສະຫມັກແຫ່ງສະຫະປະຊາຊາດສໍາລັບຜູ້ຖືກເຄາະຮ້າຍຈາກການທໍລະມານແມ່ນສາມາດເບິ່ງໄດ້ໃນເວບຂອງ OHCHR.

**2. ກອງທຶນອາສາສະໜັກສຳລັບຊົນເຜົ່າພື້ນເມືອງ**

ກອງທຶນອາສາສຳລັບຊົນເຜົ່າພື້ນເມືອງແມ່ນຈະອຳນວຍຄວາມສະດວກໃຫ້ແກ່ຜູ້ຕາງໜ້າຂອງຊຸມຊົນຊົນເຜົ່າພື້ນເມືອງແລະອົງການຈັດຕັ້ງທີ່ກ່ຽວຂ້ອງໃຫ້ໄດ້ມີໂອກາດເຂົ້າຮ່ວມກອງປະຊຸມຂອງສະຫະປະຊາຊາດທັງສອງຢ່າງທີ່ເຮັດວຽກກ່ຽວກັບສິດທິຂອງຄົນພື້ນເມືອງຄື:

- ກົນໄກຊ່ຽວຊານກ່ຽວກັບສິດທິຂອງຄົນພື້ນເມືອງ; ແລະ
- ກອງປະຊຸມຖາວອນກ່ຽວກັບຄົນພື້ນເມືອງ.

ກົນໄກຊ່ຽວຊານກ່ຽວກັບສິດທິຂອງຄົນພື້ນເມືອງເປັນກົນໄກທີ່ໃໝ່ຂອງສະພາສິດທິມະນຸດ[77] ທີ່ເຂົ້າມາແທນໜ່ວຍງານກ່ຽວກັບຊົນເຜົ່າພື້ນເມືອງຂອງອະດີດອານຸຄະນະກຳມາທິການສົ່ງເສີມແລະປົກປ້ອງສິດທິມະນຸດ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບກົນໄກຜູ້ຊ່ຽວຊານແມ່ນສາມາດເບິ່ງໄດ້ໃນພາກທີ V (ສະພາສິດທິມະນຸດ) ໃນປື້ມຄູ່ມືນີ້

ກອງປະຊຸມຖາວອນກ່ຽວກັບຄົນພື້ນເມືອງເປັນອົງກອນທີ່ປຶກສາໃຫ້ແກ່ສະພາເສດຖະກິດແລະສັງຄົມສະຫະປະຊາຊາດ, ເປັນອົງກອນລະດັບສູງຢູ່ປະຈຳໃນນະຄອນນິວຢອກທີ່ປະກອບສ່ວນໃຫ້ການຊ່ວຍເຫຼືອໃນການປະສານງານລະຫວ່າງອົງກອນຕ່າງໆກ່ຽວກັບບັນຫາຊົນເຜົ່າພື້ນເມືອງ. ກອງທຶນອາສາສຳລັບຊົນເຜົ່າພື້ນເມືອງແມ່ນໄດ້ຮັບການຄຸ້ມຄອງໂດຍ OHCHR, ໃຫ້ການຊ່ວຍເຫລືອທາງການເງິນແກ່ຜູ້ຕາງໜ້າຊົນເຜົ່າພື້ນເມືອງແລະອົງການຂອງເຂົາເຈົ້າເພື່ອໃຫ້ໄດ້ມີໂອກາດເຂົ້າຮ່ວມໃນວຽກງານກອງທຶນ. ການຊ່ວຍເຫຼືອໃນລັກສະນະນີ້ແມ່ນຈະເຮັດໃຫ້ພາກປະຊາສັງຄົມຂອງຄົນພື້ນເມືອງໄດ້ປະກອບສ່ວນດ້ານຄວາມຮູ້ຄວາມສາມາດໃຫ້ແກ່ກອງທຶນ ພ້ອມທັງນຳເອົາບົດຮຽນທີ່ຖອດຖອນໄດ້ກັບໄປໃຊ້ໃນວຽກງານອີກດ້ວຍ.

ກອງທຶນແມ່ນໄດ້ຮັບການຄຸ້ມຄອງຈາກເລຂາທິການໃຫຍ່ສະຫະປະຊາຊາດໂດຍອີງຕາມລະບຽບການທາງ ກອງທຶນ ແລະກົດລະບຽບຂອງສະຫະປະຊາຊາດທີ່ທາງຄະນະກຳມາທິການຜູ້ທີ່ມີຄວາມຮູ້ແລະປະສົບການກ່ຽວກັບຄົນພື້ນເມືອງເປັນຜູ້ຕິດຕາມໃຫ້ຄຳແນະນຳ.

**ວິທີການເຂົ້າເຖິງກອງທຶນອາສາສຳລັບຊົນເຜົ່າພື້ນເມືອງ**[78]

ການປະກອບສ່ວນແລະການມີສ່ວນຮ່ວມທີ່ຫ້າວຫັນໃນທ້ອງຖິ່ນ, ພາກປະຊາສັງຄົມໃນລະດັບຊາດແລະສາກົນແມ່ນມີ ຄວາມສຳຄັນຫລາຍໃນການຊ່ວຍໃຫ້ວຽກງານກ່ຽວກັບຊົນເຜົ່າພື້ນເມືອງໃຫ້ໄດ້ຮັບການຍອມຮັບໃນເວທີໂລກ. ອົງກອນ ຂອງ ສປຊ ກ່ຽວກັບຄົນພື້ນເມືອງແມ່ນເປັນເຄື່ອງມືທີ່ສຳຄັນສຳລັບການດຳເນີນງານຂອງພາກປະຊາສັງຄົມທີ່ເຮັດ ວຽກກ່ຽວກັບຄົນພື້ນເມືອງແລະສຳລັບກຸ່ມໜ່ວຍງານພາກປະຊາສັງຄົມເອງ. ທຶນຊ່ວຍເຫຼືອການເດີນທາງຂອງກອງທຶນແມ່ນມີຈຸດປະສົງເພື່ອເພີ່ມຈຳນວນແລະຄວາມຫຼາກຫຼາຍຂອງການມີສ່ວນຮ່ວມຈາກຊົນເຜົ່າພື້ນເມືອງໃນອົງກອນ ຂ້າງເທິງນີ້.

7 ຖືກສ້າງຕັ້ງຂຶ້ນໂດຍມະຕິ 6/36 ໃນວັນທີ14 ທັນວາ 2007.

78 ລັດຖະບານ, ອົງການ NGO ແລະພາກເອກະຊົນຫຼືສາທາລະນະອື່ນໆແມ່ນສາມາດປະກອບສ່ວນທຶນໃຫ້ແກ່ກອງທຶນໄດ້. ສຳລັບຂໍ້ມູນກ່ຽວກັບວິທີການປະກອບສ່ວນ, ກະລຸນາຕິດຕໍ່ຫາກອງເລຂາທີ່ກ່ຽວຂ້ອງ.



IX

**ແມ່ນໃຜມີສິດໄດ້ການຊ່ວຍເຫຼືອຈາກກອງທຶນຊ່ວຍເຫຼືອລ້າ?**

ຜູ້ຕາງຫນ້າຊົນເຜົ່າພື້ນເມືອງທີ່ມາຈາກອົງການຈັດຕັ້ງຂອງຊົນເຜົ່າພື້ນເມືອງແລະຊຸມຊົນຕ່າງໆຄື:

- ຜູ້ທີ່ບໍ່ມີຄວາມສາມາດເຂົ້າຮ່ວມກອງປະຊຸມຂອງກົນໄກຊ່ຽວຊານຫຼືກອງປະຊຸມຖາວອນ; ແລະ
- ຜູ້ທີ່ສາມາດປະກອບສ່ວນຄວາມຮູ້ຢ່າງເລິກເຊິ່ງໃຫ້ແກ່ກົນໄກຊ່ຽວຊານຫຼືໃຫ້ແກ່ກອງປະຊຸມຖາວອນທີ່ກ່ຽວກັບບັນຫາຕ່າງໆທີ່ກະທົບຕໍ່ຊົນເຜົ່າພື້ນເມືອງ, ແລະ ຜູ້ທີ່ມີພາວະໃນການເປັນຕົວແທນທີ່ຈະໃຫ້ການປົກປ້ອງທົ່ວທັງພາກພື້ນ.

**ເງື່ອນໄຂຂອງຄຳຮ້ອງ**

- ທຶນຊ່ວຍເຫຼືອການເດີນທາງແມ່ນຈະໄດ້ມອບໃຫ້ແກ່ຕົວຜູ້ແທນໂດຍຕົງ-ອົງການຈັດຕັ້ງຫຼືຜູ້ອື່ນໆແມ່ນບໍ່ສາມາດເຂົ້າມາຮັບທຶນການຊ່ວຍເຫຼືອແທນໄດ້;
- ຄຳຮ້ອງສ່ວນບຸກຄົນແມ່ນຕ້ອງໄດ◌້ມີໜັງສືສະໜັບສະໜູນທີ່ເຊັນ ຈາກຜູ້ບໍລິຫານອົງການຊົນເຜົ່າພື້ນເມືອງທີ່ກ່ຽວຂ້ອງ. ຄະນະບໍລິຫານຂອງກອງທຶນແມ່ນຈະບໍ່ຮັບຄຳຮ້ອງທີ່ເຊັນໂດຍຕົວຜູ້ສະມັກເອງທຸກຢ່າງ;
- ຄຳຮ້ອງຂໍທຶນແມ່ນສາມດຍື່ນໄດ້ສູງສຸດສອງທ່ານທີ່ມາຈາກອົງການຈັດຕັ້ງດຽວກັນ;
- ຄຳຮ້ອງ ແລະ ສືສະໜັບສະໜູນຕ້ອງຂຽນເປັນພາສາທາງການຄະນະກອງເລຂາ (ພາສາອັງກິດ, ພາສາຝຣັ່ງຫຼືສະເປນ);
- ຜູ້ສະຫມັກຕ້ອງອະທິບາຍເຖິງບົດບາດໜ້າທີ່ຄວາມຮັບຜິດຊອບໃນອົງການຈັດຕັ້ງຫຼືຊຸມຊົນຂອງຕົນ;
- ຄະນະບໍລິຫານງານຂອງກອງທຶນແມ່ນມີຄວາມຍິນດີທີ່ຈະຮັບຄຳຮ້ອງຂໍເຂົ້າຮ່ວມກອງປະຊຸມຖາວອນກ່ຽວກັບຄົນພື້ນເມືອງຫລາຍກ່າວຄຳຮ້ອງທີ່ຂໍເຂົ້າຮ່ວມກອງປະຊຸມກົນໄກຜູ້ຊ່ຽວຊານ ຫຼື ກອງປະຊຸມອື່ນໆ.

**ສະຖານທີ່ຍື່ນຄຳຮ້ອງ**

ຄຳຮ້ອງຂໍທຶນຊ່ວຍເຫຼືອແມ່ນມີໃນເວບໄຊ້ຂອງ ສຳນັກງານ OHCHR ແລະ ຄຳຮ້ອງທີ່ວ່ານີ້ຄວນສົ່ງ ພາຍໃນວັນທີ 1 ຕຸລາໃນແຕ່ລະປີຕາມທີ່ຢູ່:

Voluntary Fund for Indigenous Populations
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Phone: +41 (0)22 928 91 64 or +41 (0)22 928 91 42
Fax: +41 (0)22 928 90 66
E-mail: IndigenousFunds@ohchr.org

ຂໍ້ມູນເພີ່ມເຕີມກ່ຽວກັບການເຮັດວຽກຂອງ OHCHR ທີ່ກ່ຽວກັບຊົນເຜົ່າພື້ນເມືອງແມ່ນສາມາດເບິ່ງໃນເວັບຂອງ OHCHR.

**3. ກອງທຶນສຳຮອງອາສາແຫ່ງ ສປຊ ກ່ຽວກັບຮູບການຄວາມເປັນທາດໃນປະຈຸບັນ**

**ກອງທຶນສຳຮອງອາສາແຫ່ງ ສປຊ**

**ກ່ຽວກັບຮູບການຄວາມເປັນທາດໃນປະຈຸບັນ**ແມ່ນໄດ້ໃຫ້ການຊ່ວຍເຫລືອໂຄງການຂະໜາດນ້ອຍໂດຍສະເພາະແມ່ນອົງການພາກປະຊາສັງຄົມ, ເຊັ່ນ: ອົງການ NGO, ຊຸມຊົນແລະກຸ່ມຊາວໜຸ່ມ, ສະຫະພັນກຳມະບານຫຼືສະມາຄົມວິຊາຊີບທີ່ໄດ້ໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍທີ່ຕົກໃນຮູບການຂອງຄວາມ ເປັນທາດໃນປະຈຸບັນ (ເຊັ່ນ: ແຮງງານເດັກ, ການຄ້າມະນຸດ, ແຮງງານບັງຄັບ).

ຈຸດປະສົງຂອງການຊ່ວຍເຫຼືອຂອງກອງທຶນແມ່ນເພື່ອຂະຫຍາຍການຊ່ວຍເຫຼືອໂດຍຜ່ານຊ່ອງທາງຕ່າງໆເຊັ່ນ: ດ້ານມະນຸດສະທຳ, ການຊ່ວຍເຫຼືອທາງດ້ານກົດໝາຍແລະທາງດ້ານການເງິນໃຫ້ແກ່ບຸກຄົນທີ່ຖືກລະເມີດສິດຢ່າງຮ້າຍແຮງອັນເນື່ອງມາຈາກຮູບການຂອງຄວາມເປັນທາດໃນປະຈຸບັນ. ກອງທຶນແມ່ນໄດ້ໃຫ້ໂອກາດແກ່ພາກປະຊາສັງຄົມທີ່ເຮັດວຽກໃນລະດັບຂັ້ນຮາກຖານໃນການຊ່ວຍເຫຼືອຜູ້ທີ່ຖືກເຄາະຮ້າຍຈຳນວນຫລວງຫລາຍໂດຍຕົງ, ທັງໆທີ່ມີງົບຈຳກັດ.

**ວິທີການເຂົ້າເຖິງກອງທອນອາສາແຫ່ງສະຫະປະຊາຊາດກ່ຽວກັບຮູບການຕົກເປັນທາດສະໄໝໃໝ່**

ຫລາຍໆອົງການພາກປະຊາສັງຄົມໃນປະຈຸບັນແມ່ນກຳລັງດຳເນີນການຕໍ່ສູ້ ແລະ ໃຫ້ການປົກປ້ອງຜູ້ເຄາະຮ້າຍຈາກຄວາມເປັນທາດໃນທົ່ວທຸກມູມໂລກ. ການເປັນທາດແມ່ນຈະເປັນລັກສະນະລີ້ຊ້ອນ ແລະ ພາກປະຊາສັງຄົມແມ່ນມີບົດບາດສຳຄັນໃນການຊອກຄົ້ນຫາການລະເມີດສິດທີ່ທີ່ລີຊ້ອນຢູ່ນັ້ນເຊິ່ງມນັກ່ຽວຂ້ອງກັບຮູບການທີ່ຕົກ ເປັນທາດໃນປະຈຸບັນ. ອີງຕາມຄວາມເປັນທາດທີ່ມີໃນອາດີດ ແລະ ການຄ້າທາດ, ປະກົດການທີ່ເຫັນນັ້ນແມ່ນ ກ່ຽວກັບການຂາຍເດັກນ້ອຍ, ໂສເພນີເດັກ, ຮູບພາບລາມົກເດັກ, ການໃຊ້ແຮງງານເດັກ, ການຂົ່ມຂືນເດັກຍິງ, ເອົາເດັກນ້ອຍໄປເປັນທະຫານ, ການເປັນທາດທາງໜີ້ສິນ, ການຄ້າມະນຸດແລະການຂາຍອະໄວຍະວະຂອງມະນຸດ, ການຂຸດຮີດໂສເພນີ, ແລະ ຮູການອື່ນໆທີ່ກ່ຽວກັບການຈຳແນກສີຜິວແລະການຕົກເປັນທົວເມືອງຂຶ້ນ.

ກອງທຶນໃຫ້ການຊ່ວຍເຫຼືອແກ່ໂຄງການໂດຍສະເພາະແມ່ນສຳລັບອົງການພາກປະຊາສັງຄົມ, ເຊັ່ນ: ອົງການ NGO, ຊຸມຊົນ ແລະ ກຸ່ມຊາວໜຸ່ມ, ສະຫະພັນກຳມະບານຫຼືສະມາຄົມວິຊາຊີບ, ຈຸດປະສົງຫຼັກກໍ່ແມ່ນເພື່ອເພີ່ມການມີສ່ວນຮ່ວມຂອງພາກປະຊາສັງຄົມໃນການກຳຈັດການເປັນຂ້າທາດໃນທົ່ວໂລກໃຫ້ໝົດໄປ.

**ໃຜທີ່ມີສິດໄດ້ຮັບການຊ່ວຍເຫຼືອໃນໂຄງການ?**

ອົງການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອໂດຍກົງແກ່ບຸກຄົນທີ່ຖືກລະເມີດສິດທີ່ເປັນຜົນມາຈາກຮູບແບບຂອງການເປັນຂ້າທາດໃນປະຈຸບັນ. ການຊ່ວຍເຫລືອໂດຍຕົງນີ້ແມ່ນກໍ່ໃຫ້ເກີດມີການມອບທຶນຊ່ວຍເຫຼືອໂຄງການເປັນຈຳນວນ ຫລວງຫລາຍ.

ທຶນຊ່ວຍເຫຼືອແມ່ນໄດ້ມອບໃຫ້ໂຄງການ ແລະ ອົງການພາກປະຊາສັງຄົມຫຼື ເຄືອຂ່າຍຂັ້ນຮາກ ຖານທີ່ມີຕົວຕົນ ແລະ ໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳ, ການຊ່ວຍເຫຼືອທາງດ້ານກົດໝາຍແລະທາງດ້ານການເງິນໃຫ້ຜູ້ຖືກເຄາະຮ້າຍ; ທຶນຊ່ວຍເຫຼືອໃຫ້ແກ່ອົງການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອໂດຍທາງອ້ອມແກ່ຜູ້ຖືກເຄາະຮ້າຍດ້ວຍການຈັດຝຶກອົບຮົມດ້ານວິທີການປ້ອງກັນຕ່າງໆ.

ມີໂຄງການຈຳນວນຫຼາຍທີ່ໄດ້ຮັບການຄັດເລືອກອັນເນື່ອງມາການມີສ່ວນຮ່ວມໃນການຟື້ນຟູແລະໃຫ້ການສຶກສາເພື່ອຊ່ວຍໃຫ້ຜູ້ຖືກເຄາະຮ້າຍໄດ້ມີຄວາມພ້ອມໃນການເບິ່ງແຍງຕົວເອງແລະມີຄວາມສ່ຽງທີ່ໜ້ອຍລົງ.

**ເງື່ອນໄຂຂອງການສະໝັກ**

- ແບບຟອມສະໝັກຕົ້ນສະບັບແມ່ນມີໃຫ້ໃນລະບົບອອນລາຍ ແລະ ຈະຕ້ອງສົ່ງທາງໄປສະນີພ້ອມທັງມີລາຍເຊັນ ແລະ ລົງວັນທີໃນແບບຟອມພ້ອມ. ແບບຟອມສະໝັກຄວນຂຽນເປັນພາສາອັງກິດ, ພາສາຝຣັ່ງຫຼືສະເປນ;
- ອົງການທີ່ກ່ຽວຂ້ອງສາມາດຂໍທຶນໄດ້ສູງສຸດແມ່ນ $ 15,000 ຕໍ່ຄັ້ງ;
- ຄໍາຮ້ອງມແມ່ນຈະໄດ້ຮັບການຄັດເລືອກຈາກທົ່ວພາກພື້ນໃນໂລກເພື່ອວ່າກອງທຶນຈະໄດ້ຮັບຮູ້ກ່ຽວກັບຮູບການ ຂອງຄວາມເປັນທາດທີ່ເກີດໃນໂລກໃນປະຈຸບັນ;
- ໂຄງການທີ່ໃຫ້ການຊ່ວຍເຫຼືອທີ່ກ່ຽວຂ້ອງຕ້ອງເບິ່ງຄວາມເທົ່າທຽມທາງເພດຂອງຜູ້ເຄາະຮ້າຍໄປນໍາ;
- ການຊ່ວຍເຫຼືອທຶນແກ່ໂຄງການແມ່ນຄວນຈະມອບໃຫ້ໂຄງການທີ່ໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍແລະໃຫ້ແກ່ອົງການພາກປະຊາສັງຄົມທ້ອງຖິ່ນ. ທຶນຊ່ວຍເຫຼືອສາມາດໄດ້ຮັບຜ່ານຊ່ອງທາງຂອງ NGOs, ເພື່ອວ່າໂຄງການ ທີ່ກ່ຽວຂ້ອງນັ້ນຈະບໍ່ໄດ້ເກັບທຶນທີ່ໄດ້ຮັບນັ້ນໄປໃຊ້ໃນນາມສ່ວນຕົວ;
- ຄະນະບໍລິຫານຈະບໍ່ພິຈາລະນາຄໍາຮ້ອງທີ່ສົ່ງມາກາຍກໍານົດເວລາ, ຫຼື ຂໍ້ມູນບໍ່ພຽງພໍພາຍຫລັງທີ່ທາງກອງເລຂາໄດ້ຂໍໃຫ້ສົ່ງມາຂໍ້ມູນມາເພີ່ມເປັນຄັ້ງທີ່ສອງແລ້ວ.



**ໂຄງການທີ່ໄດ້ຮັບປະໂຫຍດຈາກກອງທຶນອາສາກ່ຽວກັບຮູບແບບຂອງການເປັນຂ້າທາດໃນປະຈຸບັນ**

Mahila Seva Samithi, ຈາກອິນເດຍ: ໃນປີ 2005, ແມ່ນໄດ້ເງິນຊ່ວຍເຫຼືອເຖິງ 2,000 ໂດລ່າໃຫ້ແກ່ເດັກນ້ອຍທີ່ຖືກໃຊ້ແຮງງານໃນຈໍານວນ 88 ຄົນເພື່ອເຂົ້າໂຮງຮຽນໃນລະດັບປະຖົມເຊິ່ງລວມທັງໄດ້ແຈກຢາຍອຸປະກອນການຮຽນໄປນໍາ. ໂຄງການນີ້ແມ່ນໄດ້ມີການຕິດຕາມກວກາຄວາມກ້າວໜ້າຂອງ ເດັກນ້ອຍໃນທຸກໆສີ່ເດືອນ.

**Jadakris, Nigeria:** ໃນປີ 2006 ແມ່ນໄດ້ໃຫ້ການຊ່ວຍເຫຼືອຜູ້ທີ່ເຄາະຮ້າຍຈາກການຖືກຄ້າມະນຸດໃນຈໍານວນ 30 ຄົນເຊິ່ງຕົກເປັນຈໍານວນເງິນ 6,400 ໂດລ່າເພື່ອນໍາໃຊ້ເຂົ້າໃນການຟື້ນຟູ ແລະ ຝຶກອົບຮົມໃຫ້ເຂົາເຈົ້າໄດ້ມີຄວາມສາມາດດໍາລົງຊີວິດໄປດ້ວຍຕົວເອງ.

**ສະຖານທີ່ຍື່ນຄຳຮ້ອງ**

ແບບຟອມຄຳຮ້ອງກອງທຶນຊ່ວຍເຫຼືອຄວນຈະສົ່ງພາຍໃນວັນທີ 15 ກັນຍາຂອງແຕ່ລະປີທີ່:

United Nations Voluntary Trust Fund on Contemporary Forms of Slavery
Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Phone: +41 (0)22 928 93 81 or +41 (0)22 928 91 64
Fax: +41 (0)22 928 90 66
E-mail: SlaveryFund@ohchr.org

ຄຳຮ້ອງຕ້ອງສົ່ງໃນແບບສົມບູນ ແລະ ສາມາດເອົາດາວໂລດແບບຟອມໄດ້ໃນເວບຂອງ OHCHR

ສຳລັບຂໍ້ມູນເພີ່ມເຕີມແມ່ນສາມາດສຶກສາໃນປື້ມຄູ່ມືວ່າດ້ວຍຮູບແບບການເປັນຂ້າທາດໃນປະຈຸບັນກ່ຽວກັບຂອງກອງທຶນສຳຮອງອາສາຂອງສະຫະປະຊາຊາດ

**4. ໂຄງການ "ການຊ່ວຍເຫຼືອຊຸມຊົນຮ່ວມກັນ"**

ໃນປີ 1998 ສຳນັກງານ OHCHR ແລະໂຄງການການພັດທະນາສະຫະປະຊາຊາດ (UNDP) ໄດ້ສ້າງຕັ້ງໂຄງການ "ການຊ່ວຍເຫຼືອຊຸມຊົນຮ່ວມກັນ" (ACT) ເພື່ອໃຫ້ການຊ່ວຍເຫຼືອທຶນຂະໜາດນ້ອຍໃຫ້ແກ່ພາກປະຊາສັງຄົມ, ເຊັ່ນ: ອົງການ NGO, ສະມາຄົມທ້ອງຖິ່ນ, ສະຖາບັນການສຶກສາແລະກຸ່ມວິຊາຊີບທີ່ດຳເນີນການສຶກສາກ່ຽວກັບສິດທິມະນຸດ ແລະ ຈັດກິດຈະກຳການຝຶກອົບຮົມຢູ່ໃນຊຸມຊົນທ້ອງຖິ່ນ. ຕະຫຼອດປີ, ໂຄງການແມ່ນໄດ້ສຸມໃສ່ການສະໜັບສະໜູນກິດຈະກຳທີ່ກ່ຽວກັບໂຄງການວ່າດ້ວຍສະຫະປະຊາຊາດແຫ່ງທົດສະວັດເພື່ອການສຶກສາສິດທິມະນຸດ (1995-2004) ແລະ ໂຄງການໂລກສຳລັບການສຶກສາສິດທິມະນຸດ (2005, ຍັງດຳເນີນຢູ່ໃນປະຈຸບັນ). ຕັ້ງແຕ່ປີ 1998, ສຳນັກງານ OHCHR ແລະ UNDP ແມ່ນໄດ້ໃຫ້ການສະໜັບສະໜູນໂຄງການຫຼາຍກ່ວາ 800 ໂຄງການໃນ 73 ປະເທດ.

ການບໍລິຫານຄຸ້ມຄອງລວມໃນໂຄງການ ACT ແມ່ນເປັນການປະສານງານຮ່ວມສຳນັກງານໃຫຍ່ OHCHR. ໃນແຕ່ລະປະເທດທີ່ເຂົ້າຮ່ວມໂຄງການແມ່ນຈະມີ “ໜ່ວຍປະຕິບັດງານ” ໃນທ້ອງຖິ່ນເຊິ່ງປະກອບດ້ວຍ ພະນັກງານຂອງອົງການ UNDP ປະຈຳປະເທດທີ່ກ່ຽວຂ້ອງ ແລະ ຂອງ OHCHR (ເມື່ອມີຄວາມຈຳເປັນ) ແລະ ມີໜ່ວຍງານອື່ນໆຂອງສະຫະປະຊາຊາດຢູ່ນຳເພື່ອທຳໜ້າທີ່ໃນການແຈກຢາຍແບບຟອມສະໝັກ, ຄັດເລືອກເອົາກິດຈະກຳທີ່ຈະໃຫ້ການຊ່ວຍເຫຼືອແລະຮັບຜິດຊອບຕິດຕາມກວດກາການຈັດຕັ້ງປະຕິບັດຂອງກິດຈະກຳຕ່າງໆໂດຍມີການຕິດຕໍ່ພົວພັນໂດຍກົງກັບຜູ້ທີ່ໄດ້ຮັບທຶນຊ່ວຍເຫລືອ.

ໂຄງການ ACT ແມ່ນໃຊ້ວິທີລົງສູ່ທ້ອງຖິ່ນເພື່ອສະໜັບສະໜູນການປະຕິບັດຢູ່ໃນລະດັບຊຸມຊົນດ້ວຍຄວາມຫວັງທີ່ຢາກເຫັນການພັດທະນາຂອງສິດທິມະນຸດໃນພາກປະຕິບັດທີ່ກ່ຽວຂ້ອງກັບສະພາບຕົວຈິງໃດໜຶ່ງຂອງປະຊາຊົນ. ໂຄງການ ACT ແມ່ນມີຈຸດປະສົງສຳຄັນໃນການສ້າງຄວາມເຂັ້ມແຂງດ້ານຄວາມອາສາມາດ ໃນການສຶກສາສິດທິມະນຸດໃນທ້ອງຖິ່ງ, ແລະ ໃຫ້ຄວາມຮູ້ດ້ານຂໍ້ມູນຂ່າວສານທົ່ວໄປ. ຕົວຢ່າງ, ໂຄງການໄດ້ສະໜັບສະໜູນ:

- ກອງປະຊຸມປຶກສາຫາລືແລະຫຼັກສູດການຝຶກອົບຮົມສິດທິມະນຸດສຳລັບກຸ່ມຕ່າງໆເຊິ່ງລວມມີ ຄູອາຈານ, ແມ່ຍິງ, ພະນັກງານພາກປະຊາສັງຄົມ, ພະນັກງານລັດ ແລະ ຊົນເຜົ່າພື້ນເມືອງ;
- ດົນນະລົງສ້າງຄວາມຕື່ນຕົວດ້ານສິດທິມະນຸດຮ່ວມກັບກິດຈະກຳທາງວັດທະນະທຳ, ເຊັ່ນ: ການສະແດງລະຄອນ, ງານວາງສະແດງສິນລະປະ ແລະ ຄອນເສີດ;
- ພິມ / ແປເອກະສານສິດທິມະນຸດ ແລະ ໃຫ້ການເຜີຍແຜ່ໂດຍຜ່ານສື່ຕ່າງໆ;
- ສ້າງສູນຂໍ້ມູນຂ່າວສານເພື່ອການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ;
- ສ້າງໂຄງການການສຶກສາສຳລັບກຸ່ມສ່ຽງສະເພາະ, ເຊັ່ນ: ນັກໂທດ, ຜູ້ໃຊ້ແຮງງານທາງເພດ, ຄົນມີເຊື້ອ HIV, ເດັກກຳພ້າ, ຜູ້ຖືກຍົກຍ້າຍພາຍໃນປະເທດ; ແລະ
- ສ້າງກິດຈະກຳທາງການສຶກສາສິດທິມະນຸດສຳລັບເດັກນ້ອຍ ແລະ ຊາວໜຸ່ມ, ເຊັ່ນ: ສ້າງຂະບວນການແຂ່ງຂັນໃນໂຮງຮຽນ ແລະ ສ້າງຕັ້ງສະໂມສອນຂອງໄວໜຸ່ມທີ່ກ່ຽວກັບສິດທິມະນຸດ.

**ວິທີການເຂົ້າເຖິງໂຄງການ ACT**

ໂຄງການ ACT ໃຫ້ການສະໜັບສະໜູນທາງດ້ານການເງິນແກ່ພາກປະຊາສັງຄົມຂັ້ນຮາກຖານ, ໂດຍສະເພາະແມ່ນອົງການ NGO ທ້ອງຖິ່ນ, ສະຖາບັນການສຶກສາ, ກຸ່ມວິຊາຊີບ, ສື່ມວນຊົນໃນທ້ອງຖິ່ນ ແລະ ອົງການຈັດຕັ້ງຂອງແມ່ຍິງທີ່ມີກິດຈະກຳການສຶກສາດ້ານສິດທິມະນຸດ.

**ເງື່ອນໄຂຂອງການຍື່ນຄຳຮ້ອງ**

- ຜູ້ສະໝັກຈະຕ້ອງມາຈາກອົງການຈັດຕັ້ງພາກປະຊາສັງຄົມ ຫຼື ມີການພົວພັນສະຖາບັນທີ່ມີຄວາມອາດສາມາດໃນການບໍລິຫານໂຄງການທີ່ສະເໜີຂຶ້ນມາ;
- ໂຄງການທີ່ສະເໜີຂື້ນມາຄວນມີລັກສະນະສ້າງສັນ, ປະຕິບັດຕາມແບບແຜນ ແລະ ອອກແບບເພື່ອເຮັດໃຫ້ທ້ອງຖິ່ນມີການພັດທະນາແບບຍືນຍົງ;
- ໂຄງການບໍ່ຄວນຍາວເກີນກ່ວາຫົກເດືອນ ແລະ ມີງົບປະມານນຳໃຊ້ສູງສຸດ 5,000 ດອນລ່າ;
- ຄຳຮ້ອງຕ້ອງສົ່ງຕາມກຳນົດເວລາ, ຈະຖືກເຜີຍແຜ່ ແລະ ເກັບລວບລວມໂດຍຫ້ອງການຊາດສະຫະປະຊາຊາດປະຈຳປະເທດທີ່ເຂົ້າຮ່ວມກັບໂຄງການ ACT .
- ຜູ້ໄດ້ຮັບທຶນແມ່ນຈະໄດ້ເຊັນສັນຍາກັບຫ້ອງການ UNDP ໃນປະເທດ ຫຼື ສຳນັກງານOHCHR;
- ຄຳຮ້ອງຂອງໂຄງການ ແລະ ບົດລາຍງານແມ່ນຄວນຂຽນເປັນພາສາອັງກິດ, ພາສາຝຣັ່ງຫຼືສະເປນ.

## ຕົວຢ່າງຂອງການໃຫ້ທຶນໂຄງການ ACT

ໃນປະເທດມາດາກາສກາ, ໂຄງ ການ ACT ແມ່ນໃຫ້ການສະ ໜັບສະໜູນໂຄງການລິເລີ່ມກ່ຽວກັບສິດ ທິຂອງເດັກນ້ອຍພິການ,ຊຶ່ງລວມມີການສ ະແດງຕຸກກະຕາ, ການຝຶກ ແລະ ແຈກຢາຍຄູ່ມືທີ່ກ່ຽວຂ້ອງ. ໂຄງການດັ່ງກ່າວໄດ້ເຂົ້າຫານັກ ຮຽນໄດ້ຫຼາຍກ່ວາ 6,000 ຄົນໃນ 14 ໂຮງຮຽນ. ຜູ້ອຳນວຍການໂຮງຮຽນໄດ້ໃຫ້ຄຳເຫັນວ່າ ກິດຈະ ກຳນີ້ຄວນຈັດໃນທຸກໆປີໃນຊ່ວງເຂົ້າໂຮງ ຮຽນ. ກອງປະຊຸມຂອງແມ່ຍິງ ເຂດພາກ ໃຕ້ໃນເມືອງ Rafah ຂອງເຂດກາຊາທີ່ປົກຄອງໂດຍຊາວປາເລ ສ ໄຕແມ່ນໄດ້ຖືກຈັດຂຶ້ນໃນປີ 2005 ສຳລັບແມ່ຍິງໄວໜຸ່ມ,ໂດຍສະ ເພາະແມ່ນຜູ້ທີ່ເຮັດວຽກຢູ່ໃນສື່ມວນຊົນ. ເຈົ້າພາບຈັດກອງປະຊຸມ ເຫັນວ່າການຈັດນີ້ແມ່ນມີຄວາມສຳຄັນສຳ ລັບພະນັກງານແມ່ຍິງຂອງສື່ມວນຊົນເນື່ອ ງຈາກວ່າການຈັດ ໃຫ້ແມ່ຍິງແມ່ນມີຄວາມຫຍຸ້ງຍາກຫຼາຍກ່ວ າໃຫ້ຜູ້ຊາຍໂດຍສະເພາະ ແມ່ນສ້າງເຄືອຂ່າຍແລະແລກປ່ຽນ ຂໍ້ມູນກ່ຽວກັບວຽກງານ, ແລະ ກໍ່ຍອມ ຮັບວ່າສິດທິຂອງແມ່ຍິງໃນວຽກງານສື່ ນັ້ນແມ່ນບໍ່ມີຄວາມເທົ່າທຽມກັບຜູ້ຊາຍ.ໂຄງການ ACT ແມ່ນໃຫ້ການສະໜັບ ສະໜູນການຈັດຝຶກອົບຮົມໃຫ້ແກ່ນັກ ຂ່າວແມ່ຍິງຈຳນວນ 15 ຄົນທີ່ມາຈາກ ເຂດປົກຄອງພິເສດກາຊາໂດຍເນັ້ນສິດທິ ຂອງແມ່ຍິງ, ຊ່ວຍການຈັດພິມວາລະ ສານພິເສດສະບັບທຳອິດໃຫ້ແກ່ແມ່ຍິງ ໃນອົງການສື່ມວນຊົນໂດຍເນັ້ນດ້ານສິດທິ; ແລະ ໃຫ້ການສະໜັບສະໜູນກອງປະຊຸມ ປຶກສາຫາລື ທີ່ຄັ້ງທີ່ຈັດຂຶ້ນເພື່ອແມ່ຍິງ ຈາກເຂດຕ່າງໆໃນເຂດກາຊາຕອນໄຕ້.

## ວິທີການຕິດຕໍ່ຫາໂຄງການ ACT

Office of the United Nations High Commissioner for Human Rights
Palais des Nations
8–14, avenue de la Paix
CH–1211 Geneva 10 - Switzerland
Fax: +41 (0)22 928 90 61
E-mail: ACTProject@ohchr.org

ຂໍ້ມູນເພີ່ມເຕີມກ່ຽວກັບໂຄງການ ACT ແມ່ນສາມາດສຶກສາໄດ້ໃນຄູ່ມືຂອງ *ACT*, ສຳລັບໄລຍະ I ແລະ II ໃນເວບຂອງ OHCHR.

**5. ກອງທຶນຊາທິປະໄຕແຫ່ງສະຫະປະຊາຊາດ**

ກອງທຶນສະຫະປະຊາຊາດເພື່ອປະຊາທິປະໄຕ (ຈະບໍ່ມີວັນຢຸບເລີກ) ໄດ້ຖືກສ້າງຕັ້ງຂຶ້ນໃນເດືອນກໍລະກົດ 2005 ເນື່ອງມາຈາກຜົນຂອງກອງປະຊຸມໂລກ.[79]

ຈຸດປະສົງຕົ້ນຕໍກໍ່ແມ່ນເພື່ອສະໜັບສະໜູນຊາທິປະໄຕໃນທົ່ວໂລກດ້ວຍການຊ່ວຍເຫຼືອຜ່ານຊ່ອງທາງອົງການພາກລັດຖະບານ, ພາກເອກຊົນ, ອົງການແຫ່ງຊາດ, ອົງການທາງພາກພື້ນແລະສາກົນ, ເຊິ່ງລວມໄປເຖິງບັນດາພະແນກການຂອງສະຫະປະຊາຊາດ, ຫ້ອງການຕ່າງໆ, ກອງທຶນ, ໂຄງການແລະສໍານັກງານ ຕ່າງໆ. ໂຄງການທາງການເງິນ UNDEF ທີ່ສ້າງ ແລະ ໃຫ້ການສ້າງຄວາມເຂັ້ມແຂງສະຖາບັນເພື່ອປະຊາທິປະໄຕຕ່າງ ໆ, ສົ່ງເສີມສິດທິມະນຸດ ແລະ ຮັບປະກັນການມີສ່ວນຮ່ວມຂອງທຸກກຸ່ມໃນຂະບວນການຊາທິປະໄຕ. ກິດຈະກໍາທີ່ມີສິດໄດ້ຮັບການພິຈາລະນາມີ:

- ການຮ່ວມສົນທະນາຊາທິປະໄຕ ແລະ ການສະໜັບສະໜູນແກ່ຂະບວນການສ້າງລັດຖະທໍາມະນູນ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ພາກປະຊາສັງຄົມ;
- ການສຶກສາພົນລະເມືອງ, ການລົງທະບຽນອອກສຽງເລືອກຕັ້ງ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ພັກການເມືອງ;
- ການເຂົ້າເຖິງຂໍ້ມູນຂ່າວສານຂອງພົນລະເມືອງ;
- ສິດທິມະນຸດແລະເສລີພາບຂັ້ນພື້ນຖານ; ແລະ
- ຄວາມຮັບຜິດຊອບ, ຄວາມໂປ່ງໃສ ແລະ ການເຊື່ອມໂຍງ.

UNDEF ໄດ້ຮັບການຄຸ້ມຄອງໂດຍສໍານັກງານສະຫະປະຊາຊາດເພື່ອການຮ່ວມມື, ຫ້ອງການແມ່ນຢູ່ໃນສໍານັກງານໃຫຍ່ທີ່ນະຄອນນິວຢອກເຊິ່ງມີຄະນະບໍລິຫານງານຈໍານວນ 19 ທ່ານທີ່ໄດ້ຮັບການສ້າງຕັ້ງຂຶ້ນມາເພື່ອໃຫ້ຄໍາແນະນໍາດ້ານນະໂຍບາຍແລະດ້ານການໃຫ້ທຶນເພື່ອສະເໜີໃຫ້ເລຂາທິການໃຫຍ່ອະນຸມັດ. ຄະນະບໍລິຫານທີ່ປຶກສາປະກອບດ້ວຍລັດພາຄີ, ຜູ້ຕາງໜ້າຈາກອົງການ NGO ແລະ ຜູ້ຕາງໜ້າສ່ວນບຸກຄົນຂອງເລຂາທິການທົ່ວໃຫຍ່. ໃນຮອບທໍາອິດຂອງການຄັດເລືອກໂຄງການ ແລະ ການເບີກຈ່າຍທຶນຊ່ວຍເຫຼືອໃນປີ 2006, ເລຂາທິການທົ່ວໃຫຍ່, ທ່ານ Kofi Annan, ກໍ່ໄດ້ອະນຸມັດ 125 ໂຄງການທີ່ມີມູນຄ່າເຖິງ 36 $ ລ້ານເຊິ່ງກວມລວມໄປທົ່ວທຸກພາກພື້ນຂອງໂລກ.

**ວິທີການເຂົ້າເຖິງກອງທຶນຊາທິປະໄຕແຫ່ງສະຫະປະຊາຊາດ**

UNDEF ສາມາດຮັບເອົາຄໍາຮ້ອງສະໝັກຂໍທຶນໂຄງການຈາກຫລາຍພາກສ່ວນທີ່ມາຈາກອົງບໍລິຫານເພື່ອປະຊາທິປະໄຕ, ລວມທັງສະຖາບັນສິດທິມະນຸດແຫ່ງຊາດ (NHRI), ແຕ່ວ່າຈະເລງໃສ່ພາກປະຊາສັງຄົມ, ເຊັ່ນ: NGO ພາຍໃນແລະສາກົນ, ສະຖາບັນການຄົ້ນຄວ້ານະໂຍບາຍ, ແລະ ສະມາຄົມວິຊາຊີບຕ່າງໆເປັນພິເສດ. ບາງເງື່ອນໄຂທີ່ການຂໍທຶນຈາກ ໂຄງການ UNDEF ຕ້ອງໄດ້ມີຄື:

- ໂດຍທົ່ວໄປແລ້ວໂຄງການທີ່ຂໍການຊ່ວຍເຫຼືອຕ້ອງໄດ້ມີປະຫວັດການດໍາເນີນງານມາແລ້ວເປັນໄລຍະເວລາສອງປີ;
- ທຶນຊ່ວຍເຫຼືອຕາມຫຼັກການແລ້ວແມ່ນບໍ່ສາມາດໃຫ້ໄດ້ສູງກວ່າ 500,000 ດອນລ່າສໍາລັບໂຄງການໃດໜຶ່ງ ແລະບໍ່ຫລຸດ 50,000 ດອນລ່າ;
- ຄໍາຮ້ອງຂໍຈາກທຸກປະເທດ ແລະ ທຸກອົງການໃນທົ່ວພາກພື້ນແມ່ນຈະໄດ້ຮັບການພິຈາລະນານໍາກັນໝົດ; ແລະ
- ບູລິມະສິດແມ່ນຈະໄດ້ເນັ້ນບັນດາປະເທດແລະພູມີພາກທີ່ມີຄວາມຫຍຸ້ງຍາກດ້ານຊາທິປະໄຕເພື່ອເປັນການສົ່ງເສີມ ແລະ ເຫັນຄວາມສໍາຄັນຂອງເຂົາເຈົ້າ, ເຊັ່ນ: ບັນດາປະເທດທີ່ຫາກໍ່ພົ້ນອອກຈາກຄວາມຂັດແຍ້ງ, ປະເທດທີ່ໃໝ່ ແລະ ຫາກໍ່ໄດ້ເອກະລາດ, ບັນດາປະເທດດ້ອຍພັດທະນາ, ແລະ ປະເທດທີ່ມີລາຍຮັບຕໍ່າແລະປານກາງ.

[79] ເບິ່ງມະຕິ 60/1 ກ່ຽວກັບຜົນຂອງກອງປະຊຸມໂລກປີ 2005

UNDEF

ມີຈຸດປະສົງທີ່ຈະສະໜັບສະໜູນໂຄງການທີ່ສົ່ງເສີມປະຊາທິປະໄຕແລະໂຄງການທີ່ມີຜົນຕໍ່ການສ້າງຄວາມເຂັ້ມແຂງໃຫ້ແກ່ສາຍພົວພັນລະຫ ວ່າງພາກປະຊາສັງຄົມແລະອົງການຈັດຕັ້ງລັດຖະບານ, ມີຜົນຕໍ່ການເຂົ້າຮ່ວມ ແລະ ການມີສ່ວນຮ່ວມຂອງກຸ່ມດ້ອຍໂອກາດໃນສັງຄົມ ແລະ ກຸ່ມທີ່ມີຄວາມສ່ຽງ, ຫຼື ຕໍ່ການສົ່ງເສີມການຮ່ວມມືແຕ່ເໜືອຕະ ຫລອດໄຕ້.

ວິທີການສະໝັກຂໍການຊ່ວຍເຫຼືອນຳ UNDEF

ອົງການຈັດຕັ້ງໃດທີ່ຕ້ອງການສະໝັກຂໍການຊ່ວຍເຫຼືອກອງທຶນ UNDEF ແມ່ນຄວນຈະເຂົ້າເບິ່ງຂໍ້ມູນໃນເວັບໄຊ້, ບ່ອນທີ່ມີການລົງຂໍ້ມູນໃຫ້ສະໝັກທາງອອນໄລນ໌ເຊິ່ງສາມາດຂຽນຟອມເປັນພາສາອັງກິດຫຼືພາສາຝຣັ່ງກໍ່ໄດ້.
ກອງທຶນຈະບໍ່ຮັບຮ້ອງທາງ e-mail, ໄປສະນີ, ແຝກ, ຫຼືການຈັດສົ່ງແບບອື່ນໆທີ່ບໍ່ແມ່ນໃນລະບົບຍື່ນອອນໄລ.

**ວິທີການຕິດຕໍ່ຫາ UNDEF**

United Nations Democracy Fund (UNDEF)

United Nations

1 UN Plaza, Room DC1-1330

New York, NY 10017

United States of America

Phone: +1 917 367 42 10 or +1 917 367 80 62

Fax: +1 212 963 14 86

E-mail: democracyfund@un.org

ຂໍ້ມູນເພີ່ເຕີມແມ່ນເບິ່ງໄດ້ເວບໄຊ້ຂອງ UNDEF

**6. ກອງທຶນອາສາແຫ່ງສະຫະປະຊາຊາດກ່ຽວກັບຄົນພິການ**

ກອງທຶນອາສາແຫ່ງສະຫະປະຊາຊາດກ່ຽວກັບຄົນພິການແມ່ນໄດ້ຮັບສ້າງຕັ້ງຂຶ້ນຕາມມະຕິສະມັດຊາໃຫຍ່ເລກທີ 32/133 ເຊິ່ງມັນກ່ຽວຂ້ອງກັບລະບຽບການຂອງປີ 1981 ວ່າດ້ວຍປີແຫ່ງຄົນພິການສາກົນ. ຕໍ່ມາສະມັດຊາໃຫຍ່ກໍໄດ້ລົງມະຕິວ່າກອງທຶນດັ່ງກ່າວແມ່ນຄວນສືບຕໍ່ ແລະ ໃນປັດຈຸບັນກອງທຶນກໍ່ໄດ້ໃຫ້ການຊ່ວຍເຫຼືອທຶນກ້ອນນ້ອຍໆໃຫ້ແກ່ບັນດາກິດຈະກຳຕ່າງໆທີ່ລົງເລິກໃນການສ້າງຄວາມອາດສາມາດຂອງພາກປະຊາສັງຄົມທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ.

**ກອງທຶນໃຫ້ການຊ່ວຍເຫຼືອທຶນຂະໜາດນ້ອຍເພື່ອສະໜັບສະໜູນກິດຈະກຳແລະຂະບວນການສ້າງສັນເພື່ອ:**

- ສົ່ງເສີມການປູກຈິດສຳນຶກກ່ຽວກັບສົນທິສັນຍາຂອງຄົນພິການ, ແລະ ໃຫ້ການສະໜັບສະໜູນການຈັດຕັ້ງປະຕິບັດສົນທິສັນຍາ;
- ສົ່ງເສີມໃຫ້ມີການແລກປ່ຽນຄວາມຮູ້ແລະປະສົບການ, ເຊັ່ນດຽວກັນກັບການເຜີຍແຜ່ນະໂຍບາຍ ແລະ ການປະຕິບັດທີ່ ສຳຄັນ ແລະ ສາມາດເຂົ້າເຖິງໄດ້;
- ສົ່ງເສີມບົດບາດການມີສ່ວນຮ່ວມຂອງຄົນພິການໃນການພັດທະນາວຽກງານຂອງຄົນພິການ; ແລະ
- ສ້າງຄວາມອາດສາມາດໃຫ້ແກ່ພາກສ່ວນຕ່າງໆເພື່ອປັບປຸງຊີວິດການເປັນຢູ່ ແລະ ຄວາມຢູ່ດີກິນດີຂອງຄົນພິການໃນບັນດາປະເທດທີ່ກຳລັງພັດທະນາ, ແລະ ເພື່ອຈັດຕັ້ງປະຕິບັດສົນທິສັນຍາ (ພາກສ່ວນທີ່ກ່ຽວຂ້ອງອາດຈະລວມມີອົງການຈັດຕັ້ງຂອງຄົນພິການ, ອົງການຈັດຕັ້ງສັງຄົມອື່ນໆ, ລັດຖະບານ, ອົງການຈັດຕັ້ງພາກເອກະຊົນແລະ ຜູ້ໃຫ້ທຶນພັດທະນາລະຫວ່າງປະເທດ).

ກອງທຶນແມ່ນໄດ້ຮັບການຄຸ້ມຄອງໂດຍພະແນກເສດຖະກິດແລະສັງຄົມຢູ່ທີ່ສຳນັກງານໃຫຍ່ສະຫະປະຊາຊາດຢູ່ໃນນະຄອນນິວຢອກ.

**ວິທີການເຂົ້າເຖິງກອງທຶນອາສາແຫ່ງສະຫະປະຊາຊາດກ່ຽວກັບຄົນພິການ**

ນັບຕັ້ງແຕ່ການກໍ່ຕັ້ງກອງທຶນໃນປີ 1981, ກອງທຶນໄດ້ສະໜັບສະໜູນກິດຈະກຳຕ່າງໆທີ່ມີຈຸດປະສົງເພື່ອສ້າງຄວາມອາດສາມາດແຫ່ງຊາດ ແລະ ຂອງສະຖາບັນຕ່າງໆໂດຍແນໃສ່ປັບປຸງວິຖີການດຳລົງຊີວິດແລະຄວາມຢູ່ດີກິນດີຂອງຄົນພິການທີ່ອາໃສຢູ່ໃນບັນດາປະເທດທີ່ກຳລັງພັດທະນາ. ກອງທຶນຍັງໄດ້ສະໜັບສະໜູນໃນການປູກຈິດສຳນຶກກ່ຽວກັບສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ, ເຊັ່ນ: ໃຫ້ການຝຶກອົບຮົມ, ສະໜັບສະໜູນການສື່ສານແລະຈັດກິດຈະກຳການໃຫ້ຂໍ້ມູນຂ່າວສານແກ່ສາທາລະນະ. ທຶນແມ່ນສຳລັບທັງພາກສ່ວນປະຊາສັງຄົມ ແລະ ລັດຖະບານ, ແຕ່ບໍ່ໄດ້ໃຫ້ສ່ວນບຸກຄົນ.

ບົດສະເໜີຂໍໂຄງການແມ່ນຈະຮັບຕະຫຼອດປີ. ອົງການປະຊາສັງຄົມທີ່ຕ້ອງການສະເໜີຂໍທຶນ ກ່ອນອື່ນໝົດແມ່ນຕ້ອງມີໜັງສືອະນຸຍາດ / ໜັງສືການສະໜັບສະໜູນຈາກລັດຖະບານທີ່ກ່ຽວຂ້ອງເສຍກ່ອນ ກ່ອນທີ່ຈະຍື່ນຄຳຮ້ອງຂໍການຊ່ວຍເຫຼືອຈາກກອງທຶນດັ່ງກ່າວໄດ້. ພາກປະຊາສັງຄົມອາດຈະດຳເນີນການປຶກສາຫາລືກັບຫ້ອງການ UNDP ໃນທ້ອງຖິ່ນກ່ຽວກັບຂະບວນການຂໍໜັງສືການສະໜັບສະໜູນທີ່ວ່ານັ້ນ.

**ວິທີການສະໝັກຂໍການຊ່ວຍເຫຼືອນໍາກອງທຶນສະຫະປະຊາຊາດກ່ຽວກັບຄົນພິການ**

ແບບຟອມການສະເໜີຂໍໂຄງການແມ່ນສໍາລັບທີ່ຈະໃຊ້ໃນເວລາທີ່ສົ່ງຄໍາຮ້ອງຂໍການຊ່ວຍເຫຼືອ. ບົດສະເໜີໂຄງການທີ່ສົ່ງມາໃນຮູບແບບຟອມອື່ນກໍ່ແມ່ນຈະໄດ້ຮັບການພິຈາລະນາຄືກັນຖ້າຫາກວ່າມີຂໍ້ມູນຄົບຖ້ວນຕາມເງື່ອນໄຂ. ບົດສະເໜີໂຄງການສາມາດສົ່ງເປັນພາສາອັງກິດ, ພາສາຝຣັ່ງຫຼືພາສາສະເປນ. ແບບຟອມການສະເໜີໂຄງການແມ່ນມີໃນເວບຂອງອົງການສະຫະປະຊາຊາດ.

ບົດສະເໜີໂຄງການຄວນສົ່ງທາງອີເມວ, ແຟກ, ຫຼື ທາງໄປສະນີ (ສົ່ງທາງອີເມວແມ່ນດີທີ່ສຸດ) ຫາ:

Secretariat for the Convention on the Rights of Persons with Disabilities
Department for Economic and Social Affairs
United Nations
Two UN Plaza, DC2-1372
New York, NY 10017
United States of America
Fax: +1 212 963 01 11
E-mail: enable@un.org

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບກອງທຶນ, ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ ແລະ ວຽກງານຂອງສະຫະປະຊາຊາດທີ່ກ່ຽວກັບຄວາມພິການແມ່ນສາມາດເບິ່ງໄດ້ໃນເວບໄຊ້ຂອງສະຫະປະຊາຊາດ.

2007 REPORT ON ACTIVITIES AND RESULTS

Office of the High Commissioner for Human Rights

Palais des Nations
CH 1211 Geneva 10 – Switzerland
Telephone: +41.22.917 90 00
Fax : +41.22.917 90 08 www.ohchr.org